




ບັນດາຊົນເຜົ່າ ໃນ ສ ປ ປ ລາວ

The Ethnics Groups in Lao P.D.R.

2005

ສູນກາງແນວລາວສ້າງຊາດ

Lao National Front for Construction

ບັນດາຊົນເຜົ່າ ໃນ ສ ປ ປ ລາວ
The Ethnics Groups in Lao P.D.R

ຈັດພິມ ໂດຍ: ກົມຊົນເຜົ່າ

Printed by: Department of Eth**nics**

ສະໜັບສະໜູນໂດຍ : ກອງທຶນການາດາ ເພື່ອການພັດທະນາ

Sponsored by : Canada Fund for Local Iniatives

ພິມປີ 2005

ຈຳນວນ 2.000 ຫົວ

ສະຫງວນລິຂະສິດCopyright reserved

ຄະນະຈັດພິມປຶ້ມບັນດາຊົນເຜົ່າໃນ ສ ປ ປ ລາວ.

I. ຄະນະຊີ້ນຳລວມ:

ທ່ານ ຄຳເພີຍ ຈັນທະສຸກ
ທ່ານ ຕິງເຢີຫໍ
ທ່ານ ສຸລິດ ແສນຄຳພອນ
ທ່ານ ນາງ ນັດ ພູມີວົງ

II. ຄະນະເນື້ອໃນ:

ທ່ານ ສິນໄຊ ແກ້ວມະນີວົງ
ທ່ານ ສໍສອນພິດ ພານຸວົງ
ທ່ານ ເຢ່ຍເກີຢາ ໜໍຈໍ່ຈ້ຽຕົວ
ທ່ານ ບຸນທະວີ ວິໄລວົງ
ທ່ານ ສົມລິດ

III. ກວດແກ້ແລະຮຽບຮຽງ:

ທ່ານ ສິນໄຊ ແກ້ວມະນີວົງ
ທ່ານ ສົນອຍຈັນສຸກມາລາ ແສງຍະສິດ

IV. ແປພາສາລາວເປັນພາສາອັງກິດ:

ທ່ານ ຈັນທະວົງ ແສນອາມາດມົນຕີ
ທ່ານ ບຸນທະວີ ວິໄລວົງ

V. ກວດແກ້ພາສາອັງກິດ

ທ່ານ ແອລິກ ເດວິດສັນ Mr. Eric Davidson

VI. ຄອມພິວເຕີ:

ນ ມະນີວັນ ແກ້ວໂກມົນ
ນ ໄພຈິດ ແກ້ວມະນີວົງ
ນ ກົ້ງແກ້ວ ທຳມະໂຄດ

VII. ອອກແບບ:

ນ. ມະນີວັນ ແກ້ວໂກມົນ

ພິມທີ່: ໂຮງພິມມັນທາຕຸລາດ
ທ.ບ 45 ພຈ / 14122004
ຈ.ພ 2.000

ສາລະບານ

ໝວດພາສາ ລາວ - ໄຕ ມີ 8 ຊົນເຜົ່າ

The Lao - Tai Language Family (8 Ethnic groups)

ຊົນເຜົ່າແຊກ (Xaek / Xe`k).....1- 5
ຊົນເຜົ່າ ຍວນ (Nhouan).....6 -10
ຊົນເຜົ່າໄຕ (Tai).....11-15
ຊົນເຜົ່າໄທເໜືອ (Thaneua) 16-21
ຊົນເຜົ່າຜູ້ໄທ (Phouthay).....22-26
ຊົນເຜົ່າຢັ້ງ (Yang).....27-32
ຊົນເຜົ່າລາວ (Lao).....33-37
ຊົນເຜົ່າລື້ (Lue).....38-43
ຮູບພາບປະກອບ.....44 - 47

ໝວດພາສາມອນ - ຂະແມ ມີ 32 ຊົນເຜົ່າ

The Mon - Khmer Language Family (32 Ethnic Groups)

ຊົນເຜົ່າ ກືມມຸ (Khmou).....48-53
ຊົນເຜົ່າ ກະຕາງ (Katang) 54-61
ຊົນເຜົ່າ ກະຕູ (Katu) 62-68
ຊົນເຜົ່າກຣຽງ (Kriang).....69-73
ຊົນເຜົ່າ ກຣີ (Kree/Kri).....74-77
ຊົນເຜົ່າ ຂະແມ (Khmer).....78 -82
ຊົນເຜົ່າງວນ (Ngouan).....83 -88
ຊົນເຜົ່າເຈັ້ງ (Cheng).....89-94
ຊົນເຜົ່າສາມຕ່າວ (Samtao).....95-98
ຊົນເຜົ່າ ສະດາງ (Sadang).....99-102
ຊົນເຜົ່າຊ່ວຍ (Xuay).....103-106
ຊົນເຜົ່າ ຊິງມູນ (Xingmoun).....107-110
ຊົນເຜົ່າ ຍະເຫີນ (Nhaheun).....111-114
ຊົນເຜົ່າຕະໂອ້ຍ (Ta - Oy).....115-118
ຊົນເຜົ່າຕຣຽງ (Triang).....119-127
ຊົນເຜົ່າ ຕຣີ (Tri).....128-135
ຊົນເຜົ່າຕູມ (Toum).....136-142
ຊົນເຜົ່າ ແທ່ນ (Thaen).....143-147
ຊົນເຜົ່າ ບິດ (Bid / Bit).....148-151
ຊົນເຜົ່າ ເບຣິ (Brao).....152-155
ຊົນເຜົ່າ ປະໂກະ (Pakoh / Pacoh).....156-160

ຊົນເຜົ່າ ໄປຣ (Pray).....161-165
ຊົນເຜົ່າ ຜ້ອງ (Phong).....166-170
ຊົນເຜົ່າ ມະກອງ (Makong).....171 177
ຊົນເຜົ່າ ມ້ອຍ (Moy).....178-182
ຊົນເຜົ່າ ຢຣຸ (Yrou).....183-187
ຊົນເຜົ່າ ແຢ (Yae /Ye`).....188-1192
ຊົນເຜົ່າ ລະເມດ (Lamed / Lamet).....193-196
ຊົນເຜົ່າ ລະວິ (Lavi / Lavy).....197-200
ຊົນເຜົ່າ ໂອຍ (Oy).....201-205
ຊົນເຜົ່າ ເອີດູ (Oedou).....206-210
ຊົນເຜົ່າ ຮ່າຮັກ (Harak).....211-214
ຮູບພາບປະກອບ.....215-220

ໝວດພາສາ ຈີນ - ຕິເບດ ມີ 7 ຊົນເຜົ່າ.
The Chine - Tibet Language Family (7 Ethnic Groups)

ຊົນເຜົ່າ ສິງສີລີ (Singsily).....221-224
ຊົນເຜົ່າ ສີລາ (Sila).....225 -233
ຊົນເຜົ່າ ລາຫູ (Lahu).....234-238
ຊົນເຜົ່າ ໂລໂລ (LoLo).....239-244
ຊົນເຜົ່າ ຫໍ້ (Hor).....245-248
ຊົນເຜົ່າ ອາຄາ (Akha).....249-254
ຊົນເຜົ່າ ຮ່ານ (Hanyi).....255-259
ຮູບພາບປະກອບ.....260-261

ໝວດພາສາ ມົ້ງ - ອີ້ວມຽນ ມີ 2 ຊົນເຜົ່າ
The Hmong - Iu Mien Language Family (2 Ethnic Groups)

ຊົນເຜົ່າ ມົ້ງ (Hmong).....262-265
ຊົນເຜົ່າ ອີ້ວມຽນ (Iewmien).....266-269
ຮູບພາບປະກອບ.....270-271

ບົດອະທິບາຍ
ການຈັດແບ່ງສັບຊ້ອນຊົ່ເອົ້ນຂອງຊົນເຜົ່າໃນ ສ ປ ປ ລາວ

ຄືພວກເຮົາຮູ້ດີແລ້ວວ່າໃນໂລກນີ້ບໍ່ມີປະເທດໃດເລີຍທີ່ມີປະຊາກອນເປັນເຊື້ອຊາດ ແລະຊົນເຜົ່າດຽວກັນໝົດ. ປະເທດໜຶ່ງຍ່ອມປະກອບດ້ວຍຊົນເຜົ່າຕ່າງໆ ທີ່ມີລັກສະນະປະຈຳຊາດ, ມີພາສາປາກເວົ້າ, ຮີດຄອງປະເພນີ, ຄວາມເຊື່ອຖື ແລະວັດທະນະທຳທີ່ແຕກຕ່າງກັນ. ຜ່ານແຕ່ລະໄລຍະປະຫວັດສາດ, ຜ່ານການຕິດຕໍ່ສຳພັນ, ຄວາມເອື້ອເຟື້ອເພື່ອແຜ່, ຄວາມສາມັກຄີຊ່ວຍເຫຼືອເຊິ່ງກັນ ແລະກັນລະຫວ່າງເຜົ່າຕ່າງໆນັ້ນ ກໍ່ສາມາດເຮັດໃຫ້ເກີດມີການປ່ຽນແປງ, ແຕ່ກໍ່ບໍ່ສາມາດປາສະຈາກ ໄດ້ກ່ຽວກັບການຮັກສາເອກະລັກຂອງບັນດາຊົນເຜົ່າເປັນຕົ້ນແມ່ນ ພາສາປາກເວົ້າ, ການດຳລົງຊີວິດ, ຂະນົບທຳນຽມປະເພນີ, ລະບົບຄວາມເຊື່ອຖື ແລະອື່ນໆ ເຊິ່ງເຄີຍມີມານັບເປັນຮ້ອຍໆ ຫຼືພັນໆປີ.

ບັນດາຊົນເຜົ່າໃນໂລກປະຈຸບັນແມ່ນບັນຫາໜຶ່ງທີ່ຫຍຸ້ງຍາກສັບສົນ, ມີຄວາມໝາຍ ສຳຄັນ ອັນໜຶ່ງທີ່ຄວາມເຂັ້ມແຂງ ແລະຄວາມເປັນປຶກແຜ່ນແໜ້ນໜາຂອງຊາດ.

ສຳລັບປະເທດ ສ ປ ປ ລາວ ເຖິງແມ່ນວ່າ ຈະເປັນປະເທດທີ່ນ້ອຍ, ມີເນື້ອທີ່ພຽງແຕ່ 236.800 ຕາຕະລາງກິໂລແມັດ, ມີພົນລະເມືອງປະມານ 5 ລ້ານກວ່າຄົນກໍ່ຕາມແຕ່ພັດມີຫຼາຍຊົນເຜົ່າ ແລະ ມີຈຸດພິເສດແຕກຕ່າງກັບປະເທດອື່ນໆໃນໂລກ.

I./ ຈຸດພິເສດຂອງຊົນເຜົ່າໃນ ສ ປ ປ ລາວ:

1. ປະເທດລາວ ເປັນປະເທດໜຶ່ງທີ່ປະກອບດ້ວຍຫຼາຍຊົນເຜົ່າ ເຊິ່ງດຳລົງຊີວິດຢູ່ຢ່າງສະຫງົບ ສັບຫວ່າງກັນແຕ່ເໜືອຮອດໃຕ້, ເຂົ້າເຈົ້າຢູ່ຮ່ວມກັນໂດຍສັນຕິ, ບໍ່ມີຊົນເຜົ່າໃດໜຶ່ງ ດຳລົງ ຊີວິດຢູ່ຕ່າງ ຫາກເປັນບໍລິເວນໜຶ່ງທີ່ກວ້າງໃຫຍ່ໄພສານ, ຕັ້ງແຕ່ໃດໆມາ ບໍ່ເຄີຍມີຊົນເຜົ່າໃດຊົນເຜົ່າໜຶ່ງໄປກົດຂີ່, ຄອບຄອງຊົນເຜົ່າອື່ນໆ. ຊົນເຜົ່າໃດກໍ່ຕາມ ລ້ວນແຕ່ມີຈຸດພິເສດລວມຂອງວົງຄະນະຍາດແຫ່ງຊາດ ລາວ ແລະກໍ່ມີຈຸດພິເສດສະເພາະຂອງຕົນ.

2. ຊົນເຜົ່າຕ່າງໆ ໃນປະເທດລາວໄດ້ໂຮມແຮງກັນໃນການກໍ່ຕັ້ງປົກປັກຮັກສາ ແລະສ້າງສາ ພັດທະນາປະເທດຊາດ, ມີມູນເຊື້ອສາມັກຄີປອງດອງລະຫວ່າງຊົນເຜົ່າຕ່າງໆທີ່ແໜ້ນແກ່ນ, ໂດຍສະ ເພາະຢ່າງຍິ່ງ ນັບແຕ່ມີພັກປະຊາຊົນ ປະຕິບັດລາວນຳພາ, ການພົວພັນລະຫວ່າງຊົນເຜົ່າ ນັບມື້ນັບ ໜັກແໜ້ນ ແລະການປອງດອງຊາດເປັນໄປຢ່າງໄວວາ.

3. ຊົນເຜົ່າຕ່າງໆ ໃນປະເທດລາວມີພື້ນຖານ ເສດຖະກິດ - ສັງຄົມຮ່ວມກັນ, ແຕ່ລະດັບ ການ ຂະຫຍາຍ ຕົວດ້ານເສດຖະກິດ, ວັດທະນະທຳຂອງແຕ່ລະເຜົ່າບໍ່ສະໝ່ຳສະເໝີກັນ.

4. ຊົນເຜົ່າຕ່າງໆ ໃນປະເທດລາວມີວັດທະນະທຳລວມ, ວັດທະນະທຳລາວແມ່ນການປະສົມ ກົມກຽວສິ່ງຍອດຍິ່ງທາງດ້ານວັດທະນະທຳຂອງທຸກໆຊົນເຜົ່າ. ພາສາ ແລະຕົວໜັງສືລາວ ແມ່ນພາສາ ກາງເປັນພາສາທາງລັດຖະການ (ພາສາປະຈຳຊາດ), ເຖິງຢ່າງນັ້ນກໍດີແຕ່ລະຊົນເຜົ່າກໍ່ຍັງຄົງຮັກສາພາ ສາປາກເວົ້າ ແລະຮີດຄອງປະເພນີສະເພາະຂອງຊົນເຜົ່າຕົນ.

5. ມີບາງຊົນເຜົ່າໃນປະເທດລາວ ໄດ້ມີການພົວພັນກົກເຄົ້າເຫງົ້າກຳກັບບາງຊົນເຜົ່າຢູ່ບັນດາ ປະເທດໃກ້ຄຽງ.

II . ຈຸດປະສົງ ຂອງການຄົ້ນຄວ້າ , ສັບຊ້ອນ ແລະຈັດແບ່ງຊົນເຜົ່າ ໃນ ສ ປ ປ ລາວ:

1. ເພື່ອສັບຊ້ອນ ແລະຈັດແບ່ງຊື່ຊົນເຜົ່າໃຫ້ຖືກຕ້ອງກັບຫຼັກການຊົນເຜົ່າວິທະຍາ, ຖືກຕ້ອງກັບສະພາບຈຸດພິເສດຂອງຊົນເຜົ່າໃນລາວ ແລະໃຫ້ຖືກຕ້ອງກັບຊື່ຕົວຈິງທີ່ຊົນເຜົ່າເຂົາເຈົ້າມັກ. ພ້ອມກັນນີ້ ກໍ່ເພື່ອຈຳກັດ, ແກ້ໄຂ ແລະກ້າວໄປເຖິງບ່ອນລຶບລ້າງຊື່ຊົນເຜົ່າທີ່ເປັນການສຸງດສີ, ດູຖູກ ໝິ່ນປະໝາດ ແລະຊີ້ທີ່ພາໃຫ້ມີຄວາມອາຄາດບາດໝ່າງກັນ.

2. ເພື່ອແນໃສ່ ເພີ່ມທະວີຄວາມສາມັກຄີ, ຄວາມສະເໝີພາບລະຫວ່າງຊົນເຜົ່າຕ່າງໆ, ສ້າງຈິດສຳນຶກໃຫ້ແຕ່ລະຊົນເຜົ່າມີຄວາມພູມໃຈໃນຊົນເຜົ່າຂອງຕົນເອງ ເຊິ່ງຢູ່ໃນວົງຄະນະຍາດແຫ່ງຊາດ ລາວ, ປັບປຸງສະຕິຊາດ, ເປັນເອກະພາບອັນໜຶ່ງອັນດຽວ, ລຶບລ້າງຮ່ອງຮອຍຂອງຄວາມລະແວງສົ່ງ ໄສລະຫວ່າງຊົນເຜົ່າ ເພື່ອຕ້ານກົນອຸບາຍແບ່ງແຍກຂອງພວກຄົນບໍ່ດີ, ພ້ອມກັນປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດ.

3. ເພື່ອເປັນການອະນຸລັກຮັກສາ, ສົ່ງເສີມຂະນົບທຳນຽມ, ຮີດຄອງປະເພນີ ແລະວັດທະນະ ທຳອັນດີງາມທີ່ເປັນເອກະລັກຂອງແຕ່ລະຊົນເຜົ່າ ແລະກົງກັນຂ້າມກໍ່ເພື່ອຈຳກັດ, ແກ້ໄຂ ແລະລຶບ ລ້າງສົ່ງຕ່າງໆບໍ່ດີທີ່ກີດກັ້ນການຂະຫຍາຍຕົວກໍ່ຄືຄວາມສາມັກຄີຊ່ວຍເຫຼືອເຊິ່ງກັນ ແລະກັນ ລະຫວ່າງ ຊົນເຜົ່າພ້ອມກັນກ້າວໜ້າໄປຕາມແນວທາງຂອງພັກແລະລັດຖະບານ.

4. ເພື່ອປະກອບບັນດາຂໍ້ມູນບາງບັນຫາທີ່ສຳຄັນກ່ຽວກັບຊົນເຜົ່າ ໃຫ້ແກ່ພັກ - ລັດຖະບານ ແລະພາກສ່ວນຕ່າງໆ ພິຈາລະນາຊຸມເຂົ້າໃນແນວທາງນະໂຍບາຍ, ການວາງແຜນພັດທະນາ ແລະ ການຈັດຕັ້ງປະຕິບັດແຜນການຕ່າງໆຕໍ່ແຕ່ລະຊົນເຜົ່າໃຫ້ຖືກຕ້ອງກັບສະພາບຈຸດພິເສດ ແລະຄວາມ ເປັນຈິງຂອງຊົນເຜົ່າໃນແຕ່ລະທ້ອງຖິ່ນ.

III.ຜົນປະໂຫຍດທີ່ຄາດວ່າຈະໄດ້ຮັບຈາກການຄົ້ນຄວ້າ, ສັບຊ້ອນ ແລະ ຈັດແບ່ງ ຊື່ເອີ້ນຂອງຊົນເຜົ່າ ໃນ ສ ປ ປ ລາວ.

1. ຈະສາມາດກຳນົດ ແລະຮັບຮູ້ໃນເບື້ອງຕົ້ນໄດ້ວ່າ: ຢູ່ ສ ປ ປ ລາວ ມີຈັກຊົນເຜົ່າແທ້. ແຕ່ລະ ຊົນເຜົ່າປະກອບແຊງ ຫຼືຂະແໜງໃດແດ່. ການເອີ້ນຊື່ຊົນເຜົ່ານັ້ນ ກໍຈະຖືກຕາມຫຼັກການຊົນເຜົ່າວິທະຍາ ໂດຍພື້ນຖານ ແລະຖືກຕ້ອງກັບຊື່ທີ່ຊົນເຜົ່າເຂົາເຈົ້າມັກ ພ້ອມກັນນີ້ກໍຈະຈຳກັດ, ແກ້ໄຂ ແລະລຶບລ້າງ ໄດ້ກ່ຽວກັບຊື່ເອີ້ນຂອງຊົນເຜົ່າທີ່ເປັນການເອີ້ນສຸງດສີ, ດູຖູກໝິ່ນປະໝາດກັນ.

2. ຈະຊ່ວຍຍົກຖານະບົດບາດຂອງແຕ່ລະຊົນເຜົ່າໃຫ້ສູງຂຶ້ນ, ເຮັດໃຫ້ຊົນເຜົ່າມີຄວາມພູມ ໃຈໃນຄວາມເປັນຊົນເຜົ່າຂອງຕົນເອງ ຢູ່ໃນວົງຄະນະຍາດແຫ່ງຊາດລາວ. ການປະຕິບັດສິດສະເໝີ ພາບລະຫວ່າງຊົນເຜົ່ານັບມື້ຈະມີການຮັບປະກັນ, ຄວາມສາມັກຄີປອງດອງລະຫວ່າງຊົນເຜົ່າ ໃນຄອບ ຄົວໃຫຍ່ແຫ່ງຊາດລາວ ເອກະພາບຍົກສູງສິດເປັນເຈົ້າຂອງປະເທດຊາດ ກໍ່ຄືມູນເຊື້ອອັນອົງອາດ ກ້າຫານນັບທັງເອກະລັກໃນດ້ານຕ່າງໆຂອງຊົນເຜົ່າກໍ່ຈະໄດ້ຮັບການເສີມຂະຫຍາຍ. ພ້ອມກັນນີ້ກໍແກ້ ໄຂໄດ້ຮ່ອງຮອຍຂອງຄວາມລະແວງສົ່ງໄສ, ຄວາມອາຄາດບາດໝ່າງລະຫວ່າງຊົນເຜົ່າຕ່າງໆ ແລະ ຕ້ານກັບຮູບການແບ່ງແຍກຊົນເຜົ່າຂອງສັດຕູ.

3. ຈະສາມາດຮັບຮູ້ໄດ້ຂະນົບທຳນຽມ, ຮີດຄອງປະເພນີ ແລະສິລະປະ ວັດທະນະທຳອັນດີງາມຂອງແຕ່ລະຊົນເຜົ່າ ເພື່ອຈະສົ່ງເສີມ ຫຼືອະນຸລັກຮັກສາ. ພ້ອມກັນນັ້ນ ກໍ່ສາມາດຮັບຮູ້ໄດ້ສິ່ງທີ່ຍັງຫຍໍ້ ທໍ້ ເພື່ອຊອກຫາຊ່ອງທາງໃນການແກ້ໄຂ.

4. ຈະເປັນປະໂຫຍດບໍ່ຫຼາຍກໍ່ໜ້ອຍ ໃນການປະກອບຂໍ້ມູນໃຫ້ພັກ - ລັດຖະບານ ແລະພາກສ່ວນຕ່າງໆໃນການພິຈາລະນາວາງແນວທາງ, ແຜນການ ແລະນະໂຍບາຍໃນດ້ານ ຕ່າງໆ ຕໍ່ແຕ່ລະຊົນເຜົ່າ, ແຕ່ລະຂົງເຂດໃຫ້ຖືກຕ້ອງກັບທ່າແຮງຈິດຕະສາດ, ຂະນົບທຳນຽມ, ຮີດຄອງປະເພນີ ແລະວັດທະນະທຳຂອງຊົນເຜົ່າຕ່າງໆ.

IV.ບັນດາບ່ອນອີງແລະມາດຖານ ຫຼືຫຼັກການໃນການຄົ້ນຄວ້າ, ສັບຊ້ອນ ແລະຈັດແບ່ງຊົ່ຊົນເຜົ່າໃນ ສ ປ ປ ລາວ.

1. ສະພາບການຄົ້ນຄວ້າຊົນເຜົ່າຢູ່ໃນລາວໄລຍະຜ່ານມາຈົນເຖິງປະຈຸບັນ. ການຄົ້ນ ຄວ້າ ຊົນເຜົ່າຢູ່ບັນດາປະເທດໃນທະວີບເອີລົບ, ອາເມລິກາ ແລະອາເມລິກາລາຕິນໄດ້ຮັບການ ສົນໃຈມານານແລ້ວ, ແຕ່ໃນຂົງເຂດທະວີບອາຊີ ໂດຍສະເພາະຢູ່ບັນດາປະເທດກຳລັງພັດທະນາ ແລະດ້ອຍ ພັດທະນາໄດ້ຮັບຄວາມສົນໃຈໃນບໍ່ພໍເທົ່າໃດ .

ສຳລັບຢູ່ລາວ ການຄົ້ນຄວ້າບັນຫາຊົນເຜົ່າໄດ້ຮັບຄວາມສົນໃຈຫຼາຍ ເລີ່ມແຕ່ໄລຍະເວລາມີພັກປະຊາຊົນປະຕິວັດລາວ ນຳພາເປັນຕົ້ນມາ. ຍ້ອນຄວາມສະຫຼາດສ່ອງໃສຂອງ ພັກ, ເຫັນວ່າບັນຫາຊົນເຜົ່າແມ່ນບັນຫາທີ່ສຳຄັນ ແລະແມ່ນບັນຫາຍຸດທະສາດ ສຳລັບຄວາມເຂັ້ມແຂງຂອງຊາດ. ສະນັ້ນ ຍາມໃດພັກກໍ່ໄດ້ເອົາໃຈໃສ່ຢ່າງຈິດຈໍ່ຕໍ່ບັນຫາຊົນເຜົ່າ ເຊິ່ງສະແດງອອກຄື : ພາຍຫຼັງແນວລາວອິດສະຫຼະໄດ້ຮັບການສ້າງຕັ້ງຂຶ້ນໃນວັນທີ 13 ສິງຫາ ປີ 1950. ຈາກນັ້ນກໍ່ຊົມຊວາຍເອົາພະນັກງານຊົນເຜົ່າຕ່າງໆ ເຂົ້າໃນຖັນແຖວຊັ້ນນຳຂອງແນວລາວອິດສະຫຼະ ແລະລັດຖະບານລາວຕໍ່ຕ້ານ, ປີ1970 ເຊິ່ງເປັນໄລຍະກະກຽມກອງປະຊຸມໃຫ່ຍຄັ້ງທີ II ຂອງພັກ. ສະນັ້ນເພື່ອເຮັດໃຫ້ເນື້ອໃນແທດເໝາະກັບສະພາບຕົວຈິງ ເຊິ່ງມີລັກສະນະເປັນບາດລ້ຽວຂອງການປະຕິວັດລາວ, ສູນກາງແນວລາວສ້າງຊາດ ໄດ້ປຶກສາຫາລື ແລະ ຈັດຕັ້ງຄະນະຄົ້ນຄວ້າສັງຄົມລາວຂຶ້ນ ແລ້ວໄດ້ມອບໝາຍໃຫ້ ຄະນະດັ່ງກ່າວ ເພື່ອຄົ້ນຄວ້າ ແລະກຳນົດຊື່ເອີ້ນຂອງຊົນເຜົ່າໃນວົງຄະນະຍາດແຫ່ງຊາດລາວ ໂດຍມີຈຸດປະສົງ ເພື່ອເຕົ້າໂຮມຄວາມສາມັກຄີ, ແນໃສ່ຮັບໃຊ້ໜ້າທີ່ການເມືອງໃນຂະບວນການຕໍ່ສູ້ເພື່ອປົດປ່ອຍຊາດ, ເພື່ອເຮັດສຳເລັດຈຸດປະສົ່ງ ດັ່ງກ່າວ, ຄະນະຄົ້ນຄ້ວາສັງຄົມລາວຈຶ່ງໄດ້ຄົ້ນຄວ້າ ແລະຈັດຊື່ເອີ້ນ ຂອງຊົນເຜົ່າ ໂດຍອີງໃສ່ທີ່ຕັ້ງພູມລຳເນົາ, ພາສາ ແລະຄວາມໝາຍທາງດ້ານການເມືອງເຊິ່ງໄດ້ຈັດວ່າ ປະເທດລາວ ມີ 3 ຊົນຊາດ ແລະມີ 68 ຊົນເຜົ່າຄືດັ່ງນີ້:

ຊົນຊາດລາວລຸ່ມ:

ໝາຍເຖິງຄົນທີ່ດຳລົງຊີວິດ ແລະຕັ້ງຖິ່ນຖານພູມລຳເນົາຢູ່ທົ່ງພຽງ ແລະແຄມແມ່ນ້ຳ, ປະກອບດ້ວຍ 12 ຊົນເຜົ່າຄື: ຊົນເຜົ່າລາວ, ພວນ, ລື້, ໄທດຳ, ໄທແດງ, ໄທຂາວ, ໄທເມີ້ຍ, ໄທເໜືອ, ໄທຍີ, ຢ້ຳ ແລະແຊກ.

ຊົນຊາດລາວເທິງ:

ໝາຍເຖິງຄົນທີ່ດຳລົງຊີວິດ ແລະຕັ້ງພູມລຳເນົາ ຢູ່ຕາມເປີ້ນພູ ຄວາມສູງເໜືອລະດັບນ້ຳທະເລ ແຕ່ 700 ແມັດຂຶ້ນໄປ ປະກອບມີ 36 ຊົນເຜົ່າຄື: ຊົນເຜົ່າຂະມຸ, ສະເມດ, ບິດ, ຜ້ອງ, ປວກ, ຢຣຸ, ຜຸ້ນ້ອຍ , ກະເສັ້ງ, ດອຍ, ໄພ່, ມະກອງ, ກະຕາງ, ປະໂກ, ລະເວນ, ລະແວ, ຍະເຫີນ, ຕຣຸຍ, ສຸ, ສະປວນ, ສອກ, ຕຶ໊ວ, ຕະລ່ຽງ, ຕະໂອຍ, ອາລັກ, ກະຕູ, ແຢະ, ສ່ວຍ, ເຈ້ງ, ດາກກັ້ງ, ລະວີ, ລະວັກ, ໂອຍ, ຕອງເຫຼືອງ,ກາໂດ,ຖິ່ນແລະສາມຕ່າວ.

ຊົນຊາດລາວສູງ:

ໝາຍເຖິງຄົນທີ່ດຳລົງຊີວິດ ແລະຕັ້ງພູມລຳເນົາຢູ່ຕາມເປີ້ນພູ ຄວາມສູງເໜືອລະດັບນ້ຳທະເລ ແຕ່ 1.000 ແມັດຂຶ້ນໄປ ປະກອບ ມີ 20 ຊົນເຜົ່າຄື: ມົ້ງຂາວ, ມົ້ງລາຍ, ມົ້ງດຳ,ຢ້ຳວ, ແລນແຕນ ກໍປານາ , ກໍສິດາ, ກໍມູຈີ, ກໍປູລີ, ກໍເຟ, ກໍພູຊາງ, ກໍພູຍອດ, ກໍມູເຕີນ, ກໍຈີຈານ, ກໍກົງສາດ, ຮາຍີ, ລາຫູ, ມູເຊີດຳ, ມູເຊີຂາວ ແລະກຸຍ.

ພາຍຫຼັງປະເທດຊາດໄດ້ຮັບການປົດປ່ອຍ, ໃນກອງປະຊຸມໃຫຍ່ຜູ້ແທນທົ່ວປະເທດຄັ້ງວັນທີ 1-2 ທັນວາ ປີ 1975 ໄດ້ຮັບຮອງເອົາກົງຈັກ ຄະນະກຳມະການ ຊົນຊາດ ສູນກາງ ເຂົ້າໃນກົງຈັກ ຂອງລັດຖະບານ, ມີບົດບາດເປັນເສນາທິການໃຫ້ແກ່ຄະນະບໍລິຫານງານ ສູນກາງພັກ ແລະລັດຖະ ບານ ໃນການຄົ້ນຄວ້າຊົນເຜົ່າ ແລະນະໂຍບາຍຊົນເຜົ່າ.

ໃນກອງປະຊຸມຄົ້ນຄວ້າມະຕິຂອງກົມການເມືອງ ສູນກາງພັກກ່ຽວກັບວຽກງານຊົນເຜົ່າຕ່າງໆ ໂດຍສະເພາະແມ່ນເຜົ່າມົ້ງ ໃນວັນທີ 15 - 16 / 6 / 1981 ປະທານ ໄກສອນ ພົມວິຫານ ໄດ້ກ່າວວ່າ: " ເຜົ່າໃດກໍ່ລ້ວນແຕ່ມີຈຸດພິເສດລວມຂອງວົງຄະນະຍາດແຫ່ງຊາດ, ໃນດ້ານອື່ນໆ ກໍ່ມີຈຸດພິເສດ ສະເພາະຂອງຕົນ. ຜ່ານຂະບວນວິວັດແຫ່ງການປະຕິວັດ, ເຜົ່າຕ່າງໆໄດ້ສະໝັກໃຈ ເປັນແຕ່ລະ ພາກສ່ວນແຫ່ງຊາດ ເຊິ່ງແຕ່ກ່ອນເຄີຍເອີ້ນ ຕາມຄວາມໝາຍການເມືອງວ່າ: ຊົນຊາດລາວລຸ່ມ, ຊົນຊາດລາວເທິງ ແລະຊົນຊາດລາວສູງ. ຄະນະກຳມະການຊົນຊາດສູນກາງ ຄວນປະສານສົມທົບ ກັບຂະແໜງການຕ່າງໆ ແລະອ້າຍນ້ອງພະນັກງານເຜົ່າຕ່າງໆ ພ້ອມກັນຄົ້ນ ຄວ້າປຶກສາຫາລື ກັນ ຄວນເອີ້ນວ່າແນວໃດ? ແລະຂຶ້ນບັນຊີລາຍ ຊື່ຊົນເຜົ່າ ເພື່ອ ໃຫ້ເປັນຂໍ້ກຳນົດລວມຂອງລັດເຮົາ".

ເພື່ອປະຕິບັດຕາມແນວທາງນະໂຍບາຍຂອງພັກ ໂດຍສະເພາະແມ່ນຄຳແນະນຳຂອງ ປະທານ ໄກສອນ ພົມວິຫານ, ຄະນະກຳມະການຊົນຊາດ ສູນກາງໄດ້ປ່ຽນ ຊື່ເປັນຄະນະກຳມະການ ຊົນເຜົ່າ ສູນກາງ, ມີພາລະບົດບາດເປັນເສນາທິການ ໃຫ້ແກ່ຄະນະບໍລິຫານງານ ສູນກາງພັກ ແລະສະ ພາລັດຖະມົນຕີ ມີໜ້າທີ່ໃນການສືບຕໍ່ຄົ້ນຄວ້ານະໂຍບາຍ ແລະວຽກງານຄົ້ນຄວ້າຊົນເຜົ່າ ວິທະຍາ.

ຄະນະດັ່ງກ່າວນີ້ໄດ້ສົ່ງວິຊາການ ດ້ານຊົນເຜົ່າວິທະຍາລົງຄົ້ນຄວ້າ, ໃນນີ້ເລັ່ງໃສ່ຄົ້ນຄວ້າ ເກັບກຳດ້ານພາສາ ປາກເວົ້າ, ປະຫວັດຄວາມເປັນມາ,ດ້ານວັດທະນະທຳ - ສັງຄົມ, ດ້ານຈິດຕະສາດ ແລະຄວາມໝາຍຊື່ເອີ້ນຂອງບັນດາຊົນເຜົ່າໃນທົ່ວປະເທດ ເພື່ອຊອກຫາຈຸດພິເສດລວມ ແລະຈຸດ ພິເສດສະເພາະ ແນໃສ່ສັບຊ້ອນຊື່ເອີ້ນຊົນເຜົ່າຄືນໃໝ່, ຂຶ້ນບັນຊີລາຍຊື່ ເພື່ອສະເໜີຂັ້ນເທິງພິຈາລະນາ ແລະຮັບຮອງຢ່າງເປັນທາງການ.

ຜ່ານການລົງຕົວຈິງຢູ່ທ້ອງຖິ່ນ ແລະຜ່ານການຄົ້ນຄວ້າ,ວິໄຈຕາມຫຼັກມູນຊົນເຜົ່າວິທະຍາ ຄະນະວິຊາການໄດ້ສັບຊ້ອນໃນເບື້ອງຕົ້ນວ່າ ຢູ່ລາວ ມີ 47 ຊົນເຜົ່າ. ຂໍ້ມູນນີ້ໄດ້ນຳສະ ເໜີຂັ້ນ ເທິງແຕ່ ບໍ່ທັນໄດ້ຮັບຮອງ, ເຖິງຢ່າງໃດກໍ່ຕາມບັນຊີລາຍຊື່ 47 ຊົນເຜົ່ານີ້ໄດ້ນຳໃຊ້ເປັນ ບ່ອນອີງໃຫ້ແກ່ການ ສຳຫຼວດພົນລະເມືອງຄັ້ງທີII ປີ 1995.

2.ບັນດາບ່ອນອີງ ແລະມາດຖານ ຫຼືຫຼັກການໃນການຄົ້ນຄວ້າ, ສັບຊ້ອນ ແລະຈັດແບ່ງຊື່ເອີ້ນ ຂອງຊົນເຜົ່າ:

2.1. ສັບທີ່ກ່ຽວຂ້ອງ- ກົກ ຫຼື ຕະກຸນ (Clan) : ແມ່ນຮູບຖານປະຊາຄົມອັນທຳອິດ ເຊິ່ງປະກອບດ້ວຍບຸກຄົນທີ່ມີ ສາຍເລືອດດຽວກັນ.

- ເຫຼົ່າ ຫຼື ສະຫະກົກສິດ(Tribe): ແມ່ນການລວມກັນຂອງຫຼາຍຄົນ ຫຼືເຊື້ອຕະກຸນທີ່ມີສາຍ ເລືອດດຽວກັນຍ້ອນຄວາມຕ້ອງການຂອງການດຳລົງຊີວິດ ແລະການຜະລິດ, ບາງຄົນເອີ້ນວ່າ: ສຳພັນ ກົກ ຫຼື ສະຫະກົກສິດ.

- ຊົນເຜົ່າ(Ethnic): ແມ່ນກຸ່ມຄົນທີ່ມີພາສາປາກເວົ້າລວມກັນ, ມີກົກເຄົ້າປະຫວັດສາດຄວາມ

ເປັນມາຮ່ວມກັນ, ມີພື້ນຖານວັດທະນະທຳລວມກັນ ແລະເຊື່ອວ່າສືບເຊື້ອສາຍມາຈາກບັນພະບຸລຸດ ດຽວກັນ (ມີບາງປະເພດເກືອບວ່າມີດິນແດນຂອງກັນ ແລະກັນ).

<u>ເຊື້ອຊາດ (Race)</u>: ແມ່ນກຸ່ມຄົນທີ່ມີລັກສະນະທາງກາຍະພາບຄ້າຍຄືກັນເຊັ່ນ: ຮູບຊົງ, ຜົມ, ດັ້ງ, ຕາ, ສີບ, ຜິວພັນ ແລະອື່ນໆ.

<u>ສັນຊາດ (Nationality)</u>: ແມ່ນກຸ່ມຄົນທີ່ເປັນສະມາຊິກຂອງປະເທດດຽວກັນ ແລະໝາຍເຖິງ ການກາຍເປັນສະມາຊິກຂອງປະເທດນັ້ນໆຕາມກົດໝາຍໂດຍມີລັກສະນະທາງກາຍະພາບ ແລະ ວັດ ທະນະທຳ ອາດແຕກຕ່າງກັນ.

<u>ຊາດ / ຊົນຊາດ (Nation)</u>: ແມ່ນກຸ່ມວິຖະນະຍາດຄົນເຊິ່ງມີຈຸດພິເສດຮ່ວມກັນທາງດ້ານພາ ສາປາກເວົ້າ, ດ້ານປະຫວັດສາດຄວາມເປັນມາ, ດ້ານຜືນແຜນດິນ ແລະດ້ານການດຳເນີນຊີວິດທາງ ເສດຖະກິດກໍ່ຄືການປະກອບສ້າງຈິດຕະສາດເຊິ່ງສະແດງອອກທາງດ້ານວັດທະນະທຳ.

2.2. <u>ບັນດາບ່ອນອີງ ແລະມາດຖານ ຫຼືຫຼັກການໃນການຄົ້ນຄວ້າ</u>.

ສຳລັບການຄົ້ນຄວ້າເພື່ອສັບຊ້ອນ ແລະກຳນົດຊື່ເອີ້ນຂອງຊົນເຜົ່າໃນລາວ, ເພື່ອໃຫ້ບັນລຸຕາມ ຈຸດປະສົງທີ່ໄດ້ວາງໄວ້ໃນເບື້ອງຕົ້ນທາງດ້ານວິຊາການມີບ່ອນອີງດັ່ງນີ້:

1. ອີງໃສ່ 4 ມາດຖານ ຫຼື ຫຼັກການຂອງການກຳນົດຊາດໜຶ່ງໆເຊິ່ງປະກອບມີ:
- ດ້ານພາສາປາກເວົ້າລວມ
- ດ້ານຜືນແຜນດິນລວມ
- ດ້ານປະຫວັດສາດການດຳລົງຊີວິດທາງດ້ານເສດຖະກິດລວມ.
- ດ້ານການປະກອບສ້າງທາງຈິດຕະສາດລວມ ເຊິ່ງສະແດງອອກທາງດ້ານວັດທະນະທຳ.

2. ອີງໃສ່ສະພາບຈຸດພິເສດຕົວຈິງຂອງຊົນເຜົ່າໃນລາວ.

3. ອີງໃສ່ແນວທາງນະໂຍບາຍໃນການແກ້ໄຂບັນຫາຊົນເຜົ່າຂອງພັກເວົ້າລວມ, ເວົ້າສະເພາະ ເມືອງ ສູນກາງພັກ ກ່ຽວກັບວຽກງານຊົນເຜົ່າຕ່າງໆ ຄັ້ງ ວັນທີ 15 - 16 / 6 / 1981.

4. ອີງໃສ່ມະຕິຂອງຄະນະບໍລິຫານງານສູນກາງພັກ ກ່ຽວກັບວຽກງານຊົນເຜົ່າໃນໄລຍະໃໝ່ ສະບັບລົງວັນທີ 20 ພຶດສະພາ ປີ 1992 .

5. ອີງໃສ່ບັນດາເອກະສານ ທີ່ກ່ຽວຂ້ອງກັບຊົນເຜົ່າທັງພາສາລາວ ແລະພາສາຕ່າງປະເທດ.

2.3. <u>ການວິໄຈຂໍ້ມູນຕາມຫຼັກການຊົນເຜົ່າວິທະຍາ</u>

ສຳລັບວິຊາການໃນນາມຜູ້ຢູ່ເຄິ່ງກາງ ລະຫວ່າງຂໍ້ມູນວິທະຍາສາດ ກັບຂໍ້ມູນທ້ອງຖິ່ນ, ເຕັກ ໂນໂລຊີກັບພູມປັນຍາຊາວບ້ານ. ນອກຈາກຈະຕ້ອງກຳແໜ້ນຫຼັກການຊົນເຜົ່າວິທະຍາແລ້ວຍັງຈະຕ້ອງ ກຳແໜ້ນແນວທາງການເມືອງ ແລະແຜນນະໂຍບາຍຂອງພັກກ່ຽວກັບວຽກງານຊົນເຜົ່າໃນແຕ່ລະໄລຍະ ເພື່ອເປັນບ່ອນອີງພື້ນຖານຂອງການຄົ້ນຄວ້າ.

ໂດຍມີບັນດາບ່ອນອີງທີ່ໄດ້ກ່າວມາ, ສາມາດວິໄຈໄດ້ວ່າການທີ່ເອີ້ນ ຊົນຊາດລາວລຸ່ມ, ລາວ ເທິງ ແລະລາວສູງໃນເວລານັ້ນມີຄວາມໝາຍທາງດ້ານພູມລຳເນົາ ແລະຄວາມໝາຍທາງດ້ານການ ເມືອງແນໃສ່ເຕົ້າໂຮມຄວາມສາມັກຄີປອງດອງ, ພ້ອມກັນສຸມກຳລັງໃສ່ການປະຕິວັດຕໍ່ສູ້ປົດປ່ອຍປະ ເທດຊາດເທົ່ານັ້ນ. ມາຮອດສະໄໝປະຈຸບັນຊື່ທີ່ເອີ້ນສາມຊົນຊາດ ຫຼືສາມຊົນເຜົ່າໃຫ່ຍກໍ່ບໍ່ສອດຄ່ອງ.

ດັ່ງນັ້ນ ປະທານໄກສອນ ພົມວິຫານ ເຊິ່ງເປັນຜູ້ກຳໄດ້ກ່ຽວກັບວຽກງານຊົນເຜົ່າວິທະຍາ ແລະເພິ່ນກໍ່ໄດ້ຄົ້ນຄວ້າລະອຽດເລິກເຊິ່ງກ່ຽວກັບບັນຫາຊົນເຜົ່າ. ສະນັ້ນເພິ່ນຈຶ່ງໄດ້ແນະນຳໃນກອງປະຊຸມປີ 1981 ວ່າ: ບໍ່ຄວນເອີ້ນຊົນຊາດລາວລຸ່ມ, ລາວເທິງ ແລະລາວສູງ ຫຼືບໍ່ຄວນເອີ້ນສາມຊົນເຜົ່າໃຫຍ່, " ຄວນເອີ້ນວ່າບັນດາຊົນເຜົ່າ ຫຼືຊົນເຜົ່າຕ່າງໆຕາມຊື່ແຕ່ລະຊົນເຜົ່າເຂົາເຈົ້າເອີ້ນຕົນເອງມາຕັ້ງແຕ່ບູຮານ ".

ເພື່ອເປັນການພິສູດແລະຢັ້ງຢືນຄຳເວົ້າຂອງ ປະທານໄກສອນ ພົມວິຫານ ຈຶ່ງຂໍນຳເອົາ 4 ມາດຖານ ຫຼື ຫຼັກການມາວິໄຈຊົນເຜົ່າຢູ່ໃນລາວໂດຍສັງເຂບດັ່ງນີ້:

1. ວິໄຈເບິ່ງມາດຖານທາງດ້ານພາສາປາກເວົ້າ.

ໃນປະຈຸບັນຊົນເຜົ່າຕ່າງໆໃນທົ່ວປະເທດ ລ້ວນແຕ່ໃຊ້ພາສາລາວ, ເຊິ່ງໄດ້ກຳນົດເອົາພາສາລາວເປັນພາສາແຫ່ງຊາດ (ພາສາທາງການ). ໃນດ້ານອື່ນຊົນເຜົ່າຕ່າງໆກໍ່ມີການຮັກສາພາສາປາກເວົ້າເດີມຂອງຕົນເອງເຊັ່ນ: ພາສາກຶມມຸ, ພາສາມົ້ງ, ພາສາລື້, ພາສາຍວນ, ພາສາຕະໂອ້ຍ, ພາສາກະຕາງ ແລະ ອື່ນໆ. ແຕ່ຢູ່ໃນລະບົບພາສາຂອງຊົນເຜົ່ານັ້ນມີຫຼາຍອັນທີ່ຄືກັນ ແລະ ຫຼາຍອັນທີ່ແຕກຕ່າງກັນ ຄວາມຄືກັນຂອງພາສາຊົນເຜົ່ານັ້ນເວົ້າໄດ້ວ່ານອນຢູ່ໃນລະບົບ ຫຼື ຕະກຸນດຽວກັນ ແລະຄວາມແຕກຕ່າງກັນຂອງພາສາຊົນເຜົ່ານັ້ນເອີ້ນວ່າ: ຢູ່ໃນຕະກຸນຕ່າງກັນ.

ໂດຍອີງໃສ່ລະບົບຕະກຸນພາສາດັ່ງກ່າວຈຶ່ງຈັດບັນດາຊົນເຜົ່າຢູ່ລາວເຂົ້າໃນ 4 ໝວດພາສາປາກເວົ້າຄື: ໝວດພາສາລາວ - ໄຕ, ໝວດພາສາມອນ - ຂະແມ (ໃນນີ້ມີພາສາຫວຽດເມືອງ), ໝວດພາສາຈີນ - ຕິເບດ (ໃນນີ້ມີພາສາຫໍ) ແລະ ໝວດພາສາມົ້ງ - ອີ້ວມຽນ.

2. ວິໄຈເບິ່ງທາງດ້ານຜືນແຜນດິນ:

ໃນມາດຖານນີ້ອີງໃສ່ສະພາບຈຸດພິເສດຢູ່ໃນລາວແລ້ວບັນດາຊົນເຜົ່າລ້ວນແຕ່ດຳລົງຊີວິດຢູ່ຜືນແຜນດິນດຽວກັນ, ແຕ່ເຂົາເຈົ້າດຳລົງຊີວິດຢູ່ຢ່າງສະຫຼັບສັບຫວ່າງກັນແຕ່ເໜືອຮອດໃຕ້ . ແຕ່ໃດໆມາຊາດລາວບໍ່ໄດ້ແບ່ງເປັນສາມຊາດ, ບໍ່ໄດ້ແບ່ງເປັນສາມລັດ, ບໍ່ເຄີຍມີຊົນເຜົ່າໃດຊົນເຜົ່າໜຶ່ງຢູ່ເປັນເຂດປົກຄອງຕົນເອງຕ່າງຫາກ. ໝາຍຄວາມວ່າແຕ່ບູຮານເຖິງປະຈຸບັນກໍ່ເປັນຊາດລາວເອກະພາບຕະຫຼອດມາເຊິ່ງຕ່າງກັນກັບບັນດາປະເທດອື່ນໆ.

3. ວິໄຈເບິ່ງທາງດ້ານມາດຖານເສດຖະກິດ:

ມາດຖານນີ້ ບັນດາຊົນເຜົ່າຢູ່ໃນລາວລ້ວນແຕ່ດຳລົງຊີວິດດ້ວຍຮູບຖານເສດຖະກິດແບບດຽວກັນຄື: ເສດຖະກິດກະສິກຳ (ການປູກຝັ່ງ, ລ້ຽງສັດ ແລະຫັດຖະກຳ) ແບບເພິ່ງຕົນເອງ,ກຸ້ມຕົນເອງ ເວົ້າລວມແມ່ນບໍ່ທັນມີຮູບຖານ ແລະການຜະລິດເສດຖະກິດທີ່ເປັນເອກະລັກ ຫຼື ສັນຍາລັກສະພາະ ຂອງຊົນເຜົ່າ, ຊົນເຜົ່າລາວບໍ່ສາມາດຈະເອົາເອກະລັກທາງດ້ານເສດຖະກິດຂອງຊົນເຜົ່າໃດໜຶ່ງເປັນມາດຖານລວມໄດ້.

4. ວິໄຈເບິ່ງທາງດ້ານຈິດຕະສາດ ແລະວັດທະນະທຳ:

ໃນບັນຫານີ້ ມັນໄດ້ສະແດງໃຫ້ເຫັນວ່າຊົນເຜົ່າຕ່າງໆໃນລາວລ້ວນແຕ່ມີ ວັດທະນະທຳລາວເອກະພາບ, ເຊິ່ງຊົນເຜົ່າໃດກໍ່ຖືວ່າຊົນເຜົ່າຕົນເອງແມ່ນພາກສ່ວນໜຶ່ງຂອງວົງຄະນະຍາແຫ່ງຊາດລາວ,ໃຜໆກໍ່ລ້ວນແຕ່ຖືວ່າຕົນເອງແມ່ນຄົນລາວ, ຢູ່ດິນລາວ, ມີນິດໄສຂະນົບທຳນຽມປະເພນີແບບລາວ ແລະຖືເອົາພາສາລາວເປັນພາສາກາງ. ພ້ອມກັນນັ້ນແຕ່ລະຊົນເຜົ່າກໍ່ມີຈິດຕະສາດ, ຮີດຄອງປະເພນີ ແລະວັດທະນະທຳທີ່ເປັນເອກະລັກສະເພາະຂອງເຜົ່າຕົນເອງ ເຊິ່ງສະແດງ ອອກໃນຄວາມມັກ,

ຄວາມຊິນເຄີຍ,ໃນແບບແຜນການດຳລົງຊີວິດດ້ານວັດຖຸ ແລະຈິດໃຈ.

ບັນດາຈິດຕະສາດ, ຮີດຄອງປະເພນີ ແລະວັດທະນະທຳ ຂອງບັນດາຊົນເຜົ່າ ໂດຍພື້ນຖານ ແລ້ວບໍ່ໄດ້ຂັດແຍ່ງກັບຈິດຕະສາດລວມ, ວັດທະນະທຳລວມຂອງວົງຄະນະຍາດແຫ່ງຊາດລາວ. ແຕ່ຍັງ ເປັນສ່ວນປະກອບສ້າງອັນສຳຄັນ, ເພີ່ມຄວາມອຸດົມຮັ່ງມີຫຼາຍຮູບຫຼາຍສີໃຫ້ແກ່ວັດທະນະທຳລວມ ຂອງ ຊາດ. ພ້ອມກັນນີ້ການເຄົາລົບນັບຖືຄຸນຄ່າວັດທະນະທຳຂອງແຕ່ລະຊົນເຜົ່າ ແລະສິດສະເໝີພາບລະ ຫວ່າງຊົນເຜົ່າຕ່າງໆໃນວົງຄະນະຍາດແຫ່ງຊາດລາວ ແມ່ນນະໂຍບາຍພື້ນຖານຂອງພັກ ແລະລັດຖະ ບານລາວ. ເຖິງແມ່ນວ່າການຂະຫຍາຍຕົວບໍ່ສະໝ່ຳສະເໝີກັນທາງດ້ານເສດຖະກິດລະຫວ່າງຊົນເຜົ່ານີ້ ກັບຊົນເຜົ່ານັ້ນ, ລະຫວ່າງເຂດທົ່ງພຽງກັບເຂດພູດອຍ, ເຂດຕົວເມືອງກັບເຂດຊົນນະບົດກໍ່ຕາມ ແຕ່ບໍ່ ເປັນການ ກີດກັ້ນການກໍ່ສ້າງພື້ນຖານວັດທະນະທຳແຫ່ງຊາດເອກະພາບແຕ່ຢ່າງໃດ.ຈາກການວິໄຈ 4 ມາດຖານຂ້າງເທິງສາມາດ ສະຫຼຸບໄດ້ວ່າ ປະເທດລາວມີພຽງແຕ່ ຊາດລາວຊາດໜຶ່ງຊາດດຽວເທົ່ານັ້ນ. ໝາຍຄວາມວ່າການທີ່ເອີ້ນສາມຊາດຫຼືສາມຊົນເຜົ່າໃຫ່ຍແມ່ນບໍ່ສອດຄອງກັບ ສະພາບຄວາມ ເປັນຈິງໃນປະຈຸບັນ. ເຫັນສົມຄວນທີ່ຈະຕ້ອງໄດ້ແກ້ໄຂ ແລະຄ່ອຍຫັນມານຳໃຊ້ວ່າ ຊາດ ລາວ, ທັງນີ້ກໍ່ເປັນເຫດຜົນອີກວ່າ: ການປະກົດຕົວຂຶ້ນຂອງຊາດບໍ່ແມ່ນໂດຍຄວາມມຸ່ງມາດປາດຖະ ໜາຂອງຄົນເຮົາ, ບໍ່ແມ່ນໂດຍມະນະຈິດຂອງອຳນາດການປົກຄອງ. ມັນແມ່ນເນື່ອງຈາກຜົນແຫ່ງ ການກະທົບຂອງບັນດາກົດເກນເສດຖະກິດ ແລະສັງຄົມນັ້ນເອງ.

ສຳລັບຊົນເຜົ່າ, ຕາມຫຼັກການຊົນເຜົ່າວິທະຍາແລ້ວກໍ່ປະກອບດ້ວຍ 4 ມາດຖານຄືກັນກັບ ຊາດທີ່ໄດ້ກ່າວມາ. ແຕ່ຈະມີລະດັບຕ່ຳກວ່າ ແລະບໍ່ໜັກແໜ້ນຄືກັບຊາດເປັນຕົ້ນແມ່ນລະດັບທາງດ້ານ ເສດຖະກິດ ແລະທາງດ້ານຜືນແຜນດິນ. ສະເພາະຢູ່ປະເທດ ສ ປ ປ ລາວ ຖ້າຖືເອົາມາດຖານດ້ານຜືນ ແຜນດິນເພື່ອມາສັບຊ້ອນ, ຈັດແບ່ງ ແລະກຳນົດຊື່ຊົນເຜົ່າເຫັນວ່າບໍ່ຊັດເຈນ, ບໍ່ເໝາະສົມ ແລະກໍ່ບໍ່ຖືກ ຕ້ອງກັບສະພາບຈຸດພິເສດຕົວຈິງຂອງຊົນເຜົ່າຢູ່ໃນລາວ. ສະນັ້ນວິຊາການດ້ານຊົນເຜົ່າວິທະຍາຈຶ່ງໄດ້ ຄັດເລືອກເອົາບາງມາດຖານຊາດໜຶ່ງໆ ແລະອີງໃສ່ຈຸດພິເສດກໍ່ຄືສະພາວະຄວາມເປັນຈິງຂອງຊົນເຜົ່າ ຕ່າງໆຢູ່ໃນລາວເພື່ອກຳນົດມາດຖານອອກມາເປັນບ່ອນອີງໃນການຄົ້ນຄວ້າ. ຢາກຮູ້ວ່າແມ່ນ ຊົນເຜົ່າ ດຽວກັນ ຫຼືບໍ່ແມ່ນ, ຊົນເຜົ່າດຽວກັນນັ້ນຕ້ອງອີງໃສ່ແຕ່ 3 ມາດຖານເພື່ອຄົ້ນຄວ້າດັ່ງນີ້:

1. ດ້ານ ພາສາປາກເວົ້າ.
2. ດ້ານປະຫວັດຄວາມເປັນມາ ໂດຍຕິດພັນກັບຊື່ເອີ້ນເດີມ.
3. ດ້ານຮີດຄອງປະເພນີ ແລະວັດທະນະທຳ.

ນອກຈາກ 3 ມາດຖານຂ້າງເທິງແລ້ວພວກເຮົາວິຊາການດ້ານຊົນເຜົ່າວິທະຍາກໍ່ຍັງຢຶດ ໝັ້ນໃນທັດສະນະຂອງພັກ, ໂດຍສະເພາະແມ່ນທັດສະນະ ແລະການແນະນຳຂອງ ປະທານໄກສອນ ພົມວິຫານ ທີ່ວ່າ: " ການຄົ້ນຄວ້າ ແລະຢືນຢັນບັນຫາໃດໜຶ່ງກ່ຽວກັບຊົນເຜົ່ານັ້ນແມ່ນອີງໃສ່ບົນພື້ນຖານ ຄວາມຕື່ນຕົວ ແລະສະໜັກໃຈຂອງຊົນເຜົ່າ "

2.4. <u>ຂັ້ນຕອນດຳເນີນການຄົ້ນຄວ້າເພື່ອສັບຊ້ອນແລະກຳນົດຊື່ເອີ້ນຊົນເຜົ່າໃນລາວ</u>.

- ໄດ້ຮີບໂຮມເອົາທັງໝົດບັນດາເອກະສານທີ່ຂຽນເຖິງຊົນເຜົ່າຕ່າງໆຢູ່ໃນລາວລວມທັງບັນຊີ ລາຍຊື່ຊົນເຜົ່າທີ່ໄດ້ຄົ້ນຄວ້າ ແລະຈັດຂຶ້ນມາກ່ອນຂອງນັກຄົ້ນຄວ້າທັງພາຍໃນ ແລະຕ່າງປະເທດ (ນັບ ທັງພາ ສາລາວ ແລະພາສາຕ່າງປະເທດ) ມາວິໄຈ ແລະສົມທຽບໃສ່ກັນເບິ່ງວ່າມັນຜິດ ຫຼືຖືກເພື່ອທີ່ຈະ ດັດແປງ ແລະລົງຄົ້ນຄວ້າຕື່ມ (ມີເອກະສານອ້າງອີງ ແລະຜູ້ໃຫ້ຂໍ້ມູນ) .

ລ້ຽງສຳພວດຕົວຈິງຢູ່ທ້ອງຖິ່ນໂດຍສົມທົບກັບອຳນາດການປົກຄອງແຕ່ລະຂັ້ນເກັບກຳເອົາປະຫວັດຄວາມເປັນມາ, ການເຄື່ອນຍ້າຍ ແລະວິວັດການຂະຫຍາຍຕົວພ້ອມທັງບັນດາຊື່ເອີ້ນຂອງແຕ່ລະຊົນເຜົ່າຕາມທ້ອງຖິ່ນ, ຊື່ເກົ່າ, ຊື່ໃໝ່, ຊື່ທີ່ຊົນເຜົ່າເຂົາເຈົ້າເອີ້ນຕົນເອງ ແລະຊື່ທີ່ຊົນເຜົ່າອື່ນເອີ້ນໃຫ້ເຂົາເຈົ້າ, ເກັບກຳດ້ານພາສາປາ ກເວົ້າລວມທັງລຳດັບການນັບຖືຮີດຄອງປະເພນີ, ວັດທະນະທຳທາງດ້ານວັດຖຸກໍ່ຄືດ້ານຈິດໃຈຂອງຊົນເຜົ່າຕ່າງໆ. ພ້ອມກັນນີ້ກໍ່ຍັງໄດ້ມີການຄົ້ນຄ້ວາປຶກສາຫາລືແລະຂໍຄຳຄິດເຫັນຈາກຊົນເຜົ່າໃນການສັບຊ້ອນ ແລະ ກຳນົດຊື່ຕາມສະພາບຕົວຈິງບົນພື້ນຖານຫຼັກມູນວິທະຍາສາດ.

ນຳເອົາຂໍ້ມູນທັງໝົດມາສຶກສາ, ຄົ້ນຄ້ວາ ແລະວິໄຈ ໂດຍອີງໃສ່ 3 ມາດຖານ ຂອງຊົນເຜົ່າໜຶ່ງໆ ທີ່ໄດ້ກຳນົດໄວ້ນັ້ນ.

ຈັດກອງປະຊຸມຄົ້ນຄ້ວາປຶກສາຫາລືກ່ຽວກັບຊື່ເອີ້ນຂອງຊົນເຜົ່າ ຢູ່ແຕ່ລະແຂວງ ໃນທົ່ວປະເທດ ແລະຢູ່ຂັ້ນສູນກາງ ໂດຍໄດ້ຮັບການຢັ້ງຢືນເຫັນດີຈາກຜູ້ທີ່ເຂົ້າຮ່ວມກອງປະຊຸມ ແລະອຳນາດການປົກຄອງທີ່ກ່ຽວຂ້ອງ.

2.5. <u>ການນຳໃຊ້ 3 ມາດຖານ ເພື່ອຄົ້ນຄ້ວາ, ສັບຊ້ອນ ແລະກຳນົດຊື່ເອີ້ນຂອງຊົນເຜົ່າ:</u>

ເພື່ອຢາກຮູ້ວ່າ ວົງຄະນະຍາດຄົນແມ່ນຊົນເຜົ່າດຽວກັນ ຫຼືບໍ່ແມ່ນຊົນເຜົ່າດຽວກັນນັ້ນ, ວິຊາການໄດ້ນຳໃຊ້ 3 ມາດຖານຄົ້ນຄ້ວາ, ວິໄຈເພື່ອສັບຊ້ອນ ແລະກຳນົດຊື່ເອີ້ນຂອງຊົນເຜົ່າໃນລາວຄືດັ່ງນີ້:

<u>2.5.1. ມາດຖານດ້ານພາສາປາກເວົ້າ:</u>

ກ່ຽວກັບບັນຫານີ້ເຫັນວ່າແຕ່ລະຊົນເຜົ່າ ຍັງຮັກສາການປາກເວົ້າເດີມຂອງຕົນເອງ, ໃນພາສາຂອງແຕ່ລະຊົນເຜົ່ານັ້ນພົດມອນຄ້າຍຄືກັນ ແລະແຕກຕ່າງກັນເຊັ່ນວ່າ: ພາສາ ຂອງຊົນເຜົ່າລາວແຕກຕ່າງກັບ ພາສາ ຂອງຊົນເຜົ່າມົ້ງ, ພາສາ ຂອງຊົນເຜົ່າກຶມມຸ ແຕກຕ່າງ ກັບພາສາຂອງຊົນເຜົ່າ ອາຄາ (ຊົນ ເຜົ່າກໍ), ພາສາຊົນເຜົ່າ ຕະໂອ້ຍແຕກຕ່າງກັບພາສາຂອງຊົນເຜົ່າລື້ ແລະອື່ນໆ. ຄວາມແຕກຕ່າງກັນຢູ່ໃນພາສານັ້ນໝາຍຄວາມວ່າພາສາບໍ່ໄດ້ຢູ່ໃນໝວດຕະກຸນພາສາດຽວກັນ. ຄຽງຄູ່ກັນນັ້ນມີຫຼາຍຊົນເຜົ່າທີ່ມີພາສາປາກເວົ້າຄ້າຍຄືກັນ, ເຂົາເຈົ້າສາມາດໂອ້ລົມສົນທະນາ ແລະເຂົ້າໃຈກັນໄດ້ ໂດຍບໍ່ຈຳເປັນໃຊ້ຜູ້ແປເຊັ່ນ: ພາສາຊົນເຜົ່າ ຕຽງກັບພາສາຊົນເຜົ່າ ແຢະ, ພາສາຊົນເຜົ່າ ເຈັງ ກັບພາສາຊົນເຜົ່າ ໂອຍ, ພາສາຊົນເຜົ່າ ອາຄາກັບພາສາຊົນເຜົ່າ ລາຫູ, ພາສາຊົນເຜົ່າ ລາວກັບພາສາຊົນເຜົ່າລື້ ແລະອື່ນໆ ເປັນຕົ້ນ. ຄວາມຄ້າຍຄືກັນລະຫວ່າງພາສາຂອງຊົນເຜົ່ານັ້ນໝາຍຄວາມວ່າ: ພາສາຢູ່ໃນໝວດຕະກຸນດຽວກັນ. ຍ້ອນຄວາມຄ້າຍຄືກັນ ແລະແຕກຕ່າງກັນລະຫວ່າງພາສາຂອງຊົນເຜົ່ານັ້ນ ຈຶ່ງຈັດຊົນເຜົ່າຢູ່ລາວເຂົ້າໃນ 4 ໝວດພາສາຄື: ໝວດພາສາລາວ - ໄຕ, ໝວດພາສາມອນ - ຂະແມ (ໃນນີ້ມີພາສາຫວຽດເມືອງ), ໝວດພາສາຈີນ - ຕິເບດ (ໃນນີ້ມີພາສາຫໍ້) ແລະໝວດພາສາມົ້ງ - ອີ້ວມຽນ. ມາດຖານທາງດ້ານພາສາຢ່າງດຽວບໍ່ສາມາດກຳນົດເປັນຊົນເຜົ່າໜຶ່ງໄດ້ເພາະ ວ່າ: ຊົນເຜົ່າໜຶ່ງໆສາມາດ ເວົ້າໄດ້ຫຼາຍພາສາ.

<u>2.5.2. ມາດຖານດ້ານປະຫວັດຄວາມເປັນມາໂດຍຕິດພັນກັບຊື່ເອີ້ນ:</u>

ໃນດ້ານນີ້ສະແດງໃຫ້ຮູ້ວ່າບັນດາຊົນເຜົ່າຢູ່ໃນໝວດພາສາດຽວກັນລ້ວນແຕ່ມີປະຫວັດຄວາມເປັນມາ ແລະຕົ້ນກຳເນີດຄ້າຍຄືກັນ. ຍ້ອນການຍົກຍ້າຍໃນແຕ່ລະໄລຍະ, ແຕ່ລະເສັ້ນທາງໄດ້ຮັບອິດທິພົນ, ສະພາບແວດລ້ອມບໍ່ຄືກັນເຮັດໃຫ້ເກີດມີການປ່ຽນແປງຂຶ້ນໃນສັງຄົມຂອງບັນດາຊົນເຜົ່າ, ບາງຊົນເຜົ່າກໍ່ຄົງຕົວ, ບາງຊົນເຜົ່າກໍ່ຂະຫຍາຍຕົວອອກເປັນຫຼາຍແຊກ, ຫຼາຍແຊງ ຫຼືຂະແໜງ

ແລ້ວຮັບເອົາຊື່ເອີ້ນໃໝ່. ດັ່ງນັ້ນຊົນເຜົ່າໜຶ່ງໆຈະມີຫຼາຍຊື່ເອີ້ນໃນນີ້ມີທັ້ງຊື່ເອີ້ນຊົນເຜົ່າຕົນເອງ , ຊື່ ທີ່ຊົນເຜົ່າອື່ນເອີ້ນໃຫ້, ຊື່ທີ່ເອີ້ນຕາມບ່ອນຢູ່ອາໄສເຊັ່ນ: ຊື່ບ້ານ, ຊື່ເມືອງ, ຊື່ເອີ້ນຕາມພາສາປາກເວົ້າ, ຊື່ເອີ້ນຕາມແບບແຜນການດຳລົງຊີວິດ, ຊື່ເອີ້ນຕາມການນຸ່ງຫົ່ມ, ຊື່ເອີ້ນຕາມເຈົ້ານາຍເຈົ້າເຫຼົ່າ,ຊື່ເອີ້ນ ຕາມທຳມະຊາດເຊັ່ນ: ຊື່ພູຜາປ່າໄມ້, ຊື່ຫວ້ຍຮ່ອງຄອງບຶງ, ຊື່ແມ່ນ້ຳລຳເຊ , ຊື່ກົກໄມ້ ແລະອື່ນໆ ເປັນ ຕົ້ນ. ນອກຈາກນີ້ແລ້ວຈະເຫັນໄດ້ວ່າຊື່ເອີ້ນຂອງຊົນເຜົ່ານັ້ນມີທັ້ງຊື່ທີ່ມີຄວາມໝາຍດີ ແລະບໍ່ດີ, ມີທັ້ງ ຊື່ເອີ້ນແບບລັກສະນະສົງດສີ,ດູຖູກ ແລະໜຶ່ນປະໝາດ.

ສະນັ້ນການຄົ້ນຄວ້າ, ວິໄຈ ແລະປຽບທຽບຊື່ເອີ້ນສາມາດຮູ້ໄດ້ວ່າຊົນເຜົ່ານັ້ນໆມີຊື່ເອີ້ນແນວ ໃດແທ້, ແມ່ນຊື່ທີ່ເຂົາເຈົ້າເອີ້ນເອງ ຫຼືຊື່ທີ່ຊົນເຜົ່າອື່ນເອີ້ນໃຫ້ . ພ້ອມກັນນີ້ກໍ່ເຫັນວ່າຄວນຮັກສາຊື່ທີ່ມີ ຄວາມໝາຍທີ່ດີ ແລະຊື່ທີ່ເຂົາເຈົ້າເອີ້ນຕົນເອງມາແຕ່ບູຮານນະການ ໂດຍສອດຄ່ອງກັບປະຫວັດ ຄວາມເປັນມາ ແລະຕົນກຳເນີດ. ກົງກັນຂ້າມກໍ່ຄວນຈະລຶບລ້າງ, ຊື່ເອີ້ນທີ່ມີລັກສະນະສົງດສີ, ດູຖູກ ແລະໜຶ່ນປະໝາດເຊັ່ນ: ແມ້ວ,ໂສ້, ຂ້າສອງຫາງ, ຂ້າຫູບ່ອງ, ຂ້າແຂ້ວຕັດ ແລະອື່ນໆ. ພ້ອມກັນນີ້ມີຫຼາຍ ຊື່ເອີ້ນເມື່ອເອົາມາດຖານທາງດ້ານພາສາປາກເວົ້າ ແລະດ້ານຮີດຄອງປະເພນີວັດທະນະທຳ ມາປຽບ ທຽບໃສ່ແລ້ວຍັງບໍ່ສາມາດຈັດເປັນຊົນເຜົ່າໜຶ່ງໄດ້, ໝາຍຄວາມວ່າເປັນແຊກ, ເປັນແຊ ຫຼື ຂະແໜງ ໜຶ່ງຂອງຊົນເຜົ່າເທົ່ານັ້ນ, ເວົ້າອີກຢ່າງໜຶ່ງວ່າແມ່ນຊົນເຜົ່າດຽວກັນ, ເຖິງແມ່ນວ່າຊື່ເອີ້ນ ຈະຕ່າງກັນກໍ່ ຕາມ, ຖ້າທາງພາສາ, ປະຫວັດຄວາມເປັນມາ ແລະວັດທະນະທຳຄືກັນ.

2.5.3. ມາດຖານດ້ານຮີດຄອງປະເພນີ ແລະວັດທະນະທຳ:

ດ້ານນີ້ບັນດາຊົນເຜົ່າໃນລາວມີວັດທະນະທຳລວມຂອງຊາດເອກະພາບແລ້ວ, ແຕ່ລະຊົນເຜົ່າ ກໍ່ຍັງມີຂະນົບທຳນຽມ, ຮີດຄອງປະເພນີ ແລະວັດທະນະທຳ ອັນເປັນເອກະລັກສະເພາະຂອງຊົນເຜົ່າ ຕົນເອງ ເຊິ່ງມັນສະແດງອອກໃນດ້ານຄວາມມັກ, ຄວາມຊິນເຄີຍ, ຄວາມເຊື່ອຖື ແລະການດຳລົງຊີວິດ ທາງດ້ານວັດຖຸ ແລະດ້ານຈິດໃຈ. ການວິໄຈສະແດງໃຫ້ເຫັນວ່າ: ຊົນເຜົ່າທີ່ຢູ່ໃນໝວດພາສາດຽວກັນມີ ຮີດຄອງປະເພນີ ແລະວັດທະນະທຳຄ້າຍຄືກັນ. ກົງກັນຂ້າມຊົນເຜົ່າທີ່ຢູ່ໃນໝວດພາສາທີ່ແຕກຕ່າງກັນ ກໍ່ຈະມີປະເພນີ ແລະວັດທະນະທຳທີ່ແຕກຕ່າງກັນອອກໄປ. ຢູ່ໃນແຕ່ລະຊົນເຜົ່ານັ້ນມີທັງ ປັດໄຈໃນຕົວ ແລະນອກຕົວເຊັ່ນ: ປັດໄຈແບບປະຖົມບູຮານ, ປັດໄຈແບບສັກດິນາ ແລະປັດໄຈແບບລະບອບໃໝ່ ປະຈຸບັນ. ໝາຍຄວາມວ່າຊົນເຜົ່າຕ່າງໆໄດ້ມີການປະສົມກົມກືນ, ມີການຢືມປະເພນີ ແລະວັດທະນະ ທຳ ເຊິ່ງກັນແລະກັນ. ທັງນີ້ກໍ່ຍ້ອນວ່າເຂົາເຈົ້າໄດ້ດຳລົງຊີວິດຢູ່ຢ່າງສະຫຼັບສັບຫວ່າງກັນ, ມີ ການພົວ ພັນສາມັກຄີຊ່ວຍເຫຼືອຊຶ່ງກັນ ແລະກັນ,ໂດຍສະເພາະຢ່າງຍິ່ງແມ່ນ ບັນດາຊົນເຜົ່າທີ່ຢູ່ໃກ້ຄຽງ.

2.6. ຜົນທີ່ໄດ້ຮັບຈາກການຄົ້ນຄວ້າ, ວິໄຈ:

ຜ່ານການຄົ້ນຄວ້າ, ວິໄຈໂດຍພື້ນຖານແມ່ນອີງໃສ່ມາດຖານສາກົນທີ່ໄດ້ຖືກຮັບຮອງເອົາເປັນ ທີ່ກວ້າງຂວາງ, ແຕ່ຄຽງຄູ່ກັນນັ້ນກໍ່ອີງໃສ່ຈຸດພິເສດສະພາບຄວາມເປັນຈິງ ຂອງບັນດາຊົນເຜົ່າຢູ່ໃນລາວ ເພື່ອຈັດແບ່ງ, ສັບຊ້ອນຊົນເຜົ່າຄືນໃໝ່ແລ້ວສາມາດເວົ້າໄດ້ວ່າ: ພວກເຮົາປະຕິບັດສຳເລັດສ່ວນ ໜຶ່ງກ່ຽວກັບຄຳແນະນຳ ຂອງ ປະທານ ໄກສອນ ພົມວິຫານ ທີ່ວ່າບໍ່ໃຫ້ເອີ້ນສາມຊົນຊາດ ແລະກໍ່ບໍ່ ໃຫ້ເອີ້ນສາມຊົນເຜົ່າໃຫຍ່ຄື: ລາວລຸ່ມ, ລາວເທິງ ແລະລາວສູງ. ໃຫ້ເອີ້ນວ່າຊາດລາວອັນດຽວ, ແຕ່ປະ ກອບດ້ວຍຫຼາຍຊົນເຜົ່າ. ໝາຍເຖິງວ່າທຸກໆຊົນເຜົ່າທີ່ຢູ່ໃນວົງຄະນະຍາດແຫ່ງຊາດລາວໃຜໆກໍ່ແມ່ນ ຊົນເຜົ່າຄືກັນ, ຕ່າງແຕ່ວ່າຊົນເຜົ່າທີ່ມີ ຈຳນວນພົນລະເມືອງໜ້ອຍ ແລະຊົນເຜົ່າທີ່ມີ ຈຳນວນພົນລະ ເມືອງຫຼາຍເທົ່ານັ້ນ.

ສະນັ້ນຜົນຂອງການຄົ້ນຄວ້າວິໄຈຕົວຈິງ ໂດຍມີບັນດາບ່ອນອີງທີ່ໄດ້ກ່າວມາຂ້າງເທິງນັ້ນ, ເຫັນວ່າ ປະເທດລາວ ເຮົາມີ 49 ຊົນເຜົ່າ, ເຊິ່ງບາງຊົນເຜົ່າກໍ່ຍັງປະກອບແຊກ ຫຼືແຊ ຫຼື ຂະແໜງຕື່ມ

ອີກ. ໃນຈຳນວນ 49 ຊົນເຜົ່ານີ້ໄດ້ຈັດເຂົ້າຢູ່ໃນ 4 ໝວດພາສາຄື: ໝວດພາສາ ລາວ - ໄຕ, ໝວດພາສາມອນ - ຂະແມ, ໝວດພາສາຈີນ - ຕິເບດ ແລະໝວດພາສາມົ້ງ - ອີວມຽນ.

ຄວາມຫຼວງຫຼາຍຂອງຊົນເຜົ່າຈຶ່ງມີຄວາມສຳຄັນໃນວຽກງານການພັດທະນາ. ການສັບຊ້ອນ ແລະຈັດແບ່ງຊົນເຜົ່າໃນເທື່ອນີ້ມັນມີຄວາມໝາຍທາງວິທະຍາສາດ, ແຕ່ຮັບໃຊ້ຢ່າງຕັ້ງໜ້າເຂົ້າໃນເນື້ອ ໃນດ້ານການເມືອງເຊິ່ງເປັນພື້ນຖານໃຫ້ແກ່ການແກ້ໄຂຄວາມບໍ່ສະເໝີພາບ ທາງດ້ານເສດຖະກິດ ແລະ ສັງຄົມລະຫວ່າງຊົນເຜົ່າຕ່າງໆ.

ເຖິງຢ່າງໃດກໍ່ຕາມ,ໂດຍຍຶດໝັ້ນແນວທາງນະໂຍບາຍ ແລະທັດສະນະຂອງພັກໃນການແກ້ ໄຂບັນຫາຊົນເຜົ່າ, ມາຮອດປະຈຸບັນການຈັດແບ່ງ ແລະສັບຊ້ອນຊື່ເອີ້ນຂອງຊົນເຜົ່ານີ້ຈ ະຊ່ວຍປະກອບ ສ່ວນໃຫ້ ພວກເຮົາຮູ້ເຖິງໂຄງປະກອບກ່ຽວກັບຊົນເຜົ່າຕາມຫຼັກວິທະຍາສາດ ແລະຖືວ່າເປັນຜົນ ໄດ້ຮັບອັນໃຫຍ່ຫຼວງແຕ່ຖ້າທຽບໃສ່ຄວາມຮຽກ ຮ້ອງຕ້ອງການຂອງວຽກງານຊົນເຜົ່າ ໃນປະຈ ຸບັນກໍ່ ຄືໃນອານາຄົດແລ້ວເຫັນວ່າການຈັດແບ່ງສັບຊ້ອນຊົນເຜົ່າໃນເທື່ອນີ້ຫາກ ແມ່ນຜົນສຳເລັດໃນເບື້ອງຕົ້ນ ເປັນການໄຂຊ່ອງທາງພື້ນຖານໃຫ້ແກ່ການຄົ້ນຄວ້າຊົນເຜົ່າໃນເທື່ອຕໍ່ໆໄປ. ການຈັດແບ່ງສັບຊ້ອນຊົນ ເຜົ່າເທື່ອນີ້ບໍ່ແມ່ນຈະເປັນເທື່ອສຸດທ້າຍ ແລະຕາຍຕົວແບບນີ້ຕະຫຼອດໄປ, ທັງນີ້ກໍ່ຍ້ອນວ່າ ແຕ່ລະຊົນ ເຜົ່າມີການຂະຫຍາຍຕົວຕາມແຕ່ລະໄລຍະປະຫວັດສາດ. ເຊື່ອແນ່ວ່າໃນຊຸມ ປີຕໍ່ໜ້າຍັງຈະຕ້ອງ ໄດ້ສືບຕໍ່ສຶກສາ, ຄົ້ນ ຄວ້າເກັບກຳ ແລະວິໄຈຂໍ້ມູນທີ່ແທ້ຈິງ ທາງດ້ານການເມືອງ, ດ້ານເສດຖະກິດ, ດ້າ ນວັດທະນະທຳ - ສັງຄົມ ແລະດ້ານອື່ນໆທີ່ກ່ຽວພັນເຖິງຊີວິດການເປັນຢູ່ຂອງຊົນເຜົ່າຕ່າງໆ. ເພື່ອ ຊອກຮູ້ເອກະລັກແນວຄິດຈິດຕະສາດ, ຮີດຄອງປະເພນີ ແລະວັດທະນະທຳ ມູນເຊື້ອອັນດີງາມຂອງ ແຕ່ລະເຜົ່າບົນພື້ນຖານດັ່ງກ່າວກໍ່ເປັນການເພີ່ມທະວີຄວາມສາມັກຄີ, ສະເໝີພາບລະຫວ່າງ ຊົນເຜົ່າ, ເຮັດໃຫ້ຄວາມປອງດອງຊາດນັບມື້ແໜ້ນໜາເຂັ້ມແຂງ, ລຶບລ້າງເຫື່ອລະກ້າວການຫລຸດໂຕນ ກັນລະຫວ່າງຊົນເຜົ່າ ລະຫວ່າງເຂດທີ່ງພຽງກັບເຂດພູດອຍ ແລະຕົວເມືອງກັບຊົນນະບົດ, ດັ່ງທີ່ ລັດຖະ ທຳມະນູນ ແຫ່ງ ສ ປ ປ ລາວມາດຕາ 8 ໄດ້ຊຽນໄວ້ວ່າ: " ລັດໄດ້ປະຕິບັດນະໂຍບາຍສາມັກຄີ ແລະ ສະເໝີພາບລະຫວ່າງຊົນເຜົ່າຕ່າງໆ ." ຊົນເຜົ່າລ້ວນແຕ່ມີສິດປົກປັກຮັກສາ, ເສີມຂະຫຍາຍ ຮີດ ຄອງ ປະເພນີ ແລະວັດທະນະທຳອັນດີງາມຂອງຕົນ ແລະຂອງຊາດ. ຫ້າມທຸກການກະທຳແບ່ງແຍກ ແລະ ການປະພຶດຈຳແນກລະ ຫວ່າງຊົນເຜົ່າ.

ລັດປະຕິບັດທຸກມາດຕາການເພື່ອຂະຫຍາຍ ແລະຍົກລະດັບເສດຖະກິດ - ສັງຄົມຂອງທຸກຊົນ ເຜົ່າໃຫ້ສູງຂຶ້ນ.

ຜົນສຳເລັດຂອງການຄົ້ນຄວ້າຊົນເຜົ່າເທື່ອນີ້ຄະນະວິຊາການ ແລະກົມຊົນເຜົ່າຖືວ່າແມ່ນມີ ການປະກອບອັນສຳຄັນຂອງພາກສ່ວນທີ່ກ່ຽວຂ້ອງຕ່າງໆເຊັ່ນ: ສະຖາບັນຄົ້ນຄວ້າວັດທະນະທຳ, ສະ ຖາບັນຄົ້ນຄວ້າພາສາສາດ ກະຊວງຖະແຫຼ່ງຂ່າວ ແລະວັດທະນະທຳ, ກົມບັນດາເຜົ່າສະພາແຫ່ງ ຊາດ, ສູນສະຖິຕິແຫ່ງຊາດ, ແນວລາວສ້າງຊາດ ເມືອງ, ແຂວງ, ບັນ ດາເຖົ້າແກ່ອາວຸໂສ, ຜູ້ຊົງຄຸນວຸດທິ ແລະ ເຈົ້າກົກເຈົ້າເຫຼົ່າຂອງຊົນເຜົ່າຕ່າງໆໃນທົ່ວປະເທດ. ນອກຈາກນີ້ກໍ່ຍັງມີການປະກອບສ່ວນຂອງ ບັນດາ ທ່ານຕ່າງໆຄື: ທ່ານ ໄມສຸກ ໄຊສົມແພງ, ທ່ານວິຊິດ ສັນຕິວົງ, ທ່ານ ຄຳແສນ ວົງໜໍ່ແກ້ວ, ທ່ານ ໂສມສີ ເດຊາຄຳພູ, ທ່ານ ຄຳໃບ ຍຸນດາຣາດ , ທ່ານ ເພັ້ງ ຫຼ້າສຸກັນ, ທ່ານ ຄຳຊາວ ໄກຊົ່ງ, ທ່ານ ສຸກສະຫວ່າງ ສົມະນະ, ທ່ານ ຄຳແພງ ທິບມິນຕີ, ທ່ານ ຄຳແດງ ກົມມະດຳ , ທ່ານ ສົມທອນ ລໍເປຍ ຢາວ, ທ່ານ ຄຳເລື່ອນ ແກ້ວສຸວັນ ແລະທ່ານອື່ນໆທີ່ບໍ່ໄດ້ຊຽນຊື່ລົງໃນນີ້.

ໃນນາມ ກົມຊົນເຜົ່າ ຂອງສູນກາງແນວລາວສ້າງຊາດ ຂໍສະແດງຄວາມຂອບອົກ ຂອບໃຈ ແລະຮູ້ບຸນຄຸນເປັນຢ່າງສູງມາຍັງກົມການເມືອງສູນກາງພັກ, ຄະນະລັດຖະບານ ແລະສູນກາງແນວ ລາວສ້າງຊາດທີ່ໄດ້ໃຫ້ທິດຊີ້ນຳຕ່ອງກງານຄົ້ນຄວ້າຊົນເຜົ່າໃນ ສ ປ ປ ລາວ ຕະຫຼອດມາ, ຂໍສະແດງ ຄວາມຂອບໃຈມາຍັງກອງທຶນ ການາດາ ເພື່ອການພັດທະນາ ທີ່ໃຫ້ ທຶນສະໜັບສະໜູນຢ່າງຈິງໃຈ, ຂໍ ສະແດງຄວາມຂອບໃຈ ນຳບັນດາອົງການໃຫ້ຂໍ້ມູນ, ໃຫ້ ຄວາມຄິດເຫັນຕໍ່ການຄົ້ນຄວ້າກໍ່ຄື ການພິມປຶ້ມ " ບັນ ດາຊົນເຜົ່າໃນ ສ ປ ປ ລາວ " ໃນເທື່ອນີ້.

ຄະນະວິຊາການ ແລະກົມຊົນເຜົ່າ ຂອງສູນກາງແນວລາວສ້າງຊາດຖືວ່າ: " ປຶ້ມ ບັນດາຊົນເຜົ່າ ໃນ ສ ປ ປ ລາວ " ເຫຼັ້ມນີ້ເປັນເຫຼັ້ມທຳອິດ, ມັນແມ່ນຜົນສຳເລັດໃນເບື້ອງຕົ້ນ, ເປັນການໄຂຊ່ອງທາງ ທີ່ມີລັກສະນະພື້ນຖານໃຫ້ແກ່ການຄົ້ນຄວ້າຊົນເຜົ່າຕໍ່ໄປໃນອະນາຄົດ. ຄຽງຄູ່ກັນນີ້ກໍ່ຮູ້ວ່າເນື້ອໃນຂອງ ປຶ້ມເຫຼັ້ມນີ້ ຍັງບໍ່ທັນຄົບຖ້ວນພ້ອມທັງມີຂໍ້ຂາດຕົກບົກຜ່ອງຢູ່ຫຼາຍປະການອັນເນື່ອງມາຈາກນັກວິຊາ ການຍັງບໍ່ທັນມີບົດຮຽນ, ປະສົບການ ແລະເວລາຂອງ ການຄົ້ນຄວ້າ ຈຳ ກັດ.

ຈຶ່ງ, ຂໍຮຽກຮ້ອງມາຍັງບັນດາ ທ່ານ ຜູ້ອ່ານ ປຶ້ມເຫຼັ້ມ ນີ້ດ້ວຍຄວາມຈິງໃຈຈົ່ງໄດ້ກະລຸນາປະກອບ ຄຳຄິດ , ຄຳເຫັນຕຳໜິຕິຊົມຊ່ວຍ, ເພື່ອຈະໄດ້ດັດແປງ ແລະແກ້ໄຂໃນຕໍ່ໄປ. ຄະນະວິຊາການ ແລະກົມ ຊົນເຜົ່າຂອງສູນກາງແນວລາວສ້າງຊາດ ມີຄວາມຍິນດີທີ່ຈະຮັບຟັງ ແລະຂໍສະແດງຄວາມຂອບໃຈລ່ວງ ໜ້າມາຍັງທຸກໆທ່ານນະທີ່ນີ້ດ້ວຍ.

ຫົວໜ້າກົມຊົນເຜົ່າ

ສົນໄຊ ແກ້ວມະນີວົງ

Explanation

About the classification

of the ethnic groups' names in the Lao P.D.R

As we are well aware that nearly no country in the world has its population constituted by one race or a single ethnic group. In fact, all nations are constituted by many different ethnic groups which are endowed with national characteristics of different dialects, custom, tradition, belief and culture. Through each period of history, through the communication, generosity, unity and helping each other among the ethnic groups there has been some change, but of course, it still encompasses diversified traces inheriting from the span of centuries like their dialect, customs, traditions, beliefs and other. Ethnic group is a matter of complexity for our world today. However, it is significant and meaningful for the strength and firm monolith of a nation.

As far as the Lao P.D.R is concerned, despite being a small nation , with its total territory of 236,800 square meters and its population of over 5 million people, it is composed of many ethnic groups having numerous particularities which are not the same with those of other countries in the world.

I./The particularities of the ethnic groups in the Lao P.D.R :

1. The Lao P.D.R is a country which is constituted by many ethnic groups which live their livelihood in between each other from the north to south, no one ethnic groups has ever exploited or conquered another ever since; they have lived together in peace, no one ethnic group has lived its livelihood separately in a large territory. Each ethnic group has a common character of being a part of a unified nation and has its own particularities.

2. All ethnic groups of the Lao P.D.R have contributed with their strength and forces to protect and develop the nation, have a firm tradition of unity and concord, especially since the country has been under the leadership of the Lao People's Revolutionary Party, the process of relationship and concord among the ethnic groups within the nation has been firm and rapid.

3. All ethnic groups of the Lao P.D.R have a common socio-economic base, but the level of development has been stepped up with an unequal rhythm , in particular.

4. The ethnic groups of the Lao.P.D.R have a common culture, the Lao culture is a harmonized and ultimate combination of all ethnic group , the Lao spoken and written languages (national language) is a common language, however, each ethnic group still preserves its own dialect, custom and culture of its own.

5. The origin of some ethnic groups in the Lao P.D.R has been identical with that of some ethnic groups living in the neighboring countries.

II./ The objectives of the research, grouping and classification of the ethnic groupsIn the Lao P.D.R :

1.To classify the names of the ethnic groups of the Lao P.D.R in compliance with the ethnographic principles and to suit also their actual preference as well as to

limit and step toward eradicating the names which have the sense of humiliation and look down on the ethnic people.

2. To increase the sense of unity and equality among the ethnic people, build awareness and encouragement for the ethnic people to be proud of their own while living as a part of the Lao national community. Enhance the national spirit and unanimity, diminish the traces of suspect among the ethnic people to combat the division and sabotage activity of any hostile activity as well as to together protect and develop the country.

3. To preserve and promote fine custom, tradition and culture which is unique for each ethnic group . In the contrary, to limit, solve and remove all obstacles which impede the development , unity and mutual assistance among the ethnic groups in compliance with the policy guideline of the Party and Government.

4. To provide with important information about ethnic affairs to the Party and Government as well as to all parties to consider and include in the policy guideline, development planning and the implementation of various plans for each ethnic group in a accordance with the particularities and actual fact of all ethnic in each locality.

III. Expected outcomes of the research, grouping and classification of the names of the ethnic groups in the Lao P.D.R .

1. It is expected to be able to preliminarily define and acknowledge that how many. Ethnic groups actually live in the Lao P.D.R. How many branches is each ethnic group constituted of . The calling of their name will comply with the basic principles of the ethnography and suit the preference they like to be called. And at the same time the humiliation, look down on will be limited, solved .

2. The role of each ethnic group will be uphold, causing the ethnic people to beproud of their own being within the Lao national community. The implementation of equal right among the ethnic groups will be ensured, the monolithic unity and concord among the ethnic groups within the Lao national community will be firmly enhanced and the sense of mastery as well as the valiant tradition including the particularities in each ethnographic aspect will be developed . At the same time , the trace of suspect and conflicts among the ethnic groups will be solved and the division and sabotage activities of the hostile forces will be defeated.

3. the acknowledgement of the fine custom, tradition, art and culture of each ethnicgroup will be promoted and preserve the solutions to them .

4. It will be beneficial and useful information for the Party and Government as wellas all parties in considering the policy guideline and policy plan for each aspect to each ethnic group to suit the ideology, custom, traditions and culture of each ethnic group which.

IV./ Reference of criteria for the research, grouping and classification Of the ethnic groups in the Lao P.D.R .

1.As far as the status of ethnographic research in Laos from the past to date :

Theethnographic research being done in thecountriesofEurope ,Americaand LatinAmericahas attracted people's interests for longtime, while in the Asia and Pacific

region, in particular, in the developing countries as well as the Least developed countries, the interest has been gained recently .

For the Lao P.D.R, ethnographic research has gained more interests since the periodof having the Lao People's Revolutionary Party as the leader. Due to the far sightedness of the Party, the ethnographic affair has become of importance and strategic for the strength of the nation. Therefore, the Party has paid constant and close attention to the ethnographic affairs, which can be seen , after the establishment of the Liberal Lao Front (Neolao Issara) on the 13 August 1950, staff of all ethnic groups were mobilized to take part in the leadership of the Liberal Lao Front and the Opposition Government (Lutthabarn Lao Tortarn). By 1970 which was the period of preparation for the Second Party Congress, therefore, to ensure that the essence suited the actual fact which was the turning point in the Lao revolution, The Central level Lao Front for National Construction discussed and nominated a committee to carry out a research on the Lao society and assigned to that committee to study and define the name of the ethnic groups within the Lao national community with the purpose to enhance the sense of monolithic unity, serve the political cause in the movement of struggling for national liberation and independence. To fulfill the said purpose, the Committee for Lao Society Research carried out its study and classification of the ethnographic name based on the settlement, language and political meaning which grouped Laos in Three main groups (Sohnsard) of 68 ethnic groups as follows:

Sohnsard Lao Loom (Lowland Lao main group) :

means the people living and settling in the plains and by the river banks, comprised of 12 ethnic groups such as : Lao, Phuan, Leu, T' ai dum, T'ai deng, T'ai Khao, T'ai meuy, T' ai neua, T'ai Nyee, Yung and Saek.

Sohnsard Lao Theung (Middle Lao main group) :

means people living and settling on mountain slopes with the altitude of over 700 meters above sea level, composed of 36 ethnic groups such as: Khamu, Samaed, Bid,Phong, Puak, Yru, Phoonoy, Kaseng, Doy, Phai, Makong, Katang, Pakoh, Lawain, Lawae, Nyahern, Trui, Soo, Sapùan, Sok, Trew, Taliang, TaOy, Aluck, Katoo, Yae, Suay, Cheng, Darkkung, Lawee, Lawuck, Oy, Tongleuang, Kado, Thin and Sarmtao ethnic groups.

2. Reference and criteria or principles for the research, grouping andClassification of the names of the ethnic groups .

2.1.Related vocabularies .

- Kok or Takoon(Clan, family line): is a primary form of community which was constituted by individuals having the same blood line.
- Laoh or Sahakoksid (Tribe) : is a unification of many individuals or clans having the same blood line due to the need for livelihood and production, some people call as Sahaphun koksid or many koksid.
- Sohnphao (Ethnic) is a group of people which have a common dialect or language,origin and historical background, culture and is believed to succeed fromthe same ancestors (some nearly have its territory).

- Sohnsard Lao Soong: (Highland Lao main group) : means people living and settling on high mountains of over 1000 meters of altitude, composed of 20 ethnic groups such as : Hmong Khao (white hmong), Hmong Lai (striped hmong), Hmong Dum (black hmong), Yao, Laentaen, Korpana, Korsida, Kormoochee, Korpoolee, Korpheh, Korphoosang, Korphoonyord, Kormootern, Korcheecharn, Kongsard, Hayee, Lahoo, Mooserdum (black mooser), Mooserkhao (white mooser) and Kui.- After the national liberation, a machinery of a Central level Sohnsard (main ethnic group) Committee was acknowledged and adopted into the machinery of the Government, it had a role of being a headquarter to the Party Central Committee and Government in the research of ethnic groups and elaboration of ethnic policies.

In a workshop hold from 15-16 / 6 / 1998 on studying the resolution of the political Bureau of the Central Party on ethnic affairs, President Kaysone Phomvihane quoted: "Any ethnic group shares a common uniqueness of the Lao National Community and has its particularities on other aspect as well. Through the revolutionary process, all ethnic group volunteer to become a part of the nation which was called then in a political sense as" Sohnsard Lao Loom (lowland lao main ethnic groups); Sohnsard Lao Theung (middle lao main ethnic groups) and Sohnsard lao soong (highland lao main ethnic groups). The Central level sohnsard Committee shall coordinate with all sectors and with the staff of all ethnic groups to together study and discuss on how to call an ethnic group correctly and how to make an inventory of (name list) of the ethnic groups to make them become our state general provisions.

In order to implement the policy line and policy plan of our party, in particular, the instructions of President Kaysone Phomvihane, the Central level Sohnsard Committee changed their name into Central level Committee on Ethnic Groups, which played a role in being a headquarter for the Central Party Executive Committee and the Council of Ministers in pursuing the research and study on ethnography.

This Committee dispatched its ethnographic staff to carry out studies, of which the focus was on gathering information on their dialects, languages, historical background, socio-culture and particularities in order to regroup and classified them on the inventory and then submit to the higher management for consideration and adoption officially.

Through the actual working of the staff on the grassroots and through the research, analysis based on the ethnographic principles, the technical staff classified initially as 47 ethnic groups but that was not adopted. However, the inventory of the 47 ethnic groups was used as the basis for the Second population census in 1995.

- Seuasard (Race) : is a group of people having similar physical particularities such as: complexion, hair, nose, eye, lips, skin color and others.
- Sunsard (Nationality) : is a groups of people being members of the same nation and it is meant to become a legitimate member of that country , their physical particularities and culture may be different.
- Sard (Nation); Sohnsard (Main ethnic group) : is a group of community where people have their common particularities in regard todialect, language, historical background, territory, economic life as well as psychological structure which can be seen in their culture.

2.2. References and criteria or principles for the research .

For the research to group and define the names of ethnic groups living in Laos, in order to attain the preliminarily defined objectives, technical staff have references to be based on as follows :

1. based on 4 criteria or principles of a definition of a nation comprising :
   - common dialect or language;
   - common territory;
   - common background of economic livelihood;
   - common psychological and ideological structure which can be seen in the culture.
2. based on the actual particularities of the ethnic groups in Laos.
3. based on the policy guideline in solving ethnic affairs of the Party in general, and in particular the instructions of the President Kaisone Phomvihane given in the workshop hold from 15-16/6/1981 to carry out research on the resolution of the political bureau members of the Central Party on ethnic affairs.
4. based on the resolution of the Central Party Executive committee on ethnic affairs in the new era, dated on 20 May 1992.
5. based on documents related to ethnics in both Lao and Foreign languages.

2.3. Information analysis according to ethnographic principles :

For the technical staff who are in the middle of scientific information and local information as well as technology and villagers knowledge. Apart from materializing firmly the ethnographic principles, they have to firmly materialize the Party' s policy guideline and policy plan of the Party on ethnic affairs for each period to be the basis for the research.

Based on the aforesaid references, it can be analyzed that the calling of Sonhsard Laoloom, Laotheung and Laosoong (lowland, middle land and highland main ethnic groups) during that time had the resettlement and political meaning with the aim to enhance the sense of national unity and concord; And at the same time to put all efforts to the revolution for national liberation only. To the present time, the calling of three main ethnic groups is not suitable . The President Kaisone Phomvihane, who firmly materialized the ethnography as well as had a profound and detailed research on ethnic affairs. He, therefore, instructed the workshop which was held in 1981 that we should not call Sohnsard Laoloom, Laotheung and Laosoong any more or should not classify into such three main ethnic groups, we should " call them according to the name of their ethnic group that they had been called since the ancient time ".

In order to witness and affirm the saying of the former President Kaisone Phomvihane, 4 criteria or principles have been used to analyze briefly the ethnic

groups existing in the Lao P.D.R as follows :

1- Analysis on their linguistic criterion :

Presently, all ethnic groups in the Lao P.D.R use Lao language alike and the Lao language has been defined as national language (official language). At the same time the ethnic groups preserves their own dialects or languages such as: Keummu, Hmong, Leu, Nyuan, TaOy, Katahng languages and others. But in such languages there are many similarities and differences, the linguistic similarity of some ethnic groups can be said as because they are in the same system or family line (clan) and the difference is because they are from different family line (takoon or clan).

Based on the system of such family line and language, the ethnic groups in the Lao P.D.R are classified into 4 language groups such as: Lao T'ai , Mon-khmer (including Vietmuong language), Chinese-tibetan (including Hor language) and Hmong Ewmian language groups.

2- Analysis on Territory :

In regard to this criterion, based on the particularities of Laos, all ethnic groups live their livelihood in the same territory, but they live their livelihood in between each other from north so south. In the history of Laos, it has never separated into 3 nations or 3 different states, there has never been any ethnic group living in its own separate administrative zone. That means from the ancient time to date, the country has been always a unified Lao nation, which is different from other countries such as:

3.Analysis on Economic criterion :

In this criterion, all ethnic groups existing in Laos have live their livelihood by similar economic base such as: agricultural based self subsistence economy (growing crops, raisin animals and handicraft) . In general, there has not been a base and economic production which is unique or typical to any ethnic group. The Lao ethnic group can not take a typical economic style or uniqueness of any ethnic group to become a common criterion.

4. Analysis on psychological or ideological aspect and culture :

In this regard, it reflects that all ethnic groups in Laos have a unified Lao culture, that all ethnic group considers itself as a part of the Lao national community, any body says he/she is a Laotian, lives in the territory of Laos, has his/her behavior , custom and culture like a Laotian and accepts the Lao language as a common language. At the same time, each ethnic group has its psychology, ideology, custom, tradition and culture which is unique or typical of its own ethnic group which can be seen in their like, familiarity as well as in their mode of material and spiritual living.

All the psychology, ideology, custom, tradition and culture of the ethnic group are basically not in conflict with the common psychology, ideology and culture of the Lao national community. But each has been an important element which has added and made the common national culture a diversified abundance and colorful one. In addition, the respect of the cultural values of each ethnic group and the equality between all ethnic groups living in the Lao national community has been the basic policy of the Lao Party and Government. Despite unequal level of development in the aspect of economy between an ethnic group and another, between the plains and mountainous areas, between the urban and rural areas, these have not been any impediment or obstacle to the building of the base of the unified national culture.

From the analysis of the above mentioned 4 criteria, it can be assumed that the country of Laos is composed of only a single Lao nation. That means the calling of three nations or three main ethnic groups was not suitable for the actual situation of

the country. There is a need to adjust and slowly turn to use the word of Lao nation, this is a reason also for: the existence of a nation is not by a will of our people, not by the aspiration of the administrative authorities, but it is because of the impact of economic and social rule.

According to the ethnographic principles, an ethnic group is composed of 4 criteria like a nation as afore mentioned, but at lower level and not as firm as a nation, in particular the level of economy and territory.

For the Lao P.D.R, if we consider only the criterion o territory to group, classify and determine the name of an ethnic group, it will not be accurate, suitable or comply with the actual particularities of the ethnic groups. Therefore, the ethnographic technical staff have selected some criteria of a nation and based on the particularities as well as the actual fact of the ethnic groups living in Laos to define the criteria and use as a reference for the research. If we want to know whether it is the same ethnic group or not, it shall be based on 3 criteria to research such as:

1- Linguistic criterion;
2- Historical background criterion in association with its original name;
3- Customary, traditional and cultural criterion.

Apart from the said 3 criteria, our technical ethnographic staff materialize firmly the attitude of our Party, in particular, the attitude and instructions of the President KaisonePhomvihane which says : " the research and affirmation any matter about an ethnic group is to be based on the awareness and volunteer of that ethnic group ".

2.4. Procedures of carrying out a research on grouping and determination Of the names of the ethnic groups living in Laos .

-Collect all documents related to the ethnic groups in Laos including the inventory of the ethnic names done by former researchers in both local and foreigners (including in Lao and foreign languages) to analyze and compare whether correct or wrong in order to adjust and carry out more research, those important documents are to be seen in the annexes of references.

-Conduct actual field survey in the locality in collaboration with the local administrative authorities, to gather the historical background, movement , their evolution including the names of each ethnic group as called in the locality, their old names, new names, the name the ethnic people call themselves, their dialect, and their cardinal numbers, custom, tradition, the tangible and intangible cult of each ethnic group. At the same time discuss and ask for comments of the ethnic people about the grouping and determination of their name in accordance with their actual situation and based on the scientific criteria.

-Bring back all the information gathered to carry out further study, research and an analysis based on 3 criteria as set forth for each ethnic group.

-Organize a workshop to discuss and exchange on the names of each ethnic group in each province at nation wide and at central level, and get agreement as well as affirmation by the workshop participants and local administratives concerned.

2.5. The application of the said 3 criteria to carry out a research, grouping and

classification of the ethnic names .

In order to know whether an individual is of the same ethnic group or not, the technical staff applied 3 criteria to study and carry out a research and analysis to classify and determine the names of the ethnic groups in Laos as follows :

2.5.1. Linguistic criterion :

In this regard, it can be seen that each ethnic group still preserve their original dialect and language, in each dialect of and ethnic group there is similarity and difference, for in stance, the Lao language differs from the Language of Hmong ethnic people; the language of Keummu ethnic people is different from that of Ahkhah ethnic group (Kor ethnic group); the language of Ta Oy people is different from that of Leu ethnic group and others. The difference in their language means that they are not in the same language group. At the same time , there are many similarities in the spoken languages of the ethnic people, they can discuss and understand each other without using an interpreter such as: the language of Triang ethnic group is similar to the language of Yae ethnic group; Chehng language is similar to Oy language; the language of Ahkhah ethnic group is similar to that of Lahoo ethnic group; the Lao language is similar to Leu language and so on. The similarity in the language means they are in the same language group. Due to their similarity and difference, the languages f the ethnic groups in Laos are classified into 4 language groups such as: Lao T'ai, Mon-khmer (including Vietmuoung language), Chinese-tibetan (including Hor language) and Hmong-Ewmian language groups; The only one language criterion can not determine whether an individual is of the same or different ethnic group, because an ethnic person can speak many languages.

2.5.2. Historical background in association with the calling of their name criterion:

This criterion affirms that the ethnic groups of the same language group have similar historical background and origin; due to their migration in each period, each route had different influence and environment , which cause some changes in the society of the ethnic groups; some ethnic group is sustained, some developed into different branches and had their new names. Therefore, an ethnic group may have different names, this includes the name they call themselves , the names they are called by other ethnic groups, the names called according to their habitat such as: name of the village, district, name called according to their spoken language, according to their mode of livelihood, their style of dressing or costumes, according to their chief of tribes and clans and according to the nature such as: the name of forest, stream and river, name of a tree and others. In addition, it is learnt that the name of an ethnic group has good and bad meaning, calling the name with the sense of humiliation or looking down on that particular ethnic group.

Therefore, through the research, analysis and comparison of the names of the ethnic groups it is know that what actually is the name of that particular ethnic group, is it the name they call by themselves or is called by other ethnic groups. And at the same time one should preserve their name which has good meaning and the name the ethnic people have called themselves since ancient time in compliance with their historical background and origin. On the contrary, one shall eliminate humiliation and being looked down on to such as: Meo, Soh, Khah sonh hahng (two tailed khah), khah hoo bong (khah of drilled ears), khah khaev tud (khah of cut teeth) and others. In addition, there are many names, when compared with only the criteria of linguistics

and custom, tradition and culture, one still can not group as an ethnic group, that means it can be only a saek, saeng or a branch of an ethnic group, despite having different name, but their languages , historical background and origin are similar.

2.5.3. Custom, tradition and culture criterion :

In this regard, the ethnic groups in Laos, apart fromhavingacommonculture of the unified nation, each ethnic groupstillhasitstypicalcustom, traditionandculture which are unique of their own ethnic which can be seen in their like,familiarity,belief,materialand spiritual being. The analysis shows that the ethnic groups of the same language group have similar tradition and culture. On the contrary, the ethnic groups of different language groups have different tradition and culture. There are internal and external factors in each ethnic group such as: primitive , feudal and the factor of the present and new regime. Therefore it is meant that the ethnic groups are in harmony, borrow each other's tradition and culture. This is because they have lived in between each other, have had relations, a sense of unity and mutual assistance, in particular, among the neighboring ethnic groups.

2.6. The outcome of the research and study :

Through a research and analysis, based mainly on the international criteria as being adopted extensively; and at the same time , based on the actual particularities of the ethnic groups in Laos to group, classify, it can be said that we have fulfilled a part of the instructions given by the President Kaison Phomvihane who did not prefer to say sarm sohnsard or sarm sohnphao nyai (three main ethnic groups) namely : Laoloom, Laotheung and Laosoong (lowland, middle land and highland main ethnic groups); we should say " of the same nation , which is constituted by many ethnic groups. That means any member in the national community is an ethnic group alike, the difference is in their size of population, large or small population only ".

Therefore the actual outcome of the research and analysis, having the aforesaid references, it is seen that the Lao P.D.R is lived by 49 ethnic groups, being classified into 4 different language groups such as: Lao T'ai, Mon-khmer, Chinese-Tibetan and Hmong – Ewmian language groups.

The ethnic diversity is of great importance for the development. The grouping and classification of the ethnic group this time, has scientific meaning, serve the political purpose positively, which is the basis for the solution of economic and social inequality among the ethnic groups.

By adhering to the policy line and attitude of the Party to solve ethnic matters, the current grouping and classification of the ethnic groups will contribute to help to know about ethnic structure in scientific principles and When looking at the requirement of the present ethnic affairs or in the future, it is seen that the grouping and classification of the ethnic groups is of initial outcome or success, which has basically opened the path for further ethnographic research; the grouping and classification of ethnic group is not the last time and inflexible eternally; this is because the ethnic groups are developed in each period of their history. It is believed that in the years ahead, efforts will be put on further study, research, data collection and information analysis in regard to the aspects of political, economy, social culture and others which relate to the living conditions of the different ethnic groups to learn about the particularity of psychology, ideology, custom, culture and their fine traditions. Increase the sense of firm and strong unity

as well as equality and concord among the ethnic groups, to gradually eradicate the gap of development between the plains and mountainous areas, between the urban and rural areas, as stipulated in the article No. 8 of the Constitution of the Lao P.D.R : " the state Government has implemented the policy to enhance the sense of unity and equality among the ethnic groups. All ethnic groups have their right to preserve and develop the custom, tradition and fine culture of their own and of the nation. All acts and activities causing the division among the ethnic groups are prohibited.

The state Government implement all measures to increasingly develop and uplift the socio-economic level of all ethnic groups "

The technical staff and the Department of Ethnic Affairs consider that the successful outcome of the ethnic research has been graceful to the important contribution of various parties such as: Cultural Research Institute, Linguistic Research Institute of the Ministry of Information and culture, Department of Ethnic Affairs of the National Assembly, The National Statistics Centre, the Lao Front for National Construction at district and provincial levels, elderly and prominent figures, tribal and clan chiefs of various ethnic groups at nation wide. In addition there has been the contributions of some individuals such as: Mr. Maisouk Saysompheng, Mr. Visith Santivong, Mr. Khamsene Vongnorkeo, Mr. Somsy Desakhamphou, Mr. Khambai Nyounnarath, Mr. Pheng Lasoukanh, Mr. Khamsao Kaisong, Mr. Souksavang Simana, Mr. Khampheng Thipmontri, Mr. Khamdeng Kommadam, Mr. Somthone Lobriayao, Mr. Khamleuane Keosouvanh and other persons.

On behalf of the Lao Front for National Construction, the Department of Ethnic Affairs would like to highly express its thanks and gratitude to the Political Bureau of the Central Party Committee, The Government and the Lao Front for National Construction for having provided their supervision and guidance throughout the process of ethnic research in the Lao P.D.R. Many thanks are addressed to the Canadian Funds for Development for its financial support. Thanks are also addressed to the organizations concerned and the persons who havegiventheircooperationandvaluable assistance by providing information, ideas and comments to the research and to the publication of this book entitled " The ethnic groups in the Lao P.D.R ".

The technical staff and the Department of Ethnic Affairs of the Lao Front for National Construction consider that the book " The ethnic groups in the Lao P.D.R " as is the first one and it is the initial success which paves the basic path for further research of the ethnic groups in the future. At the same time, it is acknowledged that the information and essence of this book is not a fully complete one yet, it may have a number of shortcomings due to limited experience and professional skill of our technical staff and the limited availability of funds and time spent on the research.

Therefore, it is frankly asked for the comments and criticism from the readers of this book to help adjust and solving the matter of completion later. The technical staff of the Department of Ethnic Affairs welcome , appreciate and thank in advance for those comments .

With best regards,

Department of Ethnic Affairs



j ສິນໄຊ ແກ້ວມະນີວົງ


ຂ.ຫົວພັນ
ຂ.ຊຽງຂວາງ
ຂ.ໄຊຍະບູລີ
ຂ.ວຽງຈັນ
ນະຄອນຫຼວງວຽງຈັນ
ຂ.ບໍ່ແກ້ວ
ຂ.ອຸດົມໄຊ
ຂ.ຫຼວງນ້ຳທາ
ຂ.ຫຼວງພະບາງ
ຂ.ບໍ່ລິຄຳໄຊ
ຂ.ຄຳມ່ວນ
ຂ.ສະຫວັນນະເຂດ
ຂ.ສາລະວັນ
ຂ.ເຊກອງ
ຂ.ຈຳປາສັກ
ຂ.ອັດຕະປື
ຂ.ເຊໂປນ
ຂ.ໄຊສົມບູນ

ໝວດພາສາ ລາວ - ໄຕ ມີ 8 ຊົນເຜົ່າ

The Lao - Tai Language Family

(8 Ethnic Groups)

ຊົນເຜົ່າແຊກ

ປະຫວັດຄວາມເປັນມາ:

ຊົນເຜົ່າແຊກໄດ້ຕັ້ງຖິ່ນຖານບ້ານເຮືອນ ຢູ່ 2 ແຂວງພາກກາງຄື: ແຂວງ ບໍລິຄຳໄຊ ແລະ ແຂວງ ຄຳມ່ວນ, ພວກເຂົາດຳລົງຊີວິດຢູ່ຕາມເຂດ ຊານເມືອງຕ່າງໆ. ສຳລັບແຂວງ ບໍລິຄຳໄຊ ມີຢູ່ ເມືອງ ຄຳເກີດ, ສ່ວນແຂວງ ຄຳມ່ວນ ມີຢູ່ເມືອງ ທ່າແຂກ, ເມືອງຫີນບູນ, ເມືອງນາກາຍ ແລະ ເມືອງ ຍົມມະລາດ.

ຊົນເຜົ່ານີ້ໄດ້ເຄື່ອນຍ້າຍເຂົ້າມາໃນລາວ ຈາກດິນແດນທາງພາກເໜືອ ໂດຍໄດ້ຜ່ານແຂວງ ເຫ້ງອານ ແຫ່ງ ສ.ສ.ຫວຽດນາມ ໃນລະຫວ່າງ ສະ ຕະວັດ ທີ XVII ຊົນເຜົ່າແຊກ ຈຳນວນໜຶ່ງໄດ້ຍົກ ຍ້າຍຈາກຖິ່ນຖານພູມລຳເນົາເດີມໄປຊອກຫຳ ມາຫາກິນຫຼາຍບ່ອນຕ່າງກັນ ແຕ່ຈຳນວນໜຶ່ງໄດ້ ເຂົ້າໄປທາງປະເທດຈີນ ແລະເຄິ່ງໜຶ່ງກໍ່ໄດ້ໄປຕັ້ງ ຫຼັກປັກຖານຢູ່ເຂດຊາຍແດນ ລາວ - ຫວຽດນາມ ເຊິ່ງເປັນໝູ່ບ້ານໃຫຍ່ ຈົນກາຍເປັນຕົວເມືອງ ຈົ່ງ ມີຊື່ລີຊາປະກົດວ່າຊື່ ເມືອງ “ ບ້ ”, ເມືອງດັ່ງ ກ່າວ ໄດ້ຖືກເສີກສິ້ງຄາມຮຸກຮານຮາວີ ໃນທີ່ສຸດ ເມືອງ “ ບ້ ”ໄດ້ຖືກທຳລາຍຈາກຝ່າຍກົງກັນຂ້າມ ຊົນເຜົ່າ ແຊກ ຈຳນວນໜຶ່ງແມ່ນຍັງຢູ່ປະເທດ ຈີນ ແລະຈຳນວນໜຶ່ງກໍ່ຍັງມີຢູ່ປະເທດ ຫວຽດນາມ ໂດຍສະເພາະມີຢູ່ແຂວງ ເຫ້ງອານ.

ຊົນເຜົ່າແຊກມີປະຊາກອນທັງໝົດ 2.745 ຄົນ, ຍິງ 1.416 ຄົນ ອັດຕາສະເລ່ຍເທົ່າ ກັບ 0,1% ຂອງພົນລະເມືອງທົ່ວປະເທດ. ຜົນການສຳຫຼວດພົນລະເມືອງ ຄັ້ງທີ II ປີ 1995.

ຊື່ເອີ້ນ:

ແຊກ ແມ່ນຊື່ເອີ້ນຂອງຊົນເຜົ່າໜຶ່ງ, ຊື່ດັ່ງ ກ່າວບໍ່ມີຜູ້ໃດຮູ້ຄວາມໝາຍ ເຂົາເຈົ້າເກີດໄດ້ໃຫຍ່ ຂຶ້ນມາກໍ່ໄດ້ຍິນຊື່ນີ້ໂລດ ຊົນເຜົ່າອື່ນກໍ່ເອີ້ນພວກ ເຂົາວ່າ “ ແຊກ ” ຊື່ທີ່ໃຊ້ໃນທາງການກໍ່ແມ່ນ ຊົນເຜົ່າ “ ແຊກ ”.

ພາສາ:

ຊົນເຜົ່າແຊກ ມີພາສາປາກເວົ້າເປັນ ຂອງຕົນເອງ, ເຂົາເຈົ້າໄດ້ນຳໃຊ້ພາສາຕົນ. ເພື່ອສື່ ສານກັບຊົນເຜົ່າຕົນ, ສ່ວນກັບຊົນເຜົ່າລາວແມ່ນ ໄດ້ໃຊ້ພາສາລາວ, ພາສາຊົນເຜົ່າແຊກມີ ພາສາ ຂອງຊົນເຜົ່າອື່ນເຈືອປົນຢູ່ນຳຫຼາຍ. ສຳລັບຄົນ ຊົນເຜົ່າອື່ນ ຫຼືຊົນເຜົ່າທີ່ນອນໃນໝວດພາສາ ລາວ-ໄຕ ດ້ວຍກັນ ຟັງປະຊາຊົນຄົນແຊກລົມ ກັນ, ຜູ້ຟັງກໍ່ເຂົ້າໃຈພາສາແຊກ 50 % ແລະອີກ 50 % ແມ່ນບໍ່ເຂົ້າໃຈ, ຕາມການຕີລາຄາຂອງຊົນເຜົ່າ ແຊກເອງວ່າ: ພາສາແຊກ 60 %, ມາຈາກພາສາ ລາວ 30 % ແລະພາສາ ຫວຽດນາມ 10 %.

ຮີດຄອງປະເພນີ, ຄວາມເຊື່ອຖື ແລະວັດທະນະທຳ - ສັງຄົມ :

ຕາມຄວາມເຊື່ອຖືຊົນເຜົ່າແຊກ ມີຄວາມ ເຄົາລົບນັບຖືຜີພໍ່, ຜີແມ່, ຜີຟ້າ, ຜີແຖນຢ່າງໜັກ ໜ່ວງແຕ່ລະດູການ ແລະວັນສິນ, ພວກເຂົາ

ກ່ໄດ້ບູຊາ, ນິບໄຫວ້ ແລະລ້ຽງເກືອຜີຢ່າງບໍ່ຂາດ ສາຍ ເຊິ່ງມັນໄດ້ໝາຍເຖິງ ຄວາມກະຕັນຍູ, ກະ ຕະເວທີຂອງບັນດາລູກໆ ທີ່ມີຕໍ່ພໍ່ແມ່, ເຖົ້າແກ່, ປູ່ ຍ່າ, ຕາຍາຍ ແລະບັນພະບູລຸດ. ນອກຈາກນີ້ ແລ້ວ ພວກເຂົາຍັງເຮັດບຸນກິນເຕດ (ບຸນປີໃໝ່) ປະຈຳ ຢ່າງປົກກະຕິເວລາເຮັດແມ່ນໄດ້ ອີງຕາມປະຕິ ທິນ ຫວຽດນາມ, ພ້ອມກັນກັບຫວຽດນາມ.

ການບູຊາຜີຫໍ ກ່ໍແມ່ນພິທີກຳໜຶ່ງທີ່ຂາດ ບໍ່ໄດ້. ພິທີນີ້ກ່ໍຈະດຳເນີນກ່ອນຈະຟາດເຂົ້າ ຫຼືເອົາ ເຂົ້າຂຶ້ນເລົ້າ ໂດຍມີການຂ້າໝູ1ໂຕ ແລ້ວເຮັດ ລາບເລືອດ, ແກງ, ຕົ້ມໝູ ແລະເຮັດຢ່າງອື່ນໆ ແລ້ວມອບພິທີນີ້ໃຫ້ເຈົ້າພໍ່ມົດ, ແມ່ມົດ ຫຼືພໍ່ໝໍ, ແມ່ ໝໍ ມີຄວາມສາມາດສື່ສານກັບບັນດາຜີຕ່າງໆ, ເວົ້າວ່າຕ່າງໆນາໆ, ບາງຄັ້ງພວກເຂົາຈະດຳເນີນ ການບະ, ກ່ອນຈະດຳເນີນກິດຈະການໃຫ່ຍໂຕ ໂຫຖາມ.ເພື່ອໃຫ້ພິທີດັ່ງກ່າວມີສ່ວນ ຮ່ວມໃນການ ປົກປັກຮັກສາຊ່ວຍກິດຈະກຳດັ່ງ ກ່າວນັ້ນ.

ສຳລັບຄວາມມັກຮັກ ລະຫວ່າງບ່າວສາວ ຂອງຊົນເຜົ່າແຊກ ບາງຄັ້ງແມ່ນອີງຕາມຄວາມ ຮັກມັກຂອງບ່າວສາວເອງ, ແຕ່ສ່ວນຫຼາຍຈະ ແມ່ນພໍ່ແມ່ຊອກຫາໃຫ້ຈາກນັ້ນກ່ໍແມ່ນມີພິທີ ການຕາມພາຍຫຼັງ. ສະໄໝກ່ອນເຈົ້າບ່າວກ່ໍຈະ ໄປຢູ່ເຮືອນຝ່າຍຍິງ ເພື່ອສັງເກດຕິດຕາມພຶດຕິ ກຳຂອງເຈົ້າສາວ ແລະເຈົ້າສາວກ່ໍມີໂອກາດຕິດ ຕາມເບິ່ງກິລິຍາທ່າທີເຈົ້າບ່າວເໝືອນກັນ. ການ ຕິດຕາມນີ້ໃຊ້ເວລານານເຖິງ 3 ປີ. ເວລາຢູ່ເຮືອນ ເຈົ້າສາວນັ້ນທັງ 2 ຄົນເຂົາສາມາດຮ່ວມວຽກງານ ກັນໄດ້ເຊັ່ນ: ໄປໄຮ່, ໄປນາ, ທຳມາຄ້າຂາຍ ແລະ ອື່ນໆໄດ້ ແຕ່ບໍ່ໄດ້ນອນຮ່ວມກັນ, ບໍ່ໄດ້ກິນເຂົ້າ ຮ່ວມພາແມ່ຍິງ, ຈະກິນນຳແມ່ຂອງຕົນ, ເຈົ້າບ່າວ ຈະກິນຮ່ວມກັບພໍ່ເຈົ້າສາວ. ສິ່ງສຳຄັນທີ່ສຸດແມ່ນ ບໍ່ໃຫ້ມີລູກກ່ອນຈະໝົດເຂດກຳນົດ 3 ປີ ແລ້ວທັງ 2 ຝ່າຍຈຶ່ງໄດ້ຕົກລົງກັນ ເວົ້າເລື່ອງການແຕ່ງດອງ, ຄ່າດອງ 3 ຂັນເງິນກີບເກົ່າ, ບາງຄົນອາດຈະບໍ່ເຖິງ ຕົ້ນຕໍແມ່ນ 2 ຝ່າຍເຫັນອົກເຫັນໃຈກັນ, ຄ່າດອງ ກ່ໍຖືກລົງ.

ການຈັດພິທີແຕ່ງດອງ ກ່ໍຈະດຳເນີນເປັນ ເວລາ 3 ວັນ, ເລື່ອງອາຫານການກິນຈະຕົກເປັນ ພູດຂອງ (ເຈົ້າບ່າວ) ຝ່າຍຊາຍເປັນຜູ້ຮັບຜິດຊອບ ທັງໝົດເຊັ່ນ:

- ມື້ທີໜຶ່ງ: ຈະແຕ່ງພາເຂົ້າໃຫ້ອຳນາດ ການປົກຄອງຢູ່ບ້ານກິນ ຫຼືແຂກທີ່ມີກຽດຈາກ ບ່ອນອື່ນກິນໝົດມື້ຂອງມື້ນັ້ນ.

- ມື້ທີສອງ: ຈະແຕ່ງພາເຂົ້າໃຫ້ແຂກ ຝ່າຍຍິງກິນແລ້ວກ່ໍກັນດອງນັ້ນໝົດມື້.

- ມື້ທີສາມ: ແມ່ນມື້ແຕ່ງດອງ ແລະຈະຮ່ວມ ກິນນຳກັນທັງແຂກເຊີນຝ່າຍຍິງ ແລະຝ່າຍ ຊາຍ.

ຊີວິດພາຍຫຼັງແຕ່ງດອງ ແລ້ວບາງຄັ້ງຈະ ຢູ່ນຳພໍ່ແມ່ເມຍ, ອອກເຮືອນ ຫຼືຢູ່ນຳພໍ່ແມ່ຝ່າຍ ຜົວ, ສິ່ງສຳຄັນແມ່ນ 2 ຝ່າຍຕົກລົງກັນ, ຝ່າຍໃດ ມີເງື່ອນໄຂ ແລະຝ່າຍໃດບໍ່ມີເງື່ອນໄຂ. ການຮັບ ມູນມໍລະດົກບໍ່ໄດ້ຈຳແນກວ່າລູກຊາຍ ຫຼືລູກ ຍິງຂຶ້ນກັບທີ່ວ່າລູກຄົນໃດຢູ່ເຮືອນລ້ຽງພໍ່ແມ່ ຜູ້ນັ້ນຈະມີສິດກວ່າ, ສ່ວນຜູ້ອື່ນໆກ່ໍໄດ້ໜ້ອຍ.

ການເກີດລູກ ແມ່ນເກີດຢູ່ແຈເຮືອນ ໂດຍ ມີການກະກຽມຄື: ຕຽງ, ສະແນນໄມ້, ຄີໄຟສະ ເພາະ, ມີໝໍຕຳແຍປະຈຳບ້ານ ຜູ້ຊ່ຽວຊານ ໃນການຊ່ວຍ ເຫຼືອໃນຍາມຄັບຂັນໂດຍມີການມັດເຊືອກໃສ່ ຄວັ້ນເຮືອນເພື່ອໃຫ້ຜູ້ຈະເກີດລູກແຂວນ ຫຼືຈ້ອງ ໄວ້ ເມື່ອແອນ້ອຍເກີດອອກມາແລ້ວກໍ່ຈະໃສ່ກະ ດົ້ງຝັດເຂົ້າ ເຊິ່ງວາງໄວ້ຂ້າງບ່ອນນອນຂອງແມ່ ໃນເວລານັ່ງກຳ ຢູ່ເບື້ອງເທິງຫົວຂອງຜູ້ຢູ່ກຳ ກໍ່ຈະກາງສະດຸ້ງໄວ້ ເພື່ອປ້ອງກັນບັນດາຜີຕ່າງໆ ເຊັ່ນ: ຜີພາຍຈະບໍ່ມາທຳຮ້າຍຜູ້ ຢູ່ກຳໄດ້ຍ້ອນບໍ່ ສາມາດນັບຕາສະດຸ້ງຄົບ.

ການຊອກຫາສະຖານທີ່ປຸກເຮືອນ ຂອງ ຊົນເຜົ່າແຊກ ແມ່ນອີງຕາມອຳນາດການປົກຄອງ ເປັນຫຼັກ, ເຮືອນຂອງຊົນເຜົ່າແຊກ ມີລັກສະນະ ແບບດຽວກັນກັບເຮືອນຂອງໄທເມີ້ຍ, ການຈັດ ວາງພາຍໃນ ຈະຈັດເປັນບ່ອນນອນຂອງໃຜຂອງ ມັນ ທຳອິດແມ່ນຫ້ອງລ້ອກ (ຫ້ອງພະບ່ອນບູຊາ) ຈາກນັ້ນຈະແມ່ນຫ້ອງພໍ່ແມ່, ຫ້ອງລູກສາວ, ລູກ ຊາຍ ແລະສຸດທ້າຍຈະແມ່ນຫ້ອງລູກໄພ້. ຢູ່ນອກ ເຮືອນໃກ້ກັບຫ້ອງນອນລູກໄພ້ຈະມີຄົກຕຳເຂົ້າ.

ເຄື່ອງນຸ່ງຫົ່ມ ຂອງຊົນເຜົ່າແຊກໃນເມື່ອ ກ່ອນຈະຍ້ອມດ້ວຍສີຄາມ, ສີດຳໝໍ້ນິນໃຊ້ດ້ວຍ ມືທຍິບ ໂດຍສະເພາະຜູ້ຊາຍຈະນຸ່ງຜ້າສະໂລ່ງ ຫຼື ຜ້າກະຕ້ອຍ, ແມ່ຍິງຈະນຸ່ງສິ້ນທຳມະດາ ແລະ ເສື້ອຜ້າບາງປະເພດທີ່ໄດ້ແລກປ່ຽນຈາກຊົນເຜົ່າ ລາວ ແລະບາງປະເພດກໍ່ສາມາດຜະລິດດ້ວຍຕົນ ເອງໄດ້. ຊົນເຜົ່າແຊກໃນສະໄໝກ່ອນມີຮູບແບບ ການຜະລິດເໝືອນກັນກັບຊົນເຜົ່າອື່ນໆຄື: ການ ເຮັດໄຮ່ປູກເຂົ້າຈ້າວ, ກ້ວຍ, ເຜືອກມັນ, ປູກມອນ ລ້ຽງມ້ອນ, ເກັບເດັດຜັກປ່າມາປຸງແຕ່ງອາຫານ ລ່າເນື້ອສັດປ່າມາກິນແຕ່ລະວັນ. ພວກເຂົາໄດ້ຫັນ ຮູບແບບການຜະລິດ ຈາກອັນເກົ່າມາສູ່ອັນໃໝ່, ຈາກເຮັດໄຮ່ມາເຮັດນາໃນປີ ຄ.ສ.1957 ແຕ່ນັ້ນ ມາຮູບແບບການດຳລົງຊີວິດເຂົາເຈົ້າກໍ່ ຄ່ອຍໆ ມີການປ່ຽນແປງ, ພື້ນຖານວັດທະນະທຳ, ພາສາ, ຮີດຄອງປະເພນີ ກໍ່ມີອັນສັບປົນກັບເຜົ່າ ອື່ນໆ.

ດ້ານສິລະປະວັນນະຄະດີພື້ນເມືອງ ຂອງ ຊົນເຜົ່າແຊກ ເປັນຕົ້ນແມ່ນ: ເປົ່າປີ່, ສີຊໍ, ເປົ່າຄຸ່ຍ, ເປົ່າແຄນ, ການຟ້ອນແບບເຕັ້ນສາກ ແລະການ ຂັບລຳມະຫາໄຊເປັນພາສາລາວ, ແຕ່ເວລາສອຍ ໃຊ້ເປັນພາສາແຊກ.

ພິທີສົ່ງສະການຄົນຕາຍຂອງຊົນເຜົ່າ ແຊກໃນເມື່ອກ່ອນ ແລະປະຈຸບັນແມ່ນຕ່າງກັນ ສະໄໝກ່ອນຕ້ອງໄດ້ໃຊ້ໂລງທີ່ເຈາະດ້ວຍໄມ້ ແຕ່ ປະຈຸບັນບາງທ້ອງຖິ່ນກໍ່ໃຊ້ແບບງ່າຍດາຍ. ສະ ເພາະ ເຂດເມືອງ ຄຳເກີດ ແຂວງ ບໍລິຄຳໄຊ ສະ ໄໝກ່ອນຄົນຕາຍ ຈະຄົບງັນແບບທຳມະດາ ແຕ່ ເວລາເອົາອອກປ່າຈະຕ້ອງໄດ້ເກນເອົາຊາວໜຸ່ມ (ຊາວບ້ານ) ມາຫາມຊ່ວຍຖ້າ 4 ຫາມຈະມີ 6 ຄົນ, ແຕ່ມີຂໍ້ຍົກເວັ້ນຜູ້ຊາຍຄົນໃດນັບທ້າພີ່ ນ້ອງ ຜູ້ໃກ້ຊິດ, ຖ້າເມຍຖືພາ 2 ເດືອນຂຶ້ນໄປຈະບໍ່ ໄດ້ ຫາມນຳໝູ່ສະເພາະໂລງສົບທີ່ກຳລັງຫາມ ນັ້ນ, ຢູ່ ຫົວໂລງຈະມີຖ້ວຍບັນຈຸນ້ຳເຕັມ 1 ຖ້ວຍຕັ້ງ ໄວ້, ເວລາຫາມໄປນັ້ນຫ້າມບໍ່ໃຫ້ນ້ຳເຟືອດເດັດຂາດ, ສະເພາະລູກຊາຍກົກຈະຕ້ອງເອົາມີທ້າງສອງ ເບື້ອງ ຍູ້ຫົວໂລງໄວ້ ພ້ອມທ້ຽງຖອຍຫຼັງ, ລູກຊາຍຄົນ ອື່ນໆ ຖັດລົງມາຈະຍ່າງສອງຂ້າງ ຂອງໂລງ ພ້ອມ ທ້ຽງໃຊ້ມືເບື້ອງໜຶ່ງຈັບໂລງແລ້ວຍ່າງໄປຕາມຈັ່ງ ຫວະຂອງຂະບວນການຈົນໄປຮອດປ່າ ຊ້າ, ສ່ວນ ລູກສາວ ແລະລູກໄພ້ກໍ່ຕ້ອງນອນທາງ 3 ເທື່ອ ເພື່ອໃຫ້ພວກທີ່ຫາມໂລງຄົນຕາຍ, ຫາມຂ້າມ ຕົນເອງ 3 ເທື່ອ ໃຊ້ວິທີ ຝ້ຽງພວກທີ່ຫາມໂລງ ຖ້າກັບເຖິງເຮືອນດີ, ພວກທີ່ຮັບໃຊ້ງານເຮືອນ ດີກໍ່ຈະແຕ່ງພາເຂົ້າໃຫ້ພວກຫາມກິນ 13 ຄົນຕໍ່ 4 ພາເຂົ້າ. ຖ້າພໍ່ແມ່ຕາຍບັນດາລູກເຕົ້າ ກໍ່ຈະໄດ້ຂ້າ ຄວາຍນຳຈຳນວນ 2ໂຕ ຖ້າບໍ່ມີແທ້ໆ ກໍ່ໃຫ້ຂ້າ1ໂຕ ເພື່ອເປັນການສົ່ງທາງ ຫຼືເຢົານຳພໍ່ ແມ່ ທີ່ຕາຍໄປ. ສະເພາະປະຈຸບັນແມ່ນການສົ່ງ ສະການກໍ່ໄດ້ ໃຊ້ໄມ້ໄຜ່ເຮັດເປັນສະແນນໃຫຍ່ ແລ້ວ ຫາມ ໄປປ່າຊ້າໃຊ້ວິທີຈູດ, ຄົນຕາຍທຸງຈະມີ ປ່າຊ້າຕ່າງ ຫາກ, ບາງກໍລະນີຈູດໄດ້ ແຕ່ບາງກໍລະນີ ກໍຝັງ.

Xaeh

Historical background

The Xaeh live in the two middle provinces of Bolikhamsay and Khammuan. They live in Khamkerth district of Bolikhamsay province. In Khammuan province they live in Thakhack Hinebourne, Nakai and Ngommalad districts. In the seventeenth century some Sach migrated to Vietnam and China.

Today the population of Xaeh in Laos is 2,745 people, according to the 1995 census.

Name and language:

Their official name is Xaeh. The language is in the Austro-Thai linguistic family and in the Tai-Kadai group. There is some mix of Lao language in their language.

Society, beliefs, ceremonies and myths:

Many of the Xaeh that live in the lower lands have adopted Buddhism; however, those in the remote highlands still practice animism where they worship a myriad of nature-related spirits. There is a guardian spirit of the house and the village. There are also spirits of river, mountains and the sky. The Xaeh have shamans, called moi yau who cure the ill and organize religious activities.

The Xaeh live in patrilineal nuclear families. A young man and woman are free to choose their future partners; however sometimes parents will arrange a marriage. After marriage the bride will move into her parents-in-law's household. The Xaeh often intermarry with the Lao and other Tai-speaking groups in their area.

When someone dies then a ceremony is held. The body is placed in a coffin and then the coffin taken to the cemetery where it is cremated. One to two buffaloes are sacrificed. When carrying the coffin to the cemetery, the daughters and daughter-in-laws must lie down in the path so the coffin may pass over them as it is carried. People who die in accidents or children who die are buried, not cremated.

Village and house:

Many of the Xaeh villages are remote, and can only be reached by foot. Their houses are on stilts, about two meters high. The walls and floor are built with wooden planks, and the roofs are covered with thatch. The house is separated into several compartments for sleeping, eating, and cooking. A kitchen is located in the back of the living room.

Costume:

The Xaeh used to wear traditional costumes, but this is not common any more. The traditional costume for women consisted of an ankle length sarong colored dark blue, which is embroidered along the lower hem. With this the woman would wear a dark blue long-sleeved vest that was fastened with silver buttons. A broad red sash is worn over the right shoulder and an embroidered belt around the waste.

The men would wear dark blue trousers that are long and wide. With these trousers a vest similar to the woman's vest would be worn. Both sexes wear silver jewelry with their traditional costumes. The women are known for their large silver pendants.

Agriculture and livelihood:

The Xaeh ĭn Laos live simple agricultural lives. Those living in the plains grow glutinous rice in flooded paddies, while those living in the highlands grow dry-land rice using slash-and-burn methods. They also grow other crops such as corn, potatoes, and vegetables. They raise buffalo, cattle, poultry for food and trade. They also raise dogs for meat. In the forests they hunt game and gather wild vegetables and herbs. Simple handicrafts include the weaving of baskets and mats with bamboo. Many Xaeh have very low incomes, so the Lao government has been trying to assist them by introducing new farming methods and crops.

ສົນໃຈຂໍ້ມູນລະອຽດ

ຕິດຕໍ່

ສຳນັກງານ

ສູນກາງແມ່ລາວສ້າງຊາດ

ກົມຊົນເຜົ່າ

ເບີໂທ: 218965

ຊົນເຜົ່າ ຍວນ
ປະຫວັດຄວາມເປັນມາ

ຊົນເຜົ່າຍວນມີປະຫວັດຄວາມເປັນມາ ຄ້າຍຄືກັນກັບຊົນເຜົ່າໃນໝວດພາສາລາວ-ໄຕ ໄດ້ອົບພະຍົບ ແລະເຄື່ອນຍ້າຍຈາກພາກໃຕ້ ຫຼື ພາກຕາເວັນອອກສ່ຽງໃຕ້ຂອງຈີນ ເຂົ້າສູ່ດິນແດນ ພາກເໜືອຂອງລາວເຮົາໃນລະຫວ່າງສະຕະວັດທີ 13 ເປັນຕົ້ນມາ.

ປະຈຸບັນຊົນເຜົ່າຍວນທີ່ອາໃສຢູ່ ສ.ປ.ປ ລາວ ໄດ້ຕັ້ງຖິ່ນຖານພູມລຳເນົາຢູ່ບັນດາແຂວງ ພາກເໜືອເຊັ່ນ: ແຂວງ ໄຊຍະບູລີ, ຫຼວງພະບາງ, ບໍ່ແກ້ວ, ອຸດົມໄຊ ແລະຜົ້ງສາລີ. ນອກຈາກນີ້ຊົນ ເຜົ່າຍວນຍັງມີຢູ່ທາງພາກເໜືອຂອງປະເທດໄທ.

ຊົນເຜົ່າຍວນ ຢູ່ລາວມີພົນລະເມືອງທັງ ໝົດ 26.239 ຄົນ, ຍິງ 13.312 ຄົນ, ເທົ່າກັບ 0,6% ຂອງພົນລະເມືອງທົ່ວປະເທດ (ຕາມສະ ຖິຕິການສຳຫຼວດພົນລະເມືອງຄັ້ງທີII ປີ 1995).

ຊື່ເອີ້ນ:

ຊົນເຜົ່າຍວນນີ້ເອີ້ນຕົນເອງວ່າ"ຍວນ" ຊົນເຜົ່າອື່ນເອີ້ນໃຫ້ເຂົາເຈົ້າກໍ່ແມ່ນ "ຍວນ" ແລະ ຊື່ທີ່ເຂົາເຈົ້າມັກກໍ່ແມ່ນ ຊົນເຜົ່າຍວນ .

ສຳລັບການທີ່ເອີ້ນຊື່ວ່າ "ຍວນ,ໄຕຍວນ, ໄທຍວນ, ໂຍນ,ໄຕໂຍນ, ໄທໂຍນ " ນີ້ຈາກຫຼັກ ຖານທາງປະຫວັດສາດ ແລະພຶດຕິກຳບາງຢ່າງໃນ ປະຈຸບັນ ໄດ້ສົມມຸຕິຖານວ່າເປັນການເອີ້ນຊື່ຄົນອັນ ທີ່ມາຈາກຊື່ຂອງອານາຈັກ " ໂຍນົກ " . ອີກຄຳ ເຫັນໜຶ່ງ ຄຳວ່າ " ຍວນ "ແມ່ນມາຈາກໄມ້ຫຳ ຍົນ ຫຼືໄມ້ກັນຜີ ທີ່ເຂົາເຈົ້າຕອກໄວ້ຢູ່ເທິງຂອບປະ ຕູເບື້ອງເທິງ. ຊົນເຜົ່າຍວນປະກອບມີສອງແຊ ຄື : ກະລອມ ແລະງົ້ວ.

ພາສາ

ຊົນເຜົ່າຍວນ ມີພາສາປາກເວົ້າທີ່ເປັນ ເອກະລັກຂອງຕົນເອງ ຊຶ່ງຈັດຢູ່ໃນໝວດພາສາ ລາວ-ໄຕ. ສຳລັບສຽງສຳນຽງປາກຂອງຊົນເຜົ່າ ຍວນຄ້າຍຄືກັບຊົນເຜົ່າລື້ ແລະອີກດ້ານໜຶ່ງ ເຂົາເຈົ້າກໍ່ມີຕົວໜັງສືຂຽນ(ໜັງສືທຳ) ຄ້າຍຄື ກັບໜັງສືຂອງຊົນເຜົ່າລື້ເຊັ່ນດຽວກັນ.

ຮີດຄອງປະເພນີ, ຄວາມເຊື່ອຖື, ວັດທະນະທຳ ແລະ ສັງຄົມ

ຍ້ອນມີປະຫວັດຄວາມເປັນມາ ຕະຫຼອດ ຮອດການເຄື່ອນຍ້າຍເຂົ້າມາຢູ່ໃນດິນດອນຕອນນີ້ ພ້ອມດຽວກັນກັບບັນດາຊົນເຜົ່າທີ່ປາກເວົ້າພາສາ ລາວ-ໄຕ. ສະນັ້ນຮີດຄອງປະເພນີ, ຄວາມເຊື່ອຖື ແລະວັດທະນະທຳຂອງຊົນເຜົ່າຍວນຈຶ່ງມີລັກສະ ນະຄ້າຍຄືກັນກັບຊົນເຜົ່າໃນໝວດພາສາລາວ - ໄຕ. ເຂົາເຈົ້າມີຄວາມເຊື່ອ ແລະນັບຖືພຸດທະສາສະ ໜາ. ພ້ອມກັນນັ້ນກໍ່ຍັງເຊື່ອຖືຜີເຊັ່ນ: ຜີພໍ່, ຜີແມ່, ຜີປ່າ ແລະຜີອື່ນໆ. ໝາຍຄວາມວ່າ: ການເຊື່ອຖື ໃນເລື່ອງຂອງຈິດວິນຍານ, ຄວາມເຊື່ອເລື່ອງໄສ ຍະສາດ ແລະສິ່ງນອກເໜືອທຳມະຊາດ ທີ່ບັນພະ

ບູລຸດໄດ້ກຳນົດໄວ້ ຍັງມີຢູ່ໃນຊີວິດປະຈຳວັນຂອງ ຊົນເຜົ່ານີ້.

ໂຄງສ້າງທາງສັງຄົມ ຂອງຊົນເຜົ່າຍວນມີ ລັກສະນະຄືກັນກັບຂອງຊົນເຜົ່າລໍ້, ຊຶ່ງປະກອບມີ ຫຼາຍກົກເຫຼົ່າ, ຫຼາຍຕະກຸນ ແລະຫຼາຍຊັ້ນຄົນ. ເຂົາ ເຈົ້າຖືວ່າຄົນໃນຕະກຸນດຽວກັນ ແມ່ນສືບເຊື້ອ ສາຍມາຈາກບັນພະບູລຸດດຽວກັນ, ເປັນຍາດພີ່ ນ້ອງກັນ, ຕ້ອງມີຄວາມຮັກແພງສາມັກຄີຊ່ວຍ ເຫຼືອກັນໃນການດຳລົງຊີວິດປະຈຳວັນ. ສຳລັບ ລະບົບຄອບຄົວເລືອດເນື້ອເຊື້ອສາຍນັ້ນ ຊົນເຜົ່າ ຍວນ ມີຮີດຄອງທີ່ປະຕິບັດແບບຜົວດຽວເມຍ ດຽວ, ມີການສືບເຊື້ອສາຍທາງພໍ່ເປັນສຳຄັນ, ແຕ່ ການດຳລົງຊີວິດຫຼັງຈາກແຕ່ງດອງນັ້ນແມ່ນທັງ ສອງຝ່າຍ ຄືຝ່າຍຊາຍ ແລະຝ່າຍຍິງເປັນຜູ້ຕົກລົງ ກັນ, ແຕ່ໂດຍທົ່ວໆໄປແລ້ວຜູ້ຊາຍໄປຢູ່ເຮືອນແມ່ ຍິງກ່ອນແລ້ວຈຶ່ງກັບຄືນມາຢູ່ເຮືອນນຳພໍ່ ແມ່ຂອງ ຕົນ ຫຼືອອກໄປຕັ້ງເຮືອນໃໝ່. ການເລືອກຄູ່ຄອງ ກ່ອນການແຕ່ງດອງນັ້ນ ແມ່ນຂຶ້ນກັບບ່າວ ແລະ ສາວ ແລ້ວຈຶ່ງສະເໜີໃຫ້ພໍ່ແມ່ ເພື່ອຈັດການສູ່ຂໍ, ແຕ່ພິເສດໃນສັງຄົມຂອງຊົນເຜົ່າຍວນນີ້ ແມ່ນ ຝ່າຍຍິງເປັນຜູ້ໄປສູ່ຂໍນຳຝ່າຍຊາຍ. ພາຍຫຼັງສອງ ຝ່າຍຕົກລົງເຫັນດີນຳກັນໃນເລື່ອງຕ່າງໆ ແລ້ວຈຶ່ງ ກຳນົດມື້ແຕ່ງດອງ. ໃນປະຈຸບັນໂຄງສ້າງສັງຄົມ ຂອງຊົນເຜົ່າຍວນ ເປັນລັກສະນະລະບົບຄອບຄົວ ດຽວ ເຊິ່ງແຕກຕ່າງກັນກັບໃນສະໄໝກ່ອນ ຊຶ່ງຈະ ເປັນລະບົບຄອບຄົວຂະຫຍາຍ. ຊົນເຜົ່າຍວນ ມັກຕັ້ງຖິ່ນຖານບ້ານຊ່ອງ ຢູ່ ຕາມເຂດທົ່ງພຽງ, ລຽບຕາມແຄມແມ່ນ້ຳລຳເຊ ທີ່ມີເງື່ອນໄຂສະດວກ ໃນການດຳເນີນຊີວິດປະ ຈຳ ວັນ ໂດຍສະເພາະ ແມ່ນບ່ອນທີ່ມີເງື່ອນໄຂໃນ ການເຮັດນາ.

ລັກສະນະເຮືອນ ຂອງຊົນເຜົ່າຍວນນີ້, ຕາມປະເພນີ ແລ້ວແມ່ນເຂົາເຈົ້າຈະປຸກສ້າງເປັນ ແບບເຮືອນຮ້ານ, ມີການຈັດລະບຽບການປະກອບ ສ້າງພາຍໃນເຮືອນຄ້າຍຄືກັນກັບຊົນເຜົ່າລໍ້. ການ ຈັດຫ້ອງແມ່ນອີງຕາມຈຳນວນສະມາຊິກຂອງ ຄອບຄົວດັ່ງທີ່ໄດ້ກ່າວມາແລ້ວວ່າ: ຊົນເຜົ່າຍວນ ນັບຖືພຸດທະສາສະໜາ ຄຽງຄູ່ກັບຄວາມເຊື່ອຖື ໃນ ເລື່ອງໄສຍະສາດ ຫຼືຄວາມເຊື່ອໃນເລື່ອງຜີ, ດັ່ງນັ້ນ ເຂົາເຈົ້າຈະມີຂໍ້ຫ້າມ ແລະການຄະລຳໃນເຮືອນ ຄື: ຫ້າມບໍ່ໃຫ້ເຂົ້າຫ້ອງນອນ ແລະນັ່ງເບາະຮອງນັ່ງ ຂອງຜູ້ເປັນເຈົ້າຂອງເຮືອນ.

ຮີດຄອງປະເພນີ ກ່ຽວກັບການເກີດລູກ ຂອງຊົນເຜົ່າຍວນ ແມ່ນເກີດຢູ່ໃນເຮືອນ, ເຊິ່ງມີ ແມ່ຍິງຈະເປັນແມ່ຂອງຕົນເອງ, ແມ່ຂອງຜົວ ຫຼື ແມ່ຍິງຄົນອື່ນໆ ທີ່ມີປະສົບການໃຫ້ການດູແລ ຊ່ວຍເຫຼືອ, ແຕ່ຖ້າກໍລະນີ ເກີດຍາກກໍ່ຈະຫາໝໍດູ, ໝໍມໍມາເປົ່າ ແລະຮວາຍນ້ຳມົນໃຫ້ກິນ. ສະຖານ ທີ່ເກີດຢູ່ໃກ້ກັບເຕົາໄຟ ຫຼືບໍລິເວນຫ້ອງນອນຂອງ ຄູ່ຜົວເມຍນັ້ນເອງ. ພາຍຫຼັງເກີດແລ້ວ ກໍ່ຕັດສາຍ ແຫ່ດ້ວຍຕົວໄມ້ປ່ອງທີ່ຄົມແລ້ວເອົາໃສ່ບັ້ງໄມ້ໄປ ທ້ອຍໄວ້ຢູ່ກົກໄມ້ນອກບ້ານ ຫຼືເອົາໄປຝັງດິນ, ເອົາ ເດັກອາບນ້ຳອຸ່ນ ແລະຜູ້ເປັນແມ່ຕ້ອງໄດ້ນັ່ງກຳຢູ່ ໄຟ ໂດຍການກິນນ້ຳຕົ້ມ ຢາພື້ນເມືອງພ້ອມນີ້ຕ້ອງ ໄດ້ ຄະລຳອາຫານປະເພດທີ່ເໝັ່ນ, ຄາວ ແລະມີ

ລິດເຜັດເຫຼົ່ານີ້ເປັນຕົ້ນ.

ສຳລັບຮີດຄອງໃນກໍລະນີ ມີ ການຕາຍ, ສ່ວນຫຼາຍແລ້ວເຂົາເຈົ້າຈະມີພິທີ ຕາມໝຸດ ທະສາສະໜາ ສົມທົບກັບປະເພນີທີ່ສືບທອດກັນມາແຕ່ດຶກດຳບັນ ໂດຍສະເພາະແມ່ນການ ຄົບ ຈັ່ນຕ່າງໆໃຫ້ໄປຕາມຂັ້ນຕອນ ຈາກນັ້ນ ກໍ່ຈະສົງສະ ການ ດ້ວຍການຈູດ ແລະຝັງເວັ້ນເສຍ ແຕ່ ການຕາຍທີ່ເຂົາເຈົ້າເອີ້ນວ່າຕາຍທຸງ ຫຼືຕາຍບໍ່ດີ ນັ້ນກໍ່ຈະຮີບສົງສະ ການຢ່າງໄວ ໆ. ໂດຍບໍ່ມີການ ຄົບຈັ່ນ, ຈາກນັ້ນ ເຈັດມື້ຈຶ່ງຈະເຮັດພິທີຢູ່ເຮືອນ.

ສຳລັບບຸນປະເພນີ ທີ່ສຳຄັນໃນປີໜຶ່ງໆ ຂອງເຂົາເຈົ້າແມ່ນຈະຕິດພັນກັບບຸນທາງພຸດທະສາໜາ. ຊົນເຜົ່າຍວນນອກຈາກຖືວັດວາອາຮາມເປັນສະຖານທີ່ສຳຄັນທາງພຸດທະສາສະໜາແລ້ວ, ຫໍເທວະດາເຮືອນ, ຫໍເທວະດາບ້ານ, ຫໍເທວະດາເມືອງ, ຫຼັກໃຈບ້ານເຫຼົ່ານີ້ລ້ວນແຕ່ເປັນສະຖານທີ່ສັກສິດທັ້ງເປັນບ່ອນເຄົາລົບນັບຖືຂອງຄົນໃນບ້ານອີກດ້ວຍ. ສະນັ້ນໃນແຕ່ລະປີເຂົາເຈົ້າ ກໍ່ຈະມີພິທີລ້ຽງຕາມຮີດຄອງເພື່ອໃຫ້ສິ່ງສັກສິດເຫຼົ່ານັ້ນຊ່ວຍປົກປ້ອງຄຸ້ມຄອງຊີວິດອົນຊີຂອງຄົນ, ສັດລ້ຽງ ແລະເຄື່ອງປູກຂອງຝັ່ງຕ່າງໆ ໃຫ້ພົ້ນຈາກໄພອັນຕະລາຍ ແລະມີຄວາມຢູ່ດີກິນດີໃນປີຕໍ່ໄປ.ໃນລະຫວ່າງການເຮັດພິທີກຳ ທາງ ການເກີດ, ການແຕ່ງດອງ, ການຂຶ້ນເຮືອນໃໝ່ ແລະພິທີກຳຕ່າງໆຈະແມ່ນທາງສາສະໜາຫຼືພິທີທາງໄສຍະ ສາດນັ້ນ ເຂົາເຈົ້າຈະຕ້ອງມີ ການຈັດບາສີສູ່ຂວັນ ເຊິ່ງຖືວ່າເປັນເອກະລັກອີກຢ່າງໜຶ່ງທີ່ຄ້າຍຄືກັບຊົນເຜົ່າລາວ.

ດ້ານສິລະປະວັນນະຄະດີນັ້ນ ເຂົາເຈົ້າມີກອນຂັບລຳ ທີ່ເປັນເອກະລັກເຊັ່ນ: ຈ້ອຍຍວນ, ພ້ອມກັນນີ້ ຍັງມີນິທານພື້ນເມືອງ, ມີຄຳພະຫຍາ, ຄຳສຸພາສິດ ແລະອື່ນໆທີ່ສ່ອງແສງເຖິງການສະລິດ, ການພົວພັນລະຫວ່າງບ່າວສາວ ແລະຄົນໃນສັງຄົມອີກດ້ວຍ. ສຳລັບເຄື່ອງເອ້ຍ້ອງ ແລະເຄື່ອງນຸ່ງນັ້ນ ສ່ວຍຫຼາຍແລ້ວເຂົາເຈົ້າມັກຖັກແສ່ວ ແລະອອກແບບທີ່ເປັນເອກະລັກຂອງເຂົາເຈົ້າເອງ ໂດຍສະເພາະແມ່ນສິ້ນ, ເສື້ອຂອງແມ່ຍິງ, ແຕ່ປະຈຸບັນເຄື່ອງນຸ່ງ ແລະວັດທະນະທຳການແຕ່ງກາຍທີ່ເປັນເອກະລັກຂອງເຂົາເຈົ້າ ໂດຍທົ່ວໄປຈະບໍ່ປະກົດໃຫ້ເຫັນຢ່າງຊັດເຈນ ນອກຈາກໃນເວລາມີພິທີຫຼືງານບຸນຕ່າງໆເທົ່ານັ້ນ.

ການດຳເນີນວິຖີຊີວິດທາງດ້ານເສດຖະກິດ

ຊົນເຜົ່າຍວນ ມີອາຊີບຕົ້ນຕໍ່ໃນການເຮັດນາ, ເຮັດໄຮ່ປູກເຂົ້າ. ນອກຈາກນີ້ຍັງເຮັດສວນປູກພືດຜັກ ແລະລ້ຽງສັດ ເພື່ອໃຊ້ສຳລັບເປັນອາຫານ, ຮັບໃຊ້ພິທີກຳຕ່າງໆ ແລະນຳໃຊ້ເປັນແຮງງານໃນເວລາລາກແກ່. ແມ່ຍິງຊົນເຜົ່ານີ້ມີມູນເຊື້ອໃນການປູກມອນລ້ຽງມ້ອນ, ຕຳຫູກທໍ່ໄໝ, ຫຍິບປັກຖັກ ແສ່ວ ແລະຄ້າຂາຍເລັກນ້ອຍ.

Nhouan

Historical background:

The Nhouan people originally came from the Lanna kingdom of northern Thailand, moving into Laos between 150 to 200 years ago. Today the Yuan people in Laos live in the provinces of Saiyabury, Luangprabang, Bokeo, Udomsai, and Phongsali. Additionally, there is a large population still in northern Thailand. The total population of Nhouan in Laos is 26,239, of which 13,312 are women.

Name and language:

The most common name for these people is "Nhouan", and this is their official name in Laos. Other names include Lanna Tai, Tai Nhouan, and Lao Phung Dam. There are two distinct groups in Laos: the Kalorm and the Ngew.

The language is similar to Lao, but has fewer Pali and Khmer loan words than Lao or Thai. There is a traditional script that is similar to the Lue script, but this is not known among the younger generation of Nhouan. Only a few older people still know this script.

Society, beliefs, ceremonies and myths:

Predominately Buddhists, the Nhouan adopted Buddhism around the tenth century. However, they have adopted ancient animistic beliefs into their Buddhism, still worshipping such spirits as the spirits of ancestors, nature, and the village.

They believe that spirits can insure a more prosperous and healthy life as long as these spirits are kept happy. Once a year offerings are made to these various spirits in an outdoor altar under a large tree that is usually in the center of the village. The more personal ancestral spirits are worshipped at an altar inside the house.

It is important to inform ancestral spirits of all new events in the family such as births and deaths.

The usual Buddhist festivals are also important, and the temple is an important place of worship.

Nhouan live in nuclear family units. The men are monogamous. Family lineage through the father's line is important.

For marriage, after a young couple has agreed to marry, then the man must pay her family a dowry, this consists of silver, a buffalo, a pig, some chickens and some rice whiskey. Today, there is no strict rule in which household the new couple must reside in. They will choose depending on circumstances. The Nhouan will also intermarry with other neighboring ethnic groups.

A midwife will assist in birth, which will take place near the hearth inside the house. If there is a difficult delivery, a shaman will try to assist by performing magic. The umbilical cord of the baby is hung in a tree outside the house, or it may be buried. The mother must avoid certain foods for sometime, such as spicy foods, or bad smelling food.

When there is a death, then a ceremony where monks will chant and perform prayers is held. Then the body is cremated.

However, if the deceased died in an accident, then the body will be buried.

Village and house:

The Nhouan villages are usually located in the lower plains and close to rivers if possible, which allows easier farming.

Their houses are generally typical Lao-style, sitting on sturdy cement posts. The walls are woven bamboo, or sometimes planks and the roof will be thatch or wooden shingles. Wooden stairs will lead to a door or small covered porch.

The interior has a large living room and smaller rooms for sleeping. There is a small kitchen in an attached outbuilding.

Costume:


Traditional clothing for women consists of a traditional skirt (phaa sin) with horizontal stripes of many different colors. With this a tight beige or black blouse will be worn that accompanies an elaborately patterned silk cloth worn over the shoulder. A white, silk turban finished the costume. They will wear earrings, necklaces, and rings made of silver.

The men's traditional costume consists of wide trousers that only go down to the knee. A long-sleeved vest is also worn, plus a silk scarf that is worn similarly to the women's scarf. They cover their heads with a silk turban

Agriculture and livelihood:

The Nhouan grow rice in wet paddies. They also grow corn, cassava, vegetables, fruits, tobacco, and cotton. They breed buffalo, poultry, and pigs. Nhouan women also raise silkworms and make silk. This has led to the Nhouan being financially better off than many other minorities in Laos.

The men also hunt small game with crossbows, traps, flintlock muskets and slings. They fish with spears and nets and forage for edible products in the forest



ຊົນເຜົ່າ ໄຕ
ປະຫວັດຄວາມເປັນມາ

ຊົນເຜົ່າໄຕ ມີປະຫວັດຄວາມເປັນມາ ຄືກັນກັບຊົນເຜົ່າລາວ. ຊົນເຜົ່າໄຕ ໄດ້ມາຕັ້ງຫຼັກປັກຖານ ຢູ່ດິນດອນຕອນນີ້ຫຼາຍຮ້ອຍປີແລ້ວ, ເຂົາເຈົ້າ ໄດ້ເຄື່ອນຍ້າຍມາຈາກດິນແດນຕອນໃຕ້ ຂອງປະເທດຈີນ ເຂົ້າສູ່ປະເທດລາວ ໂດຍຜ່ານຕາມລ້ອງ ແມ່ນ້ຳດຳ, ແມ່ນ້ຳເມົາ ຕົກໃສ່ເຊີນລາ, ດຽນບຽນຟູ ແລະໄລເຈົ້າ ປະເທດຫວຽດນາມ ໃນປະຈຸບັນ. ສ່ວນສາເຫດຂອງການຍົກຍ້າຍໃນແຕ່ລະຄັ້ງມີ 2 ສາເຫດທີ່ສຳຄັນຄື: ຍ້ອນສົງຄາມ ແລະການຊອກບ່ອນທຳມາຫາກິນ.

ສຳລັບຢູ່ລາວເຮົາຊົນເຜົ່ານີ້ຕັ້ງຖິ່ນຖານ ແລະດຳລົງຊີວິດຢູ່ບັນດາແຂວງພາກເໜືອ ລົງ ຮອດແຂວງບໍລິຄຳໄຊ. ຊົນເຜົ່າໄຕ ນອກຈາກມີຢູ່ ລາວເຮົາແລ້ວຍັງມີຢູ່ ສ ສ ຫວຽດນາມ.

ຊື່ເອີ້ນ:

ຊົນເຜົ່ານີ້ ມີຊື່ເອີ້ນຫຼາຍຊື່ທີ່ແຕກຕ່າງກັນ ຊື່ເດີມ ແລະຊື່ທີ່ເຂົາເຈົ້າເອີ້ນຕົນເອງ ແມ່ນໄຕ ເຊິ່ງ ຖືກຕ້ອງກັບສຽງສຳນຽງຂອງເຂົາເຈົ້າເອງ. ແຕ່ຊົນເຜົ່າອື່ນເອີ້ນເຂົາເຈົ້າດ້ວຍການຜັນສຽງ "ໄຕ" ມາເປັນ"ໄທ"ຄວາມຈິງແລ້ວຄຳວ່າ"ໄຕ" ຫຼື "ໄທ" ນັ້ນມີຄວາມໝາຍຄືກັນແປວ່າ: ຄົນ ຫຼືມະນຸດ.

ຊົນເຜົ່າໄຕນີ້ມັກຈະມີຊື່ເອີ້ນ ຕາມພູມສັນຖານບ່ອນຢູ່ອາໄສ ແລະການນຸ່ງເຄື່ອງແຕ່ງກາຍ ເຊັ່ນ: ນຸ່ງສີດຳ ກໍ່ເອີ້ນໄຕດຳ, ນຸ່ງສີຂາວ ກໍ່ເອີ້ນໄຕ ຂາວ, ນຸ່ງສີແດງກໍ່ເອີ້ນໄຕແດງແລະອື່ນໆ. ສຳລັບ ໄຕດຳຍັງມີເລື່ອງທີ່ເຫຼົ່າສືບກັນມາເຖິງທຸກວັນນີ້ ກ່ຽວກັບການທີ່ມີຊື່ເອີ້ນວ່າ: "ໄຕດຳ".

ຊົນເຜົ່າໄຕ ປະກອບດ້ວຍຫຼາຍແຊ ຫຼື ຂະແໜງເຊັ່ນ: ໄຕດຳ, ໄຕຂາວ, ໄຕແດງ ແລະໄຕ ເມີ້ຍຕົ້ນ.

ພາສາ

ພາສາຂອງຊົນເຜົ່າໄຕ ຈັດເຂົ້າໃນໝວດ ພາສາລາວ-ໄຕ. ຊົນເຜົ່ານີ້ມີຕົວໜັງສືຂຽນໂດຍ ສະເພາະແມ່ນຕົວໜັງສືໄຕດຳ ມີລັກສະນະຄ້າຍ ຕົວໜັງສືລາວບູຮານ, ແຕ່ສຳນຽງສຽງປາກບໍ່ມີຕົວ "ດ"ໃຊ້ຕົວ " ລ " ແທນ. ໜັງສືຂຽນນີ້ ບໍ່ໄດ້ຮັບການສົ່ງເສີມ ສະນັ້ນມີພຽງແຕ່ຜູ້ເຖົ້າ, ຜູ້ແກ່, ເຈົ້າ ກິກ, ເຈົ້າເຫຼົ່າຈຳນວນໜຶ່ງຂອງຊົນເຜົ່ານີ້ເທົ່ານັ້ນທີ່ ຍັງຮູ້, ອ່ານອອກ ແລະຂຽນເປັນ.

ຮີດຄອງປະເພນີ, ຄວາມເຊື່ອຖື, ວັດທະນະທຳ ແລະສັງຄົມ.

"ໄຕ"ເປັນຊົນເຜົ່າໜຶ່ງທີ່ມີຮີດຄອງປະເພນີ, ຄວາມເຊື່ອຖື ແລະວັດທະນະທຳທີ່ອຸດົມສົມບູນ ສືບທອດມາແຕ່ບູຮານນະການ. ຊົນເຜົ່າໄຕນັບຖືຜີເຊັ່ນ: ຜີພໍ່, ຜີແມ່, ຜີເຮືອນ, ຜີບ້ານ, ຜີເມືອງ, ຜີປ່າ ແລະຜີນາເປັນຕົ້ນ. ຜີທີ່ມີຄວາມສຳຄັນຕົ້ນຕໍ ຂອງເຂົາເຈົ້າໄດ້ແກ່ຜີເຮືອນ. ສະນັ້ນໃນແຕ່ລະ ເຮືອນຈະມີຮ້ານບູຊາຜີ (ເຫວະດາເຮືອນ), ຊຶ່ງເປັນ

ບ່ອນສະຖິດຖານຂອງວິນຍານພໍ່, ແມ່ ແລະບັນພະ ບຸລຸດທີ່ໄດ້ເສຍຊີວິດໄປ. ສຳລັບສະຖານທີ່ສຳຄັນ ຂອງຊົນເຜົ່າໄຕ ທີ່ເປັນບ່ອນສັກສິດ, ບ່ອນສັກກາ ລະບູຊາແມ່ນເທວະດາເຮືອນ, ຫໍຜີບ້ານ, ຫ້ວຍຜີມິດ, ປ່າຊ້າເຫຼົ່ານີ້ເປັນຕົ້ນ.

ດ້ານລະບົບຄອບຄົວ, ເລືອດເນື້ອເຊື້ອ ສາຍ ແລະການສືບຕະກຸນ ທີ່ເຄີຍປະຕິບັດກັນມາ ຂອງຊົນເຜົ່າໄຕນີ້ແມ່ນເປັນຄອບຄົວທີ່ຂ້ອນຂ້າງ ໃຫຍ່ຊຶ່ງມີສະມາຊິກແຕ່ 15-30 ຄົນ, ລູກຊາຍຈະ ຕ້ອງສືບເຊື້ອສາຍຕະກຸນຂອງພໍ່, ສ່ວນລູກແມ່ຍິງ ພາຍຫຼັງແຕ່ງດອງແລ້ວຕ້ອງໄດ້ປ່ຽນໄປເອົາຕະກຸນ ນຳຜົວ. ເຖິງຢ່າງໃດກໍ່ຕາມກ່ອນຈະນຳເອົາຜູ້ເປັນ ເມຍມາຢູ່ເຮືອນນຳພໍ່, ແມ່ຂອງຕົນເອງ ຫຼືອອກໄປ ຕັ້ງເຮືອນໃໝ່ນັ້ນ, ຜູ້ຊາຍ(ເຂີຍ) ຕ້ອງໄປຢູ່ເຮືອນ ນຳພໍ່, ແມ່ຝ່າຍຍິງ 2-3 ປີ (ແຕ່ຕາມປະເພນີແທ້ ແມ່ນ 8 ປີ). ເຂົາເຈົ້າປະຕິບັດຮີດຄອງປະເພນີ ແບບຜົວດຽວ, ເມຍດຽວ. ສຳລັບການແບ່ງປັນມູນ ມັງມໍລະດົກຂອງຊົນເຜົ່າໄຕຖືວ່າຜູ້ທີ່ເປັນລູກຊາຍ ກໍຈະມີສິດໄດ້ຮັບຫຼາຍກວ່າໝູ່ ຍ້ອນວ່າມີພັນທະ ໃນການລ້ຽງດູພໍ່, ແມ່, ສ່ວນລູກຊາຍຜູ້ອື່ນໆ ກໍ່ຈະ ໄດ້ຮັບມູນມັງຈາກພໍ່, ແມ່ເຊັ່ນດຽວກັນ. ໝາຍ ຄວາມວ່າ ຖ້າລູກຊາຍຄົນໃດລ້ຽງດູພໍ່ແມ່ແມ່ນມີ ສິດໃນການຮັບມູນມັງມໍລະດົກຫຼາຍກວ່າໝູ່.

ສຳລັບລູກແມ່ຍິງ ສ່ວນຫຼາຍແລ້ວພໍ່ແມ່ ຈະແບ່ງປັນສັດລ້ຽງໃຫ້ເຊັ່ນ: ງົວ, ຄວາຍ ແລະອື່ນໆ ອີງໃສ່ຖານະ ທາງເສດຖະກິດຂອງຄອບຄົວ.

ໂຄງສ້າງທາງດ້ານສັງຄົມຂອງຊົນເຜົ່າ ໄຕ ໃນລາວເຮົາປະກອບມີລະບົບຊົ່ງຊາວ ຫຼືຕະ ກຸນເຊັ່ນ: ສົ່ງເລືອງ, ສົ່ງລໍນ້ອຍ, ສົ່ງລໍໃຫຍ່, ສົ່ງຄ່ຳ, ສົ່ງກາ, ສົ່ງເຍືອງ ແລະອື່ນໆ. ແຕ່ລະສາຍຕະກຸນ ຈະມີຂໍ້ຫ້າມ, ການຄະລຳທີ່ແຕກຕ່າງກັນໄປໂດຍ ສະເພາະແມ່ນການຄະລຳ ໃນການຂ້າ ຫຼືກິນຊີ້ນ ສັດທີ່ເປັນສົ່ງ ແລະຕະກຸນຂອງຕົນເອງ ທັ້ງນີ້ກໍ່ເພື່ອ ສະແດງເຖິງຄວາມເຄົາລົບບູຊາຕໍ່ຕະກຸນນັ້ນເອງ. ຕົວຢ່າງ: ສົ່ງເຍືອງຈະບໍ່ຂ້າ ແລະກິນຊີ້ນເຍືອງ, ສົ່ງ ລໍຈະບໍ່ຂ້າ ແລະກິນຊີ້ນນົກຕັ້ງລໍ ເຫຼົ່ານີ້ເປັນຕົ້ນ.

ລັກສະນະເຮືອນຂອງຊົນເຜົ່າໄຕ, ຕາມ ປະເພນີແລ້ວເຂົາເຈົ້າມັກຈະປຸກສ້າງ ແລະຢູ່ເຮືອນ ຮ້ານ, ເສົາຝັງ ຫຼືໝູນຫີນ, ປູດ້ວຍຟາກ, ແອ້ມຝາ ໄມ້ເຮ້ຍ ແລະມຸງດ້ວຍໃບຫວາຍ ຫຼືຫຍ້າຄາ. ເຮືອນ ແຕ່ລະຫຼັງຈະມີຊານເພື່ອເປັນບ່ອນໄວ້ນ້ຳ . ກ້ອງ ຕະລ່ຽງເປັນບ່ອນເກັບມ້ຽນເຄື່ອງອຸປະກອນການ ຜະລິດ, ຟືນແລະມັດສັດລ້ຽງຕ່າງໆ ພາຍໃນເຮືອນ ຂອງເຂົາເຈົ້າຈະບໍ່ມີການຂັ້ນຫ້ອງນອນ, ແຕ່ຈະໃຊ້ ຜ້າກັ້ງຂັ້ນ ອີງຕາມຈຳນວນສະມາຊິກຂອງຄອບ ຄົວ. ຍ້ອນວ່າຢູ່ແຕ່ລະເຮືອນຈະມີຮ້ານບູຊາຜີ (ເທວະດາເຮືອນ), ສະນັ້ນຢູ່ພາຍໃນເຮືອນຂອງ ຊົນເຜົ່າໄຕຈະມີການຄະລຳກ່ຽວກັບການເຂົ້າໄປ ແຕະຕ້ອງສະຖານທີ່ດັ່ງກ່າວຊຶ່ງຈະຢູ່ໃນບໍລິເວນ ຫ້ອງນອນຂອງຜູ້ເປັນພໍ່, ແມ່. ອີກຢ່າງໜຶ່ງໃນເວ ລາມີພິທີທາງປະເພນີ, ມີການຮັບປະທານອາຫານ ຕ່າງໆ ຫ້າມບໍ່ໃຫ້ຂວ້ຳປາກຈອກນ້ຳ ຫຼື ຈອກເຫຼົ້າ.

ປະເພນີການເກີດລູກຂອງຊົນເຜົ່າໄຕ ແມ່ນເກີດຢູ່ໃນເຮືອນບໍລິເວນອ້ອມແອ້ມເຕົາໄຟ ໂດຍຈະມີແມ່ຍິງ ທີ່ມີປະສົບການຄອຍໃຫ້ຄວາມຊ່ວຍເຫຼືອ ໃນກໍລະນີທີ່ເກີດຍາກ ກໍ່ຈະມີໝໍຕຳແຍ ຊ່ວຍ ຫຼືໝໍມົນເປົ່າຄາຖາໃສ່ນ້ຳໃຫ້ກິນ. ຫຼັງຈາກເກີດລູກ ກໍ່ມີການຢູ່ກຳ, ກິນນ້ຳຮ້ອນປະມານໜຶ່ງເດືອນ.


ສຳລັບປະເພນີກ່ຽວກັບການຕາຍນັ້ນຊົນເຜົ່າໄຕ ມີຄວາມເຊື່ອ ແລະມີມະໂນພາບວ່າການຕາຍເປັນການປ່ຽນຊີວິດໄປຢູ່ໂລກໃໝ່ ສະນັ້ນເຂົາເຈົ້າຈະຈັດຕັ້ງພິທີສົບຕາມຮີດຄອງຄ້າຍຄືກັບງານລ້ຽງ ເພື່ອສົ່ງວິນຍານຂອງຜູ້ຕາຍໃຫ້ໄປເຖິງໂລກໃໝ່ ແລະໃຫ້ເໝາະສົມກັບຖານະຂອງແຕ່ລະບຸກຄົນ, ຈາກນັ້ນກໍ່ຈະສົ່ງສະການດ້ວຍການຝັງສົບ.

ຍ້ອນຮີດຄອງປະເພນີ ແລະຄວາມເຊື່ອຖືຕ່າງໆທີ່ກ່າວມານັ້ນມັນໄດ້ຫຼໍ່ຫຼອມເປັນວັດທະນະທຳຂອງຊົນເຜົ່າໄຕ, ສະນັ້ນໃນປີໜຶ່ງໆ ເຂົາເຈົ້າຈະມີພິທີກຳທາງສາສະໜາ ແລະງານບຸນປະເພນີຫຼາຍເທື່ອເຊັ່ນ: ບຸນປີໃໝ່ (ບຸນກິນຈຽງ) ຊຶ່ງພິທີພັນເຖິງຈິດວິນຍານຂອງບັນພະບຸລຸດທີ່ລ່ວງລັບໄປແລ້ວ, ພິທີເຮັດບຸນຜີບ້ານ, ພິທີເສັ້ນຜີເຮືອນ, ພິທີກຳກ່ຽວກັບການຜະລິດ ແລະອື່ນໆ. ໃນພິທີກຳຕ່າງໆນັ້ນ ເຂົາເຈົ້າມັກຈະຂ້າໝູ ແລະໄກ່ເພື່ອເປັນການລ້ຽງຜີ.

ດ້ານສິລະປະວັນນະຄະດີຂອງຊົນເຜົ່າໄຕນັ້ນ, ເຂົາເຈົ້າມີນາງະນິຍາຍ, ມີນິທານພື້ນເມືອງທີ່ເກົ່າແກ່, ມີກອນຂັບ, ກອນລຳ, ມີແບບຟ້ອນພື້ນເມືອງ ຊຶ່ງຖືວ່າເປັນເອກະລັກຂອງຊົນເຜົ່າໄຕເປັນຕົ້ນແມ່ນການເຕັ້ນແຊ ແລະການເຕັ້ນຂ້າມໄມ້ປ່ອງ ໂດຍມີເຄື່ອງດົນຕີປະກອບດ້ວຍເຊັ່ນ: ກອງ, ຄ້ອງ, ແຊ, ປີ່ ແລະອື່ນໆ. ພ້ອມກັນນີ້ ເຂົາເຈົ້າຍັງມີເອກະລັກສະເພາະຂອງຕົນເອງ ໃນດ້ານການນຸ່ງຖືເອ້ຢ້ອງ ໂດຍເຮັດເອົາເອງ ຈາກສີໄມ້ລາຍມືອັນຄ່ອງແຄ້ວ ແລະປານິດຂອງແມ່ຍິງ, ຊຶ່ງເຄື່ອງນຸ່ງສ່ວນຫຼາຍຈະແມ່ນແພຝ້າຍຍ້ອມນິນ ແລ້ວມີການຫຍິບຖັກປັກແສ່ວດ້ວຍສີສັນຕ່າງໆ.

ການດຳເນີນວິຖີຊີວິດທາງດ້ານເສດຖະກິດ

ຊົນເຜົ່າໄຕ ແມ່ນປະກອບອາຊີບທາງການກະເສດ (ເຮັດນາ, ເຮັດໄຮ່ປູກເຂົ້າ).ນອກຈາກນີ້ແລ້ວຍັງນິຍົມເຮັດສວນແຄມແມ່ນ້ຳ ເພື່ອປູກພືດຜັກປະເພດຕ່າງໆຮັບໃຊ້ຊີວິດປະຈຳວັນຂອງຄອບຄົວຄື: ມັນດ້ຳ, ມັນຕົ້ນ, ໝາກຖົ່ວ, ຜັກກາດ, ກະລຳປີ, ຜັກບົ່ວ, ຜັກທຽມ, ໝາກເຜັດ ແລະອື່ນໆ. ເພື່ອໃຊ້ແຮງງານ ແລະເຮັດພິທີກຳທາງສາສະໜາ ເຂົາເຈົ້າຍັງລ້ຽງສັດເຊັ່ນ: ງົວ, ຄວາຍ, ໝູ, ໝາ ແລະສັດປີກຕ່າງໆ. ພິເສດຜູ້ຊາຍຊົນເຜົ່ານີ້ ມີຄວາມຊຳນານໃນວິຊາຫັດຖະກຳຈັກສານ ແລະແມ່ຍິງມີຄວາມຊຳນານໃນເລື່ອງຂອງການປູກມອນ, ລ້ຽງມ້ອນ, ຫຍິບຖັກປັກແສ່ວ ແລະຕຳ່ໝູກ ທໍ່ໄໝ.



Tai

Historical background:

The Tai have a long history similar to the other ethnic Lao group. The ancestors of these groups came from Bolikhamsay and Khammuan provinces. This is a large group of people that consists of numerous subgroups, such as the Tai Dam, Tai Khao, Tai Deng and Ta Meur. Today, there are over a dozen different Tai groups in Bolikhamsay province.

Name and language:

With many different Tai groups, they are often named after traditional clothing that they wore, such as Red Tai or White Tai. The Black Tai or Tai Dam are divided into the Tai Dam, Tai Keu, Tai Deag and Tai Meer.

The Tai languages are in the Austro-Thai family. This is broken down into the Tai-Kadai group and then into Southwestern and Northern groups.

Certain groups have old scripts for writing, but many of these have been forgotten.

Society, beliefs, ceremonies and myths:

Most of the Tai groups practice Buddhism, however not all of them. The Tai Dam do not follow Buddhism, but instead practice animism.

All of the Tai groups incorporate animism into their beliefs, worshipping spirits that represent the district, the village, the household, forests, water, the heavens, ancestors, and many other things. To most Tai animists, the household spirit is the most important spirits, as this spirit also represents the ancestors who have passed on. There are spirits who are both malevolent and helpful. Most villages will have older members who act as shamans and sorcerers who can communicate with the spirits or act as traditional healers.

Families are the most important social unit. Families will live together and the oldest male will be the head of the household. Some groups will practice polygamy, but that is less common today.

Tai groups such as the Tai Dam are organized in political and familial groups called *sings*. Members of these groups consider themselves descendants from a founding ancestor. There are different levels of status among the *sing*. This can be attributed to Vietnamese and Chinese influence.

Marriages were arranged in the past, but today young people are free to marry who wish to. Dowries usually consist of an amount of silver and animals plus perhaps some money. The husband may move into the household of his new wife and later they are free to move into their own household.


Funerals differ, depending if the village is animist or Buddhist influenced. If animist, the body will more likely be buried, while the body will be cremated if Buddhist.

Village and house:

There are differences among the groups in housing, but most houses are similar, sitting on stilts and in a rectangular shape. They are usually made from woven bamboo, with the floor wood planks and the roof from thatch. There may be an open or covered verandah. The inside will be divided into living and sleeping quarters, with a small hearth for cooking.

Agriculture and livelihood:

The Tai minorities are generally farmers, growing both glutinous rice and regular rice. They are also skilled at growing vegetables such as sweet potato, cassava, Chinese cabbage, onion, garlic, chili, etc. For both labor and sacrifices they breed cows, buffalos, pigs, dogs and others. They also make handicrafts such as bamboo baskets and mats. Some groups, such as the Tai Dam are well known for their weaving skills, with the women making elegant tablecloths, phaa sins, and other items for sale.



ຊົນເຜົ່າໄທເໜືອ ປະຫວັດຄວາມເປັນມາ:

ຊົນເຜົ່າໄທເໜືອ ແມ່ນຊົນເຜົ່າໜຶ່ງທີ່ນອນຢູ່ ໃນວົງຄະນະຍາດແຫ່ງຊາດລາວ. ເຂົາເຈົ້າໄດ້ຕັ້ງ ພູມລຳເນົາບ້ານດິນດອນຕອນນີ້ ຕັ້ງຫຼາຍສະຕະ ວັດມາແລ້ວ. ເຂົາເຈົ້າມີປະຫວັດຄວາມເປັນມາ ແລະເຄື່ອນຍ້າຍມາຈາກດິນແດນຕອນໃຕ້ຂອງ ປະເທດຈີນ ເຊິ່ງເຂົາເຈົ້າເຄື່ອນຍ້າຍເຂົ້າມາປະ ເທດລາວມີຫຼາຍໄລຍະ ແລະຫຼາຍເສັ້ນທາງທີ່ ແຕກຕ່າງກັນຄື:ໄດ້ເຄື່ອນຍ້າຍເຂົ້າມາລາວ ໂດຍ ຜ່ານແຂວງ ລາຍເຈົ້າ ແລະແຂວງ ເຊົນລາ ຂອງປະເທດ ຫວຽດນາມ ເຂົ້າມາຕັ້ງຫຼັກປັກຖານ ຢູ່ເຂດເມືອງໂສຍ,ເມືອງ ແອດ,ຊຽງຄໍ້,ເມືອງ ຫົວເມືອງ ແຂວງ ຫົວພັນ ແລ້ວກໍ່ໄປຕັ້ງ ພູມລຳເນົາ ຢູ່ເຂດ ບ້ານນ້ຳມ້າ, ລານຕູຍ, ແສ່ວຈາຍ ເມືອງ ຍອດອູ ແຂວງ ຜົ້ງສາລີ ແລະອີກເສັ້ນທາງໜຶ່ງໄດ້ ເຄື່ອນຍ້າຍເຂົ້າມາລາວ ແມ່ນມາຈາກແຂວງ ຢູນານ ປະເທດຈີນ ໂດຍຜ່ານແຂວງ ຊຽງຕຸງ ປະເທດ ມຽນມາ ແລ້ວກໍ່ເຂົ້າມາຕັ້ງຫຼັກປັກຖານຢູ່ ບ້ານນ້ຳແກ້ວຫຼວງ, ສີຣີເຮືອງ,ປ່າຕ້ອຍເມືອງສິງ ແຂວງ ຫຼວງນ້ຳທາ ແຕ່ມີບາງກຸ່ມກໍ່ເຄື່ອນຍ້າຍ ມາຈາກດິນແດນຕອນໃຕ້ຂອງ ປະເທດຈີນ ເຂົ້າມາຢູ່ເມືອງ ສິງ ແຂວງ ຫຼວງນ້ຳທາ ແລະເມືອງ ຍອດອູ ແຂວງ ຜົ້ງສາລີ. ນອກຈາກນີ້ຊົນ ເຜົ່າໄທ ເໜືອຍັງມີຢູ່ ສ ສ ຫວຽດນາມ ແລະ ສປຈີນ.

ພົນລະເມືອງຂອງຊົນເຜົ່າໄທເໜືອຢູ່ໃນ ສ ປ ປ ລາວ ມີ 2.354 ຄົນ ໃນນັ້ນມີ ຍິງ1.205 ຄົນ (ຕາມການໃຫ້ຂໍ້ມູນຂອງເມືອງ ແລະແຂວງດັ່ງ ກ່າວ ໃນ ເດືອນ 9 - 10 / 2001).

ຊື່ເອີ້ນ:

ຊົນເຜົ່ານີ້ເອີ້ນວ່າ: " ໄທເໜືອ "ຊົນເຜົ່າ ອື່ນເອີ້ນເຂົາເຈົ້າກໍແມ່ນໄທເໜືອ, ຊື່ທີ່ເຂົາເຈົ້າມັກ ແລະຊື່ທີ່ ໃຊ້ທາງການໃນປະຈຸບັນກໍ່ແມ່ນຊົນເຜົ່າ ໄທເໜືອ. ສຳລັບຊື່ເອີ້ນໄທເໜືອ ແມ່ນການນຳ ເອົາສອງຄຳເວົ້າມາລວມເຂົ້າກັນຄື: ໄທ ໝາຍເຖິງ ຄົນ ແລະເໜືອໝາຍເຖິງທິດເໜືອ ໝາຍຄວາມ ວ່າ:ໃນສະໄໝເຂົາເຈົ້າຕັ້ງຫຼັກປັກຖານຢູ່ປະເທດ ຈີນ ໃນໄລຍະປະຫວັດສາດທີ່ຍາວນານນັ້ນເຂົາ ເຈົ້າຕັ້ງພູມລຳເນົາຢູ່ເໜືອຊົນເຜົ່າລື້ ເຊິ່ງຖ້າຈະໃຫ້ ຄວາມໝາຍ ທີ່ຖືກຕ້ອງແມ່ນຄົນຢູ່ທິດເໜືອນັ້ນເອງ.

ພາສາປາກເວົ້າ:

ພາສາປາກເວົ້າຂອງຊົນເຜົ່າໄທເໜືອ ແມ່ນຈັດເຂົ້າໃນໝວດພາສາລາວ-ໄຕ. ສຳລັບ ຊົນເຜົ່າໄທເໜືອ ທີ່ອາໃສຢູ່ເມືອງ ສິງ ແຂວງ ຫຼວງນ້ຳທາແມ່ນໄດ້ມີໂຕໜັງສືຂຽນ ເຊິ່ງຄ້າຍ ຄືໂຕໜັງສືທຳ. ສຽງສຳນຽງຂອງພາສາຊົນເຜົ່າໄທ ເໜືອ ຄ້າຍຄື ກັນກັບສຳນຽງ ຂອງພາສາຊົນເຜົ່າ ລື້, ຍວນ ແລະຢັ້ງ.

ຮີດຄອງ,ປະເພນີ,ຄວາມເຊື່ອຖື ແລະວັດທະນະທຳ - ສັງຄົມ :

ຍ້ອນການດຳລົງຊີວິດ ແລະການຍົກ ຍ້າຍ ຂອງຊົນເຜົ່າໄທເໜືອ ມີຫຼາຍໄລຍະ ແລະຫຼາຍ ເສັ້ນທາງທີ່ແຕກຕ່າງກັນ, ສະນັ້ນຈຶ່ງໄດ້ເຮັດໃຫ້ ຮີດ ຄອງປະເພນີ, ຄວາມເຊື່ອຖື ແລະວັດທະນະທຳ ຂອງຊົນເຜົ່າໄທເໜືອ ໄດ້ມີຄວາມແຕກຕ່າງກັນ ຕາມແຕ່ລະທ້ອງຖິ່ນຄື:ໄທເໜືອຢູ່ເມືອງ ສິງ ແຂວງ ຫຼວງນ້ຳທາ ເຂົາເຈົ້າໄດ້ມີຄວາມເຊື່ອຖື ພຸດທະສາ ສະໜາ ແລະເຊື່ອຖືຜີພ້ອມໆກັນ. ສຳລັບ ໄທເໜືອ ຢູ່ເມືອງ ຍອດອູ ແຂວງ ຜົ້ງສາລີ ເຂົາເຈົ້າເຊື່ອ ຖືຜີ ໝາຍຄວາມວ່າ: ໄດ້ມີ ການເຄົາລົບບູຊາຜີ ເຊັ່ນ: ຜີບັນພະບູລຸດ, ຜີຟ້າ, ຜີແຖນ, ຜີ ປ່າແຫ່ວ ທ້ວຍ, ຮ່ອງ, ຄອງ, ບຶ່ງ. ການເຊື່ອຖືຜີບັນພະບູລຸດ ສະແດງໃຫ້ ເຫັນວ່າ ເມື່ອຄົບຮອບປີໜຶ່ງກໍ່ໄປຖາງ ຫຍ້າບ່ອນຝັ່ງສົບ, ຂ້າໄກ່ຢູ່ເຮືອນຕົ້ມສຸກແລ້ວໄປ ຖວາຍໃຫ້ ຜີຢູ່ປ່າຊ້າ, ຖ້າຢູ່ ເຮືອນມີຄົນຕາຍເທົ່າ

ໃດຄົນກໍ່ຕ້ອງຂ້າໄກ່ເທົ່ານັ້ນໂຕຕໍ່ປີໜຶ່ງໃນມື້ ດຽວ.

ຮີດຄອງປະເພນີ ແລະບຸນທີ່ສຳຄັນຂອງ ຊົນເຜົ່າໄທເໜືອໃນຮອບປີໜຶ່ງໆແມ່ນບຸນກິນຈຽງ ຄືບຸນກິນຈຽງໃຫຍ່ ແລະບຸນກິນຈຽງນ້ອຍເຊິ່ງຈັດ ຂຶ້ນໃນລະຫວ່າງເດືອນ ມັງກອນ ຫາເດືອນ ກຸມພາ ຂອງແຕ່ລະປີ.

ດ້ານສິລະປະວັນນະຄະດີຂອງຊົນເຜົ່າ ໄທເໜືອ ເຂົາເຈົ້າມີກອນຂັບ, ກອນລຳ, ມີຄຳພະ ທຍາ, ຄຳຟ້ງເພີຍໃນເດືອນເປັນຕົ້ນ:ແມ່ນຂັບໄທ ເໜືອປະສານກັບສຽງດົນຕີພື້ນເມືອງຊະນິດຕ່າງໆ ທີ່ສ່ອງແສງເຖິງຄວາມຮັກລະຫວ່າງບ່າວສາວ, ສ່ອງ ແສງເຖິງທິວທັດທຳມະຊາດ, ການພົວພັນລະ ຫວ່າງຄົນກັບທຳມະຊາດ ແລະລະຫວ່າງຄົນກັບ ຄົນ.ແຕ່ບໍ່ມີນິທານພື້ນເມືອງ. ເຂົາເຈົ້າມີໝໍດູ ແລະໝໍ ຢາພື້ນເມືອງເປັນທີ່ເພິ່ງທາງໃຈຂອງຜູ້ຄົນທັ່ງໜ້າຍ.

ຊົນເຜົ່າໄທເໜືອມັກຕັ້ງເຮືອນຊານບ້ານ ຊ່ອງຢູ່ເຂດທີ່ມີຫ້ວຍນ້ຳໄຫຼຕະຫຼອດປີທີ່ມີຄວາມ ເໝາະສົມໃນການເຮັດເໝືອງ ປ້ານຝາຍ ເພື່ອ ເອົານ້ຳເຂົ້ານາ. ເຂົາເຈົ້າໄດ້ມີພິທີກຳໃນການຂອກ ທີ່ດິນຕັ້ງບ້ານເຮືອນເປັນຕົ້ນ ເມື່ອຂອກເຫັນທີ່ ດິນມີຄວາມເໝາະສົມຈະຕັ້ງບ້ານເຮືອນແລ້ວໄດ້ ສ່ຽງໂດຍການຂຸດຂຸມເອົາເຂົ້າເປືອກ3 ເມັດຈຸໃສ່ ຫົວກັນລົງຂຸມເອົາໃບໄມ້ອັດປາກຂຸມ 30 ນາທີຈຶ່ງ ຄ່ອຍເປີດເບິ່ງ. ສ່ວນໄທເໜືອຢູ່ເມືອງສິງແມ່ນ ເຮັດເຂົ້າຕ່ອມຄື: ຂຸດຂຸມເປັນວົງມົນເລິກສອກໜຶ່ງ ຕອກຫຼັກເຄິ່ງກາງເອົາເຂົ້າເປືອກຫວ່ານອ້ອມຫຼັກ ເສົາ,ເອົາໃບໄມ້ປົກຄືນໜຶ່ງ.ຖ້າຫາກເມັດເຂົ້າ ເຄື່ອນຍ້າຍຕັ້ງບ້ານບໍ່ໄດ້.

ສ່ວນການສ່ຽງທີ່ດິນບ່ອນຈະປຸກສ້າງ ເຮືອນຄືກັນກັບການສ່ຽງບ່ອນຕັ້ງບ້ານ. ແຕ່ສ່ວນ ຊົນເຜົ່າໄທເໜືອຢູ່ເມືອງ ສິງ ແຂວງ ຫຼວງນ້ຳທາ ກ່ອນຈະປຸເຮືອນແມ່ນເອົາພະມາສູດ.ແຕ່ວ່າຊົນ ເຜົ່າໄທເໜືອຢູ່ເມືອງ ຍອດອູ ແຂວງ ຜົ້ງສາລີ ເຂົາ ເຈົ້າກໍ່ມີພິທີກຳຕ່າງຫາກເປັນຕົ້ນກ່ອນຈະຕັດໄມ້ ແລະປຸກເຮືອນນັ້ນແມ່ນໄດ້ຊອກມື້ສັນວັນດີ ໂດຍ ການເບິ່ງຕຳລາປະຕິທິນຂອງຊົນເຜົ່າລື້.

ຄຸນລັກສະນະເຮືອນຂອງຊົນເຜົ່າໄທເໜືອ ແມ່ນແຕກຕ່າງກັນ ແລະຄ້າຍຄືກັນຕາມແຕ່ລະ ທ້ອງຖິ່ນເຊັ່ນ:ໄທເໜືອຢູ່ເມືອງ ຍອດອູ ແມ່ນປຸກ ສ້າງ ເຮືອນແບບຕິດດິນ, ເສົາເຮັດດ້ວຍໄມ້ແກ່ນ 4 ຫຼ່ຽມ, ແອ້ມດ້ວຍການຕຳດິນໃສ່,ມຸງ ດ້ວຍຫຍ້າ ຄາ ແລະໃບຄໍ້ມີລວງຍາວ 8 -10 ແມັດ,ກວ້າງ 4-6 ແມັດປະກອບມີ 3-5 ຫ້ອງ(ນັບຫວ່າງເອົາ) ແລະແບ່ງອອກເປັນ 2-3 ຫ້ອງໃຫ່ຍຂະໜານກັນ ຕາມລວງກວ້າງ. ສ່ວນເຮືອນໄທເໜືອຢູ່ເມືອງ ສິງ ແມ່ນເປັນເຮືອນຮ້ານປູ ແລະແອ້ມແປ້ນ, ມຸງດ້ວຍ ຫ້ຍາ,ລວງຍາວ 6-20 ແມັດ,ກວ້າງ 6 ແມັດມີ 3-10 ຫ້ອງ(ນັບຫ່ວາງເສົາ) ການຈັດແບ່ງຫ້ອງ ເຮືອນແມ່ນໄດ້ອີງຕາມຈຳນວນສະມາຊິກຂອງ ຄອບຄົວ. ສຳລັບຂໍ້ຫ້າມ ແລະການຄະລຳພາຍ ໃນຫ້ອງເຮືອນກໍ່ຄ້າຍຄືກັນກັບຊົນເຜົ່າອື່ນໆເຊັ່ນ: ການຫ້າມເຂົ້າຫ້ອງນອນ ໂດຍສະເພາະແມ່ນ ຫ້ອງນອນຂອງຜູ້ເປັນພໍ່,ແມ່ ເຊິ່ງຖືວ່າເປັນຫ້ອງ ຂອງຜີເຮືອນ. ແຕ່ສ່ວນຄົນທາງນອກແມ່ນເຂົ້າ ຫ້ອງນອນບໍ່ໄດ້ກໍລະນີຫາກລ່ວງເຂົ້າກໍຖືກປັບໄໝ 2 ກໍລະນີຄື:ເງິນ5ໝັ້ນ, ພາເຂົ້າ1ພາເພື່ອແປງ ຜີເຮືອນແຕ່ກໍລະນີເຄື່ອງເສຍກໍ່ຕ້ອງໃຊ້ຕາມມູນ ຄ່າເຄື່ອງເສຍບວກກັບເຄື່ອງແປງຜີເຮືອນ, ແຕ່ ສ່ວນໄທເໜືອຢູ່ເມືອງ ຍອດອູ ກໍລະນີເຄື່ອງບໍ່ ເສຍປັບໄໝດ້ວຍເຫຼົ້າ1 ລິດ,ໄກ່ຜູ້ ແລະໄກ່ແມ່ ແມ່ລະ 1 ໂຕ, ເງິນ 2 ໝັ້ນ.

ຊົນເຜົ່າໄທເໜືອ ກໍ່ ມີວັດທະນະທຳການ ນຸ່ງຖື,ເອ້ຢ້ອງ,ທີ່ມີຄຸນລັກສະນະສະເພາະຂອງຊົນ ເຜົ່າຕົນເອງຕາມແຕ່ລະທ້ອງຖິ່ນຄື: ຜູ້ຊາຍນຸ່ງໂສ້ງ ສີດຳຫົວໃຫ່ຍ2 ໜ້າ, ຂາໃຫ່ຍ,ຫົ່ມເສື້ອແຂນຍາວ ແຂນສັ້ນສີດຳ,ຜ້າດຳ ທີ່ຍ້ອມດ້ວຍນ້ຳນິນຄຸນ

ຫົວຍາວ 3 ວາ ຈົ່ງຜົມຍາວ,ເກົ້າຜົມ ຫງ່ຽງໄປທາງ ຫຼັງ, ມີປອກແຂນເຮັດດ້ວຍເງິນ, ສັກຂາ, ແຂນ, ແອ່ວ, ເອິກ, ຫຼັງລາຍ ໂດຍຈ້າງຄົນອື່ນສັກໃຫ້ ດ້ວຍ ລາຄາ 4 ໝັ່ນ ຂຶ້ນໄປ .ສຳລັບແມ່ຍິງ ແມ່ນນຸ່ງສິ້ນ ສີດຳມີແພເຈ່ປົກທາງໜ້າ, ແມ່ຍິງໄທເໜືອຢູ່ ເມືອງ ຍອດອູ ແມ່ນນຸ່ງໂສ້ງສີດຳ,ສີເດືອນຫົວ ໃຫ່ຍ , ຂາລົບ, ຫົ່ມເສື້ອແຂນຍາວ ແລະຍາວລົງ ຮອດຫົວເຂົ່າ, ຄໍເສື້ອໄດ້ແສ່ວຫຼາຍສີສະຫຼັບກັນ, ມີຜ້າຄຸມຫົວ, ຜ້າມັດແອວ, ບ່ອງຫູໃສ່ຕ້າງ, ມີ ປອກ ແຂນເຮັດດ້ວຍເງິນ, ມີສາຍ ແລະໜາກປັດເຮັດ ດ້ວຍແກ້ວ,ຈົ່ງຜົມຍາວເກົ້າຜົມ.

ຊົນເຜົ່າໄທເໜືອມີຄວາມນິຍົມກິນເຂົ້າ ໜຽວຮັບປະທານອາຫານທີ່ໄດ້ດອງເຊັ່ນ: ຊີ້ນດອງ ຜັກດອງ, ໝາກຖົ່ວເນົ່າ, ໝາກໄມ້ດອງ, ແກງ, ລາບດິບ, ລາບເລືອດ, ຫຼາມ, ປີ້ງ ,ຈີ່ ທີ່ມີ ລົດຊາດ ເຜັດ, ເຄັມແລະມີຄວາມນິຍົມອາຫານທີ່ ໄດ້ ຊຸ່ນຫຼາຍ ເຫື່ອ,ມັກດື່ມເຫຼົ້າເດັດ, ດື່ມນ້ຳຮ້ອນ, ນ້ຳ ດິບ, ສູບຢາປຸກໆດ້ວຍກອກ ແລະກິນຝົ່ນ, ໃນເວ ລາແຂກມາເຮືອນໃຫ້ກິນເຂົ້າໄລຍະໜຶ່ງແລ້ວຈົ່ງ ຄ່ອຍດື່ມເຫຼົ້າສະຫຼັບກັບໄປ, ສ່ວນໄທເໜືອຢູ່ ເມືອງສິງ ແມ່ນໃຫ້ແຂກດື່ມເຫຼົ້າ 4 ຈອກ ລຽນຕິດ ແລ້ວຈົ່ງຄ່ອຍກິນເຂົ້າ ແລະດື່ມເຫຼົ້າສະຫຼັບກັນໄປ.

ໂຄງສ້າງທາງສັງຄົມຂອງຊົນເຜົ່າໄທ ເໜືອຂອງແຕ່ລະທ້ອງຖິ່ນ ປະກອບດ້ວຍຫຼາຍຕະ ກຸນ ຫຼືຊົນຄື:ໄທເໜືອຢູ່ເມືອງ ຍອດອູ ມີ 9 ຊົນ: ຊົນເທີ້ນ, ຊົນແຕວ, ຊົນເປີ້, ຊົນຢ້າງ, ຊົນຈູ້, ຊົນ ລີ, ຊົນຕ່າວ, ຊົນຕ້າງ, ຊົນວ້າງ ສຳລັບຢູ່ເມືອງ ສິງ ລວມມີ 6 ຊົນຄື:ຊົນທາວ, ຊົນວ້າງ, ຊົນໂລຕ້ຳ, ຊົນຈ່ຽວ, ຊົນດາຍ ແລະຊົນລີ ໃນແຕ່ລະຊົນຈະມີຂໍ້ ຫ້າມ ແລະການຄະລຳທີ່ແຕກຕ່າງກັນອອກໄປ ຕາມແຕ່ລະທ້ອງຖິ່ນເປັນຕົ້ນແມ່ນຕາມການແຕ່ງ ດອງຂອງຄູ່ບ່າວສາວໃນຊົນດຽວກັນ, ແຕ່ລະຊົນ ລ້ວນ ແຕ່ມີຫົວໜ້າ ເຊິ່ງແມ່ນຜູ້ທີ່ເປັນສະມາຊິກ ໃນຊົນນັ້ນມີຄວາມເຄົາລົບນັບຖື. ຜູ້ທີ່ເປັນຫົວໜ້າ ຊົນຕ້ອງມີຄວາມຮັບຜິດຊອບຕໍ່ສະມາຊິກຂອງຕົນ ໃນການໄກ່ເກ່ຍບັນຫາຕ່າງໆ ຊົນເຜົ່າໄທເໜືອ ສືບເຊື້ອສາຍຕະກຸນທາງພໍ່ ໝາຍຄວາມວ່າ: ເມື່ອ ແຕ່ງດອງແລ້ວແມ່ຍິງຕ້ອງເມືອຢູ່ເຮືອນພໍ່ແມ່ ຂອງຝ່າຍຜູ້ຊາຍ.

ຊົນເຜົ່າໄທເໜືອມີປະເພນີການແຕ່ງ ດອງຕາມຄຸນລັກສະນະຊົນເຜົ່າຂອງຕົນເອງເປັນ ຕົ້ນແມ່ນໄດ້ປະຕິບັດຕາມຂັ້ນຕອນຕ່າງໆ ເຊັ່ນ: ບ່າວ ສາວລົມກັນ, ພໍ່ແມ່ຝ່າຍເຈົ້າບ່າວແຕ່ງຄົນໄປຖາມ ພໍ່ແມ່ຂອງເຈົ້າສາວ,ພໍ່ແມ່ຝ່າຍຍິງເຫັນດີ, ພໍ່ແມ່ຝ່າຍ ຊາຍກະກຽມວັດຖຸປັດໄຈຄື: ໄກ່ 2 ໂຕ, ໝູ 2 ໂຕ, ນ້ຳໜັກ 5 ກິໂລ1 ໂຕ, ເຂົ້າສານ 6 ກິ ໂລ, ຝົ່ນ 5 ຮອງແລ້ວດຳເນີນການສູ່ຂໍ. ພາຍຫຼັງສູ່ຂໍແລ້ວໄວ ສຸດ1 ປີ ແລະຊ້າສຸດ 3 ປີ ຈົ່ງຄ່ອຍແຕ່ງດອງ.

ການແຕ່ງດອງປະຕິບັດ 2 ກໍລະນີຄື: ກໍລະນີເຂົ້າເຂີຍເລີຍ,ເຂີຍໄປນອນຢູ່ ເຮືອນເມຍ ໝາຍຄວາມວ່າ: ນອນຢູ່ຕຽງຂ້າງເຕົາໄຟ ຈະ ບໍ່ໄດ້ນອນນຳເມຍ. ຖ້າຫາກມີລູກໄປໄລຍະ ນັ້ນຕ້ອງປົວແປງຮີດຄອງດ້ວຍໄກ່1 ໂຕ, ເງິນ 4.000- 5.000 ກີບ, ເຂົ້າສານ12 ກິໂລ ມອບ ໃຫ້ເຈົ້າຜີບ້ານ ແລະກໍລະນີທີ 2 ແມ່ນບໍ່ເຂົ້າເຂີຍ ນອນຢູ່ ເຮືອນເມຍ 3-4 ຄືນ ແລ້ວກໍກັບເມືອນອນ ຢູ່ເຮືອນຂອງຕົນ ເອງ.

ການແຕ່ງດອງກໍລະນີທີ 1 ເມື່ອຄົບຮອບ 1 ຫຼື 3 ປີ ຄູ່ບ່າວສາວ ກໍດຳເນີນການແຕ່ງດອງ ເຊິ່ງຕ້ອງປະຕິບັດຕາມຮີດຄອງຄື: ຄ່າດອງ4 ຮອງ, ເຫຼົ້າ12 ລິດ, ແຫວນ, ເງິນໝັ້ນ ໜັກເທົ່າລະ 4 ຮອງ ຊີ້ນໝູ 37 ກິໂລ,ເຂົ້າຈີ່ 32 ຄູ່, ເປັດ,ໄກ່ຢ່າງລະ ໂຕ, ເຂົ້າສານ12 ກິໂລ, ຝົ່ນ1 ຮອງມອບໃຫ້ພໍ່ແມ່ຝ່າຍ ຍິງ. ຢູ່ເຮືອນຝ່າຍເຈົ້າບ່າວກິນໝູ 2-3 ໂຕ, ປາ, ໄກ່ເຫຼົ້າ ແລະອາຫານແຕ່ລະພາເຂົ້າ 5-10 ເຍື່ອງ, ກິນ 3 ວັນ,3 ຄືນແຕ່ລະວັນກິນ 2 ຄາບ, ດື່ມເຫຼົ້າ ຕະຫຼອດ 3 ວັນ,3 ຄືນ. ຮອດອາທິດໜຶ່ງເຈົ້າບ່າວ

ກັບເມືອເຮືອນຕົນເອງ, ແຕ່ງຄົນໃຊ້ 2 ຄົນເອົາເຄື່ອງໄປມອບໃຫ້ຝ່າຍຍິງ. ຜູ້ຊາຍ 2 ຄົນທີ່ເປັນເຈົ້າໂຄດຜູ້ໜຶ່ງຈູງມ້າຈະໄປຮັບໄພ້ໃໝ່ ແລະຜູ້ໜຶ່ງຈູງມ້າເຂີຍໃໝ່ຂີ່ແລ້ວໃຫ້ 2 ຄົນຍ່າງກ່ອນກັບຄົນໃຊ້ 2 ຄົນແລະຄົນເປົ່າແກຍ່າງຕາມຫຼັງ.

ຮອດເຮືອນເຈົ້າສາວຜູ້ເປົ່າແກ ແລະຜູ້ຈະຮັບໄພ້ໃໝ່ໄດ້ຮັບການຕ້ອນຮັບດ້ວຍຈອກເຫຼົ້າຜູ້ລະ 4 ຈອກ, ຝ່າຍເຈົ້າບ່າວມອບເຄື່ອງ ຫຼືຄ່າດອງສິນສອດໃຫ້ຝ່າຍເຈົ້າສາວກວດກາຈຳນວນເຄື່ອງ ແລ້ວຮັບປະທານອາຫານ ແລະພໍ່ແມ່ຂອງເຈົ້າສາວໄດ້ມອບເຄື່ອງໃຫ້ລູກສາວ, ມອບໃຫ້ຄົນໃຊ້ 2 ຄົນ, ມອບໃຫ້ຜູ້ຮັບໄພ້ແລ້ວຜູ້ ຮັບໄພ້ຂໍອະນຸຍາດນຳພໍ່ແມ່ຂອງເຈົ້າສາວ. ພໍ່ແມ່ ເຈົ້າສາວແຕ່ງລູກຊາຍກົກ ຫຼືພີ່ນ້ອງເຈ່ຍລູກສາວ(ເຈົ້າສາວ) ມອບໃຫ້ຜູ້ຊາຍຈູງມ້າ, ຊາຍຜູ້ທີສອງຮັບເອົາແລ້ວ ອຸ້ມຂຶ້ນຫຼັງມ້າແຮ່ເມືອເຮືອນເຈົ້າບ່າວ. ສ່ວນການແຕ່ງດອງລັກສະນະທີ 2 ນັ້ນກໍປະຕິບັດຄືລັກສະນະທີ 1,ເງິນຄ່າດອງ 4-6 ຮອງ ແລະແຫວນ4 ຮອງ ຊົນເຜົ່າໄທເໜືອກໍປະຕິບັດ ຕາມລະບອບ ຜົວໜຶ່ງເມຍດຽວ ແລະບໍ່ເຄີຍຢ່າຮ້າງກັນຈັກເທື່ອ.

ຊົນເຜົ່າໄທເໜືອກໍມີປະເພນີໃນການສົ່ງສະການເປັນຕົ້ນ ເມື່ອມີຄົນເຈັບເປັນໃນຄົວເຮືອນໜຶ່ງໆ ຂັ້ນທຳອິດກິນຢາພື້ນເມືອງ, ເຊີນໝໍດູມາເຮືອນເພື່ອພິສູດອາການເຈັບ. ຖ້າໝໍດູວ່າແນວໃດກໍຕ້ອງປົວແປງຜີນັ້ນຄື:ເອົາເປັດ ແລະໄກ່ ຖວາຍຜີຊື່ວໄລຍະໜຶ່ງແລະ ຄົນເຮົາກິນ. ຖ້າຕາຍ ປະຕິບັດ2ກໍລະນີຄືອາຍຸ 20 ປີລົງມາ ແລະຄົນຕາຍທຸງເອົາໄປຝັງໃນມື້ນັ້ນເລີຍ, ຖ້າຜູ້ເຖົ້າຕາຍມີລູກຊາຍຫຼາຍຄົນດຳເນີນການຄົບງັນ 12 ວັນ,12 ຄືນໃສ່ໂລງດອຍໄວ້ກາງເຮືອນ. ການສົ່ງສະການແມ່ນໄດ້ປະຕິບັດ3 ກໍລະນີ.

- ກໍລະນີປະໄວ້:ເຮັດຕູບແລ້ວຫາມໂລງໄປໄວ້ໃນຕູບຮອດເດືອນ 4 ຈຶ່ງຄ່ອຍໄປຝັງ.

- ກໍລະນີຈູດ: ຫາມຮອດປ່າຊ້າແລ້ວຈູດ ແລະເຮັດຕູບໃສ່ບ່ອນຈູດ.

- ກໍລະນີເດັກນ້ອຍອາຍຸ 2 ປີລົງມາ ແລະ ຄົນຕາຍທຸງກໍໄປຖິ້ມມື້ນັ້ນເລີຍ.

ຊົນເຜົ່າໄທເໜືອ: ກໍມີປະເພນີການເກີດລູກເປັນຕົ້ນແມ່ນເກີດລູກຢູ່ຕົນບ່ອນນອນໄລຍະຢູ່ກຳບໍ່ໃຫ້ກິນອາຫານເຜັດ, ສົ້ມ ແລະເຄັມ, ຢູ່ກຳເດືອນໜຶ່ງ. ການໃສ່ຊື່ລູກເອົາຄຳທີ່ວ່າ:xຳ ອອກໜ້າ. ສ່ວນໄທເໜືອຢູ່ເມືອ ງສິງເອົາຄຳທີ່ວ່າ ອ້າຍອອກໜ້າ,ຖ້າແມ່ຍິງ ແມ່ນອີອອກໜ້າ.

ການດຳເນີນຊີວິດທາງເສດຖະກິດຂອງຊົນເຜົ່າໄທເໜືອແມ່ນປະກອບອາຊີບທາງດ້ານການກະເສດ ເປັນຕົ້ນ ການເຮັດນາປູກເຂົ້າໜຽວ, ເຮັດສວນ, ລ້ຽງສັດນາໆຊະນິດ, ດຳເນີນຫັດຖະກຳຈັກສານ, ຕ່ຳຫູ ກທໍ່ໄໝ, ສ່ວນໄທເໜືອຢູ່ ເມືອງສິງ. ນອກຈາກທີ່ກ່າວມານັ້ນແລ້ວ ຍັງມີຄວາມ ສຳນານໃນການເຮັດນ້ຳສະອ໊ວ,ເຂົ້າປຸ້ນ, ໝາກຖົ່ວ ເນົ່າເປັນສິນຄ້າ.

ThayNeua

Historical background:

The ThayNeua have lived in Laos for many centuries. They moved from the southern part of China and entered into Laos.

First they had lived on Soye, Adth and Xieng Kho district in Huaphan province. Then they moved to settle in the Ma River region of Phongsali province. Today, they also live in Vietnam and China.

The population of Thay Neua in Lao P.D.R numbers 2,354 people, of which 1,205 are female according to district and provincial records.

Name and language:

There official name in "Thay Neua". "Thay" means "people" and "neua" means north. Their langue is an Austro-Thay language that is in the Tai-Kadai group.

Society, beliefs, ceremonies and myths:

The Thay Neua who live in Luangnamtha province are Buddhist. However, the Thay Neua who live in Phongsali province still practice animism, believing in spirits of the sky, the household, river, pond, ancestors, and so forth. The spirit of the household is believed to be the spirit of the first person who died in the house after moving in. Every village will have a spirit house that is located in a nearby forest. Also, each village will have a shaman whose role is to deal with the spirits and other religious issues. Once a year in June, each household will sacrifice a chicken and offer rice whiskey to the spirits.

The most important festival for the Thay Neua is the New Years celebration that is on a lunar date in January or February of each year.

The Thay Neua have different lineages. Each lineage will have different prohibitions and taboos. For example marriage is forbidden within the same lineage. Each lineage has a chief who plays the significant role in managing public affairs and all members must respect him.

In regards to marriage, when a young man has chosen a young woman to be his bride, then he will offer a dowry to her parents consisting of chickens, pigs, rice and some opium. A wedding ceremony will be held, with a large feast prepared by the bride's family. This will consist of many kinds of dishes and alcohol. The festivities will go one for about three days. The groom will stay at the bride's house for one week, and then he will return to his own household. Later he and the bride will be lead on horses to live in his household.

Mothers will give birth in the bedroom. After birth, she will avoid foods that are hot, sour, or salty for at least thirty days. Later there will be a naming ceremony for the infant.

When someone is ill, they will be treated by traditional medicine, such as plants from the jungle.

A fortuneteller or shaman may be involved, to see if evil spirits are involved. If they are thought to be involved, then a chicken will be sacrificed.

If someone dies, then the body is placed in a coffin that will sit in the house for twelve days and nights. Later the coffin will be burned, and the bones are gathered and buried in the ground, where a small tomb will be built. If the deceased is a child or someone who was killed in an accident, then the body is buried.

Village and house:

The Tai Neua like to settle along rivers and streams which will assist them in irrigating their crops. Before they build their houses, they will place rice seeds in a hole and wait for them to germinate. By examining these seeds later, they can tell if the spirits are favorable for allowing them to build in that location. Some Thai Neua will also bring a monk to pray at the spot for future good luck.

The Thai Neua will adopt different housing styles depending on where they live. Those who live in Muang Sing have adopted the Lue style of house: building houses on stilts. Others have adopted the more Lao style of houses, with houses of wood and iron roofs. There are certain taboos for the houses. For example it is forbidden for guests or visitors to enter the bedroom of the parents.

Costume:

The women rarely wear traditional clothing anymore. The traditional costume for women consisted of a black sarong with a broad red band. A top of the same color with silver clasps was worn. This top would leave the back bare. Two long red shawls were worn over this. To complete the costume a turban was worn over the hair. Silver earrings, necklaces, bracelets, were also common.

The men's traditional clothing consisted of baggy blue trousers and a loose red shirt.

Agriculture and livelihood:

The Thai Neua grow rice using both wet cultivation and slash-and-burn. Corn, cassava, cabbage, beans, potatoes and many other typical vegetables are also cultivated. They also grow tobacco and like to make rice whiskey.

For livestock they keep buffalo, poultry, horses, and dogs. They are also known to raise turkeys, which are not common in Laos. Hunting with primitive weapons such as crossbows and slingshots is also common. Fishing in the nearby rivers and streams is an additional source of food.

The women are busy weavers of cotton and silk. The make phaa sins (the traditional Lao women's skirt), and earn extra income by selling them. The men are skilled at weaving mats, fish traps and baskets from bamboo. These items are also sold.

ຊົນເຜົ່າ ຜູ້ໄທ
ປະຫວັດຄວາມເປັນມາ:

ຊົນເຜົ່າຜູ້ໄທ,ໄຕ. ໄທ້ ຫຼື ໄທ ມີປະຫວັດສາດ ແລະຕົ້ນກຳເນີດຄ້າຍຄຽງກັນກັບຊົນເຜົ່າອື່ນໆ ໃນຕະກຸນໝວດພາສາລາວ-ໄຕ ພວກເຂົາອົບພະຍົບລົງມາຈາກທີ່ງນານ້ອຍອ້ອຍໜູ ຜືນແຜ່ນດິນຕອນໃຕ້ຂອງຈີນໄປຢູ່ຫຼາຍແຫ່ງຫົນໃນທ້າຍສະຕະວັດ ທີ XVII - XVIII ເປັນຕົ້ນມາ ແມ່ນລຽບສາຍແມ່ນ້ຳຂອງ, ແມ່ນ້ຳກົງ ຫຼືສາລະວິນ ແລະລຽບຕາມແຄມສາຍແມ່ນ້ຳແດງ, ຕະກຸນມາຕາມ ສາຍແມ່ນ້ຳແດງ ກໍ່ໄດ້ແຍກ ກັນອີກເຊັ່ນ: ພວກ ເຂົາໄດ້ແຍກໄປ ຕາມສາຍແມ່ນ້ຳດຳ ແລະ ແມ່ນ້ຳເມົາແລ້ວກໍ່ມີຊື່ເອີ້ນວ່າ:ໄທດຳ ແລະໄທ ເມົາ, ໄທ ດັ່ງກ່າວໄດ້ໄປຕັ້ງຖິ່ນຖານຢູ່ຫຼາຍບ່ອນ ສະເພາະຢູ່ລາວເຮົາແມ່ນຕາມແຄມນ້ຳເຊບັ້ງ ໄຟ, ແມ່ນ້ຳຫີນບູນ, ເຂດເຊນ້ຳນ້ອຍ ຈົນໄປຮອດພູ ຊ້າງແຮ່, ທົ່ງນາຕູ່ນ ບໍລິເວນຊາຍແດນ ລະຫວ່າງ ເຂດ ແຂວງ ຄຳມ່ວນ ແລະສະຫວັນນະເຂດ.

ປະຈຸບັນນີ້ຊົນເຜົ່າຜູ້ໄທ ໄດ້ຕັ້ງຖິ່ນຖານ ພູມລຳເນົາຢູ່ຢ່າງຖາວອນ ແມ່ນຢູ່ແຂວງພາກກາງ ຄື: ແຂວງ ຄຳມ່ວນ ມີຢູ່ເມືອງໜອງບົກ, ມະຫາ ໄຊ, ຫີນບູນ ແລະບໍລະພາ, ແຂວງ ສະຫວັນນະ ເຂດມີຢູ່ເມືອງ ພີນ, ເຊໂປນ, ວິລະບູລີ ແຂວງ ສາ ລະວັນ ແລະແຂວງ ຈຳປາສັກ ດ້ານປະຊາກອນ ຂອງຊົນເຜົ່າຜູ້ໄທ ຍັງບໍ່ມີຕົວເລກຊີ້ແຈ້ງຢ່າງເດັ່ນ ຊັດເທື່ອ.

ຊື່ເອີ້ນ:

ຊົນເຜົ່າຜູ້ໄທ ມີຊື່ເອີ້ນວ່າ " ຜູ້ໄທ " ເຂົາ ເຈົ້າມັກ ເອີ້ນຕົນເອງ ແລະຊື່ທີ່ໃຊ້ທາງລັດຖະການ ກໍ່ແມ່ນ " ຜູ້ ໄທ " ເຊັ່ນດຽວກັນຊົນເຜົ່າອື່ນເອີ້ນເຂົາ ເຈົ້າກໍ່ແມ່ນ " ຜູ້ໄທ " ຄືກັນ ແລະບາງຄັ້ງຊົນເຜົ່າ ໃນຕະກຸນ ບຮູ ມັກເອີ້ນ ຊື່ແບບຢອກເຍ້ີຍໃຫ້ແກ່ ຊົນເຜົ່າຜູ້ໄທວ່າ: " ກະລາຍ " ເຊິ່ງມີລັກສະນະ ແບບໃສ່ຮ້າຍປ້າຍສີກັນ. ສຳລັບຜູ້ໄທ ແມ່ນມາ ຈາກຄຳສັບທີ່ວ່າ: " ໄທ້, ໄທ ຫຼືໄຕ " ແລະອີກຢ່າງ ໜຶ່ງມາຈາກຄຳສັບທີ່ວ່າ: " ໄທພູ " ໝາຍຄວາມ ວ່າ: ຊົນເຜົ່ານີ້ໄດ້ອົບພະຍົບໄປຕາມສາຍພູແລ້ວ ລົງຕັ້ງບ້ານ ເຮືອນຢູ່ເຂດທົ່ງພຽງ ແລະແຄມນ້ຳ, ຊື່ " ໄທພູ " ດັ່ງກ່າວ ບໍ່ເໝາະສົມກັບສະຖານທີ່ຢູ່ອາ ໄສຂອງພວກເຂົາຈຶ່ງໄດ້ ຫັນມາ ເອີ້ນຊື່ໃຫ້ຖືກຕ້ອງ ແລະແທດເໝາະຕົວຈິງ,ຈຶ່ງ ກາຍມາເປັນ"ຜູ້ໄທ" ຈົນເຖິງປະຈຸບັນນີ້.

ພາສາ:

ຊົນເຜົ່າຜູ້ໄທ ມີພາສາປາກເວົ້າ ຄືກັບຊົນ ເຜົ່າອື່ນໆ ບໍ່ມີຕົວໜັງສືຂຽນ ແລະຈັດເຂົ້າໃນ ໝວດພາສາ ລາວ - ໄຕ. ພາສາຊົນເຜົ່າດັ່ງກ່າວໄດ້ ມີພາສາຊົນເຜົ່າອື່ນແຊກຊ້ອນປະປົນຫຼາຍແລ້ວ. ຍ້ອນການອົບພະຍົບ ແລະຕັ້ງບ້ານເຮືອນຫຼາຍ ແຫ່ງ ແລະບາງຄັ້ງກໍ່ໄດ້ສັບປົນກັບຊົນເຜົ່າອື່ນໆ.

ຮີດຄອງປະເພນີຄວາມເຊື່ອຖື ແລະວັດທະນະທຳ - ສັງຄົມ :

ຕາມຄວາມເຊື່ອຖືຂອງຊົນເຜົ່າຜູ້ໄທ ມີ ຮີດຄອງປະເພນີຫຼວງຫຼາຍ ແລະອຸດົມສົມບູນ ໃນນັ້ນມີທັງພຸດທະສາສະໜາ ແລະຜີຄຽງຄູ່ກັນ ໄປຕ່າງແຕ່ພາກປະຕິບັດຕົວຈິງຄື: ສາສະໜາພຸດ ຢູ່ວັດ ແລະຜີຢູ່ເຮືອນ. ເຊິ່ງມັນສະແດງອອກແຕ່ ລະເຮືອນ ລ້ວນແລ້ວແຕ່ມີຮ້ານບູຊາຜີ, ການເສັ້ນ, ການເຢົ້າ ແລະອື່ນໆກໍ່ຍັງເປັນສິ່ງຈຳເປັນແກ່ຊີວິດ ການບູຊາ ຫຼືການລ້ຽງຜີພໍ່, ຜີແມ່, ຍິ່ງຕ້ອງໄດ້ປະ ຕິບັດເລື້ອຍໆ ຄວາມສຳນຶກເຂົາເຈົ້າຕໍ່ຜີພໍ່, ຜີແມ່ ນັ້ນແມ່ນໄດ້ມີໜ້າທີ່ປົກປັກຮັກສາລູກເຕົ້າ, ຖານ ເຫັນເປັນຜີ ທີ່ມີອຳນາດໃນເຮືອນ, ຜີມົນ ຫຼື ຜີເປົ້າ ມີລັກສະນະທີ່ມີຄວາມສາມາດໃນການສື່ສານ ກັບ ຜີໄຕອື່ນໆ, ຜີກະໄທ້. ຜີທີ່ມີອຳນາດປົກ ປັກຮັກສາ ບ້ານເມືອງໃຫ້ຢູ ເຢັນເປັນສຸກກໍ່ແມ່ນຫໍບ້ານ (ຜີບ້ານ)ແຕ່ລະປີຊາວບ້ານກໍ່ຈະພາກັນຈັດພິທີ ກຳລ້ຽງຢ່າງເປັນປະຈຳ. ຄຽງຄູ່ກັບຜີແລ້ວຍັງມີພຸດ ທະສາສະໜາ ຊຶ່ງເປັນສູນວັດທະນະທຳ ແລະຂະ ນົບທຳນຽມທີ່ດີງາມມາແຕ່ບູຮານນະການຂອງ

ຊົນເຜົ່າຜູ້ໄທ ແລະຊົນເຜົ່າລາວ. ໂດຍສະເພາະ ແລ້ວພຸດມີຄວາມຜູກພັນກັບຜີ ແລະພາມທີ່ແຍກ ຈາກກັນບໍ່ໄດ້ທັງ 3 ຢ່າງນີ້ມັນມີການພົວພັນ ເຊິ່ງກັນ ແລະກັນ.

ລະບົບຄອບຄົວ ການສືບເລືອດເນື້ອ ເຊື້ອສາຍວົງຕະກຸນຂອງ ຊົນເຜົ່າຜູ້ໄທ ບາງເຂດ ໃນເມື່ອກ່ອນບ່າວສາວຈະແຕ່ງດອງຕ້ອງໄດ້ປຸກ ເຮືອນນ້ອຍ1 ຫຼັງໄວ້ຂ້າງເຮືອນພໍ່ແມ່ເມຍ ຈາກ ນັ້ນຊົນເຜົ່າຜູ້ໄທ ມີສິດເສລີພາບໃນການຊອກຫາ ເນື້ອຄູ່ ໂດຍບໍ່ມີການບັງຄັບກັນ, ບ່າວສາວມັກຮັກ ກັນ ໂດຍຜ່ານການພົວພັນຢ່າງໃກ້ຊິດຕິດແທດ ລະຫວ່າງບ່າວ, ສາວແລ້ວຈຶ່ງສະເໜີພໍ່, ແມ່ທັງ ສອງຝ່າຍ ພວກເຂົາຈະຊອກສະແຫວງຫາເອງ, ຈາກນັ້ນເຖົ້າແກ່ສອງກໍ່ສອງຝ່າຍ ຈຶ່ງດຳເນີນ ການສູ່ຂໍຕາມ ຮີດຄອງການແຕ່ງດອງຊົນເຜົ່າຜູ້ ໄທ ມີນາງສີບສີ່ເປັນເຊື້ອສາຍ ຂອງພໍ່ໄຮ່ຊາວນາ, ນາງສີບແປດເປັນເຊື້ອສາຍພະຍາເຈົ້າອຸປະ ຣາດລາດຊະວົງເຈົ້າແຂວງອາດຍາໜວງ, ຄ່າ ດອງ ສອງນາງກໍ່ຕ່າງກັນ ແລະຈະຕ້ອງມີເບ້ຍ ຫອຍເປັນຮີດ ແລະຮີດດັ່ງກ່າວເປັນຂອງເກົ່າແກ່ ແຕ່ເຂດ12 ພັນນາ. ຊົນເຜົ່າຜູ້ໄທບາງເຂດກໍ່ໄດ້ ຈັດພິທີແຕ່ງດອງແບບຊົນເຜົ່າລາວຈະບໍ່ຕັ້ງເຮືອນ ນ້ອຍແຕ່ແມ່ນຮີດຜູ້ໄທເຊັ່ນ: ຜູ້ ຊາຍແຕ່ງດອງກັນ ແລ້ວມີພາລະໜ້າທີ່ປະຈຳຄອບຄົວຢ່າງໜວງ ໜາຍ ແລະໜັກໜ່ວງສົມຄວນ, ການຕັກ ນ້ຳ, ຕຳເຂົ້າ, ຫາຟືນດັງໄຟ, ຫາກິນ ແລະອື່ນໆ.

ເວລາເຮັດພິທີແຕ່ງດອງໃໝ່ ຈະມີການ ຈັດພາເຂົ້າມີໄຫເຫຼົ້າພ້ອມຈັດເປັນ 4 ລະບົບຄື:

- ພາເຂົ້າຮີດຫາ ໃຫ້ລຸງຕາໝາຍຄວາມ ວ່າ:ພວກທີ່ຈັດງານດອງຕ້ອງຊອກໃຫ້ລຸງຕາພິເສດ.
- ພາເຂົ້າລຸງຕາຫາ ໃຫ້ເຈົ້າໂຄດ.
- ພາເຂົ້າບາງໜວງບາງໜາຍ ໝາຍເຖິງ ພາເຂົ້າຫາ ໃຫ້ແຂກທົ່ວໄປ.
- ພາເຂົ້າຫາ ໃຫ້ເຂີຍໃນນີ້ຈະມີເຫຼົ້າ 1 ໄຫ.
- ມີຮີດຄອງຄຸ່ມເຂີຍ ທີ່ເປັນລະບຽບ ປະ ເພນີ ຂອງຊົນເຜົ່າຜູ້ໄທ.

- ມີລ່ວມເປັນຜູ້ຕິດຕາມ, ສັ່ງເກດການ ທຸກຢ່າງ ຂອງຄູ່ຜົວເມຍໃໝ່ ແຕ່ເລີ່ມຕົ້ນຄວາມ ຮັກຈົນແຕ່ງດອງແລ້ວ, ລ່ວມຕ້ອງຮັກແພງສັ່ງ ສອນເຂົາເຈົ້າເໝືອນກັນກັບລູກຂອງຕົນເອງ.
- ຜູ້ເປັນລ່ວມຕ້ອງຮັກແພງເຄົາລົບນັບຖື ພໍ່ແມ່ລ່ວມເໝືອນພໍ່, ແມ່ຜູ້ບັງເກີດເກົ້າ.

ການຄະລຳຂອງແມ່ຍິງທີ່ຖືພາ ມານ:

- ເວລາຖືພາຫ້ວມກິນປີກ້ວຍ,ລໍ,ມ້າ,ງົວ, ຄວາຍຕາຍ ທີ່ກຳລັງເກີດລູກ.
- ຫ້ວມກິນລິ່ງ,ຄ່າງ, ຕະໝູ,ລິ່ນ, ແລນ, ຟານ, ອີ້ນ, ຕຸ່ນ, ງູ, ອ່ຽນ, ເຕົ່າ ແລະປາຝາ.
- ຫ້ວມກິນອາຫານປະເພດໄຂມັນ.
- ຫ້ວມນອນເວັນ, ຕ້ອງໝັ່ນອອກແຮງ ງານ ໂດຍສະເພາະແມ່ນຍ່າງ.
- ຫ້ວມກິນເຂົ້າຍ່າງຕາມທາງ, ນັ່ງຄົກ, ນັ່ງຕັນປະຕູເຮືອນ, ນັ່ງຕັນຂັ້ນໄດ.
- ຜູ້ເປັນຜົວຄະລຳຫ້ວມປາດຄໍໄກ່,ເປັດ, ໝູ, ງົວ, ຄວາຍ...

ການເກີດລູກ ແມ່ນເກີດຢູ່ແຈປະຕູສ້ວມ ຫຼືແຈຄົວໄຟ ໂດຍມີໝໍຕຳແຍ ແລະຜົວຂອງຕົນ, ເປັນຜູ້ເບິ່ງແຍງ, ເກີດລູກແລ້ວຕ້ອງໄດ້ນັ່ງກຳ ຕ່ຳ ສຸດ 2 ເດືອນ ຫຼືຈົນເຫັນຜູ້ນັ່ງກຳແຂງແຮງດີ ແລ້ວ ເວລານັ່ງກຳຕ້ອງໄດ້ກິນເຂົ້າກັບຂ່າ 3 ວັນ ຈາກ ນັ້ນກໍເລີ່ມຕົ້ນກິນເຂົ້າກັບປາຂາວ,ໄກ່ດຳ, ຄວາຍ ດຳ ແລະສັດບາງປະເພດ ທີ່ເຖົ້າແກ່ອະນຸຍາດ ໃຫ້ກິນ.

ຂໍ້ຫ້ວມລະຫວ່າງເຂີຍ ກັບແມ່ເຖົ້າ, ລູກ ໄພ້ກັບປູ່ ແລະອື່ນໆ. ຫ້ວມເຂີຍ ຫຼືລູກໄພ້ຈັບວັດ ຖຸເຄື່ອງຂອງຈາກມືແມ່ເຖົ້າ, ຖ້າຈັບໄດ້ແມ່ນພໍ່ ເຖົ້າ, ແມ່ເຖົ້າ, ລູກເຂີຍ ຫຼືລູກໄພ້ ຕ້ອງປົງລົງພື້ນ ກ່ອນ, ຍົກເວັ້ນເວລາຮັບເອົາຫຼານເທົ່ານັ້ນ. ເຂີຍ ບໍ່ມີສິດລ່ວງຫ້ອງນັ້ນ, ຫ້ອງນີ້, ຍົກເວັ້ນແຕ່ເຮືອນມີ ຄົນເສຍຊີວິດ.

ຊີວິດຫຼັງການແຕ່ງດອງແລ້ວ ເຂີຍຈະ

ຕ້ອງຢູ່ນຳພໍ່ເຖົ້າ, ແມ່ເຖົ້າກ່ອນຈົນກວ່າມີເງື່ອນໄຂ ຈຶ່ງພາເມຍ ເມື່ອສືບເຮືອນນຳພໍ່, ແມ່ຂອງຕົນ, ບາງຄູ່ກໍ່ຈະອອກເຮືອນໃໝ່ໄປເລີຍ. ລູກແມ່ຍິງ ຂອງເຜົ່າຜູ້ໄທ ໃນເວລາແຕ່ງດອງພໍ່, ແມ່ກໍ່ຈະ ແບ່ງປັນຊັບສົມບັດໃຫ້ພ້ອມເປັນຕົ້ນແມ່ນ: ງົວ, ຄວາຍ, ເງິນ, ຄຳ ແລະອື່ນໆ ດັ່ງນັ້ນຝ່າຍຍິງຕ້ອງ ໄປສືບມູນມໍລະດົກນຳຜົວ ຍົກເວັ້ນກໍລະນີຈຳເປັນ ຊົນເຜົ່າຜູ້ໄທ ມີຮີດຄອງຜົວດຽວເມຍດຽວ.

ຊົນເຜົ່າຜູ້ໄທໃນສະໄໝກ່ອນຈະຕັ້ງບ້ານ ແມ່ນຕ້ອງໄດ້ຊອກຫາມື້ສັນວັນດີ ແລ້ວຂຸດຂຸມ ປັກໄມ້ເອົາເມັດເຂົ້າຈຸ່ມຫົວໃສ່ກັນ,ຖ້າເມັດເຂົ້າສານ ບໍ່ຫັກ, ບໍ່ ເປື່ອຍ, ບໍ່ແຍກຈາກກັນແມ່ນຕັ້ງບ້ານໄດ້.

ລັກສະນະເຮືອນ ຂອງຊົນເຜົ່າຜູ້ໄທ, ເປັນ ເຮືອນຮ້ານ 3 ຫຼັງຕິດກັນຄື:ເຮືອນນອນ, ເຮືອນ ເຊຍ, ເຮືອນໄຟມີຊານ, (ເຮືອນຄົວ) ມີ 9 ເສົາ, ປະ ກອບດ້ວຍ 3 ຫ້ອງ, ມີປະຕູເຂົ້າອອກ 2 ປ່ອງ ແລະ ປ່ອງຢ້ຽມ 2 ປ່ອງ, ຫ້ອງນອນຈະເປັນ ແບບທຳມະ ດາ ຂັ້ນດ້ວຍຝາທາງສົ້ນເບື້ອງໜຶ່ງ ຈະ ມີຫ້ອງໂຖງ ເຊິ່ງເປັນຫ້ອງມີຮ້ານບູຊາ ແລະບ່ອນນອນຂອງ ແຂກ, ລູກຊາຍ. ຖ້າລະບົບເຮືອນນ້ອຍເຕົາໄຟ ເອົາໄວ້ໃນຄົກຕຳເຂົ້າເພິ່ນຈະເຮັດຕ່າງ ຫາກ.

ເຄື່ອງນຸ່ງຫົ່ມຂອງຊົນເຜົ່າຜູ້ໄທ, ສຳລັບຜູ້ ຊາຍນຸ່ງສີ້ງດຳໜໍ່ນິນມັດຫົວ, ຜ້າສະໂລ່ງ, ຜ້າຫາງ, ເສື້ອດຳໜໍ່ ນິນຍ້ອມດ້ວຍນ້ຳເບີ, ນ້ຳຄາມ, ສັກຂາ ລາຍ, ຫຼັງລາຍ, ແມ່ຍິງນຸ່ງສົ້ນມີຫົວ, ສົ້ນມຸກ, ສົ້ນ ມັດໝີ່, ເສື້ອດຳມີຊັບລາຍ, ຄໍລາຍ, ໃສ່ກະຕ່ຽງເງິນ ຈາດ ມີແພກະຊາ, ແພຕາລ່ອງຄຸ່ນຫົວ, ຜ້າດາມ ບ່ຽງ, ບາງຊະນິດໃຊ້ເວລາ 1- 2 ປີ ມີກະຈ້ອນໃສ່ ຫູ, ກ້ອງແຂນ, ເກີບໃນເມື່ອ ກ່ອນໃສ່ເກີບ ໜັງ ຄວາຍ, ເກີບສູງເຮັດດ້ວຍໄມ້, ໄມ້ກະເດົາ, ໄມ້ຕີນເປັດ.

ສຳລັບອາຫານການກິນດື່ມຂອງຊົນເຜົ່າ ຜູ້ໄທມັກລິດເຜັດ ແລະແຊບຊ້ອຍດີ, ຕາມປົກ ກະຕິແລ້ວພາເຂົ້າຂອງຊົນເຜົ່າຜູ້ໄທ ແຕ່ງແຕ່ລະ ເທື່ອ ຈະຂາດແຈ່ວບໍ່ໄດ້, ເວລາວາງພາເຂົ້າຈະບໍ່ ໃຫ້ ວາງກ້ອງຂີ້ເຮືອນ ຕ້ອງພະຍາຍາມຫ່າງຈາກ ຂີ້ຂ້າງໃດຂ້າງໜຶ່ງກໍ່ໄດ້, ເຄື່ອງດື່ມ ແມ່ນເຫຼົ້າເດັດ, ເຫຼົ້າໄຫ ແລະເຫຼົ້າສະໂຫ.

ດ້ານສິລະປະພື້ນເມືອງ ຂອງຊົນເຜົ່າຜູ້ ໄທ ມີຫຼາຍຢ່າງເປັນຕົ້ນ, ແຄນ, ກະຈັບປີ່, ສີຊໍ ແລະອື່ນໆ ເຊິ່ງເຂົາເຈົ້າຈະໃຊ້ເວລາລ້ຽງຜີ, ເສັ້ນ, ເຢົ້າຕ່າງໆ ສະເພາະຊົນເຜົ່າຜູ້ໄທ ແມ່ນຖ່າຍ ທອດຈາກການເຢົ້າຜີກະໄທ້ທີ່ມີລີລາການຟ້ອນ ແລະການເສບໄປຕາມຈັງຫວະຂອງການເຢົ້າ.

ການສົ່ງສະການ ກໍລະນີເຮືອນທີ່ມີຜູ້ ເສຍຊີວິດ, ເປັນຜູ້ມີຖານະດ້ານເສດຖະກິດແດ່ ກໍຈະມີການຄົບງັນ 2 ຄືນ ແລ້ວຈິ່ງເອົາໄປຝັ່ງ ຢູ່ປ່າ ຊ້າບ້ານ. ການສົ່ງສະການ ແມ່ນຈັດຕາມ ພິທີທາງ ສາສະໜາ ໃນປະຈຸບັນນີ້ແມ່ນນິຍົມກັນຈູດ, ຖ້າ ຕາຍໜຸ່ງ ກໍ່ຈະເອົາໄປຝັ່ງປ່າຊ້າ ຕ່າງຫາກ (ບໍ່ຈູດ).

ຫ້າມເອົາຄົນຕາຍທາງອື່ນ ເຂົ້າບ້ານເດັດ ຂາດ, ເວລາຫາມຄົນຕາຍໄປປ່າຊ້າຫ້າມປ່ຽງລົງ ດິນ, ຖ້າຫາກປ່ຽງກໍ່ຕ້ອງໄດ້ຄົບງັນຢູ່ນັ້ນອີກ. ກໍລະ ນີຄົນທາງອື່ນໄປຕາຍໃນບ້ານຜູ້ມີສ່ວນຮ່ວມກໍ່ຈະ ຕ້ອງໄດ້ຂ້າຄວາຍ 1ໂຕລ້ຽງຜີບ້ານ (ແປງຜີ ບ້ານ).

ສຳລັບເສດຖະກິດ ຂອງຊົນເຜົ່າຜູ້ໄທ ໃນ ເມື່ອກ່ອນເຂົາເຈົ້າເຄີຍດຳເນີນການຜະລິດທາງ ດ້ານກະສິກຳເປັນຕົ້ນ: ການເຮັດໄຮ່, ເຮັດນາ ແລະ ເຮັດສວນເພື່ອປູກເຂົ້າ, ພືດທາດແປ້ງ, ເຜືອກ, ມັນ ແລະອື່ນໆ. ປະເພດສັດລ້ຽງມີງົວ, ຄວາຍ, ໝູ, ແບ້ ແລະສັດປີກ ປະຈຸ ບັນນີ້ ການປູກຝັ່ງ ແລະ ລ້ຽງສັດ ຂອງເຂົາເຈົ້າຍິ່ງມີ ຄວາມຊຳນານ. ຜູ້ຊາຍ ເຜົ່າ ຜູ້ໄທມີມູນເຊື້ອໃນການຕີເຫຼັກ, ປັ້ນໜໍ່, ຫຼໍ່ໄທແລະ ວິຊາຈັກສານ ເຊັ່ນ: ກະບຸງ, ກະຕ່າ, ກະເປ໋, ກະຢັ້ງ, ຕິບເຂົ້າ, ສານສາດ ແລະອື່ນໆ. ພ້ອມນີ້ຍັງສາ ມາດປູກມອນລ້ຽງມ້ອນ, ປູກຝ້າຍ, ເພື່ອຕຳຫູກ, ແຜ່ນແພ ແລະເຮັດເຄື່ອງປະດັບເພດຊິ່ງຂອງ ເຜົ່າຕົນເອງໄດ້ຢ່າງຫຼວງຫຼາຍເປັນເສດຖະ ກິດ ຂາອອກຂອງຄອບຄົວທີ່ສ້າງລາຍຮັບ ໃຫ້ຄອບຄົວ ສູງພໍສົມຄວນ, ມັນໄດ້ສ້າງຄວາມ ນິຍົມຊົມຊອບ ໃຫ້ແກ່ລູກຄ້າທັ້ງພາຍໃນ ແລະຕ່າງປະເທດ, ເຂົາ ເຈົ້າແມ່ນໜຶ່ງໃນຈຳນວນ 49 ຊົນເຜົ່າ ທີ່ມີລະບົບ ເສດຖະກິດການຂະຫຍາຍຕົວແຮງເມື່ອທຽບ ໃສ່ຊົນເຜົ່າອື່ນໆໃນ ສ. ປ ປ. ລາວ.

Phou Thay

Historical background:

The Phou Thay' history and origin are similar to other ethnic groups of the Lao- Thai language group. They migrated from south China in the late 17th and early 18th century, following the Mekong, Salavan and Red rivers. The group that migrated into the Red River area later broke up into two groups: the Thai Dum and the Thai Mour. These two groups later settled in many place suchasSaybangfai,Hinboun, Saynamnoy river area and the Huaxanghai Mountain area.

Presently, the Phou Thay live in the central provinces, mostly in Nongbok, Mahaxay, Hinboun and Boualapha districts of Khammuan province, plus they live in Phin, Sepone, and Vilabouly districts of Savannakhet Province. Their population is around twenty thousand people in Laos. There is a large population in Thailand.

Name and language:

" Phou Thay " has always been the most common name of this group. Phou Thay comes from these words: " Thay Phou", which has an obscure meaning of "those who migrated along the mountains".

Their language is an Austro-Thay language and is in the Tai-Kadai group. They do not have a written alphabet.

Society, beliefs, ceremonies and myths:

The Phou Thay adopted Buddhism during their migration through Laos. Before this time they were followers of their own style of animism. However, they have combined Buddhsim with some of their ancient animistic practices and beliefs. They believe in some spirits, the most important being the spirit of the area (phi muang) and the spirit of the village (phi ban). They also believe in other spirits such as spirit of the rivers and of the forest. They believe ancestral spirits can protect those in the household from harm.

Every Phou Thay village will have shamans, who are always female. These are called moi yau or phi fa. They are believed to have magical powers allowing them to cure illnesses. After a harvest, the Phou Thay will sacrifice chickens, whiskey, fruit and other items to the "spirit of the rice".

Phou Thay families are basically nuclear, but with perhaps three generations living under one house. Men are monogamous and do not practice polygamy like other groups.

Phou Thay marriage is a complex affair, as when a girl marries, she must be cut off from her ancestral spirits and this takes many ceremonies and sacrifices to perform correctly. When a young man in interested in a girl he will give her a gift of money or cloth. Later a dowry must be paid to her family, which today is about half a kilogram of silver, plus one buffalo, a pig, some rice whiskey, and one million kip in cash.

After marriage, the husband will move into the wife's household. He will be expected to work hard; carrying water, pounding rice, finding and picking firewood, searching for food, and so on. Later the

couple may inherit this house or may move into their own.

When a woman is pregnant, there are certain taboos she must follow. Some of these include not eating banana flowers, horse, fatty meats, or the meat of a pregnant buffalo. Also, she may not nap during the day, nor her husband may not cut the neck of a domestic animal for slaughter. These beliefs are to prevent the baby from being born deformed or seriously ill.

The baby will be born in the house. After birth, the mother will eat rice with ginger root for three days, then later progress to chicken and other meats. This is to insure the mother's strength.

Phu Thai cremate their dead, either at the village temple or outside the village. If the family has money, then a ceremony is held for two nights at the house of the deceased. Those who are younger than fifteen or died in accidents are buried. If an outsider dies in a village, then the deceased's family must sacrifice one buffalo to the village spirit.

Village and house:

Before building a new village or house, the villagers will bury some rice seed in the spot they wish to build. If it germinates successfully, then they will proceed to build in that spot.

The Phu Thai live in small villages with houses on stilts, the walls of woven bamboo and the roofs made of thatch. A ladder leads to a small porch.

The house is divided into two rooms. One room is a living room with a small hearth for cooking. The other room is a small sleeping room. They will keep their animals under the house during the night.

Costume:

According to the Phu Thai in Laos, they no longer wear their traditional clothing, as they have sold their costumes to the Phu Thai in Thailand. Today a Phu Thai woman will wear a traditional sarong (phaa sin) that is black or dark blue with a long-sleeved vest. If there is a special occasion, then they will wear a more colorful *phaa sin* with a wide sash that is red or white. Today, they wear little jewelry, but used to wear a lot of silver jewelry several generations ago.

For special occasions the males will wear wide blue trousers and short-sleeved blue vest with red hems and fringes. For daily wear, they will wear commercial clothing bought from Lao traders. They will also be tattooed, but this is becoming less common.

Agriculture and livelihood:

The Phu Thai's main crop is glutinous rice, which is grown in wet paddies. They also grow vegetables, fruits, tobacco and some cotton. Animals they raise are buffalo, cows, poultry, dogs, and small horses. They also hunt small game and fish in the rivers. The women will weave phaa sins and other items. The men will make items from bamboo for trade. These include mats, baskets, fish traps, and other household items.

ຊົນເຜົ່າຢ້ຳ ປະຫວັດຄວາມເປັນມາ:

ຊົນເຜົ່າຢ້ຳ ແມ່ນຊົນເຜົ່າໜຶ່ງທີ່ນອນຢູ່ໃນ ວົງຄະນະຍາດແຫ່ງຊາດລາວ, ເຂົ້າເຈົ້າຕັ້ງຫຼັກປັກ ຖານ ແລະດຳລົງຊີວິດຢູ່ໃນປະເທດລາວ ໄດ້ດົນ ນານມາແລ້ວ, ພວກເຂົາໄດ້ອົບພະຍົບ ແລະ ເຄື່ອນຍ້າຍມາຈາກພາກໃຕ້ຂອງຈີນ ໂດຍຜ່ານ ດິນແດນແຂວງ ລາວກາຍ, ເຊົນລາ, ໄລເຈົາ ຂອງ ຫວຽດນາມ ແລ້ວມາຕັ້ງຖິ່ນຖານຢູ່ແຂວງ ຜົ້ງສາ ລີ, ແຂວງອຸດົມໄຊ, ແຂວງ ຫຼວງນ້ຳທາ ແລະ ແຂວງບໍ່ແກ້ວ ໄດ້ຫຼາຍສະຕະວັດ. ຊົນເຜົ່າຢ້ຳຍັງ ມີຢູ່ ສ.ສ ຫວຽດນາມ ແລະ ສ.ປ ຈີນ.

ພົນລະເມືອງຂອງຊົນເຜົ່າຢ້ຳຢູ່ລາວມີ ທັງໝົດ 4.630 ຄົນ, ຍິງ 2.284 ຄົນເທົ່າກັບ 0,1% ຂອງພົນລະເມືອງທົ່ວປະເທດ (ຕາມສະຖິຕິການ ສຳຫຼວດພົນ ລະເມືອງທົ່ວປະເທດຄັ້ງທີ II ປີ 1995).

ຊໍ່ເອ້ີນ:

ຊົນເຜົ່ານີ້ເອ້ີນຊົນເຜົ່າຕົນເອງວ່າ: "ຢ້ຳ" ຊົນເຜົ່າອື່ນເອ້ີນໃຫ້ເຂົາເຈົ້າກໍ່ແມ່ນ " ຢ້ຳ " ແລະຊື່ ທີ່ເຂົາເຈົ້າ ມັກ ກໍ່ແມ່ນຊົນເຜົ່າຢ້ຳ. ຄຳທີ່ເອ້ີນວ່າ: " ຢ້ຳ " ໝາຍເຖິງ ຢຸດຫຼືເຊົາໃນການເດີນທາງຈາກ ສະຖານທີ່ແຫ່ງໜຶ່ງ ໄປຫາສະຖານທີ່ອີກແຫ່ງໃໝ່ ແລະການຢຸດເຊົາ ໃນການເຊື່ອຖືພຸດທະສາສະ ໜາທັນມາເຊື່ອຖືຜີ.

ພາສາ:

ພາສາຂອງຊົນເຜົ່າຢ້ຳ ຈັດເຂົ້າໃນໝວດ ພາສາລາວ-ໄຕ ການປາກເວົ້າ ຫຼືສຽງສຳນຽງຄ້າຍ ຄືກັນກັບສຽງສຳນຽງຂອງຊົນເຜົ່າລື້ " ຢ້ຳ " ບໍ່ມີ ໂຕໜັງສືຂຽນ.

ຮີດຄອງປະເພນີຄວາມເຊື່ອຖືແລະວັດ ທະນະທຳ - ສັງຄົມ :

ຕາມຄວາມເຊື່ອຖືຂອງຊົນເຜົ່າ " ຢ້ຳ " ມີຮີດຄອງປະເພນີ ແລະວັດທະນະທຳທີ່ແຕກຕ່າງ ກັນ ແຕ່ລະທ້ອງຖິ່ນເປັນຕົ້ນຊົນເຜົ່າຢ້ຳ ຢູ່ແຂວງ ຜົ້ງ ສາລີ ໃນສະໄໝບູຮານ ກ່ຳຖືສາສະໜາພຸດ ແຕ່ ຕົກມາຮອດສະໄໝເຈົ້າ ອຸຕະມະ ປົກຄອງຊາວຢ້ຳ ໄດ້ທັນມາເຊື່ອຖືຜີ. ສຳລັບ"ຢ້ຳ" ຢູ່ແຂວງ ຫຼວງ ນ້ຳທາ, ແຂວງ ອຸດົມໄຊ ແລະແຂວງ ບໍ່ແກ້ວ ແມ່ນໄດ້ມີຄວາມເຄົາລົບສິ່ງສັກສິດທ້ຽງປ່ຽງເປັນ ຕົ້ນໄດ້ເຄົາລົບບູຊາຜີບັນພະບູລຸດ, ຜີບ້ານ, ຜີ ເມືອງ. ໃນປີໜຶ່ງໄດ້ມີງານບຸນທີ່ສຳຄັນນັ້ນຄື ການ ມ່ວນຊື່ນຫຼິ້ນບຸນ" ກິນຈ່ຽງ" ພ້ອມກັນນີ້ ຊົນເຜົ່າ ຢ້ຳ ຍັງມີພິທີກຳທາງຮີດຄອງໃນການຂອກທາ ທີ່ດິນຈະຕັ້ງ ບ້ານເຮືອນ , ໃກ້ຈະດຳນາ ແລະເວລາ ເຂົ້ານາງາມທ່ຳບ່າວສາວ. ຊົນເຜົ່າຢ້ຳ ບໍ່ມີ ກອນຂັບ, ກອນລຳ ເປັນອັນສະເພາະຂອງ ຊົນເຜົ່າຕົນເອງ. ຊົນເຜົ່າຢ້ຳ ໃນແຕ່ລະທ້ອງຖິ່ນກໍມີຄວາມນິຍົມ ຂັບລຳຊົນເຜົ່າທີ່ໃກ້ຄຽງຕົນເອງເຊ່ັນ: ຢ້ຳຢູ່ເມືອງ ຍອດອູ ນິຍົມຂັບລຳຂອງຊົນເຜົ່າລື້, ຢ້ຳຢູ່ເຂດ ລອງນາຍ ເມືອງ ບຸນໃຕ້ ພັດນິຍົມຂັບລຳ ຊົນເຜົ່າ ໄທດຳ, ສຳລັບຢ້ຳຢູ່ ແຂວງ ຫຼວງນ້ຳທາ ພັດນິຍົມ ຂັບລຳເຜົ່າລື້. ເຂົາເຈົ້າບໍ່ມີນິທານພື້ນເມືອງ ພ້ອມ ຍັງມີເຄື່ອງດົນຕີພື້ນເມືອງຄື: ສີຊໍ, ຄ້ອງ, ກອງ ແລະປີ່, ພ້ອມກັນນີ້ເຂົາເຈົ້າຍັງມີໝໍດູ, ໝໍ ມໍ, ໝໍຜີ ແລະໝໍຢາພື້ນເມືອງ ເຊ່ິງເປັນທີ່ເພ່ິງທາງໃຈຂອງ ຄົນເຮົາໃຈຂອງຄົນເຮົາ.

ຄຸນລັກສະນະເຮືອນຂອງຊົນເຜົ່າ ກໍ່ແຕກ ຕ່າງກັນຕາມແຕ່ລະທ້ອງຖິ່ນເປັນຕົ້ນຊົນເຜົ່າຢ້ຳ ຢູ່ແຂວງຫຼວງນ້ຳທາໃນສະໄໝບູຮານໄດ້ປຸກສ້າງ ເຮືອນແບບຕິດດິນຄືກັບເຮືອນຂອງຊົນເຜົ່າໄທ ເໜືອຢູ່ຜົ້ງສາລີ ແລະບາງຊົນເຜົ່າໃນໝວດພາ ສາຈີນ- ຕິເບດ. ແຕ່ປະຈຸບັນໄດ້ນິຍົມຢູ່ເຮືອນຮ້ານ ຄືກັບເຮືອນຂອງຊົນເຜົ່າລື້, ສຳລັບຂະໜາດແລະ

ການຈັດວາງໃນຫ້ອງເຮືອນບໍ່ຄືເຮືອນຂອງຊົນເຜົ່າລໍ້, ສ່ວນຢັ້ງຢູ່ແຂວງ ຜົ້ງສາລີແຕ່ໃດມາກໍ່ປຸກສ້າງເປັນເຮືອນຮ້ານຫຼັງຄາຄ້າຍຄືອອງເຕົ່າການຈັດວາງໃນເຮືອນກໍ່ມີລັກສະນະສະເພາະຂອງເຂົາເຈົ້າເອງ. ເຮືອນຂອງຊົນເຜົ່າຢັ້ງຕາມແຕ່ລະທ້ອງຖິ່ນມີ 3-5 ຫ້ອງ (ນັບຫວ່າງເສົາ) ກວ້າງ 3 - 4 ວາ, ກວ້າງ 45 ວາ, ໃນຫ້ອງເຮືອນໄດ້ແບ່ງເປັນ 2 ຫ້ອງໃຫຍ່ ຂະໜານກັນໃນແຕ່ລະຫ້ອງຍັງໄດ້ແບ່ງເປັນຫຼາຍຫ້ອງນ້ອຍຕາມຄວາມຕ້ອງການຂອງສະມາຊິກ ຄອບຄົວນັ້ນເປັນຕົ້ນຫ້ອງນອນປູ່, ຍ່າ, ລູກຊາຍ ກົກ, ລູກຊາຍຖັດໆນັ້ນຫ້ອງນອນຂອງລູກຊາຍ, ລູກສາວທີ່ຍັງເປັນໂສດ ແລະບ່ອນນອນຂອງແຂກທີ່ນອນແວ່ຢາມ, ຍ້ອນຄວາມເຊື່ອຖືພຸດທະສາສະໜາສົມທົບກັບເຊື່ອທາງໄສຍະສາດ. ສະນັ້ນ ໃນຫ້ອງເຮືອນຂອງຊົນເຜົ່າຢັ້ງໄດ້ມີຂໍ້ຫ້າມ ແລະ ການຄະລຳເຊັ່ນດຽວກັບຊົນເຜົ່າອື່ນໆ ໂດຍສະເພາະແມ່ນການລ່ວງເຂົ້າໃນຫ້ອງເຮືອນຂອງສະມາຊິກຄອບຄົວເປັນຕົ້ນຫ້າມລ່ວງເຂົ້າຫ້ອງນອນກ່ຈະຖືກປັບໄໝ ໃນ 2 ກໍລະນີ, ຖ້າເຄື່ອງເສຍກ່ຕ້ອງໃຊ້ຕາມມູນຄ່າເຄື່ອງບວກກັບເຫຼົ້າ1 ລິດ, ໝູ4 ກຳ1ໂຕ ເພື່ອແປງຜີເຮືອນກໍລະນີເຄື່ອງບ່ເສຍ ກ່ຈະເສຍຄ່າປົວແປງຜີເຮືອນເທົ່າ ນັ້ນ.

ຊົນເຜົ່າຢັ້ງ ຕາມແຕ່ລະທ້ອງຖິ່ນກໍ່ມີເຄື່ອງນຸ່ງຫົ່ມເອັ້ຢ້ອງແຕກຕ່າງກັນ ເປັນຕົ້ນ ຢັ້ງຢູ່ແຂວງ ຫຼວງນ້ຳທາ ແມ່ນນຸ່ງຫົ່ມຄ້າຍຄືຊົນເຜົ່າແລນແຕນ ສຳລັບຢັ້ງຢູ່ ແຂວງ ຜົ້ງສາລີ ນຸ່ງຫົ່ມເອັ້ຢ້ອງຄ້າຍຊົນເຜົ່າອາຄາ ແລະຊົນເຜົ່າຫໍ້. ຊົນເຜົ່າຢັ້ງ ຕາມ ແຕ່ລະທ້ອງຖິ່ນໄດ້ມີຄວາມນິຍົມກິນດື່ມ ແລະ ດູດຄືກັເປັນຕົ້ນແມ່ນໄດ້ນິຍົມກິນເຂົ້າໜຽວ ໂດຍ ເອົານ້ຳຮ້ອນລວກແລ້ວກໍໜຶ້ງໃສ່ໄຫ, ມັກກິນອາ ຫານປະເພດແກ່ງ, ປີ້ງ, ລາບດິບ, ລາບເລືອດ, ມັກ ທີ່ມີລົດຊາດເຜັດ ແລະເຄັ່ມ, ດື່ມນ້ຳຕົ້ມ, ນ້ຳ ດິບ, ດື່ມເຫຼົ້າໄຫ, ເຫຼົ້າສັ່ງ ແລະເຫຼົ້າຂີ້ແກບ, ສູບ ຢາເສັ້ນ ແລະສູບຝີ່ນ, ເຂົາເຈົ້າຂົນສົ່ງວັດຖຸສິ່ງ ຂອງໄດ້ມີ 2 ຮູບການ ຄື: ຂົນດ້ວຍຕົນເອງເປັນ ຕົ້ນແມ່ນເປ້,ແບກ, ຫາບ, ຫາມ ແລະຂົນສົ່ງໂດຍ ເອົາສັດຕ່າງ.ໃນສັງຄົມຂອງຊົນເຜົ່າ “ ຢັ້ງ ” ປະ ກອບມີຫຼາຍຕະກຸນ ຫຼືຊົນດ້ວຍກັນເຊັ່ນ: ຊົນລີ, ຊົນຈ່າວ, ຊົນຮຸ່ງ, ຊົນວາງ, ຊົນນໍ ແລະອື່ນໆ. ແຕ່ລະຊົນນັ້ນມີຂໍ້ຫ້າມດ້ວຍການຄະລຳທີ່ແຕກ ຕ່າງກັນພຽງເລັກນ້ອຍ ເປັນຕົ້ນແມ່ນການຫ້າມຂ້າ ຫຼືກິນຊົ້ນສັດທີ່ເປັນຕະກຸນຂອງຕົນເອງ ທັງນີ້ກໍ ເພື່ອສະແດງເຖິງຄວາມເຄົາລົບນັບຖື ແລະບູຊາ. ພ້ອມກັນນັ້ນກ່ອນບ່າວ, ສາວຈະພົວພັນໃນທາງ ຊູ້ສາວກ່ຕ້ອງສືບຖາມຕະກຸນ ຫຼືຊົນ ເຊິ່ງກັນ ແລະ ກັນ ທັງນັ້ນກໍເພື່ອຫຼີກເວັ້ນການແຕ່ງດອງໃນຊົນ ດຽວກັນ ຫຼືແຕ່ລະຊົນຕ້ອງມີຫົວໜ້າຂອງຊົນ ໂດຍ ມີການເລືອກຕັ້ງດ້ວຍການບົ່ງຕົວ ຈາກສະ ມາ ຊິກ ມີທີ່ບົດບາດໃນການໄກ່ເກ່ຍ ແລະແກ້ໄຂຂໍ້ຂັດ ແຍ່ງລະຫວ່າງຄອບຄົວ ຫຼືພາຍໃນຄອບຄົວທີ່ ນອນໃນຊົນດຽວກັນ.

ຊົນເຜົ່າຢັ້ງໃນແຕ່ລະທ້ອງຖິ່ນໄດ້ມີ ປະເພ ນີໃນການສ້າງຄອບຄົວມີ 2 ລັກສະນະເປັນຕົ້ນ ແມ່ນການສ້າງຄອບຄົວໂດຍຜ່ານພໍ່, ແມ່ທັງສອງ

ฝ่າยຊອກໃຫ້ ແລະຜູ້ບ່າວໄປຊອກລົມສາວແລ້ວ ມາລາຍງານໃຫ້ພໍ່, ແມ່ຂອງຕົນ. ການສ້າງຄອບ ຄົວຂອງຊົນເຜົ່າຢັ້ງໄດ້ແບ່ງອອກເປັນຫຼາຍຂັ້ນ ຕອນເປັນຕົ້ນເມື່ອພໍ່, ແມ່ເຫັນດີກໍແຕ່ງຄົນໃຊ້ໄປ ຖາມພໍ່, ແມ່ຂອງຍິງ ສາວ. ຖ້າຫາກພໍ່, ແມ່ ຂອງຍິງ ສາວ ແລະຍິງສາວຫາກຕົກລົງເຫັນດີກໍ່ດຳເນີນ ການສູ່ຂໍເພື່ອຕົກລົງຈະເຂົ້າເຂີຍຈັກປີຕາມປົກກະ ຕິແລ້ວ 3 - 5 ປີໃນ ໄລຍະເວລາສູ່ຂໍມື້ແຕ່ງດອງ ນັ້ນ ເຈົ້າບ່າວກໍທ່ຽວໄປນອນນຳເຈົ້າສາວ ໂດຍ ມີຄົນໃຊ້ທັງສອງເປັນຜູ້ພາໄປໃນເວລາບໍ່ທັນຄ່ຳ. ມື້ແຕ່ງດອງຢູ່ເຮືອນ ເຈົ້າບ່າວຕ້ອງຂ້າໝູ 50 ກິໂລ 1 ໂຕ,ໄກ່ຜູ້ໂອກ 2 ໂຕ ຢູ່ເຮືອນເຈົ້າສາວ ກໍຂ້າໝູ 50 ກິໂລ 2 ໂຕ ແລະເຈົ້າບ່າວຕ້ອງເອົາໝູ 70 ກິໂລ 2ໂຕ, ເງິນ 3 ໝັ້ນ ກັບ 2 ບີ້ ແລະເງິນຈຳນວນ ໜຶ່ງທີ່ເປັນຄ່າດອງສິນສອດໄປມອບໃຫ້ພໍ່, ແມ່ ຂອງເຈົ້າສາວເລ່ຍກ່ອນ. ຫຼັງຈາກຂ້າໝູແລ້ວກໍແຮ່ ເຂີຍໄປເຮືອນໄພ້ຮອດເຮືອນກໍ່ດຳເນີດການສູ່ ຂວັນ, ສູ່ຂວັນແລ້ວກໍ່ແຮ່ ໄພ້ເມືອເຮືອນເຂີຍ, ດຳ ເນີນການສູ່ຂວັນໄພ້ຢູ່ເຮືອນເຂີຍ, ສ່ວນເຂີຍຢູ່ ເຮືອນໄພ້ກໍສູ່ຂວັນຢູ່ ເຮືອນໄພ້, ຖັດຈາກນັ້ນກໍຮັບ ປະທານອາຫານ ແລະດື່ມເຫຼົ້າ ຊຸມແຊວຊົ່ວໄລ ຍະໜຶ່ງ. ສຳລັບຢັ້ງຢູ່ແຂວງຫຼວງນ້ຳທາ ເມື່ອຕົກລົງ ກັນແລ້ວເຈົ້າບ່າວຕ້ອງກະກຽມວັດຖຸປັດໄຈຈຳ ນວນໜຶ່ງເປັນຕົ້ນມີເຫຼົ້າ 100 ລິດ, ໝູ 60 ກິໂລ 1ໂຕ, ເຂົ້າສານ 150 ກິໂລ, ເງິນ 70 ໝັ້ນ ແລ້ວ ໃຫ້ຄົນໃຊ້ທັງສອງໄປມອບໃຫ້ພໍ່, ແມ່ຂອງຝ່າຍ ຍິງແລ້ວກໍແຮ່ເຂີຍມາເຮືອນໄພ້, ຈາກນັ້ນຕ້ອງ ຊອກຫາໝໍຜີເຮືອນ, ຂ້າໝູແຕ່ງກິນດຳເນີນການ ສູ່ຂວັນຄູ່ສ້າງຄອບຄົວໃໝ່ ເພື່ອເຂົ້າເຂີຍຢູ່ເຮືອນ ໄພ້, ການເຂົ້າເຂີຍໄວສຸດ 1 ປີ ສູງສຸດ 3 ປີ. ເມື່ອ ຄົບຮອບເວລາເຂົ້າເຂີຍແລ້ວຄົນໃຊ້ທັງສອງໄປ ຖາມພໍ່, ແມ່ຂອງຝ່າຍຍິງເພື່ອຂໍໄພ້ເມືອເຮືອນ ເຂີຍ, ຖ້າຫາກເຫັນດີຕ້ອງຂ້າ ໝູ 5 ກຳ 1 ໂຕແຕ່ງ ກິນສຸກແລ້ວຖວາຍຜີເຮືອນ ແລ້ວກ່ຳແຮ່ໄພ້ເມືອ ເຮືອນເຂີຍຮອດເຮືອນເຂີຍ ຂ້າໝູ 5 ກຳ 1 ໂຕ ຖວາຍຜີ ເຮືອນເຂີຍ. ຈາກນັ້ນລູກໄພ້ສົມບັດສົມ ມາປູ, ຍ່າແລະຍາດຕິພີ່ນ້ອງຂອງຝ່າຍເຂີຍ ເພື່ອແນະນຳຕົນເອງໄດ້ເປັນໄພ້ຂອງຄົວເຮືອນນີ້ແລ້ວ.

ຊົນເຜົ່າຢັ້ງ ແຕ່ລະທ້ອງຖິ່ນລ້ວນແຕ່ປະ ຕິບັດຕາມລະບອບຜົວໜຶ່ງເມຍດຽວ, ແຕ່ກໍລະນີ ຢ່າຮ້າງກັນກໍຕ້ອງປະຕິບັດຕາມແຕ່ລະກໍລະນີ ເປັນຕົ້ນຜົວຜິດທັງຂໍປະເມຍຕ້ອງເສຍໃຫ້ ເມຍ 5 ໝັ້ນ, ແຕ່ສຳລັບເມຍຜິດທັງຂໍຮ້າງຜົວ ຕ້ອງເສຍ ໃຫ້ຜົວ12 ໝັ້ນ.

ຊົນເຜົ່າຢັ້ງກໍມີປະເພນີໃນການປົງສົບ ສົ່ງສະການ ເຊິ່ງໄດ້ປະຕິບັດຕາມ ແຕ່ລະຂັ້ນຕອນ ເປັນຕົ້ນເມື່ອຢູ່ໃນຄອບຄົວມີຄົນເຈັບເປັນເຊີນພີ່ ນ້ອງມາເຮືອນເພື່ອປຶກສາ, ປິ່ນປົວ, ຖ້າບໍ່ດີ ເຊີນ ໝໍດູພິສູດອາການຂອງຄົນເຈັບແລ້ວກໍປິ່ນປົວ ຕາມການແນະນຳຂອງໝໍດູຄື: ຂ້າໄກ່ ຫຼືເປັດ ຖວາຍຜີ ນັ້ນ. ຖ້າເສຍຊີວິດໄດ້ເອົາຜ້າຂາວຫໍ່ສົບ ດອຍໄວ້ຫ້ອງນອນຂອງຜູ້ກ່ຽວເຄີຍນອນປິ່ນ ຫົວຫາທິດຕາເວັນອອກ. ສ່ວນຊົນ ເຜົ່າຢັ້ງຢູ່ແຂວງ

ຫຼວງນ້ຳທາ ກໍເອົາສິບໄວ້ໃນຫ້ອງຜີປົ່ນຫົວຫາທິດ ຕາເວັນຕົກ, ການຄົບງັນໄວສຸດ 2 ວັນ 2 ຄືນ, ຊ້າສຸດ 3 ວັນ, 3 ຄືນ, ເວລາຄົບງັນຕ້ອງຂ້າໄກ່ປີ້ງ ຂາ ໜຶ່ງວາງໃສ່ພາເຂົ້າເປ້ືອງຫົວສິບ, ນອກຈາກ ນັ້ນຍັງຕ້ອງຂ້າໄກ່, ໝູ ແລະຄວາຍ ເອົາເຄື່ອງໃນ ສັດເຫຼົ່ານັ້ນຖວາຍຜີ, ສ່ວນຊີ້ນໃຫ້ຄົນເຮົາກິນ ຜູ້ໃຊ້ຂ້າສັດນັ້ນຕ້ອງແມ່ນລູກເຂີຍ, ຫຼານ ຫຼືພີ່ນ້ອງ. ກ່ອນຈະຫາມໄປປ່າຊ້າໄດ້ເອົາສິບໃສ່ໂລງແລ້ວ, ເອົາໂລງທີ່ໃສ່ສົບດອຍໄວ້ເດີ່ນບ້ານ ໃຫ້ໝໍຜີເອົາ ເຄື່ອງໃນສັດຕົ້ມໃຫ້ສຸກຖວາຍຜີ ແລະ ແຕ່ງຄົນ, ເຂີຍ, ລູກ, ຫຼານໄປຊອກຫາສະຖານທີ່ຝັງສົບ ດ້ວຍການສ່ຽງແກ່ວງໄຂ່ໄກ່ດຳປອດບ່ອນເຮົາ ຄາດກະຈະຝັງ ຖ້າຫາກໄຂ່ແຕກບ່ອນໃດກໍ່ຂຸດ ຂຸມບ່ອນນັ້ນ, ຂຸດແລ້ວກໍ່ເມືອເຮືອນແລ້ວໃຫ້ 8 ຄົນຫາມສົບໄປປ່າຊ້າຮອດປ່າຊ້າແລ້ວ ກໍ່ເອົາສົບ ລົງຂຸມປົ່ນຫົວໄປທາງທິດຕາເວັນຕົກ, ລູກຊາຍ ເປັນຜູ້ເອົາດິນຖົມຂຸມກ່ອນຖັດມາແມ່ນເຂີຍ, ຫຼານ ແລະພີ່ນ້ອງ. ຈາກນັ້ນກໍ່ເມືອເຮືອນສູ່ຂວັນ, ພວກຫາມສົບ ແລະພວກທີ່ໄປສົ່ງສະການພ້ອມ ທັງມອບເງິນໃຫ້ຜູ້ລະ 8 ບີ້ (ສຳລັບຜູ້ຫາມສົບ), ອີກ 3 ວັນ ໃຫ້ນຳເອົາໝໍຜີເອີ້ນວິນຍານຂອງຄົນ ຕາຍນັ້ນມາຢູ່ຮ້ານຜີທີ່ຫ້ອງເຮືອນ.

ປະເພນີເກີດລູກ:

ຕາມປົກກະຕິແລ້ວ ໄລຍະຖືພາບໍ່ໄດ້ ພັກວຽກ ແລະບໍ່ໄດ້ຄະລຳອາຫານ, ສະຖານທີ່ ເກີດລູກຢູ່ຕີນບ່ອນນອນ ແຕ່ຢູ່ກຳເຊິ່ງໜ້າກັບເຕົາ ໄຟ, ໃນເວລາເກີດລູກໄດ້ມີແມ່ຜົວ ແລະແມ່ຂອງ ຜູ້ເກີດລູກເປັນຜູ້ຊ່ວຍໃນການເກີດລູກ. ຫຼັງເກີດ ລູກຕ້ອງຢູ່ກຳ 30 ວັນ, 30 ຄືນ ໃຫ້ກິນອາຫານປະ ເພດໝູ, ໄກ່ ແລະປາເທົ່ານັ້ນ. ເວລາເດັກເກີດທຳ ອິດກໍ່ເອົາເດັກວາງໃສ່ກະດົ້ງ ເພື່ອໃຫ້ເດັກເປັນຄົນ ດຸໝັ່ນຂະຫຍັນພຽນມີປັນຍາດີຈັບກະດົ້ງຊົ່ວໄລ ຍະໜຶ່ງແລ້ວຜູ້ເປັນແມ່ເອົາກະດົ້ງດັ່ງກ່າວຍ້າຍໄປ ຫົວຂັ້ນໄດພ້ອມທັງເວົ້າວ່າ: ຖ້າແມ່ນລູກຜີໃຫ້ຜີ ເອົາ, ຖ້າບໍ່ແມ່ນລູກຜີເຮົາຈະເອົານັບແຕ່ມື້ນີ້ຕໍ່ ໄປບໍ່ໃຫ້ຜີເອົາອີກ, ແລ້ວກໍ່ເອົາເດັກໄປໄວ້ບ່ອນ ເກົ່າ. ຖ້າແມ່ນແມ່ຍິງ ກໍ່ມອບໄຫໜ້ຶງເຂົ້າເພື່ອໃຫ້ ນອນເດີກຕື່ນເຊົ້າ, ຖ້າແມ່ນຜູ້ຊາຍກໍ່ມອບແຫໃຫ້ ເພື່ອໃຫ້ນອນເດີກຕື່ນເຊົ້າເພື່ອໄປຫາປາ. ຮອດມື້ ທີ 31 ກໍ່ສູ່ຂວັນຜູ້ທີ່ຊ່ວຍເກີດລູກດ້ວຍເງິນ 5 - 10 ບີ້ ແລະຈັດພິທີໃສ່ຊື່ລູກ ໂດຍເອົາເຂົ້າສານ ແລະ ໄຂ່ໄກ່ດຳປອດໃສ່ຖ້ວຍແລ້ວເອົາໃຫ້ເດັກນ້ອຍວ່າ ເຈົ້າມັກຊື່ຫຍັງ? ໃຫ້ເລືອກເອົາເອງທັງເວົ້າທັງເອົາ ເຂົ້າສານໂຮຍໃສ່ໄຂ່ໄກ່ ຖ້າບໍ່ຕົກເປັນຄູ່ໆ ແມ່ນ ເອົາຊື່ນັ້ນເລີຍເປັນຕົ້ນ 4 ຄູ່, 6, 8,10,12 ຄູ່.

ການດຳເນີນຊີວິດທາງດ້ານເສດຖະກິດ ຂອງຊົນເຜົ່າຢ້ຳ ເຂົາເຈົ້າມີອາຊີບຫຼັກໃນການເຮັດ ນາປູກເຂົ້ານ້ຳ, ມີບາງຈຳນວນກໍ່ເຮັດໄຮ່, ເຮັດ ສວນ. ເຂົາເຈົ້າມີມູນເຊື້ອໃນການລ້ຽງສັດປະເພດ ຕ່າງໆ, ປູກພືດ ແລະຕົ້ນໄມ້ກິນໝາກນາໆຊະນິດ ທັງມີຄວາມຊຳນານງານໃນວິຊາຫັດຖະກຳຈັກ ສານ, ຕຳ່ຫູກທໍ່ໄໝ, ຕີເຫຼັກ ແລະອື່ນໆເພື່ອເສີມ ລາຍໄດ້ແກ່ຄອບຄົວ.

Yang

Historical background:

Most Yang live in the southern Yunan province of China, however, a small population lives in and around Phongsali province of Laos. They migrated into this area from Vietnam about 150 to 200 years ago.

The population of Yang in Laos numbers 4,630, which 2,284 are women, according to the second population census of 1995.

Name and language:

They are known as "Yang", which is their official name. They are also known as Giay or Nhang.

The language is a Tai-Kadai language of the Austro-Thai linguistic family. They do not have their own written script, but some Yang have adopted the script of the Lue people.

Society, beliefs, ceremonies and myths:

Yang villages will differ somewhat in their religious practices. Some villages are Buddhist due to Lue influence, while other villages are more animistic, following their beliefs in local spirits such as the spirit of the village, the spirit of the house, and the spirits of ancestors and natural attributes such as the forest. Villages also have shamans and sorcerers to help in communicating with spirits or in healing the ill.

The Yang also believe in the 32 *kwans* as the Lao people also believe in. These 32 spirits in the body oversee a bodily organ must be appeased with sacrifices and rituals to keep one's health.

Yang society consists of nuclear family units. They are monogamous. Dowries consist of two pigs, some silver, and some money and rice whiskey. After marriage the man will move into the wife's household for a period of up to three years. The Yang will intermarry with the Lue and the Tai Dam.

During pregnancy the mother does not work much and will give birth in the bedroom with a midwife or with the mother-in-law assisting. On the thirty-first day after birth there will be a ceremony to name the baby.

Yang who die at the age of 70 or over will be cremated. Younger people will be buried. The bodies of the older dead are mourned at home in a ceremony that lasts from one to seven days. If a child or teenager dies, then the body is buried the same day.

Village and house:

The Yang live in lower villages, at altitudes between 400 and 800 meters. They like to live near streams and rivers in order to have good irrigation for their rice farming. The villages are small, about 20 to 50 houses. In some villages the Yang build their houses on the ground, and other villages they build their houses on stilts.

A house will have a large living area plus a small kitchen. Family members will sleep in the corner of the living room. Under the house will be a rice-husker and a loom for weaving. Firewood will also be kept under the house. Yang do not like to keep animals under their house.

Costume:

Yang costumes will vary with the location of their village. However, most Yang women will wear a long sleeved vest with Lue-styled *phaa sins*. The vest is often dark or light blue. They will often wear a turban. The men will wear baggy trousers of dark blue and a vest that fastens on the side.

Agriculture and livelihood:

The Yang grow glutinous rice in flooded fields. They also know how to grow dry-land rice using slash-and-burn methods. Rice is the most important crop, but they also grow corn, cassava, pineapples and many kinds of vegetables. Cotton is also commonly grown, plus some coffee.

The Yang like to raise buffalos, horses, pigs, and poultry. Those near the river will fish with traps and nets. Edible foodstuffs are found in the forest to supplement their diet. Small game such as squirrels and birds will be hunted with simple weapons. They also have the practice of catching young bears by killing the mothers. These will be sold to the Chinese.

The women are skillful and busy weavers, weaving cotton products for sale and personal use. The men make baskets and mats from bamboo.



ເຮືອນບູຮານຂອງຊົນເຜົ່າຢັ້ງ

ຊົນເຜົ່າ ລາວ ປະຫວັດຄວາມເປັນມາ.

ຊົນເຜົ່າລາວ ເປັນຊົນເຜົ່າໜຶ່ງ ທີ່ເກົ່າແກ່ບູຮານ ແລະຕັ້ງຖິ່ນຖານຢູ່ດິນດອນຕອນນີ້ໄດ້ຫຼາຍຮ້ອຍປີແລ້ວ. ຊົນເຜົ່າລາວມີຖິ່ນຖານເດີມ ແລະເຄື່ອນຍ້າຍມາຈາກໃສ ? ເວລາໃດ ? ບັນຫານີ້ນັກຄົ້ນຄວ້າທັ້ງຫຼາຍໃນອະດີດ ແລະປະຈຸບັນທັ້ງຢູ່ລາວເຮົາ ແລະຕ່າງປະເທດໄດ້ມີຂໍ້ສົມມຸດສັນນິຖານທີ່ແຕກຕ່າງກັນ. ແຕ່ສ່ວນຫຼາຍແມ່ນມີທ່າອ່ຽງວ່າຖິ່ນຖານເດີມຂອງຊົນເຜົ່າລາວ ຢູ່ບໍລິເວນແມ່ນ້ຳຂອງຕອນເໜືອ, ທີ່ຮາບລຸ່ມແມ່ນ້ຳຍັງຊີກ ງ ພາກໃຕ້ຂອງຈີນ. ໄດ້ເຄື່ອນຍ້າຍ ແລະອົບພະຍົບລົງມາທາງໃຕ້ຂອງ ຈີນ ແລ້ວເຂົ້າສູ່ແຫຼມອິນດູຈີນ ພາຍຫຼັງການແຜ່ອຳນາດຂອງພວກມົງໂກນ ພ້ອມກັບການເຊື່ອມເສຍບົດບາດຂອງບັນດາຊົນເຜົ່າໃນໝວດພາສາມອນ - ຂະແມ ທີ່ອາໄສຢູ່ຖິ່ນຖານນີ້ກ່ອນ.

ປະຈຸບັນຊົນເຜົ່າລາວອາໄສ ແລະດຳລົງຊີວິດຢູ່ທົ່ວທຸກແຂວງຂອງລາວເຮົາ. ນອກຈາກມີຢູ່ລາວແລ້ວຊົນເຜົ່ານີ້ຍັງມີຢູ່ປະເທດໄທ, ຫວຽດນາມ ແລະກຳປູເຈຍ ຊົນເຜົ່າລາວ ເປັນຊົນເຜົ່າທີ່ມີພົນລະເມືອງຫຼາຍກວ່າຊົນເຜົ່າອື່ນໆ. ຕາມການສຳຫຼວດພົນລະເມືອງທົ່ວປະເທດ ຄັ້ງທີ II ປີ 1995 ມີຈຳນວນ 2.403.819 ຄົນ, ຍິງ 1.215.748 ຄົນ. ເທົ່າກັບ 52,5 % ຂອງຈຳນວນພົນລະເມືອງທົ່ວປະເທດ.

ຊື່ເອີ້ນ

ຊົນເຜົ່ານີ້ເອີ້ນຕົນເອງວ່າ " ລາວ " ຊົນເຜົ່າອື່ນເອີ້ນກໍ່ແມ່ນ " ລາວ " ແລະຊື່ທີ່ເຂົ້າເຈົ້າມັກທີ່ສຸດ ກໍ່ແມ່ນ " ຊົນເຜົ່າລາວ ". ສ່ວນຄຳວ່າ " ລາວ " ມີຄວາມໝາຍແນວໃດ, ມີກຳເນີດເຫງົ້າກໍມາແຕ່ໃສ ແລະເປັນຫຍັງຈຶ່ງເອີ້ນວ່າ " ລາວ " ນັກສຶກສາ ແລະນັກປະຫວັດສາດ ໄດ້ສົນນິຖານໄປຫຼາຍຢ່າງແຕກຕ່າງກັນ ເຊັ່ນຄຳວ່າ " ລາວ " ມາຈາກ ເຫຼ, ລົວ, ລາວ, ລ້ຽວ, ດາວ ແລະອື່ນໆ ເປັນຕົ້ນ. ສະນັ້ນ ຈຶ່ງບໍ່ສາມາດຮູ້ຄວາມໝາຍຢ່າງຄັກແທ້ແນ່ນອນ.

ຊົນເຜົ່າລາວ ປະກອບດ້ວຍຫຼາຍແຊ ຫຼື ຂະແໜງ ເຊັ່ນ: ພວນ, ກະເລິ, ບໍ, ໂຍ ແລະຢໍ ເປັນຕົ້ນ.

ພາສາ

ພາສາຂອງຊົນເຜົ່າລາວ ຈັດຢູ່ໃນໝວດພາສາລາວ-ໄຕ. ຊົນເຜົ່າລາວມີຕົວໜັງສືຂຽນ ແລະໄດ້ເປັນຕົວໜັງສືທີ່ໃຊ້ໃນທາງລັດຖະການ. ພາສາປາກເວົ້າ ກໍ່ເປັນພາສາກາງຂອງທຸກຊົນເຜົ່າໃນວົງຄະນາຍາດແຫ່ງຊາດລາວ.

ຮີດຄອງປະເພນີ, ຄວາມເຊື່ອຖື, ວັດທະນະທຳ ແລະ ສັງຄົມ.

ຊົນເຜົ່າລາວ ເປັນຊົນເຜົ່າທີ່ມີຮີດຄອງປະເພນີ, ວັດທະນະທຳ ທີ່ຫຼວງຫຼາຍ ແລະອຸດົມສົມບູນ. ຊົນເຜົ່ານີ້ນັບຖືພຸດທະສາສະໜາ ໂດຍມີວັດວາອາຮາມ ເປັນສູນກາງ ເປັນທີ່ເພິ່ງອັນສຳຄັນ,

ເປັນບ່ອນເຕົ້າໂຮມຄວາມສາມັກຄີຂອງຊຸມຊົນ, ບ່ອນເຕົ້າໂຮມດ້ານຮີດຄອງປະເພນີ ແລະຫຼັກທຳຄຳສອນທາງສາສະໜາ. ພ້ອມກັນນີ້ ກໍ່ຍັງມີຄວາມເຊື່ອຖືຜີ ເຊັ່ນ: ຜີພໍ່, ຜີແມ່, ຜີເຮືອນ, ຜີບ້ານ, ຜີເມືອງ, ຜີແມ່ນ້ຳ, ຜີປ່າຊ້າ ແລະອື່ນໆ.

ໂຄງສ້າງທາງສັງຄົມ,ລະບົບຄອບຄົວ ເລືອດເນື້ອເຊື້ອສາຍຕະກຸນ ເປັນລັກສະນະຄອບຄົວດ່ຽວ ແລະສືບຕະກຸນທາງພໍ່ , ມີປະເພນີແບບຜົວດຽວ, ເມຍດຽວ, ເປັນຄອບຄົວທີ່ຖືວ່າພໍ່ເປັນຜູ້ນຳ ຫຼືມີອຳນາດໃນຄອບຄົວ, ມີການເຄົາລົບນັບຖືຜູ້ອາວຸໂສຕາມລຳດັບ. ສຳລັບຊີວິດຫຼັງການແຕ່ງດອງຂອງຄູ່ຜົວ, ເມຍນັ້ນວ່າຈະຢູ່ກັບພໍ່ແມ່ຂອງແມ່ຍິງ ຫຼືພໍ່ແມ່ຂອງຜູ້ຊາຍ ຂຶ້ນຢູ່ກັບການຕົກລົງຂອງທັງສອງຝ່າຍ, ແຕ່ໂດຍທົ່ວໄປຄູ່ຜົວເມຍຈະມັກຢູ່ນຳເຮືອນພໍ່ແມ່ຂອງແມ່ຍິງຄືຢູ່ກັບພໍ່ເຖົ້າ, ແມ່ເຖົ້າ ຫຼາຍກວ່າ ຫຼືບໍ່ກໍ່ມັກຈະອອກເຮືອນໄປຢູ່ລຳພັງອິດສະຫຼະ.

ລັກສະນະເຮືອນຂອງຊົນເຜົ່າລາວ, ຕາມປະເພນີແລ້ວຊົນເຜົ່າລາວມັກປຸກເຮືອນແບບເຮືອນຮ້ານ, ກ່ອນຈະປຸກເຮືອນ ຫຼືຕັ້ງເຮືອນ ແຕ່ລະຄັ້ງຈະຕ້ອງເຮັດພິທີ ເພື່ອຂໍອະນຸຍາດນຳເຈົ້າຖິ່ນເຈົ້າຖານເສຍກ່ອນ ແລ້ວຈຶ່ງຂຸດບ່ອນຝັງເສົາ. ໂດຍຈະເລີ່ມຈາກເສົາຂວັນ, ຊຶ່ງສ່ວນຫຼາຍແລ້ວມັກຈະເອົາເຄື່ອງສິນ, ຂັນທີ່ສານດ້ວຍໄມ້ປ່ອງ, ຕົ້ນກ້ວຍ, ຕົ້ນອ້ອຍມັດໃສ່ພ້ອມທັງຕິດຄາຖາ ຫຼື ຍັນໃສ່ແລ້ວ ຈຶ່ງເອົາເສົາອື່ນໆ ລົງຕາມໆກັນ. ຊົນເຜົ່າລາວມັກຈະປຸກເຮືອນແຕ່ 3 ຫ້ອງຂຶ້ນໄປ, ການຈັດແບ່ງຫ້ອງພາຍໃນເຮືອນ ແມ່ນອີງຕາມຈຳນວນສະມາຊິກຂອງຄອບຄົວ, ເຊິ່ງອາດຈະແບ່ງເຮືອນອອກເປັນສອງສ່ວນຄື: ສ່ວນຫນຶ່ງແມ່ນເອົາໄວ້ສຳລັບນອນ ຮັບແຂກ ແລະອີກສ່ວນຫນຶ່ງ ເປັນສະຖານທີ່ແຕ່ງຢູ່ຄົວກິນ.

ລັກສະນະຂອງເຮືອນຈະປັ່ນໜ້າໃສ່ທິດເໜືອ ແລະປັ່ນຫຼັງໃສ່ທິດໃຕ້. ຂັ້ນໄດຂຶ້ນເຮືອນເຂົ້າເຈົ້າມັກຈະເຮັດຢູ່ທາງໜ້າ ເອີ້ນວ່າຂັ້ນໄດເຊຍ ແລະທາງດ້ານຫຼັງ ເອີ້ນວ່າຂັ້ນໄດຊານ. ຂັ້ນໄດຈະປະກອບດ້ວຍຈັກຂັ້ນກໍ່ຕາມ, ແຕ່ຈະຕ້ອງເປັນຂັ້ນຄີກ ເຊັ່ນ: 3, 5, 7, 9 ເຫຼົ່ານີ້ເປັນຕົ້ນ. ກ້ອງຕະລ່ຽງເຮືອນ ຈະເປັນສະຖານທີ່ເກັບມ້ຽນເຄື່ອງອຸປະກອນການຜະລິດຕ່າງໆ ແລະໃນເມື່ອກ່ອນບໍ່ທັນມີໂຮງສີເຂົ້າ ເຂົາເຈົ້າມັກຈະເຮັດຄົກມອງຕຳເຂົ້າຢູ່ໃກ້ກັບຂັ້ນໄດເບື້ອງທາງໜ້າ.

ຍ້ອນວ່າຊົນເຜົ່າລາວ ມີເອກະລັກທາງດ້ານ ຮີດຄອງປະເພນີ, ຄວາມເຊື່ອຖື, ມີຄ່ານິຍົມສະເພາະເພື່ອເປັນສິ່ງກຳນົດແບບຄວາມປະພຶດຊຶ່ງສ່ວນໃຫຍ່ຈະ ຮຽບຮ້ອຍກິລິຍາທ່າທາງ ແລະມີສຳນຳຄາລະວະອ່ອນນ້ອມຕໍ່ຜູ້ອາວຸໂສ. ສະນັ້ນ ແຂກຄົນພາຍນອກ ຈະຂຶ້ນເຮືອນຕ້ອງໄດ້ປົດເກີບ, ປົດໝວກເພື່ອສະແດງເຖິງຄວາມເຄົາລົບນັບຖືຜູ້ເປັນເຈົ້າຂອງເຮືອນ, ພ້ອມກັນນີ້ຈະຂຶ້ນເຮືອນທາງໜ້າ ແລ້ວລົງທາງຫຼັງ ກໍ່ບໍ່ຖືກຕ້ອງກັບປະເພນີ ແລະການທີ່ແຂກຄົນພາຍນອກ ຫຼືຄົນໃນເຮືອນຈະເຂົ້າຫ້ອງນອນຂອງກັນ ແລະກັນນັ້ນຖືວ່າບໍ່ສຸພາບ ແລະຂາດມາລະຍາດ ໂດຍສະເພາະ

ແມ່ນຫ້ອງນອນຂອງພໍ່, ແມ່ຜູ້ເປັນເຈົ້າຂອງເຮືອນ.

ສຳລັບເຄື່ອງນຸ່ງຫົ່ມ ແລະການແຕ່ງກາຍຕາມປະເພນີຂອງຊົນເຜົ່າລາວແລ້ວ ແມ່ນມີເອກະລັກສະເພາະ, ເພດຍິງ ແລະເພດຊາຍນຸ່ງເຄື່ອງບໍ່ຄືກັນ. ເພດຊາຍຕັດຜົມສັ້ນ, ນຸ່ງເສື້ອຄໍມົນແຂນບັ້ງ, ມັດແໜ່ງຢູ່ໜ້າເອິກ, ໂສ້ງຫົວຮູດ ຫຼືຜ້າສະໂຫ້ງ. ເພດຍິງຈົ່ງຜົມຍາວແລ້ວເກົ້າຜົມຄຸມດ້ວຍສ້ອຍເງິນ, ຄຳ ຫຼືໝາກປັດ, ເອົາປິ່ນເກົ້າປັກຄັດໃຫ້ແໜ້ນ. ເຄື່ອງປະດັບໃສ່ຕູ້ມຫູ, ສ້ອຍຄໍ, ນຸ່ງເສື້ອຄໍມົນແຂນບັ້ງ, ພາດຜ້າບ່ຽງ ແລະນຸ່ງສິ້ນ. ທັງໝົດນັ້ນແມ່ນການນຸ່ງຫົ່ມ, ເຄື່ອງນຸ່ງຈາກຜ້າແພທີ່ເຂົາເຈົ້າຜະລິດເອົາເອງ ເປັນຕົ້ນ ແມ່ນຜ້າດຳນິນ, ຜ້າໄໝມ້ອນ ແລະອື່ນໆ.

ຊົນເຜົ່າລາວ ມີຮີດສິບສອງຄອງສິບສີ່ ຮີດຍີ່ຄອງຈຽງ, ຮີດຜົວຄອງເມຍ. ເຂົາເຈົ້າມີຄວາມເຊື່ອໃນພຸດທະສາສະໜາທີ່ວ່າ ຖ້າທຳດີຈະໄດ້ດີ ຖ້າທຳຊົ່ວຈະໄດ້ຊົ່ວ ແລະການເຮັດບຸນສົນກິນທານໃນຊາດນີ້ ເພື່ອທີ່ຈະໄດ້ເປັນການສະສົມ, ເກີດດອກອອກຜົນ ແລະສະໜອງຕອບໃນຊາດໜ້າ (ຖ້າຊາດນີ້ຍັງບໍ່ໄດ້ຜົນຕອບແທນ). ສະນັ້ນ ໃນປີໜຶ່ງເຂົາເຈົ້າ ຈະມີບຸນຕາມຮີດຄອງປະເພນີທຸກໆເດືອນ. ແຕ່ບຸນປະເພນີທີ່ສຳຄັນໄດ້ແກ່ບຸນປີໃໝ່ລາວ, ບຸນຊ່ວງເຮືອ, ບຸນບັ້ງໄຟ, ບຸນກະຖິນ, ບຸນກອງບວດ ແລະອື່ນໆ.


ນອກຈາກນີ້ແລ້ວເຂົາເຈົ້າຍັງມີປະເພນີກ່ຽວກັບການເກີດ ຊຶ່ງເລີ່ມແຕ່ໄລຍະຖືພາ ມີຂໍ້ຫ້າມແລະການຄະລຳທີ່ສຳຄັນຄື: ຫ້າມເບິ່ງຜູ້ອື່ນເກີດລູກ, ຫ້າມໄປເຜົາສົບ, ຫ້າມເບິ່ງຄົນພິການ, ຫ້າມກິນສິ່ງຕ່າງໆ ແລະອື່ນໆ. ການເກີດລູກຈະເກີດຢູ່ໃນເຮືອນໂດຍເພິ່ງພາອາໃສໝໍຕຳແຍ, ໝໍມົນ ແລະຜູ້ທີ່ມີປະສົບການ ຄອຍໃຫ້ຄວາມດູແລຊ່ວຍເຫຼືອ. ມີການຢູ່ໄຟ, ມີການຄະລຳອາຫານ ແລະມີການສູ່ຂວັນເດັກກັບແມ່ ຫຼັງຈາກການຢູ່ໄຟ.

ສຳລັບປະເພນີ ກ່ຽວກັບການຕາຍ ຊຶ່ງເປັນສິ່ງທີ່ບໍ່ມີໃຜປາຖະໜາ, ແຕ່ກໍ່ເປັນສິ່ງທີ່ທຸກຄົນໜີບໍ່ພົ້ນ. ສະນັ້ນຜູ້ຢູ່ເບື້ອງຫຼັງກໍ່ຈະຈັດພິທີປົງສົບຕາມຂັ້ນຕອນຕາມຄວາມເໝາະສົມກັບຖານະຄອບຄົວ, ຈາກນັ້ນກໍ່ສົ່ງສະການດ້ວຍການຈູດ, ເກັບດູກ ແລະເຮັດບຸນສົນກິນທານໃຫ້.

ເອກະລັກດ້ານວັນນະຄະດີ ແລະສິລະປະນັ້ນຊົນເຜົ່າລາວ ໃນແຕ່ລະທ້ອງຖິ່ນ ຈະມີກອນຂັບລຳ, ມີຄຳສຸພາສິດ, ຄຳຜະຫຍາ, ຄຳໂຕ່ງໂຕຍ ແລະອື່ນໆ ທີ່ແຕກຕ່າງກັນຕາມສຽງສຳນຽງ. ມີແຄນເປັນເອກະລັກທາງດ້ານເຄື່ອງດົນຕີ ເພື່ອເປົ່າປະສານກັບການຂັບລຳ ແລະຮ້ອງເພັງ. ຊົນເຜົ່າລາວ ມີຄຳເວົ້າຕ່ຳໆກັນມາວ່າ ຢູ່ເຮືອນຮ້ານ, ກິນເຂົ້າໜຽວຈ້ຳປາແດກ ແລະເປົ່າແຄນ ແມ່ນເອກະລັກອັນແທ້ຈິງ ຂອງເຂົາເຈົ້າ.

ການດຳເນີນວິຖີຊີວິດທາງ ດ້ານເສດຖະກິດ.

ຊົນເຜົ່າລາວ, ເຂົາເຈົ້າມີອາຊີບແບບປະສົມປະສານ ແຕ່ຕົ້ນຕໍ ແມ່ນການເຮັດນາ, ເຮັດໄຮ່ປູກເຂົ້າ, ເຮັດສວນຄົວປູກພືດຜັກ ແລະລ້ຽງສັດຕາມລະດູການຜະລິດ ໃນວົງຈອນຊີວິດຮອບປີໜຶ່ງໆ ໂດຍອີງໃສ່ປະຕິທິນຕາມເດືອນລາວ ຊຶ່ງແຕກຕ່າງຈາກປະຕິທິນສາກົນ. ພ້ອມກັນນີ້ ກໍ່ຍັງເຮັດການຄ້າຂາຍນ້ອຍເພື່ອເສີມລາຍໄດ້ແກ່ຄອບຄົວ ກ່ອນຈະທຳການຜະລິດ, ປູກພືດພັນທັນຍາຫານ, ໄປຊອກຢູ່ຫາກິນ ແລະອື່ນໆໃນຊີວິດປະຈຳວັນເຂົາເຈົ້າຈະມີການໄລ່ມື້ໄລ່ຍາມຢ່າງຄັກແນ່ເຊັ່ນວ່າມື້ ໃດເປັນມື້ງາມຍາມດີ ແລະບໍ່ດີຄື: ມື້ວັນສິນດັບ, ມື້ຮ້ອງ, ມື້ຮວາຍ, ເດືອນດັບ, ເດືອນເພັ້ງເຫຼົ່ານີ້ເປັນຕົ້ນ.



Lao

Historical background:

The Lao people have settled in Lao for hundreds of years, even maybe as far back as six hundred years, which are the oldest written archeological evidence. The original territory of the Lao is thought to be north of the Mekong River, to the Plane of Ngang Sikhieng River that is located in southern China.

Now, the Lao live in every province of today's Lao PDR. They also live in Thailand, Vietnam and Cambodia. The northeastern Thais are culturally and linguistically almost the same people.

They are the largest group in Laos, numbering 2,403,819 people. Females number 1,218,748 persons, or 52.5 percent.

Name and language:

Lao is the official name and the most common name. Historians are not sure where the name "Lao' comes from. There are several myths concerning the Lao culture emerging from a gourd, and perhaps this word came from this. There are sub-groups of the Lao. These include Pouan, Kaleung, Bo, Ngoy and Ngo.

The language is an Austro-Thai language and is in the Tai-Kadai language group on this language tree. They have their own written script. It is also the official language of government and used by every ethnic group in Laos.

Society, beliefs, ceremonies and myths:

The Lao have a rich cultural tradition. They have followed Theravada Buddhism for centuries. In this Buddhism are practices of local animism. They believe in spirits, known as *phi,* that reside in all things, such as villages, houses, forests, rivers, the sky, crops and their own ancestors.

Every village will have a temple and it is usual for every family to have at least one son enter the monk-hood for a period of about two years.

The Lao have 12 customs (Hith sipsong) that means they will make merit in each month of the year. They have many other merit days (van boon) also, according to the traditional custom of each month. The significant festivals are the Lao New Year, which includes a boat racing festival, and Bounkathin, which is the offering of robes to monks, plus the time for males to enter the priest-hood (Bounkong).

The Lao people believe in kwans, which are bodily spirits. There are 32 kwans in each person, and each is thought to be a guardian of a certain organ in the body. They are thought to occasionally wonder from the body, and if this is seen as a problem, then a ceremony is performed to bring the kwans back.

Today Lao families are generally nuclear, with perhaps several generations under the same roof. Men are monogamous, and both husband and wife will decide family issues. The husband is the head of the family, but the women may be more industrious economically and control the finances. They will intermarry with all other groups in Lao. When they marry other Laos, it is normal for the husband to move into the wife's family. Inheritance is usually matrilineal, often to the youngest daughter, as she will normally take care of parents in their old age.

The deceased are cremated in the temple compound. Buddhist monks will chant incantations. Drinks and food will be offered to family and friends for several days in a festive party. This may be a costly affair for the family, and some families can ill afford the cost.

Village and house:

The Lao live in established villages, generally in the lowland. The most prominent structure in the small villages is usually the temple. Their traditional homes are large and comfortable, and usually sit on wooden or concrete poles or stilts. They are generally made of wood, cement or bamboo with thatched or tin roofs. Usually there is a large living room with two or three sleeping areas that are walled off. The front of house is straight to the north and the other end to the south. A ladder is at the front of the house and also at the back balcony. The ladder always has an odd number of rungs.

The space under the house is used for agricultural equipment and animals. In the past the rice husker was kept under the house. When visitors visit, they always take off their hat and shoes when entering the house.

Costume:

Lao women wear traditional sarongs, known as phaa sin, which are usually made of silk, they made be very intricately woven, with many colors and designs. With this they wear a short-sleeved multi-colored blouse that will have shoulder sash which runs diagonally from the right hip to the left shoulder. A silver belt will finish the costume. They will also wear their hair up in a bun.

The men will wear long trousers and shirts. At home they will wear a light cotton cloth wrapped around the waist called a *panong*.

Agriculture and livelihood:

The Lao have many occupations, but most are farmers. They are skilled farmers of both glutinous and ordinary rice. There is a saying that when you find sticky rice, you will find Lao people, who are very fond of eating sticky rice with fermented fish paste.

Besides rice, Lao farmers grow vegetables, tobacco, cotton, fruit, cassava, and many other crops. They also practice fish farming and the raising of silkworms in mulberry trees.

Animal raised includes buffalo, cattle, pigs, poultry, and dogs. Some are involved in the logging business in which elephants are still used. They will fish in the rivers and lakes using traps and nets.

ຊົນເຜົ່າ ລື້
ປະຫວັດຄວາມເປັນມາ

ຊົນເຜົ່າລື້ ແມ່ນຊົນເຜົ່າໜຶ່ງຂອງວົງຄະນະຍາດລາວ ເຊິ່ງໄດ້ມາ ຕັ້ງຖິ່ນຖານ ແລະທຳມາຫາກິນຢູ່ປະເທດລາວ ພ້ອມດຽວກັນກັບຊົນເຜົ່າໃນໝວດພາສາ ລາວ - ໄຕ. ຊົນເຜົ່ານີ້ໄດ້ອົບພະຍົບແລະເຄື່ອນຍ້າຍມາຈາກພາກໃຕ້ ແລະພາກຕາເວັນອອກສ່ຽງໃຕ້ຂອງຈີນ ບໍລິເວນມົນທົນ 12 ພັນນາ ເຂົ້າສູ່ບັນດາແຂວງພາກເໜືອຂອງລາວເຮົາໃນຕອນທ້າຍສະຕະວັດ ທີ XIII ເປັນຕົ້ນມາ.

ປະຈຸບັນນີ້ຊົນເຜົ່າລື້ ທີ່ອາໃສຢູ່ ສ.ປ.ປ. ລາວ ສ່ວນຫຼາຍຕັ້ງຖິ່ນຖານ ແລະທຳມາຫາກິນຢູ່ບັນດາແຂວງພາກເໜືອເຊັ່ນ: ແຂວງຜົ້ງສາລີ, ຫຼວງນ້ຳທາ, ບໍ່ແກ້ວ, ອຸດົມໄຊ,ໄຊຍະບູລີ ແລະຫຼວງພະບາງເຫຼົ່ານີ້ເປັນຕົ້ນ. ນອກຈາກມີຢູ່ລາວແລ້ວ ຊົນເຜົ່າລື້ຍັງມີຢູ່ ຈີນ, ມຽນມາ ແລະຫວຽດນາມ. ຈຳນວນພົນລະເມືອງຂອງຊົນເຜົ່າລື້ ຢູ່ໃນລາວມີທັງໝົດ 119.191 ຄົນ, ຍິງ 60.475 ຄົນ, ເທົ່າກັບ 2,6 % ຂອງຈຳນວນພົນລະເມືອງທົ່ວປະເທດ (ການສຳຫຼວດພົນລະເມືອງ ຄັ້ງທີ II ປີ 1995).

ຊື່ເອີ້ນ

ຊົນເຜົ່ານີ້ເອີ້ນຕົນເອງວ່າ: "ລື້" ຊົນເຜົ່າອື່ນເອີ້ນໃຫ້ເຂົາເຈົ້າກໍ່ແມ່ນ "ລື້",ຊື່ທີ່ເຂົາເຈົ້ານັກ ແລະຊື່ທີ່ໃຊ້ທາງການໃນປະຈຸບັນກໍ່ແມ່ນ "ຊົນເຜົ່າລື້".ສຳລັບການເອີ້ນຊື່ວ່າ :" ລື້,ໄທລື້,ໄຕລື້ " ນີ້ຕາມຂໍ້ມູນປຶ້ມພິງສາວະດານລາວໄດ້ຊຽນວ່າ ແມ່ນພວກທີ່ຍັງຕົກຄ້າງຢູ່ດິນຈີນຕອນໃຕ້ ຫຼືມົນທົນຢູນານ ພາຍຫຼັງທີ່ລາວໄດ້ເສຍອານາຈັກ ແລະພາກັນແຍກອອກເປັນຫຼາຍຈູ້ມ, ຫຼາຍພວກ ພ້ອມກັບການປະຊຸ່ເດີ່ມ ແລະເອີ້ນກັນດ້ວຍຊື່ໃໝ່ ແຕ່ກໍ່ຍັງເອີ້ນຕົນເອງວ່າ: "ໄທ" ເພື່ອສະແດງໃຫ້ຮູ້ວ່າເປັນພວກດຽວກັນ.

ອີກຢ່າງໜຶ່ງຄວາມໝາຍຂອງຄຳວ່າ"ລື້" ແມ່ນມາຈາກສອງຄຳເຫັນຕ່າງກັນຄື: ຄຳເຫັນໜຶ່ງວ່າມາຈາກຄຳວ່າ " ດ໊ື " ແລະຄຳເຫັນທີ່ສອງແມ່ນມາຈາກຄຳວ່າ " ລືຊາ ". ຈາກສອງຄຳເຫັນດັ່ງກ່າວຈະເປັນ " ລື ຫຼື ດ໊ື "ກໍ່ຕາມ, ແຕ່ປະຈຸບັນເຂົາເຈົ້າກໍ່ມັກຊື່ລື້ ດັ່ງທີ່ໄດ້ກ່າວມາ. ຊົນເຜົ່າລື້ປະກອບດ້ວຍແຊງດຽວຄື ເຂີນຫຼ ຂຶນ .

ພາສາ

ຊົນເຜົ່າລື້ ມີພາສາປາກເວົ້າ ສະເພາະຂອງຕົນເອງ ຊຶ່ງຈັດຢູ່ໃນໝວດພາສາລາວ-ໄຕ. ພ້ອມກັນນີ້ເຂົາເຈົ້າຍັງມີຕົວໜັງສືຂຽນ ເຊິ່ງສ່ວນຫຼາຍຈະພົບເຫັນຢູ່ໃນໃບລານ. ຕົວອັກສອນ ຫຼື ຕົວໜັງສືຂຽນຂອງຊົນເຜົ່າລື້ ຄ້າຍຄືຕົວທຳ.

ຮີດຄອງປະເພນີ, ຄວາມເຊື່ອຖື ວັດທະນະທຳ ແລະສັງຄົມ

ຊົນເຜົ່າລື້ມີຮີດຄອງປະເພນີ, ຄວາມເຊື່ອຖື ແລະວັດທະນະທຳຄ້າຍຄືຊົນເຜົ່າລາວ. ເຂົາເຈົ້າມີຄວາມເຊື່ອ ແລະນັບຖືພຸດທະສາສະໜາທີ່ຂ້ອນ

ຂ້ຽງເຄັ່ງຄັດ ແລະໜຽວແໜ້ນ ສັ່ງກັດຈາກສະຖານທີ່ທາງສາສະໜາທີ່ໃຫຍ່ໂຕ, ກວ້າງຂວາງ ແລະສະຫງ່າງາມ. ຮີດຄອງທາງສາສະໜາ ແມ່ນຈະຕ້ອງສົ່ງລູກຫຼານ (ຜູ້ຊາຍ) ທີ່ມີອາຍຸແຕ່ 10 ປີ ຂຶ້ນໄປເຂົ້າບວດໃນວັດຊ່ວງໄລຍະເວລາໃດໜຶ່ງແລ້ວຈຶ່ງສິກອອກມາສ້າງຄອບຄົວ ຫຼືເຮັດວຽກງານອື່ນໆ. ນອກຈາກການນັບຖືສາສະໜາພຸດ ແລ້ວຍັງເຊື່ອຖືຜີ ເຊັ່ນ: ຜີພໍ່ແມ່, ຜີເຮືອນ, ຜີບ້ານ ແລະຜີເມືອງ ເປັນຕົ້ນ.

ໂຄງສ້າງທາງສັງຄົມແບບດັ້ງເດີມຂອງຊົນເຜົ່າລື້ນັ້ນ ມີ 6 ຊັ້ນ ຄື: ພໍ່ລ່ຳ, ໝື່ນ, ແສນ, ຈ່າ, ເພຍ ແລະພະຍາ. ສຳລັບ 5 ຊັ້ນ ນອກຈາກພະຍາແລ້ວຈະແມ່ນຄົນຢູ່ໃນຕະກຸນໃດ ກໍ່ສາມາດເປັນໄດ້, ຖ້າຫາກບຸກຄົນນັ້ນມີບົດບາດໃນສັງຄົມ, ແຕ່ສະເພາະຊັ້ນທີ່ 6 ຕ້ອງແມ່ນການສືບທອດຕາມຕະກຸນ. ສະນັ້ນເຂົາເຈົ້າຈຶ່ງມີລະບົບຕະກຸນ, ຊົງຊາວ ຄືກັນກັບຊົນເຜົ່າອື່ນໆໃນໝວດພາສາລາວ - ໄຕ ໂດຍຈະເອົາຊື່ສັດມາເປັນຊື່ຂອງຕະກຸນ ຫຼືຊົງຊາວ ເຊັ່ນ: ສົງນິກຕັ່ງລໍ, ສົງນິກວາກ, ສົງເສືອ ແລະອື່ນໆເຂົາເຈົ້າຖືວ່າຄົນທີ່ຢູ່ໃນຕະກຸນ ຫຼືຊົງຊາວດຽວກັນເປັນພີ່ນ້ອງກັນແລະຕ້ອງໃຫ້ການຊ່ວຍເຫຼືອເຊິ່ງກັນ ແລະກັນໃນກິດຈະກຳຕ່າງໆ.

ພ້ອມກັນນີ້ແຕ່ລະສົງຊາວຈະມີຂໍ້ຫ້າມ ແລະການຄະລຳທີ່ແຕກຕ່າງກັນອອກໄປເລັກນ້ອຍ ໂດຍສະເພາະແມ່ນການຫ້າມຂ້າ ແລະກິນຊີ້ນສັດ ທີ່ຖືວ່າເປັນຊົງຂອງຕົນເອງ ທັງນີ້ກໍ່ເພື່ອສະແດງເຖິງຄວາມເຄົາລົບນັບຖືຕາມທີ່ບັນພະບຸລຸດໄດ້ອົບຮົມສັ່ງສອນສືບຕໍ່ກັນມາ. ສ່ວນການສືບເຊື້ອຕະກຸນຂອງນັ້ນສ່ວນຫຼາຍ ແລ້ວຈະຖືທາງ ພໍ່ເປັນ ສຳຄັນ ຊີວິດ ຫຼັງຈາກການແຕ່ງດອງຂອງຄູ່ຜົວເມຍວ່າຈະຢູ່ນຳພໍ່, ແມ່ຂອງຝ່າຍໃດນັ້ນ, ແມ່ນຈະອີງໃສ່ການຕົກລົງຂອງທັງສອງຝ່າຍຄືຝ່າຍຊາຍ ແລະຝ່າຍຍິງ, ຕາມຮີດຄອງປະເພນີແລ້ວແມ່ນ ສາມປີໄປ, ສາມປີກັບ (ເປັນເຂີຍສາມປີ, ເປັນໄພ້ສາມປີ) ຈົນ ກວ່າຈະອອກໄປຕັ້ງເຮືອນຂອງຕົນເອງ ໃນກໍລະນີຈະເອົາເມຍມາຢູ່ນຳພໍ່, ແມ່ຂອງຕົນເລີຍນັ້ນ, ຜູ້ຊາຍຕ້ອງໄດ້ເສຍຄ່າສິນສອດເງິນທອງຂອງໝັ້ນເພີ່ມຕື່ມ (ຮີດຄອງແຕ່ກ່ອນຈະເວົ້າເປັນເງິນໝັ້ນ ຫຼືເງິນກີບເກົ່າ). ບາງກໍລະນີຜູ້ຊາຍຕ້ອງໄປຢູ່ນຳຄອບ ຄົວພໍ່ແມ່ຂອງແມ່ຍິງ (ໄປເປັນເຂີຍສູ່) ແລະແມ່ຍິງຕ້ອງໄປຢູ່ເຮືອນນຳຄອບຄົວພໍ່ແມ່ຂອງຜູ້ຊາຍ (ໄປເປັນໄພ້ສູ່) ກໍ່ໄດ້ຂຶ້ນຢູ່ກັບການຕົກລົງຂອງສອງຝ່າຍ ເຊັ່ນ: ເຮືອນມີລູກຊາຍດຽວ ຫຼືລູກສາວດຽວ. ເຂົາເຈົ້າມີປະເພນີແບບຜົວດຽວເມຍດຽວຄ້າຍຄືກັບຊົນເຜົ່າລາວ, ບ່າວ ແລະສາວ ມີເສລີພາບໃນການເລືອກຄູ່ຄອງ ກ່ອນທີ່ຈະສະເໜີໃຫ້ພໍ່, ແມ່ຈັດການແຕ່ງດອງໃຫ້, ແຕ່ກໍ່ມີຂໍ້ຫ້າມຄື ເປັນພີ່ນ້ອງໃນຕະກຸນດຽວກັນບໍ່ສາມາດແຕ່ງດອງນຳກັນໄດ້, ອີກຂໍ້ຫ້າມໜຶ່ງກໍ່ຄືບໍ່ໃຫ້ເອົາຜົວ-ເມຍໄຂ່ວກັນ ເພາະເຂົາເຈົ້າຖືວ່າເປັນການບໍ່ດີຕໍ່ພີ່ນ້ອງ.

ລັກສະນະບ້ານເຮືອນ ຂອງຊົນເຜົ່າລໍ້ ເຂົາເຈົ້າມັກຕັ້ງບ້ານຢູ່ບ່ອນທີ່ຮາບພຽງ, ຕາມລ້ອງແມ່ນ້ຳທີ່ມີເງື່ອນໄຂສະດວກໃນການເຮັດນາ. ຮູບແບບເຮືອນເປັນເຮືອນຮ້ານສູງ, ແຕ່ກ່ອນນິຍົມຕັ້ງເຮືອນໃຫຍ່, ເຮືອນແຝດ (ສອງຫຼັງຄາຮ່ວມພື້ນດຽວກັນ) ຫຼືຫຼັງດຽວແລ້ວຕໍ່ຊານໄປຫາເລົ້າເຂົ້າ.ໃນເຮືອນຈະແຍກເປັນສອງສ່ວນຄື: ສ່ວນໜຶ່ງແມ່ນສຳລັບຮັບແຂກ, ນອນ ແລະເກັບມ້ຽນເຄື່ອງຂອງທີ່ສຳຄັນ, ອີກສ່ວນໜຶ່ງແມ່ນສຳລັບແຕ່ງກິນ. ນອກຈາກນີ້ເຂົາເຈົ້າກໍ່ຈະປະຫ້ອງໜຶ່ງໄວ້ເອີ້ນວ່າ: ເຊຍພາ ສາລໍ້ ເອີ້ນວ່າ: " ໜ້າວາງ" ເພື່ອເປັນບ່ອນນັ່ງຫຼິ້ນ ແລະຮັບແຂກຄົນຕ່າງໆ. ຍ້ອນວ່າຢູ່ແຕ່ລະເຮືອນຈະມີຮ້ານບູຊາຜີ, ດັ່ງນັ້ນພາຍໃນເຮືອນຂອງເຂົາເຈົ້າກໍ່ມີການຄະລຳໃນການເຂົ້າຫ້ອງນອນ ແລະມີອີກຢ່າງໜຶ່ງແມ່ນຫ້າມບໍ່ໃຫ້ນັ່ງບ່ອນ ຫຼືເບາະນັ່ງຂອງເຈົ້າຂອງເຮືອນ. ສ່ວນຢູ່ໃນບ້ານຈະມີການຄະລຳ ໃນເວລາເຮັດຮີດຄອງປະເພນີຂອງບ້ານເຊັ່ນ: ຫ້າມບໍ່ໃຫ້ຄົນເຂົ້າບ້ານເມື່ອເຫັນເຄື່ອງໝາຍຕາແຫຼວ ຫຼື ຟົດໄມ້ດິບທີ່ຢູ່ປາກປະຕູໂຂງຂອງບ້ານ, ຖ້າລະເມີດຈະຖືກປັບໄໝ ຫຼືຕ້ອງໄດ້ແປງຜີບ້ານ, ຜີເຮືອນ.

ຮີດຄອງປະເພນີກ່ຽວກັບການເກີດລູກ, ຊົນເຜົ່າລໍ້ເກີດລູກຢູ່ໃນເຮືອນ ເຊິ່ງຈະມີແມ່ຍິງທີ່ມີປະສົບການໃຫ້ຄວາມດູແລຊ່ວຍເຫຼືອ, ສ່ວນຫຼາຍແລ້ວຈະເກີດບໍລິເວນຫ້ອງນອນຂອງຄູ່ຜົວເມຍ ຫຼືບໍລິເວນອ້ອມແອ້ມເຕົາໄຟ. ເມື່ອເດັກເກີດພົ້ນ, ຜູ້ຊ່ວຍຈະເອົາເດັກໃສ່ດິ້ງແລ້ວທຳພິທີເພື່ອບໍ່ໃຫ້ພໍ່ເກົ່າ, ແມ່ຫຼັງຂອງເດັກມາລົບກວນ ແລ້ວຈຶ່ງເອົາໄປອາບນ້ຳອຸ່ນ, ສ່ວນແຫ່ຈະເອົາໄປຝັງດິນ ຫຼືເອົາໃສ່ບັ້ງໄມ້ໄປແຂວນໄວ້ນອກບ້ານ, ມີການຢູ່ກຳ ແລະຄະລຳອາຫານປະເພດດິບ, ເໝັນ, ຄາວ ເຫຼົ່ານີ້ເປັນຕົ້ນ.

ສຳລັບຮີດຄອງໃນເວລາມີຜູ້ເສຍຊີວິດນັ້ນເຂົາເຈົ້າຈະມີພິທີການຄົບງັນ, ມີການອອກແບບ, ຕົບແຕ່ງໂລງສົບ ແລະມີພິທີສູດໃຫ້ວິນຍານຂອງຜູ້ຕາຍໄປສູ່ສຸກຂະຕິແລ້ວສິ່ງສະການດ້ວຍການຈູດ,ເວັ້ນເສຍແຕ່ກໍລະນີທີ່ຜູ້ຕາຍເປັນເດັກ ແລະການຕາຍທຸ.


ບຸນປະເພນີທີ່ສຳຄັນຂອງຊົນເຜົ່າລໍ້ ໃນປີໜຶ່ງໆເຂົາເຈົ້າ ຈະກ່ຽວພັນກັບຮີດຄອງທາງພຸດທະສາສະໜາເຊັ່ນ: ປະເພນີບຸນສົງການ, ປະເພນີຕັ້ງທຳຫຼວງ ເຊິ່ງຈັດຂຶ້ນໃນເດືອນສາມ, ປະເພນີທານທຳຫຼວງ, ປະເພນີຂຶ້ນທາດ ແລະອື່ນໆ. ພ້ອມກັນນີ້ເຂົາເຈົ້າຍັງມີຄວາມເຊື່ອຖືຜີ ໂດຍສະເພາະແມ່ນຜີເມືອງ, ສະນັ້ນແຕ່ລະປີຕ້ອງໄດ້ລ້ຽງ ຊຶ່ງຈະມີການຂ້າຄວາຍ ຫຼືໝູ ເພື່ອຖວາຍໃຫ້ ແລະຕ້ອງມີການຄະລຳບ້ານແຕ່ 3-7 ວັນ ເຊິ່ງໄລຍະຄະລຳນີ້ແມ່ນຄົນໃນບໍ່ໃຫ້ອອກ ແລະຄົນນອກບໍ່ໃຫ້ເຂົ້າບ້ານ. ນອກຈາກນີ້ຍັງມີການເຮັດບຸນສົ່ນກິນທານໃຫ້ພໍ່, ແມ່ຜູ້ທີ່ລ່ວງລັບໄປແລ້ວ.

ອີກຢ່າງໜຶ່ງອາຊີບຕົ້ນຕໍ ຂອງເຂົາເຈົ້າ ແມ່ນການກະເສດ, ຄວາມອຸດົມສົມບູນພູນສຸກ ຂອງຊີວິດໃນຄອບຄົວກໍ່ຄືໃນສັງຄົມສ່ວນໜຶ່ງແມ່ນ ມາຈາກຜົນຜະລິດຈາກໄຮ່ນາ, ແຕ່ການເຮັດນາ ຕ້ອງອາໃສແຮງງານຂອງສັດ ໂດຍສະເພາະແມ່ນ ຄວາຍໃນການລາກແກ່, ສະນັ້ນຊົນເຜົ່າລໍ້ຈຶ່ງມີຮີດ ຄອງປະເພນີສູ່ຂວັນຄວາຍ ຫຼັງຈາກສຳເລັດປັກດຳ, ມີປະເພນີແຮກນາກ່ອນຈະລົງມືປັກດຳ, ເກັບກ່ຽວ ແລະອື່ນໆ.

ກ່ຽວກັບດ້ານສິລະປະວັນນະຄະດີ, ຊົນ ເຜົ່າລໍ້ມີກອນຂັບລຳ, ນິທານພື້ນເມືອງ, ມີຄຳພະ ທຍາ, ຄຳສຸພາສິດ ແລະອື່ນໆທີ່ເປັນເອກະລັກຂອງ ເຂົາເຈົ້າເຊັ່ນ: ຂັບລໍ້ ເຊິ່ງຈະມີສາມທຳນອງ (ໄວ, ຊ້າ ແລະຂັບເຂົ້າປີ່ຄູ່) ນອກຈາກນີ້ກໍ່ຍັງມີການມ່ວນ ຊົ່ນແບບພື້ນເມືອງເປັນຕົ້ນແມ່ນການແຂ່ງຂັນຕີ ກອງຫາງຍາວ, ການຟ້ອນເຈີງ ແລະຟ້ອນນາງນົກ. ຄຽງຄູ່ກັບສິ່ງທີ່ກ່າວມາຊົນເຜົ່າລໍ້ ກໍ່ມີເຄື່ອງນຸ່ງຖື ການເອ້ຢ້ອງປະຈຳເຜົ່າອີກດ້ວຍ. ສ່ວນຫຼາຍແລ້ວ ຜູ້ຊາຍຈະນຸ່ງໂສ້ງເສື້ອດຳ, ຜ້າຄຽນຫົວສີດຳ ຫຼືລາຍ ດຳຂາວ, ແມ່ຍິງຈະນຸ່ງສິ້ນແຊງເຄືອດຳຈົກດອກ ລວດລາຍຕາມຄວາມມັກ, ນຸ່ງເສື້ອສີດຳ ຫຼືສີຟ້າແກ່ ແຂບປາຍແຂນ,ຄໍ ແລະແຄມເສື້ອພັບນອກແລ້ວ ປ້າຍມັດຂ້າງ.

ດ້ານເສດຖະກິດ

ຊົນເຜົ່າລໍ້ ມີອາຊີບຕົ້ນຕໍທາງການກະເສດ ເຊັ່ນ: ການເຮັດນາ, ເຮັດໄຮ່ປູກເຂົ້າ, ພ້ອມນີ້ຍັງເຮັດ ສວນປູກພືດຜັກ, ລ້ຽງສັດ, ເຮັດວຽກງານຫັດຖະກຳ ຕ່າງໆ ເພື່ອຮັບໃຊ້ຊີວິດປະຈຳວັນ ແລະສາມາດສ້າງ ລາຍຮັບໃຫ້ແກ່ຄອບຄົວນຳອີກດ້ວຍ. ໂດຍພື້ນຖານ ແລ້ວ ຊົນເຜົ່າລໍ້ ມີພື້ນຖານເສດຖະກິດທີ່ຂ້ອນຂ້າງ ໝັ້ນຄົງ, ຊີວິດການເປັນຢູ່ ແມ່ນຢູ່ໃນລະດັບພໍຢູ່ພໍກິນ ທັງນີ້ກໍ່ຍ້ອນເຂົາເຈົ້າເປັນຄົນທີ່ດຸໝັ່ນໃນການຜະລິດ ໂດຍເອົາການເຮັດນາເປັນຕົ້ນຕໍ ປະກອບກັບການ ຕັ້ງບ້ານເຮືອນທີ່ໝັ້ນຄົງຖາວອນ. ພິເສດ ແມ່ຍິງຊົນເຜົ່າລໍ້ ຈະມີມູນເຊື້ອໃນການປູກມ່ອນ, ລ້ຽງມ່ອນ, ຕຳຫູກທໍ່ໄໝ. ຫຍິບປັກຖັກແສ່ວ ແລະຄ້າຂາຍເປັນອາຊີບເສີມ ໃຫ້ແກ່ຄອບຄົວ.



24/7 VII
ห้ามจำหน่าย

Lue

Historical background:

The Lue originally came from Kwangtung province of China. They migrated through Vietnam into Yunan province and into northern Laos around the thirteenth century.

The majority of Lue lives in Phongsali, Luangnamtha, Bokeo, Udomsai, Saiyabury, and Luangprabang provinces. Today, there are still Lue living also in China, Burma, Vietnam and Thailand.

The population of Lue in Laos numbers 119, 199. A little more than half are women.

Name and Language:

The official name is Lue. This is the name they prefer to be called. Alternative names include Dai, Pai-yi, and Lao Lue.

The language is an Austro-Asiatic language, and is in the Mon-Khmer group. There is a written script, but very few young Lue today know this script.

Society, beliefs, ceremonies and myths:

The Lue adopted Theravada Buddhism in the fourteenth century. However they still mix in their own brand of animism where they believe in the spirits of nature and the household. They belief life is controlled by many spirits, most of them malevolent. The spirit of the township (phi muang) is the most feared and most powerful. The villagers pay respect to this spirit by building a spirit house near the village and offering sacrifices such as pigs and chickens.

The Lue have clans (sing) that takes the names of animals, such as the Tiger clan or the Bird clan. Member of each clan must assist all members of the same line when they need help or have troubles in their lives. It is also forbidden to kill or eat the animal or plant that represents one's clan.

New Years is a very important time of celebration for the Lue. They will make offering to the spirits, such as sacrificing buffaloes and pigs. This may go on for three to seven days, and during this time no outsiders may enter the village. They also spend this time to make merit for those who have passed away.

The Lue traditionally practice monogamy. Traditionally, polygamy was practiced among the wealthier members of society, but that tradition is fading. Young people are free to choose their future mate. Once married, they live in nuclear family units. They usually marry within their own ethnic group, but will occasionally intermarry with the Lao, Tai Nua, and Yuan, plus the other Tai groups.

Mothers give birth in the house. The umbilical cord will be buried in the ground. Mothers must refrain from eating certain foods for sometime after giving birth.

When someone dies, the body is placed in a coffin and a ceremony is held. The coffin is later taken to the cemetery and burned on a pyre. Traditionally, there were certain funeral protocols that had to be followed depending on who died. The kind of ceremony was dictated by if the person was rich or poor, adult or minor, or a victim of violent death. If a young child dies, they are not cremated, but buried in a grave.

Village and house:

The Lue have settled in the lowlands, at altitudes between 150 and 400 meters. They like to be near water for their farming. Their villages are neatly arranged and tidy, and range from 40 to 250 houses per village.

The houses are built on wooden poles. The walls are made of woven bamboo and have thatched roofs. There is a covered verandah in the front that has a ladder leading to the ground. There is a large living room with a kitchen in the corner, and a small area is partitioned off for sleeping. There is an altar in the house where offerings are given to ancestors and spirits.

Every Lue village also has a temple. The walls inside are often decorated with murals depicting Lue life in the past.

Costume:


Lue women will wear a sarong of dark blue or black that is woven with numerous colorful designs. With this they wear long-sleeved jackets and loose blouses. They also wrap a colorful cloth around their head, covering their hair. The women wear silver jewelry, which will be etched with patterns of birds, butterflies and flowers.

Men's traditional dress consisted of a short jacket, trousers, and a turban. The jacket is similar to the woman's, and the trousers are bell-bottomed and are embroidered with bands of red, white, and yellow along the hems.

Agriculture and livelihood:


The Lue produce mostly glutinous rice at their main crop. They also grow corn, tobacco, cotton, fruits, and wide range of vegetables. They raise buffaloes, pigs, poultry, and some cattle.

They are very skilled in crafts. Men are skilled silversmiths and can also make very nice baskets of woven bamboo. The women are known for their weaving and sewing, making sarongs, handbags, pillow covers, and many other items. Some women are involved in traditional paper making using mulberry bark.






1.ຫໍພະແກ້ວ(ວຽງຈັນ) HO Phakeo(Vientiane)




2.ບຸນຊ່ວງເຮືອຈັດຂຶ້ນໃນເດືອນຕຸລາຂອງທຸກໆປີ
Pirogue Festival held in October



3.ປູ່ເຍີ່ຍ່າເຍີ ບຸນປີໃໝ່ລາວ ຫຼວງພະບາງ
Great grand parents Luangphrabang New year



4. ບຸນປີໃໝ່ລາວ ຫຼວງພະບາງ ຈັດຂຶ້ນ ເດືອນ ເມສາ
Lao New Year at (Luangphrabang)in April



5.ບຸນປີໃໝ່ລາວ(Lao new Year)



6. ບຸນບັ້ງໄຟຈັດຂຶ້ນໃນເດືອນ ພຶດສະພາຂອງທຸກໆປີ
Rocket Festival celebrate in May.



7. ຂະແໜງໜຶ່ງຂອງເຜົ່າລາວ (ກະເລິ່ງ)
tradition A twig of Lao (Kaleung)



8.ສິລະປະພື້ນເມືອງເຜົ່າລາວ Lao Arts tradition



9.ການສະແດງຟ້ອນທຽນດອກໄມ້ເຜົ່າລື້(ອຸດົມໄຊ)
Dancing Show candle flower of Luu(Oudomxay)




10.ຂະແໜງໜຶ່ງຂອງເຜົ່າລາວ (ບໍ່)
A twig of Lao (Bo)



11.ການແຕ່ງກາຍຂອງເຜົ່າຍວນ (ບໍ່ແກ້ວ)
Wearing of nhouane (Bokeo)



12.ການແຕ່ງກາຍຂອງເຜົ່າໄຕ Wearing of Tai



13.ຊາຍໜຸ່ມເຜົ່າຜູ້ໄທ ປີ1920Young boy of Phouthai in 1920




14.ຍິງໜຸ່ມເຜົ່າຜູ້ໄທປີ 1920
Young girl of Phouthai in 1920




15. ຍິງໜຸ່ມ ເຜົ່າແຊກ ປີ 1920 (ຄຳມ່ວນ)
Young girl Saek in 1920 (Khammouane)




16. ການແຕ່ງກາຍຂອງເຜົ່າໄທເໜືອ ປີ 1920
Wearing of Thaineu in 1920



17.ເຮືອນບູຮານເຜົ່າໄທເໜືອ ບ. ນ້ຳແກ້ວຫຼວງ
ມ. ສິງ(ຫຼວງນ້ຳທາ)
Ancient house of ThaiNeu , Ban
NamkeoluangSingdistrict (Luangnamtha)



18.ເຮືອນຂອງເຜົ່າຢ້ຳ ບ. ສົມຄຳ
ມ. ຍອດອູ(ຜົ້ງສາລີ)
house of Yang ban Somkham, Nhod-Ou
District (Phongsali)



19.ເຮືອນບູຮານຂອງເຜົ່າໄທເໜືອ ບ.ລານຕຸຍ
ມ.ຍອດອູ (ຜົ້ງສາລີ)Ancient house of Thaineu
Ban Lanetoui Nhod-Ou district (Phongsali)



20.ການແຕ່ງກາຍຂອງ ໄທດຳ (ຫຼວງນ້ຳທາ)
Wearing of Thai dam

ໝວດພາສາມອນ - ຂະແມ ມີ 32 ຊົນເຜົ່າ

The Mone - Khmer Language Family

(32 Ethnic Groups)

ຊົນເຜົ່າກຶມມຸ

ປະຫວັດຄວາມເປັນມາ:

ກຶມມຸ ແມ່ນຊົນເຜົ່າໜຶ່ງທີ່ນອນໃນວົງຄະນະຍ່າດແຫ່ງຊາດລາວເອກະພາບ ຕາມການຄົ້ນຄວ້າຂອງນັກປະຫວັດສາດຫຼາຍປະເທດ ໃຫ້ຮູ້ວ່າ ປະຫວັດຄວາມເປັນມາຂອງຊົນເຜົ່າກຶມມຸ ຄ້າຍຄືກັບບັນດາຊົນເຜົ່າທີ່ນອນໃນໝວດພາສາມອນ - ຂະແມ, ບັນດາເຜົ່າເລົ່ານີ້ມີເຊື້ອສາຍພົວພັນກັບຊົນຊາດຂອມ. ຊົນຊາດຂອມມາຈາກເຜົ່າອິນເດຍບູຮານ, ໃນທ້າຍສະຕະວັດທີ4, ຊົນຊາດຂອມໄດ້ຍົກຍ້າຍມາຕັ້ງຖິ່ນຖານຢູ່ເຂດໃຈກາງສຸວັນນະພູມ (ສຸວັນນະພູມ ແມ່ນກວມເອົາໝົດອິນດູຈີນ, ໃຈກາງສຸຫວັນນະພູມ ໝາຍເຖິງປະເທດລາວ). ຕໍ່ມາຫຼາຍປີກໍ່ມີການເຄື່ອນຍ້າຍຂອງເຜົ່າອື່ນໆເຂົ້າມາຢູ່ປະເທດລາວຕາມລຳດັບ... ພວກຂອມຈຶ່ງແຕກແຍກກັນໄປຢູ່ກຸ່ມລະທິດລະທາງ.

ສຳລັບຊົນເຜົ່າກຶມມຸ ໄດ້ຕັ້ງຖິ່ນຖານບ້ານຊ່ອງ ແລະດຳລົງຊີວິດຢູ່ບັນດາແຂວງພາກເໜືອ ລົງຮອດແຂວງຄຳມ່ວນ, ເຜົ່າລາວບາງທ້ອງຖິ່ນ ເຂົາຈະຖືວ່າເຜົ່າກຶມມຸ ແມ່ນເຜົ່າອ້າຍ.

ຊົນເຜົ່າ ກຶມມຸຢູ່ລາວມີຈຳນວນພົນລະເມືອງ 500.975 ຄົນ, ຍິງ 253.517 ຄົນ, ເທົ່າກັບ 11% ຂອງພົນລະເມືອງທົ່ວປະເທດ(ຕາມ ສະຖິຕິການສຳຫຼວດພົນລະເມືອງຄັ້ງທີ II ປີ 1995).

ຊົນເຜົ່າກຶມມຸ ຍັງມີຢູ່ບັນດາປະເທດອ້ອມຂ້າງເຊັ່ນ: ຢູ່ ສ.ປ ຈີນ, ສ.ສ. ຫວຽດນາມ ແລະພະລາຊະອານາຈັກໄທ.

ຊື່ເອີ້ນ:

ແຕ່ລະແຊງຂອງຊົນເຜົ່າກຶມມຸ ເອີ້ນຕົນເອງມີ ການຜັນສຽງແຕກຕ່າງກັນບາງເລັກນ້ອຍ, ເປັນຕົ້ນຄຳທຳອິດ, ກຶມ, ເຄີ, ຂະ,ກຳ. ສຳລັບເຜົ່າອື່ນເອີ້ນໃຫ້ເຂົາເຈົ້າກໍ່ມັກອອກສຽງບໍ່ແຈ້ງໃນຄຳທຳອິດ, ສ່ວນຄຳທີ ສອງ "ມຸ"ແມ່ນແຈ້ງຄືກັນໝົດ.

ອີງຕາມການຕົກລົງ ຂອງກອງປະຊຸມນັກວິຊາການໃນວັນທີ 27-28 / 12 /2001 ໃຫ້ເອີ້ນເປັນເອກະພາບກັນວ່າ " ກຶມມຸ " ແລະກໍ່ເປັນຊື່ເອີ້ນທາງລັດຖະການ.

ຄຳທີ່ວ່າ "ກຶມມຸ" ມີຄວາມໝາຍວ່າ "ຄົນ"ແລະຄົນໃນທີ່ນີ້ມີຄວາມໝາຍເຈາະຈົງເຖິງເຜົ່າຂອງຕົນເອງເທົ່ານັ້ນ, ຊົນເຜົ່າກຶມມຸປະກອບມີ ຫຼາຍແຊງເຊັ່ນ: ກຶມມຸຮອກ, ກຶມມຸອູ, ກຶມມຸລີ້, ກຶມມຸແຄວນ, ກຶມມຸຍວນ, ກຶມມຸເຈືອງ, ກຶມມຸຄຮອງ, ກຶມມຸແມ, ກຶມມຸກະສັກ...ແຕ່ລະແຊງຂອງເຜົ່າກຶມມຸ ໄດ້ຕັ້ງຖິ່ນຖານພູມລຳເນົາຕາມສະຖານທີ່ຕ່າງກັນ

ພາສາ:

ຊົນເຜົ່າກຶມມຸ ມີພາສາປາກເວົ້າເປັນຂອງຕົນເອງສະເພາະເຂົາເຈົ້າ, ບໍ່ມີຕົວໜັງສືຂຽນ. ມາຮອດຊຸມປີ 1980 ໄດ້ມີນັກອັກສອນສາດຈຳນວນໜຶ່ງໄດ້ຄົ້ນຄວ້າ ແລະໃຊ້ຕົວອັກສອນລາຕິນເປັນໜັງສືຂອງເຜົ່າກຶມມຸ, ປະຈຸບັນນີ້ຕົວອັກສອນດັ່ງກ່າວຍັງຄົງຕົວຢູ່ ແຕ່ບໍ່ໄດ້ນຳໃຊ້ຢ່າງກວ້າງຂວາງ (ໃຊ້ສຳລັບນັກຄົ້ນຄວ້າ. ພາສາກຶມມຸ ຈັດເຂົ້າໃນໝວດພາສາມອນ - ຂະແມ, ແຕ່ແຊງຂອງ

ເຜົ່າກຶມມຸຈະມີພາສາປາກເວົ້າຕ່າງກັນບາງເລັກນ້ອຍ, ຄົນຊົນເຜົ່າກຶມມຸ ຍັງມັກຮຽນພາສາຊົນເຜົ່າອື່ນໆເຊັ່ນ: ພາສາເຜົ່າລາວ ແລະພາສາບາງເຜົ່າຢູ່ອ້ອມຂ້າງຕົນ. ຄົນກຶມມຸຖືວ່າການຮູ້ພາສາຕ່າງໆ ນັ້ນແມ່ນຄວາມເກັ່ງກ້າ, ດີເລີດລົ້ນຜູ້ອື່ນໆ.

ຮີດຄອງປະເພນີ, ຄວາມເຊື່ອຖື ແລະວັດທະນະທຳ - ສັງຄົມ:

ຕາມຄວາມເຊື່ອຖືຂອງຊົນເຜົ່າກຶມມຸ ນັບຖືບັນພະບູລຸດຂອງຕົນເອງຕະຫຼອດມາ, ຢູ່ໃນເຮືອນມີຮ້ານຜີ, ໃນຈຳນວນຜີທີ່ເຄີຍເອີ້ນຫາເວລາເຮັດພິ ທີລ້ຽງຜີເຮືອນນັ້ນລວມມີຜີພໍ່, ຜີແມ່, ຜີປູ່ຍ່າຕາຍາຍ. ນອກນັ້ນເຜົ່າກຶມມຸ ຍັງນັບຖືຜີບ້ານ, ຜີເມືອງ, ຜີຟ້າ, ຜີແຖນ, ຜີປ່າ, ຜີນ້ຳ, ຜີທີ່ເຂົາເຈົ້າຢ້ານທີ່ສຸດແມ່ນຜີປອບ. ສະນັ້ນແຕ່ລະບ້ານຈຳຕ້ອງມີ ໝໍມົນຢ່າງໜ້ອຍໜຶ່ງຄົນເພື່ອປາບຜີປອບ. ປະຈຸບັນນີ້ມີຊາວກຶມມຸ ຈຳນວນໜຶ່ງໄດ້ຫັນມານັບຖືສາສະໜາຕ່າງໆ.

ດ້ານລະບົບຄອບຄົວເລືອດເນື້ອເຊື້ອສາຍ, ຕະກຸນຂອງຊົນເຜົ່າກຶມມຸ ແມ່ນສືບທອດຕະກຸນທາງພໍ່, ເມື່ອແມ່ຍິງແຕ່ງດອງແລ້ວຕ້ອງໄປຢູ່ນຳຄອບຄົວພໍ່ປູ່, ແມ່ຍ່າ, ແຕ່ຖ້າຄອບຄົວຂອງຝ່າຍຍິງມີຄວາມຫຍຸ້ງຍາກ, ຜູ້ ຊາຍຕ້ອງເປັນເຂີຍສູ່ຕະຫຼອດຊີວິດກໍ່ໄດ້ ໃນກໍລະນີແມ່ຍິງຫາກຖື ພາຄາທ້ອງກ່ອນແຕ່ງດອງ, ນາຍບ້ານ ແລະວົງຕະກຸນຝ່າຍຍິງຈະປັບໄໝຜູ້ຊາຍ ດ້ວຍຂໍ້ອ້າງທີ່ວ່າ: ບໍ່ນັບຖືຮີດບ້ານຄອງເມືອງ, ບໍ່ເຄົາລົບຢຳແຢງເຖົ້າຂຸນມຸນນາຍ...ຊົນເຜົ່າກຶມມຸ ມີລະບົບຊິງຊາວ ຫຼືຕະກຸນ ທີ່ຕົນເອງຕ້ອງເຄົາລົບບູຊາ ໂດຍເອົາ<u>ຊື່ຂອງໂຕ ສັດແລະຕົ້ນໄມ້ເຊັ່ນ: ຕະກຸນເສືອ, ຕະກຸນນົກ ສອນຮອກ, ນົກກະແດດເດົ້າ ຫຼືຕະກຸນກົກຜັກ ກູດ...</u>ໃນແຕ່ລະ ຕະກຸນຈະມີຂໍ້ຫ້າມ ແລະຄະລຳ ເຊັ່ນ: ບໍ່ຈັບບາຍ, ບໍ່ຂ້າ ແລະກິນ, ກິງກັນ ຂ້າມ ຖ້າ ຈັບບາຍໜັງ ມ້ຈະລອກ, ຖ້າ ກິນແຂ້ວ ຈະຫຼົ່ນ ແລະ ຖ້າຂ້າຈະ ບາບ ທາງຈິດໃຈ ແລະຮ່າງກາຍ. ແຕ່ ຄວາມຈິງ ແມ່ນ ເພື່ອສະແດງ ຄວາມເຄົາລົບນັບຖື ບູຊາຕໍ່ຕະ ກຸນຂອງຕົນ, ຄົນ ໃນ ຕະກຸນດຽວກັນ ເຖິງ ຈະຢູ່ແຂວງ ໃດ, ຢູ່ທ້ອງ ຖິ່ນ ໃດ,ໃກ້ ຫຼືໄກກໍ່ ຕ້ອງຊ່ວຍ ເຫຼືອຊຶ່ງ ກັນ ແລະ ກັນ, ຮັກແພງກັນດັ່ງອ້າຍນ້ອງ ຮ່ວມອຸທອນ ດຽວ ກັນ.

ລັກສະນະເຮືອນຂອງຊົນເຜົ່າກຶມມຸ, ຕາມປະເພນີເຂົາເຈົ້າມັກປຸກເຮືອນຮ້ານ, ຈະມີການຈັດຫ້ອງຕາມຄວາມເໝາະສົມຂອງຈຳນວນ ສະມາຊິກໃນຄອບຄົວ, ເຮືອນຈະຖືກຂັ້ນເປັນສອງຫ້ອງ, ຫ້ອງໃນສຳລັບພໍ່ແມ່, ມີເຕົາໄຟສະເພາະໜຶ່ງເຂົ້າ, ຫ້ອງນອກໄວ້ສຳລັບຮັບແຂກ ແລະ ມີເຕົາໄຟແຕ່ງກິນ, ແຂກຄົນມາເຮືອນຈະໄດ້ຢູ່ແຕ່ຫ້ອງນອກ, ບໍ່ອະນຸຍາດໃຫ້ນອນຂວາງເຮືອນ, ຍາມກາງເວັນຈະບໍ່ອະນຸຍາດໃຫ້ຫົ້ວຊົ້ນສັດດິບຕ່າງໆ ທີ່ບໍ່ໄດ້ຫຸ້ມຫໍ່ຂຶ້ນເຮືອນ, ບໍ່ອະນຸຍາດໃຫ້ແບກສາດປູນອນ ຫຼືສາດຮອງຕີນເຂົ້າຜ່ານບ້ານຢ່າງເດັດຂາດ. ແຂວ ກຶມມຸລີ້, ກຶມມຸຍວນ ແລະກຶມມຸແຄວນມັກຈະຕັ້ງສາລາຢູ່ນໍ່ເຮືອນຂອງຕົນ (ຄວາມກຶມມຸວ່າ: ກຶນຕິ໋ງ), ກຶນຕິ໋ງໄວ້ສຳລັບຮັບແຂກບ້ານ, ແຂກເມືອງ ຫຼືຍາດຕິພີ່ນ້ອງມາຢາມ, ໃນກຶນຕິ໋ງບໍ່ມີການຄະລຳຫຍັງ ແລະຍັງເປັນບ່ອນຊຸມແຊວເວລາໄດ້ສັດປ່າ, ເປັນບ່ອນນອນຂອງພວກຜູ້ບ່າວ, ເຂົາຈະເອົາສະຖານທີ່ນີ້ເປັນບ່ອນ

ເປົ່າຂຸ່ຍ, ເປົ່າແຄນເພື່ອສົ່ງອາລົມຈິດຂອງຕົນໃຫ້ແກ່ຄົນຮັກ.ໃນຮອບ 1 ປີ ຊົນເຜົ່າກຶມມຸ ມີຮີດຄອງປະເພນີທີ່ອຸດົມສົມບູນເຊັ່ນວ່າ: ພາຍຫຼັງຂົນເຂົ້າໄຮ່ເຂົ້ານາແລ້ວຈະມີບຸນແຫ່ງຄວາຍ, ບຸນປີໃໝ່, ເຊິ່ງພີ່ນ້ອງກຶມມຸຢູ່ທາງຫຼວງພະບາງ, ຜົ້ງສາລີ, ຊຽງຂວາງ, ຊຳເໜືອເອີ້ນວ່າ: ບຸນເກີຣ, ພີ່ນ້ອງກຶມມຸຣອກ ຢູ່ເຂດເມືອງຮຸ່ນແຂວງ ອຸດົມໄຊ ເອີ້ນວ່າ: ບຸນເຕັຈນົມ,ພີ່ນ້ອງກຶມມຸລີ້, ຍວນ, ແຄວນເອີ້ນວ່າ: ອ້ອຈ. ພາຍຫຼັງສຳເລັດບຸນເຫຼົ່ານີ້ຊົນເຜົ່າກຶມມຸ ມັກຈະສ້ອມແປງເຮືອນເກົ່າ ແລະປຸກເຮືອນໃໝ່, ສະນັ້ນຈຶ່ງມີບຸນຂຶ້ນເຮືອນໃໝ່ຢ່າງຄຶກຄື້ນ, ເຫຼົ້າໄຫແມ່ນເຫຼົ້າປະຈຳເຜົ່າ ເຫຼົ້າໄຫພົວພັນເຖິງນິທານທ້າວເຈືອງ ຂອງເຜົ່າກຶມມຸ.

ດ້ານສິລະປະວັນນະຄະດີ ແມ່ນອຸດົມສົມບູນ ແຕ່ລະແຂງລ້ວນແຕ່ມີການຂັບລຳຕ່າງໆ ຫຼາຍຊະນິດ(ເຕີມ) ແລະມີເຄື່ອງດົນຕີປະດິດສ້າງຈາກໄມ້ປ່ອງ. ນອກຈາກນີ້ຍັງມີນິທານພື້ນເມືອງ, ຄຳຜະຫຍາ ແລະບົດຟ້ອນປະຈຳເຜົ່າຄື: ຟ້ອນດາບ ແລະຟ້ອນທັ່ງບັ້ງ.....ຊົນເຜົ່າກຶມມຸ ມີເຄື່ອງນຸ່ງປະຈຳເຜົ່າ ເຊິ່ງເປັນເອກະລັກຂອງເຜົ່າເຂົາເຈົ້າຕ່ຳດ້ວຍຝ້າຍ, ຍ້ອມນິນ ແລະປະດັບປະດາຕາມແຕ່ລະເພດ.ໃນປະຈຸບັນນີ້ການແຕ່ງ ແລະການນຸ່ງຖືບາງແຂງຈະປະກົດເຫັນ ແຕ່ຍາມງານບຸນປະເພນີເທົ່ານັ້ນ. ສຳລັບວັນທຳມະດາ ແລ້ວເຂົາເຈົ້າຈະມັກນຸ່ງເຄື່ອງສຳເລັດຮູບທີ່ຊື້ຈາກຕະຫຼາດ.

ຮີດໃນການເກີດລູກ ແມ່ນເກີດຢູ່ເຮືອນ, ເຖົ້າແກ່ມັກຈະໃສ່ຊື່ຂອງເດັກຕາມວັນ, ເດືອນ ຫຼືປີ<u>ຂອງເດັກເກີດ. ໃນກໍລະນີເດັກຫາກເປັນຄົນກຳ</u>

ພ້າກຳພອຍກໍ່ຈະໃສ່ຊື່ຕາມຄວາມໝາຍ ດັ່ງກ່າວ.

ຮີດການຕາຍຂອງເຜົ່າກຶມມຸ ຈະບໍ່ຄືບັ້ນດົນ, ບາງເທື່ອຕາຍມື້ເຊົ້າ, ມື້ແລງຈັດພິທີຝັງສົບກໍ່ເປັນໄດ້, ເວລາມີຄົນຕາຍຜູ້ເປັນຫົວໜ້າຂອງຄອບຄົວຈະຂ້າໝູໂຕໜຶ່ງໃນທັນທີ, ທັນໃດໂລດດ້ວຍວິທີເອົາສາກຕຳເຂົ້າທຸບ ໃສ່ຫົວໝູຢູ່ຕົນຂັ້ນໃດ, ສົບຄົນຕາຍຈະຖືກຫຸ້ມຫໍ່ດ້ວຍສາດ, ໄມ້ ຄານ ຫາມຜີຕາຍຕ້ອງແມ່ນໄມ້ຫົກ, ຄົນຫາມຕ້ອງແກ້ເສື້ອ, ນຸ່ງກະຕ່ຽວ, ພາຍດາບ, ຜູ້ຫາມຕ້ອງແມ່ນລູກເຂີຍ ຫຼືລູກຫຼານຊັ້ນຈຳ (ຝັ່ງສົບ), ບາງແຂງກຶມມຸ ຍັງມີຄຳກອນບອກທາງໃຫ້ຜີໄປ, ນັບແຕ່ລົງຂັ້ນໄດເຮືອນຈົນຮອດຍອດຫ້ວຍທີ່ງຽບສະງັດ, ເຊິ່ງແມ່ນບ່ອນນົກເຄົ້າ ແລະນົກແຊວຢູ່ນັ້ນແມ່ນບ່ອນຜີຈະໄປເຖິງ. ທຸກໆມື້ຊົ່ວໄລຍະເຈັດວັນ ໃນຍາມຫົວຄ່ຳຢູ່ນອກຊານຂອງເຮືອນດີຈະມີຜູ້ໜຶ່ງໃຫ້ຫາຂວັນຂອງຄົນຕາຍ.

ລັກສະນະທາງເສດຖະກິດຂອງຊົນເຜົ່າກຶມມຸແມ່ນປະກອບດ້ວຍອາຊີບການກະເສດເປັນຕົ້ນແມ່ນການເຮັດໄຮ່ປູກເຂົ້າ, ປູກພືດຕ່າງໆ ເພື່ອຮັບໃຊ້ຊີວິດປະຈຳວັນ, ການລ້ຽງສັດກໍ່ເປັນກິດຈະການທີ່ສຳຄັນໃນສັງຄົມຂອງຊົນເຜົ່ານີ້. ສັດທີ່ເຂົາເຈົ້າມັກລ້ຽງແມ່ນ ໝູ, ໝາ, ງົວ, ຄວາຍ, ແບ້ ແລະ ສັດປີກ ເພື່ອປະກອບພິທີລ້ຽງຜີ, ເຮັດຂວັນ ແລະ ໃຊ້ເປັນອາຫານປະຈຳວັນ. ຄຽງຄູ່ກັນນີ້ຊົນເຜົ່າກຶມມຸຍັງມີການເກັບເຄື່ອງປ່າຂອງດົງ ເພື່ອເປັນສິນຄ້າແລກປ່ຽນຢູ່ຕາມທ້ອງຕະຫຼາດ ຫຼືແລກປ່ຽນນຳບັນດາຊົນເຜົ່າທີ່ຢູ່ໃກ້ຄຽງ.

Khmou

Historical background:

The Khmou are one of the oldest inhabitants of northern Laos. They arrived in the area by the early first millennium A.D. It is still a mystery from where these people came from, but some anthropologists believe they migrated from northern Burma. Others believe that perhaps the Khmou migrated from Vietnam or the Yunnan area.

After the majority Lao, the Khmou are the next largest ethnic group in Laos. According to the 1995 census, the population of the Khmou in Laos is 500,975, of which 253,517 are female. This is 11 percent of the country's total population. The Khmou can also be found in neighboring countries such as China, Vietnam and Thailand.

Name and Language:

Different groups of Khmou refer to themselves with slightly different accents on the first syllable as "Keum", "Kher," "Kha" or "Kum." But all groups pronounce the second syllable clearly and exactly the same as a distinct "Mu." The official Lao government name is "Khmou."

The word " Khmou " means "a person". The Khmou have many different groups which go by the names Khmou Rork, Khmou U, Khmou Leu, Khmou Kwaen, Khmou Nyuan, Khmou Cheuang, Khmou Khrong, Khmou Mae, and Khmou Kasuck

Khmou language is classified into the Mon-Khmer language group, the branch is the Khmuic branch. There are distinct regional dialects among the language. Khmou also like to learn the languages of other ethnic groups. In 1980s, linguists carried out some studies and used Latin alphabets to write in Khmou dialect. This alphabet still exists and is being used.

Beliefs, society, ceremonies and myths:

Khmou, like other ethnic groups in Lao believe in spirits. They believe in the house spirit (hrooy gang) the spirits of water (hom), the spirit of the forest (hrooy prri) and others. Among the most feared are the hrooy poop and the hrooy suu because of their ability to take possession of people, turning them into dangerous individuals. Therefore, each village must have at least one spiritual master to defeat these spirits.

There are abundant festive traditions within the year. For example, after the completion of upland and paddy rice harvesting, there will be buffalo herding festival. There is also a rice planting festival and a New Year's festival.

The Khmou also practice ancestor worship. They have clans that are built on the patrimonial line. These lines are named after different animals or plants such as the tiger line, bird line, fern tree line, and many others. Each clan line will have some restrictions and taboos such as do not touch, kill or eat the creatures that represent the clan. They believe if a person does commit a taboo, bad things may happen such as their skin may fall off, their teeth fall out, or suffer insanity. Also, all members of the same clan must always assist and offer aid to each other, no matter how far away they are from each other.

Courtship is fairly free among the Khmou, and they choose whom they like as mates. When all is agreed, they arrange a marriage. However, if a woman becomes pregnant before the wedding ceremony the father of the baby is scolded for not respecting the village customs as well as offending prominent figures and elderly people.

Elderly people give names to newborn babies according to the day, month or year they are born

The Khmou have a short ceremony for the dead. Sometimes if a person dies in the morning, there will be a funeral in the afternoon of the same day. When a person dies, a pig will immediately be killed by using the rice pestle to hit the head of the pig at the foot of the house's stairs. This is offered as a sacrifice. A bamboo mat will cover the body, then the body is carried by bamboo sticks to the gravesite. People who carry the body do not wear clothes, only loincloths. A close male member of the family carries a sword.

Some Khmou groups have a poems for recitation that direct the deceased in the afterlife. To confuse any bad spirits that may follow the funeral party back to the village, the people return to the village by walking in large circles.

Art and culture is also abundant. Each branch has many kinds of chanting and singing. There are a number of musical instruments made of bamboo. In addition, they have folk tales, proverbs and dances of their own such as the sword dance (Phorn darp), and the bamboo-slapping dance (Phorn thung bung).

Village and house:

Their villages are found near streams in lower mountainous areas. The villages vary in population from 10 to 90 houses. Traditionally, the village has a communal house where the young boys will live.

The Khmou like to build their houses on low wooden stilts. The walls are made of woven bamboo with no windows. There are two rooms; the inner room will be for their parents, which has a fireplace

for cooking rice; the outer room with a separate fireplace will be for receiving the guests. Visitors to the house will be allowed to stay in the outer room only. During daytime, a taboo states that it is not allowed to carry raw meat to the house without wrapping it first. After celebrating festivals, Khmou people then restore and maintain their houses or build new houses. After completing the maintenance or building a new house, they celebrate again with rice wine that is made in clay jars.

Costume:

The Khmou have limited weaving skills, so most of them buy their cloth from the Lue or Phuan people, or other Tai groups who weave. The festive dresses of the women are dark vests that are long sleeved with a dark sarong that has some motifs and colors embroidered in it. Usually they wear ordinary Lao sarongs and blouses, preferring bright colors. They like silver and copper bracelets. The older women cover their hair with a headscarf.


Traditionally the men wore a loincloth and a long-sleeved jacket which are embroidered. However, today they generally wear cheap factory made clothing.

Agriculture and livelihood:

The Khmou generally have practiced slash and burn agriculture for growing dry-land rice. They also grow crops such as cassava, maize, peanuts, and other vegetables. They also grow tobacco.

They have some buffalo, goats and pigs and chickens are also popular. They also like to fish and hunt, catching small rodents that they sell or eat. In addition, the Khmou collect non-wood forest products for sale and exchange at market places or for exchange with their neighboring groups.

They are also skilled metalworkers and also at weaving with bamboo and rattan, making baskets, fish traps and other tools and utensils which can be sold or traded.



ຊົນເຜົ່າກະຕາງ ປະຫວັດຄວາມເປັນມາ:

ຊົນເຜົ່າກະຕາງ ແມ່ນຊົນເຜົ່າໜຶ່ງທີ່ນອນຢູ່ໃນວົງຄະນາຍາດແຫ່ງຊາດລາວ. ກ່ອນພຸດທະສັງກະລາດສະໄໝເຈົ້າຈັນອາຫຼວຍ, ຊົນເຜົ່າກະຕາງພ້ອມກັບບັນດາຊົນເຜົ່າ ໃນໝວດພາສາມອນ-ຂະແມ, ສາຂາມອນບູຮານແມ່ນໄດ້ຕັ້ງຫຼັກປັກຖານຢູ່ພາກເໜືອ ແລະໄດ້ເຄື່ອນຍ້າຍເຂົ້າມາຕັ້ງພູມລຳເນົາຢູ່ເຂດເມືອງນອງ, ເຊໂປນ ໂດຍຜ່ານແຄ້ວນຫິງສາວະດີ ແຫ່ງອານາຈັກມອນປະເທດມຽນມາ ແລະແຄ້ວລົບບູລີ ແຫ່ງອານາຈັກສະຫຍາມ.

ຈາກນັ້ນແລ້ວຈຶ່ງມີກຸ່ມຄົນຈຳນວນໜຶ່ງເຄື່ອນຍ້າຍມາຕັ້ງເຮືອນຊານຢູ່ບ້ານຕ່ຳຫວາຍ ແລະກໍ່ເຄື່ອນຍ້າຍລົງໄປທົ່ວທຸກເມືອງ ຂອງແຂວງສະຫວັນນະເຂດ ໃນປະຈຸບັນ. ພ້ອມກັນນັ້ນໄດ້ມີກຸ່ມຄົນຈຳນວນບໍ່ໜ້ອຍເຄື່ອນຍ້າຍລົງມາຢູ່ເຂດເມືອງຕູ້ມລານ, ສາລະວັນແຂວງສາລະວັນ ແລະກໍ່ຂະຫຍາຍລົງໄປຢູ່ບາງເມືອງຂອງແຂວງຈຳປາສັກ ຈົນຮອດປະຈຸບັນ. ແຕ່ໃນສະໄໝນັ້ນພັດມີກຸ່ມຄົນ ຊົນເຜົ່າກະຕາງຈຳນວນໜຶ່ງໄດ້ພົບພະພຸດທະຮູບຢູ່ໃນຖ້ຳແຫ່ງໜຶ່ງແລ້ວກໍ່ເອົາໄປໄວ້ເຮືອນແຕ່ມີຄົນຊົນເຜົ່າລາວພົບເຫັນກໍ່ເລີຍຂໍເອົາວ່າຈະເອົາໄປໄວ້ຢູ່ແຄ້ວນຈຳປາສັກ. ແຕ່ໃນຂະນະຂ້າມນ້ຳຂອງຍ່ານເມືອງເກົ່າ, ເມືອງໂພນທອງ, ພະພຸດທະຮູບອົງນັ້ນຕົກນ້ຳ, ຜູ້ປົກຄອງແຄ້ວນຈຳປາສັກໄດ້ລະດົມກຳລັງຄົນບໍ່ຈັກວ່າເທົ່າໃດໝຸດນ້ຳຂອງເພື່ອລົງເອົາພະອົງນັ້ນຄືນມາໃຫ້ໄດ້, ອັນໄດ້ເຮັດໃຫ້ຜູ້ຄົນລົ້ມຕາຍຢ່າງຫຼວງຫຼາຍ, ແຕ່ກໍ່ບໍ່ສາມາດເອົາພະອົງນັ້ນໄດ້. ດັ່ງນັ້ນຜູ້ປົກຄອງແຄ້ວນຈຳປາສັກສະໄໝນັ້ນໄດ້ແຕ່ງເສນາອາມາດຂອງພະອົງໄປນຳເອົາຊົນເຜົ່າກະຕາງຢູ່ເຂດບ້ານຫາດອົງຮັງເມືອງຄັນທະບູລີແຂວງສະຫວັນນະເຂດ ໃນປະຈຸບັນ, ເພື່ອມາລົງເອົາພະພຸດທະຮູບອົງນັ້ນ.

ເຂົາເຈົ້າໝຸດນ້ຳຂອງບໍ່ພໍເທົ່າໃດກໍ່ສາມາດນຳເອົາພະພຸດທະຮູບຂຶ້ນມາໄດ້ແລ້ວກໍ່ເອົາໄປໄວ້ຢູ່ວັດຫໍພະແກ້ວ ທີ່ເມືອງເກົ່າຂຶ້ນກັບເມືອງໂພນທອງ ແຂວງຈຳປາສັກ. ນັບແຕ່ນັ້ນມາເຈົ້າລາຊະການແຄ້ວນຈຳປາສັກໄດ້ ມອບໝາຍໃຫ້ເຂົາເຈົ້າເປັນຜູ້ປົກປັກຮັກສາພະພຸດທະຮູບອົງນັ້ນແລ້ວກໍ່ກາຍເປັນຊື່ວ່າ: ຊົນເຜົ່າພະແກ້ວ, ຕົກມາໃນສະໄໝສັກດິນາສະຫຍາມ ເຂົ້າມາຮຸກຮານປະເທດລາວເຮົາ. ພວກເຂົາເຈົ້າໄດ້ເອົາພະພຸດທະຮູບອົງນັ້ນເມື່ອເມືອງສະຫຍາມ ເຊິ່ງໄດ້ແຫ່ແຕ່ເມືອງເກົ່າເມືອປະເທດຂອງພວກມັນ ແຕ່ໃນຂະນະນັ້ນພັດມີ 6-7 ຄອບຄົວບ່ຍອມໄປປະເທດເຂົາ, ເມືອງເພີ່ນກໍ່ໂຕນໜີເຂົ້າໄປລີ້ຊ່ອນຢູ່ຕາມປ່າຕຶບດົງໜາ, ຍອດທ້ອຍພູເຂົາ ແຕ່ຜ່ານຂະບວນວິວັດແຫ່ງການດຳລົງຄົງຕົວ ເຂົາເຈົ້າລົງເຄື່ອນຍ້າຍຢູ່ທົ່ງພຽງ ແລະກໍ່ຂະຫຍາຍລວມມີ 8 ບ້ານ ຈົນຮອດທຸກວັນນີ້.

ປະຈຸບັນຊົນເຜົ່າກະຕາງ ໄດ້ຕັ້ງບ້ານ ເຮືອນຢູ່ ພາກກາງ ແລະພາກໃຕ້ຂອງລາວເຊັ່ນ: ຄຳມ່ວນ, ສາລະວັນ, ສະຫວັນນະເຂດ,ຈຳປາສັກ ແລະ ເຊກອງ.ພົນລະເມືອງ ຂອງຊົນເຜົ່າກະຕາງມີ 95.440 ຄົນ,ໃນນັ້ນມີຍິງ 48.573 ຄົນເທົ່າກັບ 2,1% ຂອງພົນລະເມືອງທົ່ວປະເທດ(ຕາມສະຖິຕິ ການສຳຫຼວດພົນລະເມືອງທົ່ວປະເທດ ຄັ້ງທີ II ປີ 1995).

ຊື່ເອີ້ນ:

ຊົນເຜົ່ານີ້ເອີ້ນຕົນເອງວ່າ: ບູຣກະຕາງ, ຊົນເຜົ່າອື່ນເອີ້ນເຂົາເຈົ້າວ່າ: " ກະຕາງ "ຊື່ທີ່ເຂົາເຈົ້າມັກ ແລະຊື່ທີ່ໃຊ້ທາງການໃນປະຈຸບັນແມ່ນ ຊົນເຜົ່າກະຕາງ. ສຳລັບຄວາມໝາຍຂອງຊື່ເອີ້ນທີ່ ວ່າກະຕາງ ແມ່ນມາຈາກຄຳທີ່ວ່າ: " ກະເຕິງ " ໝາຍເຖິງຂີ້ສູດປະກອບມີ 2 ແຊງຊົນເຜົ່າຄື: ກະ ຕາງ ແລະພະແກ້ວ.

ພາສາ:

ພາສາຂອງຊົນເຜົ່າກະຕາງ ຈັດເຂົ້າໃນ ໝວດພາສາມອນ - ຂະແມ, ສາຂາພາສາບູຣອີກ ຫຼື ມອນບູຮານ, ເຂົາເຈົ້າບໍ່ມີຕົວໜັງສືຂຽນ, ພາສາ ປາກເວົ້າຂອງຊົນເຜົ່າກະຕາງ ຄ້າຍຄືກັບພາສາ ປາກເວົ້າຂອງຊົນເຜົ່າຕຼີ, ມະກອງ, ຊ່ວຍ, ຕະໂອ້ຍ, ປະໂກະ...ເຂົາເຈົ້າສາມາດເວົ້າພາສາລາວ ແລະ ພາສາຕ່າງປະເທດໄດ້ດີ. ເຊິ່ງມີຄວາມສະດວກ ໃນການພົວພັນແລກປ່ຽນເສດຖະກິດ, ວັດທະນະ ທຳ ກັບບັນດາຊົນເຜົ່າເຫຼົ່ານັ້ນໄດ້ດີ.

ຮີດຄອງປະເພນີຄວາມເຊື່ອຖື ແລະວັດທະນະທຳ-ສັງຄົມ :

ຮີດຄອງປະເພນີຄວາມເຊື່ອຖື ແລະວັດ ທະນະທຳ ຂອງຊົນເຜົ່າກະຕາງແມ່ນມີລັກສະນະ ຄ້າຍຄືກັນກັບບັນດາຊົນເຜົ່າໃນຕະກຸນບູຣ. ເຂົາ ເຈົ້າມີຄວາມເຊື່ອຖືໃນເລື່ອງຜີເຊັ່ນ: ຜີພໍ່, ແມ່, ຜີ ບັນພະບູລຸດ(ຜີເຮືອນ), ຜີກະດຶງ(ຜີຮັກສາແຕ່ລະ ເສັ້ນຄົນ), ຜີກຳເນີດ, ຜີກິນເຂົ້າ(ຜີນີ້ແມ່ນສຳຄັນທີ່ ສຸດຖ້າຜິດຕ້ອງຂ້າຄວາຍດຳ ແລະຄວາຍດ່ອນ ໂລດ. ຄຽງຄູ່ກັບການເຊື່ອຖືຜີນັ້ນຊົນເຜົ່າກະຕາງ ມີຄວາມນິຍົມຮຽນວິຊາອາຄົມ, ຮຽນເວດມົນ, ກົນ ກະຖາ, ຮຽນເປັນໝໍດູ, ໝໍເຢົາ, ໝໍຜີເພື່ອແນໃສ່ ເຮັດໃຫ້ຄົນອື່ນເຄົາລົບນັບຖືຕົນເອງ.

ບຸນປະເພນີທີ່ສຳຄັນຂອງຊົນເຜົ່າກະ ຕາງ ໃນຮອບປີໜຶ່ງໆ. ເຂົາເຈົ້າເຮັດບຸນປີໃໝ່, ເຊິ່ງ ພາສາເຂົາເຈົ້າວ່າ: "ຈາງະ". ນອກຈາກນັ້ນເຂົາ ເຈົ້າຍັງມີພິທີກຳລ້ຽງຜີຫຼາຍຄັ້ງເປັນຕົ້ນແມ່ນ : " ລາ ປຶບ " ໂດຍຈະມີການ ຂ້າຄວາຍເພື່ອຖວາຍຜີ ດັ່ງ ກ່າວ.

ດ້ານສິລະປະວັນນະຄະດີ ຂອງຊົນເຜົ່າ ກະຕາງ ມີເອກະລັກໃນການຂັບລຳເຊັ່ນ: ລຳສະ

ເນີດ, ລຳຕັ້ງຫວາຍ, ມີເຄື່ອງດົນຕີພື້ນເມືອງຄື: ປີ່, ແຄນ, ກອງ ແລະພະເໜາະ ພ້ອມກັນນັ້ນຍັງມີນິທານພື້ນເມືອງ, ເທບນິຍາຍ ແລະອື່ນໆທີ່ສ່ອງແສງເຖິງການດຳລົງຊີວິດຂອງເຂົາເຈົ້າ.

ລັກສະນະເຮືອນຂອງຊົນເຜົ່າກະຕາງ, ຕາມປະເພນີແລ້ວເຂົາເຈົ້າມັກປຸກເຮືອນ ແລະຢູ່ເຮືອນຮ້ານ, ການປະກອບສ້າງຂອງເຮືອນມີລັກສະນະກະທັດຮັດເບົາບາງ. ໂດຍອາໃສ່ອຸປະກອນຫາໄດ້ຕາມທຳມະຊາດ, ປະຈຸບັນເຂົາເຈົ້າມີ ການປ່ຽນແປງມາປຸກເຮືອນ ແລະຢູ່ເຮືອນທີ່ມີ ລັກສະນະຄືເຮືອນຂອງຊົນເຜົ່າຜູ້ໄທ. ການຈັດແບ່ງຫ້ອງຢູ່ພາຍໃນເຮືອນແມ່ນອີງຕາມຈຳນວນພົນໃນຄອບຄົວ. ຮີດຄອງກ່ຽວກັບຂໍ້ຫ້າມ ແລະການຄະລຳ ຢູ່ໃນເຮືອນແມ່ນບໍ່ໃຫ້ວາງພາເຂົ້າຊີ້ກັບຂີ້ເຮືອນ.

ໃນສະໄໝບູຮານ ຜູ້ຊາຍຊົນເຜົ່າກະຕາງ ແມ່ນນຸ່ງກະຕ່ຽວ,ຈົ່ງຜົມຍາວ, ເກົ້າຜົມ, ບ່ອງຫູ, ໃສ່ຕ້າງ ຄືແມ່ຍິງທີ່ເຮັດດ້ວຍເງິນ ແລະກົ່ວ, ສັກຂາລາຍ, ທີ່ສະແດງເຖິງຄົນກ້າ, ຄົນຄົງມີລິດເດດ ຕັດແຂ້ວ ແລະເອົາໜັງຄວາເຮັດເກີບ. ສຳ ລັບແມ່ຍິງ ແມ່ນນຸ່ງສິ້ນ, ຫົ່ມເສື້ອ, ເກົ້າຜົມ, ບ່ອງຫູໃສ່ຕ້າງ ທີ່ເຮັດດ້ວຍເງິນ ແລະກົ່ວໃສ່ປອກແຂນ, ໜາກປັດໃສ່ຄໍ, ຍ້ອມແຂ້ວດ້ວຍການເອົາສີໄມ້ເມືອດ, ຍ່າງຕີນເປົ່າ ຫຼືບາງຄັ້ງກໍ່ຕັດໜັງຄວາຍເຮັດເກີບ .ພາຍຫຼັງຮູ້ຕ່ຳຜ້າ ,ຕ່ຳຫູກທໍ່ໄໝ. ພວກຜູ້ຊາຍ ຈົ່ງຄ່ອຍມີຄວາມນິຍົມນຸ່ງສິ້ງຂາສັ້ນແບບຊົນເຜົ່າຜູ້ ໄທ. ເຄື່ອງນຸ່ງຫົ່ມຂອງເຂົາເຈົ້າບໍ່ວ່າຍິງ ຫຼືຊາຍແມ່ນນຸ່ງເຄື່ອງສີດຳຍ້ອມດ້ວຍນ້ຳນິນ. ເດັກ ນ້ອຍອາຍຸ 6 ປີ ລົງມາສ່ວນຫຼາຍໄດ້ເປືອຍໂຕ.

ຊົນເຜົ່າກະຕາງ ມັກບໍລິໂພກເຂົ້າໜຽວ, ອາຫານປະເພດແກງ, ປີ້ງ, ຈີ່, ລາບດິບ, ກ້ອຍທີ່ມີລິດຊາດເຜັດ ແລະເຄັ່ມ. ການປຸ່ງແຕ່ງອາຫານມີຫົວສີໄຄ, ຂີ້ງ, ຜັກຂີຄຸ. ອາຫານທີ່ເຂົາເຈົ້າບໍລິໂພກສ່ວນຫຼາຍ ແມ່ນມາຈາກທຳມະຊາດເປັນຕົ້ນມີປາ, ຊີ້ນສັດປ່າ, ຜັກປ່າ ແລະອື່ນໆ. ສ່ວນສັດລ້ຽງເຂົາເຈົ້າຮັບປະທານ ສະເພາະໃນເວລາເຮັດຮີດຄອງຄື: ບຸນລະປົບ. ໃນເວລາຮັບປະທານອາຫານໄດ້ມີຂໍ້ຫ້າມ ແລະຄະລຳລູກທີ່ມີຜົວ ຫຼືເມຍ, (ໄພ້ຫຼືເຂີຍ) ກິນເຂົ້າຮ່ວມນຳພໍ່, ແມ່ໝາຍຄວາມວ່າ: ລູກທີ່ຍັງເປັນໂສດກິນເຂົ້າຮ່ວມພໍ່, ແມ່ໄດ້. ສ່ວນຜູ້ທີ່ມີເມຍຫຼືຜົວ ກໍ່ກິນເຂົ້າຮ່ວມເປັນຄູ່ໆ ພ້ອມດ້ວຍລູກເຕົ້າຂອງຕົນ.

ຊົນເຜົ່າກະຕາງມັກດື່ມເຫຼົ້າໄຫ. ດື່ມນ້ຳດິບ, ມັກສູບຢາປຸກໆດ້ວຍກອກດິນ, ກອກໄມ້ທີ່ເຂົາເຈົ້າປູກຢູ່ແຄມຫ້ວຍ ຫຼືໄຮ່ໂດຍບໍ່ຈຳແນກປະເພດ ແລະຮຸ້ນຄົນ.

ໂຄງສ້າງທາງສັງຄົມ ຂອງຊົນເຜົ່າກະຕາງມີລັກສະນະຄອບຄົວດຽວ, ເຂົາເຈົ້າສືບເຊື້ອສາຍຕະກຸນທາງພໍ່, ແມ່ຍິງທີ່ແຕ່ງດອງແລ້ວມີໜ້າທີ່ໄປຢູ່ເຮືອນນຳ ພໍ່ແມ່ຂອງຜົວ. ຢູ່ໃນເຮືອນໜຶ່ງໆ

ຜູ້ສືບມູນມໍລະດົກ ແລະຜີເຮືອນແມ່ນລູກຊາຍ. ແຕ່ກໍລະນີຜົວເມຍບໍ່ມີລູກຊາຍຈັກຄົນເລີຍ ການສືບມູນມໍລະດົກ ແລະຜີຈະຕ້ອງມອບໃຫ້ອ້າຍ ຫຼືນ້ອງຊາຍຂອງຜູ້ຊາຍໃນຕະກຸນນັ້ນ.

ການແຕ່ງດອງ ຂອງຊົນເຜົ່າກະຕາງ ມີ ຂຶ້ນ 2 ຮູບການເປັນຕົ້ນພໍ່, ແມ່ຊອກໃຫ້ແຕ່ເວລາ ຍັງນ້ອຍ ແລະໄປລົມເອົາເອງແຕ່ໃນຄັ້ງນີ້ຂໍຍົກ ການແຕ່ງດອງບ່າວສາວລົມກັນເອງ ແມ່ນໄດ້ປະ ຕິບັດຕາມບັນດາຂັ້ນ ຕອນຕ່າງໆຄື: ເມື່ອຜູ້ບ່າວ ອາຍຸແຕ່ 14-15 ປີຂຶ້ນໄປກໍ່ມີຄວາມຮູ້ສຶກຕ້ອງ ການຢາກໄດ້ຄູ່ຊີວິດ ກໍ່ຈະຕ້ອງໄປລົມສາວ ຢູ່ ເຮືອນ ຫຼືຢູ່ຕາມສະຖານທີ່ອອກແຮງງານຕ່າງໆ. ຖ້າຫາກຕົນເອງແນ່ໃຈກັບສາວຄົນໃດກໍ່ສະເໜີພໍ່, ແມ່ຂອງຕົນໄປຖາມພໍ່ແມ່ຂອງຍິງສາວ ແລະກໍ່ນັດ ໝາຍມື້ ຈະແຕ່ງດອງ. ຊົນເຜົ່າກະຕາງແຕ່ງດອງ ຈັດຂຶ້ນ 2 ຄັ້ງຄື: ຄັ້ງທີ1:ເພິ່ນເອີ້ນວ່າ ດອງນ້ອຍ ແລະຄັ້ງທີ 2: ເພິ່ນເອີ້ນວ່າດອງໃຫ່ຍ, ການເຮັດ ດອງນ້ອຍ ແມ່ນໄດ້ເຊີນພວກຍາດຕິພີ່ນ້ອງຊັ້ນຈຳ ຂອງຕົນມາຮ່ວມ ແລະກໍ່ຕ້ອງໄປມອບຄ່າດອງ ສິນສອດໃຫ້ພໍ່, ແມ່ເຈົ້າສາວ ຄ່າດອງສິນສອດ ລວມມີຄວາຍ 3 ໂຕ, ເງິນ 2 ຮາງ, ໝໍ້ຖຸ່ມ, ໝໍ້ທອງ ຢ່າງ ລະໜ່ວຍ, ໝູ,ໄກ່ຢ່າງລະ 3-5 ໂຕ, ເຫຼົ້າໄຫ 4-5 ໄຫ ແລະກໍ່ດຳເນີນການອຸ່ນດອງດ້ວຍການ ຮັບປະທານອາຫານຊິ້ນໝູ ແລະດື່ມເຫຼົ້າຊຸມແຊວ 1 ວັນ,1ຄືນ. ຫຼັງຈາກນັ້ນໃນລະຫວ່າງ 5-10 ປີ ກໍຕ້ອງເຮັດດອງໃຫ່ຍ ເຊິ່ງຕ້ອງໄດ້ເຊື້ອເຊີນຍາດ ຕິພີ່ນ້ອງທຸກບ່ອນມາຮ່ວມງານດັ່ງກ່າວ. ມີກົມ ດອງຄູ່ສ້າງຄອບຄົວໃໝ່ຕ້ອງເປ້ເຂົ້າຕົ້ມ, ຖ້ວຍ, ບ່ວງ, ເກືອມາໃຫ້ພໍ່ເຖົ້າ, ແມ່ເຖົ້າຢູ່ບ້ານຫຼືເຮືອນ.


ໃນມື້ດອງໃຫ່ຍນັ້ນຕ້ອງຂ້າຄວາຍ 1 ໂຕ ແລະສູງສຸດ3-4 ໂຕການອຸ່ນດອງໄດ້ດຳເນີນ1 ຄືນ. ຕອນເຊົ້າຂ້າຄວາຍຈ້ຳໃຫ້ຜີ (ຖວາຍຜີ ຊົ່ວໄລຍະໜຶ່ງແລ້ວ ກໍ່ແຕ່ງຢູ່ຄົວກິນເພື່ອໃຫ້ແຂກ ຄົນຮັບປະທານ. ພາຍຫຼັງກິນເຂົ້າ ແລະດື່ມເຫຼົ້າ ຊຸມແຊວ ໃນມື້ນັ້ນແລ້ວຄູ່ຜົວເມຍຈະກັບຄືນຢູ່ ບ້ານ ຫຼືເຮືອນຂອງຜົວໃນກໍລະນີໃຊ້ຄ່າດອງຄົບ ຕາມຈຳນວນ, ແຕ່ໃນກໍລະນີໃຊ້ຄ່າດອງບໍ່ຄົບ ຕາມຈຳນວນທີ່ໄດ້ຕົກລົງກັນໄວ້ ກໍ່ຕ້ອງເປັນເຂີຍ ສູ່ 3 ປີ.

ສະເພາະຊົນເຜົ່າກະຕາງ ຢູ່ເມືອງຕຸ້ມ ລານ ໃນເມື່ອກ່ອນພາຍຫຼັງແຕ່ງດອງແລ້ວ 7 ປີ 7ເດືອນ ແລະ 7 ຄືນ ຄູ່ຜົວເມຍບໍ່ໄດ້ນອນນຳກັນ. ໃນຊ່ວໄລຍະນັ້ນຜົວ ມີສິດໄປລົມສາວ ແລະນອນ ນຳສາວຄົນອື່ນໆ. ແຕ່ໃນຊ່ວໄລຍະນັ້ນຖ້າມີລູກກໍ່ ຕ້ອງປັບໄໝເມຍດ້ວຍຄວາຍດຳ ແລະຄວາຍ ດ່ອນຢ່າງລະ 3 ໂຕ. ແຕ່ມາຮອດປະຈຸບັນ ແມ່ນ ໄດ້ຫຼຸດຜ່ອນລົງແລ້ວຄື:1 ປີ 1 ເດືອນ 1 ຄືນເທົ່າ ນັ້ນ ແລະຖ້າຫາກມີລູກໃນຊ່ວງໄລຍະນັ້ນກໍປະ ຕິບັດເໝືອນເດີມ. ຊົນເຜົ່າກະຕາງ ປະຕິບັດຕາມ ລະບອບຫຼາຍເມຍ ແລະມີການສືບເມຍໃນກໍລະນີ ຜົວຕາຍຕ້ອງເອົາອ້າຍ, ນ້ອງ, ພໍ່ຜົວ ຫຼືຜູ້ຊາຍ ໃນ ຕະກຸນນປະເພນີໃນການເກີດລູກຂອງຊົນເຜົ່າ

ກະຕາງ, ແຕ່ກ່ອນແມ່ຍິງຊົນເຜົ່າກະຕາງເກີດລູກ ຢູ່ປ່າຮ້ອຍສ່ວນຮ້ອຍໂດຍມີແມ່, ເອື້ອຍແລະ ນ້ອງສາວ ຫຼືແມ່ຂອງຜົວເປັນຜູ້ເບິ່ງແຍງດູແລ ຊ່ວຍເຫຼືອ. ຫຼັງຈາກເກີດລູກໄດ້ 3 ວັນຈຶ່ງຄ່ອຍກັບ ເມືອເຮືອນເພື່ອຢູ່ກຳ, ໄລຍະເກີດລູກ ແລະຢູ່ກຳ ນີ້ມີຜູ້ເປັນຜົວ ຫຼືຜູ້ຊາຍທີ່ເປັນພີ່ນ້ອງແມ່ນຈະບໍ່ ໄດ້ເບິ່ງແມ່ຍິງເກີດລູກແຕ່ຢ່າງໃດ, ສ່ວນຜົວມີສິດ ໄປລົມ ແລະນອນນຳຍິງສາວຄົນອື່ນໄດ້ຕາມ ໃຈ ຊອບ, ດ້ວຍເຫດນັ້ນເຂົາເຈົ້າຈຶ່ງໄດ້ອະນຸຍາດໃຫ້ ຜົວເອົາຫຼາຍເມຍ ເພື່ອໃຫ້ແມ່ຍິງເບິ່ງກັນເອງ. ປະຈຸບັນໄດ້ມີການປ່ຽນແປງ, ມີຫຼາຍບ້ານເກີດ ລູກຢູ່ເຮືອນ.

ປະເພນີກ່ຽວກັບການສົ່ງສະການ ເມື່ອ ຄົນຢູ່ເຮືອນເກີດມີການເຈັບເປັນ ແມ່ນໄດ້ປິ່ນປົວ ຕາມແບບພື້ນເມືອງເປັນຕົ້ນ ແມ່ນໝໍດູ, ໝໍເຢົາ, ເຢົາດ້ວຍຫວ້ານ , ຢາ, ໃຊ້ເວດມົນກົນກະຖາ ແລະ ກິນຢາພື້ນເມືອງ, ແຕ່ກໍລະນີຄົນຜູ້ນັ້ນເສຍຊີວິດ ກໍ່ເອົາຜ້າຂາວ ຫຼືຜ້າດຳຫໍ່ສົບແລ້ວໃສ່ໂລງ. ແຕ່ ກ່ອນຈະຫາມສົບໄປຝັງເພິ່ນຈ້ຳຂວັນ ຄົນຕາຍໃຫ້ ເປັນຜີເຮືອນ ແລ້ວຈຶ່ງຄ່ອຍໃສ່ຝາກະແຕະຫາມ ໄປຝັງຢູ່ປ່າຊ້າໃນຕອນເຊົ້າ. ໃນກໍລະນີກະກຽມ ທັນກໍ່ເຮັດລະປົບໃນມື້ທີ 2. ສ່ວນຄົນຕາຍທຸ້ງຖ້າ ຫາກຕາຍຢູ່ບ່ອນໃດແມ່ນຝັງຢູ່ບ່ອນນັ້ນ. ສ່ວນ ເຄື່ອງຂອງຈະມອບໃຫ້ຄົນຕາຍນັ້ນມີບາງເທື່ອ ກໍຝັງຮ່ວມກັບສົບ, ມີບາງເທື່ອກໍເອົາໄວ້ຢູ່ນອກ. ຖິ່ນຖານພູມລຳເນົາຢູ່ລາວເຮົາມາໄດ້ຫຼາຍຮ້ອຍປີ

ການດຳລົງຊີວິດທາງດ້ານເສດຖະກິດ ຂອງຊົນເຜົ່າກະຕາງ ສ່ວນຫຼວງຫຼາຍ ແມ່ນປະກອບອາຊີບ ທາງການກະເສດເປັນຕົ້ນແມ່ນການເຮັດໄຮ່ ເຮັດນາປູກເຂົ້າ.ນອກຈາກນີ້ແລ້ວຍັງປູກ ພືດທີ່ມີທາດແປ້ງ ແລະຜັກຕ່າງໆ ເພື່ອຮັບ ໃຊ້ຄອບຄົວ. ຊົນເຜົ່າກະຕາງ ນິຍົມລ້ຽງສັດ ປະເພດຕ່າງໆຄື: ງົວ,ຄວາຍ, ໝູ ແລະສັດປີກ ເພື່ອໄວ້ໃນງານ ໃຊ້ພິທີກຳຕ່າງໆ ຄຽງຄູ່ກັບ ການກະເສດ ເຂົາເຈົ້າຍັງຊຳນານ ໃນວິຊາ ຫັດຖະກຳຈັກສານ ແລະການຊອກ ຫາເຄື່ອງ ປ່າຂອງດົງ, ລ່າເນື້ອສັດປ່າມາປຸງແຕ່ງເປັນ ອາຫານເພື່ອບໍລິໂພກແຕ່ລະມື້.



Katang

Historical background:

The Katang are a sizeable ethnic group of Laos, numbering close to 100,000 people. Before the Buddhist era, during the reign of King Chanh Aluay, the Katang were believed to have migrated from today's northern Myanmar region and settled in the Lao territory. Later a group of Katang then located in the north and later on migrated to the regions of Salavan province. Also, some moved to the Champassak province area, where they still remain today.

Also a popular story says that during these times of migration, some Katang traveling through the Champassak area found a Buddha image in a cave as they were searching for new territory to settle in. The Katang travelers took the Buddha image with them, but some ethnic Lao begged them to leave the Buddha statue. When the Katang were crossing the Mekong River at Muong Kao, the Buddha image was accidentally dropped into the river. A number of people made attempts diving to find the image, but several people died. The then ruler of Champassak principality ordered the Katang people to dive for the village since they were they originators of this problem. Quickly some Katang divers found the Buddha image, where it was placed in Horphrakeo Pagoda, in the Muong Phonthong district of Champassak province. After this incident the ruler of Champassak principality gave the Katang the duty of looking after this Buddha image, which they did dutifully.

During the later Siamese invasions, the Siamese invaders took this Buddha image to Siam, taking the Katang keepers with them as slaves. During this forced trek into Siam, six to seven families did not want to go to Siam, so they fled and hid deep in the forest and mountaintops. Later they moved to settle in the plains of Salavan, Savannakhet, Champassak and Sekong provinces, where they currently are today.

The population of the Katang today is 95,440, of which 48,573 are female. This is 2.1% of the country's total population, based on the second population census done in 1995.

Name and language:

These people refer to themselves as "Katang", which is the name other ethnic groups call them. This is also the official name that the Lao government recognizes. Apparently the word "Katang" comes from the word "Katerng" which means means "bee's wax".

Their language is classified in the Mon-Khmer language group, on the Katuic language branch. They do not have an alphabet for writing.

Beliefs, society, ceremonies and myths

The Katang believe in a myriad of animistic, local spirits. Spirits of the household, the village, the forest, ancestors and the rice harvest are just some of the few important ones that are worshipped. One of the most important spirits is the spirit of rice. If this spirit is offended

then a white buffalo must be sacrificed. Also, if there are natural disasters or disease strikes the village animal sacrifices are also made. These sacrifices are made in spirit houses that are some ways from the village. There are also "spirit gates" at the entrance to the villages, which keep away the evil spirits.

The Katang previously lived in extended-family households with several generations under the same roof, but today the family structure is more nuclear. They follow a clan system based on the male lineage of the family. If the father dies, the son shall become the family patriarch.

Katang choose their mates two ways: either through an marriage arranged by the parents, or letting young people find their own partners. The Katang celebrate their wedding ceremony twice. The first celebration is called the dong noy (small wedding) and the second time is called the dong nyai (big wedding). The wedding dowry consists of a package such as three buffalo, some money, three to five pigs, some chickens, vessels of wine and other similar items. A celebration of eating pork and drinking wine follows for a day and a night. Five to ten years later the "big wedding" ceremony is celebrated and the festivities are repeated. Then next morning, a buffalo is killed as sacrifice to the spirits, which is later cooked and eaten later during further partying.

Apparently, the Katang who live in Toomlarn district had the tradition of after their initial wedding will not sleep together for seven years, seven months and seven nights. During this long period, the husband has the right to court and sleep with other women. If the husband and wife break this taboo and there is a pregnancy, they must pay a penalty to the village of three black buffaloes and three white buffaloes. However, for practical purposes, this taboo period has been reduced to one year, one month and one night. However, if there is an early pregnancy, the buffalo fine is still the same.

Today the Katang are basically monogamous, however polygamy used to be more common. If a woman's husband died, she would become the wife of his brother, or even his father.

Katang women used to give birth in the forest, with the mother having her mother and sisters assist. Three days after birth, she would be allowed to return to the house. During this period the husband or other male relatives are forbidden to see her. But nowadays, this tradition has changed, with most women giving birth in the house.

If there is a sickness, a shaman will try to cure the ill person by using magic spells of chants and traditional medicines from the forest. If there is a death, the deceased is covered with a white cloth and placed in a coffin. Before carrying the coffin to be buried, the soul of the dead must be worshipped. Then a small feast is held, and then the coffin is buried outside the village. However, if a person died in an accident, he or she will be buried where the accident occurred.

Katang festivals include the New Year festival, which is called Cha Nga. In addition, they also have a ritual feast that occurs on many occasions when the

spirits need to be placated. This is called la peup. Usually, a buffalo is sacrificed during this time. This feast is also held during funerals.

The Katang have artistic traditions such as ritual chanting (lum) , and traditional vocal songs. They also have traditional musical instruments such as the flute, khaen, drum and phanor. They also have folk tales, fairy tales and others that emphasize their culture and livelihood.

Katang like to eat glutinous rice, soup, grilled meat and vegetables. They use spices in their cooking such as lemon grass, ginger, and wild onions. Most of their food is found in nature by foraging, hunting, and fishing. They rarely kill domestic animals for everyday eating. Most of the domestic slaughter is for rituals and sacrifices.The Katang like drinking rice wine and smoking strong tobacco using clay or wooden pipes. Both sexes of all ages partake in the tobacco smoking.

Village and house:

Traditionally, the Katang village consisted of longhouses surrounding a communal house. However, this is less common today, and now one is more likely to see small houses on stilts constructed of wood and bamboo. These houses are arranged irregularly, and there is usually not a communal house today. The houses are simple affairs with one room for eating and sleeping with a small fireplace hearth in the corner.


Costume:

In the past, Katang men wore only loincloths. They had long hair, which they rolled up. They also pierced their ears with large holes for earrings of silver and tin. They also tattooed their legs, which demonstrated their power and courage; this was also believed to give them magical powers. Now they wear typical commercial clothing bought in the markets and they don't wear much jewelry much anymore.

The women wear traditional Lao skirts (*phaa sinh*) with blouses. They roll up their hair and also pierce their ears for jewelry. Children under age six are mainly nude.

Agriculture and livelihood:

The Katang are engaged mainly in slash and burn cultivation and flood paddy field rice farming. In addition, they also grow root crops and vegetables for their household consumption. Katang people also raise different types of animals such as cattle, buffaloes, pigs and poultry for ritual ceremonies. They also gather forest products such as mushroom and honey. Hunting small game such as birds and rodents with crossbows and ancient muskets is common. Fishing is also important in supplementing their diet.



ຊົນເຜົ່າ ກະຕູ ປະຫວັດຄວາມເປັນມາ

ຊົນເຜົ່າກະຕູ ແມ່ນຊົນເຜົ່າໜຶ່ງ ທີ່ໄດ້ຕັ້ງຖິ່ນຖານພູມລຳເນົາຢູ່ລາວເຮົາມາໄດ້ຫຼາຍຮ້ອຍປີແລ້ວ. ສຳລັບປະຫວັດຄວາມມາ ແລະຕົ້ນກຳເນີດຂອງຊົນເຜົ່ານີ້ ແມ່ນຄ້າຍຄືກັນກັບບັນດາຊົນເຜົ່າໃນໝວດພາສາມອນ- ຂະແມ, ຊຶ່ງນັກຄົ້ນຄວ້າຫຼາຍຄົນໄດ້ສັນນິຖານວ່າ: ໄດ້ອົບພະຍົບ ແລະ ເຄື່ອນຍ້າຍມາຈາກພາກຕາເວັນອອກສຽງໃຕ້ຂອງ ອິນເດຍ ແລະບໍລິເວນຕອນໃຕ້ຂອງຈີນ ເພາະຢູ່ເຂດນີ້ ຍັງປະກົດມີກຸ່ມຄົນທີ່ປາກເວົ້າພາສາມອນ ຂະແມຢູ່ຄື: ພວກມູນດະ ແລະພວກໂກນເປັນຕົ້ນ.

ປະຈຸບັນຊົນເຜົ່າກະຕູ ຕັ້ງຖິ່ນຖານພູມລຳເນົາແລະດຳລົງຊີວິດ ສ່ວນຫຼາຍຢູ່ບັນດາແຂວງ ພາກໃຕ້ ຂອງລາວເຮົາເຊັ່ນ: ເມືອງກະລຶມ, ດາກຈຶງ, ທ່າແຕງ ຂອງແຂວງເຊກອງ. ເມືອງ ເລົາງາມ ແຂວງ ສາລະວັນ. ເມືອງປາກຊ່ອງ ແລະເມືອງ ບາຈຽງຈະເລີນສຸກ ຂອງແຂວງ ຈຳປາສັກ. ນອກຈາກນີ້ ແລ້ວຊົນເຜົ່າກະຕູ ຍັງມີຢູ່ຫວຽດນາມ ເຊັ່ນ: ຢູ່ແຂວງ ກວາງນາມ,ດານັ້ງ ແລະແຂວງ ເທືອງທຽນ ເທວ.

ຊົນເຜົ່າກະຕູມມີຢູ່ລາວທັງໝົດ17.024 ຄົນ, ຍິງ 8.653 ຄົນ. ເທົ່າ 0,4% ຂອງຈຳນວນ ພົນລະເມືອງທົ່ວປະເທດ (ຕາມສະຖິຕິການສຳຫຼວດພົນລະເມືອງ ຄັ້ງທີ II ປີ 1995).

ຊື່ເອີ້ນ

ຊົນເຜົ່ານີ້ເອີ້ນຕົນເອງວ່າ: " ກະຕູ "ຊົນເຜົ່າອື່ນເອີ້ນເຂົາເຈົ້າກໍ່ແມ່ນ " ກະຕູ " ແລະຊື່ທີ່ເຂົາເຈົ້າມັກກໍ່ແມ່ນຊົນເຜົ່າ " ກະຕູ" ສຳລັບຄວາມໝາຍຂອງຊື່ເອີ້ນວ່າ " ກະຕູ່ "ຖ້າຈະແປຕາມພາສາ ຂອງເຂົາເຈົ້າເອງມີຢູ່ວ່າ: " ກະແປວ່າ ລຸງ ແລະຕູ ແປວ່າຍອດນ້ຳ ຫຼືຍອດຫ້ວຍ "

ຊົນເຜົ່າກະຕູ ປະກອບຫຼາຍແຊ່ງດ້ວຍກັນ ຄື: ຕຣິວ, ດາກກັ່ງ (ປັນເດງ), ອັຣນາ, ອາສານແລະເຟືອງ.

ພາສາ:

ພາສາປາກເວົ້າຂອງຊົນເຜົ່າກະຕູ ຈັດຢູ່ໃນໝວດພາສາ ມອນ-ຂະແມ. ເຂົາເຈົ້າບໍ່ມີຕົວໜັງສືຂຽນ.

ຮີດຄອງປະເພນີ, ຄວາມເຊື່ອຖື, ວັດທະນະທຳ-ສັງຄົມ

ຊົນເຜົ່າກະຕູ ມີຮີດຄອງປະເພນີ, ຄວາມເຊື່ອຖື ແລະວັດທະນະທຳຄ້າຍ ຄືກັນກັບບັນດາຊົນເຜົ່າ ໃນໝວດພາສາມອນ-ຂະແມ, ໂດຍສະເພາະແມ່ນມີຄວາມເຊື່ອໃນເລື່ອງຈິດວິນຍານແລະຜີ ພາສາກະຕູເອີ້ນວ່າ: "ຢ່ຳ ແລະ ເບຣີ" ຊຶ່ງມີຢ່ຳ ຫຼວງຫຼາຍ ໃນຊີວິດປະຈຳວັນ ແລະສິ່ງທີ່ ເຂົາເຈົ້າ ເຊື່ອຖືນັ້ນກໍ່ມີທັງອັນດີກັບອັນຮ້າຍໄປຄຽງຄູ່ກັນ.

ດ້ານລະບົບຄອບຄົວ ເລືອດເນື້ອເຊື້ອ ສາຍ ແລະການສືບຕະກຸນນັ້ນ ຊົນເຜົ່າກະຕູ ສືບ ເຊື້ອສາຍຕະກຸນທາງພໍ່, ລູກຜູ້ຊາຍເທົ່ານັ້ນມີສິດ ໃນການສືບທອດຕະກຸນເຊື້ອສາຍແທນພໍ່ ພ້ອມທັງ ສືບມູນມໍລະດົກ. ແຕ່ລະຕະກຸນ ຂອງຊົນເຜົ່າກະ ຕູຈະມີຊື່ສະເພາະຂອງຕົນເອງ, ທຸກຄົນໃນແຕ່ລະ ຕະກຸນ ຈະຕ້ອງໄດ້ເຊື່ອຟັງ, ປະຕິບັດຕາມຂໍ້ຫ້າມ ແລະການຄະລຳຕ່າງໆຢ່າງເຄັ່ງຄັດ. ພ້ອມກັນນີ້ກໍ່ ຍັງມີເລື່ອງທີ່ເລົ່າເຖິງຂໍ້ຫ້າມ ແລະການຄະລຳດັ່ງ ກ່າວອີກດ້ວຍ. ຄົນໃນຕະກຸນດຽວກັນມີໜ້າທີ່ຮັບ ຜິດຊອບໃນການຊ່ວຍເຫຼືອຊຶ່ງກັນ ແລະກັນ ໃນກິດ ຈະກຳຕ່າງໆ ເປັນຕົ້ນແມ່ນກິດຈະກຳທາງດ້ານຮີດ ຄອງປະເພນີ ແລະຄວາມເຊື່ອຖື. ຕາມປະເພນີ ແລ້ວ ຊົນເຜົ່າກະຕູມີຂໍ້ຫ້າມໃນການແຕ່ງດອງແບບ ໄຂ່ວຍິງ-ຊາຍ ລະຫວ່າງສອງຕະກຸນ. ໝາຍຄວາມ ວ່າ: ເມື່ອຜູ້ຊາຍໃນຕະກຸນ (ກ) ໄປເອົາເມຍໃນ ຕະກຸນ (ຂ) ແລ້ວ ຜູ້ຊາຍໃນຕະກຸນ (ຂ) ຈະບໍ່ມີ ສິດ ແລະອະນຸຍາດໃຫ້ແຕ່ງດອງກັບແມ່ຍິງ ໃນຕະ ກຸນ (ກ) ດັ່ງນີ້ເປັນຕົ້ນ. ສະນັ້ນເມື່ອສອງຕະກຸນ ມີ ການແຕ່ງດອງກັນແລ້ວຊາຍ ແລະຍິງໃນສອງຕະ ກຸນດັ່ງກ່າວຕ້ອງຊອກຫາຄູ່ຄອງໃນຕະກຸນອື່ນ. ອີກຢ່າງໜຶ່ງການແຕ່ງດອງມີລັກສະນະຊື້ຕົວແມ່ ຍິງຢ່າງຂາດຕົວ ໂດຍຈະມີຄ່າສິນສອດ ເຊິ່ງປະ ກອບດ້ວຍບັນດາວັດຖຸສິ່ງຂອງນັບທັງຄວາຍຈຳ ນວນແຕ່ໜຶ່ງໂຕຂຶ້ນໄປຫາສິບ ຫຼື ຊາວໂຕ ທີ່ພໍ່, ແມ່ ຝ່າຍຊາຍຕ້ອງໄດ້ມອບໃຫ້ແກ່ພໍ່, ແມ່ຂອງຝ່າຍຍິງ ໂດຍອີງຕາມຖານະບົດບາດ ແລະສະພາບທາງ ດ້ານເສດຖະກິດ ຂອງຄອບຄົວທັງສອງຝ່າຍ.

ລັກສະນະບ້ານເຮືອນ ຂອງຊົນເຜົ່າກະ ຕູ, ຕາມປະເພນີແລ້ວ ເຂົາເຈົ້າມັກຈະປຸກສ້າງ ບ້ານເຮືອນແບບເປັນຮູບວົງມົນອ້ອມສາລາກວາມ ແລະໃຫ້ຢູ່ໃກ້ກັບຕະກຸນ ຫຼືເຊື້ອສາຍຂອງຕົນ. ລັກ ສະນະຂອງເຮືອນ ຈະເປັນເຮືອນຮ້ານຕ່ຳ ແລະ ເປັນເຮືອນຍາວ ໂດຍອາໃສຢູ່ນຳກັນຫຼາຍຄອບຄົວ ແລະຫຼາຍເຊັ່ນຄົນ. ໝາຍຄວາມວ່າໃນບ້ານ ຂອງ ຊົນເຜົ່າກະຕູ ຈະມີເຮືອນສາລາກວາມຢູ່ໃຈກາງ ຂອງບ້ານ ຊຶ່ງສາລາກວາມນີ້ເຂົາເຈົ້າຈະໃຊ້ເປັນ ສະຖານທີ່ໂຮມຊຸມນຸມ, ເປັນບ່ອນຮັບແຂກເປັນ ສະຖານທີ່ ໃນການເຮັດພິທີກຳຕ່າງໆ ກ່ຽວກັບການ ເຊື່ອຖື. ເພື່ອປະຕິບັດຕາມຮີດຄອງປະເພນີ ຂອງ ຊົນເຜົ່າກະຕູ ໃນບ້ານເຮືອນຂອງເຂົາເຈົ້າມີ ການ ຄະລຳ ແລະມີຂໍ້ຫ້າມຫຼາຍຢ່າງເຊັ່ນ: ກ່ອນຈະ ເຂົ້າບ້ານ ຕ້ອງສັງເກດເບິ່ງປະຕູໂຂງວ່າມີຟົດໄມ້ຫຼື ບໍ່, ຖ້າມີຟົດໄມ້ດິບ ສະແດງວ່າຫ້າມເຂົ້າບ້ານ, ກ່ອນຈະຮູດເຂົ້າກ່ຽວເຂົ້າ ມີການຄະລຳບ້ານ ໂດຍ ບໍ່ໃຫ້ຄົນໃນອອກຄົນນອກບໍ່ໃຫ້ເຂົ້າ, ຫ້າມຂຶ້ນ ເຮືອນໃນເວລາມີຟົດໄມ້ດິບຕິດຢູ່ຝາເຮືອນ ຫຼືປະ ຕູ, ບໍ່ໃຫ້ນັ່ງອີ່ງເສົາເຮືອນ, ບໍ່ໃຫ້ນອນຂວາງເຮືອນ ແລະການເຂົ້າອອກເຮືອນຂອງແຂກຕ້ອງເຂົ້າ ອອກ ປະຕູທີ່ ໃຊ້ສຳລັບຮັບແຂກເທົ່ານັ້ນ. ນອກ ຈາກ ນີ້ ໃນເວລາມີແຂກມາຢ້ຽມຢາມເຂົາເຈົ້າມີ ປະເພນີຮັບແຂກດ້ວຍ ການໃຫ້ສູບຢາບັ້ງທີ່ ເປັນ ເອກະລັກອັນໜຶ່ງ ເຊິ່ງພາສາກະຕູເອີ້ນວ່າ: "ກອກ ເດີະ ".

ຊຶ່ງການດຳລົງຊີວິດ ຍັງມີລັກສະນະຂອງສັງຄົມ ແບບຮີດຄອງປະເພນີ ແລະຍຶດຕິດກັບທັດສະນະ ຄະຕິ ຄວາມເຊື່ອຕ່າງໆ ທີ່ໄດ້ມີການຖ່າຍທອດ ແລະສືບທອດຕໍ່ໆກັນມາຈາກລຸ່ນຄົນໜຶ່ງໄປສູ່ ອີກລຸ່ນຄົນໜຶ່ງຈົນກະທັ້ງເຖິງປະຈຸບັນ. ຈາກຮີດ ຄອງປະເພນີ, ການນັບຖືສິ່ງສັກສິດຕ່າງໆ ທີ່ໄດ້ ກ່າວມາເຂົາເຈົ້າເຊື່ອວ່າສິ່ງສັກສິດເຫຼົ່ານັ້ນມີທັງດີ ແລະຮ້າຍຊຶ່ງຈະຢູ່ຮອບໆຕົວຂອງເຂົາເຈົ້າເອງ ເພື່ອຄອຍດູແລ, ປົກປັກຮັກສາ ຫຼືອາດຈະເຮັດໃຫ້ ກໍ່ເກີດຄວາມເສຍຫາຍໃຫ້ແກ່ເຂົາເຈົ້າໄດ້, ແຕ່ຖ້າ ເຂົາເຈົ້າມີການກະທຳບາງສິ່ງຢ່າງລົງໄປ ໃນລັກ ສະນະຂອງການວິ້ງວອນ, ຮ້ອງຂໍໂດຍມີການນົບ ໄຫ້ວ ປະກອບໄປນຳແລ້ວ ສິ່ງສັກສິດຢູ່ໃນດ້ານດີ ກໍ່ຈະຄອຍດູແລປົກປັກຮັກສາ ຫຼືປັດເປົ່າສິ່ງຊົ່ວ ຮ້າຍຕ່າງໆ ໃຫ້ບັນເທົາເບົາບາງລົງໄດ້ ແລະເຊັ່ນ ດຽວກັບການໃຊ້ ຫຼືປະກອບພິທີແກ່ສິ່ງ ສັກສິດຢູ່ໃນ ດ້ານຮ້າຍ ຈະຊ່ວຍໃຫ້ສິ່ງເລວຮ້າຍຕ່າງໆເກີດໄປ ໃນທາງທີ່ດີ.

ສະນັ້ນໃນແຕ່ລະປີ ຊົນເຜົ່າກະຕູ ຈ ະມີພິ ທີກຳໃຫຍ່ ແລະນ້ອຍຫຼາຍຄັ້ງ ເພື່ອຂໍຄວາມສັກ ສິດ, ຄວາມ ຢູ່ເຢັນເປັນສຸກ ໃນການດຳລົງຊີວິດ ກໍ່ ຄືການຜະລິດ. ບຸນປະເພນີທີ່ສຳຄັນໄດ້ແກ່ການ ເຮັດບຸນຂວັນເຂົ້າ, ພາສາກະຕູເອີ້ນວ່າ "ອາຢາ", ບຸນກ່ອນຈະລົງມືປູກຝັງ (ຕະເນັ້ຍຣ), ບຸນກ່ອນຈະ ລົງມືຮູດ ຫຼືກ່ຽວເຂົ້າ (ຕະເຮັ້ຍ ຫຼືຈາຣຶບ), ບຸນສາ ລາກວານ (ເບຣິາໂຣງ) ແລະ ພິທີກຳອື່ນໆ. ການ ເຮັດບຸນ ແລະພິທີຕ່າງໆ ທີ່ໄດ້ກ່າວມານັ້ນມີທັງ ເຮັດຢູ່ໃນຄອບຄົວ ແລະເຮັດລວມບ້ານ. ໃນເວລາ ເຮັດພິທີນັ້ນເຂົາເຈົ້າມັກຂ້າໄກ່, ໝູ ຫຼືຂ້າຄວາຍ ເພື່ອຖວາຍແກ່ສິ່ງສັກສິດ ແລະເປັນອາຫານສຳລັບ ແຂກຄົນທີ່ມາຮ່ວມ.


ສຳລັບປະເພນີການເກີດລູກ ຂອງຊົນເຜົ່າ ກະຕູນັ້ນ ເຂົາເຈົ້າມີສະຖານທີ່ຕ່າງຫາກ ຊຶ່ງຜູ້ເປັນ ຜົວຈະຕ້ອງໄດ້ກະກຽມໄວ້, ສະຖານທີ່ດັ່ງກ່າວ ອາດຈະແມ່ນຢູ່ກ້ອງຕະລ່ຽງເຮືອນ, ຊານເຮືອນ ຫຼື ອາດຈະປຸກຕູບ ຢູ່ໃກ້ບ້ານແລ້ວ ແຕ່ກໍລະນີທີ່ຈະ ສະດວກ ແລະເໝາະສົມ. ໝາຍຄວາມວ່າ ບໍ່ໄດ້ ເກີດລູກຢູ່ໃນເຮືອນ .ໃນເວລາເກີດລູກນັ້ນຈະມີ ແມ່ຍິງ ທີ່ເປັນຍາດພີ່ນ້ອງທັງມີປະສົບການ ໃນ ດ້ານນີ້ຄອຍໃຫ້ການເບິ່ງແຍງ ແລະຊ່ວຍເຫຼືອ. ຫຼັງ ຈາກເກີດລູກໄດ້ສາມວັນແລ້ວ ກໍ່ສາມາດມາຢູ່ກຳ ໃນເຮືອນໄດ້ຕາມປົກກະຕິ.

ປະເພນີຂອງການຕາຍ ເຊິ່ງກໍ່ຕ້ອງໄດ້ປະ ຕິບັດໄປຕາມແຕ່ລະຂັ້ນຕອນຂອງຮີດຄອງປະເພ ນີ, ຕາມໄວອາຍຸກະສຽນ, ຕາມກໍລະນີຂອງການ ຕາຍ (ຕາຍເຈັບເປັນ ຫຼືຕາຍທຸງ) ແລະຕາມຖາ ນະບິດບາດ ກໍ່ຄືສະພາບທາງເສດຖະກິດຂອງ ຄອບຄົວຜູ້ຕາຍ. ສ່ວນຫຼາຍແລ້ວຊົນເຜົ່າກະຕູ ສິ່ງ ສະການດ້ວຍການຝັງສົບ.

ດ້ານສິລະປະວັນນະຄະດີ, ຊົນເຜົ່າກະຕູ ມີກອນຂັບລຳ, ມີເນື້ອຮ້ອງທຳນອງເສບ, ມີນິທານຕ່າງໆທີ່ເປັນເອກະລັກຂອງຕົນເອງ. ສຳລັບເຄື່ອງດົນຕີ ຂອງເຂົາເຈົ້າມີຄ້ອງ, ແຄນ, ປີ່ ແລະ ອື່ນໆ. ນອກຈາກນີ້ແລ້ວຊົນເຜົ່າກະຕູ ຍັງມີເຄື່ອງນຸ່ງປະຈຳເຜົ່າຂອງຕົນເອງ ຊຶ່ງແຕ່ກ່ອນຜູ້ຊາຍມັກນຸ່ງກະຕ່ຽວ, ແຕ່ມາຮອດປະຈຸບັນນີ້ມີການປ່ຽນແປງ ໂດຍຫັນມານຸ່ງເຄື່ອງທີ່ຊື້ຈາກຕະຫຼາດແທນ. ສຳລັບແມ່ຍິງຈະສາມາດຮັກສາເຄື່ອງນຸ່ງ ແລະ ການເອ້ຢ້ອງທີ່ເປັນເອກະລັກໄດ້ດີກວ່າຜູ້ຊາຍຊຶ່ງ ຈະເຫັນໄດ້ໃນເວລາມີພິທີກຳ ແລະງານບຸນຕ່າງໆ. ລັກສະນະພື້ນບ້ານ, ພື້ນເມືອງ. ການລ້ຽງສັດກໍ່ເປັນອີກອາຊີບໜຶ່ງ ທີ່ຊົນເຜົ່າກະຕູ ມີມູນເຊື້ອມາແຕ່ດົນນານ, ແຕ່ສ່ວນຫຼາຍແລ້ວເຂົາເຈົ້າຈະລ້ຽງໄວ້ ເພື່ອໃຊ້ໃນການເຮັດພິທີກຳທາງຮີດຄອງປະເພນີ, ຄວາມເຊື່ອຖື ແລະໄວ້ເປັນຄ່າສິນສອດໃນເວລາລູກຊາຍແຕ່ງດອງ ໂດຍສະເພາະແມ່ນຄວາຍມີຄວາມສຳຄັນເປັນພິເສດ ຖັດຈາກນັ້ນກໍ່ແມ່ນໝູ ແລະໄກ່. ຄຽງຄູ່ກັນນີ້ ແມ່ຍິງຊົນເຜົ່າກະຕູຍັງມີຄວາມຊຳນານ ໃນເລື່ອງຕຳແຜ່ນແພເຮັດເຄື່ອງນຸ່ງຫົ່ມ, ສຳລັບຜູ້ຊາຍພັດມີຄວາມຊຳນານເລື່ອງຫັດຖະກຳຈັກສານທີ່ມີສີສັນລວດລາຍ ແລະທົນທານໝັ້ນໝຽວອີກດ້ວຍ.

ການດຳເນີນວິຖີຊີວິດທາງດ້ານເສດຖະກິດ

ຊົນເຜົ່າກະຕູສ່ວນຫຼາຍແລ້ວເຂົາເຈົ້າຍັງດຳລົງຊີວິດຢູ່ເຂດພູດອຍ ທີ່ຫ່າງໄກສອກຫຼີກ, ພື້ນຖານໂຄງລ່າງຂອງລັດຍັງບໍ່ສາມາດໄປທົ່ວເຖິງໄດ້, ເສັ້ນທາງໄປມາບໍ່ທັນສະດວກເຮັດໃຫ້ການໄປບໍລິການກໍ່ຄືການມາຮັບບໍລິການຂອງລັດພົບຄວາມຫຍຸ້ງຍາກ.ເຂົາເຈົ້າມີອາຊີບຫຼັກໃນການເຮັດໄຮ່ປູກເຂົ້າພ້ອມກັນນີ້ເຂົາເຈົ້າຍັງປູກພືດຜັກ ແລະພືດທາດແປ້ງອື່ນໆ ເພື່ອໄວ້ບໍລິໂພກໃນຄົວເຮືອນ. ໂດຍທົ່ວໄປແລ້ວວິຖີການດຳເນີນຊີວິດປະຈຳວັນຂອງເຂົາເຈົ້າຍັງຕິດພັນຢູ່ກັບທຳມະຊາດເປັນສ່ວນໃຫຍ່, ເຄື່ອງມືອຸປະກອນ ແລະເຕັກນິກວິທີ ການຜະລິດກໍ່ຍັງແມ່ນ



Katu

Historical background:

The Katu people have lived in Laos for many centuries, but their exact origins are relatively unknown. The historical background and origin of this ethnic group is similar to those of other members of the Mon-Khmer language group. Many researchers believe that the Katu migrated from Southeast India and southern parts of China. In these regions, there are still people who speak Mon-Khmer languages such as the Moondah and Koln people.

Presently, the majority of Katu live in the Southern provinces of Laos such as Kaleum, Darkcheung and Thataeng districts of Sekong province; Laongam district of Salavan province and Paksong and Bachiengchalernsook of Champassak province. In addition, Katu ethnic people also live in Vietnam in Quang Nam, Danang, and Theua Thian Hue provinces.

The total population of Katu people living in Laos is 17,024 people, of which 8,653 are females. The Katu share 0.4% of the country's total population, according to the second population census in 1995.

Name and language:

The Katu refer to themselves also as the "Katu", and other ethnic groups also call them Katu as well, and this is the name they generally prefer. The Katu group is also composed of many smaller branches such as the Trew, Darkkung, Utrna, Asarn, and Pheuang groups.

The Katu language is classified as a member of the Mon-Khmer language group and is a member of the Katuic language branch. They do not have a written language or alphabet.

Beliefs, society, ceremonies and myths:

Katu have customs and beliefs that are similar to other members of the Mon-Khmer group. They believe in the spiritual mind and soul as well as spirits that they call in their language the "Yung and Brao". There are many spirits, some which are good and considered helpful, and some that are evil and feared. One of the most important is the spirit of rice.

Like other ethnic groups in Lao, the Katu live in a society tightly controlled by custom and traditions that have been

handed down for generations. They believe sacred things surround them that contain good and evil. These things protect and take care of them but may cause harm as well. If the people pray and worship properly, they will be protected from misfortune. Also if they worship and respect the evil spirits, the Katu believe misfortune can be turned into fortune.

Therefore, every year the Katu will have large feasts and ritual ceremonies to beg for happiness and a peaceful life as well as for good production in farming and hunting. The major feast celebrates the rice spirit called in Katu language the Ah Yah. In addition, feasts are held before planting and harvesting rice. In addition, they have other feasts and ritual ceremonies. They traditionally offered chickens, pigs, or buffaloes to the spirits as a sacrifice plus and large meals for guests during feasting and rituals.

In regards to succession the Katu community follows a patrilineal lineage. A clan is of great importance, even more than an individual family. Only a son can lead the clan and receive inheritance. Every person in each clan must respect and implement spiritual traditions of the clan, and every clan member has the responsibility to help others in various activities, particularly in their customs, traditional rites, and religious beliefs.

Traditionally, the Katu have restrictions on cross-marriage between clans. If a man in "A clan" marries a woman in "B clan", a man in "B Clan" cannot marry a woman in "A clan". The marriage takes place when the groom pays a dowry of one to twenty buffaloes to the bride's parents. This figure depends on the economics status of the couple.

Birth traditionally takes place in a separate place prepared by the husband. This place can be an area under the house or on a balcony attached to the house. Also, a small hut may be built near the village. It is important that pregnant mothers do not give birth in the house.

During birth, there is usually an experienced woman or female relative to assist in the birthing process. After three days have passed after giving birth, the mother can return to the house with her infant.

In regards to death and funerals, there are traditions that are followed depending on the age and cause of death (illness or accident). In addition, the social status and economic status of the deceased's family plays a role in the funeral rites. Generally, Katu bury their dead. However, if a person died an unnatural death such as

by a tiger or violence, the village was abandoned and all animals were put to death. After a period of around six months of living in the forest, a new village could be built in a completely new area.

Village and house:

The Katu traditionally prefer to place their simple houses of bamboo and wood in a circle, having a Salakwan (public house) located in the center of the village. The Salakwan is for receiving guests and ritual ceremonies and feasts. One also must be cautious and observe whether there is a fresh tree branch by the village gate before entering a Katu village. If there is a branch it is forbidden for a villager to leave the village and for an outsider to enter the village. Also, if a fresh tree branch is hanging on the wall of a house, it means entering their house is prohibited. It is also prohibited to sit and lean on a column of the house. A visitor must use the special door as an entry and exit, not the regular family door. The tradition of receiving a guest is to provide a tobacco pipe for the guest to smoke, which is called a Korkder.

Costume:

Traditionally men used to wear the traditional loincloth and left their upper body naked, but now most Katu wear modern clothing bought in local markets. The Katu women have preserved their traditional dress better than the men have. These traditional costumes can often be seen during various feasts and ritual ceremonies. These consist of long dresses that cover the breasts down to the knees. Horizontal stripes red and yellow stripes cross across the black background.

Traditionally, the Katu filed their teeth, but that is not practiced much now. They were also skilled at tattooing their bodies, but this custom is slowly dying out also.

Agriculture and livelihood

The majority of Katu live in remote mountainous areas, far from public infrastructure. They practice mainly slash and burn cultivation of rice, and grow vegetables and root crops for their household consumption. Katu men are skilled hunters also. Generally, their livelihood is very tied-in with nature, with their tools and technology production primitive. Animal husbandry is an activity that Katu have practiced for centuries. The animals are raised mainly for ritual ceremonies and can also be used for wedding dowries. Buffaloes are of special importance for this, and pigs and chickens are next. Katu women are skillful in weaving cotton to make clothes, and the men are skillful in handicraft such as carving.

ຊົນເຜົ່າ ກຮຽງ

ປະຫວັດຄວາມເປັນມາ

ຊົນເຜົ່າກຮຽງ ນີ້ມີປະຫວັດຄວາມເປັນມາ ແລະຕົ້ນກຳເນີດຄືກັນກັບບັນດາຊົນເຜົ່າໃນໝວດພາສາມອນ-ຂະແມ. ໝາຍຄວາມວ່າ: ເຂົາເຈົ້າໄດ້ເຂົ້າມາອາໃສ ແລະດຳລົງຊີວິດຢູ່ໃນດິນແດນລາວຂອງພວກເຮົາມາໄດ້ຫຼາຍສະຕະວັດແລ້ວ.

ປະຈຸບັນຊົນເຜົ່າກຮຽງ ໄດ້ຕັ້ງຖິ່ນຖານພູມລຳເນົາ ແລະດຳລົງຊີວິດຢູ່ບັນດາແຂວງພາກໃຕ້ຂອງລາວຄືຫຼາຍກວ່າໝູ່ແມ່ນຢູ່ເມືອງກະລຶມ, ເມືອງທ່າແຕງ ແລະເມືອງລະມາມ ແຂວງເຊກອງ. ນອກຈາກນີ້ແລ້ວເຂົາເຈົ້າຍັງດຳລົງຊີວິດຢູ່ເມືອງສາລະວັນ ແຂວງສາລະວັນ ແລະເມືອງປາກຊ່ອງ ແຂວງຈຳປາສັກ.

ຊົນເຜົ່າກຮຽງ ໃນລາວມີພົນລະເມືອງທັງໝົດ 12.189 ຄົນ, ຍິງ 6.175 ຄົນ. ເທົ່າກັບ 0,3% ຂອງພົນລະເມືອງທົ່ວປະເທດ (ຕາມສະຖິຕິການສຳຫຼວດພົນລະເມືອງຄັ້ງທີ II ປີ1995).

ຊື່ເອີ້ນ

ຊົນເຜົ່າອື່ນເອີ້ນເຂົາເຈົ້າວ່າ " ແງະ " ແຕ່ເຂົາເຈົ້າບໍ່ມັກ ເພາະວ່າເຂົາເຈົ້າເອີ້ນຕົນເອງຕາມຊື່ດັ້ງເດີມວ່າ: " ກຮຽງ "ແລະຊື່ທີ່ເຂົາເຈົ້າມັກທີ່ສຸດກໍ່ແມ່ນ ຊົນເຜົ່າກຮຽງ.

ຊົນເຜົ່າກຮຽງ ປະກອບດ້ວຍ 2 ແຊ່ງຄື ເກາະ ແລະຈະຕ້ອງ.

ພາສາ

ຊົນເຜົ່າກຮຽງ ມີພາສາປາກເວົ້າທີ່ເປັນເອກະລັກສະເພາະຂອງຕົນເອງ ເຊິ່ງພາສາຂອງຊົນເຜົ່ານີ້ຈັດຢູ່ໃນໝວດພາສາມອນ-ຂະແມ. ເຂົາເຈົ້າບໍ່ມີຕົວໜັງສືຂຽນ.

ຮີດຄອງປະເພນີ, ຄວາມເຊື່ອຖື, ວັດທະນະທຳ ແລະ ສັງຄົມ

ຊົນເຜົ່າກຮຽງ ມີຮີດຄອງປະເພນີ, ຄວາມເຊື່ອຖື ແລະວັດທະນະທຳທີ່ຫຼາກຫຼາຍມາແຕ່ບູຮານນະການ, ຜ່ານການຕິດຕໍ່ພົວພັນ ເຊິ່ງກັນ ແລະ ກັນກັບບັນດາຊົນເຜົ່າທີ່ຢູ່ໃກ້ຄຽງ, ມີການຢືມວັດທະນະທຳຂອງກັນ ແລະມີການປະສົມປະສານວັດທະນະທຳ, ໄດ້ເຮັດໃຫ້ມີການປ່ຽນແປງຕາມແຕ່ລະໄລຍະປະຫ້ວດສາດ. ແຕ່ກ່ອນຊົນເຜົ່າກຮຽງ ມີຄວາມເຊື່ອເລື່ອງໄສຍະສາດ ແລະສິ່ງສັກສິດທີ່ເໜືອທຳມະຊາດຄື: ຄວາມເຊື່ອໃນເລື່ອງຜີ, ເຂົາເຈົ້າເຊື່ອວ່າເມື່ອມີການເຈັບໄຂ້ໄດ້ປ່ວຍ, ການເກີດໄພພິບັດຕໍ່ຜົນຜະລິດໂດຍສະເພາະແມ່ນເຂົ້າໄຮ່ຖືກທຳລາຍ ຫຼືເສຍຫາຍແມ່ນເປັນຜົນມາຈາກການກະທຳຂອງຜີເຊິ່ງເກີດຈາກການເຮັດຜິດຮີດຄອງປະເພນີທີ່ບັນພະບູລຸດໄດ້ກຳນົດໄວ້ພາໃຫ້ຜີບັນພະບູລຸດບໍ່ພໍໃຈ ແລະບໍ່ຄຸ້ມຄອງ. ໃນສັງຄົມຂອງຊົນເຜົ່າກຮຽງ ມີຜີທີ່ສຳຄັນຫຼາຍຢ່າງໄດ້ແກ່: ຜີພໍ່ ຜີແມ່, ຜີບັນພະບູລຸດ, ຜີເຮືອນ, ຜີປ່າ, ຜີນ້ຳ ແລະ ອື່ນໆ. ຜີດັ່ງກ່າວມີການຕິດພັນກັບການດຳເນີນຊີວິດປະຈຳວັນຢູ່ສະເໝີ ແລະກໍ່ມີທັງດ້ານດີດ້ານຮ້າຍຄຽງຄູ່ກັນໄປ.

ໂຄງສ້າງທາງສັງຄົມ ຂອງຊົນເຜົ່າກຮຽງ ຈະປະກອບມີຫຼາຍຕະກຸນ ເຊິ່ງແຕ່ລະຕະກຸນກໍ່ຈະ

ມີຊື່ຂອງຕົນເອງ ກໍ່ຍັງມີຂໍ້ຫ້າມ ແລະການຄະລຳ ທີ່ແຕກຕ່າງກັນອອກໄປ. ດ້ານລະບົບຄອບຄົວ ເລືອດເນື້ອເຊື້ອສາຍ ແລະການສືບຕະກຸນນັ້ນ ຊົນ ເຜົ່າກຽງເຂົາເຈົ້າສືບເຊື້ອສາຍຕະກຸນທາງພໍ່, ແມ່ຍິງທີ່ແຕ່ງດອງແລ້ວຕ້ອງໄປຢູ່ເຮືອນນຳຄອບ ຄົວພໍ່, ແມ່ຂອງຜົວ, ໄປເປັນສະມາຊິກໃນຕະກຸນ ຂອງຜົວ ພ້ອມທັງມີໜ້າທີ່ຮັບຜິຊອບໃນການເບິ່ງ ແຍງລ້ຽງດູ, ໃນການອອກແຮງງານກໍ່ຄືປະຕິບັດກິດ ຈະກຳຕ່າງໆ ຮ່ວມກັບສະມາຊິກຂອງຄອບຄົວຜູ້ ເປັນຜົວ.

ສະນັ້ນລະບົບຄອບຄົວຈຶ່ງມີລັກສະນະທີ່ ຂ້ອນຂ້າງຂະຫຍາຍຄືໃນເຮືອນຫຼັງໜຶ່ງໆຈະປະ ກອບດ້ວຍ1-6 ຄອບຄົວ ຫຼືຫຼາຍກວ່ານັ້ນດຳລົງຊີ ວິດຢູ່ຮ່ວມກັນໂດຍຈະມີຜູ້ຊາຍທີ່ອາວຸໂສໃນຄົວ ເຮືອນເປັນຫົວໜ້າ ເພື່ອບໍລິຫານວຽກງານກິດຈະ ກຳຕ່າງໆ. ການປົກຄອງບ້ານໃນສັງຄົມຂອງຊົນ ເຜົ່າກຽງ ນອກຈາກຈະມີການຈັດຕັ້ງຕ່າງໆທີ່ທາງ ການຈັດຕັ້ງຂຶ້ນແລ້ວກໍ່ຍັງມີຜູ້ອາວຸໂສໃນແຕ່ລະ ສາຍຕະກຸນຂອງບ້ານເຊິ່ງເປັນຜູ້ທີ່ຮູ້ຂະນົບທຳນຽມ ປະເພນີຂອງຊົນເຜົ່າ ທັງເປັນຜູ້ທີ່ເຄົາລົບນັບຖື ຂອງຄົນໃນຊຸມຊົນ ເປັນຜູ້ຊ່ວຍປົກຄອງດູແລ.

ຊົນເຜົ່າກຽງ ນີ້ສ່ວນຫຼາຍຕັ້ງຖິ່ນຖານ ບ້ານຊ່ອງຢູ່ເຂດທີ່ຫ່າງໄກສອກຫຼີກ, ລັກສະນະ ຂອງບ້ານຈະເປັນຮູບວົງມົນອ້ອມສາລາກວາມ. ການປຸກສ້າງເຮືອນຍັງປະຕິບັດຕາມປະເພນີ ຂອງ ເຂົາເຈົ້າຄື: ຊົນເຜົ່າກຽງມັກຈະປຸກສ້າງ ແລະຢູ່ ເຮືອນຮ້ານ. ການຈັດແບ່ງຫ້ອງໃນເຮືອນນັ້ນແມ່ນ ອີງຕາມຈຳນວນສະມາຊິກ ຂອງຄົວເຮືອນເຊິ່ງມີ ລັກສະນະຄ້າຍຄືກັນກັບຊົນເຜົ່າກະຕູ.

ຍ້ອນມີຄວາມເຊື່ອໃນເລື່ອງຂອງຜີ ດັ່ງ ນັ້ນໃນເຮືອນຂອງຊົນເຜົ່າກຽງ ມີການຄະລຳຫຼາຍ ຢ່າງຄື: ຫ້າມບໍ່ໃຫ້ນັ່ງອີງເສົາເຮືອນ, ບໍ່ໃຫ້ນອນ ຂວາງເຮືອນ, ບໍ່ໃຫ້ນອນເອົາຕີນຕໍ່ໃສ່ເສົາເຮືອນທີ່ ມີຜີຢູ່ ແລະການທີ່ຈະເຂົ້າໃນເຮືອນຕ້ອງໄດ້ເຂົ້າປະ ຕູເບື້ອງຮັບແຂກ. ຢູ່ແຕ່ລະບ້ານຂອງຊົນເຜົ່າກຽງ ເຂົາເຈົ້າຈະສ້າງສາລາ ກວາ ເຊິ່ງໃນເວລາສ້າງສາ ລາກວາມນັ້ນຫ້າມທຳການຜະລິດ.

ສາລາກວາມເປັນບ່ອນເຮັດພິທີກຳ ຕ່າງໆ. ດ້ວຍເຫດຜົນທີ່ໄດ້ກ່າວມາສະນັ້ນຖ້າບໍ່ ຮອດຍາມບຸນສາລາກວາມ ແມ່ນຫ້າມບໍ່ໃຫ້ຕີພະ ເໜາະ ແລະໃນເວລາມີການຄະລຳບ້ານ ແມ່ນ ຫ້າມຄົນໃນອອກຄົນນອກເຂົ້າ. ໃນກໍລະນີມີແຂກ ຈາກທາງນອກມາເກີດລູກ ຫຼືຕາຍຢູ່ບ້ານຕ້ອງໄດ້ ເຮັດພິທີກຳແປງຮີດບ້ານ ນອກຈາກນີ້ແລ້ວໃນບ້ານ ຂອງຊົນເຜົ່າກຽງ ຈະມີມະເຫສັກເປັນຜູ້ຮັກສາຊຶ່ງ ມີຂໍ້ຫ້າມບໍ່ໃຫ້ມີການແຕະຕ້ອງເປັນອັນຂາດ.

ສຳລັບບຸນປະເພນີ ແລະພິທີກຳທີ່ສຳຄັນ ຂອງຊົນເຜົ່າກຽງ ເຂົາເຈົ້າຈະມີການສະເຫຼີມສະ ຫຼອງດ້ວຍຫຼາຍຮູບການ ແລະໃນປີໜຶ່ງໆຈະເຮັດ ຫຼາຍຄັ້ງເປັນຕົ້ນແມ່ນການເຮັດພິທີກຳ ເພື່ອລະນຶກ ເຖິງຈິດວິນຍານຂອງພໍ່, ແມ່ ເຊິ່ງຈະຈັດ ແລະມັກ ເຮັດໃນເດືອນສີ່, ມີບຸນປີໃໝ່(ບຸນງະ). ສະຖານທີ່ ສຳລັບຈັດພິທີກຳສ່ວນຫຼາຍແລ້ວແມ່ນເຮືອນສາ ລາກວາມ. ເມື່ອມີພິທີກຳດ້ານຄວາມເຊື່ອຖື ແລະ


ງານບຸນປະເພນີສ່ວນຫຼາຍແລ້ວ ເຂົາເຈົ້າຈະຂ້າຄວາຍເພື່ອເປັນເຄື່ອງຖວາຍ ແລະເປັນອາຫານ. ນອກຈາກນີ້ແລ້ວຊົນເຜົ່າກຽງຍັງມີພິທີກຳໃນຮອບປີໜຶ່ງໆທີ່ກ່ຽວກັບການຜະລິດ ແລະເວລາເກີດໄພພິບັດຕ່າງໆ ເຊັ່ນ: ການເຮັດພິທີກ່ອນຈະຮູດ ຫຼືເກັບກ່ຽວເຂົ້າຊຶ່ງຈະມີການຄະລຳບ້ານເປັນເວລາສາມວັນ.

ດ້ານສິລະປະວັນນະຄະດີ ຂອງຊົນເຜົ່າກຽງເຂົາເຈົ້າມີກອນຂັບລຳ, ມີນິທານພື້ນເມືອງ, ມີການເຕັ້ນລຳ ແລະອື່ນໆ ເຊິ່ງເປັນເອກະລັກຂອງເຂົາເຈົ້າ. ສຳລັບການນຸ່ງຖື, ການເອ້ຢ້ອງທີ່ເປັນເອກະລັກຂອງຊົນເຜົ່າກຽງນັ້ນ ແມ່ນນິຍົມໃສ່ໃນເວລາມີພິທີກຳ ຫຼືງານບຸນປະເພນີເທົ່ານັ້ນ, ແຕ່ໃນວັນທຳມະດາທົ່ວໄປເຂົາເຈົ້າຫັນມານຸ່ງເຄື່ອງທີ່ຊື້ຈາກຕະຫຼາດເປັນສ່ວນຫຼາຍ. ສຳລັບປະເພນີການແຕ່ງກາຍເອ້ຢ້ອງຕ່າງໆນັ້ນ ຕາມຮີດຄອງປະເພນີແບບດັ້ງເດີມຂອງເຂົາເຈົ້າໄດ້ແກ່: ປະເພນີຕັດແຂ້ວ, ບ່ອງຫູ ແລະສັກລາຍຕາມຕົນຕົວ ເພື່ອສະແດງເຖິງຄວາມເກັ່ງກ້າສາມາດ, ຄວາມອົດທົນ ແລະຄວາມຮັ່ງມີເຫຼົ່ານີ້ເປັນຕົ້ນ.

ການດຳເນີນວິຖີຊີວິດ ທາງດ້ານເສດຖະກິດ

ຊົນເຜົ່າກຽງ ສ່ວນຫຼາຍມີອາຊີບເຮັດໄຮ່ປູກເຂົ້າ. ພ້ອມໆກັບການປູກເຂົ້າກໍ່ຍັງປູກພືດຜັກເພື່ອໄວ້ບໍລິໂພກເຊັ່ນໃນໄຮ່ຜືນດຽວນັ້ນເຂົາເຈົ້າຈະປູກຫຼາຍຢ່າງ ຄື: ພືດຜັກ, ເຜືອກມັນ, ໝາກອຶ, ໝາກຝັກ, ໝາກເຜັດໝາກເຂືອ, ໝາກໂຕ່ນໝາກແຕງ, ສາລີ ແລະອື່ນໆເພື່ອໄວ້ກິນໃນຍາມຂາດເຂີນເຂົ້າ. ການລ້ຽງສັດປະເພດໄກ່ ແລະໝູນັ້ນຈະລ້ຽງກັນ ເກືອບທຸກຄົວເຮືອນ ເຊິ່ງມີເປົ້າໝາຍເພື່ອໄວ້ປະກອບພິທີກຳ ແລະກໍ່ຈະຂ້າກິນໃນບາງໂອກາດເທົ່ານັ້ນ. ສ່ວນສັດປະເພດງົວຄວາຍກໍ່ລ້ຽງ, ແຕ່ບໍ່ຫຼາຍ. ເຂົາເຈົ້າຈະຫາເວລາຫວ່າງ ເພື່ອໄປຊອກເຄື່ອງປ່າຂອງດົງເພື່ອໄປຂາຍ ແລະແລກປ່ຽນສິ່ງຂອງ ກໍ່ຄືເຄື່ອງໃຊ້ສອຍຕ່າງໆ ທີ່ຈຳເປັນໃນການດຳເນີນຊີວິດປະຈຳວັນ. ມາຮອດປະຈຸບັນມີຈຳນວນໜຶ່ງໄດ້ມີການຫັນມາປູກຕົ້ນໄມ້ກິນໝາກເຊັ່ນ: ກາເຟ, ຢາສູບ ແລະອື່ນໆ.

ຄຽງຄູ່ກັບບັນຫາທີ່ກ່າວມານັ້ນຊົນເຜົ່າກຽງຍັງມີມູນເຊື້ອທາງດ້ານຫັດຖະກຳຈັກສານ, ຫຍິບຖັກປັກແສ່ວອີກດ້ວຍ.



Kriang

Historical background:

The Kriang ethnic group's historical background and origin is similar to others in the Mon-Khmer language group. They have lived in the territory of Laos for many centuries.

Presently, most of the Kriang people have settled in the southern provinces of Laos, in particular, in Kaleum, Thataeng and Lamarm districts of Sekong province. In addition, they live also in Salavan district of Salavan province and in Paksong district of Champassak province. The Kriang officially consist of two groups: the Kohr and the Chatong.

The total population of Kriang in Laos is 12,186 people, of which 6,175 are female, sharing 0.3% of the country's total population, according to the Second population census done in 1995.

Name and language:

Other ethnic groups refer to them as the "Ngae," but they do not like this name. They prefer to refer to themselves as "Kriang".

The Kriang language is placed on the Katuic branch of the Mon-Khmer language group. They do not have written language.

Beliefs, society, ceremonies and myths:

The Kriang have unique customs, traditions, and beliefs. Through the relationships and communication with other neighboring ethnic groups, they have borrowed and combined other cultures. The Kriang believe in animism. They believe that spirits are everywhere, both good and bad. These spirits are associated with objects and things, such as trees, rivers, wind, and rain, for example. When someone falls sick, when there is a disaster, or damage to their agriculture or economic production they believes this is the act of a spirit.

The Kriang people will feast many times in a year. One such feast is to commemorate the spiritual soul of dead parents. This is usually organized in April. The Kriang also celebrate the New Year festival (*Boon Nga*).

When there is a ritual feast or traditional festival, they kill a buffalo to offer as sacrifice and for feeding the villagers. In addition, there are feasts in association with their yearly agricultural production

such as before harvesting rice. These feasts may lat up to three days.

The social structure of the Kriang is composed of many family clans, and each clan has its own name with various taboos and restrictions. Inheritance follows a paternal line. After marriage, the wife will live with the parents of her husband. She will become a member of her husband's family and will work with that family. The households are extended with one to six families living together. The most elderly man will generally serve as the head of this extended family group.

Apart from the official organization of government, the elderly and prominent figures of each family clan will help in village administration as they are well respected by the village community.

Village and house

Kriang settle mainly in remote areas in villages of 25 to 50 houses. Traditionally the houses were placed in a circle or rectangle around the *Salakwan* or village public house that is located at the center.

During the construction of the *Salakwan,* the villagers are prohibited from working in their fields and farms. The *Salakwan* is also a place for feasting and rites.

Costume:

Traditional costumes have mostly vanished; with the Kriang mostly wearing commercially produced Lao clothing. The traditional woman's dress consisted of a red sarong and short-sleeved shirt with a sort of cape. The cape was dark blue with red stripes around the neck. Women weaved these themselves, but today most Kriang women no longer have weaving skills.

Agriculture and livelihood:

Kriang people are occupied mainly in shifting cultivation of dry land rice. However, some with access to reliable water will grow wet-paddy rice. They also grow vegetables for consumption and trade such as taro, pumpkin, eggplants, wax gourd, cucumber, maize and others. They raise chickens and pigs in nearly every household, killing them on the occasions of rites and feasts, killing for daily consumption only occasionally. The Kriang raise also buffalo and cattle, but this is not as common in the Kriang as other groups. Hunting and fishing are also important for food sources.

Presently, some of them have begun to grow coffee, tobacco and other cash crops. In addition, Kriang people have a tradition off bamboo weaving of baskets and roof coverings.

ຊົນເຜົ່າກຣີ

ປະຫວັດຄວາມເປັນມາ:

ຊົນເຜົ່າ " ກຣີ " ແມ່ນຊົນເຜົ່າໜຶ່ງ ທີ່ດຳລົງຊີວິດຢູ່ລາວມາໄດ້ເທິງນານແລ້ວ. ຊົນເຜົ່ານີ້ມີປະຫວັດການເຄື່ອນຍ້າຍທີ່ສັບສົນ, ນັກຄົ້ນຄວ້າຫຼາຍຄົນທັງພາຍໃນ ແລະຕ່າງປະເທດ ຕ່າງກໍ່ໃຫ້ເຫດຜົນຄ້າຍຄືກັນ ແລະຕ່າງກັນຄື: ຊົນເຜົ່າ"ກຣີ" ຢູ່ແຂວງ ບໍລິຄຳໄຊ ແລະແຂວງ ຄຳມ່ວນ ໄດ້ເຄື່ອນຍ້າຍມາຈາກເຂດຊາຍແດນ ຫວຽດນາມ .

ຊົນເຜົ່າ " ກຣີ "ຢູ່ແຂວງໄຊຍະບູລີ ໄດ້ເຄື່ອຍຍ້າຍມາຈາກທິດຕາເວັນອອກສ່ຽງເໜືອ ຂອງປະເທດ ໄທ. ໂດຍອີງຕາມພື້ນຖານທາງພາສາສາດແລ້ວຊົນເຜົ່າ " ກຣີ " ໃນລາວມີສອງພາກສ່ວນ ເຊິ່ງຕັ້ງພູມລຳເນົາ ແລະທຳມາຫາກິນຢູ່ສະຖານທີ່ຕ່າງກັນຄື:

ພາກສ່ວນທີໜຶ່ງ: ຕັ້ງພູມລຳເນົາ ແລະທຳມາຫາກິນຢູ່ເມືອງ ປົວລະພາ, ເມືອງຍົມມະລາດ, ເມືອງ ນາກາຍ ຂອງແຂວງ ຄຳມ່ວນ, ເມືອງ ວຽງທອງ ແລະ ເມືອງ ຄຳເກີດ ແຂວງ ບໍລິຄຳໄຊ.

ພາກສ່ວນທີສອງ: ຕັ້ງພູມລຳເນົາ ແລະທຳມາຫາກິນຢູ່ເມືອງ ພຽງ ແຂວງ ໄຊຍະບູລີ. ນອກຈາກນີ້ ແລ້ວຊົນເຜົ່າ " ກຣີ " ຍັງມີຢູ່ ສ. ສ. ຫວຽດນາມ ແລະລາຊະອານາຈັກໄທ.

ຊົນເຜົ່າກຣີ ມີພົນລະເມືອງທັງໝົດ 739 ຄົນ (ຕາມຜົນການສຳຫຼວດພົນລະເມືອງທົ່ວປະເທດຄັ້ງທີ II ປີ 1995).

ຊື່ເອີ້ນ:

ຊົນເຜົ່າ "ກຣີ" ໄດ້ມີຫຼາຍຊື່ເອີ້ນຄື: "ກຣີ, ລາບຣີ, ຢູບຣີ, ສະລາງ, ອາເຣມ ແລະອື່ນໆ". ຊົນເຜົ່າອື່ນມັກເອີ້ນເຂົາເຈົ້າວ່າ: " ຕອງເຫຼືອງ " ແຕ່ເຂົາເຈົ້າບໍ່ມັກ. ສະນັ້ນຊື່ທີ່ເຂົາເຈົ້າມັກ ແລະຊື່ທີ່ໃຊ້ທາງການໃນປະຈຸບັນນີ້ແມ່ນ "ກຣີ" ຄວາມໝາຍວ່າ: "ກຣີ" ໃນພາສາເຂົາເຈົ້າເອງໝາຍເຖິງ " ຄົນ ປ່າ "

ພາສາ:

ພາສາປາກເວົ້າ ຂອງຊົນເຜົ່າ ກຣີ ໄດ້ຈັດເຂົ້າໃນໝວດພາສາ ມອນ-ຂະ ແມ, ແຕ່ຢູ່ໃນສາຂາແຕກຕ່າງກັນຄື: ສາຂາປາກເວົ້າ ຂອງຊົນເຜົ່າ ກຣີ ຢູ່ແຂວງ ບໍລິຄຳໄຊ ແລະແຂວງ ຄຳມ່ວນ ແມ່ນຈັດເຂົ້າໃນສາຂາຫວຽດ - ເມືອງ. ສ່ວນຊົນເຜົ່າກຣີ ທີ່ໄດ້ດຳລົງຊີວິດຢູ່ແຂວງ ໄຊຍະບູລີ ແມ່ນຈັດເຂົ້າໃນສາຂາກຶມມຸອີກ. ຊົນເຜົ່າ "ກຣີ " ທັ້ງສອງພາກສ່ວນບໍ່ມີຕົວ ໜັງສືຂຽນ.

ຮີດຄອງປະເພນີ, ຄວາມເຊື່ອຖື ແລະວັດທະນະທຳ-ສັງຄົມ:

ຍ້ອນຊົນເຜົ່າກຣີ ດຳລົງຊີວິດຢູ່ເຂດຫ່າງໄກສອກຫຼີກ, ເສັ້ນທາງຄົມມະນາຄົມໄປບໍ່ເຖິງ, ການຕິດຕໍ່ພົວພັນສັງຄົມພາຍນອກມີໜ້ອຍຈຶ່ງ ເຮັດໃຫ້ເຂົາເຈົ້າຍຶດຖືຮີດຄອງປະເພນີ ທີ່ບັນພະບຸລຸດຂອງເຂົາເຈົ້າໄດ້ກຳນົດຂຶ້ນ, ເຂົາເຈົ້າມີ ຄວາມເຊື່ອຖືໄສຍະສາດຢ່າງໜັກໜ່ວງເປັນຕົ້ນແມ່ນ ຄວາມເຊື່ອໃນເລື່ອງຜີ ເຊັ່ນ: ຜີພໍ່, ຜີແມ່, ຜີ ບ້ານ, ຜີ ປ່າ, ຜີກົກໄມ້, ຜີແມ່ນ້ຳ, ຜີຟ້າ ແລະອື່ນໆເຂົາເຈົ້າ ຖືວ່າຜີເປັນຜູ້ຕັດສິນໂຊກຊາຕາກຳຂອງຄົນເຮົາ.

ໂຄງສ້າງທາງດ້ານສັງຄົມ ຂອງຊົນເຜົ່າ ກຣີ ເປັນລັກສະນະຄອບຄົວດຽວ, ປະກອບມີຫຼາຍ ເຈົ້າກົກ, ເຈົ້າເຫຼົ່າເຊິ່ງເປັນຜູ້ທີ່ເຂົາເຈົ້ານັບຖື ແລະ ໃຫ້ຄວາມສຳຄັນ, ໃນການໃຫ້ຄວາມຄິດຄວາມ

ເຫັນ ແລະຕັດສິນບັນຫາຕ່າງໆພາຍໃນແຕ່ລະ ຄອບຄົວ (ໃນກໍລະນີມີຜິດຂ້ອງຕ້ອງຖ່ຽງກັນ).

ຊົນເຜົ່າກຣີ ດຳລົງຊີວິດ ແລະປະຕິບັດ ຮີດຄອງປະເພນີແບບຜົວໜຶ່ງ, ເມຍດຽວ, ມີການ ສືບເຊື້ອສາຍຕະກຸນທາງພໍ່, ມີພິທີຈັດຕັ້ງການແຕ່ງ ດອງແບບງ່າຍດາຍພຽງແຕ່ໃຫ້ມີຊີ້ນສັດ ແລະປາ ຈຳນວນໜຶ່ງເທົ່ານັ້ນກໍ່ພໍ.

ລັກສະນະເຮືອນຂອງ ຊົນເຜົ່າກຣີ ແມ່ນ ແບບປະຖົມປະຖານ, ກະທັດຮັດງ່າຍດາຍ, ບໍ່ ແໜ້ນໜາຖາວອນເຊິ່ງສ້າງຂຶ້ນ ໂດຍອາໃສ່ເຄື່ອງ ທີ່ຫາໄດ້ຕາມທຳມະຊາດເທົ່ານັ້ນ. ຊົນເຜົ່າກຣີ ຈຳ ນວນໜຶ່ງຍັງຍົກຍ້າຍໄປມາໃນປ່າ, ຕາມພູຜາ ແລະ ປ່າຕຶບ ຄ້ຽງໜາ. ໂດຍອາໃສ່ການເຮັດຕູບ ນ້ອຍ, ໂກນ ໄມ້ ແລະຖ້ຳເປັນບ່ອນນອນ, ສ່ວນອາຫານການ ຫາລ້ຽງຊີບກໍ່ອີງໃສ່ສິ່ງທີ່ຫາໄດ້ຈາກທຳມະຊາດເປັນ ຕົ້ນຕໍ. ການເຈັບໄຂ້ໄດ້ພະຍາດ ກໍ່ລ້ວນແຕ່ປິ່ນ ປົວດ້ວຍການບະຜີ ແລະຢາ ພື້ນເມືອງ, ເມື່ອມີ ການ ຕາຍຢູ່ຕູບໃດ, ສະຖານທີ່ໃດກໍ່ລ້ວນແຕ່ຝັງຜູ້ຕາຍ ຢູ່ບ່ອນດັ່ງກ່າວ, ຈາກນັ້ນກໍ່ຈະຈູດຖິ້ມແລ້ວພາກັນ ຍ້າຍໄປຢູ່ບ່ອນໃໝ່.

ການເກີດລູກ ຂອງຊົນເຜົ່າກຣີ ພວກທີ່ ຍັງຢູ່ປ່າ ແມ່ນຈະເກີດລູກຢູ່ປ່າຜູ້ດຽວ ມີຜົວເປັນຜູ້ ເບິ່ງແຍງ ໂດຍຈະມີການກິນຢາຮາກໄມ້ທີ່ຕົ້ມໃສ່ ກະບັ້ງ, ສ່ວນພວກທີ່ມາຢູ່ບ້ານແບບຄົງທີ່ ກໍ່ຈະ ເກີດລູກຢູ່ເຮືອນເອົາຜູ້ທີ່ມີປະສົບການໃນການ ເກີດລູກມາດູແລເບິ່ງແຍງຊ່ວຍເຫຼືອ.

ດ້ານອາຫານການກິນ ກໍ່ຍັງກິນແບບທຳ ມະຊາດເຊັ່ນ: ເຜືອກ, ມັນປ່າ, ໝາກໄມ້, ຜັກປ່າ ແລະອື່ນໆ. ນອກຈາກນີ້ແລ້ວພວກເຂົາຍັງມີ ຄວາມຊຳນິຊຳນານໃນການລ່າສັດປ່າດ້ວຍໜ້າ ໜ້ອງແລ້ວມາປຸງເປັນອາຫານ, ເຜົ່າກຣີ ນິຍົມກິນ ຍອດຕາວຕາກແຫ້ງແລ້ວປະສົມນ້ຳເຜິ້ງ ແລະ ອື່ນໆ. ສ່ວນພວກທີ່ໄດ້ຍ້າຍມາຢູ່ບ້ານແລ້ວ ກໍ່ ແມ່ນໄດ້ກິນເຂົ້າເປັນອາຫານ.

ດ້ານສິລະປະວັນນະຄະດີພື້ນເມືອງ ຂອງ ຊົນເຜົ່າ "ກຣີ" ຈະບໍ່ອຸດົມສົມບູນພໍເທົ່າໃດ, ລະ ຫວ່າງຊົນເຜົ່າ "ກຣີ" ທີ່ຢູ່ແຂວງ ຄຳມ່ວນ, ແຂວງ ບໍລິຄຳໄຊ ກັບຊົນເຜົ່າ "ກຣີ" ຢູ່ແຂວງ ໄຊຍະບູລີ ຈະຕ່າງ ກັນເຊັ່ນ: ຊົນເຜົ່າ "ກຣີ" ຢູ່ເມືອງ ບົວລະ ພາ, ຄຳມ່ວນ ກໍ່ມີການຂັບກະເຕີ່ມ, ສ່ວນບ່ອນອື່ນ ອາດຈະມີສິລະປະວັນນະຄະດີ ຂອງຊົນເຜົ່າອື່ນທີ່ ຢູ່ໃກ້ຄຽງຕົນ. ວັດທະນະທຳ ກ່ຽວກັບເຄື່ອງນຸ່ງ ຂອງຊົນເຜົ່າກຣີ , ແຕ່ກ່ອນແມ່ນນຸ່ງຫົ່ມດ້ວຍ ເປືອກໜ້ອງ, ເປືອກໄມ້ຕ່າງໆ ແລະນອກຈາກນີ້ ກໍ່ຫຍິບໃບໄມ້ໃຊ້ສຳລັບນຸ່ງຫົ່ມ ໄດ້ອີກ. ປະຈຸ ບັນ ນີ້ສະພາບດັ່ງກ່າວໄດ້ມີການປ່ຽນແປງແລ້ວ. ຍ້ອນ ມີການແລກປ່ຽນ ກັບຊົນເຜົ່າຕ່າງໆທີ່ຢູ່ໃກ້ຄຽງ, ການຊ່ວຍເຫຼືອຈາກລັດຖະບານ ແລະອົງການ ຊ່ວຍ ເຫຼືອຂອງສາກົນ.

ການດຳເນີນຊີວິດ ຂອງຊົນເຜົ່າກຣີ ທີ່ດຳ ລົງຊີວິດຢູ່ຕາມປ່າ ມີລັກສະນະເລື່ອນລອຍ, ແບບ ປະຖົມປະຖານ, ເຄື່ອນຍ້າຍໄປມາໃນປ່າເລື້ອຍໆ ການກິນຢູ່ ແມ່ນອາໃສການລ່າເນື້ອ, ຫາປາ ແລະ ພືດຜັກຕ່າງໆທີ່ມີໃນທຳມະຊາດ. ສ່ວນຈຳນວນ ຢູ່ເປັນບ້ານຄົງທີ່ ກໍ່ຈະເຮັດໄຮ່ປູກເຂົ້າ, ພືດທີ່ມີ ທາດແປ້ງ ແລະພືດຜັກຕ່າງໆ ສຳລັບຊີວິດປະຈຳ ວັນຂອງຄອບຄົວ. ເຄື່ອງໃຊ້ສອຍແມ່ນໄດ້ຈາກ ການແລກປ່ຽນ ນຳຊົນເຜົ່າທີ່ຢູ່ໃກ້ຄຽງ.

Kree /Kri

Historical background:

The Kree people are an unusual group in Laos, as they have predominately been a nomadic people. However, today they have begun to settle in more permanent villages in Bolikhamsay and Khammuan provinces.

For centuries the Kree people wandered the mountainous areas of Bolikhamsay and Khammuan provinces, living in caves and simple shelters. Today the Kree are divided in two groups in Laos. The first group lives in Bualapha, Nyommalad and Nakai districts of Khammuan province and in Khamkeut district of Bolikhamsay province. The second group lives in Phiang district of Saiyabury province. In addition, Kree people live also in Vietnam and Thailand.

The total population of Kree in Laos numbers 739 people, but it is not known if this is an accurate figure or not.

Name and language:

Kree ethnic people have many different names such as: Kree, Labree, Yubree, Salahng, Arehm and others. Local in Laos refer to them as the Kha Tong Luang, or "Yellow Leaves" because of their tradition of making simple structures from banana leaves. Once these leaves turned yellow, they then abandon these shelters and move on to another place. They prefer the name Kree, which means " wild person " in their language. Their language is considered a Vietic language of the Mon-Khmer language group. There are different dialects among the Kree groups. There is no written alphabet.

Society, beliefs, ceremonies and myths:

Since the Kree have lived very remote lives without much contact with the outside world, their beliefs are very traditional and animistic. They believe in a large number of spirits pertaining to nature and that these spirits control their destiny.

It is believed the Kree wandered the forests in small groups of two to three related nuclear families. These families are patricarchally organized. The leader of the group may be the leader who is the oldest or the best hunter.

Their weddings are simple affairs with a small feast of meat and fish. The Kree mothers who still live in the forest give birth alone in the forest and her husband assists. Those in villages are assisted by midwifes.

When someone dies they bury the dead person at that place, then their houses are burned and they move on to a new location.

They find most of their food in nature such as taro, wild roots, and vegetables. They are also skilled hunters using bows and arrow to shoot boar, deer, snakes and birds. Those who now live in the villages supplement their diet with rice.

Their houses are characterized as primitive and simple, built of only things found in nature such as banana leaves and bamboo. They may also stay in caves and tree holes.

Costume

Previously they used to wear clothing that was woven from tree bark skin and leaves. However this is less common today as they receive typical Lao clothing through trade and from government assistance. They do not know how to weave cloth.

Agriculture and livelihood

Their livelihood has been nomadic, living a traditional life of gathering, hunting, fishing and constant moving. Now those who are living in permanent villages are growing rice and vegetables for daily food. They have also learned to raise some animals such as buffalo and poultry. They are also very skilled at gathering wild honey that they trade for essentials.

ຊົນເຜົ່າຂະແມ

ປະຫວັດຄວາມເປັນມາ:

ຊົນເຜົ່າຂະແມ ແມ່ນຊົນເຜົ່າທີ່ໄດ້ຕັ້ງພູມລຳເນົາ ແລະດຳລົງຊີວິດຢູ່ລາວເຮົາມາແຕ່ດຶກດຳບັນ. ຊົນເຜົ່າດັ່ງກ່າວໄດ້ມີຫຼັກຖານທາງດ້ານພາສາສາດ ແລະວັດທະນະທຳຂອງເຂົາເຈົ້າແມ່ນອັນດຽວກັນກັບຢູ່ໃນອານາຈັກອາສະອະດີທີ່ລຸ່ມແມ່ນ້ຳເຈົ້າພະຍາ ເຊິ່ງໄດ້ສ້າງຂຶ້ນໃນລະຫວ່າງສະຕະວັດທີ V. ສຳລັບປະຫວັດຄວາມເປັນມາ ແລະກິກເຄົ້າ, ເຫງົ້າກໍແມ່ນຄືກັນກັບຊົນເຜົ່າ ທີ່ປາກພາສາມອນ - ຂະແມ ຫຼືຕະກຸນດຽວກັນກັບພວກໂອສໂຕນີເຊຍ.

ປະຈຸບັນນີ້ຊົນເຜົ່າຂະແມ ຕັ້ງຖິ່ນຖານບ້ານຊ່ອງຢູ່ເມືອງ ມູນລະປະໂມກ ແຂວງ ຈຳປາສັກ, ນອກຈາກນີ້ຍັງມີຢູ່ ສ.ສ.ຫວຽດນາມ ແລະລາຊະອານາຈັກ ກຳປູເຈຍ.

ຊົນເຜົ່າຂະແມ ຢູ່ໃນລາວເຮົາມີພົນລະເມືອງ 3.908 ຄົນ, ຍິງ 2051 ຄົນ, ເທົ່າກັບ 0,1% ຂອງພົນລະເມືອງລາວທົ່ວປະເທດ (ຕາມການສຳຫຼວດພົນລະເມືອງຄັ້ງທີ II ປີ 1995).

ຊື່ເອີ້ນ:

ຊົນເຜົ່າຂະແມ ມີຊື່ເອີ້ນທາງການ ແລະຊື່ທີ່ເຂົາເຈົ້າມັກກ່ຳແມ່ນ " ຂະແມ " ຊົນເຜົ່າອື່ນເອີ້ນເຂົາເຈົ້າກໍແມ່ນ "ຂະແມ" , ຊົນເຜົ່າຂະແມ ບໍ່ມີຊື່ເອີ້ນທີ່ແຕກຕ່າງຈາກນີ້ອີກ.

ພາສາ:

ຊົນເຜົ່າຂະແມ ມີພາສາປາກເວົ້າທີ່ເປັນເອກະລັກຂອງເຂົາເຈົ້າເອງ ໃນການຕິດຕໍ່ພົວພັນກັບຊົນເຜົ່າຕົນເອງ ແລະນອກຈາກນີ້ເຂົາເຈົ້າຍັງມີຕົວໜັງສືຂຽນ ເຊິ່ງເປັນຕົວໜັງສືທຳ ທີ່ໃຊ້ຄຽງຄູ່ກັບຕົວໜັງສືລາວ ແລະພາສາລາວ.

ຮີດຄອງປະເພນີ, ຄວາມເຊື່ອຖື ແລະວັດທະນະທຳ-ສັງຄົມ:

ຊົນເຜົ່າຂະແມ ມີຄວາມເຄົາລົບ ແລະນັບຖືພຸດທະສາສະໜາ ແລະຜີໄປພ້ອມບັນດາໝູ່ບ້ານຊົນເຜົ່າຂະແມ ບາງບ້ານມີວັດວາອາຮາມທີ່ເປັນບ່ອນສັກກາລະບູຊາ, ເຄົາລົບນົບໄຫ້ວ ແລະທັງເປັນບ່ອນເຕົ້າໂຮມຊຸມນຸມ.

ພື້ນຖານວັດທະນະທຳຕ່າງໆ ຂອງເຂົາເຈົ້າມີຢ່າງຫຼວງຫຼາຍ, ຍ້ອນຄວາມເຫຼື້ອມໃສດັ່ງກ່າວເຂົາເຈົ້າ ຈຶ່ງມີຫຼາຍປາງບຸນເຊັ່ນ: ບຸນປີໃໝ່, ບຸນວັນເກີດຂອງພະພຸດທະເຈົ້າ, ບຸນບູຊາດວງເດືອນ ແລະອື່ນໆ.

ຊົນເຜົ່າຂະແມ ໄດ້ມີຮີດຄອງປະເພນີອັນດີງາມ ທີ່ສືບທອດມາຈາກບັນພະບູລຸດ, ປູ່, ຍ່າ

ຕາຍາຍ, ບັນດາລູກໜານ ກໍ່ໄດ້ປົກປັກຮັກສາຮີດຄອງດັ່ງກ່າວໄວ້ເປັນຢ່າງດີເປັນຕົ້ນ: ລະບົບຄອບຄົວເລືອດເນື້ອເຊື້ອສາຍ ແລະການສືບມູນມໍລະດົກຕ່າງໆ.

ຍ້ອນວ່າຊົນເຜົ່າຂະແມ ໄດ້ຕັ້ງພູມລຳເນົາ ແລະດຳລົງຊີວິດຢູ່ລາວເຮົາດົນນານ. ການຕັ້ງຖິ່ນຖານບ້ານຊ່ອງແຈກຢາຍ ແລະສະຫຼັບສັບຫວ່າງກັບຊົນເຜົ່າອື່ນ, ເຮັດໃຫ້ວັດທະນະທຳຂອງເຂົາເຈົ້າມີລັກສະນະປະສົມປະສານ ແລະມີການຢືມວັດທະນະທຳຂອງກັນ ແລະກັນເຊັ່ນ: ຮີດຄອງກ່ຽວກັບການເກີດລູກ, ການແຕ່ງດອງ, ການບວດ, ການສູ່ຂວັນ, ການຕາຍ ແລະອື່ນໆ.

ລັກສະນະເຮືອນ ຂອງຊົນເຜົ່າຂະແມ ແມ່ນນິຍົມປຸກສ້າງແບບເຮືອນຮ້ານທັງກະທັດຮັດງ່າຍດາຍ, ຫຼັງຄາເບື້ອງຫຼັງຈະສູງກວ່າເບື້ອງໜ້າ ເພື່ອໃຫ້ນ້ຳໄຫຼໄດ້ສະດວກ. ມາເຖິງປະຈຸບັນນີ້ບັນດາເອກະລັກເຮືອນຂອງເຂົາເຈົ້າກໍ່ມີການດັດແປງ ໂດຍຫັນມາປຸກເຮືອນແບບຊົນເຜົ່າລາວເປັນສ່ວນຫຼາຍ.

ດ້ານສິລະປະວັນນະຄະດີ, ວັດທະນະທຳຂອງຊົນເຜົ່າຂະແມ ແມ່ນມີຄວາມອຸດົມສົມບູນ ແລະຮັ່ງມີ ໂດຍສະເພາະການຄວັດລວດລາຍ, ການແຕ້ມລະບາຍສີຕາມວັດວາອາຮາມ, ພ້ອມກັນນີ້ເຂົາເຈົ້າຍັງມີກອນ ຂັບລຳ, ປົດຟ້ອນ, ນິທານພື້ນເມືອງ, ເຄື່ອງເສບດົນຕີ ແລະອື່ນໆ.

ສຳລັບເອກະລັກ ທາງດ້ານວັດຖຸເປັນເຄື່ອງນຸ່ງຫົ່ມຂອງຊົນເຜົ່ານີ້ ໃນປະຈຸບັນຄົນລຸ້ນໜຸ່ມ ແລະລຸ້ນອື່ນໆ ກໍ່ບໍ່ຄ່ອຍຈະນິຍົມນຸ່ງຫົ່ມເຄື່ອງຂອງຊົນເຜົ່າຕົນເອງປານໃດ, ສ່ວນຫຼາຍຈະນຳເອົາຈາກທ້ອງຕະຫຼາດມານຸ່ງຫົ່ມປະຈຳວັນ.

ດ້ານປະກອບອາຊີບວຽກງານ ເຂົາເຈົ້າມີຄວາມສຳນານວຽກງານການກະສິກຳປູກເຂົ້າ, ປູກພືດຫາດແປ້ງ, ຜັກຕ່າງໆຮັບໃຊ້ຄອບຄົວ ປະເພດສັດລ້ຽງແມ່ນ: ງົວ, ຄວາຍ, ໝູ, ເປັດ, ໄກ່. ຜູ້ຊາຍມີຄວາມຊຳ ນານ ໃນດ້ານຫັດຖະກຳຈັກສານ ແລະການຄວັດລວດລາຍ, ແມ່ຍິງມີຄວາມຄ່ອງແຄ້ວ ໃນການຕຳຫູກທໍ່ໄໝ ແລະການຊອກເງິນດ້ວຍວິທີການຄ້າຂາຍຫຼາຍຢ່າງ.

ຄວາມຮັກລະຫວ່າງບ່າວສາວ ຂອງຊົນເຜົ່ານີ້ ແມ່ນມີສິດເສລີພາບໃນການສະແຫວງຫາ, ເມື່ອພວກເຂົາລົມຖືກຕ້ອງຄ່ອງກັນແລ້ວ, ພວກເຂົາໃຫ້ເຖົ້າແກ່ທັງສອງຝ່າຍເວົ້າກັນ, ຖາບຖາມ, ຫຼັງຈາກນັ້ນຈຶ່ງມີການສູ່ຂໍຕາມລະບຽບປະເພນີ ພ້ອມທັງມີການຕົກລົງຄ່າດອງສິນສອດຕ່າງໆ, ຫາມື້ສັນວັນດີແລ້ວຈຶ່ງແຕ່ງດອງຕາມຄວາມເໝາະສົມ. ພິທີແຕ່ງດອງຊົນເຜົ່າຂະແມແມ່ນໄດ້ຈັດຕາມປະເພນີຂອງຊົນເຜົ່າລາວ.

ການສືບທອດມູນມໍລະດົກ ຈະຕົກເປັນຂອງລູກແມ່ຍິງຫຼາຍກວ່າ, ລູກແມ່ຍິງມີພາລະລ້ຽງ

ພໍ່, ແມ່, ພໍ່ເຖົ້າ, ແມ່ເຖົ້າຈົນກວ່າພວກເພິ່ນໝົດອາຍຸ, ຊີວິດຫຼັງແຕ່ງດອງຜູ້ຊາຍຈະໄປຢູ່ນຳຝ່າຍຍິງ, ດັ່ງນັ້ນມໍລະດົກສ່ວນໃຫຍ່ຈະຕົກເປັນພູດຂອງຜູ້ລ້ຽງພໍ່, ແມ່ສ່ວນລູກຜູ້ອື່ນໆຈະໄດ້ໜ້ອຍກວ່າ.

ການເກີດລູກ ຂອງຊົນເຜົ່າຂະແມ ຈະເກີດຢູ່ແຈຫ້ອງນອນພາຍໄຕ້ການດູແລຊ່ວຍເຫຼືອຂອງແມ່ຮຽມ (ຜູ້ທີ່ຊຳນານ) ເອົາລູກອອກ ແລະຜູ້ທີ່ເປັນຜົວຂອງຕົນ, ການຢູ່ກຳແມ່ນອີງຕາມບຸກຄົນ. ຖ້າແມ່ນແມ່ເກົ່າ ຈະຢູ່ກຳປະມານ 15 ວັນ, ຖ້າແມ່ນລູກຫົວສາວ ຈະຢູ່ກຳດົນຈົນເຖິງ 30 ວັນ. ການຄະລຳສ່ວນຫຼາຍແມ່ນອີງຕາມ ຊົນເຜົ່າລາວ ໂດຍສະເພາະການກິນອາຫານຂອງແມ່, ການໃຫ້ອາຫານ ແລະນົມແກ່ລູກອ່ອນ.

ການຢ່າຮ້າງກັນແມ່ນອີງຕາມຄວາມຜິດຂອງແຕ່ລະຝ່າຍ, ຖ້າຝ່າຍຊາຍຜິດມີເຈນຕະນາຢາກປະເມຍ ຫຼືຜູ້ຊາຍເອົາເມຍນ້ອຍຕື່ມ,ຜູ້ຊາຍຖືກປັບໃໝ ຈ່າຍຄ່າດອງທີ່ຄ້າງຄາໄວ້ໃນເມື່ອກ່ອນໃຫ້ຝ່າຍຍິງໝົດ ພ້ອມທັງປັບໃໝລ້ຽງຜີບ້ານໝູ 1ໂຕ, ເຫຼົ້າ, ໄກ່ ແລະອື່ນໆ. ຖ້າແມ່ຍິງຝ່າຝືນກະທຳຜິດຮີດຄອງຫຼົ້ນຊູຈາກຜົວຜິນຕາມມາຄ່າດອງ ແລະວັດຖຸທີ່ໃຊ້ຈ່າຍໃນເວລາແຕ່ງດອງໃຫ້ຝ່າຍຊາຍໝົດພ້ອມທັງປັບໃໝ ແລະລ້ຽງຜີບ້ານ ໝູ 2-3 ກຳ 1 ໂຕ, ເຫຼົ້າ ແລະອື່ນໆ.

ປະເພນີການສົ່ງສະການ ຂອງຂະແມ ກໍຈະດຳເນີນແບບເຜົ່າລາວຄື: ຈູດ, ສະເພາະຜູ້ຕາຍທຸງກໍຈະເອົາໄປຝັງຢູ່ປ່າຊ້າຕ່າງຫາກ ກຳນົດ 3 ປີ ຂຶ້ນໄປ ຈຶ່ງເຮັດພິທີແຈກທານຫາຜູ້ຕາຍ.

24/7 VIP
ຫ້າມຈຳໜ່າຍ

Khmer

Historical background:

The Khmer people have lived in Laos since ancient times. These people have a culture and language that is similar to the fifth century Wasawadee kingdom of the lower basin of Chaophraya River. Their historical background and origin is also similar to other members of the Mon-Khmer language group.

Presently, Khmer people live in Moonlapamok district of Champassak province. In addition, they live also in Vietnam and Cambodia.

The total population of Khmer living in Lao is small, numbering 3,908 people, of which 2,051 are females, according to the second population census done in 1995.

Name and language:

They are only known by the name "Khmer", which is also the name other groups refer to them as. This is also their official name in Laos.

Their language is an Austro-Asiatic language, and is a Mon-Khmer language. They also have their own alphabet, which is similar to the Lao alphabet.

Society, beliefs, ceremonies and myths:

The Khmer follow both Buddhism and animism at the same time. There are pagodas in some Khmer villages, where the villagers will gather for worship.

There are a number of feasts and celebrations such as the New Year, Buddha's birthday, lunar feasts, and so on.

The Khmer have preserved their customs and traditions quite well. As the Khmer people have lived in Laos for a long time, they have borrowed heavily from neighboring group's traditions and religious practices, such as wedding ceremonies, entering the priesthood, *basi* ceremonies, funerals, and others. Young Khmer have complete freedom in choosing their mate. When they feel they have found the right person for marriage, they will ask elder people from both families to make the necessary arrangements. Later a formal ceremony will be performed where the man will ask the woman's hand in marriage and a dowry will also be paid. Later a

wedding ceremony similar to a Lao wedding will take place.

Inheritance usually favors the daughters as they have the responsibility to take care of their parents and grand parents until death. After marriage, the husband will stay at his wife's house, therefore the majority of inheritance is given to those who look after the parents and other siblings will receive less.

Khmer women give birth in the corner of their bedroom under the assistance of an experienced older woman and her husband. The length of resting and staying indoors for the mother will depend on the individual. If she has given birth before, she will stay indoors for 15 days. If it is her first birth, she will stay indoors for about thirty days. Divorce is allowed, and if a man wants to divorce he will make a sacrifice to the village spirits, such as a pig and rice wine. A woman pays a similar penalty, especially if she committed an offense, such as adultery.

Khmer funeral traditions are identical to the Lao ethnic group's funeral rites. The body is cremated. However, if the death was caused by an accident, then the body will be buried. An alms-giving ceremony will be performed three years later.

The art and culture of Khmer ethnic people is rich and abundant, in particular with carving, drawing and the paintings in pagodas. They have songs, poetry, rhymes, dances, folk tales, and musical instruments.

Village and house:

Khmer prefer to build simple houses on stilts; however, lately they have been building houses that are more similar to the Lao people's houses.

Costume

Presently Khmer do not like to wear their traditional costumes, or most likely do not even own traditional clothing.

Agriculture and livelihood

The Khmer in Laos grow rice, root crops, vegetables, and fruits for household consumption and sale. They raise cattle, buffaloes, pigs, chickens and ducks for both consumption and sacrifice. The men are skillful in handicraft and carving, and women are talented in weaving and earning cash income through sales of various commodities.

ຊົນເຜົ່າໆ2ວນ
ປະຫວັດຄວາມເປັນມາ:

ຊົນເຜົ່າໆ2ວນ ແມ່ນໜຶ່ງໃນຫຼາຍໆຊົນເຜົ່າ ທີ່ຕັ້ງພູມລຳເນົາເທິງນານ ແລະຫຼາຍບ່ອນຢູ່ລາວ ເຮົາເປັນຕົ້ນຢູ່ເຂດເມືອງ ບໍ່ລະພາ, ເມືອງ ຫີນ ບູນ, ເມືອງ ໄຊບົວທອງ ແລະເຂດເມືອງ ທ່າແຂກ ແຂວງ ຄຳມ່ວນ, ເຂົາເຈົ້າໄດ້ຍົກຍ້າຍຈາກປະ ເທດ ເພື່ອນບ້ານເຂົ້າມາລາວ ໃນລະຫວ່າງທ້າຍ ສະຕະວັດທີ 19 ໂດຍແມ່ນພໍ່ເຖົ້າ ດ2ງ2ັນມ2ນ ຜູ້ ນຳພາມາຜ່ານເຂດເມືອງ ບໍ່ລະພາ ແລ້ວກໍ່ແຈກ ຢາຍກັນໄປຕາມສະຖານທີ່ຕ່າງກັນ. ໃນເບື້ອງ ຕົ້ນຊົນເຜົ່ານີ້ໄດ້ອາໃສ່ຢູ່ຕາມປ່າຕຶບດົງໜາ, ຍອດ ຫ້ວຍຮ່ອມພູ ແລະສະຖານທີ່ລັບລີ້.

ໄລຍະທີ່ຝຣັ່ງເສດເຂົ້າມາປົກຄອງລາວ ເຮົາຊົນເຜົ່ານີ້ບໍ່ມີໃນບັນຊີເລີຍ, ຍ້ອນພວກເຂົາຢູ່ ລັບລີ້ຫຼາຍຕໍ່ມາ ພວກເຂົາໄດ້ຖືກຝຣັ່ງກວດຕ້ອນ ລົງທົ່ງພຽງ, ໃນຂະນະທີ່ຈັກກະພັດຝຣັ່ງໄດ້ໄປ ປາບປາມ ຂະບວນຮັກຊາດເຂດຊາຍແດນລາວ ຫວຽດນາມ ພ້ອມນຳຊົນເຜົ່າດັ່ງກ່າວອອກຈາກ ປ່າໄປຢູ່ທີ່ ແຈ້ງ. ຊົນເຜົ່າໆ2ວນ ຍັງມີຢູ່ ຫວຽດນາມ ເປັນຕົ້ນຢູ່ ແຂວງ ກວ2ງບິ2 ເມືອງ ມ2ງຮ່ອ ແລະ ເອີ້ນຊື່ເຜົ່າໆ2ວນ ຄືກັນກັບລາວເຮົາ.

ຊົນເຜົ່າໆ2ວນ ມີປະຊາກອນທັ2ໝົດ 1.344 ຄົນ, ຍິ2 687 ຄົນ (ຕາມການສຳຫຼວດພົນ ລະເມືອ2 ຄັ2ທີ II ປີ 1995).

ຊື່ເອີ້ນ:

ຊົນເຜົ່ານີ້ເອີ້ນຕົນເອ2ວ່າ:2ວນ, ຊົນເຜົ່າ ອື່ນເອີ້ນໃຫ້ເຂົາເຈົ້າ ກໍ່ແມ່ນ2ວນ, ຊື່ທີ່ພວກເຂົາ ເຈົ້າມັກ ແລະຊື່ທີ່ໃຊ້ທາ2ການກໍ່ແມ່ນຊົນເຜົ່າ 2ວນ, ມີຄວາມ ໝາຍວ່າ: ຍອດຫ້ວຍ, ປາຍຫ້ວຍ, ຮ່ອມພູ ຫຼືຍອດພູເຂົາ. ກ່ອນສະໄໝຝຣັ່ງເສດ ປົກ ຄອ2ລາວ, ຊົນເຜົ່າ2ວນ ມີຊື່ໜຶ່2ຕ່າ2ຫາກ ເຊິ2ຄົນ ລາວມັກເອີ້ນວ່າ: ຫວຽດຕີ ໂນ, ຄວາມໝາຍຂອ2 ຊື່ຍັ2ບໍ່ຮູ້ແຈ້ງ ແລະກໍ່ບໍ່ແມ່ນ ຫວຽດກ2ວ, ຊຶ2ວນ ເກີດຂຶ້ນໃນສະໄໝຝຣັ່ງເສດປົກຄອ2ລາວ.

ພາສາ:

ຊົນເຜົ່າໆ2ວນ ມີພາສາປາກເວົ້າເປັນ ຂອ2 ຕົນເອ2, ບໍ່ມີຕົວໜັ2ສືຂ2ນ, ເຂົາເຈົ້າໃຊ້ພາສາຕົນ ເອ2 ເພື່ອສື່ສານກັບຊົນເຜົ່າຕົນ, ແຕ່ກັບຊົນເຜົ່າ ອື່ນແມ່ນໄດ້ນຳໃຊ້ພາສາລາວ. ພາສາ2ວນຈັດ ເຂົ້າໃນໝວດພາສາ ມອນ- ຂະແມ, ສາຂາພາສາ ຫວຽດເມືອ2.

ຮີດຄອ2ປະເພນີ, ຄວາມເຊື່ອຖື ແລະວັດທະນະທຳ-ສັ2ຄົມ :

ຊົນເຜົ່າໆ2ວນ ມີຄວາມເຄົາລົບນັບຖືຜີພໍ່, ແມ່ ຢ່າ2ໜັກໜ່ວ2, ເຂົາເຊື່ອວ່າບັນດາ,ພໍ່ແມ່ ແລະປູ່ຍ່າຕາຍາຍທີ່ລ່ວ2ລັບໄປແລ້ວນັ້ນ, ດວ2

ວິນຍານຂອງພວກເພິ່ນຈະບໍ່ໜີໄປໄດ້, ກໍ່ຈະເລື່ອນລອຍຢູ່ປະຈຳເຮືອນ, ຢູ່ບ້ານເຂົານັ້ນ, ຜູ້ເປັນລູກ, ຫຼານ, ເຫຼັນກໍ່ຕ້ອງໄດ້ເຄົາລົບນົບໄຫ້ວ ພວກເພິ່ນຢູ່ເລື້ອຍໆພ້ອມທັງຂໍຮ້ອງສິ່ງສັກສິດ (ດວງວິນຍານ) ຂອງພວກເພິ່ນມາປົກປ້ອງຄຸ້ມຄອງ ແລະດົນບັນດານ ໃຫ້ສະມາຊິກໃນຄອບຄົວ ມີຄວາມສຸກຄວາມຈະເລີນຕະຫຼອດໄປ. ນອກຈາກພິທີດັ່ງກ່າວ ແລ້ວພວກເຂົາເຈົ້າຍັງບູຊາບ່ວງສວງ ຜີຟ້າ, ຜີແຖນ ແລະລ້ຽງເກືອຜີບ້ານ (ຜີມະເຫສັກບ້ານ) ດ້ວຍອາຫານທີ່ເໝາະສົມ. ງວນເຮັດບຸນກິນເຕດປີໜຶ່ງສອງເທື່ອເປັນຕົ້ນຄື: ກິນເຕດຂຶ້ນ 1 ຄ່ຳ, ເດືອນ 1 ຫວ່ຽດນາມ ຄື ໃນລະຫວ່າງເດືອນ 3 ລາວ ແລະກິນເຕດກາງປີ, ພວກເຂົາຈະໄດ້ຈັດຂຶ້ນໃນເດືອນຫ້າ ຫວ່ຽດນາມ ຂຶ້ນ 5 ຄ່ຳກົງກັບເດືອນ 7 ຂຶ້ນ 5 ຄ່ຳຂອງເດືອນລາວເຮົາ, ບຸນ 2 ປາງດັ່ງກ່າວ ແມ່ນລັກສະນະປາງບຸນໃຫຍ່ ທີ່ເປັນການເຕົ້າໂຮມຍາດພີ່ນ້ອງ, ໝູ່ເພື່ອສະຫາຍທີ່ຢູ່ໃກ້ ແລະໄກມາຮ່ວມກິນ, ຮ່ວມດື່ມ ແລະອວຍພອນເຊິ່ງກັນ ແລະກັນຢ່າງມ່ວນຊື່ນ. ໃນວັນກຸດ (ເຕດ) ດັ່ງກ່າວເຂົາເຈົ້າຈະຄະລຳ ບ້ານ ເຊັ່ນ: ອອກໃໝ່ 1 ຄ່ຳຂອງເດືອນ 3 (ຂຶ້ນປີໃໝ່) ຂອບເຂດຄະລຳແຕ່ 1-7 ໂມງເຊົ້າ ໃນເວລາດຽວກັນນັ້ນແມ່ນບໍ່ໄດ້ ຂຶ້ນໄປຢຽບເຮືອນຂອງກັນ ແລະກັນເວັ້ນເສຍແຕ່ເຈົ້າພາບໄດ້ຂໍຮ້ອງໄປຢຽບເຮືອນຈຶ່ງໄປໄດ້, ແຕ່ລະຄອບຄົວຈະຢູ່ມິດຽບເຮືອນໃຜເຮືອນລາວ, ຈົນກວ່າເວລາຄະລຳດັ່ງກ່າວກາຍໄປ ເຂົາເຈົ້າຈຶ່ງເອີ້ນ ແລະທ່ຽງຖາມ ກັນ.

ເວົ້າເຖິງຄວາມມັກຮັກ ລະຫວ່າງບ່າວສາວ ຂອງຊົນເຜົ່ານີ້ ສ່ວນຫຼາຍແມ່ນພໍ່ແມ່ເຖົ້າແກ່ເປັນຜູ້ຊອກຫາໃຫ້, ບາງຄັ້ງ, ບາງຄົນແມ່ນເຂົາເຈົ້າຊອກສະແຫວງຫາກັນເອງ.

ການແຕ່ງດອງຈະແຕ່ງຢູ່ເຮືອນເຈົ້າສາວ, ຄ່າດອງແລ້ວແຕ່ກໍລະນີຖ້າຫາກສອງຝ່າຍຕົກລົງກັນ ຂະໜາດເປົ້າການແຕ່ງແປງຈະດຳເນີນແບບທຳມະດາ, ຖ້າສອງຝ່າຍຕົກລົງວ່າຄວາຍ ຫຼືງົວ 1 ໂຕ ກໍ່ແມ່ນໄດ້ປະຕິບັດຕາມແຕ່ຄວາຍ ຫຼືງົວນັ້ນ ຈະບໍ່ໄດ້ຂ້າໃສ່ດອງ. ພວກເຂົາເຈົ້າຈະເອົາໄວ້ໃຫ້ເປັນມູນມໍລະດົກແກ່ຜູ້ສ້າງຄອບຄົວໃໝ່, ອາຫານທີ່ໃຊ້ໃນມື້ດອງກໍ່ແມ່ນໝູ, ໄກ່, ປາ ແລະກິນເຂົ້າແບບທຳມະດາບໍລິການລ້ຽງແຂກທີ່ມາຮ່ວມງານ.

ການເກີດລູກ ຂອງຊົນເຜົ່ານີ້ແມ່ນອອກຢູ່ ເຮືອນ, ບາງຄັ້ງ, ບາງຄົນເກີດຍາກ ແມ່ນໄດ້ເອີ້ນໃສ່ຜີເຮືອນ, ຮ້ອງຂໍໃຫ້ຜີເຮືອນຊ່ວຍໃນນັ້ນມີເຖົ້າແກ່ຜູ້ມີປະສົບການຄ່ອຍຖ້າຊ່ວຍເຫຼືອຕື່ມ. ຜູ້ທີ່ເກີດລູກແລ້ວຈະບໍ່ໄດ້ນອນນຳກັນ, ຖ້າຫາກຝ່າຝືນຜິວເມຍ ພວກເຂົາແມ່ນຕ້ອງຖືກປັບໄໝແກ້ບ໋ະຜີດ້ວຍໄກ່ ຫຼືໝູ. ກຳນົດຢູ່ຮ່ວມກັນໄດ້ແມ່ນອອກກຳໄດ້ 3 ເດືອນກັບ 10 ມື້.

ການສືບມູນມໍລະດົກ ລະຫວ່າງລູກຂອງເຜົ່າງວນ ແມ່ນເປັນພາລະຂອງລູກຊາຍ, ສ່ວນແມ່ຍິງແມ່ນໄປສູ່ຜົວ. ກໍລະນີບໍ່ມີລູກຊາຍ ແມ່ນມອບ

ໃຫ້ແມ່ຍິງ, ແຕ່ຜູ້ນັ້ນຕ້ອງໄດ້ຢູ່ເຮືອນລ້ຽງພໍ່, ແມ່ ຕະຫຼອດຊີວິດ.

ດ້ານສິລະປະພື້ນເມືອງ ຂອງຊົນເຜົ່າ ງວນ ກໍ່ມີລັກສະນະປະຈຳເຜົ່າຕົນເຊັ່ນ: ການຂັບ ຮ້ອງທຳນອງເພັງ, ຕູ້ມ (ພະຫຍາຍ່ອຍ), ປີ່ (ຕິງ ໂຕຍ), ສະໄກວ (ຕິງ ໂຕຍ) ຣໍທວກ (ກາບກອນ) ແລະພື້ນສີບ.

ການຊອກຫາສະຖານທີ່ຕັ້ງບ້ານ ແລະ ປຸກເຮືອນເຖົ້າແກ່ ໄດ້ຊອກຫາເນື້ອທີ່ໆ ເໝາະສົມ ເປັນຕົ້ນ: ມີເນື້ອທີ່ນາ, ໄຮ່, ສວນ. ສຳລັບການຜະ ລິດ, ກ່ອນຈະປຸກເຮືອນ ກໍ່ຕ້ອງໄດ້ສຽງແປັກແລ້ວ ຊູມືນ 2 ແຜ່ນ ເຊິ່ງເປັນການປັກຫຼັກໝາຍເຂດ ຈະ ປຸກສ້າງ ບໍ່ສະເພາະແຕ່ເທົ່ານັ້ນ ຍັງເປັນການປາບ ຜີ ຫຼືຂໍຮ້ອງໃຫ້ຜີທີ່ຢູ່ບໍລິເວນປຸກສ້າງເຮືອນໜີອອກ ໄປຢູ່ບ່ອນອື່ນໆ.

ຊົນເຜົ່າງວນ ສະໄໝກ່ອນຕັ້ງເຮືອນຊູ ດິນ, ມຸງຫຍ້າ, ຝາເຮືອນທາດ້ວຍເປືອ, ການຈັດ ວາງຂ້າງໃນມີ ຕຽງນອນແຕ່ລະຄົນ ຈັດເປັນລ້ອກ, ຂັ້ນດ້ວຍຝາ ຫຼືຜ້າກັ້ງ, ສົ້ນເບື້ອງໜຶ່ງຈະຈັດເປັນ ຫ້ອງບູຊາຜີ, ຢູ່ເທິງມີຫີ້ງ , ຫ້ອງນອນຂອງພໍ່, ແມ່ຢູ່ ໃກ້ໆກັບຫ້ອງນີ້, ຕໍ່ຈາກນັ້ນ ກໍ່ຈະມີ ຫ້ອງນອນຂອງ ບັນດາລູກໆ, ເວລາມີແຂກມາຢາມເຮືອນ, ຄົນໃນ ເຮືອນ ກໍ່ຈະຍົກສູງ ໃຫ້ແຂກນອນຢູ່ຫ້ອງບູຊາຜີ. ສ່ວນຄົວໄຟຈະຢູ່ນອກ ທີ່ເກາະຈາກເຮືອນໃຫຍ່ ເປັນເທີບຕິດກັບເຮືອນໃຫຍ່.

ເຄື່ອງນຸ່ງຫົ່ມ ຂອງຊົນເຜົ່າງວນ, ຜູ້ຊາຍ ແລະແມ່ຍິງນຸ່ງສີ້ງຂາຍາວ ແລະເສື້ອແຂນຍາວ ປ່ອຍຄ້າຍຄຽງກັບເຄື່ອງນຸ່ງຂອງຊົນເຜົ່າມົ້ງ, ເຄື່ອງ ນຸ່ງຂອງຊົນເຜົ່າງວນ ມັກໃຊ້ສີຂາວ ແລະສີເຫຼືອງ ມີແພສີດຳຄຽນ, ຜູ້ຊາຍຈະຄຽນແອວ, ແມ່ຍິງຈະ ຄຽນຫົວ, ໃສ່ບ້ວງຄໍ ແລະກ້ອງແຂນທີ່ຜະລິດຈາກ ເງິນ ເບິ່ງແລ້ວໜ້າສະຫງ່າງາມຕາແທ້. ແຕ່ປະຈຸ ບັນນີ້ ບັນດາເຄື່ອງນຸ່ງຫົ່ມດັ່ງກ່າວເກືອບວ່າຫາຍ ໄປໝົດແລ້ວ, ເຂົານິຍົມໃຊ້ເຄື່ອງນຸ່ງຫົ່ມ ທີ່ຊື້ຈາກ ຕະຫຼາດເປັນສ່ວນຫຼາຍ.

ດ້ານເສດຖະກິດ ໃນເມື່ອກ່ອນເຂົາເຈົ້າ ມີຄວາມສາມາດຕ່ຳຫຼາກ, ທ່ຳໄໝ, ປູກມອນ ແລະ ລ້ຽງມ້ອນ. ສຳລັບຜູ້ຊາຍຈັກສານເຄື່ອງໃຊ້ໃນ ຄອບຄົວເຊັ່ນ: ກະບຸງ, ກະຕ່າ, ຂ້ອງ, ສ່ຽນພາເຂົ້າ ດ້ວຍໄມ້ຕ່າງໆ. ພ້ອມນັ້ນເຂົາເຈົ້າຍັງມັກລ້ຽງໝູ, ໄກ່ ເພື່ອເຮັດຮີດຄອງຕ່າງໆ, ລ້ຽງ ງົວ, ຄວາຍ ໄວ້ ເປັນສັດລາກແກ່.

ຊົນເຜົ່າງວນ ຢູ່ເມືອງ ທ່າແຂກ ສ່ວນຫຼາຍ ແລ້ວ ກໍ່ໄດ້ຫັນແບບວິທີຫາກິນຄືແຕ່ດຶກດຳບັນ ເຮັດໄຮ່, ເຮັດສວນ, ແຕ່ປະຈຸບັນກໍ່ໄດ້ກາຍເປັນຜູ້ ລ້ຳລອຍແລ້ວຍ້ອນການຊື້ຂາຍ. ສ່ວນຢູ່ເມືອງ ອື່ນໆ ແມ່ນຖືອາຊີບເຮັດການຜະລິດ, ດ້ານກະສິ ກຳເປັນຕົ້ນຕໍ.

ພິທີສົ່ງສະການ: ຖ້າມີຄົນເສຍຊີວິດໃນ ຄອບຄົວເຮືອນທີ່ມີເສດຖະກິດດີແດ່, ຄວາມນັບຖື ຂອງຊາວບ້ານກໍ່ມີສູງ, ເມື່ອພໍ່ແມ່ ຫຼືເຖົ້າແກ່ແມ່ ນາຍເສຍຊີວິດ, ຜູ້ເປັນລູກຊາຍກົກ ຫຼືກາງຕ້ອງໄດ້ ໄປຫາເຈົ້າກົກ, ເຈົ້າເຫຼົ່າ ຜູ້ຊົງຄຸນວຸດທິ ຫຼືນາຍ ບ້ານເພື່ອແຈ້ງຈຸດປະສົງ ກ່ຽວກັບການຄົບງັນເປັນ ຕົ້ນ: ການຄົບງັນ, ການຊອກຫາເມຍ (ຫີບ), ການ ສົ່ງສະການ ແລະອື່ນໆແລ້ວບັນດາບຸ ຄົນ ດັ່ງ ກ່າວກໍ່ຈະອຳນວຍຄວາມສະດວກ ແລະພ້ອມທີ່ ຈະຊ່ວຍເຫຼືອຕາມຄຳຮ້ອງຂໍ.

ຖ້າເຫດການດັ່ງກ່າວເກີດຂຶ້ນໃນ ຄອບ ຄົວ ທີ່ຂາດເຂີນດ້ານວັດຖຸເງິນຄຳ, ລູກຊາຍ ທັງໝົດກໍ່ຕ້ອງໄດ້ໄປນິບໄຫ້ວຮ້ອງຂໍແຕ່ລະຫຼັງຄາ ເຮືອນໄປຊ່ວຍເຫຼືອຄົບງັນ, ຮັກສາສົບເມຍ ແລະ ຈັດພິທີສົ່ງສະການ, ບາງຄັ້ງກໍ່ໄດ້ຈ້າງຄົນທ້າມ ດ້ວຍເງິນກີບຫົວໜ່ວມ. ເວລາສົ່ງສະການບັນດາ ລູກຊາຍ, ລູກຍິງ, ຫຼານໆຕ້ອງໄດ້ໄປນອນຕາມ ທາງ ເພື່ອໃຫ້ໄຫບ້ານຫ້ວມໂລງສົບຄົນຕາຍຫ້ວມ ຂ້ວມຕົນເອງ. ຖ້າເສັ້ນທາງເຄື່ອນສົບມີທາງຄົບ ສ່ວມແຍກ, ສີ່ແຍກ ຫຼືຂົວຂ້ວມບັນດາລູກໆຫຼານໆ ທັງໝົດຕ້ອງໄປນັ່ງຄົບຄົນ ທີ່ຫ້ວມສົບໄປນັ້ນຈົນ ກາຍໄປໝົດ ພາຍຫຼັງສົ່ງສະການຄົນຕາຍແລ້ວ, ພາຍໃນ 1 ຄວບຂອງຄົນຕາຍ (ຄົບຮອບ 1 ປີ ຂອງຄົນຕາຍ) ຖ້າຄອບຄົວມີແດ່ຕ້ອງໄດ້ເສຍ ຄວາຍ ຫຼືໝູ 1 ໂຕ ແລະອື່ນໆ ເພື່ອຈັດພາເຂົ້າໃຫ້ ໄຫບ້ານກິນ. ສະເພາະຄອບຄົວທຸກຈົນໄຫບ້ານ ກໍ່ຈະຊ່ວຍກັນຈັດເປັນຮີດ, ຈຸດປະສົງເພື່ອຕອບ ບຸນແທນຄຸນທີ່ໄຫບ້ານໄດ້ເສຍສະຫຼະເວລາປະ ກອບສ່ວນ ໃນງານປົງສົບສົ່ງສະການຍາດພີ່ ນ້ອງຂອງຕົນ.



ພະສາດຫີນວັດພູ (ຈຳປາສັກ)

Ngouan

Historical background:

The Ngouan people live in Bualapha, Hinhboon, Xaibuathong and Thakhek districts of Khammuan province. They migrated into Laos from Vietnam around the end of the nineteenth century. Originally these ethnic people lived in dense forests, high valleys, and other remote places. Later, during French colonial rule, they were forced down into the lower lands.

In the 1995 census, the total population of Ngouan living in Laos amounted to 1,344 people, of which 688 were female. Ngouan also live in Vietnam, most of them in Quang Binh province.

Name and language:

They are mostly known by the name of "Nguan", which is also their official name. Apparently their name means " head of the stream ".

Their language is a Mon-Khmer language, which is on the Vietic branch of this language group. They do not have a written language.

Society, beliefs, ceremonies and myths

The Ngouan people are animists, respecting and worshipping a range of spirits. These range from spirits of the region and village, to spirits of the natural realm, such as the spirits of the forests and the streams. There are also spirits of the rice crop and the harvest. Importantly, they worship the spirits of the ancestors such as dead parents and other relatives, and believe that these spirits of the soul continue to live in the household. They will make offerings and sacrifices to these spirits in order to have good fortune and happiness. Because of their Vietnam influence, the Nguan people celebrate Tet Lunar New Year. This is a time for great festivity with much drinking, eating and enjoyment of friends and family.

The society is patrilineal, and the eldest son or father will be head of the family. The youngest daughter will generally take care of the parents in their old age.

Marriages may be arranged sometimes, or young people may choose their ownmate. The wedding takes place at the bride's house. The groom pays a dowry after an agreement is reached between both families, so the dowry may vary in size. The usual dowry is a buffalo or a couple of pigs that will not be slaughtered at the wedding, but given to the young couple as in investment for their future.

Mothers give birth in their house with assistance from an experienced older woman. A taboo is enforced for the husband and wife that states they may not stay together for three months and ten days. If they break this taboo, they must pay a penalty of a pig to the village spirit.

Funerals depend on the wealth of the family. If a family has money, then the funeral may be quite elaborate, with a lot of feasting and an elaborate coffin. Poorer families have less feasting and simpler coffins. Other families may assist them in these costs if they are quite poor.

On the funeral day, sons, daughters and nieces must go and lie down in the path of the carried coffin so that the coffin will pass over them. If there is a forked junction, crossroads, or a bridge on the way to the cemetery, all children and grand children of the deceased must pray to all people in the funeral procession as they pass.

One year after the funeral, the household of the deceased will kill a buffalo or a pig and offer this to the villagers in a celebration. Again, this will depend on the wealth of the family.

Village and house:

When the Nguan want to start a new village, elderly people will lead the search for an area that is suitable in terms of water and open area for farming. Before building they will have a ceremony of coin throwing and praying in order to please the spirits of the area.

The Nguan people build their houses on the ground. Their small houses have grass thatched roofs, and woven bamboo walls. The floor will be of hard earth. There is a family room for living, and some walled off areas for sleeping. There is an altar in every household for family spirits. The cooking area is outside the house.

Costume

The Nguan people rarely wear any traditional clothing, and what they do have is similar to the Hmong traditional clothing. They like clothing that is white and yellow with black borders. Women will wear a turban that covers their hair. Both sexes have ornate necklaces and bracelets of silver, but these are also less common today. Today most Nguan wear commercial clothing that is bought in the local markets.

Agriculture and livelihood

The Nguan practice wet-paddy cultivation of glutinous rice, plus growing vegetables and some fruit. They like to raise chicken and pigs for ritual ceremonies. Buffalos are raised for farm labor.

The Nguan will weave silk, and also raise silk worms. The men make household good such as baskets from bamboo and utensils from wood.

ຊົນເຜົ່າເຈ້ງ

ປະຫວັດຄວາມເປັນມາ:

ຊົນເຜົ່າເຈ້ງ ແມ່ນຊົນເຜົ່າໜຶ່ງ ທີ່ໄດ້ຕັ້ງຖິ່ນຖານພູມລຳເນົາຢູ່ລາວເຮົາມາດົນນານ ໂດຍສະເພາະຢູ່ແຂວງ ອັດຕະປື ຕາມການສັນນິຖານຂອງນັກວິຊາການ ແລະການຢັ້ງຢືນຂອງເຖົ້າແກ່ຊົນເຜົ່າເຈ້ງ, ບາງທ່ານໄດ້ໃຫ້ຮູ້ວ່າ: ຊົນເຜົ່າເຈ້ງ ມີຖິ່ນຖານກຳເນີດກັບດິນແດນແຂວງ ອັດຕະປື. ເຊິ່ງເຂົາເຈົ້າໄດ້ດຳລົງຊີວິດຢູ່ທີ່ນັ້ນໄດ້ຫຼາຍສະຕະວັດແລ້ວ. ຊົນເຜົ່ານີ້ມີແຕ່ຢູ່ ແຂວງ ອັດຕະປື ສ່ວນແຂວງອື່ນ ຫຼືບັນດາປະເທດອ້ອມຂ້າງ ກໍ່ບໍ່ປະກົດມີຊື່ຊົນເຜົ່ານີ້.

ເມື່ອກ່ອນເຂົາເຈົ້າດຳລົງຊີວິດ ດ້ວຍການເຮັດໄຮ່ໝູນວຽນ ນັບແຕ່ເຂດປ່າອ່ຳຂຶ້ນໄປຫາພູຈະນົງຮຽດ ໃກ້ກັບຊາຍແດນ ລາວ - ຫວຽດນາມ ໃນປະຈຸບັນນີ້ຂຶ້ນ ກັບເມືອງ ຊານໄຊ ແລະເມືອງ ໄຊເສດຖາ ແລະລົງໄປຫາຈະນຽດພາມວັງຮູ, ວັງມົນ, ພູຍະປຸເຂດລຳນ້ຳເຊຊຸ ທີ່ຂຶ້ນກັບເມືອງພູວົງ. ໃນຂະນະທີ່ພວກເຂົາເຈົ້າຢູ່ລຽບຕາມລຳນ້ຳເຊຊຸ ກໍ່ໄດ້ປະກອບສ່ວນສ້າງຜາສາດຫີນ ຢູ່ເມືອງອີງການທີ່ຕັ້ງຢູ່ຍ່ານກາງລຳນ້ຳເຊຊຸ ຮ່ວມກັບຊົນເຜົ່າເບຣິ ແລະຢຣຸໃຫ້ແກ່ພະເຈົ້າກຳມະຫາ ເພື່ອເປັນຂອງຂວັນແກ່ພະມະເຫສີຝ່າຍຊ້າຍ ອີງທີ່ສີ່ຊື່ວ່າ: ນາງສີພະເກດ, ລູກສາວຂອງເຈົ້າເມືອງ, ເມືອງອີງການ, ຜາສາດຫີນດັ່ງກ່າວ ໄດ້ສ້າງພ້ອມດຽວກັນກັບຜາສາດຫີນວັດພູ ຈຳປາສັກ. ໄລຍະຈັກກະພັດຝຣັ່ງເຂົ້າມາປົກຄອງລາວ, ພວກເຂົາໄດ້ຂຸດຄົ້ນເອົາວັດຖຸເງິນ, ຄຳທີ່ມີຄ່າໄປພ້ອມ ທັງ ທຳລາຍຖິ້ມສະຖານທີ່ນີ້ ເກືອບວ່າບໍ່ມີຫຍັງເຫຼືອໃຫ້ເຫັນເລີຍ.ໄລຍະພະເຈົ້າໄຊເສດຖາທິລາດ ຂຶ້ນ ຄອງລາດ, ຊົນເຜົ່າເຈ້ງ ເຄິ່ງໜຶ່ງໄດ້ຖືກແຕ່ງຕັ້ງໃຫ້ເປັນ ຜູ້ປົກປັກຮັກສາວັດວາອາຮາມເປັນຕົ້ນ ແມ່ນວັດໜວງ ແລະວັດທາດເມືອງເກົ່າ ຂຶ້ນກັບເມືອງໄຊເສດຖາ ແຂວງ ອັດຕະປື

ຊົນເຜົ່າເຈ້ງ ໄດ້ມີກົກເຄົ້າເຫງົ້າ ກຳດຽວກັນກັບຊົນເຜົ່າເບຣິ, ຢຣຸ, ຍະເຫີນ ແລະໂອຍ, ປະຈຸບັນຊົນເຜົ່າເຈ້ງ ມີຖິ່ນຖານພູມລຳເນົາຢູ່ເມືອງ ໄຊເສດຖາ ແລະສະໜາມໄຊ ແຂວງ ອັດຕະປື ຈຳນວນປະຊາກອນທັງໝົດມີ 6.511 ຄົນ, ຍິງ 3.342 ຄົນ ເທົ່າກັບ 0,1 % ຂອງພົນລະເມືອງລາວທົ່ວປະເທດ (ຕາມຜົນສຳຫຼວດພົນລະເມືອງຄັ້ງທີ II ປີ 1.995).

ຊື່ເອີ້ນ:

ເຈ້ງ ແມ່ນຊື່ເອີ້ນຂອງຊົນເຜົ່າໜຶ່ງ ມາຈາກຄຳສັບວ່າ “ເຈ້ງຈ໊ວຣ”ໝາຍເຖິງການຄວັດລວດລາຍລະບາຍສີ ທີ່ເປັນສິລະປະພື້ນເມືອງຂອງຊົນເຜົ່າເຈ້ງ, ຜູ້ທີ່ ໃສ່ຊື່ຊົນເຜົ່ານີ້ວ່າ: ເຈ້ງແມ່ນ “ພະເຈົ້າໄຊເສດຖາ ເຈົ້າຄອງນະຄອນລ້ານຊ້າງ” ໃນປີ ພ.ສ 2091 - 2114 ຍ້ອນຊົນເຜົ່ານີ້ມີເອກະລັກດ້ານສິລະປະສະເພາະຂອງຕົນເອງ. ພະອົງຈຶ່ງໃຫ້ຊົນເຜົ່ານີ້ ເປັນຜູ້ອຸປະຖຳຄ້ຳຊູວັດວາສາສະໜາເປັນຕົ້ນແມ່ນເວລາກຸຕິວິຫານໂບດ, ຫໍແຈກ ຊຸດໂຂມເປ້ເພ, ພວກນີ້ເປັນຜູ້ສ້ອມແປງ ແລະກໍ່ສ້າງຄືນໃໝ່ ຕາມຮູບແບບຂອງສິລະປະລວດລາຍຂອງຊົນເຜົ່າເຈ້ງ.

ພາສາ:

ເຈ້ງ ມີພາສາປາກເວົ້າເປັນຂອງຕົນເອງ, ບໍ່ມີ ຕົວໜັງສືຂຽນ, ພາສາເຈ້ງ, ເບຣິ, ຢຸຣ, ໂອຍ, ຍະເຫີຍ ມີລັກສະນະຄ້າຍຄືກັນ. ຊົນເຜົ່າດັ່ງກ່າວ ເມື່ອພວກເຂົາເຈົ້າໄດ້ພົບປະຫາລືກັນ ແຕ່ລະ ຝ່າຍຈະໃຊ້ພາສາຂອງໃຜລາວເວົ້າກັນ ບໍ່ຈຳເປັນ ໃຊ້ນາຍພາສາແປຕ່າງຫາກ ແຕ່ລະຝ່າຍສາມາດ ເຂົ້າໃຈໄດ້ຢ່າງງ່າຍດາຍ. ສ່ວນການພົວພັນກັບ ເຜົ່າອື່ນໆ ແມ່ນໄດ້ນຳໃຊ້ພາສາລາວ ແທນພາສາ ຂອງຊົນເຜົ່າເຈ້ງ ຈັດເຂົ້າໃນໝວດພາສາ ມອນ-ຂະແມ ສາຂາພາສາບັນນາຣິກ.

ຮີດຄອງປະເພນີ, ຄວາມເຊື່ອຖື ແລະວັດທະນະທຳ-ສັງຄົມ :

ຊົນເຜົ່າເຈ້ງ ບາງບ້ານມີລະບົບຄວາມ ເຊື່ອຖື 2 ຢ່າງ: ເຊື່ອພຸດ ແລະຜີຄຽງຄູ່ກັນໄປ, ບາງ ບ້ານຖືແຕ່ຜີຢ່າງດຽວ, ໄລຍະກ່ອນຫ່າງຈາກນີ້ ປະມານ 100 ປີ ຄົນ ຫຼັງຊົນເຜົ່າເຈ້ງ ເຊື່ອຖືຜີຢ່າງ ໜັກໜ່ວງ ແລະຫຼາຍສົມຄວນ. ແຕ່ລະໆດູການ ເດືອນ1- 12 ຂອງລາວ, ກໍ່ຈະມີພິທີທາງຜີ ຕ່າງກັນ ໂດຍສະເພາະກ່ຽວກັບການຜະລິດ ເຊັ່ນ: ບຣ໊ະ ກະເນົາ (ພະໄມ້) ແຕ່ເດືອນ 1-3 ບຣ໊ະຍະມຸ໊ (ພະ ສັກເຂົ້າ), ເດືອນ 4-6 ບຣ໊ະມອກ (ພະເຂົ້າເໝົ້າ) ເດືອນ 1 0-11 ບຣ໊ະແຈ໊ສະເນາະ (ພະເລົ້າເຂົ້າ), ເດືອນ 12-2 ລາວ ເຄື່ອງປະກອບແຕ່ລະພິທີ ມີໄກ່ຕົ້ມ ຫຼືເປັດຕົ້ມ 1 ໂຕ, ເຫຼົ້າ 1 ໄຫ. ນອກຈາກ ນັ້ນກໍ່ຍັງມີດອກໄມ້, ທຽນຂັນ 5, ຂັນ 8 ແລະອື່ນໆ.

ຈຸດປະສົງເພື່ອບ່ວງສວງບູຊາຜີ ທີ່ມີອຸ ປະການະລະຄຸນຕໍ່ຄົນເຮົາ ແລະກໍ່ເປັນການພົບປະ ສ້າງສັນກັນຂອງຊາວບ້ານ. ນອກຈາກພິທີດັ່ງກ່າວ ນີ້ແລ້ວ ຍັງມີຜີຕາແຮກ, ສ່ວນທີ່ມີອະນຸພາບ ແລະ ເຮັດໃຫ້ມີຄວາມ ຢ້ານກົວສຸດ ແມ່ນຜີບ້ານເປັນພິທີ ທີ່ຈຳເປັນທີ່ສຸດແກ່ຊີວິດອິນຊີ, ໃນເດືອນ 4-6 ຂອງທຸກໆປີຊາວບ້ານລ້ຽງຜີບ້ານຢ່າງໃຫຍ່ໂຕ ສົມຄວນ ໃນເມື່ອກ່ອນຕ້ອງແມ່ນຂ້າຄວາຍ 1-2 ໂຕ. ປະຈຸບັນນີ້ແມ່ນໄດ້ໃຊ້ໝູ 1-2 ໂຕ ໂດຍມີຈ່າ ພະ ແລະຈ່າກະທຍອງເປັນຜູ້ນຳພາພິທີການ ຕ່າງໆ ເປັນຕົ້ນການກະກຽມສະຖານທີ່ປະດັບເອ້ ຢ້ອງຕ່າງໆ, ການແຫ່ຂະບວນຂຶ້ນໄປຫາເຮືອນ ທີ່ ຕົກລົງຮັບພິທີ ແລະການເຊີ້ງຜີ, ບ່າວສາວຜູ້ມີລູກ ເມຍ ຫຼືຜົວ ແລະເດັກນ້ອຍ ກອດຄໍກັນເປັນວົງມົນ ຈະມີຫຼາຍແຖວ ແຕ່ລະຄົນກໍ່ຈະໄດ້ເຊີ້ງໄປນຳກັນ ທັງເຕັ້ນ ໄປຕາມຈັງຫວະຢ່າງສະໜ່ຳສະເໝີ ໃນ ເວລານັ້ນແຕ່ລະຄົນ ທີ່ເຂົ້າມາຮ່ວມພິທີດັ່ງກ່າວ ຈະບໍ່ຖືຜິດຖືແມ່ນກັນ, ເຂົາຈະມ່ວນຊື່ນຢ່າງເຖິງທີ່ ສຸດ.ໃນພິທີນີ້ກໍ່ຈະມີການຄະລຳບ້ານ ແຕ່ 3-7ວັນ. ບໍ່ໃຫ້ ຄົນໃນບ້ານອອກນອກ ແລະຫ້າມເດັດຂາດ ບໍ່ໃຫ້ໄທບ້ານອື່ນເຂົ້າມາໃນບ້ານ, ຖ້າເກີດມີຜູ້ໃດ ໜຶ່ງເຂົ້າບ້ານ, ຜູ້ນັ້ນຈະຖືກປັບໄໝແຕ່ 1-2 ໂຕ ຄວາຍ ເພື່ອຂ້າລ້ຽງຜີ ບ້ານຄົນໃໝ່, ເຫຼົ້າແຕ່ 2-4 ໄຫ. ນອກຈາກນີ້ຜູ້ນັ້ນ ກໍ່ຕ້ອງຍອມສະລະພາບວ່າ ເທື່ອໜ້າຈະບໍ່ເຮັດຄືເກົ່າອີກ. ໝົດຂອບເຂດການ ຄະລຳແລ້ວ ປະຊາຊົນກໍ່ຈະດຳເນີນວຽກງານ ຕ່າງໆຢ່າງເດີມ. ກ່ອນຈະລົງສູ່ການຜະລິດຂອງ ຕົ້ນລະດູຝົນ ຊາວບ້ານກໍ່ຈະທຳການບົ້ະພະບ້ານ ຕ່າງຫາກອີກ. ເພື່ອຂໍຄວາມຊ່ວຍເຫຼືອ ແລະເຫັນ

ອິກເຫັນໃຈຈາກຜີດັ່ງກ່າວ ໄປປົກປັກ ຮັກສາສັດ ຕູໝູ່ ມານ ບໍ່ໃຫ້ເຂົ້າມາຮຸກຮານຮາວີຜົນລະປູກ.

ສະເພາະຊົນເຜົ່າເບຣິ ຈະຕ້ອນຮັບເປັນ ພິເສດ ໃນເມື່ອເຂົາເຈົ້າໄປຮ່ວມງານບຸນລ້ຽງຜີ ບ້ານ, ການປັບໄໝກັນແມ່ນບໍ່ມີຍ້ອນວ່າຜີບ້ານ ເຈ້ງ ລ້ຽງ ປະຈຸບັນ ແມ່ນເອົາມາຈາກຊົນເຜົ່າເບຣິ ສະໄໝ ພວກເຂົາຢູ່ຮ່ວມກັນ ທີ່ເຂດແມ່ນ້ຳເຊຊຸວ້ຽ ຮຸວ້ຽມິນ, ແມ່ນ້ຳກົງເຂດພູຍະປຸ ຫຼືຈະນຽດພາມ. ຜູ້ເອົາຜີບ້ານ ມາຈາກເບຣິ ແມ່ທ້າວຢຣຸ ແລະນາງ ຢຣ້ວກຈ່າພະ ແລະຈ່າກະທຍອງແດງ ຈະຕ້ອງ ໄດ້ຄະລຳ, ນຸ່ງກະ ຕ່ຽວ, ຈົ່ງຜົມຍາວຕະຫຼອດ 3 ປີ (ໝາຍເຖິງ ການເປັນ ຈ່າພະ, ຈ່າກະທຍອງແດງ ຄັ້ງໜຶ່ງຕ້ອງແມ່ນ 3 ປີ). ຈາກນັ້ນກໍ່ປ່ຽນໄປຫາ ຜູ້ໃໝ່ຄະລຳບໍ່ໃຫ້ກິນຊີ້ນສັດ 10 ຢ່າງ ທັງ 2 ຄົນ ຕ້ອງ ຢູ່ຮັກສາສິນ 5 ຂໍ້ຂອງພະພຸດ ທະເຈົ້າດ້ວຍ.

ຊົນເຜົ່າເຈ້ງ ແຕ່ກ່ອນຈົ່ງຜົມຍາວເກົ້າຜົມ ເປັນລະບຽບ, ນຸ່ງກະຕ່ຽວໝາກປົດ ແລະກະຕ່ຽວ ທຳ ມະດາ, ຫົ່ມເສື້ອຕາມມີ, ບ່ອງຫູ, ບາງຄົນສັກ ລາຍ. ແມ່ຍິງນຸ່ງສິ້ນກາໂດ ແລະສິ້ນທຳມະດາ, ຫົ່ມເສື້ອ ໝາກປົດ ແລະຫົ່ມເສື້ອອື່ນໆ ປະດັບ ເອ້ຢ້ອງ ດ້ວຍ ກ້ອງແຂນ, ກ້ອງຂາ, ໝາກປົດໃສ່ຄໍ ແລະຕຸ້ມຫູທຳ ມະດາ.

ດ້ານສິລະປະພື້ນເມືອງ ມີຄ້ອງຈຸ້ມ, ຄ້ອງ ລາ, ຕະໜ່ຽນ, ແຄນ, ກະຈັບປີ່, ຫີນ, ຂັບລຳເຈ້ຍ ແລະການຟ້ອນແບບເຕັ້ນສາກ ນອກນີ້ຍັງມີນິທານ ພື້ນເມືອງ, ນິທານພື້ນສິບ, ຄຳພະທຍາ ແລະອື່ນໆ.

ການຊອກຫາຄູ່ຄອງ ຂອງບ່າວສາວມີ 2 ລັກສະນະຄື: ລັກສະນະທີໜຶ່ງ ແມ່ນພໍ່ແມ່ຂອງ ບ່າວ ສາວໝັ້ນໝາຍແຕ່ເຍົາໄວ ຫຼືບໍ່ທັນເກີດອອກ ມາ ຫຼື ກຳລັງຖືພາຄາທ້ອງຢູ່ ແລະລັກສະນະ ທີສອງ: ແມ່ນ ບ່າວສາວຈະຊອກ ສະແຫວງຫາກັນ ເອງ, ຖ້າຮັກ ມັກກັນແທ້ພໍ່, ແມ່ 2 ກ້ ຳ 2 ຝ່າຍ ຈະເປັນຜູ້ດຳເນີນ ການ, ຄ່າດອງສິນ ສອດ, ສ່ວນ ຫຼາຍແມ່ນບໍ່ ໜັກ ໜ່ວງ 2-5 ກີບຫົວໜາມ, ຄວາຍ 1 ໂຕຖ້າມີ, ສ່ວນ ຫຼາຍແມ່ນ ໝູ 2 ໂຕ ຫຼືບາງ ຄັ້ງເອົາປາໃຊ້ເປັນ ອາຫານຕົ້ນຕໍ. ພາຍ ຫຼັງແຕ່ງ ດອງແລ້ວຜູ້ ຊາຍຈະໄປສູ່ຄອບຄົວຂອງເມຍ. ການຢ່າຮ້າງກັນຖ້າຝ່າຍ ໃດຝ່າຍໜຶ່ງມີແນວ ຄິດບໍ່ດີບິດບ້ຽວຈາກຄວາມຈິງ ເປັນຕົ້ນ ຫຼິ້ນຊູ້ຈາກ ກັນ, ຖ້າຝ່າຍຍິງຜິດກໍ່ຕ້ອງໄດ້ ສົ່ງຄ່າດອງທັງ ໝົດພ້ອມປັບໄໝຄວາຍ 1 ໂຕ, ຕ່ຳ ສຸດໝູສີ່ກ ຳ 1ໂຕ ເພື່ອຂ້າລ້ຽງຜີບ້ານ. ຖ້າຝ່າຍ ຊາຍ ຜິດກໍ່ຕ້ອງ ເສຍຄວາຍ 1 ໂຕ ແລະ ຂ້າໝູ1 ໂຕລ້ຽງ ຜີບ້ານ, ຊັບສົມບັດອື່ນໆ ຝ່າຍຍິງເອົາໝົດ ຜູ້ຊາຍໜີຈາກ ເ ຮືອນ ເມຍດ້ວຍເຄື່ອງນຸ່ງຄາຄ້ຽ.

ການສືບທອດມູນມໍລະດົກ, ສ່ວນຫຼາຍ ກໍ່ຈະຕົກເປັນພູດຂອງລູກສາວ ໂດຍສະເພາະ ເອ້ຍກົກໝູ່ ຈະບໍ່ອະນຸຍາດໃຫ້ໄປໃສ ຜູ້ກ່ຽວມີ ພັນທະລ້ຽງພໍ່, ລ້ຽງແມ່ຕະຫຼອດຊີວິດ, ຜູ້ກ່ຽວມີ ສິດໃນການແບ່ງຊັບສົມບັດ ໃຫ້ແກ່ອ້າຍ, ນ້ອງແຕ່ ລະຄົນຈະໄດ້ຫຼາຍ ຫຼືໜ້ອຍທຸກຄົນແມ່ນໄ ດ້ຕາມ ຄວາມເໝາະສົມ.

ເຮືອນຊົນເຜົ່າເຈ້ງ ມີລັກສະນະ 2 ຄື: ລັກ ສະນະຄື: ທີໜຶ່ງແບບເຮືອນດ່ຽວ, ລັກສະນະທີ

ສອງແບບເຮືອນແຝດ ສະເພາະຜູ້ຮັ່ງມີຈຶ່ງສາມາດ ປຸກໄດ້. ເຮືອນດ່ຽວ ແລະເຮືອນແຝດມີປະຕູ 2 ປ່ອງຄືກັນ, ປະຕູເຂົ້າອອກຢູ່ສົ້ນເບື້ອງໜຶ່ງ ແລະ ປະຕູປ່ອງພິເສດໄວ້ສົ້ນໜຶ່ງ, ບໍ່ມີປ່ອງຢ້ຽມ, ເຮືອນ ແຝດຫຼັງໜຶ່ງ ແມ່ນເຮືອນນອນຕ້ອນຮັບແຂກ ແລະເຮັດພິທີກຳອື່ນໆ. ສ່ວນຫຼັງທີສອງແມ່ນສະ ເພາະເຮືອນຄົວ ແລະບ່ອນນອນເວລາສຸກເສີນ, ທາງໜ້າມີຊານຍາວປະມານ 1-2 ແມັດ, ມີອຸແອ່ງ ນ້ຳຂຶ້ນລົງດ້ວຍເກີນ ຕໍ່ມາມີບັນໄດບາງລະດູການ ພວກເຂົາຈະຕຳເຂົ້າ ຢູ່ນອກຊານເລີຍ. ທາງໃນ ເຮືອນໂອ້ໂຖງໂລ່ງກັນໝົດ, ເວລານອນພໍ່, ແມ່ຈະ ນອນເບື້ອງປະຕູປ່ອງພິເສດ. ຈາກນັ້ນແມ່ນຜູ້ ນ້ອຍຊາຍ, ຍິງ, ລູກສາວຢູ່ສົ້ນປະຕູເຂົ້າ- ອອກ ຈະແມ່ນລູກຊາຍໃຫ່ຍ. ຖ້າບໍ່ມີລູກຊາຍໃຫ່ຍກໍ່ ແມ່ນລູກຊາຍຜູ້ຖັດລົງມາ, ສະໄໝກ່ອນທາງສີ ໜ້າເຮືອນເຈ້ຽ ກໍ່ຈະ ປະກອບດ້ວຍສິລະປະການ ຄວັດລວດລາຍຕ່າງໆ ທີ່ມີລັກສະນະຫຼາກຫຼາຍ ສົມຄວນ.

ປະເພນີການເກີດລູກ ຂອງຊົນເຜົ່າເຈ້ຽ ຈ ະເກີດຢູ່ແຈເຮືອນແຄມເຕົາໄຟເບື້ອງຕີນບ່ອນ ນອນ,ຈະມີໝໍຍົງທີ່ຊ່ຽວຊານໃນການຊ່ວຍຄົນ ເກີດລູກ ໃນນັ້ນມີຍາດພີ່ນ້ອງທີ່ສະໜິດສະໜົມ ຄ່ອຍເຝົ້າເບິ່ງແຍຕະຫຼອດເວລາການຢູ່ກຳ, (ນັ່ງ ກຳຂອງຜູ້ເກີດລູກ) ສຳລັບລູກຫົວສາວຈະໃຊ້ເວ ລານານເຖິງເດືອນ, ຖ້າຜູ້ເຄີຍມີລູກແລ້ວຈະໃຊ້ ເວລານັ່ງກຳສົ້ນສຸດບໍ່ໜຸດ 7 ວັນ, ການຄະລຳອາ ຫານ ຜູ້ກ່ຽວຈະບໍ່ໄດ້ກິນໂລເລເປັນຕົ້ນ: ປາໜັງ, ເປັດ, ໄກ່, ໝູ, ຄວາຍດ່ອນ, ຜັກ, ເຫັດ ແລະ ອື່ນໆ.

ສຳລັບປະເພນີສົ່ງສະການຜູ້ເສຍຊີວິດ ແມ່ນດຳເນີນການແບບງ່າຍດາຍຄື: ຫໍ່ດ້ວຍສາດ ມັດໃສ່ໄມ້ໄຜ່ຫາມທ້າຍ - ຫາມຫົວໄປປ່າຊ້າດ້ວຍ ການຝັ່ງ ພິທີຢູ່ເຮືອນກໍ່ມີການຄົບຈັ່ນເລັກນ້ອຍ 2-3 ຄືນກໍ່ແມ່ນແລ້ວ. ສະເພາະຄອບຄົວທີ່ຖືສາສະ ໜາພຸດກໍ່ຈະນິມົນພະມາສູດເຮືອນ, ບາງຄົນເຮັດ ພິທີສົ່ງກະທາມ (ທາມນຳຄົນຕາຍ) ບາງຄົນຈະ ບໍ່ເຮັດເລີຍ. ຄຽງຄູ່ກັບບັນຫາດັ່ງກ່າວນັ້ນຊົນເຜົ່າ ເຈ້ຽ ຍັງມີຂໍ້ຫ້າມ ແລະການຄະລຳຕ່າງໆເປັນຕົ້ນ ແມ່ນນັບແຕ່ການຫວ່ານກ້າແລ້ວ ຈົນຮອດມື້ດຳ ນາແລ້ວ ແມ່ນບໍ່ໃຫ້ຕັດຜົມຢ່າງເດັດຂາດ, ເພື່ອບໍ່ ໃຫ້ແມງໄມ້ ຫຼືສັດຕູພືດທຳລາຍເຂົ້າ, ສັດຫ້າມຈີ່ ກະປູ ແລະຫອຍໃນໄລຍະນີ້ ເພາະເຂົ້າຈະເຫຼືອງ ບໍ່ງາມ, ເວລາໄປເຮັດຕ້ອນຫ້າມພວກ ໄປເຮັດກິນ ເຂົ້າຈ້າວ ເພາະດິນຕ້ອນຈະຊ່າຍ, ຫ້າມບໍ່ໃຫ້ ຕຳ ແຈ່ວ, ຕຳເຂົ້າ ແລະຕຳອື່ນໆ, ຕ້ອນຈະຫຼີ ພ້ອມກັນ ນັ້ນ ແຕ່ລະຄົນຈະຕ້ອງຄະລຳປາກ ບໍ່ໃຫ້ເວົ້າໂລ ເລ, ມັນຈະສະແໜ້ງປາບໍ່ລົງຕ້ອນ.

Cheng

Historical background:

The Cheng are one of the smallest groups in Laos. They only live in Attapeu and SeKong province. Presently, most of them live in Saisettha and Sanarmxai districts of Attapeu province. Their total population amounts to 6,511 people, of which 3,342 are females, according the second population census done of 1995. Not a lot is known about this group, especially their early history.

Name and language:

The person who coined the name " Cheng " was King Setthathirat of the Larnxang kingdom in B.C. 2091-2114 because this ethnic people had the unique art of carving, and supposedly, the name " Cheng " means "those who carve". King Setthathirat assigned them to build and take care of the temples and other religious places.

Language and name:

The Cheng language is classified as a Mon-Khmer language, on the Bahnaric language branch. The Chieng language is similar to Chieng, Brao, Yru, Oy and Nyahern languages. When these people meet and talk, they can understand each other easily.

Beliefs, society, ceremonies and myths:

In some villages, the Cheng believe in both Buddhism and animism.

However, a few villages only have animist beliefs. Each year, from January to December, they worship different spirits such as Brakanao, the wooden Buddha image, *Branyamoo*, the rice sowing Buddha image and *Bramork*, the rice processing Buddha image. A soup of one chicken or duck and a jar of wine are offered to the spirits. The purpose of ritual feasting is to pay tribute to the spirits that have done good deeds such as permitting a bountiful rice harvest. It is also an opportunity for villagers from different villages to get together.

The most important spirit is the village spirit. Worship of the village spirit is considered essential to daily life. A large feast is held during the middle of the year. On this occasion previously, one or two buffaloes were killed. Today, pigs are more commonly killed. During the procession of this rite, young couples, married people and children put their arms on each other's shoulder in a round shape. Each person yells and dances in a regular rhythm. Everyone has great fun during this time. During this time for about one week, no one is allowed to go out of the village and no outsider may enter the village. If an outsider does happen to enter the village, he or she must offer one or two buffaloes that will be killed for animist sacrifice to the spirits.

When this period of ritual and feasting is over, the villagers go back to work as normal. Before starting with their production during the early parts of the rainy season, the villagers will organize a separate animist sacrifice to the village *pah* (Buddha image) in order to request assistance and mercy from the spirit, and asking the spirits to prevent damage to their crops.

In regards to marriage, either marriage is arranged by parents from a very young age, or young people find their own mate. If everyone is satisfied with the arrangement, a small dowry of money or animals is paid to the bride's family. After the wedding, the groom will stay at the bride's house.

If divorce is demanded, such as because adultery was committed, the guilty party must pay a penalty of one buffalo or at least four pigs that are to be killed for an animist sacrifice to the village spirit. If the husband committed adultery, all of his valuables or assets will belong to his wife except for the clothes he is wearing.

In regards to inheritance, most inheritance passes to the eldest daughter. She has the right to suitably divide a part of heritage to her brothers and sisters.

Cheng pregnant women will give birth in the corner of the house near the fireplace. A midwife will assist the birth. There are certain taboos the mother must follow. She will be forbidden from eating catfish, chicken, duck, vegetables, mushroom and other things for some time.

If someone dies, the funeral tradition is simple. The body will be covered by a mat, and some feasting and mourning will take place in the house of the deceased. For those who believe in Buddhism, monks will be invited to the house to pray. Some families organize an alms-giving ceremony and some do not.

In addition, Cheng also have some other unusual taboos. One taboo is that it is strictly forbidden to cut one's hair from the time rice is sown until it is harvested. This is to prevent insects and pests causing damage to their crops. During this period, it is also forbidden to put crabs or shells on hot charcoal.

Village and house:

Before, the Cheng village consisted of some longhouses situated around a communal house. However, they now prefer smaller houses for the typical nuclear family unit. Today the Chieng villages consist of houses on stilts placed in an irregular pattern. The houses sit on wooden stilts, with a wooden floor frame. The walls are made of bamboo and the roof is thatch, and there is a hearth in one corner for cooking.

Costume:

Today Cheng women do not know how to weave, so they buy their clothing from local markets, wearing typical Lao *phaa sinhs* and blouses. They tie their hair in a knot on the back of the head. They wear little jewelry. The men wear short pants and generally no shirt.

Agriculture and economics:

The Cheng grow wet-paddy rice, and grow maize and various fruits and vegetables. They also raise buffalo, pigs, chickens and ducks for consumption and sale, and for their annual sacrifices. The Chieng are not known for their handicrafts. They make a few simple things such as baskets for their own use.

ຊົນເຜົ່າສາມຕ່າວ

ປະຫວັດຄວາມເປັນມາ:

ຕາມຂໍ້ມູນຂອງເຖົ້າແກ່ອາວຸໂສ ຢູ່ບ້ານ ຖ້ຽວເມືອງ ວຽງພູຄາ ໃຫ້ຮູ້ວ່າ: ຊົນເຜົ່າສາມຕ່າວ ໄດ້ມີປະຫວັດຄວາມເປັນມາ ຈາກດິນດອນຕອນ ໃຕ້ຂອງປະເທດຈີນ ແລະປະເທດ ມຽນມາ, ສາ ເຫດຂອງການເຄື່ອນຍ້າຍ ເນື່ອງຈາກສະພາບ ທາງທຳມະຊາດ ແລະສັງຄົມມີການປ່ຽນແປງ ຈຶ່ງ ໄດ້ເຮັດໃຫ້ເຂົາເຈົ້າເຄື່ອນຍ້າຍເຂົ້າມາຕັ້ງພູມລຳ ເນົາຢູ່ປະເທດລາວເຮົາ ພ້ອມດຽວກັນກັບຊົນເຜົ່າ ກຶມມຸ, ຊົນເຜົ່າບິດ ແລະລະເມດ.

ປະຈຸບັນພວກເຂົາເຈົ້າຕັ້ງພູມລຳເນົາ ແລະຖິ່ນຖານບ້ານຊ່ອງຢູ່ແຂວງ ຫຼວງນ້ຳທາ ແລະ ແຂວງບໍ່ແກ້ວ.ພົນລະເມືອງຂອງຊົນເຜົ່າສາມຕ່າວ ມີ ທັງໝົດ 2.213 ຄົນ,ໃນນັ້ນມີ ຍິງ 1.153 ຄົນ (ຜົນການສຳຫຼວດພົນລະເມືອງທົ່ວປະເທດ ຄັ້ງທີ II ປີ 1995).

ຊື່ເອີ້ນ:

ຊົນເຜົ່ານີ້ເອີ້ນຕົນເອງວ່າ: "ສາມຕ່າວ", ຊົນເຜົ່າອື່ນເອີ້ນເຂົາເຈົ້າກໍ່ແມ່ນ "ສາມຕ່າວ", ຊື່ທີ່ເຂົາເຈົ້າມັກ ແລະຊື່ທີ່ໃຊ້ທາງການໃນປະຈຸບັນ ກໍ່ແມ່ນຊົນເຜົ່າ "ສາມ ຕ່າວ". ສຳລັບຄວາມໝາຍ ຂອງຊື່ເອີ້ນຊົນເຜົ່ານີ້ ຕາມປຶ້ມປະຫວັດສາດ ແຂວງ ຜົ້ງສາລີ ໄດ້ໃຫ້ ຮູ້ວ່າ:"ສາມຕ່າວ" ແມ່ນ ຊື່ສາມກົກ (ສາມເຈົ້າ) ຂອງສາມອານາຈັກນ້ອຍ ໃນສະໄໝສີ່ແສນອານມ້າ (ສະໄໝສັກດິນາພະ ມ້າເຂົ້າມາຮຸກຮານປະເທດ ລາວ). ສາມຕ່າວຍັງ ມີປະຫວັດເລົ່າກັນມາວ່າ: ແຕ່ກ່ອນເປັນເຜົ່າດຽວ ກັບເຜົ່າກຶມມຸ, ມີເຂດໜຶ່ງຂອງເຜົ່າກຶມມຸ ນີ້ມີ ຄວາມຈະເລີນກວ່າ, ມີໂຕອັກສອນຂອງຕົນ ເອງ. ພວກເຈົ້ົາກົກ, ເຈົ້າເຫຼົ່າຂອງເຂົາເຈົ້າໄດ້ເອົາໂຕ ອັກສອນຂອງເຜົ່າຕົນໄປຂາຍໃຫ້ເຜົ່າອື່ນ ແລະຢູ່ ນຳເຜົ່າອື່ນຕາມທີ່ຫຼັງກໍ່ມີການຜິດພາດທະເລາະ ວິວາດກັບເຜົ່າດັ່ງກ່າວ, ຈຳເປັນໄດ້ກັບຄືນມາຢູ່ ກັບເຜົ່າຂອງຕົນເອງ, ແຕ່ປະຊາຊົນບໍ່ຮັບເອົາເຂົາ ເຈົ້າອີກ, ເຂົາຈຶ່ງໜີໄປຢູ່ຕ່າງຫາກ, ປະພາສາ, ປະ ຮີດຄອງຂອງເຜົ່າຕົນ, ລອກແບບເອົາຂອງເຜົ່າ ອື່ນເຊັ່ນ:ຈາກຖືຜີມາຖືພາມ, ຈາກສາສະໜາ ພາມມາຖືສາສະໜາພຸດ ເລື່ອງນີ້ພຽງແຕ່ເປັນນິ ທານ, ຫຼັກຖານແນວໃດແທ້ ພວກເຮົາຍັງຈະສຶບຕໍ່ ຄົ້ນຄວ້າ, ຊົນເຜົ່າສາມຕ່າວ ປະກອບມີໜຶ່ງແຊ່ງຄື ດອຍ.

ພາສາ:

ຊົນເຜົ່າສາມຕ່າວ ບໍ່ມີຕົວໜັງສືຂຽນ, ແຕ່ ກໍ່ມີພາສາປາກເວົ້າເປັນອັນສະເພາະຂອງຊົນເຜົ່າ ຕົນເອງຄຽງຄູ່ກັນນີ້ ຊົນເຜົ່າສາມຕ່າວ ຍັງສາມາດ ໃຊ້ພາສາປາກເວົ້າຂອງຊົນເຜົ່າລາວ, ລື້, ຍວນ, ບິດ, ກຶມມຸໄດ້ດີ, ພາສາປາກເວົ້າຂອງຊົນເຜົ່າສາມ ຕ່າວນີ້ໄດ້ຈັດເຂົ້າໃນໝວດພາສາມອນ- ຂະແມ.

ຮີດຄອງປະເພນີ, ຄວາມເຊື່ອຖື ແລະວັດທະນະທຳ-ສັງຄົມ:

ຍ້ອນມີການດຳລົງຊີວິດຢູ່ສະຫຼັບສັບ ຫວ່າງກັບຊົນເຜົ່າອື່ນໆ ເຮັດໃຫ້ຮີດຄອງປະເພນີ, ຄວາມເຊື່ອຖື ແລະວັດທະນະທຳຂອງຊົນເຜົ່າ ສາມຕ່າວມີລັກສະນະປະສົມປະສານກັບຂອງ ຊົນເຜົ່າອື່ນທີ່ຢູ່ໃກ້ຄຽງ.ຊົນເຜົ່ານີ້ນັບຖືສາສະໜາ

ພຸດ ແບບຊົນເຜົ່າລື້, ຢູ່ບ້ານຂອງເຂົາເຈົ້າຈະມີວັດ ວາອາຮາມ ແລະມີພະສົງສາມະເນນ. ຄຽງຄູ່ກັນ ນີ້ຊົນເຜົ່າສາມຕ່າວ ຍັງມີຄວາມເຊື່ອຖືທາງໄສຍະ ສາດຄື:ມີຄວາມເຊື່ອໃນ ເລື່ອງຜີເຊັ່ນ : ຜີພໍ່, ຜີແມ່, ຜີເຮືອນ, ບ້ານ, ເມືອງ, ຜີແມ່ນ້ຳລຳເຊ ແລະຜີປ່າ.

ໂຄງສ້າງທາງສັງຄົມຂອງຊົນເຜົ່າສາມ ຕ່າວ ເປັນລັກສະນະຄອບຄົວທີ່ຂ້ອນຂ້າງຈະຂະ ຫຍາຍ ເຊິ່ງດຳລົງຊີວິດຢູ່ຮ່ວມກັນຫຼາຍເຊັ່ນຄົນ. ຊີວິດຂອງຄູ່ຜົວເມຍ ຫຼັງຈາກ ການແຕ່ງດອງ ວ່າ ຈະຢູ່ນຳພໍ່,ແມ່ຂອງຜົວຫຼືເມຍນັ້ນແມ່ນ ຂຶ້ນຢູ່ກັບ ທັງສອງຝ່າຍຄືຝ່າຍຍິງ ແລະຝ່າຍຊາຍຕົກລົງ ກັນເອງ. ສ່ວນຫຼາຍແລ້ວລູກຜູ້ກົກຈະມີໜ້າທີ່ໃນ ການລ້ຽງດູພໍ່, ແມ່ ແລະມີສິດໄດ້ຮັບມູນມໍລະດົກ ຫຼາຍກວ່າຜູ້ອື່ນໆ. ໃນສັງຄົມຂອງຊົນເຜົ່າສາມ ຕ່າວຈະປະກອບດ້ວຍຫຼາຍຕະກຸນ ຫຼືສິງຊາວ ເຊັ່ນ:ສິງເຫງັນ,ສິງເສືອ,ສິງໄກ່, ສິງນົກກົກ ,ສິງກາ ແລະອື່ນໆ.ສຳລັບຂໍ້ຫ້າມ ແລະການຄະລຳຂອງ ແຕ່ລະສິງຊາວນັ້ນ ກໍ່ຄ້າຍກັບຊົນເຜົ່າຕ່າງໆເປັນ ຕົ້ນແມ່ນການຫ້າມຂ້າ ແລະກິນຊີ້ນສັດທີ່ເປັນສິງ ຂອງຕົນເອງ ທັງນີ້ກໍ່ສະແດງເຖິງຄວາມເຄົາລົບ ບູຊາ ແລະນັບຖື.

ຊົນເຜົ່າສາມຕ່າວມີຄວາມນິຍົມ ຢູ່ເຮືອນ ຮ້ານ,ການອອກແບບໃນການປຸກສ້າງ ແລະການ ຈັດຫ້ອງຢູ່ພາຍໃນເຮືອນ ແມ່ນຄ້າຍຄືກັນກັບ ຂອງ ຊົນເຜົ່າລື້. ຮີດຄອງປະເພນີກ່ຽວກັບຂໍ້ຫ້າມ ແລະ ການຄະລຳຢູ່ໃນເຮືອນ ແມ່ນບໍ່ໃຫ້ເຂົ້າຫ້ອງນອນ.

ຊົນເຜົ່າສາມຕ່າວ ມີຄວາມນິຍົມກິນເຂົ້າ ໜຽວ, ມັກກິນອາຫານປະເພດລາບດິບ, ປ້ຳ, ຈໍ່, ເອາະທີ່ມີລົດຊາດເຜັດ ແລະເຄັ່ມ, ມັກດື່ມເຫຼົ້າ ເດັດ, ດື່ມນ້ຳດິບ ສູບຢາ ແລະຄ້ຽວໝາກ.

ໃນປີໜຶ່ງໆ ພວກເຂົາເຈົ້າມີການມ່ວນຊື່ນ ດ້ວຍການເຮັດບຸນປີໃໝ່ລາວ, ບຸນພະເຫວດ, ບຸນ ເຂົ້າພັນສາ, ບຸນອອກພັນສາ ແລະພວກເຂົາມີ ໝໍ ຢາພື້ນເມືອງ, ໝໍດູ ແລະໝໍຜີ...ເມື່ອມີການເຈັບ ເປັນກໍເຊີນໝໍດູມາເຮືອນ ເພື່ອພິສູດອາການຂອງ ຄົນເຈັບຜູ້ນັ້ນ. ຖ້າຫາກໝໍດູວ່າແມ່ນພະຜີໃດ ເປັນ ຜູ້ເຮັດໃຫ້ກໍ່ຈະດຳເນີນການປົວແປງຜີນັ້ນ, ໃນກໍ ລະນີມີຜູ້ເສຍຊີວິດກໍ່ດຳເນີນການຄົບງັນຕາມປະ ເພນີແລ້ວກໍ່ຫາມໄປຝັງຢູ່ປ່າຊ້າ.

ຊົນເຜົ່າສາມຕ່າວ ເກີດລູກຢູ່ໃນເຮືອນ, ບໍ ລິເວນຕີນບ່ອນນອນຂອງຄູ່ຜົວເມຍ ແລະພາຍຫຼັງ ເກີດລູກແລ້ວກໍ່ຈະຢູ່ກຳເດືອນໜຶ່ງ. ສຳລັບຮີດ ຄອງການເກີດລູກຂອງຊົນເຜົ່າສາມຕ່າວ ມີລັກ ສະນະຄ້າຍຄືກັບຊົນເຜົ່າລື້.

ການດຳເນີນຊີວິດ ທາງດ້ານເສດຖະກິດ, ຊົນເຜົ່າສາມຕ່າວ ສ່ວນຫຼາຍປະກອບອາຊີບ ທາງ ການກະເສດຄືການເຮັດໄຮ່, ເຮັດນາປູກເຂົ້າ ໜຽວ. ນອກຈາກນີ້ພວກເຂົາເຈົ້າຍັງປູກພືດຜັກ ຕ່າງໆ ເພື່ອຮັບໃຊ້ຊີວິດປະຈຳວັນຂອງຄອບຄົວ. ຜູ້ຊາຍມີມູນເຊື້ອໃນວິຊາຫັດຖະກຳຈັກສານ, ຕີ ເຫຼັກເພື່ອເຮັດເຄື່ອງໃຊ້ໃນຄອບຄົວ,ເຄື່ອງມື ການ ຜະລິດ ແລະແມ່ຍິງໄດ້ມີມູນເຊື້ອໃນວິຊາການຕຳ ຫູກທໍ່ໄໝເພື່ອເຮັດເຄື່ອງນຸ່ງຫົ່ມ, ສັດທີ່ເຂົາເຈົ້າ ມັກລ້ຽງໄດ້ແກ່ຄວາຍ, ໝູ ແລະສັດປີກ.

Samtao

Historical background:

According to information provided by elderly Samtao people, it was learned that the Samtao ethnic group has original roots in the southern area of China and northern Burma. They migrated because of social pressures and settled in Luangnamtha and Bokeo provinces. The total population of Samtao in Laos is 2,213 people, of which 1,153 are female according to the second population census done in 1995.

Name and language:

These people refer to themselves as " Samtao ", which is also their official name and the name others refer to them by. The Samtao also have a sub-group called the Doi. There are about 600 hundred Doi in Laos.

Their language is Mon-Khmer language, and is on the Palaungic branch of the language tree. They do not have a written language. They also can speak Lao, Leu, Nyuan, Bid, Keummu and other languages as well.

Society, beliefs, ceremonies and myths:

The Samtao practice a mix of Buddhism and animism. They believe in spirits such as the spirits of ancestors, the household, the village and district, plus spirits of nature such as the rivers and the forest. Every year they make sacrifices to the Rice Spirit, offering chickens, rice and rice wine.

Traditionally the Samtao live in extended family units where several generations will live under one roof. The father is the head of the family and they are monogamous. The first child of the family has the task of looking after the parents, thus receives more inheritance than other children. The society of Samtao ethnic is composed of many clans, known as *sing sao*. They are named after animals, such as the Tiger Clan or the Crow Clan. It is forbidden to eat the meat of the animal that your clan is named after.

They celebrate the Lao New Year, the Boon Phaved festival, Boon Khaophanhsa festival, and other popular Lao festivals

The Samtao also have traditional shamans and fortunetellers. If someone is ill, a fortuneteller is asked to see if angry spirits are involved in the illness. If so, then sacrifices may be arranged in order to try to please the spirits to cure the illness.

When a couple wants to marry, the groom must pay a dowry of silver, some pigs and some chickens, plus some betel nut. The couple may live with either family after marriage before starting their own household.

The deceased are cremated at the temple or if the family cannot afford a proper funeral, the body is buried outside the village. Children who die are always buried.

Village and house


The Samtao have small houses on stilts. The house is built of wood and woven bamboo. The roof is usually grass thatch. There is a single room with a hearth in one corner. The family sleeps on one side of the room under mosquito nets.

Costume

The Samtao do not have traditional costumes anymore, only wearing common commercial Lao clothing. The traditional clothing for women used to consist of a dark colored sarong with colored stripes. This was worn with a long-sleeved vest of dark color. The women also traditionally wore silver jewelry, but this is less common now.

Agriculture and livelihood:

The Samtao practice slash-and-burn cultivation of rice, plus also grow rice in flooded paddies. Additionally, they grow other crops such as vegetables. They raise some animals, such as buffalo, pigs, and poultry. The men have simple blacksmithing skills.



ຊົນເຜົ່າສະດາງ

ປະຫວັດຄວາມເປັນມາ:

ຊົນເຜົ່າສະດາງ ແມ່ນຊົນເຜົ່າໜຶ່ງທີ່ໄດ້ຕັ້ງຖິ່ນຖານພູມລຳເນົາຢູ່ລາວມາແຕ່ເທິງນານແລ້ວ. ສຳລັບກິກເຄົ້າເທງ້ຳກຳ ຂອງຊົນເຜົ່ານີ້ບໍ່ມີຂໍ້ມູນ ແລະຫຼັກຖານທີ່ຊັດເຈນ. ແຕ່ຊົນເຜົ່າສະດາງທີ່ດຳລົງຊີວິດຢູ່ລາວ ປະຈຸບັນເຂົາເຈົ້າໄດ້ເຄື່ອນຍ້າຍມາຈາກບັນດາແຂວງພາກກາງ ຫວຽດນາມ ໄດ້ປະມານ 100 ກວ່າປີມາແລ້ວ. ໃນໄລຍະເບື້ອງຕົ້ນ, ຊົນເຜົ່າສະດາງຕັ້ງພູມລຳເນົາລຽບຕາມຊາຍແດນ ລາວ-ຫວຽດນາມ ເຂດດາກອຸ, ພາຍໃຕ້ການບັງຄັບບັນຊາຂອງ ຕາແສງເພຍດວງ ແລະຕາແສງຢະມູ.

ປະຈຸບັນຊົນເຜົ່າສະດາງ ຕັ້ງພູມລຳເນົາຢູ່ບ້ານຫ້ວຍສົນ, ພູຢາງ, ບ້ານດາກຕູດ ລຽບຕາມຊາຍແດນ ລາວ-ຫວຽດນາມ ຂຶ້ນກັບເມືອງ ພູວົງ ແຂວງ ອັດຕະປື ແລະແຂວງ ສະຫວັນນະເຂດ. ນອກຈາກນີ້ຊົນເຜົ່າສະດາງ ຍັງມີຢູ່ປະເທດ ຫວຽດນາມ ອີກດ້ວຍ ພົນລະເມືອງຂອງຊົນເຜົ່າສະດາງ ມີ 786 ຄົນ, ຍິງ 393 ຄົນ (ຕາມສະຖິຕິການສຳຫຼວດພົນລະເມືອງທົ່ວປະເທດ ຄັ້ງທີ II ປີ 1995).

ຊື່ເອີ້ນ:

ຊົນເຜົ່ານີ້ເອີ້ນຕົນເອງວ່າ: "ສະດາງ" ຊົນເຜົ່າອື່ນເອີ້ນເຂົາເຈົ້າກໍ່ແມ່ນ " ສະດາງ ",ຊື່ທີ່ເຂົາເຈົ້າມັກ ແລະຊື່ທີ່ໃຊ້ທາງການໃນປະຈຸບັນ ກໍ່ແມ່ນ ຊົນເຜົ່າ " ສະ ດາງ " .ຊົນເຜົ່າສະດາງປະກອບມີ 3 ແຊງຄື: ສະດາງດວນ, ກາຢ້ອງ ແລະສະດາງ.

ພາສາ:

ຊົນເຜົ່າສະດາງ ບໍ່ມີຕົວໜັງສື, ແຕ່ມີພາສາປາກເວົ້າເປັນອັນສະເພາະຂອງຊົນເຜົ່າຕົນເອງ ຊຶ່ງຈັດເຂົ້າໃນໝວດພາສາ ມອນ-ຂະແມ, ພາສາປາກເວົ້າແຕ່ລະແຊງ ຂອງຊົນເຜົ່າສະດາງ ແມ່ນແຕກຕ່າງກັນອອກໄປຕາມແຕ່ລະ ທ້ອງ ຖິ່ນ.

ຮີດຄອງປະເພນີ, ຄວາມເຊື່ອຖື ແລະວັດທະນະທຳ-ສັງຄົມ :

ບ້ານຂອງຊົນເຜົ່າສະດາງ ເປັນຮູບວົງມົນ ແລະມີສາລາກວາງຢູ່ເຄິ່ງກາງ, ເຮັດຮົ້ວອ້ອມ ບ ້ານ ,ຈຶ່ງປະຕູເຂົ້າບ່ອນດຽວ ແລະປາກປະຕູໂຂງເຂົ້າບ້ານ ແມ່ນເຂົາເຈົ້າປູກຫວ້ານໃສ່.

ເຮືອນຂອງຊົນເຜົ່າສະດາງ ເປັນເຮືອນຮ້ານທີ່ເຮັດດ້ວຍໄມ້ມອກຕອກລົບ, ລວງຍາວ ແລະລວງກວ້າງ ແມ່ນຫຸດລົ່ນກັນຢ່າງຂາດຂັ້ນ, ຫຼັງຄາມຸ້ງດ້ວຍຫຍ້າຄາ ແລະຫຍ້າເຊີຍເປັນເຮືອນລວດດຽວ, ມີຕຽງສະເພາະແຕ່ລະຄອບຄົວໂດຍ ຈະມີເຕົາໄຟຂັ້ນ. ຢູ່ໃນເຮືອນຂອງຊົນເຜົ່າສະດາງ ມີຫຼາຍຄອບຄົວຢູ່ຮ່ວມກັນຄືຈະມີ ແຕ່ 5 -7 ຄອບຄົວ, ການແຕ່ງກິນ, ການໃຊ້ຈ່າຍຕ່າງໆ ແລະການ ຜະລິດ ແມ່ນເປັນຂອງຄອບຄົວໃຜລາວ.

ວັດທະນະທຳດ້ານເຄື່ອງນຸ່ງເອ້ຢ້ອງ, ຜູ້ຊາຍ ຊົນເຜົ່າສະດາງ ແຕ່ກ່ອນແມ່ນນຸ່ງກະຕ່ຽວ, ຫົ່ມເສື້ອລາຍເຮັ້ຍ, ຫົ່ມຜ້າກະວູ, ເກົ້າຜົມ, ຕັດແຂ້ວມີປອກແຂນ. ສຳລັບກາຢ້ອງ, ຜູ້ຊາຍແມ່ນນຸ່ງກະຕ່ຽວ, ຫົ່ມເສື້ອແຂນສັ້ນ, ບໍ່ຕັດແຂ້ວ, ບໍ່ບ່ອງຫູ, ບໍ່ເກົ້າຜົມແຕ່ມີປອກແຂນ, ປອກຄໍ, ໜາກປັດ,

ມີແພແດງຄຸງນຫົວ, ແມ່ຍິງສະດາງນຸ່ງສິ້ນບໍ່ເຂີນ, ທີ່ມເສື້ອແຂະ, ເກົ້າຜົມທາງຫຼັງ, ໃສ່ໝາກປັດ, ຕັດແຂ້ວ, ບ່ອງຫູໃສ່ຕ້າງ, ແຕ່ແມ່ຍິງກາຢ້ອງນຸ່ງ ສິ້ນສີດຳ, ທີ່ມເສື້ອແຂນຍາວສີດຳ, ເກົ້າຜົມ ທາງງ່ອນ, ບໍ່ຕັດແຂ້ວແຕ່ບ່ອງຫູໃສ່ຕ້າງ, ຕູ້ມຫູນ້ອຍ, ໝາກປັດມີປອກແຂນ.

ຊົນເຜົ່າສະດາງເຄົາລົບບູຊາຜີພໍ່, ແມ່ ທີ່ລ່ວງລັບໄປ. ນອກນັ້ນຍັງມີຜີປ່າດົງ, ແມ່ນ້ຳລຳເຊ, ຫ້ວຍຮ່ອງໜອງບຶງ, ຍັງມີບຣະຕ່າງໆອີກຄື: ບຣະຣັນ, ບຣະອຸຍ, ບຣະບູມ, ບຣະຜັກກາດ ແລະ ອື່ນໆ, ແຕ່ວ່າບຣະທີ່ອັນຕະລາຍທີ່ສຸດ ແມ່ນບຣະ ບຣຶມເນີມ.

ກ່ອນໜ້າ 50 ປີ ຊົນເຜົ່າສະດາງ-ກາຢ້ອງ ໄດ້ ເຮັດບຣະບຣຶມເນີມດ້ວຍການຂ້າຄວາຍ 7 ໂຕ, ຂ້າຄົນ 1 ຄົນຢູ່ຫຼັກເສົາ ຕໍ່ໜ້າສາລາກວານ, ຖ້າ ແມ່ນຄອບຄົວໃດທີ່ເປັນເຈົ້າກົກ, ເຈົ້າເຫຼົ່າ ແລະ ຮັ່ງມີ. ນອກຈາກເຮັດລວມໝູ່ໝົດບ້ານແລ້ວ ຍັງ ເຮັດແຕ່ລະຄອບຄົວອີກ.

ຊົນເຜົ່າສະດາງ-ກາຢ້ອງ ມີເຄື່ອງດົນຕີ ພື້ນເມືອງຫຼາຍຊະນິດຄື: ຄ້ອງລາ, ຄ້ອງຈູມ, ຄ້ອງ ນ້ອງແນ້ງ, ມີກອນຂັບລຳ ແລະອື່ນໆ.

ຊົນເຜົ່າສະດາງ ແລະກາຢ້ອງມີການ ແຕ່ງດອງແຕກຕ່າງກັນຄື: ສະດາງມີອາຍຸ 15 ປີ ຂຶ້ນໄປ. ຄູ່ບ່າວສາວພົວພັນຢ່າງເສລີພາບໃນການ ພົວພັນບ່າວສາວຢູ່ສາລາກວານ, ຜູ້ສາວມີສິດ ເລືອກ. ຖ້າມັກບ່າວຄົນໃດກໍ່ນອນນຳບ່າວ ຄົນນັ້ນ, ເມື່ອຜູ້ສາວຄົນໃດມານອນນຳຢ່າງລຸງນຕິດຖືກ ຕົນເອງມັກກໍສະເໜີໃຫ້ຜູ້ໃຫຍ່ໄປຖາມ.

ແຕ່ມື້ຕົກລົງກັນ ຄູ່ບ່າວສາວກຸງວໄປ ນອນນຳກັນຢູ່ສາລາກວານ. ຖ້ານອນຢູ່ເຮືອນຜິດ ຜີເຮືອນຕ້ອງແປງຜີເຮືອນດ້ວຍເຫຼົ້າໄຫໄກ່ໂຕ, ຖ້າ ຜິດຜີບ້ານ ຫຼືຄູ່ບ່າວສາວຮ່ວມປະເວນີນຳກັນກໍ່ ເຮັດໃຫ້ຊາວບ້ານເຈັບເປັນກໍ່ຕ້ອງແປງຜີບ້ານ ດ້ວຍເຫຼົ້າໄຫ 7 ກົກ, ຂ້າຄົນ 1 ຄົນ, ຄວາຍ 1 ໂຕ, ໝູ 5 ໂຕ, ໄກ່ 15 ໂຕ.

ເມື່ອແຕ່ງດອງແລ້ວ ຜົວໄປກິນເຂົ້າຢູ່ສາ ລາກວານຈົນກວ່າເມຍມີລູກ, ຖ້າເມຍບໍ່ມີລູກ, ຈົນ ຮອດອາຍຸເຖົ້າແກ່ຈິ່ງຄ່ອຍກິນເຂົ້າຢູ່ເຮືອນ, ການ ແຕ່ງດອງຂອງຊົນເຜົ່າສະດາງ ບໍ່ມີຄ່າດອງ, ກໍລະ ນີປະຮ້າງກັນຈະຖືກປັບໄໝດ້ວຍຄ້ອງຈູມ 2 ຄູ່, ທີ່ມີລາຄາເທົ່າຄວາຍ 1ໂຕ

ການດຳເນີນຊີວິດ ທາງດ້ານເສດຖະກິດ, ແຕ່ກ່ອນຮອດປະຈຸບັນສະດາງ-ກາຢ້ອງ ແມ່ນຖື ການຖາງປ່າເຮັດໄຮ່ປູກເຂົ້າຈ້າວເປັນຕົ້ນຕໍ, ເຮັດ ສວນປູກພືດທີ່ມີທາດແປ້ງ, ຜັກນາໆຊະນິດ ແລະ ຕົ້ນໄມ້ກິນໝາກເປັນສຳຮອງ. ສະດາງ-ກາຢ້ອງ ມີມູນເຊື້ອທາງດ້ານຫັດຖະກຳຈັກສານ, ມີຄວາມ ຊຳນານໃນວິຊາຕີເຫຼັກ, ແຕ່ກ່ອນ ຊົນເຜົ່າສະດາງ ບໍ່ລ້ຽງສັດຫຍັງໝົດ, ມາປະຈຸບັນແມ່ນລ້ຽງສັດປະ ເພດຕ່າງໆ. ສ່ວນກາຢ້ອງແຕ່ກ່ອນຮອດປະຈຸບັນ ໄດ້ມີມູນເຊື້ອໃນການລ້ຽງສັດທຸກຊະນິດ.

ห้ามจำหน่าย

Sadang

Historical background:

There is a small number of Sadang people in Laos. There has been no accurate information on the origin of this ethnic group. But the present-day Sadang who live in Laos migrated from the central provinces of Vietnam over 100 years ago. They first settled along the border of Laos and Vietnam in the region of Dark Oong. Presently, the Sadang live in Ban Huay Som, Phoo Yahng, and Dardtood villages in the Lao-Vietnamese border area of Attopeu province and Savannakhet province. There is still a large population in Vietnam, numbering nearly 100,000. The 1995 census states that there were 786 Sadang in Laos, of which 393 were female.

Name and language:

Their official name is "Sadang", and this what they are usually called by other groups. There are three different Sadang groups: the Sadangduan, Kayong and the Sadang.

Their language is a Mon-Khmer language that is considered to be a Bahnaric language of this language group. They have no written language. There are slight dialect differences between the three groups of Sandang.

Society, beliefs, ceremonies and myths:

The Sadang people believe in a large array of spirits and gods. Besides the usual animistic spirits that almost all the Lao ethnic groups believe in, they also believe in supernatural beings called *kanda*. These are the gods that created the universe. In addition, they also worship the spirits of their ancestors and spirits of the forest, rivers, sun, moon, and earth for example. Good spirits are called *yang*, and bad spirits are called kia.

The Sedang have shamans who assist when someone is ill. They can identify which spirit is causing the illness. They can then recommend the correct sacrifice to appease the spirit.

The Sadang wait until they are over fifteen before they marry. They are free to choose who they want as their mate. Often they will have sexual relations before marriage; this is accepted as a way to help decide whom to marry. If they find they are compatible with each other, then the young man will ask elder relatives to help arrange the marriage. There are no dowries in Sandang culture. However, divorce is allowed, and if the couple is divorced they must pay a penalty to the village.

After marriage, the husband and wife will sleep in the village communal house until she is pregnant. Once she is pregnant

they will move into their own house.

Mothers give birth in the house, however if the mother in unmarried she must give birth alone in the forest and pay a penalty as a sacrifice to the village spirit.

The deceased are placed in a coffin and there is a mourning ceremony that goes on for two days. After this the coffin is buried in the cemetery outside the village. The villager shaman will call on the spirit of the dead not to return to the house. Traditionally, if someone died in an accident or an equally unfortunate early death, the village would be burned and the villagers would relocate to a new site.

Village and house:

The Sedang are well known for the giant communal houses that stand in the middle of the village. These are called rong. They have very tall and have steep sloping roofs. They sit on pillars and are often high enough for an elephant to pass under. The main door of the *rong* faces the sacred pole of the village where the main sacrifices take place. However, there currently is only one *rong* in Laos, and that stands in Ban Wang Dat of Attapeu province.

Traditionally the Sadang lived in rectangular long houses with bamboo walls and thatched roofs. They stood on stilts about one meter high. Today most Sadang longhouses today are only about five to eight meters long and much smaller than the older long-houses. Five to seven families may live in one house.

Costume

In earlier times Sadang men only wore loincloths and turbans. Today they wear short pants; t-shirts and turbans are no long worn. Today the women wear typical cotton sarongs and blouses. They like to wear glass pearl necklaces and many other beads. They will wear their hair up or let it fall freely. Some wear a cloth over their hair.

Agriculture and livelihood:

The Sadang groups practice mainly slash-and-burn cultivation of glutinous rice. When possible, they have also grown wet-paddy rice also. Other crops they cultivate are maize, yams, sweet potatoes and many kinds of vegetables. Fruit, tobacco and some fruit are grown also. They raise the usual domestic animals: buffalos, pigs, cattle, and poultry. Hunting, fishing and gathering wild plants for food is also common.

They are not known for their handicrafts. Sadang men forge simple tools from iron, and women will weave baskets from bamboo.

ຊົນເຜົ່າຊ່ວຍ

ປະຫວັດຄວາມເປັນມາ:

ຊົນເຜົ່າຊ່ວຍ ອາດຈະຕັ້ງພູມລຳເນົາຢູ່ ລາວ ມາໄດ້ຫຼາຍຮ້ອຍປີແລ້ວ. ເຂົາເຈົ້າໄດ້ເຄື່ອນ ຍ້າຍເຂົ້າມາລາວ ໂດຍຜ່ານແຄວ້ນຫົງສາວະດີ ປະເທດ ມຽນມາ, ໃນສະໄໝເຈົ້າອາຫຼວຍພວກ ເຂົາເຈົ້າໄດ້ເຄື່ອນຍ້າຍມາຕັ້ງພູມລຳເນົາ ຢູ່ບາງ ເມືອງຂອງແຂວງ ສະຫວັນນະເຂດ, ຕໍ່ມາໄລຍະ ໜຶ່ງ ເນື່ອງຈາກມີສະພາບທຳມະຊາດ ແລະສັງ ຄົມໜັບຮັດຢ່າງໜັກໜ່ວງ ຈຶ່ງໄດ້ເຮັດໃຫ້ຊົນເຜົ່າ ຊ່ວຍເປັນຈຳນວນບໍ່ໜ້ອຍເຄື່ອນຍ້າຍຈາກແຂວງ ສະຫວັນນະເຂດ ມາຕັ້ງພູມລຳເນົາຢູ່ບາງເມືອງ ຂອງແຂວງ ສາລະວັນ, ຈຳປາສັກ, ເຊກອງ ແລະ ຍັງມີຊົນເຜົ່າຊ່ວຍ ຈຳນວນໜຶ່ງເຄື່ອນຍ້າຍໄປປະ ເທດໃກ້ຄຽງ ເຊັ່ນ: ກຳປູເຈຍ ແລະໄທ.

ປະຈຸບັນຊົນເຜົ່າຊ່ວຍຕັ້ງພູມລຳເນົາ ຢູ່ແຂວງ ຄຳມ່ວນ, ສະຫວັນນະເຂດ, ສາລະວັນ, ຈຳປາສັກ ແລະເຊກອງ.

ພົນລະເມືອງຂອງຊົນເຜົ່າຊ່ວຍ ມີ 45.498 ຄົນ,ຍິງ 23.285 ຄົນ ເທົ່າກັບ 1% ຂອງ ພົນລະເມືອງ ທົ່ວປະເທດ (ຜົນການສຳຫຼວດພົນ ລະເມືອງ ຄັ້ງທີ II ປີ 1995).

ຊື່ເອີ້ນ:

ຊົນເຜົ່ານີ້ເອີ້ນຕົນເອງວ່າ: “ຊ່ວຍ”ຊົນ ເຜົ່າອື່ນເອີ້ນເຂົາເຈົ້າກໍ່ແມ່ນ “ຊ່ວຍ” ຊື່ທີ່ເຂົາ ເຈົ້າມັກ ແລະຊື່ທີ່ໃຊ້ທາງການໃນປະຈຸບັນ ກໍ່ແມ່ນ ຊົນເຜົ່າຊ່ວຍ. ສຳລັບການທີ່ເອີ້ນວ່າຊ່ວຍ ແມ່ນ ມາຈາກຄຳສັບສ່ວຍສາອາກອນ, ແຕ່ຜ່ານຂະ ບວນວິວັດແຫ່ງການດຳລົງຄົງຕົວ ແລະຂະຫຍາຍ ຕົວຂອງພວກເຂົາເຈົ້າຈຶ່ງປ່ຽນຊື່ຈາກຄຳທີ່ວ່າ ສວຍມາເປັນ“ຊ່ວຍ”ເຊິ່ງມີຄວາມໝາຍ ຊ່ວຍເຫຼືອ ເຊິ່ງກັນ ແລະກັນ, ຢູ່ປະເທດ ກຳປູເຈຍ ເອີ້ນວ່າ: “ແປນ”ໝາຍເຖິງພວກຢູ່ ແຄມແມ່ນ້ຳ ແລະ ຢູ່ປະເທດໄທ ເອີ້ນວ່າ: “ກຸ່ຍ” ໝາຍເຖິງຄົນ.

ພາສາ

ຊົນເຜົ່າຊ່ວຍ ບໍ່ມີຕົວໜັງສືແຕ່ມີ ພາສາ ປາກເວົ້າອັນສະເພາະຂອງຊົນເຜົ່າຕົນເອງ ຈັດ ເຂົ້າໃນໝວດພາສາມອນ-ຂະແມ ທັງແມ່ນພາສາ ມອນບູຮານ, ພວກເຂົາເຈົ້າສາມາດເວົ້າພາສາ ກະຕາງ, ຕຣີ, ມະກອງ, ຕະໂອ້ຍ ແລະພາສາ ລາວໄດ້ດີ.

ຮີດຄອງປະເພນີ,ຄວາມເຊື່ອຖື ແລະວັດທະນະທຳ-ສັງຄົມ :

ໃນສະໄໝກ່ອນຊົນເຜົ່າຊ່ວຍ ມີຄວາມນິ ຍົມ ຢູ່ເຮືອນຮ້ານປຸກສ້າງຂຶ້ນແບບປະຖົມປະຖານ ຄືເຮືອນຂອງຊົນເຜົ່າກະຕາງ, ຕຣີ, ແຕ່ຜ່ານຂະ ບວນວິວັດແຫ່ງການເຄື່ອນຍ້າຍຕັ້ງພູມລຳເນົາ ຢ່າງສະຫຼັບສັບຫວ່າງກັບຊົນເຜົ່າຜູ້ໄທ ແລະຊົນ ເຜົ່າລາວ.

ຊົນເຜົ່າຊ່ວຍ ຈຶ່ງໄດ້ປຸກສ້າງເຮືອນຄື ເຮືອນຂອງຊົນເຜົ່າລາວ ໃນສະໄໝບູຮານ ເຊິ່ງ ເປັນເຮືອນຮ້ານ, ປູ ແລະແອ້ມແປ້ນ, ມຸງດ້ວຍ ຫຍ້າຄາກ້າວຂຶ້ນມຸງດ້ວຍສັງກະສີ, ກະເບື້ອງເປັນ ເຮືອນເຄິ່ງຖາວອນ ໃນອັດຕາສ່ວນສູງ.

ວັດທະນະທຳການນຸ່ງຖື, ແຕ່ກ່ອນຜູ້ຊາຍ ແມ່ນນຸ່ງກະຕ່ຽວ, ບ່ອງຫູ, ໃສ່ຕ້າງທີ່ເຮັດດ້ວຍເງິນ, ກົ່ວ, ເກົ້າຜົມ, ສັກຂາລາຍ, ຕັດແຂ້ວ,ໃສ່ປອກ ແຂນ, ແຕ່ຜ່ານໄລຍະຫຼາຍສິບປີມານີ້ພວກ ຂົ່ ເຈົ້ານິຍົມນຸ່ງສັ້ງ, ທົ່ມເສື້ອບໍ່ບ່ອງຫູ ແລະບໍ່ຈົ່ງຜົມ ຍາວ, ສະເພາະແມ່ຍິງແມ່ນນຸ່ງສິ້ນທົ່ມເສື້ອບ່ອງ ຫູໃສ່ຕ້າງທີ່ເຮັດດ້ວຍເງິນ ແລະກົ່ວ ແຕ່ປະຈຸບັນ ແມ່ນນຸ່ງຖືເອ້ຢ້ອງຄືກັນກັບຊົນເຜົ່າລາວ ແລະຊົນ ເຜົ່າຜູ້ໄທ.

ລະບົບການເຊື່ອຖື ໃນເມື່ອກ່ອນ ແມ່ນຖື ຜີໂດຍສະເພາະແມ່ນຜີພໍ່ແມ່, ປູ່ຍ່າຕາຍາຍ ທີ່ ລ່ວງລັບໄປ, ຜີເຮືອນ, ຜີບ້ານ, ຜີສາລາກວານ, ຜີ ພູ, ຜີຫ້ວຍຮ່ອງໜອງບຶງ ແລະອື່ນໆ ໃນປີໜຶ່ງໆ ເຮັດບຸນຈາງະ ແລະເຮັດບຸນລາປົບ (ແທນຄົນ ຕາຍ) ແຕ່ມາຮອດປະຈຸບັນຊົນເຜົ່າຊ່ວຍ ຖືທັ້ງຜີ ແລະສາສະໜາພຸດ ມີຫຼາຍບ້ານຂອງຊົນເຜົ່າ ຊ່ວຍ ໄດ້ມີວັດວາອາຮາມຄືກັບຊົນເຜົ່າລາວ.

ໃນເມື່ອກ່ອນຊົນເຜົ່າຊ່ວຍ ໄດ້ມີສິລະ ປະວັນນະຄະດີ, ມີບົດຮ້ອງທຳນອງເສບ, ມີພື້ນ ສົບ, ນິທານພື້ນເມືອງເປັນອັນສະເພາະຂອງຊົນ ເຜົ່າຕົນເອງ, ແຕ່ມາຮອດປະຈຸບັນສິລະປະວັນນະ ຄະດີດັ່ງກ່າວໄດ້ຖືກເສື່ອມເສຍ ເນື່ອງຈາກໄດ້ຮັບ ຜົນສະທ້ອນວັດທະນະທຳ ແລະສິລະປະວັນນະ ຄະດີຂອງຊົນເຜົ່າລາວ.

ກ່ຽວກັບວັດທະນະທຳດ້ານສັງຄົມ ເຊັ່ນ: ການແຕ່ງດອງ, ການສົ່ງສະການ ແລະການເກີດ ລູກ ໃນເມື່ອກ່ອນແມ່ນຄືຊົນເຜົ່າກະຕາງ, ມະ ກອງ, ຕຣີ, ແຕ່ປະຈຸບັນຄືກັນກັບຊົນເຜົ່າຜູ້ໄທ ແລະຊົນເຜົ່າລາວ.

ການດຳເນີນຊີວິດທາງດ້ານ ເສດຖະກິດ:

ແຕ່ກ່ອນແມ່ນຍຶດຖືການຖາງປ່າເຮັດໄຮ່ ປູກເຂົ້າໜຽວເປັນຕົ້ນຕໍ, ປູກພືດທີ່ມີທາດແປ້ງ, ພືດລົ້ມລຸກ, ພືດໃຫ້ໝາກ, ແຕ່ໃນຂະນະພວກເຂົ້າ ເຈົ້າເຄື່ອນຍ້າຍ ລົງມາຢູ່ທົ່ງພຽງ ແມ່ນໄດ້ຫັນປ່ຽນ ແບບແຜນການດຳລົງຊີວິດ ຈາກການຖາງປ່າເຮັດ ໄຮ່ປູກເຂົ້າມາເຮັດນາປູກເຂົ້າໜຽວ, ເຮັດສວນປູກ ໝາກເຜັດ, ປູກກາເຟເປັນສິນຄ້າ, ລ້ຽງສັດປະ ເພດຕ່າງໆຄື: ງົວ, ຄວາຍ, ໝູ, ສັດປີກ ເພື່ອເຮັດ ຮີດຄອງຈາງະ, ເຮັດບຸນລະປົບ ແລະຂາຍເປັນ ສິນຄ້າ, ສະເພາະແມ່ຍິງແມ່ນໄດ້ມີຄວາມຊຳນານ ງານໃນວິຊາຕ່ຳທູກທໍ່ໄໝ.

Xuay

Historical background:

Thought the be an earlier arrival in Laos, the Xuay people are believed to have some relationship with the Malay peninsula aborigines, because of the Negroid facial features of some of them. Centuries ago, they migrated to settle in some districts of Savannakhet province; but due to population pressure, many of them moved from Savannakhet province to Salavan, Champassak and Sekong provinces. Today, there is also a very large population of Xuay in Thailand.

Presently the Xuay now live in Khammuan, Savannakhet, Salavan, Champassak and Sekong provinces. The population of Xuay is 45,498, of which 23,285 are females according to 1995 census.

Name and language:

This ethnic group refers to themselves as the "Xuay". In Thailand they are referred to as the "Kui".

Xuay is classified as a Mon-Khmer language that is on the Katuic language branch. They can often speak Katang, Tree, Makong, Ta Oy and Lao languages as well.

Beliefs, society, ceremonies and myths:

In former times, the Xuay were animistic believers of spirits. While they still hold some of these spiritual believes that are common in all ethnic minorities in Laos, now they are predominantly Buddhist. However, one could say that they practice a sort of "animistic Buddhism" which is an adaptation of their previous animistic beliefs. Today many Xuay villages have pagodas identical to Lao villages.

Previously, the Xuay people had their own unique art, culture, songs, folk tales and stories. However, it is commonly believed that they have lost much of their older culture due to integration into mainstream Lao society.

The family is the important social unit in Xuay society, and today it is typically the nuclear-style family. However, these families seem to have a strong matrilineal authority, which is different from most other Lao ethnic minorities, where most tend toward paternal authority. Inheritance usually favors the youngest daughter, with smaller amounts going to the other children.

When.two young people want to get married, two friends will act as intermediaries between the families. For a dowry, the man must pay 25 roosters or the equivalent in silver. For the wedding,

the men feast at the groom s house. and the women at the bride's house. After marriage the groom lives at the bride's house for about one year, and then they move out to build their own house.

After a mother gives birth, she avoids certain food and does not perform household tasks for sometimes. The father welcomes the newborn into the world by having a drinking party and playing drums.

Due to Buddhist influence, most Xuay cremate their dead by wrapping it in a sheet and burning it in a pyre. Some non-Buddhist Xuay will still bury their dead near the village.

Village and house:

A Xuay village is located between 200 and 700 meters high, in planes and valleys. Villages are from 40 to 100 houses. Traditionally they built longhouses that held several generations of families, but this is not seen today. Today they build small houses placed on stilts. The walls and floors are made of wooden planks or bamboo, with a grass thatched roof or a galvanized iron sheet roof. The house is generally one room that is used for cooking, eating, and sleeping.

Costume:

The Xuay used to weave, but this is not seen today. Today the women like to wear colorful sarongs with short-sleeved blouses they buy in the markets. Elderly women may go topless, and they also wear very heavy earrings, which would stretch their earlobes almost to their shoulders. Other common jewelry is silver bracelets worn around the wrists and ankles.

Men simply dress in regular trousers found in the markets, or may still wear the traditional loincloth (*katiav).* Traditionally they wore their hair long, tattooed their legs, and sharpened their teeth, but this is not common among the younger generations.

Agriculture and livelihood

The Xuay were traditional followers of slash-and-burn agriculture, but today they more commonly practice wet-paddy cultivation of rice. They also grow many vegetables and fruits such as sugarcane, cotton and coffee. The Xuay also raise different types of animals such as cattle, buffaloes, pigs and poultry.

The men are also skilled blacksmiths and barter and sell the household utensils and farm tools they make. They also are known as skilled elephant handlers, capturing and domesticating wild elephants. These are used for logging, where the elephant drags cut logs out of the forest. However, this is less common today.

ຊົນເຜົ່າຊິ ງມູນ

ປະຫວັດຄວາມເປັນມາ:

ສຳລັບປະຫວັດຄວາມເປັນມາ ແລະກິ ເຄົ້າຕົ້ນກຳເນີດ ຂອງຊົນເຜົ່າຊິ ງມູນ ທີ່ດຳລົ ງຊີວິດ ຢູ່ລາວເຮົາ ແມ່ນໄດ້ເຄື່ ອນຍ້າຍມາຈາກປະເທດ ຫວຽດນາມ ໂດຍສະເພາະແມ່ນມາຈາກແຂວ ເຊິນລາ ໃນຕົ້ນສະຕະວັດ ທີ 19 ແລະເຄື່ ອນຍ້າຍ ເຂົ້າມາຫຼາຍໃນສະຕະວັດ ທີ XX, ສະໄໝສົ ງ ຄາມ ດ ງນ ບ ງນ ຟ ງ. ໃນຕອນ ເຂົ້າມາຢູ່ລາວທຳອິດ ເຂົາເຈົ້າດຳລົ ງຊີວິດຢູ່ ກະແຈກ ກະຈ່າຍພໍ ໃສພໍ ລາວ, ຕໍ່ມາໄລຍະ ທີ່ມີການ ປະຕິວັດຊາດ ປະຊາ ທິ ປະໄຕ ເຂົາເຈົ້າຈຶ່ ງໄດ້ເຕົ້ າໂຮມຢູ່ເປັນບ້ານຈົນເຖິ ງ ທຸກວັນນີ້.

ປະຈຸບັນຊົນເຜົ່າຊິ ງມູນ ຕັ້ ງຖິ່ນຖານ ບ້ານ ຊ່ອ ງ ແລະດຳລົ ງຊີວິດຢູ່ເມືອ ງ ຊ ງຄໍ້ ແຂວ ງ ຫົ ວ ພັນ. ນອກຈາກຢູ່ລາວເຮົາແລ້ ວ ຊົນເຜົ່າຊິ ງມູນ ນີ້ ຍັ ງມີຢູ່ແຂວ ງ ເຊິນລາ ແລະແຂວ ງ ໄລເຈົ າ ຂອ ງ ປະເທດ ຫວຽດນາມ ອີກດ້ ວຍ.

ຈຳນວນພົນລະເມືອ ງ ຂອ ງຊົນເຜົ່າຊິ ງ ມູນ ຢູ່ລາວມີທັ ງໝົ ດ 5.834 ຄົ ນ, ຍິ ງ 2.900 ຄົ ນ, ເທົ່ າກັ ບ 0,1% ຂອ ງພົ ນລະເມືອ ງ ທົ່ ວປະເທດ (ຕາມສະຖິ ຕິ ການສຳ ຫຼວ ດພົ ນລະເມືອ ງ ຄັ ງ ທີ II ປີ 1995).

ຊື່ ເອີ ນ:

ຊົນເຜົ່າຊິ ງມູນ ມີ ຫຼາ ຍຊື່ ເອີ ນ ເຊັ ່ ນ: ປ ວ ກ, ປ ວ ກ ດ ງ, ປ ວ ກ ເດ ົ າ, ແ ງ ດ ແລະ ລ າ ວ ໃ ໝ ່ . ທ ັ ງ ໝ ົ ດ ຊື່ ທີ່ ໄ ດ ້ ກ ່ າ ວ ມ າ ນ ັ ້ ນ ເ ປ ັ ນ ຊ ື ່ ທ ີ ່ ຊ ົ ນ ເ ຜ ົ ່ າ ອ ື ່ ນ ເ ອ ີ ້ ນ ໃ ຫ ້ ເ ຊ ິ ່ ງ ເ ຂ ົ າ ເ ຈ ົ ້ າ ບ ໍ ່ ມ ັ ກ . ສ ່ ວ ນ ຊ ື ່ ທ ີ ່ ເ ຂ ົ າ ເ ຈ ົ ້ າ ມ ັ ກ , ສ ະ ໝ ັ ກ ໃຈເອີ້ ນຕົ ນເອ ງ ແລະຊື່ ທີ່ ໃຊ້ ທ ງການ ໃນ ປະຈຸ ບັ ນ ແມ່ ນຊົ ນເຜົ່ າ "ຊິ ງມູ ນ" ຄຳ ວ່ າ " ຊິ ງມູ ນ ", ແມ່ ນມີ ຄວ ມ ໝ ຍ ວ ່ ຳ "ຄົ ນ ພ ".

ພາສາ:

ພ ສ ປ ກ ເ ວ ້ ຳ ຂ ອ ງ ຊ ົ ນ ເ ຜ ົ ່ ຳ ຊ ິ ງ ມ ູ ນ ແ ມ ່ ນ ຈ ັ ດ ເ ຂ ້ ຳ ໃ ນ ໝ ວ ດ ພ ສ ຳ ມ ອ ນ - ຂ ະ ແ ມ , ເ ຂ ົ ຳ ເ ຈ ົ ້ ຳ ບ ່ ມ ີ ຕ ົ ວ ໜ ັ ງ ສ ື ຂ ຽ ນ ທ ີ ່ ເ ປ ັ ນ ເ ອ ກ ະ ລ ັ ກ ຂ ອ ງ ຕ ົ ນ ເ ອ ງ .

ຮີ ດຄອ ງປະເພນີ , ຄວ ມເຊື່ ອຖື ແລະວັ ດທະນະທຳ-ສັ ງຄົ ມ :

ຍ ອ ນ ກ ານ ດ ຳ ລ ົ ງ ຊ ີ ວ ິ ດ ຢ ູ ່ ໃ ກ ້ ກ ັ ບ ຊ ົ ນ ເ ຜ ົ ່ ຳ ອ ື ່ ນ ເ ປ ັ ນ ຕ ົ ້ ນ ແ ມ ່ ນ ຊ ົ ນ ເ ຜ ົ ່ ຳ ໄ ຕ (ໄ ຕ ດ ຳ , ໄ ຕ ແ ດ ງ) , ຊ ົ ນ ເ ຜ ົ ່ ຳ ກ ຶ ມ ມ ຸ ດ ັ ່ ງ ນ ັ ້ ນ ຈ ຶ ່ ງ ເ ຮ ັ ດ ໃ ຫ ້ ຊ ົ ນ ເ ຜ ົ ່ ຳ ຊ ິ ງ ມ ູ ນ ມ ີ ຮ ີ ດ ຄ ອ ງ ປ ະ ເ ພ ນ ີ ຫ ຼ າ ຍ ອ ັ ນ ຄ ້ ຳ ຍ ຄ ື ກ ັ ບ ຊ ົ ນ ເ ຜ ົ ່ ຳ ອ ື ່ ນ ທ ີ ່ ຢ ູ ່ ໃ ກ ້ ຄ ຽ ງ . ແ ຕ ່ ເ ຖ ິ ງ ຢ ່ ຳ ງ ໃ ດ ກ ໍ ່ ຕ ຳ ມ ເ ຂ ົ ຳ ເ ຈ ົ ້ ຳ ຍ ັ ງ ຮ ັ ກ ສ ຳ ຮ ີ ດ ຄ ອ ງ ປ ະ ເ ພ ນ ີ ທ ີ ່ ເ ປ ັ ນ ເ ອ ກ ະ ລ ັ ກ ຂ ອ ງ ຕ ົ ນ ເ ອ ງ ໄ ວ ້ ຈ ຳ ນ ວ ນ ໜ ຶ ່ ງ . ເ ຂ ົ ຳ ເ ຈ ົ ້ ຳ ມ ີ ຄ ວ ມ ເ ຊ ື ່ ອ ຖ ື ແ ລ ະ ນ ັ ບ ຖ ື ຜ ີ ເ ຊ ັ ່ ນ : ຜ ີ ພ ໍ ່ ແ ມ ່ , ຜ ີ ປ ່ ຳ , ຜ ີ ພ ູ , ຜ ີ ບ ້ ຳ ນ ແ ລ ະ ອ ື ່ ນ ໆ . ເ ພ ື ່ ອ ສ ະ ແ ດ ງ ເ ຖ ິ ງ ຄ ວ ມ ເ ຄ ຳ ລ ົ ບ ນ ັ ບ ຖ ື ແ ລ ະ ບ ູ ຊ ຳ . ແ ຕ ່ ລ ະ ຫ ລ ັ ງ ເ ຮ ື ອ ນ ລ ້ ອ ນ ແ ຕ ່ ມ ີ ຫ ້ ຳ ຜ ີ ເ ຊ ິ ່ ງ ປ ຸ ກ ສ ້ ຳ ງ ຢ ູ ່ ໃ ກ ້ ກ ັ ບ ເ ຮ ື ອ ນ ຂ ອ ງ ໃ ຜ ລ າ ວ .

ດ ້ ຳ ນ ລ ະ ບ ິ ບ ຄ ອ ບ ຄ ົ ວ ເ ລ ື ອ ດ ເ ນ ື ້ ອ ເ ຊ ື ້ ອ ສ າ ຍ ແ ລ ະ ກ ານ ສ ິ ບ ຕ ະ ກ ຸ ນ ນ ັ ້ ນ , ຊ ົ ນ ເ ຜ ົ ່ ຳ ຊ ິ ງ ມ ູ ນ ແ ມ ່ ນ ສ ິ ບ ເ ຊ ື ້ ອ ສ າ ຍ ຕ ະ ກ ຸ ນ ທ າ ງ ພ ໍ ່ . ໝ າ ຍ ຄ ວ ມ ວ ່ ຳ ລ ູ ກ ຕ ້ ອ ງ ເ ອ ົ ຳ ຊ ື ່ , ນ ຳ ມ ສ ະ ກ ຸ ນ ແ ລ ະ ນ ັ ບ ຖ ື ຕ ະ ກ ຸ ນ ຫ ຼ ື ສ ິ ງ ຊ ຳ ວ ຂ ອ ງ ຜ ູ ້ ເ ປ ັ ນ ພ ໍ ່ . ໃ ນ ຄ ອ ບ ຄ ົ ວ ໜ ຶ ່ ງ ໆ ແ ມ ່ ນ ຜ ູ ້ ຊ າ ຍ ເ ປ ັ ນ ຜ ູ ້ ທ ີ ່ ມ ີ ບ ົ ດ ບ າ ດ ສ ຳ ຄ ັ ນ ໂ ດ ຍ ສ ະ ເ ພ າ ະ ແ ມ ່ ນ ຜ ູ ້ ຊ າ ຍ ທ ີ ່ ມ ີ ອ າ ຍ ຸ ສ ູ ງ ແ ລ ະ ອ າ ວ ຸ ໂ ສ ກ ວ ່ ຳ ໝ ູ ່

ແລ້ວຖົດລົງຕາມລຳດັບ. ໃນສັງຄົມຂອງຊົນເຜົ່າ ຊິງມູນ ປະກອບດ້ວຍຫຼາຍຕະກຸນ, ຫຼາຍສິງຊາວ ດ້ວຍກັນຄື: ສິງລໍ, ສິງວີ, ສິງເຫຼືອງ ແລະສິງອື່ນໆ, ແຕ່ລະສິງຊາວ ຈະມີຂໍ້ຫ້າມ ແລະການຄະລຳທີ່ ແຕກຕ່າງກັນ ບາງເລັກນ້ອຍໂດຍສະເພາະແມ່ນ ການຄະລຳໃນເລື່ອງຂອງການຂ້າ ແລະການກິນ ຊີ້ນສັດທີ່ຖືວ່າເປັນສິງຊາວຂອງຕົນ. ສ່ວນການ ແຕ່ງດອງຮ່ວມສິງຊາວ ຫຼືຕ່າງ ສິງຊາວ (ຮ່ວມຕະ ກຸນ ຫຼືຕ່າງຕະກຸນ) ຖືວ່າອະນຸຍາດໄດ້. ສຳລັບແມ່ ຍິງທີ່ແຕ່ງດອງຮ່ວມກັບຊິງຊາວອື່ນ ແມ່ນຈະຕ້ອງ ໄດ້ປ່ຽນໄປນັບສິງຊາວ ຫຼືຕະກຸນຂອງຜົວ. ຜູ້ຊາຍ ຫຼັງຈາກແຕ່ງດອງແລ້ວ ຕ້ອງໄປຢູ່ເຮືອນນຳພໍ່ແມ່ ຂອງຝ່າຍຍິງກ່ອນຈົນກວ່າໄດ້ລູກ 2-3 ຄົນແລ້ວ ຈຶ່ງພາເມຍ ແລະລູກໆໄປຢູ່ນຳພໍ່, ແມ່ຂອງຕົນ ຫຼື ອອກໄປຕັ້ງເຮືອນໃໝ່. ໃນໄລຍະທີ່ຄູ່ຜົວເມຍດຳ ລົງຊີວິດຢູ່ເຮືອນນຳພໍ່, ແມ່ຂອງຝ່າຍຍິງນັ້ນ, ຜູ້ ຊາຍ (ລູກເຂີຍ) ຕ້ອງໄດ້ປ່ຽນຊື່ຕົ້ນເອງໄປເອົາ ຊື່ໃໝ່ທີ່ພໍ່, ແມ່, ເຖົ້າແກ່ລຸງຕາຝ່າຍຍິງຕັ້ງໃຫ້.

ລັກສະນະເຮືອນ ຂອງຊົນເຜົ່າຊິງມູນ ຕາມປະເພນີເຂົາເຈົ້າມັກປຸກສ້າງ ແລະຢູ່ເຮືອນ ຊົ່ງຫຼັງຄາມີຮູບຮ່າງຄ້າຍຄືຫຼັງໂຕເຕົ່າ. ສຳລັບຮີດ ຄອງການຄະລຳຢູ່ໃນເຮືອນແມ່ນບໍ່ໃຫ້ກາງມຸ້ງ ຂາວ , ນອນຂວາງຕາມລວງຍາວຂອງເຮືອນ ແລະ ບໍ່ໃຫ້ເອົາຊີ້ນດິບທີ່ບໍ່ໄດ້ຫຸ້ມຫໍ່ຂຶ້ນລ່ວງຫ້ອງຢ່າງ ເດັດຂາດ. ສຳລັບລູກເຂີຍບໍ່ໄດ້ນັ່ງຕັ່ງຫວາຍ ແລະ ນັ່ງເທິງສະແນນຂອງພໍ່ເຖົ້າ.

ປະເພນີກ່ຽວກັບການເກີດລູກ ຂອງຊົນ ເຜົ່ານີ້, ແມ່ນເກີດລູກຢູ່ເຮືອນ ໂດຍແມ່ນຜູ້ທີ່ມີປະ ສົບການໃຫ້ຄວາມເບິ່ງແຍງ ແລະຊ່ວຍເຫຼືອ. ເດັກ ເກີດໃໝ່ພາຍຫຼັງ ທີ່ມີອາຍຸຄົບໜຶ່ງເດືອນ, ຜູ້ເປັນ ພໍ່, ແມ່ຈະໃຫ້ໝໍຜີເປັນຜູ້ຕັ້ງຊື່ໃຫ້ ໃນກໍລະນີທີ່ມີ ສະມາຊິກໃນຄອບຄົວໃດໜຶ່ງ ເສຍຊີວິດເຂົາເຈົ້າ ຈະມີການຍິງປືນ ເພື່ອແຈ້ງຂ່າວເສົ້າສະຫຼົດໃຈໃຫ້ ຊາວບ້ານຮັບຮູ້ນຳ. ຊົນເຜົ່າຊິງມູນ ມີປະເພນີສິ່ງ ສະການດ້ວຍການຝັງ ພ້ອມທັງຕັ້ງເຮືອນນ້ອຍໆ ໃສ່. ຫຼັງຈາກນັ້ນລູກເຕົ້າພາຍໃນຄອບຄົວຈະໄປ ສົ່ງເຂົ້າປະມານ 5 ວັນ ແລ້ວຈຶ່ງແຈກທານ ແລະ ຮັບເອົາຜີມາຢູ່ຫໍທີ່ປຸກໄວ້ໃກ້ກັບເຮືອນ. ສຳລັບບຸນ ປະເພນີທີ່ສຳຄັນ ໃນໜຶ່ງປີຂອງຊົນເຜົ່າຊິງມູນ ມີ ບຸນຈາໜ່ (ບຸນທັ່ງບັ້ງ), ບຸນກິນຈຽງ ແລະບຸນເຂົ້າ ໃໝ່.

ນອກຈາກນີ້ແລ້ວ ເຂົາເຈົ້າຍັງມີພິທີກຳ ຫຼາຍຢ່າງເຊັ່ນ: ພິທີປຸກສ້າງ ແລະຂຶ້ນເຮືອນໃໝ່, ພິທີການເກັບກ່ຽວເຂົ້າໃໝ່, ພິທີເຮັດຂວັນບ້ານ, ຂວັນເມືອງເຊິ່ງໃນແຕ່ລະພິທີກຳນັ້ນເປັນໂອກາດ ໃຫ້ເຂົາເຈົ້າລະນຶກເຖິງຈິດວິນຍານ ຂອງບັນພະ ບຸລຸດທີ່ໄດ້ລ່ວງລັບໄປ, ໂດຍສະເພາະແມ່ນຜູ້ທີ່ ເສຍຊີວິດແບບຜິດປົກກະຕິ. ປະເພດເຄື່ອງດື່ມ ຂອງຊົນເຜົ່າຊິງມູນແມ່ນນິຍົມກັນໃຊ້ເຫຼົ້າໄຫ ເພື່ອ ປະກອບພິທີກຳຕ່າງໆ, ສ່ວນແມ່ຍິງມັກຄ້ຽວ ໝາກ.

ດ້ານສິລະປະວັນນະຄະດີນັ້ນ ຊົນເຜົ່າ ຊິງມູນ ແມ່ນບໍ່ມີເອກະລັກທາງດ້ານການຂັບລຳ, ເນື້ອຮ້ອງທຳນອງເສບ ພ້ອມທັງເຄື່ອງດົນຕີ ມີລັກ ສະນະຊອດກະຈາ ແລະໄດ້ຮັບເອົາອິດທິພົນຂອງ ບັນດາຊົນເຜົ່າທີ່ຢູ່ໃກ້ຄຽງເຂົ້າມາປະສົມປະສານ.

ເຄື່ອງນຸ່ງຖືເອ້ຢ້ອງປະຈຳເຜົ່າ ກໍ່ເຊັ່ນດຽວ ກັນ ເຊິ່ງປະຈຸບັນໄດ້ຫັນມາໃຊ້ເຄື່ອງນຸ່ງທີ່ຊື້ຈາກ ຕະຫຼາດ ແລະຈາກການແລກປ່ຽນສິນຄ້າກັບຊົນ ເຜົ່າທີ່ຢູ່ໃກ້ຄຽງ ໂດຍສະເພາະແມ່ນຊົນເຜົ່າລາວ ແລະຊົນເຜົ່າໄຕ. ພື້ນຖານດ້ານເສດຖະກິດຂອງ ຊົນເຜົ່າຊິງມູນ ແມ່ນເອົາການເຮັດໄຮ່ປຸກເຂົ້າ, ນອກນີ້ເຂົາເຈົ້າຍັງລ້ຽງສັດ, ປູກສາລີ, ມັນຕົ້ນ, ມັນ ດ້ຳ ແລະພືດຜັກຕ່າງໆ ສຳລັບຄອບຄົວ.

Xing Moun

Historical background:

The Xing Moun ethnic group presently lives in Xiengkhor province of Huaphan province. Apart from Laos, they live also in Semla and Lai Chao provinces of Vietnam.

Their total population is 5,834 of which 2,900 are females, consisting of 0.1% of the country's total population, according to the second population census done in 1995.

Name and language:

Xing Moun ethnic people have many different names such as: Puak (termite), Puakdong (forest termite), Puakdao (star termite), Puak ngaed and Laomai (new Lao). All those names were given to them by other ethnic groups, which they do not like. The name they prefer to be called, and which is their official name is "Xing Moun." The name Xing Moun means "people living in mountainous areas".

The language of the Xing Moun is classified in the Khmuic branch of the Mon - Khmer language group. They do not have a written alphabet.

Beliefs, society, ceremonies and myths:

Since they live close to other ethnic groups,, such as the Kaemmu and particularly Tai ethnic groups such as the Tai Dam (Black Tai), and Tai Deng (Red Tai), their customs and cultures are similar to these other peoples. They believe in animism such as the spirits of their dead parents, the forest spirit, the village spirit and others. In order to show respect and sacrifice, each household has a sacred altar (hor phii) for the spirit built near by.

Xing Moun people inheritance is patrilineal. Children must take the family name of the father. The men in the family play the most important role; in particular, the elderly men are the most prominent figures in society.

Xing Moun society is composed of many family clans. Each clan has its own taboos and restrictions that vary slightly among each clan. The clans are named after animals or plants, so a particularly strong taboo strictly prohibits killing and eating of animals that represent one's clan. Marriage within ones own clan or within a different clan is possible. Women who marry into a different clan have to fully respect the clan of her husband.

After the wedding, the husband will stay at the wife's house until the birth of their children. After this time he and his family will stay at his parent's house or live in their own house.

Pregnant women give birth in their house with the assistance of an experienced midwife. When the baby reaches the age of one month the parent will invite the shaman of the village to name the baby.

When someone dies, the villagers will fire their muskets to express condolences and notify the villagers. They bury the dead and build a small hut on the tomb. Family member will bring meals for five days and after this time they will organize an alms-giving ceremony which invites the soul of the dead to live in the sacred grove near the house.

Some important feasts of Xing Moun ethnic in a year are the Chanor feast, the Boon Kinchiang (New Year Festival) and Boon Khaomai (The Harvesting of Rice). In addition, they have many different rites as well, such as the house warming feast, and the village and district ceremony. Each ceremony provides an opportunity to commemorate the soul of the dead ancestors, especially those who died prematurely. Xing Moun people prefer to drink rice wine when feasting, and the women like to chew betel.

Village and house:

The Xing Moun live in permanent villages of about ten to seventy houses, located in the hills a bit higher than the Tai villages. Their traditional houses were built on piles, and the roof structure looked like the back of a tortoise. Today the houses are much less interesting, mostly simple structures of bamboo and wood. There is one large room with compartments for single men to stay and for worship activities. There are usually two earthen fireplaces, one for cooking and another for heating during the cold season.

Costume:

Today they buy finished clothes in the market places and from neighboring ethnic groups, particularly the Tai ethnic groups. Xing Moun women wear their hair the same way as the Tai Dam women. tied up on top of the head, sometimes decorated with a silver coin. The men today wear modern Lao clothing, usually shorts or pants with cheap shirts or t-shirts. During religious or social celebrations, the Xing Moun will wear the Tai Dam dress, which is a dark blue tunic that covers the knees.

Agriculture and economy

Traditionally the Xing Moun practiced slash and burn cultivation of dry land rice. Now the generally cultivate wet-paddy rice. Vegetables and fruits are also grown. Buffalo, pigs, and ducks are raised. Hunting and fishing is also important, hunting with crossbows and catching fish with bamboo traps. In addition, raising animals and growing maize, cassava, potatoes and vegetable for household consumption is common.

Xing Moun men can carve boats from tree trunks, which they use on the Nam Na River for fishing and moving goods. Men and women also weave baskets, mats and fishing traps from bamboo.

ຊົນເຜົ່າ ຍະເຫີນ

ປະຫວັດຄວາມເປັນມາ:

ຕາມການໃຫ້ຂໍ້ມູນ ຂອງພວກເຖົ້າແກ່ ອາວຸໂສ ແລະນາຍບ້ານເຂດບ້ານຈັດສັນ, ບ້ານ ໜອງເມັກ ເມືອງ ປາກຊ່ອງ ແຂວງ ຈຳປາສັກ ໃຫ້ ຮູ້ວ່າ: ຊົນເຜົ່າຍະເຫີນ (ເຫີນຍໍ) ໄດ້ຕັ້ງພູມລຳ ເນົາບົນດິນດອນຕອນນີ້ມາແຕ່ດຶກດຳບັນ. ຊົນ ເຜົ່າຍະເຫີນ (ເຫີນຍໍ) ໄດ້ຕັ້ງພູມລຳເນົາຢູ່ເຂດ ບ້ານລຸ່ມຄ່ຳ ໄດ້ມີສ່ວນຮ່ວມໃນການກໍ່ສ້າງພາລະ ຊະວັງ ແຫ່ງອານາຈັກຂອມ ຢູ່ເມືອງອີງການ ແລະ ເຂດເມືອງໂຂກ, ເມືອງຊູງ ແລະຫຼໍ່ພະພຸດທະຮູບ, ພະອີງແສນຢູ່ວັດບ້ານ ສະແຄະ ທີ່ຂຶ້ນກັບເມືອງ ໄຊເສດຖາ ແຂວງ ອັດຕະປື.

ຕອນທ້າຍສະຕະວັດທີ 18 ຊົນເຜົ່າຍະ ເຫີນ (ເຫີນຍໍ) ໄດ້ເຄື່ອນຍ້າຍອອກຈາກເຂດນັ້ນ ມາຕັ້ງບ້ານຢູ່ ເຂດພູຄຳພຸກ ແລະກໍ່ຂະຫຍາຍທົ່ວ ເຂດ ພູຫຼວງ, ແຕ່ໜາແໜ້ນກວ່າໝູ່ແມ່ນຝາກເຊ ນຳ້ນ້ອຍເບື້ອງທິດຕາເວັນຕົກເຊັ່ນ: ດາກຣານ, ດາກເກຣງ, ດາກອຶນຕຽງ, ໜອງເມັກ, ຄຳປັດ ແລະອື່ນໆ.

ປະຈຸບັນພວກເຂົາເຈົ້າຕັ້ງພູມລຳເນົາ ຢູ່ເມືອງ ປາກຊ່ອງ ແຂວງ ຈຳປາສັກ ແລະສະ ໜາມໄຊ ແຂວງ ອັດຕະປື.

ຊົນເຜົ່າຍະເຫີນ (ເຫີນຍໍ) ມີພົນລະເມືອງ 5.152 ຄົນ, ຍິງ 2.607 ຄົນ, ເທົ່າກັບ 0,1% ຂອງ ພົນລະເມືອງ ທົ່ວປະເທດ (ຜົນການສຳຫຼວດພົນ ລະເມືອງ ທົ່ວປະເທດ ຄັ້ງທີ II ປີ 1995).

ຊື່ເອີ້ນ:

ຊົນເຜົ່າຍະເຫີນ (ເຫີນຍໍ)ໄດ້ມີຫຼາຍຊື່ ເອີ້ນຄື: ຍະເຫີນ, ເຫີນຍໍ ແລະຕຶງແກະ. ຊື່ເອີ້ນທີ່ວ່າ " ຕຶງແກ໊ະ "ມີຄວາມໝາຍວ່າ:"ມິດງຽບ" ຊື່ທີ່ເອີ້ນວ່າ: " ຍະເຫີນ " ມີຄວາມໝາຍວ່າ ຫ່າງເຫີນ, ແຕ່ຊື່ທີ່ເຂົາເຈົ້າສະໝັກໃຈ ແລະຊື່ ທີ່ເຂົາເຈົ້າມັກນັ້ນ ແມ່ນ " ຍະເຫີນ ".

ພາສາ:

ຊົນເຜົ່າຍະເຫີນ ເຖິງແມ່ນວ່າບໍ່ມີຕົວໜັງ ສືຂຽນ, ແຕ່ກໍ່ມີພາສາປາກເວົ້າເປັນອັນສະເພາະ ຂອງຊົນເຜົ່າຕົນເຊິ່ງຈັດເຂົ້າໃນໝວດພາສາ ມອນ-ຂະແມ, ທັງເປັນປັດໄຈພາສາຂະເໝນປູ ຮານ. ພາສາປາກເວົ້າຂອງຊົນເຜົ່ານີ້ຄ້າຍຄືກັນ ກັບພາສາ ຂອງຊົນເຜົ່າຢຣຸ, ໂອຍ, ເຈັ ແລະເບຣິ ເຊິ່ງໄດ້ມີຄວາມສະດວກໃນການແລກປ່ຽນເສດ ຖະກິດ ແລະວັດທະນະທຳລະຫວ່າງບັນດາເຜົ່າ ດັ່ງກ່າວ, ພ້ອມກັນນີ້ເຂົາເຈົ້າຍັງສາມາດເວົ້າພາ ສາເຜົ່າ ລາວໄດ້ດີ.

ຮີດຄອງປະເພນີ, ຄວາມເຊື່ອຖື ແລະວັດທະນະທຳ-ສັງຄົມ :

ຊົນເຜົ່າຍະເຫີນ ກໍ່ມີເອກະລັກສະເພາະ ໃນການຊອກຫາທີ່ດິນເພື່ອຕັ້ງບ້ານ, ຕັ້ງເຮືອນ ແລະຊອກຫາທີ່ດິນເພື່ອທຳການຜະລິດ, ມີຄຸນ ລັກສະນະສະເພາະໃນການເຮັດເຮືອນ, ການຈັດ ວາງຢູ່ໃນຫ້ອງເຮືອນ. ຜູ້ຊາຍຊົນເຜົ່າຍະເຫີນ ໃນ ເມື່ອກ່ອນແມ່ນນຸ່ງກະຕ່ຽວ ເອົາແພແດງຄຸມຫົວ, ເກົ້າຜົມ, ບ່ອງຫູໃສ່ຕ້າງແຕ່ບໍ່ຕັດແຂ້ວ, ບໍ່ສັກ ລາຍ, ມີປອກແຂນ, ປອກຕີນ, ມີໝາກປັດ. ສະ ເພາະແມ່ຍິງແມ່ນນຸ່ງສິ້ນລ່ຳມລິ້ງຮອດປາຍແຂ່ງ, ທີ່ມເສື້ອແຂກເອົາແພແດງຄຸມຫົວ, ມີປອກແຂນ, ປອກຕີນ, ເກົ້າຜົມ, ບ່ອງຫູໃສ່ຕ້າງ ທີ່ເຮັດດ້ວຍ ທອງ,ແຕ່ບໍ່ຕັດແຂ້ວ ແລະສັກລາຍ.

ຊົນເຜົ່າຍະເຫີນ ມີຄວາມນິຍົມກິນເຂົ້າ ຈ້າວ, ດື່ມເຫຼົ້າໄຫ, ດື່ມນ້ຳດິບ, ສູບຢາດ້ວຍກອກ ເລີ່ມແຕ່ເວລາຍັງນ້ອຍຈົນຮອດເຖົ້າ. ຊົນເຜົ່າຍະ ເຫີນ ຍັງມີສິລະປະວັນນະຄະດີ, ມີບົດຮ້ອງທຳ ນອງເສບ, ມີນິທານພື້ນເມືອງເລົ່າປາກຕໍ່ປາກ, ມີ ຄຳພັງເພີຍ 12 ເດືອນ, ມີວາດຟ້ອນທີ່ໜ້າຈັບ ໃຈນັ້ນ ຄືຟ້ອນລຳເຈີກ.

ໃນສະໄໝປະຖົມບູຮານ ເມື່ອມີຄົນຕາຍ ຢູ່ບ້ານໜຶ່ງ ກໍ່ຕ້ອງເຄື່ອນຍ້າຍໄປຢູ່ບ່ອນໃໝ່. ສະ ເພາະຜູ້ທີ່ເສຍຊີວິດນັ້ນ. ຖ້າຫາກວ່າມີຄົນຢູ່ໃນ ເຮືອນຫຼັງນັ້ນໆ ກໍ່ຫາມໄປຝັງ, ແຕ່ກໍລະນີມີຜູ້ດຽວ, ຊາວບ້ານກໍ່ຈູດເຮືອນ ຜູ້ນັ້ນແລ້ວກໍ່ເຄື່ອນ ຍ້າຍໄປ ຢູ່ສະຖານທີ່ແຫ່ງໃໝ່

ການດຳເນີນຊີວິດທາງດ້ານເສດຖະກິດ,ໃນ ສະໄໝປີ 1960 ຄືນຫຼັງ ຊົນເຜົ່າຍະເຫີນ ແມ່ນໄດ້ ຍຶດຖືການຖາງປ່າເຮັດໄຮ່ປູກເຂົ້າຈ້າວ ເປັນອາ ຊີບຫຼັກ, ພ້ອມກັນນັ້ນຍັງປູກພືດ ທີ່ມີທາດແປ້ງ, ປູກພືດໃຫ້ໝາກປູກຜັກນາໆຊະນິດ ແລະລ້ຽງສັດ ປະເພດຕ່າງໆເປັນຕົ້ນ ແມ່ນ: ຄວາຍ, ໝູ, ສັດປີກ ເພື່ອໃຊ້ເປັນອາຫານ ແລະເຮັດພິທີກຳຕ່າງໆ, ສະ ເພາະຊົນເຜົ່າຍະເຫີນຢູ່ເຂດບ້ານ ເຕົ່າໄຫ, ບ້ານ ສະເພົ່ານ້ອຍ ແມ່ນໄດ້ຖືການເຮັດນາປູກເຂົ້າຈ້າວ ເປັນອາຊີບຫຼັກ, ປູກເຂົ້າໜຽວບໍ່ຫຼາຍຄືຊົນເຜົ່າ ເຈ້ງ, ໂອຍ ແລະຊົນເຜົ່າເບຣິ. ນອກນີ້ຍັງມີ ຄວາມ ນິຍົມເຮັດສວນປູກກາເຟ, ກ້ວຍ, ໝາກຮຸ່ງ ແລະລ້ຽງສັດປະເພດຕ່າງໆເປັນສິນຄ້າ. ພວກເຂົາ ເຈົ້າບໍ່ມີການຕ່ຳຫູກຫ່ຳໄໝ,ແຕ່ພັດມີຄວາມຊຳ ນານໃນວິຊາຫັດຖະກຳຈັກສານ.

Nhaheun

Historical background:

The Nhaheun were a semi-nomadic people who didn't settle into permanent villages until the twentieth century.

By the end of the eighteenth century, the Nhaheun roamed the Phoo Khamphook mountain area and then expanded through to the surrounding of Phooluang chain (Annamite chain). They then settled on the western side of the Namnoy River. Presently they settle in Paksong district of Champassak province and Sanarmxai district of Attopeu province.

The total population of Nhaheun is 5,152, of which 2,607 are female, sharing 0.1% of the country's total population according to the 1995 census.

Name and Language:

The Nhaheun have many different names, such as Gya Hon, Nya Hon, Nhahehn, Hern Nyor and Teungkae.

There language is placed on the Bahnaric branch of the Mon-Khmer language group. They have no alphabet. They have been bi-lingual for a long time, with all of Nhaheun able to speak the Lao national language.

Beliefs, society, ceremonies and myths:

The Nhaheun believe in a large number of spirits that surround them, such as the spirits of the trees, forest, river, soil, and others. These spirits cause both good and bad things to happen, such as bountiful harvests or someone falling ill. Shamans, called the *muan,* play an important role in dealing with spirits. They will make offerings of rice and chickens to spirits that are causing problem in hope of placating them.

The Nhaheun live in nuclear family units and there is no clan system. There seems to be some division between the poorer and wealthier families. Very little is known about their social systems compare to other groups.

Traditionally, when someone died in the village, they had to move the village to a new location. This is not practiced anymore. Additionally, if the dead person lived alone, his or her house would be burnt

burnt down and the village moved to live elsewhere.

Village and house:

A Nyahern village is quite small, with ten to fifteen houses. These villages are located on the Boloven Plateau, between 700 and 1000 meters.

There are a few well-constructed houses by those villagers with more income, but most house are simple structures on wooden poles with thatched roofs.

Generally, the house is divided into two rooms: a living room for cooking and eating and a room for sleeping.

Costume:

Today, the Nyahern dress in commercial Lao clothing, which they have worn for a long time. Generally, they wear cheap sarongs, blouses, pants and other typical clothing found in the markets.

Older women remember when they used to weave, but they have lost this tradition. Women will ear their hair in a bun, knotted in the back of the head.

Previously, Nyahern men pierced their ears for earrings, but unlike other groups, did not sharpen their teeth or have tattoos on their body. Men and women wore bracelets and other jewelry. Women wore long traditional skirts down to their feet, wore bracelets, foot laces, and earrings made of copper, but they did not cut their teeth nor tattoo their body.

Agriculture and livelihood

Nyahern people practice slash a nd-burn cultivation of non-glutinous rice. They also grow root crops, fruit trees, and vegetables, plus raise animals such as buffalo, pigs and poultry for food and various feasts and rites. The women do not weave or dye silk, but they are skillful in handicraft and knitting. Because of the difficulties in making enough with their simple farming, some of the Nyahern either hire themselves out as laborers in construction or work for wealthier, neighboring farmers.

ຊົນເຜົ່າຕະໂອ້ຍ ປະຫວັດຄວາມເປັນມາ

ຊົນເຜົ່າຕະໂອ້ຍ ແມ່ນຊົນເຜົ່າໜຶ່ງທີ່ດຳລົງຊີວິດ ແລະຕັ້ງຖິ່ນຖານພູມລຳເນົາຢູ່ໃນລາວ ຂອງພວກເຮົາມາໄດ້ຫຼາຍຮ້ອຍປີແລ້ວ. ຊົນເຜົ່ານີ້ ໄດ້ອົບພະຍົບ ແລະເຄື່ອນຍ້າຍເຂົ້າມາດິນລາວ ພ້ອມດຽວກັນກັບບັນດາຊົນເຜົ່າໃນໝວດພາສາ ມອນ-ຂະແມ ໃນລະຫວ່າງສະຕະວັດທີ 5-8, ແຕ່ບົນເສັ້ນທາງຂອງການເຄື່ອນຍ້າຍນັ້ນ ໄດ້ຜ່ານເຂດໃດແດ່ບໍ່ມີຂໍ້ມູນ ແລະເອກະສານທີ່ບອກແຈ້ງ ແລະໃຫ້ຄວາມຊັດເຈນ.

ປະຈຸບັນຊົນເຜົ່າຕະໂອ້ຍ ຢູ່ລາວດຳລົງຊີວິດ ແລະຕັ້ງຖິ່ນຖານພູມລຳເນົາສ່ວນຫຼາຍ ແມ່ນຢູ່ແຂວງ ສາລະວັນ, ສະຫວັນນະເຂດ, ຈຳປາສັກ, ເຊກອງ ແລະອັດຕະປື. ນອກຈາກນີ້ແລ້ວ ຊົນເຜົ່າຕະໂອ້ຍ ຍັງມີຢູ່ປະເທດ ຫວຽດນາມ.

ຈຳນວນພົນລະເມືອງ ຂອງຊົນເຜົ່າຕະໂອ້ຍໃນລາວ ມີທັງໝົດ 30.876 ຄົນ, ຍິງ 15.358 ຄົນ ເທົ່າກັບ 0,7% ຂອງພົນລະເມືອງທົ່ວປະເທດ (ຕາມສະຖິຕິການສຳຫຼວດພົນລະເມືອງ ຄັ້ງທີ II ປີ 1995).

ຊື່ເອີ້ນ

ຊົນເຜົ່ານີ້ເອີ້ນຕົນເອງວ່າ "ຕະໂອ້ຍ " ຊົນເຜົ່າ ອື່ນເອີ້ນເຂົາເຈົ້າກໍ່ແມ່ນ " ຕະໂອ້ຍ " ແລະຊື່ທີ່ເຂົາເຈົ້າມັກກໍ່ແມ່ນຊົນເຜົ່າ "ຕະໂອ້ຍ".

ສຳລັບຊື່ເອີ້ນ ແລະຄວາມໝາຍຂອງຊື່ເອີ້ນທີ່ວ່າ: "ຕະໂອ້ຍ" ນີ້ມີຫຼາຍຄົນໃຫ້ຄວາມໝາຍແຕກຕ່າງກັນ. ມີບາງທັດສະນະວ່າ ແມ່ນການເອີ້ນຊື່ຕາມຖິ່ນຢູ່ອາໄສ (ຊື່ຂອງພູພຽງຕະໂອ້ຍ ແລະຊື່ຂອງເມືອງ ຕະໂອ້ຍ), ບາງທັດສະນະພັດເວົ້າວ່າ "ຕະໂອ້ຍ " ແມ່ນຊື່ຂອງເຈົ້ານາຍ,ເຈົ້າເຫຼົ່າຜູ້ນຳພາຂອງຊົນເຜົ່ານີ້ ຊຶ່ງໃນພາສາຂອງເຂົາເຈົ້າເອງນັ້ນ "ຕະ ແປວ່າລຸງ ແລະໂອ້ຍແມ່ນຊື່ຂອງຄົນ". ສະນັ້ນຄວາມໝາຍຂອງຊື່ເອີ້ນວ່າ "ຕະໂອ້ຍ " ຍັງເປັນທີ່ສົນໃຈຂອງວົງວິຊາການຊົນເຜົ່າວິທະຍາ ໃນການຄົ້ນຄວ້າຄັ້ງຕໍ່ໄປ.

ຊົນເຜົ່າຕະໂອ້ຍ ປະກອບດ້ວຍສອງແຊ ຄື: ຕົງ ແລະອົນ(ຢົນຣ).

ພາສາ

ຊົນເຜົ່າຕະໂອ້ຍ ມີພາສາປາກເວົ້າ ທີ່ເປັນເອກະລັກຂອງຕົນເອງ ຊຶ່ງພາສານີ້ຈັດຢູ່ໃນໝວດພາສາ ມອນ-ຂະແມ, ຊົນເຜົ່າຕະໂອ້ຍບໍ່ມີຕົວໜັງສືຂຽນ.

ຮີດຄອງປະເພນີ, ຄວາມເຊື່ອຖື ວັດທະນະທຳ-ສັງຄົມ

ຕາມຮີດຄອງປະເພນີແລ້ວ ຊົນເຜົ່າຕະໂອ້ຍມີຄວາມເຊື່ອໃນເລື່ອງຜີ ແລະບູຊາຈິດວິນຍານ. ຜີທີ່ສຳຄັນທີ່ເຂົາເຈົ້າເຊື່ອຖື ໄດ້ແກ່ ຜີພໍ່,ຜີແມ່, ຜີບ້ານ, ຜີເຮືອນ, ຜີຟ້າ, ຜີປ່າດົງ ແລະຜີແມ່ນ້ຳລຳເຊ ເຫຼົ່ານີ້ເປັນຕົ້ນ.

ດ້ານລະບົບຄອບຄົວ ເລື່ອດເນື້ອເຊື້ອສາຍ ແລະການສືບຕະກຸນນັ້ນ, ຊົນເຜົ່າຕະໂອ້ຍມີລະບົບຄອບຄົວຂະຫຍາຍ ໂດຍການສືບເຊື້ອສາຍທາງພໍ່. ຜູ້ເປັນລູກຕອ້ງເອົາຊື່ຈາກຕະກຸນຂອງພໍ່. ການພົວພັນກັນຂອງຊາວໜຸ່ມຍິງ-ຊາຍ ກ່ອນການແຕ່ງດອງນັ້ນ ຖືວ່າຄູ່ບ່າວສາວມີເສລີພາບໃນການສ້າງຄວາມລົ້ງເຄີຍກັນ, ມັກຮັກກັນ ແລະຊອກຮູ້ຊຶ່ງກັນແລະກັນ ຕາມສະຖານທີ່ຕ່າງໆ ແລ້ວແຕ່ຄວາມເໝາະສົມ, ແຕ່ຈະຕ້ອງໄດ້ປະຕິບັດຕາມຮີດຄອງປະເພນີຢ່າງເຄັ່ງຄັດ. ຊີວິດຂອງຄູ່ແຕ່ງດອງໃໝ່ນັ້ນ, ຫຼັງຈາກແຕ່ງດອງແລ້ວ ແມ່ຍິງຕ້ອງໄປຢູ່ນຳຝ່າຍຊາຍ. ຄຽງຄູ່ກັນນີ້ ແມ່ຍິງທີ່ແຕ່ງດອງແລ້ວ ກໍ່ຕ້ອງເຂົ້າໄປເປັນສະມາຊິກໃນຕະກຸນຂອງຜູ້ເປັນຜົວ. ລະບົບການສືບເຊື້ອສາຍຕະກຸນນີ້ ຈະມີຜົນໃນການຮັບມໍລະດົກ ແລະການສືບທອດເຊື້ອສາຍຕະກຸນໃນເຊັ່ນຄົນຕໍ່ໄປ ຕ້ອງແມ່ນລູກຊາຍເທົ່ານັ້ນ, ໂດຍສະເພາະ ແມ່ນລູກຊາຍກົກ. ອີກຢ່າງໜຶ່ງລະບົບຕະກຸນ ມີບົດບາດສຳຄັນໃນການເຮັດພິທີກຳ ແລະການປະກອບສ່ວນໃນງານ

ງານຕ່າງໆທີ່ເກີດຂຶ້ນ ໃນສັງຄົມຂອງຊົນເຜົ່ານີ້.

ລັກສະນະເຮືອນ ຂອງຊົນເຜົ່າຕະໂອ້ຍ, ຕາມປະເພນີແລ້ວເຂົາເຈົ້າມັກຈະປຸກສ້າງເຮືອນແບບເຮືອນຮ້ານຕ່ຳ ແລະເປັນເຮືອນທີ່ຍາວ ໂດຍອາໃສຢູ່ນຳກັນຫຼາຍຄອບຄົວ ແລະຫຼາຍເຊັ່ນຄົນ ເຊິ່ງຈະມີການຂັ້ນເປັນຫ້ອງນ້ອຍສະເພາະແຕ່ລະຄອບຄົວ. ໃນບ້ານຂອງຊົນເຜົ່າຕະໂອ້ຍ ຈະມີເຮືອນສາລາກວານຢູ່ໃຈກາງຂອງບ້ານ ເຊິ່ງສາລາກວານນີ້ເຂົາເຈົ້າຈະໃຊ້ເປັນສະຖານທີ່ໂຮມ ຊຸມນຸມ, ເປັນສະຖານທີ່ໃນການເຮັດພິທີກຳຕ່າງໆກ່ຽວກັບການເຊື່ອຖື. ເພື່ອປະຕິບັດຕາມຮີດຄອງປະເພນີ ຂອງຊົນເຜົ່າຕະໂອ້ຍ ໃນເຮືອນຂອງເຂົາເຈົ້າມີການຄະລຳຄື: ບໍ່ໃຫ້ນັ່ງອີ່ງເສົາເຮືອນ, ບໍ່ໃຫ້ນອນຂວາງເຮືອນ ແລະການເຂົ້າ - ອອກເຮືອນ ຂອງແຂກຕ້ອງເຂົ້າ - ອອກປະຕູທີ່ໃຊ້ສຳລັບຮັບແຂກເທົ່ານັ້ນ.

ຮີດຄອງປະເພນີ ກ່ຽວກັບການເກີດລູກ ຂອງຊົນເຜົ່າຕະໂອ້ຍ, ແຕ່ກ່ອນແມ່ນເກີດຢູ່ປ່າ, ປະຈຸບັນມີການປ່ຽນແປງມາເກີດຢູ່ເຮືອນ. ສຳລັບຮີດຄອງການຕາຍສ່ວນຫຼາຍແລ້ວ ເຂົາເຈົ້າຈະຈັດຕັ້ງພິທີກຳຕາມຂັ້ນຕອນ ໂດຍຄົນໃນຕະກຸນດຽວກັນ ຈະຕ້ອງໄດ້ຊ່ວຍເຫຼືອກັນ,ຈະມີພິທີສົ່ງສະການດ້ວຍການເຮັດຕູບຢູ່ເທິງຊຸມຝັງສົບ ພ້ອມ ທັງມີການປະດັບປະດາ ດ້ວຍການແກະສະຫຼັກ ຫຼືຮູບປັ້ນທີ່ມີສີສັນລວດລາຍຕ່າງໆ.

ບຸນປະເພນີ ແລະພິທີກຳທີ່ສຳຄັນ ຂອງຊົນເຜົ່າຕະໂອ້ຍ ໃນປີໜຶ່ງໆນັ້ນມີການກ່ຽວພັນເຖິງການຄົບຮອບຂອງຜູ້ທີ່ເສຍຊີວິດ ຫຼືເວົ້າຢ່າງໜຶ່ງແມ່ນການເຮັດບຸນລຶບຄົນຕາຍ ເຊິ່ງຕາມພາສາຂອງເຂົາເຈົ້າເອງແມ່ນການເຮັດ “ ລະປຶບ ”ນອກຈາກນີ້ແລ້ວຍັງມີປະເພນີຕ່າງໆ ທີ່ເປັນທີ່ເພິ່ງທາງໃຈ ພ້ອມທັງປົກປ້ອງຊີວິດຂອງຄົນ, ສັດລ້ຽງ ແລະເຄື່ອງປູກຂອງຝັ່ງອື່ນໆ.

ດ້ານສິລະປະວັນນະຄະດີ ເຂົາເຈົ້າມີກອນຂັບກອນລຳ, ມີບົດຟ້ອນທຳນອງເສບ ທີ່ເປັນເອກະລັກຂອງຊົນເຜົ່າຕົນເອງ. ມີເຄື່ອງດົນຕີເຊັ່ນ: ຄ້ອງ,ກອງ, ຂຸ່ຍ, ປີ່ ແລະແຄນ .ສິ່ງຂອງເຫຼົ່ານີ້ຈະສາມາດພົບເຫັນໄດ້ໃນເວລາຂຶ້ນເຮືອນໃໝ່. ພ້ອມກັນນີ້ເຂົາເຈົ້າ ຍັງມີນິທານພື້ນເມືອງ, ຄຳພະຫຍາ, ຄຳສຸພາສິດ ແລະອື່ນໆອີກຢ່າງ ມາກມາຍ ທີ່ຢ້ອນຮອຍເຖິງວິຖີການດຳລົງຊີວິດ ກ່ຳຄືອຸປະສັກຕ່າງໆ ທີ່ບັນພະບູລຸດຂອງເຂົາເຈົ້າໄດ້ປະເຊີນ ໃນໄລຍະຜ່ານມາ. ສຳລັບເຄື່ອງນຸ່ງປະຈຳເຜົ່າ ຂອງເຂົາເຈົ້ານັ້ນມີການຖັກແສ່ວລວດລາຍຄ້າຍຄືຂອງຊົນເຜົ່າກຽງແລະຊົນເຜົ່າກະຕູ. ພິເສດອີກຢ່າງໜຶ່ງ ໃນເມື່ອກ່ອນຊົນເຜົ່າຕະໂອ້ຍມີປະເພນີຕັດແຂ້ວ, ບ່ອງໜູ ແລະສັກລາຍຕາມຕົນຕົວ, ແຕ່ປະຈຸບັນໄດ້ມີການປ່ຽນແປງ ແລະກໍ່ບໍ່ນິຍົມອີກແລ້ວ ໂດຍສະເພາະແມ່ນຄົນລຸ້ນໜຸ່ມ ນັບທັງເຄື່ອງນຸ່ງຂອງເຂົາເຈົ້າບໍ່ໄດ້ຮັບການສົ່ງເສີມ ແລະບໍ່ນິຍົມກັນນຸ່ງ,ຈຶ່ງຫັນມາໃຊ້ເຄື່ອງນຸ່ງທີ່ຊື້ມາຈາກຕະຫຼາດ.

ການດຳເນີນວິຖີຊີວິດທາງດ້ານເສດຖະກິດ

ໃນເມື່ອກ່ອນຊົນເຜົ່າຕະໂອ້ຍມີອາຊີບຫຼັກໃນການເຮັດໄຮ່ປູກເຂົ້າ, ປູກພືດຜັກ, ຊອກຢູ່ຫາກິນຕາມທຳມະຊາດ, ແຕ່ຜ່ານຂະບວນການເຄື່ອນຍ້າຍ ໄປຕັ້ງຖິ່ນຖານບ້ານຊ່ອງຢູ່ແຕ່ລະທ້ອງຖິ່ນ ທີ່ມີສະພາບແວດລ້ອມທີ່ແຕກຕ່າງກັນ ເຮັດໃຫ້ວິຖີການດຳລົງຊີວິດ ກ່ຳຄືການທຳມາຫາກິນຂອງເຂົາເຈົ້າປ່ຽນແປງ. ມີບາງທ້ອງຖິ່ນກໍ່ມີການຫັນຈາກການເຮັດໄຮ່ມາເຮັດນາ, ລ້ຽງສັດເພື່ອເປັນອາຫານ ແລະປະກອບພິທີກຳທາງຄວາມເຊື່ອຕ່າງໆ ໂດຍສະເພາະຢ່າງຍິ່ງ ແມ່ນໃຊ້ເປັນຄ່າດອງ (ຄ່າສິນສອດ) ໃນເວລາລູກຊາຍແຕ່ງດອງ. ມາຮອດປະຈຸບັນນີ້ມີຈຳນວນໜຶ່ງ ຂອງຊົນເຜົ່າຕະໂອ້ຍ ໄດ້ຫັນອາຊີບມາປູກຕົ້ນໄມ້ກິນໝາກ ເພື່ອເປັນສິນຄ້າສ້າງລາຍໄດ້ແກ່ຄອບຄົວ ເຊັ່ນ: ປູກກາເຟ ແລະໝາກແໜ່ງເຫຼົ່ານີ້ເປັນຕົ້ນ.

Ta Oy

Historical background:

The Ta Oy ethnic group has lived in Laos form many centuries. It is believed the Ta Oy migrated to Laos around the fifth century. There is no clear information where they came from, but today there are Ta Oy also living in Vietnam.

Presently, the majority of Ta Oy lives in Salavan, Savannakhet, Champassak, Sekong and Attopeu provinces. The total population of Ta Oy in Laos is 30,876 people, of which 15,358 are females, consisting of 0.7% of the country's total population, according to the statistics of the Second population census in 1995. The Ta Oy are comprised of two sub-branches: the Tong and the Inh (Yinr).

Name and language

The most common name is "Ta Oy", which is also the name other groups refer to them as, plus this is also their official name.

The meaning of their name is not completely clear. Some people think they are named after the Ta Oy plateau, which is where they live. Others say this name is from the Ta Oy language, as ' Ta Oy " means "uncle Oy", who might have been a leader of the Ta Oy at some early time. Therefore, the meaning of the word Ta Oy is questionable.

The Ta Oy language is Mon-Khmer and is on the Katuic branch of the language group. They do not have an alphabet.

Beliefs, society, ceremonies and myths:

The Ta Oy are traditionally animistic. They believe in a wide range of spirits, similar to neighboring ethnic groups. The strongest spirits for them are the spirit of the sky and the spirit of the rice paddy. They also practice animistic sacrifice as a way to prevent future accidents and to placate the spirits. An example of this may be small offerings of rice or alcohol, or larger sacrifices of a buffalo or pig. The have shamans who make these sacrifices and are believed to have special relations with the spirits. These shamans also make sacrifices when a person is ill.

Ta Oy families are pratilineal, tracing their lineage through the male line of the family. Children take the family name of their father. The extended family unit is very strong in Ta Oy society, and there may be three or four generations living in the same village who are strongly united.

Traditional festivals and ritual ceremonies of the Ta Oy pay respect to the anniversaries of death, and celebrate the traditional New Years festival and celebration.

In marriage, young people are free to choose their future mate. After the wedding, the wife shall stay at the husband's house, and she adopts the husband's lineage.

In the past Ta Oy women gave birth in the forest and they could not be assisted by anyone, having to deliver the baby completely alone. Now they have started to give birth in their house.

When someone dies, the family buries the body in a coffin that is covered by a small miniature house of wood that has carvings and designs on it.

The Ta Oy people have poetry, dancing, and music that are unique to their ethnic group. They like the play the gong, drum, flute, and clarinet. They often have musical parties for parties to celebrate a housewarming. In addition, they have folk tales, poems, and proverbs that reflect their livelihood and culture or obstacles that their ancestors were faced with.

Village and house

The Ta Oy people live in hills and valleys between 300 and 1000 meters high. They often live in the same area as the Ca Tu people. Traditionally, they build their houses in a circular pattern with a communal house in the center. This was to protect the village from attackers, but this is less important today. Now they place their houses in a more random pattern, depending on the topography.


In previous times, they lived in longhouses with several generations under the same roof. Now they tend to build smaller houses with fewer family members. However, there is still a village communal house for meeting and performing rituals.

Costume

The Ta Oy have no weaving skills, so they wear typical clothing found in the local Lao markets. The women wear sarongs and blouses, and the men trousers. Traditionally they filed their teeth and tattooed their bodies, but this not common today. The traditional costumes they used to wear contained embroidered patterns similar to those of Kriang and Kahtoo ethnic groups. Presently, it is not common to see these costumes anymore.

Agriculture and livelihood:

Ta Oy people living in the higher lands still practice slash-and-burn agriculture. Those in the lower lands grow wet-paddy rice. Beside rice they grow cassava, sweet potatoes, corn and other vegetables. They also forage for food, and hunt and fish, which are also important sources of protein. A few families are now growing coffee and fruit as cash crops. They raise some domestic animals such as chickens and pigs.



ຊົນເຜົ່າຕຣຽງ ປະຫວັດຄວາມເປັນມາ:

ຕຣຽງແມ່ນຊົນເຜົ່າໜຶ່ງ ທີ່ນອນຢູ່ໃນວົງ ຄະນາຍາດແຫ່ງຊາດລາວ. ສຳລັບຊົນເຜົ່ານີ້ ໃນ ເມື່ອກ່ອນເຂົາເຈົ້າຕັ້ງພູມລຳເນົາຢູ່ປະເທດ ຫວຽດ ນາມ ຢູ່ເຂດ ນາມຢາງ ແຂວງ ເທືອທຽນເຫ້ວ, ເຂດ ດາກເລ ແຂວງກວາງນາມ ພ້ອມກັນນັ້ນກໍ່ຢູ່ເຂດ ປະລ້ຽວ, ໜອງຈະເອ, ໜອງຈະເລືອງ. ພາຍຫຼັງ ຝຣັ່ງເສດເຂົ້າມາຮຸກຮານອິນດູຈີນ. ຍ້ອນຖືກການ ກົດຂີ່ຂູດຮີດຂອງຝຣັ່ງຢ່າງໜັກໜ່ວງ. ຊົນເຜົ່າ ຕຣຽງ ທົນຕໍ່ການກົດຂີ່ຂູດຮີດຂອງພວກເຂົາບໍ່ໄດ້. ເຂົາເຈົ້າຈຶ່ງແຕກອອກຈາກບ້ານເຂົ້າລີ້ຊ່ອນຢູ່ ຕາມປ່າເລິກດົງໜາ ແຕ່ໄປຕາມໄປກໍ່ເຄື່ອນຍ້າຍ ເຂົ້າມາປະເທດລາວ ມາຕັ້ງພູມລຳເນົາຢູ່ເຂດຕັ້ງ ປີ-ຕັ້ງຕະລັ້ງ, ຫ້ວຍປະຢູ, ຈຳນວນໜຶ່ງກໍ່ຢູ່ເຂດ ຫ້ວຍດາກປລ໋ອຍອດເຊກະໜານ, ເຂດດາກຊວງ, ດາກໂຈນທີ່ຂຶ້ນກັບເມືອງດາກຈຶງ ແລະໄລຍະຕໍ່ ມາປະເທດລາວ ໄດ້ຖືກຈັກກະພັດຝຣັ່ງເຂົ້າມາ ຮຸກຮານເໝືອນກັນ ຈຶ່ງເປັນສາຍເຫດໃຫ້ ເຂົາເຈົ້າ ແຕກແຍກເຂົ້າລີ້ຊ່ອນຢູ່ຕາມປ່າເລິກດົງໜາ ເພື່ອ ຫຼົບຫຼີກການກົດຂີ່ຂູດຮີດຂອງຈັກກະພັດຕ່າງ ດ້າວ. ເຂົາເຈົ້າຈຶ່ງຄ່ອຍແຈກຢາຍກັນຢູ່ທົ່ວເມືອງ ດາກຈຶງ ແລະກໍ່ລາມໄປເມືອງຊານໄຊຢູ່ເຂດດາກ ຈຽງ, ດາກຈຽ, ດາກປະດູນ ແລະເຂດອື່ນໆເຊິ່ງ ຫ່າງຈາກນີ້ປະມານ 2-3 ສະຕະວັດ.

ປະຈຸບັນຊົນເຜົ່າຕຣຽງ ຕັ້ງພູມລຳເນົາ ໜາແໜ້ນກວ່າໝູ່ແມ່ນຢູ່ເມືອງດາກຈຶງ, ທ່າແຕງ ແລະລະມາມແຂວງເຊກອງ, ເມືອງຊານໄຊ ແຂວງອັດຕະປື, ເມືອງປາກຊ່ອງແຂວງຈຳປາສັກ, ເມືອງເລົ່າງາມ ແລະເມືອງສາລະວັນແຂວງສາ ລະວັນ. ນອກຈາກນີ້ຊົນເຜົ່າຕຣຽງຍັງມີຢູ່ ສ.ສ. ຫວຽດນາມ.

ຊົນເຜົ່າຕຣຽງໃນ ສ ປ ປ ລາວ ມີພົນລະ ເມືອງ 23.091 ຄົນ, ຍິງ 11.800 ຄົນ(ຜົນການ ສຳຫຼວດພົນລະເມືອງທົ່ວປະເທດ ຄັ້ງທີ II ປີ 1995).

ຊື່ເອີ້ນ:

ໃນສະໄໝບູຮານຊົນເຜົ່າຕຣຽງ ບໍ່ທັນມີຊື່ ເອີ້ນສະເພາະຂອງຊົນເຜົ່າຕົນເອງແຕ່ມີຊື່ເອີ້ນລວມ ຂອງບັນດາເຜົ່າໃນໝວດ ພາສາມອນ -ຂະແມ ວ່າ: "ຂອມ ຫຼື ຂຣອມ" ຕົກມາໃນສະໄໝສະຫຍາມ ແລະຝຣັ່ງເຂົ້າມາຮຸກຮານອິນດູຈີນ, ຊົນ ເຜົ່າຕຣຽງ ຈຶ່ງຄ່ອຍມີຫຼາຍຊື່ເອີ້ນເປັນຕົ້ນຄື: ຕະໜຽງ, ຕະລຽງ, ຕຣຽງ ແລະກະເສງ ເຊິ່ງມີຄວາມ ໝາຍແຕກຕ່າງ ກັນຄື: ກະເສງໝາຍເຖິງນ້ຳເສບ, ນ້ຳເສງ, ຕາໜຽງ ແມ່ນສຽງເອີ້ນຂອງຊົນເຜົ່າອື່ນ ຍ້ອນຜັນສຽງບໍ່ຖືກ ແລtເອີ້ນຕາມອາລົມຂອງຕົນເອງ. ສ່ວນວ່າຕະ ໜຽງ ແລະຕຣຽງມີສອງຄວາມໝາຍຄື: ຕະໝາຍ ເຖິງລຽງ, ໜຽງໝາຍເຖິງຮ້ອຍ ຫຼືລຽງທີ່ຮ້ອຍ, ແຕ່ມີ ບາງທັດສະນະວ່າກະລຽງ ຫຼືຕະລຽງ ແມ່ນຊື່ຫ້ວຍ ດາກລຽງ. ຊື່ທີ່ເຂົາຈົ້າສະໝັກໃຈ, ໃຊ້ ທາງ ການໃນ ປະຈຸບັນແມ່ນ " ຕຣຽງ " ມີຄວາມໝາຍວ່າ " ຟັງ ".

ພາສາ:

ຊົນເຜົ່າຕຣຽງ ເຖິງວ່າບໍ່ມີຕົວໜັງສືຂຽນ ກໍ່ຕາມ, ແຕ່ເຂົາເຈົ້າກໍ່ມີພາສາປາກເວົ້າເປັນອັນ ສະເພາະຂອງຊົນເຜົ່າຕົນເອງ ເຊິ່ງຄ້າຍຄືພາສາ ປາກເວົ້າຂອງຊົນເຜົ່າຮາຣັກ, ແຢະ, ລະວີ, ພາສາ ປາກເວົ້າຂອງຊົນເຜົ່າຕຣຽງ ຈັດເຂົ້າໃນໝວດພາ ສາມອນ - ຂະແມ. ຄົນຊົນເຜົ່າຕຣຽງ ສາມາດເວົ້າ ພາສາຮ່າຣັກ, ແຢະ, ລາວີ, ພາສາລາວ ແລະພາ ສາຕ່າງປະເທດໄດ້ດີ ເຊິ່ງມີຄວາມສະດວກໃນ ການແລກປ່ຽນເສດຖະກິດ ແລະວັດທະນະທຳ ລະ ຫວ່າງຊົນເຜົ່າເຫຼົ່ານັ້ນ.

ຮີດຄອງປະເພນີ ຄວາມເຊື່ອຖື ແລະວັດທະນະທຳ-ສັງຄົມ :

ຊົນເຜົ່າຕຣຽງ ມີຄວາມເຊື່ອຖືຜີເຊັ່ນ: ຜີພໍ່, ແມ່,ຜີບັນພະບູລຸດ, ຜີປ່າດົງ, ຜີຟ້າ, ຜີແຖນ ແລະຜີມະເຫສັກຫຼັກເມືອງ. ພ້ອມກັນນີ້ຍັງມີຜີໝູ, ຜີແມວ,ຜີໝາ, ຜີໄກ່ ແລະຜີເປັດເປັນຜີ ທີ່ເຮັດ ໃຫ້ຄົນເຈັບໄຂ້ໄດ້ພະຍາດໃນພິທີກຳລ້ຽງຜີຕ່າງໆ ທີ່ໄດ້ກ່າວມານັ້ນເຂົາເຈົ້າຈະມີການຂ້າສັດໃຫ່ຍ,

ນ້ອຍແຕກຕ່າງກັນ. ຍ້ອນຊົນເຜົ່າຕຽງ ມີຄວາມເຊື່ອຖືໃນທາງດ້ານວິນຍານ ແລະຂວັນ. ສະນັ້ນ ໃນປີໜຶ່ງໆ ເຂົາເຈົ້າໄດ້ມີພິທີກຳກ່ຽວກັບໃນເລື່ອງນີ້ເຊັ່ນ :ຍາມຂອກທີ່ດິນຖາງປ່າ, ເຮັດໄຮ່ຄະລຳບໍ່ໃຫ້ຄົນອື່ນຂົ້ນເຮືອນ 3 ວັນ, 3 ຄືນ, ຍາມຈູດໄຮ່ເຂົາເຈົ້າເສດມີນໃສ່ຫົວໄຟທີ່ໄດ້ຈູດ ເພື່ອບໍ່ໃຫ້ ຜີ ມອດໄຟ, ເດືອນ 6 ເຂົາເຈົ້າເຮັດຄອກໝູ, ຄວາຍ, ເຂົ້າໃນໄຮ່ພວມງອກງາມກໍ່ຄະລຳ ບໍ່ໃຫ້ຄົນອື່ນຂົ້ນເຮືອນ 1-3 ວັນ/ຄືນ, ທັງຄະລຳບໍ່ໃຫ້ເອົາເຄື່ອງປູກໃນໄຮ່ຂອງຕົນ, ແຕ່ໃຫ້ຄົນອື່ນເອົາໃຫ້ເພາະໃນປີນັ້ນຈະບໍ່ລ້ຳລວຍ, ເດືອນ 7-8 ຄະລຳ ບໍ່ໃຫ້ຄົນອື່ນຂົ້ນເຮືອນ 1-3 ວັນເພາະຢ້ານພວກຜູ້ຊາຍເຮັດເຄື່ອງມືຫາກິນບໍ່ໂຊກໝານ,ເດືອນ 8-9 ເຂົ້າດໍພວມສຸກເຫຼືອງ, ເຄື່ອງປູກຂອງຝັ່ງພວມເປັນໝາກອັນດົກໝາເຂົາເຈົ້າເຮັດພິທີແຈ້ງ (ຖວາຍ) ຜີເຈົ້າຖິ່ນ, ເຈົ້າຖານ, ຖວາຍຜີພໍ່, ແມ່ໝາຍຄວາມວ່າໃຫ້ຜີກິນກ່ອນ, ຄົນເຮົາຈຶ່ງຊອກຫາບ່ອນຈະເຮັດໄຮ່ ໃນປີຕໍ່ໜ້າ, ເດືອນ 10 -11 ລາວ) ເຂົ້າໄຮ່ພວມສຸກເຫຼືອງ ເພິ່ນເຮັດພິທີກຳແປງເລົ້າເຂົ້າລ້ຳໄຫນ້ອຍ, ໃຫ່ຍນາໆຊະນິດໃຫ້ສະອາດ ແລະອື່ນໆ ພ້ອມກັບພິທີກຳ ໃນຄວາມເຊື່ອຕາມຮອບວຽນ ໃນປີໜຶ່ງ, ຊົນເຜົ່າຕຽງ ຍັງມີບຸນໃຫ່ຍເຊິ່ງໄດ້ຈັດຂົ້ນໃນເດືອນ 3-4 ຂອງທຸກໆປີ ຫຼື 2-3 ປີ ແລະ 5 ປີໃດຈັດຂົ້ນເທື່ອໜຶ່ງ. ຖ້າຫາກບັນດາຄອບຄົວໃດເກັບກ່ຽວເຂົ້າໄດ້ຫຼາຍກວ່າ 80 ກະພາຂຶ້ນໄປ ກໍ່ພ້ອມກັນຈັດ ພິທີກຳໂດຍມີການຂ້າຄວາຍ 20 - 30 ໂຕ ຫຼື 40 - 50 ໂຕ ແທງດ້ວຍຫອກທີ່ເຮັດດ້ວຍເຫຼັກ ເພື່ອເປັນເຄື່ອງຖວາຍຜີ ພ້ອມທັງເປັນອາຫານ ໃຫ້ແກ່ແຂກຄົນບ້ານໃກ້ເຮືອນຄຽງຮັບປະທານ ໃນໂອກາດງານອັນຄຶກຄື້ນນັ້ນ, ເຊິ່ງເອີ້ນຕາມພາສາຂອງເຂົາເຈົ້າວ່າ ບຸນດໍໂດນຣ. ການຈັດພິທີກຳດັ່ງກ່າວ ແມ່ນສະແດງເຖິງຄວາມລ້ຳລວຍຮັ່ງມີ ເຊິ່ງໃຊ້ເວລາ 3-4 ວັນ/ຄືນ. ພ້ອມທັງດື່ມເຫຼົ້າຊຸມແຊວ, ກິນຊີ້ນຄວາຍ ແລະຊົມການສະແດງສິລະປະວັນນະຄະດີ ແບບພື້ນເມືອງຂອງຊົນເຜົ່າຕຽງ.

ສິລະປະວັນນະຄະດີ ພື້ນເມືອງຂອງຊົນເຜົ່າຕຽງ ກໍ່ແມ່ນຄືກັນກັບຂອງບັນດາຊົນເຜົ່າ ໃນໝວດພາສາ ມອນ-ຂະແມ ເຊັ່ນ:ໄດ້ມີກອນຂັບ, ກອນລຳ, ເຄື່ອງ ດົນຕີພື້ນເມືອງຫຼາຍຊະນິດຄື: ພະເໜາະ, ຄ້ອງລາ ,ຄ້ອງຈູມ ແລະອື່ນໆ ພ້ອມກັນນັ້ນເຂົາເຈົ້າຍັງມີນິທານພື້ນເມືອງຫຼາຍເລື່ອງທີ່ສ່ອງແສງເຖິງການຕໍ່ສູ້ລະຫວ່າງຄົນກັບທຳມະຊາດ, ລະຫວ່າງຄົນກັບຄົນ ໃນຂະບວນການ ເຄື່ອນໄຫວອອກແຮງງານດ້ານຕ່າງໆ ແລະສ່ອງແສງເຖິງຄວາມມັກຮັກລະຫວ່າງບ່າວສາວ ແລະອື່ນໆ.

ບ້ານຂອງຊົນເຜົ່າຕຽງ ເປັນບ້ານນ້ອຍຕ່ຳສຸດປະມານ 15-20 ຫຼັງຄາເຮືອນ, ສູງສຸດ 40-50 ຫຼັງຄາເຮືອນ ຫຼື 100 ຫຼັງຄາເຮືອນຂຶ້ນໄປ, ລະຫວ່າງບ້ານຕໍ່ບ້ານມີໄລຍະຫ່າງຕ້ອງໃຊ້ເວລາຍ່າງ 2 -3 ວັນ. ໃນບ້ານໜຶ່ງໆເຂົາເຈົ້າຢູ່ປະມານ 10 ປີ ແລ້ວກໍ່ເຄື່ອນຍ້າຍໄປຕັ້ງບ້ານຢູ່ສະຖານທີ່ໃໝ່. ຕາມປົກກະຕິແລ້ວຊົນເຜົ່າຕຽງ ຕັ້ງບ້ານເປັນຮູບວົງມົນ, ຕັ້ງເຮືອນອ້ອມສາລາກວາມ. ເຮືອນແຕ່ລະຫຼັງ ລ້ອມແຕ່ປັ່ນໜ້າຫາສາລາກວາມ. ແຕ່ມີບາງບ້ານບໍ່ມີສາລາກວາມ ແຕ່ມີເດີ່ນສຳລັບເປັນບ່ອນຈະຂ້າຄວາຍ ໃນເວລາເຮັດບຸນດໍໂດລຣ.

ໃນບ້ານໜຶ່ງໆ ເພິ່ນເຮັດຮົ້ວອ້ອມດ້ວຍໄມ້ປ່ອງ, ໄມ້ຈິງສູງປະມານ 5 ແມັດ, ຈິ່ງປະຕູທາງເຂົ້າສອງບ່ອນເພິ່ນເອີ້ນວ່າ "ປະຕູວຽງ" ແລະກໍ່ເຮັດໄລຍັດທາງໃນ, ອັນນັ້ນແມ່ນເຮັດເພື່ອປ້ອງກັນຂະໂມຍ, ຄົນຮ້າຍເພາະໃນເມື່ອກ່ອນລະຫວ່າງບ້ານຕໍ່ບ້ານໄດ້ປະທະກັນ, ພ້ອມນັ້ນແມ່ນເພື່ອປ້ອງກັນສັດຮ້າຍ ໂດຍສະເພາະແມ່ນເສືອຈະເຂົ້າກິນສັດລ້ຽງ ແລະຄົນຍາມກາງຄືນໃນບ້ານ.

ລັກສະນະເຮືອນຂອງຊົນເຜົ່າຕຽງ ຕາມປົກກະຕິແລ້ວມີ 3 ຫ້ອງ ຍາວ 4 ວາ, ກວ້າງ 3 ວາ, ເສົາ 4 ຄູ່, ມີເຊຍ, ແຕ່ລະເສົາຍາວ 3-4 ວາ, ມີ 4 ຂື່, 4 ຂາງ, ຍາວເທົ່າກັບລວງຍາວ, ມີ

ສະຍົວ16 ອັນ, ຍາວ 4-5 ວາ. ຖ້າເຮືອນຍາວ 4 ວາປາຍປົນຍາວ 5 ວາ, ຖ້າເຮືອນຍາວ 8 ວາປາຍປົນຍາວ 9 ວາ, ມີຂ້າວເບື້ອງລະ 15 ເສັ້ນ ແລະ ເຮືອນນ້ອຍມີ 2 ຫ້ອງ. ເຮືອນຂອງຊົນເຜົ່າຕຽງ ບໍ່ມີສ້ວມ. ກໍລະນີເຮືອນຫຼັງນັ້ນມີ 2 - 3 ຄອບຄົວ ຕ້ອງໄດ້ກຳນົດບ່ອນນອນຂອງຜົວເມຍ. ຖ້າຄອບຄົວດຽວກໍຕ້ອງກຳນົດບ່ອນນອນພໍ່ແມ່ ແລະບ່ອນນອນຂອງລູກເຕົ້າ ແລະຢູ່ຕໍ່ໜ້າເຮືອນແຕ່ລະຫຼັງ ລ້ວນແຕ່ມີຫຼັກເສົາສຳລັບ ຜູກຄວາຍທີ່ຈະ ຂ້າໃນ ເວລາລ້ຽງຜີຕ່າງໆ.

ປະເພດເຄື່ອງໃຊ້ໃນຄອບຄົວ ແລະພາ ຫະນະຂົນສົ່ງຂອງຊົນເຜົ່າຕຽງ ລວມມີເຄື່ອງ ຫັດຖະກຳຈັກສານດ້ວຍໄມ້, ຫວາຍ, ຫັດຖະກຳ ຕ່ຳຫູກ, ເຄື່ອງທີ່ເຂັ້ນ ຫຼືຕີດ້ວຍໂລຫະເປັນຕົ້ນ ມີ ກະພາ, ກະແຈະ, ກະສັງ, ພ້າ, ມີດ, ຫອກ, ດາບ, ແວກ,ໄຫ, ຂວານ,ຖ້ວຍດິນ, ໝໍ້ດິນ, ບ່ວງ, ສາດ, ມີດເຮັດດ້ວຍຫີນສຳລັບຕັດແຂ້ວຄົນ ເມື່ອຮອດ ກະສຽນ ແລະອື່ນໆ. ສ່ວນການຂົນສົ່ງແມ່ນເປ້ໃສ່ ຫຼັງບໍ່ວ່າຍິງ - ຊາຍ, ແຕ່ປະຈຸບັນນີ້ມີຫຼາຍ ບ້ານມີ ທາງລົດກໍ່ໃຊ້ລົດ, ໃຊ້ກວຽນຂົນວັດຖຸສິ່ງຂອງທ້ຳ ນັ້ນ.

ການນຸ່ງຫົ່ມເອ້ຢ້ອງຂອງຊົນເຜົ່າຕຽງ ກໍຄ້າຍຄືກັນກັບບັນດາຊົນເຜົ່າ ທີ່ນອນໃນໝວດ ພາສາມອນ- ຂະແມຢູ່ພາກໃຕ້ລາວ ເປັນຕົ້ນຜູ້ ຊາຍນຸ່ງກະຕ່ຽວ ບໍ່ທົ່ມເສື້ອແຕ່ເຂົາເຈົ້າບິ້ງຜ້າ ແລະ ທົ່ມຜ້າບ່ຽງ ຍາມໜາວ, ເອົາຜ້າກາໂດພັນຄ້ຽງແບບ ທົ່ມເສື້ອຍາວຢ່ອນລົ້ງຮອດບີແຂ່ງ, ຈົ່ງຜົມຍາວ ເກົ້າຜົມທາງງ່ອນ, ອາຍຸ 15 ປີກໍ່ຕັດແຂ້ວ ຖ້າຜູ້ຮັ່ງ ມີກໍ່ໃສ່ສາຍຄໍທີ່ເຮັດດ້ວຍເງິນ, ກົວ, ໄມ້ ແລະຂົນໜັ້ນ.

ສຳລັບແມ່ຍິງ ແມ່ນນຸ່ງສິ້ນໂລມຮັດເອິກ ຢ່ອນລົ້ງຮອດບີແຂ່ງ, ມີແພຮັດແອວ ,ບ່ອງຫູກວ້າງ ກວ່າຜູ້ ຊາຍຈົ່ງສາມາດໃສ່ຕ້າງໃຫ່ຍ, ຈົ່ງຜົມຍາວ, ເກົ້າຜົມເບື້ອງໜ້າ, ໃສ່ໝາກປັດ, ປອກແຂນຮອດ ກະສຽນ ອາຍຸ 15-18 ປີກໍ່ຕັດແຂ້ວ.

ຊົນເຜົ່າຕຽງມີຄວາມນິຍົມກິນເຂົ້າຈ້າວ ທີ່ ຫຸງດ້ວຍໝໍ້ດິນ, ມັກກິນອາຫານປະເພດຕ່າງໆ ເຊັ່ນ: ແກງ, ຕົ້ມຜັກລ້າໆ,ປີ້ງຊົ້ນ, ຈີ່, ຕົ້ມ, ລາບສຸກ, ລາບດິບ ແລະໃນເວລາເຮັດຮີດຄອງກິນລາບ ເລືອດທີ່ມີລິດຊາດບໍ່ເຜ ດ, ບໍ່ເຄັ່ມມີຄວາມນິຍົມ ດື່ມນ້ຳດິບ ທີ່ຕັກຈາກຫ້ວຍຮອງ, ໜອງບຶງ, ດື່ມ ເຫຼົ້າໄຫທີ່ເຮັດດ້ວຍເຂົ້າກະບຸ່ມ, ມັນຕົ້ນແລະເຂົ້າ, ດື່ມນ້ຳກົກຕາວຕ່າງນ້ຳ, ບໍ່ເຄີຍກິນຝິ່ນ ແຕ່ມັກສູບ ຢາທີ່ປູກຕາມໄຮ່ດ້ວຍກອກ ແຕ່ເວລາຍັງນ້ອຍ.

ໂຄງສ້າງທາງສັງຄົມ ຂອງຊົນເຜົ່າຕຽງ ປະກອບມີຫຼາຍຈ່ອງຫຼືຕະກຸນ ເຊິ່ງແຕ່ລະຈ່ອງ ຈະ ມີຂໍ້ຫ້າມສະເພາະຂອງຕົນ ແລະໄດ້ມີນິທານທີ່ ເກົ່າແກ່ອະທິບາຍຄວາມເປັນມາຂອງແຕ່ລະ ຈ່ອງ. ຕາມປະເພນີແລ້ວລູກຊາຍເອົາຊື່ຕາມພໍ່ ແລະແມ່ຍິງເອົາຊື່ຕາມແມ່ ປະເພນີການແຕ່ງດອງ ຂອງຊົນເຜົ່າຕຽງ ໃນເມື່ອກ່ອນຜູ້ຊາຍອາຍຸ 30 ປີ ແລະແມ່ຍິງອາຍຸ 20 ປີ, ແຕ່ປະຈຸບັນຜູ້ຊາຍອາ ຍຸ18 ປີ, ແມ່ຍິງອາຍຸ 15 ປີຂຶ້ນໄປກໍ່ເລີ້ມມີແນວ ຄິດສະແຫວງຊອກຫາຄູ່ຊີວິດແລ້ວ. ການຊອກຄູ່ ຮັກຂອງຊົນເຜົ່າຕຽງມີສອງຮູບການຄື: ຜູ້ບ່າວ ຊອກລົມສາວ, ຖ້າຫາກຖືກໃຈກັບສາວຄົນໃດກໍ່ ມາສະເໜີ ພໍ່, ແມ່ຂອງຕົນ ຫຼືພໍ່, ແມ່ເປັນຜູ້ຊອກ ຫາໃຫ້. ການແຕ່ງດອງຂອງຊົນເຜົ່າຕຽງ ແມ່ນ ໄດ້ປະຕິບັດຫຼາຍຂັ້ນຕອນເປັນຕົ້ນ ຜູ້ບ່າວອາດ ໄປລົມສາວຍາມກາງເວັນ ຫຼືກາງຄືນຢູ່ຕາມສະ ຖານທີ່ໆເໝາະສົມ ໄລຍະນັ້ນເຂົາເຈົ້ານອນນຳ ກັນຢູ່ຕາມ ປ່າ, ເລົ້າເຂົ້າ ຫຼືສະຖານທີ່ເໝາະສົມ ຕ່າງໆ. ຖ້າຫາກຮ່ວມປະເວນີນຳກັນແລ້ວກໍຈະ ເຮັດໃຫ້ ຄົນໃນເຮືອນ, ໃນບ້ານມີການເຈັບເປັນ, ລົ້ມຕາຍ, ຊ້ຳບໍ່ໜຳຖ້າຫາກມີລູກກ່ອນແຕ່ງດອງ, ສາວຄົນນັ້ນຈະບໍ່ໄດ້ຂຶ້ນເຮືອນ ແລະເຂົ້າບ້ານ ຂອງຜູ້ອື່ນ ຈົນກວ່າລູກໃຫ່ຍຈົ່ງຄ່ອຍເຂົ້າບ້ານ ແລະຂຶ້ນເຮືອນຄົນອື່ນໄດ້. ຖ້າຫາກລູກຊາຍຊອກ ໄດ້ຄູ່ຊີວິດແລ້ວກໍ່ມາສະເໜີພໍ່, ແມ່ເຫັນດີ ຫຼືພໍ່, ແມ່ ຊອກໃຫ້ໄດ້ແລ້ວມາບອກລູກຊາຍເຫັນດີ, ພໍ່, ແມ່

ເຈົ້າບ່າວກໍ່ແຕ່ງຜູ້ຊາຍ 2 ຄົນໄປທາບທາມພໍ່, ແມ່ ຂອງເຈົ້າສາວ. ຖ້າຫາກພໍ່ແມ່ຂອງເຈົ້າສາວເຫັນ ດີກໍ່ນັດມື້ສູ່ຂໍ ແລະທັງສອງຝ່າຍຕ້ອງກະກຽມວັດ ຖຸປັດໄຈຕ່າງໆເຊັ່ນ:ເຂົ້າ, ເຫຼົ້າໄຫ, ໝູ ,ໄກ່ ແລະ ເຄື່ອງຂອງຕ່າງໆ.

ຮອດມື້ຈະສູ່ຂໍຝ່າຍເຈົ້າບ່າວໄດ້ແຕ່ງ 2-3 ຄົນຜູ້ທີ່ເປັນເຊື້ອສາຍທາງພໍ່ໄປເຮືອນເຈົ້າ ສາວ ແລະກໍ່ລົມກັບພໍ່, ແມ່ຂອງເຈົ້າສາວວ່າໄດ້ ມາສູ່ຂໍແນວພັດນາໆຊະນົດ. ຈາກນັ້ນພໍ, ແມ່ເຈົ້າ ສາວໄຂເຫຼົ້າໄຫສູ່ເຂົາເຈົ້າດື່ມຊົ່ວໄລຍະໜຶ່ງພໍ່, ແມ່ຂອງເຈົ້າສາວອາດຈະຕອບເປັນ 2 ກໍລະນີຄື: ບໍ່ຕົກລົງໃນມື້ນັ້ນ, ແມ່ນໂຈະກ່ອນເພື່ອໃຫ້ເຂົາ ເຈົ້າຖາມພີ່ນ້ອງສາກ່ອນ ແລະກໍ່ດື່ມເຫຼົ້າຊຸມແຊວ ມ່ວນຊື່ນ ແລະພໍ່, ແມ່ຂອງເຈົ້າສາວເຫັນດີໃຫ້ເຈົ້າ ບ່າວມາສູ່ຂໍໃນມື້ໃດມື້ໜຶ່ງອີກ. ຮອດມື້ນັດ ກໍ່ກັບ ມາອີກວາລະໜຶ່ງ ແຕ່ກໍລະນີໃນອາດີດລະຫວ່າງ ສອງຝ່າຍເຄີຍຜິດຂ້ອງຕ້ອງຖຽງກັນ, ຝ່າຍເຈົ້າ ບ່າວຕ້ອງເອົາໝູ1ໂຕ, ກອງ 1 ອັນ ມອບໃຫ້ ຝ່າຍ ເຈົ້າສາວ ດ້ວຍວິທີໄປຂ້າໝູຢູ່ກາງທາງໃນປ່າ ແລະກໍ່ມອບກ່ອງໃຫ້ພໍ່ແມ່ເຈົ້າສາວຈາກນັ້ນຈຶ່ງ ໄປສູ່ຂໍຢູ່ບ້ານ, ທັງນັ້ນກໍ່ເພື່ອສະແດງຄວາມສາ ລະພາບກັນໃນຕໍ່ໜ້າຈະບໍ່ມີຄວາມ ອາຄາດບາດ ໝາງ ກັນອີກ (ສາບານຕໍ່ສັງຄົມ).

ມື້ສູ່ຂໍແລະແຕ່ງດອງ:

ຕາມປະເພນີ ຂອງຊົນເຜົ່າຕຽງ ສູ່ຂໍມື້ ໃດກໍ່ແຕ່ງດອງມື້ນັ້ນເລີຍໝາຍຄວາມວ່າຮອດ ມື້ ສັນວັນດີຂອງຄູ່ບ່າວສາວແລ້ວກໍ່ດຳເນີນການ ສູ່ຂໍຊົ່ວໄລຍະໜຶ່ງແລ້ວ ກໍ່ຕໍ່ລອງບັນຫາຄ່າດອງ ສິນສອດ, ຝ່າຍເຈົ້າສາວ ໄຂເຫຼົ້າໄຫ ແລະຂ້າໝູ, ໄກ່ສູ່ເຈົ້າບ່າວ ແລະແຂກຝ່າຍເຈົ້າບ່າວ.

ເຈົ້າສາວຂ້າໄກ່ເພື່ອເບິ່ງໄສ້ຕິ່ງ, ຖ້າຫາກ ບໍ່ຕິ່ງດີຕ້ອງຂ້າໄກ່ໂຕໃໝ່ຈົນກວ່າເບິ່ງໄສ້ຕິ່ງມັນ ຕິ່ງດີຈຶ່ງຄ່ອຍເອົາໂຕນັ້ນຕົ້ມສຸກແລ້ວ ກໍ່ໃຫ້ເຈົ້າ ບ່າວກັບເຈົ້າສາວຮັບປະທານ. ສ່ວນແຂກຄົນທັງ ສອງຝ່າຍ ແມ່ນຮັບປະທານອາຫານຊົ້ນໝູ,ໄກ່, ເປັດໂຕຕ່າງຫາກ. ຮັບປະທານອາຫານ ແລະດື່ມ ເຫຼົ້າຊຸມແຊວເປັນທີ່ຮຽບຮ້ອຍ ແລ້ວກໍ່ແຫ່ໄພ້ເມືອ ເຮືອນເຂີຍ, ເຊິ່ງຕ້ອງປະຕິບັດດ້ວຍສອງຮູບການ ຄື: ຖ້າຫາກຢູ່ບ້ານດຽວ ແມ່ນແຫ່ກາງຄືນເວລາ ຫົວຄ່ຳ, ຖ້າຫາກຢູ່ບ້ານອື່ນ, ແມ່ນແຫ່ກາງເວັນໃນ ມື້ນັ້ນ, ເຈົ້າສາວຕ້ອງເອົາເຄື່ອງນຸ່ງຫົ່ມຂອງຕົນ ເອງ, ສາດປູນອນທີ່ສານດ້ວຍເຕັຍ ແລະຫວາຍ, ຊົ້ນໝູ 1ຂາ, ຜ້າຫຽງ, ຜ້າກາໂດຈຳນວນໜຶ່ງ ເພື່ອຕ້ອນປູ່ຍ່າ ຫຼືຜົວ.

ຮອດເຮືອນແລ້ວ ກໍ່ແຫ່ຂົ້ນເຮືອນເບື້ອງ ປະຕູໃຫຍ່ (ເບື້ອງຫົດຕາເວັນອອກ) ຍ່າງໄປບ່ອນ ນອນເບື້ອງປຸງໂດລ; ນັ່ງເບື້ອງເໜືອເຕົາໄຟຂອງ ປຸງໂດລ. ຜົວເມຍໃໝ່ນັ່ງຮຽງກັນຊົ່ວໄລຍະໜຶ່ງ ແລ້ວເຈົ້າສາວຂ້າໄກ່ຜູ້ເອົາມີທິບ ເພື່ອໃຫ້ສ້າງລຸກ ປຸກຂົ້ນສິ່ງເຂັດຂວາງໜີໄປ, ເຈົ້າບ່າວໄຂເຫຼົ້າໄຫ ເອົານ້ຳທ່າຍໃສ່ໄຫຈົນເຕັມ ແລ້ວໝໍດູ ແລະພໍ່ແມ່ ເຮັດຮີດກະບະຢາເພື່ອ (ຖວາຍຜີ) ນັບແຕ່ 1-6 ໃຫ້ ສິ່ງເຂັດຂວາງຕົກເຮ່ຍ, ນັບແຕ່1-7 ໃຫ້ເຂັດໃຫ້ ຢຳ ເອົາກັນແລ້ວໃຫ້ເປັນຜົວແກ້ວເມຍທິບ, ຜົວຫຍິບ ເມຍແສ່ວ.

ເຈົ້າບ່າວ ແລະຍິງສາວປາດຄໍໄກ່ ດ້ວຍ ການ ງ່ຽງ ເບື້ອງຊ້າຍລົງເບື້ອງຂວາຂົ້ນແລ້ວ ເບິ່ງໄສ້ ຕິ່ງ ຖ້າ ຫາກດີທຸກປະການ, ທຸກຄົນ ກໍ່ຮ້ອງໂຮຊົມເຊີຍຄູ່ ຜົວເມຍໃໝ່, ແຕ່ງກິນແລ້ວ ໃຫ້ຄູ່ຜົວ ເມຍໃໝ່ກິນ. ຫຼັງຈາກນັ້ນພວກຍາດ

ຕີພີ່ນ້ອງກໍ່ຮັບປະທານອາຫານ ແລະດື່ມ ເຫົ້າຊຸມ ແຊວຢູ່ເຮືອນທັງສອງຝ່າຍ.

ຕອນທ້າຍຂອງງານດອງພໍ່, ແມ່ຂ່ອງເຈົ້າ ບ່າວ ກໍ່ມອບຄ່າດອງສິນສອດ ໃຫ້ພໍ່ແມ່ຂອງເຈົ້າ ສາວ ດ້ວຍມູນຄ່າຄວາຍ 5 ໂຕ, ແຕ່ມີບາງເທື່ອກໍ ໃຊ້ຄົບຕາມຈຳນວນ, ແຕ່ບາງຄົນກໍ່ໃຊ້ບໍ່ຄົບຈຳ ນວນຈົນຮອດເຖົ້າແກ່ ແລະຕາຍກໍ່ມີ. ພາຍຫຼັງ ແຕ່ງດອງແລ້ວຄູ່ຜົວເມຍຈະບໍ່ໄດ້ນອນນຳກັນ ໝາຍຄວາມວ່າ: ເມຍຕ້ອງນອນນຳນ້ອງສາວ ຂອງຜົວແຕ່ 3 - 9 ເດືອນ ແລະຕາມປົກກະຕິແລ້ວ ໃນສະໄໝບູຮານແມ່ຍິງ-ຊາຍ ບໍ່ເຄີຍນອນນຳກັນ ເມື່ອຮອດກຳນົດ 3-9 ເດືອນແລ້ວ ຖ້າຈະຮ່ວມ ເພດສຳພັນຜູ້ຊາຍໄປຫາແມ່ຍິງຢູ່ບ່ອນນອນ, ແລະຖ້າຫາກມີລູກໃນຊ່ວງໄລຍະ 3-9 ເດືອນ ພາຍຫຼັງແຕ່ງດອງຖືວ່າມີລູກຫາງ, ເຈົ້າສາວຈະ ຖືກປັບໄໝ ຄື: ສົ່ງຄືນໃຫ້ພໍ່, ແມ່ ແລະເອົາຄ່າດອງ ຄືນຕາມຈຳນວນ, ບາງຄົນນັ້ນຈະບໍ່ໄດ້ເຂົ້າບ້ານ ແລະຂຶ້ນເຮືອນຂອງຄົນອື່ນ, ບໍ່ໃຫ້ລົມກັນກັບຄົນ ພາຍໃນບ້ານ ແລະຕ່າງບ້ານຈົນກວ່າລູກໃຫຍ່.

ຊົນເຜົ່າຕຽງ ແມ່ນໄດ້ປະຕິບັດຕາມລະ ບອບຜົວໜຶ່ງເມຍດຽວ ແຕ່ມີລັກສະນະຂາຍແມ່ ຍິງຢ່າງຂາດຕົວ ແລະສັງຄົມຂອງເຂົາເຈົ້າໄດ້ຂະ ຫຍາຍຕົວໄປ ສູ່ລະບອບບິດາສິດທິຣາດ ເພາະສະ ນັ້ນການດຳເນີນຮີດຄອງປະເພນີຕ່າງໆ ໂດຍສະ ເພາະການແຕ່ງດອງ ແມ່ນສຸດຂາດກັບຜູ້ຊາຍ.

ປະເພນີການປະເກີດລູກ ຂອງຊົນເຜົ່າ ຕຽງ ມີຄວາມຄ້າຍຄືກັນກັບບັນດາຊົນເຜົ່າ ໃນ ໝວດພາສາ ມອນ-ຂະແມ ເປັນຕົ້ນເມື່ອຜູ້ຍິງຖື ພາແມ່ນບໍ່ໄດ້ພັກວຽກຍົກເວັ້ນຫາກຜູ້ກ່ຽວເຈັບ ເປັນ. ເຂົາເຈົ້າໄດ້ມີຂໍ້ຫ້າມ ແລະຄະລຳບໍ່ກິນຊີ້ນ ຟານ, ບໍ່ໃຫ້ໄປໃກ້ຄົນຕາຍ, ບໍ່ໄປສົ່ງສະການ, ບໍ່ ກິນໆ, ບໍ່ໄປບ່ອນໄວ້ນ້ອງແຮ່ຄົນ (ທັງຜົວ ແລະ ເມຍ) ເມື່ອຮອດເດືອນຄອງ ແລ້ວຜູ້ເປັນຜົວຕ້ອງ ປຸກຕູບນ້ອຍຂ້າງເຮືອນໃຫ່ຍ, ຜົວຕ້ອງຕັກນ້ຳ, ຫາຟືນຕົ້ມນ້ຳ, ກຽມຂອງກິນເປັນຕົ້ນ ມີຜັກນາໆ ຊະນິດໂດຍສະເພາະແມ່ນໝາກແຕງ ເພື່ອໃຫ້ ກຸ້ມກິນ 7 ວັນ, ມື້ເກີດລູກສອງຜົວເມຍຂຶ້ນນອນ ຢູ່ໃນຕູບນ້ອຍ, ອັດປະຕູໄວ້ບໍ່ໃຫ້ຄົນອື່ນຂຶ້ນເບິ່ງ ເພື່ອບໍ່ໃຫ້ສິ່ງເຮັດຂວາງເຂົ້າໃນຕູບນ້ອຍ, ເວລາ ເກີດລູກຜູ້ເປັນຜົວ ຊ່ວຍເມຍເກີດລູກ ແຕ່ຕົ້ນຕະ ຫຼອດປາຍ. ການຢູ່ກຳແມ່ນດື່ມນ້ຳຮ້ອນ, ຂາງໄຟ, ຮອດ 7 ມື້ ຜົວໄຂປະຕູລົງເກັບຜັກກູດ ໃຫ້ເມຍກິນ ແລ້ວກໍ່ພາເມຍຂຶ້ນຢູ່ເຮືອນໃຫ່ຍ. ໄດ້ເດືອນໜຶ່ງ ແລ້ວເມຍ ຕ້ອງເຈ່ຍລູກນ້ອຍເມືອແຈ້ງພໍ່, ແມ່ຂອງ ຕົນ ເພື່ອໃຫ້ເພີ່ນຮັບຮູ້ແລ້ວກໍ່ກັບເມືອເຮືອນຕັ້ງ ຊື່ແນວຂີ້ຮ້າຍໃຫ້ລູກສ່ວນຊື່ແທ້ແມ່ນໃສ່ເມື່ອເວ ລາເຮັດຮີດກິນຄວາຍ. ຊົນເຜົ່າຕຽງ ໃນເມື່ອ ກ່ອນ ແລະພວກທີ່ຍັງຢູ່ຫ່າງໄກສອກຫຼີກ ໃນປະຈຸ ບັນ ເມື່ອມີຜູ້ຄົນໃນຄອບຄົວເຈັບເປັນກໍ່ປິ່ນປົວ ຕາມແບບພື້ນເມືອງ ໂດຍອາໃສໝໍດູ, ໝໍມໍ ແລະ ໝໍເຢົ້າ ເພື່ອເວົ້ານຳຜີນັບທັງຜີປອບ ໝາຍຄວາມ ວ່າ: ເມື່ອໝໍດູວ່າ ແມ່ນພະຜີໃດຕ້ອງຫາເຮັດໃຫ້ ຄົນ ຜູ້ນັ້ນເຈັບເປັນກໍ່ຕ້ອງປະຜີດ້ວຍການຂ້າສັດ ນ້ອຍ ແລະສັດໃຫ່ຍ. ເມື່ອຄົນເຈັບໜັກເກີນໄປ

ແລ້ວ ກໍ່ເອີ້ນລູກຫຼານໝົດທຸກຄົນມາເບິ່ງແຕ່ໃຈ ຍັງບໍ່ທັນຂາດ, ກໍ່ຕ້ອງເອົາເຄື່ອງຂອງໃນເຮືອນມາ ລຽນໄວ້ອ້ອມເພິ່ນ (ນັບທັ້ງສັດລ້ຽງກໍ່ຜູກໄວ້ອ້ອມ ເຮືອນ). ເມື່ອໃຈຂາດແລ້ວລູກໆຫຼານໆ ກໍ່ມາຈັບ ມາບາຍ ເພື່ອສະແດງຄວາມຄິດຮອດອາໄລຫາ ຕໍ່ຜູ້ຕາຍ, ນຸ່ງເຄື່ອງເອົ່າຜ້າໜຽງ, ຜ້າກາໂດປົກໝົດ ໂຕແລ້ວ ກໍ່ຫາມສົບໃສ່ໂລງດອຍໄວ້ຂວາງເຮືອນ ລະຫວ່າງປະຕູ ປຸງເຕີມ ແລະປະຕູປຸງໂດລ (ຕີນ ປົ່ນໄປທາງຕາເວັນອອກ-ຫົວປົ່ນໄປທາງຕາເວັນ ຕົກ) ແລະກໍ່ດຳເນີນການຄົບງັນຊົ່ວໄລຍະໜຶ່ງ, ຖ້າຫາກຕາຍຕອນກາງຄືນກໍ່ໄປຝັງຕອນເຊົ້າ ແລະ ຕາຍຕອນເຊົ້າກໍ່ເອົາໄປຝັງຕອນແລງ. ໃນເວລາ ຄົບງັນນັ້ນ ເພິ່ນຂ້າໝູ ແລະໄກ່ເພື່ອຖວາຍໃຫ້ຄົນ ຕາຍກິນ, ຖັດຈາກນັ້ນກໍ່ມ້າງປະຕູເບ້ຶອງທິດຕາ ເວັນອອກພໍ ຫຼົມໂລງ, ຜູ້ຄົນໃນເຮືອນຄອບຜີແລ້ວ ກໍ່ຫາມສົບອອກຈາກເຮືອນໄປປ່າຊ້າ ໂດຍເອົາ ຕີນໄປກ່ອນ. ຮອດບ່ອນຈະຝັງແລ້ວຈຳນວນໜຶ່ງ ຂຸດຂຸມ, ຈຳ ນວນໜຶ່ງເອົາໄມ້ຄ້ຳໂລງໄວ້, ຂຸດຂຸມ ແລ້ວກໍ່ເອົາໂລງລົງຂຸມເອົາໄມ້ແປັນປູເທິງໂລງ ແລ້ວກໍ່ເອົາດິນຖົມ, ຖັດຈາກນັ້ນກໍ່ເອົາວັດຖຸເຄື່ອງ ຂອງ, ນັບທັ້ງສັດລ້ຽງທີ່ຈະມອບໃຫ້ເພິ່ນນັ້ນລຽນ ໄວ້ເທິງຫົວ ແລະແຄມປາກຂຸມພ້ອມກັນນັ້ນເພິ່ນ ຍັງເຮັດຄອກຄວາຍ, ຄອກໝູ, ລົກໄກ່, ກອງຟືນ ອ້ອມຂຸມຝັງສົບ, ປູກພືດນາໆຊະນິດອ້ອມຂຸມ ເພື່ອໃຫ້ເພິ່ນຊົມໃຊ້ ແລະກິນຕໍ່ໆໄປ.

ພ້ອມກັນນັ້ນກໍ່ຍັງຖາກໄມ້ເຮັດລອດລາຍ ເພື່ອເຮັດຮ້ານຢູ່ເທິງກອງຟອນຝັງສົບແລ້ວ ກໍ່ເອົາ ເຄື່ອງນຸ່ງຫົ່ມເອ້ຢ້ອງຂອງເພິ່ນຕາກໄວ້ນັ້ນ ແລະ ກໍ່ອຳລາວິນຍານຂອງຄົນຕາຍຢ່າງເມືອເຮືອນ ຂອງຄົນຕາຍ ໂດຍບໍ່ໜຽວຄືນຫຼັງ. ຮອດເຮືອນ ແລ້ວ ກໍ່ລ້າງຕີນດ້ວຍນ້ຳຮ້ອນໃສ່ໃບໄມ້ທີ່ເຂັດຢ້ຳ ເພື່ອໃຫ້ສິ່ງເຂັດຂວາງໜີໄປນຳຄົນຕາຍແລວກໍ່ ເມືອເຮືອນຂອງໃຜລາວ.

ປົງສົບສົ່ງສະການແລ້ວ ຕອນຄ່ຳຂອງມື້ ນັ້ນ ກໍ່ໄດ້ມາຄົບງັນ ເພື່ອອົບອຸ່ນຈິດໃຈຂອງຄອບ ຄົວດັ່ງກ່າວ ແລະນັບແຕ່ນັ້ນເປັນຕົ້ນໄປ ເມື່ອເຊົ້າ ເຈົ້າເຮັດຮີດໃດໜຶ່ງ ກໍ່ເອີ້ນວິນຍານຂອງຜູ້ຕາຍນັ້ນ ມາກິນມາດື່ມນຳລູກຫຼານ ແລະໃນກໍ່ລະນີໄດ້ໄປ ສົ່ງສະການຄົນອື່ນຕາຍ ກໍ່ຖ້າງຫຍ້າອ້ອມຂຸມຝັງ ສົບ. ໝາຍຄວາມວ່າ: ບໍ່ໄດ້ເຮັດແຈກເຮັດທານ ຄື ຊົນເຜົ່າລາວ ແລະບໍ່ໄດ້ເຮັດລະປົບຄື ກັບບັນດາ ຊົນເຜົ່າໃນຕະກຸນບຮູ.

ການດຳລົງຊີວິດທາງເສດຖະກິດ:

ໃນເມື່ອກ່ອນຊົນເຜົ່າຕຽງ ໄດ້ຢຶດຖືອາ ຊີບຖ້າງປ່າເຮັດໄຮ່ປູກເຂົ້າຈ້າວ ສົມທົບກັບການ ຕ່ຳໜູກທ່ຳໄໝ, ເຮັດວິຊາຫັດຖະກຳຈັກສານ, ຕີເຫຼັກ ເພື່ອເຮັດເຄື່ອງໃຊ້ໃນຄອບຄົວ, ເຄື່ອງມືການຜະ ລິດ, ເຄື່ອງປ້ອງກັນຕົວ ແລະເຄື່ອງນຸ່ງຫົ່ມເອ້ຢ້ອງ ແກ່ຕົນເອງ ແລະເປັນສິນຄ້າ. ແຕ່ມາຮອດປະຈຸ ບັນມີຫຼາຍເຂດຂອງຊົນເຜົ່າຕຽງ ແມ່ນໄດ້ເຮັດ ນາປູກເຂົ້າຈ້າວ, ປູກພືດທີ່ມີຫາດແປ້ງ, ພືດໃຫ້ ໝາກໄລຍະສັ້ນ, ໄລຍະຍາວ, ລ້ຽງສັດປະເພດ ຕ່າງໆແລະປູກໄມ້ອຸດສະຫະກຳຢ່າງເປັນຂະບວນ.

Triang

Historical background:

The Triang previously settled in areas of Vietnam, mostly around the Hue region. Due to exploitation by the French colonialists, the Triang migrated to Laos where they settled in Tung pong-Tung talung regions, the Sekamarn river area, and the Darkxuang and Darkjone regions of Darkcheung district. Later, when the French arrived in Laos, the Triang fled deeper into the mountains to avoid exploitation.

Now the Triang live in Darkcheung, Thataeng and Lamarm districts of Sekong province. In addition, some Triang still live in Vietnam.

The total population of the Triang in Laos amounts to 23,091. 11,800 are females, according to the second population census of 1995.

Name and language:

During the invasion by Siam and French colonialist to Indochina, the Triang had many names such as Tah Liung, Ta Liang, Triang and Kasehng. All of these had different meanings. The name they now prefer to be called plus their official name is "Triang" which means "listen".

The Triang language is similar to the Haruck, Yae and Lawee languages. It is a Mon-Khmer language and is on the Bahnaric language branch. They can usually speak the languages of their neighbors also, including the Lao national language.

Beliefs, society, ceremonies and myths:

The Triang have an animistic belief in spirits such as spirits of their ancestors, the forests, sky (phi fah), and the heavens (phi thaen). In addition there are the pig spirits, cat spirits, dog spirits, and many others. For ritual worship of these spirits, large and small animals are sacrificed. They have certain taboos; such as when they search for new land for cultivation no outsider may enter their house for three days after they have found the new land. In July through August, they do not allow outsiders to enter their house fearing their future hunting trips will not be successful. When they are about to harvest their rice and other crops, they will first have a sacrifice to the certain spirits that are responsible for these crops.

The Triang have large feasts in March to April of every year. If any household harvests more than 80 large baskets of rice, the village will kill 20 to 30 buffaloes, which are stabbed by iron spearheads. This is to give thanks to the spirits for their prosperity. This is called the Dordollr feast. This feast, which lasts 3-4 days, is a time for people to have fun. They drink alcohol, eat buffalo meat and watch traditional shows and dance and listen to music.

The social structure of the Triang is comprised of many chong or clans. Each clan has their own unique taboos and restrictions. Traditionally, sons take the name of their father and daughters take the name of their mother.

Previously, men got married at the age of 30 and women at 20. Today,

boys at around the age of 18 and girls starting at the age 15 will marry. They may choose their mate, or their parents may arrange a marriage for them.

When a young man finds a suitable mate, he asks for his parents' agreement, or if his parents have a chosen girl, they then ask the son if he agrees. If agreement can be reached, a date is set for engagement. On the engagement day, the groom's side sends two or three relatives to talk to the bride's parents and when they arrive they offer a gift of various crop seeds. The bride's parent will present rice wine to drink, and then they will answer their visitors if they agree to the wedding.

During the wedding, the bride's family will kill a chicken to observe its intestine by looking to see if the intestine is thin or thick. If the chicken's intestine is thin, they will kill another chicken until they find one that has a thick and satisfactory intestine. Then that chicken is cooked for the wedding couple to eat. The other family members and guest will eat pork, duck and other dishes.

Next, the wedding procession walks to groom's house. The bride will take a mat knitted with teùy grass and rattan, a leg of pork meat, and clothes to present as gifts to the groom's parents.

As the bride sits in the groom's house, she will kill a rooster with her hands in order to chase away all bad omens and evil spirits that could harm the marriage. Then a village fortuneteller and his parents perform rituals (hid kabaya) to notify the spirits of the marriage, and to insure a successful union. At the final stage of the wedding ceremony, the parents of the groom pay a dowry of five buffaloes to the bride's parents. Then the people congratulate the new couple and everyone eats, drinks and has fun.

Traditionally the Triang practiced polygamy, but today they are generally monogamous.

When a woman is pregnant she is not allowed to eat deer meat, snake or other similar items, or to go near a dead body or to a funeral. The husband will build a small birthing hut near the main house. On the day of birth, the husband and wife sleep in the small hut, and the husband will guard against evil spirits entering the hut. After one month in the hut, the wife shall present the baby to her parents for approval. At first they give an ugly, temporary name to the baby first. The real name is given to the baby later during a feast of buffalo meat.

When someone is ill, the Triang will use a spiritual master who can speak with the spirits and can offer sacrifice to the spirits that are responsible for the sickness.

When someone dies, they dress the body in cotton cloth and place the body in a coffin. A mourning feast is held, where a pig and some chickens are killed and offered to the dead. The coffin is taken to the village cemetery and buried. Many crops are sown around the tomb for the dead to consume in the afterlife. People will come later to consol the deceased relatives. The family members will eat and call to the soul, asking it to eat and drink with the children and grandchildren.

The traditional art and culture of the Triang is similar to that of other Mon-Khmer ethnic groups. There are songs, music, folktales, stories and the playing of traditional music.

Village and house:

The Triang village has a minimum of about 15 to 20 households to a maximum of 100 households. The distance between villages is about a two to three day walk. Traditionally, they would live in one place for about ten years then move the village to a new location. Normally, Triang people build their houses in a circular pattern with a communal house in the center of the village, with all houses facing the communal house. Some villages do not have a communal house, but there is a public space for sacrificing buffaloes.

Each Triang village has a fence made of bamboos and two entry gates called Patoovieng. This is to protect against thieves and wild animals, in particular, tigers that eat their domestic animals at night.

Normally, houses of Triang people are built on stilts with a large, spacious room. The walls may be open or enclosed with woven bamboo. The roof is thatched grass or corrugated tin. There is often a separate kitchen area and a second entrance to the house.

Costume:

For daily wear Triang women wear Lao-style sarongs and short-sleeved blouses. Not all Triang have retained their weaving skills, but for those that have, they will weave some traditional cloth that contains thick red lines interwoven with thinner yellow, blue, and white stripes. They may make garments such as coats or shirts from these materials that are worn on special occasions. The women will wear their hair long and usually role it up in a bun.

The men used to hear loincloths, but this is not common today, with most men wearing typical trousers and shirts that are bought in the local Lao markets. Teeth sharpening and tattooing are also not common anymore.

Agriculture and livelihood:

Triang people are still occupied in slash and burn cultivation of dry-land rice. Triang living in the lowlands will practice wet-paddy cultivation. They will also grow maize, potatoes, tobacco and other vegetables and cash crops.

The Triang are also skilled in raising buffalo and other animals such as pigs and cattle. Hunting and gathering in the forests are also an important food sourc, and they are also skilled in collecting wild honey that they sell.

The Triang make handicraft products such as baskets and mats from rattan and bamboo. They can also forge iron and will make machetes, knives spears, and swords. They carry most things on their back in specially made "back baskets" that they weave themselves from bamboo.

ຊົນເຜົ່າຕຼີ
ປະຫວັດຄວາມເປັນມາ:

ຊົນເຜົ່າ "ຕຼີ" ແມ່ນຊົນເຜົ່າໜຶ່ງທີ່ນອນໃນວົງຄະນາຍາດແຫ່ງຊາດລາວ, ເຊິ່ງໄດ້ຕັ້ງພູມລຳເນົາຢູ່ປະເທດລາວແຕ່ດຶກດຳບັນ ຫ່າງຈາກນີ້ 5.000 ກວ່າປີ. ຊົນເຜົ່າ "ຕຼີ" ໄດ້ມີປະຫວັດຄວາມເປັນມາຄ້າຍຄືກັນກັບບັນດາຊົນເຜົ່າ ໃນຕະກຸນບູຣ ທີ່ໄດ້ເຄື່ອນຍ້າຍມາຕັ້ງຖິ່ນຖານບ້ານຊ່ອງ ຢູ່ປະເທດລາວ ຈາກດິນແດນພາກເໜືອ ໂດຍ ຜ່ານແຄວ້ນຫິງສາວະດີ ປະເທດ ມຽນມາ ແລະ ເຂດລິບບູລີປະເທດ ສະຫຍາມ ໃນ ສະໄໝ ເຈົ້າຈັນອາໜວຍ. ຊົນເຜົ່າ "ຕຼີ" ໄດ້ມີບົດບາດອັນສຳຄັນໃນການຂຽນໜັງສືປະຫວັດສາດຂອງຊາດລາວເຮົາ ໂດຍສະເພາະແມ່ນຢູ່ແຂວງ ສະຫວັນນະ ເຂດ ແລະແຂວງ ຄຳມ່ວນ, ຊົນເຜົ່າ "ຕຼີ" ເປັນກຳລັງແຮງທາງດ້ານການເມືອງ, ການທະຫານ, ວັດທະນະທຳ-ສັງຄົມ, ເສດຖະກິດ ບັນພະບູລຸດ, ນັບວ່າໜາຍ ຍຸກໜາຍສະໄໝ ຈົນຮອດສະ ໄໝມີພັກ ປະຕິວັດນຳພາ.

ປະຈຸບັນຊົນເຜົ່າຕຼີ ຕັ້ງຖິ່ນຖານບ້ານຊ່ອງຢູ່ບັນດາແຂວງພາກກາງຂອງ ສ.ປ.ປ.ລາວ ຄື:ແຂວງ ຄຳມ່ວນ ແລະແຂວງ ສະຫວັນນະເຂດ. ຊົນເຜົ່າຕຼີ ນອກຈາກມີຢູ່ ສ.ປ.ປ.ລາວ ແລ້ວຍັງມີຢູ່ ສ.ສ.ຫວຽດນາມ ຄື: ຢູ່ແຂວງ ກວາງບິ ແລະອື່ນໆ.

ພົນລະເມືອງ ຂອງຊົນເຜົ່າຕຼີ ມີ 21.395 ຄົນ, ຍິງ10.636 ຄົນ, ເທົ່າກັບ 0,5% ຂອງພົນລະເມືອງທົ່ວປະເທດ (ຕາມສະຖິຕິການສຳຫຼວດພົນລະເມືອງ ຄັ້ງທີ II ປີ 1995).

ຊື່ເອີ້ນ:

ຊົນເຜົ່ານີ້ ເອີ້ນຕົນເອງວ່າ: "ບຮູຕຣິ"ຊົນເຜົ່າອື່ນເອີ້ນເຂົາເຈົ້າວ່າ: "ຕຼີ" ແລະ "ເຈຣິ", ຊື່ທີ່ ເຂົາເຈົ້າມັກ ແລະໃຊ້ທາງການໃນປະຈຸບັນແມ່ນ ຊົນເຜົ່າ "ຕຣິ".

ພາສາ:

ຊົນເຜົ່າ "ຕຼີ" ມີພາສາປາກເວົ້າທີ່ຈັດເຂົ້າໃນໝວດພາສາມອນ-ຂະແມ, ພວກເຂົາເຈົ້າບໍ່ມີ ຕົວໜັງສືຂຽນ, ພາສາປາກເວົ້າຂອງ ຊົນເຜົ່າຕຼີ ຄ້າຍຄືກັບພາສາປາກເວົ້າ ຂອງຊົນເຜົ່າມະກອງ, ກະຕາງ, ຊ່ວຍ, ຕະໂອ້ຍ, ປະໂກະ, ກາໂດ, ກາໄນ ເຂົາເຈົ້າສາມາດເວົ້າພາສາຂອງບັນດາຊົນເຜົ່າດັ່ງກ່າວ, ພາສາລາວ ແລະພາສາຕ່າງປະເທດ ໄດ້ດີ, ເຊິ່ງມີຄວາມສະດວກໃນການພົວພັນແລກປ່ຽນເສດຖະກິດ ແລະວັດທະນະທຳກັບບັນດາຊົນເຜົ່າເຫຼົ່ານັ້ນໄດ້ດີ.

ຮີດຄອງປະເພນີ, ຄວາມເຊື່ອຖື ແລະວັດທະນະທຳ-ສັງຄົມ :

ຊົນເຜົ່າຕຼີ ມີຮີດຄອງປະເພນີທີ່ໜາກໜາຍ ອຸດົມສົມບູນ. ພວກເຂົາເຈົ້າມີຄວາມນິຍົມໃນການເຊື່ອຖື 2 ຢ່າງເຊັ່ນ: ພວກທີ່ຢູ່ທົ່ງພຽງ ມີຈຳນວນໜຶ່ງ ໄດ້ມີການເຊື່ອຖືພຸດທະສາສະໜາ ແລະເຊື່ອຖືຜີ,ສ່ວນພວກທີ່ຍັງດຳລົງຊີວິດຢູ່ເຂດຫ່າງໄກສອກຫຼີກນັ້ນ ແມ່ນໄດ້ເຊື່ອຖືຜີປະເພດຜີທີ່ເຂົາເຈົ້າເຊື່ອຖືນັ້ນມີ 8 ຜີ ເຊັ່ນ: ຜີບັນພະບູລຸດ, ຜີພໍ່, ແມ່, ອ້າຍ, ນ້ອງ, ລູກ. ຖ້າບໍ່ເຮັດລະປຶບ ແມ່ນພົວພັນເຖິງການແຕ່ງດອງບໍ່ແລ້ວ, ຂຶ້ນເຮືອນພໍ່ເຖົ້າບໍ່ໄດ້, ຜີຟ້າ, ຜີແຖນ, ຜີໝໍ, ຜີປົວ, ຜີເຂົ້າເປັນຜີທີ່ເຮັດໃຫ້ຊົນເຜົ່າຕຼີ ເກີດລູກຢູ່ເຮືອນບໍ່ໄດ້, ຜີກະຈາດ, ຜີອາຍະຍາງແຕງ, ຜີປາເຂົ້ງ, ຜີໝາ. ໃນຄອບຄົວໜຶ່ງ ມີຫຼາຍຜີ. ມີບາງຄອບ ຄົວໄດ້ເຊື່ອຖື 4ຜີຂຶ້ນໄປ,ນອກຈາກນັ້ນແລ້ວ ຍັງມີຜີລວມ ຂອງບ້ານຄືຜີເມືອງເອີ້ນວ່າ: "ຜີມະເຫສັກ" ໃນປີໜຶ່ງ ຊົນເຜົ່າຕຼີ ໄດ້ມີພິທີກຳທີ່ພົວພັນເຖິງການຜະລິດ ເຊັ່ນ: ເວລາຈະປຸກສ້າງເຮືອນ, ໄດ້ເຮືອນແປ້ນກໍ່ຕ້ອງຈ້ຳຜີ ແລະຂ້າໝູ, ງົວ, ຄວາຍທ້ຽຈ້ຳຜີສະໜອງຜົນສຳເລັດໃນການປຸກເຮືອນ, ກ່ອນຈະຖາງປ່າເຮັດໄຮ່, ຈູດໄຮ່ເສຍຫຍ້າໄຮ່, ຮູດເຂົ້າ, ເກັບກູ້ຜົນລະປູກ, ເອົາເຂົ້າຂຶ້ນເລົ້າກໍ່ຕ້ອງຂ້າໝູ ເພື່ອຖວາຍຜີ (ຈ້ຳຜີ) ຄົນຈະເກີດລູກ, ງົວ, ຄວາຍຈະ

ເກີດລູກໃໝ່, ຈະຂາຍສັດລ້ຽງນາໆຊະນິດ ກໍ່ຕ້ອງ ຈ້ຳບອກຜີ,ໄດ້ເງິນ,ຄຳ ,ໄດ້ລູກໃໝ່ກໍ່ຕ້ອງຈ້ຳ ບອກ ຜີ. ມາຮອດປະຈຸບັນໄດ້ລຶດຜ່ອນລົງສ່ວນໃດສ່ວນ ໜຶ່ງແລ້ວ.

ດ້ານສິລະປະວັນນະຄະດີ, ຊົນເຜົ່າຕູ້ໄດ້ ມີສິລະປະວັນນະຄະດີພື້ນເມືອງຫຼາກຫຼາຍ ທີ່ ມີຄຸນຄ່າອັນປະເສີດ ມາແຕ່ບູຮານນະການເປັນ ຕົ້ນ ກອນຂັບລຳສະເນີດ, ຄຳສຸພາສິດ, ຄຳພະ ທຍາ, ມີເຄື່ອງດົນຕີພື້ນເມືອງ ຫຼາຍຊະນິດຄື: ຄ້ອງ, ກອງ ,ຄ້ອງລາ,ຄ້ອງຈູ້ມ, ຄ້ອງນຸມ, ແຄນ ແລະມີ ພື້ນບູຮານຂອງປະຊາຊົນຢ່າງອຸດົມສົມບູນ. ຊົນ ເຜົ່າຕູ້ໄດ້ມີພວກເຖົ້າແກ່, ມີລ່ຳມທີ່ເປັນເຈົ້າຮີດ ຄອງຂອງແຕ່ລະບ້ານເຖົ້າແກ່ນັ້ນເປັນຜູ້ຄວບຄຸມ ກຸມຄົນໃນຕະກຸນຂອງໃຜລາວ ເພື່ອສຳພັນກັບຕະ ກຸນອື່ນໃນເວລາງານບຸນ ແລະຄົນເສຍຊີວິດ.

ຊົນເຜົ່າຕູ້ ໄດ້ມີຊັ້ນຄົນ, ປັນຍາຊົນ, ຜູ້ຊົງ ຄຸນວຸດທິ, ເຈົ້າກົກ, ເຈົ້າເຫຼົ່າທີ່ມີບົດບາດອິດທິພົນ ອັນສຳຄັນຕໍ່ຊາວບ້ານ. ນອກຈາກພິທີກຳທີ່ພົວພັນ ໃນການຜະລິດ ແລະການດຳລົງຊີວິດ ໃນປີໜຶ່ງ ແລ້ວເຂົາເຈົ້າ ຍັງເຮັດບຸນປີໃໝ່ ຊຶ່ງເອີ້ນຕາມພາ ສາຂອງເຂົາເຈົ້າວ່າ: “ ບຸນຈາງະ ” ແລະໄດ້ເຮັດ ບຸນລະປົບ ເພື່ອທານຫາຜູ້ທີ່ ເສຍຊີວິດ.

ລັກສະນະເຮືອນ ຂອງຊົນເຜົ່າຕູ້ ເປັນ ເຮືອນຮ້ານນ້ອຍສອດຄ່ອງກັບຂະໜາດຄອບຄົວ. ການຈັດວາງໃນຫ້ອງເຮືອນຄື: ມີເຕົາໄຟ, ຫ້ອງ ນອນຂອງພໍ່, ແມ່, ຫ້ອງນອນຂອງແຂກ ແລະຫ້ອງ ນອນຂອງລູກຊາຍທີ່ບໍ່ທັນແຕ່ງດອງ, ສ່ວນລູກ ສາວໃຫຍ່ແຕ່ບໍ່ທັນໄດ້ເອົາຜົວ ແມ່ນໄປນອນຢູ ເຮືອນແມ່ຮ້າງນາງໝ້າຍຄືກັນກັບຊົນເຜົ່າມະກອງ.

ສຳລັບເອກະລັກການນຸ່ງຫົ່ມເອ້ຢ້ອງ, ກ່ອນໜ້ານີ້ປະມານ 100 ປີ ຜູ້ຊາຍຂອງຊົນເຜົ່າຕູ້ ແມ່ນຈົ່ງຜົມຍາວ, ເກົ້າຜົມຄືກັບແມ່ຍິງ ເໝືອນກັນ ກັບບັນດາຊົນເຜົ່າໃນໝວດພາສາມອນ-ຂະແມ ຢູ່ບັນດາແຂວງພາກໃຕ້, ບ່ອງຫູໃສ່ຕ້າງທີ່ເຮັດ ດ້ວຍເງິນແລະກົ່ວ, ເກົ້າຜົມຖືກະຈອນ, ໃສ່ປອກ ແຂນ, ໃສ່ໝາກຕຸ້ມໃສ່ຄໍ, ໝາກປົດ ແລະອື່ນໆ, ຕັດແຂ້ວບໍ່ວ່າຍິງ-ຊາຍ, ແຕ່ຮີດຄອງປະເພນີ ດັ່ງ ກ່າວນັ້ນ ໄດ້ມີການປ່ຽນແປງ ຕາມແຕ່ລະປະຫວັດ ສາດ. ມາຮອດປະຈຸບັນວັດທະນະທຳ ການນຸ່ງຖື ເອ້ຢ້ອງບໍ່ຄ່ອຍປະກົດເຫັນຢ່າງຊັດເຈນ ແລະເຂົາ ເຈົ້າຫັນມານຸ່ງຖືແຕ່ງກາຍ ຄືກັນກັບຊົນເຜົ່າຜູ້ໄທ.

ຊົນເຜົ່າຕູ້ມີຄວາມນິຍົມເຂົ້າໜຽວ, ແກ ທີ່ມີລົດຊາດເຜັດ ແລະເຄັ້ມ, ໃນເວລາມີແຂກ ນອນແວ່ຢ່າມແມ່ນໃຫ້ແຂກກິນເຂົ້າກ່ອນ ແລະ ດື່ມເຫຼົ້າໄຫ, ເຫຼົ້າເດັດ. ເຂົາເຈົ້າໄດ້ມີຂໍ້ຫ້າມ ແລະ ຄະລຳບໍ່ໃຫ້ວາງພາເຂົ້າຊິ່ຄີ່ເຮືອນ.

ຊົນເຜົ່າຕູ້ ໄດ້ມີເຄື່ອງໃຊ້ໃນຄອບຄົວ ຫຼາຍຊະນິດຄື: ບັ້ງໄມ້ສຳລັບຫຼາມຂອງກິນ, ກະ ໂປະໜາກພ້າວ, ຫອຍກີ້, ໄມ້ຊອດເຮັດບ່ວງຊົດ ແກ, ພາຫະນະ ແລະວິທີການຊົນສິ່ງແມ່ນເປ້ໃສ່ ຫຼັງ, ຫາມ, ຫາບ, ພາຍ... ກ່ຽວກັບເຄື່ອງມືການຜະ ລິດແມ່ນຄືກັນກັບຊົນເຜົ່າມະກອງ ສະໄໝບູຮານ ມາຮອດປະຈຸບັນມີຫຼາຍດ້ານ ໄດ້ມີການປ່ຽນແປງແລ້ວ.

ໃນສັງຄົມຂອງຊົນເຜົ່າຕູ້ ຜູ້ຊາຍສາມາດ ເອົາຫຼາຍເມຍໄດ້ ຈົ່ງເຮັດໃຫ້ຄອບຄົວເປັນລັກສະ ນະຄອບຄົວໃຫຍ່. ໂດຍແມ່ນຜູ້ຊາຍເປັນຜູ້ມີອຳ ນາດ ໃນການບໍລິຫານຄອບຄົວ. ກ່ຽວກັບປະເພນີ ການແຕ່ງດອງ ຂອງຊົນເຜົ່າຕູ້ ແມ່ນເລີ່ມແຕ່ອາຍຸ 13 ປີ ໄດ້ມີການພົວພັນ ຕາມແບບຊູ້ສາວຢ່າງເສລີ ແຕ່ເມື່ອມັກຮັກກັນແລ້ວ ກໍ່ຫາໝູ່ຄູ່ບອກພໍ່, ແມ່, ຖ້າຫາກພໍ່, ແມ່ເຫັນດີກໍ່ແຕ່ງລ່ຳມ ຫຼືເຂີຍໄປປະ ສານງານກັບພໍ່, ແມ່ຂອງຍິງສາວແລ້ວຈົ່ງຄ່ອຍຕົກ ລົງກັນຫາມື້ສັນວັນດີແຮ່ເຈົ້າສາວ ໄປເຮືອນເຈົ້າ

ບ່າວ ເພື່ອໃຫ້ຜີເຮືອນຮັບຮູ້. ຖ້າເວົ້າກັນຖືກຕ້ອງ ຝ່າຍເຈົ້າສາວກໍ່ມອບລູກສາວໃຫ້ເຂີຍ ແລະນັດວັນເວລາແຕ່ງດອງ, ໃນຊ່ວງໄລຍະນັ້ນລູກສາວ, ລູກເຂີຍ ແລະດອງທັງສອງຝ່າຍຂຶ້ນເຮືອນກັນບໍ່ໄດ້ ພ້ອມໃຫ້ເຂີຍກະກຽມງົວ, ຄວາຍ, ໝູ, ໄກ່ ແລະຄ່າ ດອງສິນສອດມີ, ດາບ, ພະເໜາະ, ຝັ້ງຮາດ, ຄ້ອງ ,ກອງ, ເງິນຄ່າດອງ, ຖ້ວຍ, ຝ່າຍລຸງຕາ ກະກຽມເຫຼົ້າ, ເຂົ້າ, ເຂົ້າຕົ້ມ, ເຂົ້າໜົມ.

ຮອດມື້ດອງ, ເຈົ້າບ່າວ-ເຈົ້າສາວ ຝ່າຍເຈົ້າໂຄດກໍ່ເມືອແຕ່ງດອງຢູ່ ເຮືອນລຸງຕາ ແລະໃນເວລານັ້ນຝ່າຍ ລຸງຕາກໍ່ເຮັດຮີດມາຄຽນ ແລະສັ່ງສອນເຈົ້າບ່າວ ເພື່ອໃຫ້ເຈົ້າບ່າວເປັນຄົນດຸໝັ່ນ, ເຄົາລົບນັບຖື, ມີຄວາມສັດຊື່, ບໍ່ຂີ້ຄ້ານ, ຊ່ວຍເຫຼືອເບິ່ງແຍງ ແລະຮັກແພງເມຍຂອງຕົນເອງ, ຖ້າເມຍບໍ່ດີໃຫ້ ສັ່ງສອນ, ຖ້າສັ່ງສອນ ບໍ່ໄດ້ກໍ່ໃຫ້ສົ່ງຄືນໃຫ້ ລຸງຕາ.

ເມື່ອແຕ່ງດອງແລ້ວເມຍຕ້ອງເມືອຢູ່ ເຮືອນນຳຜົວ ຖ້າເມືອເຮືອນຂອງພໍ່, ແມ່ຂອງຕົນເອງ ກໍ່ຕ້ອງໄປໃນຖານະແຂກ. ຊົນເຜົ່າຕູ້ມີປະເພນີສືບເມຍກັນເປັນຕົ້ນຖ້າຫາກຜົວຕາຍ ກໍ່ຕ້ອງເອົາອ້າຍ ຫຼືນ້ອງຊາຍ ຫຼືພໍ່ຂອງຜົວ. ຖ້າບໍ່ຢາກສືບ ລຸງຕາຕ້ອງຈ່າຍຄ່າດອງເທົ່າກັບ ຄ່າດອງທີ່ຜົວໄດ້ມອບໃຫ້ລຸງຕາໃນເບື້ອງຕົ້ນ.

ຊົນເຜົ່າຕູ້ ເຖິງວ່າໄດ້ປະຕິບັດຕາມລະບອບສືບເມຍຂອງກັນ ແລະກັນກໍ່ຕາມແຕ່ຍັງມີການຢ່າຮ້າງ ບາງກໍລະນີທີ່ຈຳເປັນເຊັ່ນ: ກໍລະນີຝ່າຍຜົວຢາກປະຮ້າງເມຍແມ່ນສິ່ງ ໃຫ້ເຈົ້າໂຄດລຸງຕາ, ຖ້າແມ່ນເມຍຜິດແຕ່ຜົວຢາກຮ້າງເມຍ, ເມຍຕ້ອງຈ່າຍຄ່າດອງໃຫ້ຜົວຄືນຕາມຈຳນວນ, ຖ້າຜົວຫຼົ້ນສາວຕ້ອງການຢາກເອົາເມຍຕື່ມເຂີຍ ຕ້ອງເສຍຄ່າດອງໃຫ້ລຸງຕາ ໂດຍແມ່ນຄວາຍ 1 ໂຕ ແລະເງິນ 1 ຮາງ ແລ້ວກໍ່ເອົາເທົ່າໃດເມຍກໍ່ໄດ້.

ເມື່ອຄົນໃນເຮືອນ ມີການເຈັບເປັນກໍ່ປິ່ນປົວດ້ວຍການເຢົາ, ບະຜີ, ເຢົາຜີ, ໃຊ້ເວດມົນກິນກະຖາ ແລະປິ່ນປົວດ້ວຍກິນຢາພື້ນເມືອງ. ສຳລັບການບະຜີ ແມ່ນຂຶ້ນກັບປະເພດຜີ, ແຕ່ຖ້າຫາກຜູ້ນັ້ນເສຍຊີວິດ, ຜູ້ຍັງໂດຍສະເພາະແມ່ນພີ່ນ້ອງຊັ້ນຈຳ ກໍ່ມີການຮ້ອງໄຫ້ອາໄລຫາຕໍ່ຜູ້ຕາຍ ເຊິ່ງຕ້ອງດຳເນີນແຕ່ຜູ້ນັ້ນໃຈຂາດຈົນຮອດມື້ສົ່ງສະການ ໃນເມື່ອກ່ອນແມ່ນຝັງ ແຕ່ປະຈຸບັນພວກທີ່ຕັ້ງພູມລຳເນົາຢູ່ເຂດທົ່ງພຽງ ມີຈຳນວນໜຶ່ງ ກໍ່ຈຸດ, ຖ້າແມ່ນຜູ້ຮັ່ງມີກໍ່ເອົາສົບໃສ່ໂລງດອຍໄວ້ຢູ່ກະລ່ຽງເຮືອນ, ຄົບງັນເຮັດລະປຶບແລ້ວຈຶ່ງຄ່ອຍໄປຝັງ, ແຕ່ກໍລະນີຜູ້ທຸກຍາກ ແມ່ນໄປຝັງກ່ອນເຮັດລະປຶບຕາມຫຼັງ. ການເຮັດລະປຶບ ຕ້ອງມີສະບຽງອາຫານປະເພດຕ່າງໆຄື: ງົວ, ຄວາຍ, ໝູ, ແບ້, ໝາ, ໄກ່, ເຂົ້າ, ເຫຼົ້າ, ເຂົ້າຕົ້ມ, ເຂົ້າໜົມ, ໝາກກ້ວຍ ,ແຕ່ກ່ອນເວລາເຮັດລະປຶບໄດ້ເອົາກະດູກຄົນຕາຍໃສ່ໂລງ, ແຕ່ປະຈຸບັນໄດ້ເອົາຂີ້ດິນແທນກະດູກໃສ່ໂລງແລ້ວມາຄົບງັນຢູ່ແຄມບ້ານຄືນໜຶ່ງ, ມື້ທີ່ສອງກໍ່ເອົາເຂົ້າໃນບ້ານມີການຕີຄ້ອງ, ຕີກອງ, ພະເໜາະ, ຝັ້ງຮາດ, ສາມວັນຄືນ ແລະມີການຂ້າຄວາຍ, ງົວ, ໝູ, ຕອນແລງຂອງມື້ທີສາມ ຈຶ່ງເອົາໂລງຈຳລອງໄປຝັງຢູ່ປ່າຊ້າ.

ປະເພນີການເກີດລູກ ຂອງຊົນເຜົ່າຕ່ຽ ແມ່ນໄດ້ປະຕິບັດຕາມຂັ້ນຕອນຄື: ເມື່ອຕັ້ງທ້ອງກໍ່ຕ້ອງໄປອອກແຮງງານບໍ່ໃຫ້ນອນຫຼາຍ, ໃຫ້ທ້ອງຄອນ ເພື່ອໃຫ້ເກີດລູກງ່າຍ ແລະໃນຊ່ວງໄລຍະເມຍຖືພາຜູ້ເປັນຜົວ ຈະບໍ່ໄດ້ຂ້າສັດຕັດຊີວິດ, ຂ້າປາຄໍ່, ໄກ່, ໝູ, ງົວ, ຄວາຍ ຢ້ານລູກເກີດມາຈະເປັນແສດເປັນຈອນ. ໄລຍະຖືພາເມຍຕ້ອງຄະລຳອາຫານປະເພດຕ່າງໆຄື: ປີກ້ວຍ, ໝູ, ງົວ, ຄວາຍຕາຍຢ້ານເວລາລູກເກີດມາຈະເປັນລີ້ງ, ທະນີ, ຂາແດ, ລິ່ນ, ແລນ, ຕຸ່ນ, ອ່ຽນ, ໄຂ່ມັນ ນາໆຊະນິດ ແລະຈະເກີດ ລູກຍາກ.

ແຕ່ກ່ອນສະຖານທີ່ເກີດລູກ ແມ່ນຢູ່ປ່າ ຕາມຂີ້ດິນ ແຕ່ປະຈຸບັນເມື່ອເມຍຖືພາແລ້ວຜູ້ເປັນຜົວກໍ່ຕ້ອງເຮັດຕູບໃຫ້ເມຍ ເກີດລູກຢູ່ນອກບ້ານ ແລະເວລາເກີດໃຫ້ໄປເກີດຢູ່ຕູບນັ້ນຈົນ ຮອດສາມວັນຈຶ່ງຂົ້ນເຮືອນ ແຕ່ກ່ອນຈະເອົາຂົ້ນເຮືອນ ຕ້ອງຈ້ຳຜີເສຍກ່ອນ.

ເວລາເກີດລູກທຳອິດ ແມ່ນໃຫ້ກິນເຂົ້າກັບເກືອປະມານ 3 ວັນ ຈຶ່ງກິນອາຫານປະເພດປາເກັດ, ໄກ່ ນອກນັ້ນຍັງຄະລຳສັດປ່າ, ສັດນ້ຳຄື: ນົກ, ລິ່ນ,ແລນ, ຟານ, ອົ້ນ, ຕຸ່ນ, ປາຝາ, ເຕົ່າ, ງູ, ປາໜັງ, ປາຫາງແດ ເຊິ່ງຕ້ອງໄດ້ຄະລຳເຖິງສາມເດືອນຂົ້ນໄປ.

ການເບິ່ງແຍງໃນເວລາກ່ອນລູກ ໃນເມື່ອກ່ອນແມ່ນແມ່ຍິງເບິ່ງກັນເອງ. ສະນັ້ນຈຶ່ງໄດ້ອະນຸຍາດ ໃຫ້ຜູ້ຊາຍເອົາຫຼາຍເມຍ ເພື່ອໃຫ້ແມ່ຍິງເບິ່ງກັນເອງ ແລະຄ້ຳກຳໃນເວລາເກີດລູກໃໝ່, ແມ່ຂອງເດັກເປັນຜູ້ຕັດສາຍແຮ່ ໂດຍແທກເອົາຫົວເຄ່ົາຂອງເດັກເກີດໃໝ່ຜູກໄສ້ແລ້ວກໍ່ຕັດດ້ວຍຄົມໄມ້ຟາງ.

ເມື່ອເດັກເກີດອອກມາແລ້ວ ໃຫ້ອາບນ້ຳອຸ່ນ, ໄດ້ສາມວັນເລີ່ມປ້ອນອາຫານໃຫ້ລູກ ແລະໄດ້ລ້ຽງລູກດ້ວຍນ້ຳນົມຮ້ອຍສ່ວນຮ້ອຍ. ຖ້າຜູ້ໃດລ້ຽງລູກຍາກຕ້ອງດຳເນີນພິທີຕາມຮີດຄອງ ໂດຍເອົາເດັກເກີດໃໝ່ໃສ່ກະດົ້ງ, ເອົາຂ້ຽງຜັກ, ຂ້ຽງເປົ່າ, ບອກຜີມາກິນໃນຂະນະນັ້ນ ຖ້າກາຍມື້ນັ້ນແມ່ນບໍ່ໃຫ້ຜີກິນ, ບໍ່ໃຫ້ຜີເອົາໄປ ແລະກໍ່ຈ້ຳຜີເຂົ້າເຮືອນ.

ການສອນລູກສ່ວນຫຼາຍ ຖ້າແມ່ນລູກແມ່ຍິງ ແມ່ນໃຫ້ຢູ່ໃນໂອວາດຂອງພໍ່, ແມ່, ເຖົ້າແກ່, ສາມສາດ ແລະປັ້ນໝໍ້, ສະເພາະຜູ້ຊາຍ ກໍ່ສອນໃຫ້ເຮັດໄຮ່ໄຖນາ, ຖາກໄມ້ເຮັດເຮືອນ ແລະອື່ນໆ.

ການດຳເນີນຊີວິດທາງດ້ານເສດຖະກິດອາຊີບຕົ້ນຕໍຂອງຊົນເຜົ່າຕ່ຽ ແມ່ນຖາງປ່າເຮັດໄຮ່ ປູກເຂົ້າໜຽວ, ເກັບເດັດ, ລ່າເນື້ອສັດປ່າ, ຫາປາຕາມທຳມະຊາດ, ລ້ຽງສັດປະເພດ: ງົວ, ຄວາຍ, ໝູ, ໝາ, ແບ້ ແລະລ້ຽງສັດປີກ, ປູກພືດຊະນິດຕ່າງໆ ແຕ່ມາເຖິງປະຈຸບັນ ຊົນເຜົ່າຕ່ຽ ຢູ່ຫຼາຍບ່ອນໄດ້ຖືການເຮັດນາປູກເຂົ້າໜຽວ ເປັນອາຊີບຫຼັກ, ປູກສາລີ, ເຜືອກມັນນາໆຊະນິດເປັນສຳຮອງ. ນອກຈາກນັ້ນຍັງບໍ່ໄດ້ລິດລະໃນວິຊາຫັດຖະກຳຈັກສານ, ຕ່ຳຫູກ, ປັ້ນໝໍ້, ຫຼໍ່ໄຫ ແລະມີຄວາມຊຳນານໃນວິຊາຕີເຫຼັກ ເພື່ອເຮັດເຄື່ອງມືການຜະລິດ ແລະເຄື່ອງໃຊ້ສອຍໃນຄອບຄົວຕ່າງໆ.

Tri

Historical background:

The Tri migrated from the regions of Burma and Thailand many centuries ago. They were powerful economically, militarily, and culturally until the Revolutionary Party of Laos took over as the central power.

Presently, the Tri live in the central provinces of Khammuan and Savannakhet. Apart from living in Laos, the Tri also live in Vietnam in such provinces as Quang Binh.

The total population of the Tri people is about 22,000, of which 11,000 are females according to the second population census done in 1995.

Name and language:

They refer to themselves as "Tri". This is the name they prefer and is their official name. They have also been known as the So Tri or Cali.

Their language is as a member of the Mon-Khmer language group, and is placed on the Katuic branch by linguists, and is similar to that of the Makong, Katung, Xuay, Pah Koh, Kado, and Kanai people. Tri can often speak some of these languages and usually can speak the Lao language.

Society, beliefs, ceremonies and myths:

The Tri people have a variety of customs and traditions. Those living in the plain areas believe in Buddhism and some animistic spirits, while those living in remote areas still believe in many spirits such as the spirits of their dead ancestors, parents, brothers, sisters and children. Also spirits the heavens, nursing, rice, fish and dogs are some of the other spirits that are worshipped. There are many spirits among the household, and it varies between families in how many spirits are worshipped. In addition, there is a common spirit of the village and district called a Mahaesak.

The Tri also have rituals related to daily production. For example, when the Tri build a house using wooden planks they will first worship the spirits and offer a sacrifice such as pig or buffalo. Before slashing and burning land or harvesting and carrying rice to the storehouse, they kill a pig to offer as a sacrifice to the agricultural spirits. Tri people also worship and give thanks to spirits when they earn some money

or find some gold. Also, the birth of a baby leads to a feasting ceremony, but lately some of the festivities have been reduced.

The Tri have social strata with village intellectuals, prominent figures, plus tribal and clan heads (chaokok and chaolao) that are influential in the village. In addition to feasts and rituals related to agricultural production during the year, there is also the New Year feast, called the Cha Nga festival in the Tri language. There is also the Lapeup feast to convey worship to the dead.

In Tri society, men can have many wives which lead to large extended families. Particularly, men have most of the power in managing the family. Marriage for the Tri can take place at about 13 years of age. Young people have freedom in choosing their mates and when they fall in love, they ask a close friend to tell their parents. If the young man's parents agree with his choice, a coordinator (loongta) or a son in law is sent to talk with the girl's parents. If both sides agree, a day is chosen for the bride to proceed to the groom's house to worship their household spirit. If all wedding matters are agreed upon, the wedding day is chosen. The groom prepares a dowry of cattle, buffalo, pigs, and chickens. Also included in the dowry are swords, gongs, drums, dishes and bowls. The bride's relatives prepare alcohol, steamed rice in banana leaves and candies for the wedding feast.

On the wedding day, the bride and groom go to the *l*oongta's house (marriage coordinator) to organize a wedding ceremony. The loongta performs a customary rite by gesturing around the couple's head and gives advice to the groom to become laborious, respectful, honest, as well as love his bride dearly. If the wife has faults, the husband must educate her, but if this education does not succeed, then the husband can return his wife to the loongta.

After the wedding, the wife stays at the husband's house. The Tri have a tradition of succession of wives. If a wife's husband dies, she then becomes the wife of her husband's brother or father. If she is not willing to do so, the loongta must return the complete dowry to the husband's family.

Despite this practice, divorce sometimes does occur in Tri society. If the husband wants to divorce his wife, he must return her to the *loongta*. If the wife commits an offence and the husband wants a divorce from her, the wife has to return the full dowry to the husband. If the husband has another woman and wants to take this woman has his second wife, the husband

must pay to the *loongta* one buffalo plus money, then he his allowed to have as many wives as he can afford.

If a member of the household becomes ill, animist sacrifices to the spirits, chants of spells and charms, plus offers of traditional herbs are offered in attempt to heal the sick. The sacrifice depends on the type of spirit that needs worshipping. If a person dies, family members will cry from the time of death until the day of funeral. Previously, the funeral consisted of burying the dead. However, Buddhist influence has lead to the burning of the dead in a coffin. If the deceased was a wealthy member of the village, the body is laid in a coffin that is placed under the house. Then the Lapeup feast occurs before the coffin is buried. If the deceased happens to be poor, the Lapeup feast will take place later. Buffalo, pigs, goat, dog, chickens, rice, alcohol, rice steamed in banana leaves, candies, and fruit will be consumed at a Lapeup feast. Nowadays, the body is generally first burned. Soil is put into the coffin, and one day of feasting occurs at the edge of the village. On the second day, the coffin is carried into the village lead by a procession of drums and gongs beating for three days and three nights. During this time a buffalo, cattle, and pigs are sacrificed and the coffin, which contains only soil, is buried in the cemetery during the afternoon of the third day.

Birthing tradition of the Tri ethnic people dictate that when a woman is pregnant she is not allowed to sleep much and she has to labor a lot in the fields. This is done in the belief that she can physically give birth more easily. During pregnancy, the husband is forbidden from killing living animals such as fish, chickens, pigs, and other large animals out of fear that the newborn may be born deformed. In addition, during pregnancy the woman is prohibited from eating foods such as bananas, pork, beef, and buffalo meat in fear she may give birth to a monkey, pangolin or numerous other local animals. This is also meant to prevent a physically difficult birth.

Traditionally, birth took place in the forest on the ground. More typical today the husband builds a small hut outside the village for his wife to give birth. She will be allowed to enter the regular house three days after giving birth. Before she enters, an animist sacrifice to the household spirits must take place first. Previously, assisting the pregnant mother during birth was done by other women in the household; therefore, men were allowed to have many wives for this purpose. The mother cut the umbilical cord herself using a sharp piece of bamboo.

The newborn is bathed in warm

water, starts feeding from the third day, and is only breast-fed. If there are difficulties in nursing, the child in put in a rice-polishing basket (kadong), and vegetables are placed on a chopping board where the spirits are invited to come and eat. The mother eats only rice and salt for the first three days after giving birth, after this time she can eat food cooked from wild animal such as deer, fish, and birds.

In regard to teaching children, girls must obey her parents and elderly people. She learns skills such as weaving and pottery. Boys are taught to plough fields, upland rice farming, and wood-skills for to making a house and other related things.

The Tri have a variety of traditional and skilled arts that they have practiced from early times. Some of these for example are the rhyming *Sanerd* chants, proverbs, and the story telling of abundant folk tales. They also have a variety of traditional musical instruments such as the gong, drum, flute and stringed instruments. The Tri have elderly people called the larm who lead customary rituals.

Village and house:

Housing of the Tri people is characterized by building a small house on piles to suit the family size. Inside their house, there is a fireplace, the parents' bedroom, a bedroom for the guests and a bedroom for single sons. Single grown daughters will sleep at the house of a widow. This custom is similar to the Makong people.

Costume:

As far as dress and ornaments are concerned, about a century ago the Tri men kept their hair long and tied up like women's hair. Also similar to other Mon-Khmer people in the southern provinces, they pierced a large hole in their ears to wear earrings made of silver and tin. They wore hat called a *kachorm*, and wore bracelets and necklaces of silver and tin. Both men and women cut their teeth to sharp points, but this is not common today. Today, this culture of dress and ornamentation is not practiced much anymore. The Tri now tend to dress in typical Lao commercial clothing.

Agriculture and livelihood

The main occupation of the Tri is slash-and-burn cultivation of rice. Hunting, fishing, and foraging in the forest are also important. They also raise animals such as cattle, buffaloes, pigs, dogs, goats and poultry. In addition, various crops are grown such as maize, taro and various root crops. They do well in handicraft, plus weaving and pottery. The men and have simple blacksmith skills to produce production tools and household consumer goods.

ຊົນເຜົ່າຕູມ

ປະຫວັດຄວາມເປັນມາ:

ຕູມ ແມ່ນຊົນເຜົ່າໜຶ່ງທີ່ໄດ້ຕັ້ງພູມລຳເນົາ ຢູ່ບາງເຂດຂອງແຜນດິນລາວ ໂດຍສະເພາະໃນ ປະຈຸບັນ ນີ້ພວກເຂົາເຈົ້າ ໄດ້ຕັ້ງຖິ່ນຖານບ້ານເຮືອນ ຢູ່ເຂດຈຸດສຸມ ຕາແສງຍອດນ້ຳ ທີ່ຂຶ້ນກັບເມືອງ ຄຳ ເກີດ, ເມືອງ ປາກກະດິງ, ບໍລິຄັນ ແລະເມືອງ ວຽງ ທອງຂອງແຂວງ ບໍລິຄຳໄຊ, ຊົນເຜົ່າຕູມມີປະຫວັດ ການເຄື່ອນຍ້າຍມາຈາກ ໜອງແສແສນຍ່ານ ປະເທດ ຈີນ ຕັ້ງຢູ່ປະຈຸບັນ ລອງ ລົງມາຕາມລຳແມ່ນ້ຳ ຂອງ ແລະບາງພວກ ກໍ່ໄດ້ເຂົ້າມາ ຫວຽດນາມ ໂດຍ ຜ່ານເມືອງ ແທງເຈືອງ, ເມືອງ ກວານກວາງ ແລະ ເຂດອື່ນໆ ຂອງແຂວງ ເຫ້ງອານ ເຂົ້າມາຕັ້ງຫຼັກປັກຖານ ຢູ່ບໍລິເວນເຂດ ເມືອງຈຳ ໃນລາຊະການຂອງ ເຈົ້າຟ້າງຸ່ມປົກຄອງ, ອານາຈັກລ້ານຊ້າງເມື່ອ ພ.ສ 1353-1373. ເປັນຜູ້ນຳພາມາ ແມ່ນຈູ້ມເຈົ້ອຂອງ ສຸລິຍະ ຕັ້ງບ້ານເຮືອນໄດ້ 3 ປີແລ້ວ ກໍກັບຄືນເມືອ ຫວຽດນາມ ອີກເທື່ອໜຶ່ງ, ຂາກັບຈາກ ຫວຽດນາມ ມາເມືອງລາວ ກໍ່ໄດ້ນຳເອົາຈູ້ມເຈົ້ອ ຂອງພະພິມ ມະວົງສາ ມາພ້ອມຕໍ່ຈາກນັ້ນຫຼາຍປີກໍ່ໄດ້ມີ 4 ອ້າຍ ນ້ອງຈາກ ຫວຽດນາມ ມາປົກຄອງເຂດ ດັ່ງ ກ່າວຄື: 1. ທ້າວ ຕົງກະລົມ ໄປປົກຄອງທາງຍອດ ນ້ຳ ສະໂງ້ຍ.

2. ທ້າວ ຕົງນາມ ແລະຕົງໄຊໄປປົກຄອງ ທາງເມືອງຈຳ.

3. ຜູ້ທີ່ສີ່ນ້ອງຊາຍ (ບໍ່ຮູ້ຊື່) ໄປປົກຄອງ ຢູ່ ທາງ ເມືອງນ້ອຍເຂດເມືອງວຽງທອງຢູ່ປະຈຸບັນ.

ໃນລະຫວ່າງ ປີ ຄ.ສ 1891 ເຊິ່ງແມ່ນໄລ ຍະຝຣັ່ງເສດປົກຄອງອິນດູຈີນ ໄດ້ມີຊົນເຜົ່າຕູມ ຈາກແຂວງ ເຫ້ງອານ ສ.ສ ຫວຽດນາມ ເຂົ້າມາ ຕື່ມຊື່ວ່າ ທ້າວ ກວຸ່ຍ ເປັນຜູ້ນຳພາຂະບວນມາຕັ້ງ ຫຼັກແຫຼ່ງຢູ່ເຂດເມືອງຈຳ ສົມທົບກັບພວກຢູ່ກ່ອນ. ຊົນເຜົ່າຕູມ ຍັງມີຢູ່ ຫວຽດນາມ ເຊັ່ນ: ຢູ່ເມືອງ ແທງ ເຈືອງ, ເມືອງ ກວານກວາງ, ເຂດແມ່ນ້ຳລີຮ່າ ແລະ ເຂດອື່ນໆ ຂອງແຂວງ ເຫ້ງອານ ແຫ່ງ ສ.ສ ຫວຽດນາມ.

ຊື່ເອີ້ນ:

ຊົນເຜົ່າຕູມ ມີຫຼາຍຊື່ເອີ້ນຄື: ຕຸມ, ປຸ້ມ, ພ້ອງ, ໄທຈຳ, ລີຮ່າ ແລະອື່ນໆ, ແຕ່ຊື່ເອີ້ນທີ່ຖືກ ຕ້ອງແທ້, ເຂົາເຈົ້າມັກເອີ້ນ ແລະຮັບຮູ້ຢ່າງເປັນ ທາງການແທ້ແມ່ນ "ຕູມ". ຕູມຢູ່ ຫວຽດນາມ ມີຊື່ ເອີ້ນວ່າ "ໂຖ", ມີຊື່ເອີ້ນຢ່າງອື່ນ ແລະບໍ່ໃຊ້ເປັນ ທາງການເຊັ່ນ: ແກວ, ກອຍໂທ, ໄຕ ປອງ, ດານໄລ ແລະລີຮ່າ ທີ່ຂຶ້ນກັບໝວດພາສາມອນ-ຂະແມ ສາຂາພາສາ ຫວຽດເມືອງ.

ສຳລັບສະຖານທີ່ຕູມ ຢູ່ປະຈຸບັນໄລຍະ ກ່ອນຝຣັ່ງເສດເຂົ້າມາປົກຄອງລາວ ກໍ່ໄດ້ເອີ້ນຊື່ ວ່າ: ພູແກ້ວ, ຖ້ຳແກ້ວ ແລະຫ້ວຍແກ້ວ, ເປັນເຂດ ທີ່ຈັກກະພັດຝຣັ່ງຮັບຮູ້ມີແຜນທີ່ພ້ອມວ່າມີແກ້ວ ທີ່ມີຄ່າລາຄາແພງຄວາມຫວັງ ຂອງພວກມັນຄື ຂຸດຄົ້ນເອົາແກ້ວ ໃນແຫ່ງນີ້ເມືອປະເທດມຸ້ນໃຫ້ ໄດ້ ແຕ່ພະຊົນລະບານຫົວໜ້າເຈົ້າກົກ, ເຈົ້າເຫຼົ່າ ຂອງຕູມຢູ່ເຂດນີ້ຮູ້ແລ້ວ ໄດ້ລະດົມປະຊາຊົນຂົນ ກ້ອນຫີນນ້ອຍ, ໃຫ່ຍອັດປາກຖ້ຳແລ້ວກົນນ້ຳສາ ບານເພື່ອຮັກສາຄວາມລັບ. ພ້ອມນັ້ນກໍ່ໄດ້ປ່ຽນຊື່ ສະຖານທີ່ແຫ່ງນີ້ວ່າ: "ຕູມ" ດັ່ງນັ້ນຊົນເຜົ່າ ໂຖເຂດ ນີ້ຈຶ່ງຊື່ວ່າ: "ຕູມ" ເທົ້າທຸກວັນນີ້.

ພາສາ:

ຊົນເຜົ່າຕູມ ມີພາສາປາກເວົ້າສະເພາະ ຂອງເຜົ່າຕົນເອງ, ບໍ່ມີຕົວໜັງສືຂຽນ, ເຂົາເຈົ້າໃຊ້ ພາສາຕູມ ໃນການສື່ສານພົວພັນກັບຊົນເຜົ່າຕົນ ເອງ, ນຳໃຊ້ພາສາລາວໃນການແລກປ່ຽນ, ການ ຊື້ຂາຍ ແລະອື່ນໆກັບເຜົ່າຕ່າງໆ. ນອກຈາກນີ້ຊົນ ເຜົ່າຕູມ ຍັງມີຄວາມສາ ມາດໃນການນຳໃຊ້ພາສາ ຫວຽດນາມ ໄດ້ຢ່າງຄ່ອງແຄ້ວຖັດຈາກພາສາຂອງ ຕົນເອງ.

ປະຈຸບັນພາສາ ຂອງຊົນເຜົ່າຕູມ ໄດ້ເຈືອ ປົນກັບພາສາລາວຍ້ອນຄວາມໃກ້ຊິດ ແລະການ ຮ່ວມວຽກງານນຳກັນ, ພາສາຂອງຊົນເຜົ່າຕູມ ຈັດ ເຂົ້າໃນໝວດພາສາ ມອນ-ຂະແມ ສາຂາພາສາ ຫວຽດເມືອງ.

ຮີດຄອງປະເພນີ, ຄວາມເຊື່ອຖື ແລະ ວັດທະນະທຳ - ສັງຄົມ :

ຊົນເຜົ່າຕູມ ມີຄວາມເຄົາລົບນັບໄຫວ້ຜີ ຢ່າງໜັກໜ່ວງ ແລະບາງຈຳນວນກໍ່ໄດ້ນັບຖືພຸດ ທະສາສະໜາ. ຄຽງຄູ່ກັບຄວາມເຊື່ອຖືດັ່ງກ່າວມັນ ໄດ້ກາຍເປັນທີ່ເພິ່ງທາງໃຈ. ຊົນເຜົ່າຕູມໄດ້ຈັດພິ ທີກຳທາງຜີກ່ອນຈະລົງມືສູ່ການຜະລິດ, ກ່ອນຈະ ເກັບກ່ຽວເຂົ້າ ແລະພາຍຫຼັງຊົນສຸດວຽກໄຮ່ການ ນາຮຽບຮ້ອຍແລ້ວ ພວກເຂົາເຈົ້າຈະເຮັດແບບ ລວມກັນໝົດບ້ານເຊັ່ນ:ການບົະຕ່າງໆ ເພື່ອຂໍ ສິ່ງສັກສິດຊ່ວຍດົນບັນດານ ໃຫ້ເຄື່ອງປູກຂອງຝັ ງອກງາມ ປະສະຈາກການທຳລາຍ ຂອງສັດຕູພືດ. ກ່ອນຈະເກັບກ່ຽວເຂົ້າຕ້ອງໄດ້ເຮັດຮີດກິນເຂົ້າ ໃໝ່, ແຕ່ໄດ້ເຮັດຢູ່ເຮືອນໃຜເຮືອນລາວ ພາຍຫຼັງ ສຳເລັດວຽກໄຮ່ ການນາແລ້ວ ພວກເຂົາເຈົ້າກໍ່ຈະ ພາກັນເຮັດບຸນໄຂປະຕູເລົ້າເຂົ້າ. ນອກຈາກນີ້ຊົນ ເຜົ່າຕູມ ຍັງຕ້ອງໄດ້ລ້ຽງຜີ ເມືອງ, ຜີບ້ານ, ຜີເຮືອນ, ຜີພໍ່ແມ່ ແລະຜີມີມ. ສ່ວນການນັບຖືສາສະໜາ ພຸດນັ້ນ ກໍ່ມີລັກສະນະວ່າ: ສາສະໜາພຸດຢູ່ວັດ, ຜີ ຢູ່ເຮືອນ ແລະການເຮັດບຸນປີໃໝ່ປະຈຳປີຄືການ ກິນເຕດຂອງເຜົ່າກໍ່ຂາດບໍ່ໄດ້. ພວກເຂົາເຮັດພ້ອມ ກັບຫວຽດນາມ.

ການແຕ່ງດອງສ້າງຄອບຄົວຄູ່ບ່າວສາວ ມີສິດຊອກຫາຄູ່ຕາມເສລີພາບ ຫຼືບາງຄັ້ງຄາວພໍ່, ແມ່ ເປັນຜູ້ ຊອກຫາໃຫ້, ເມື່ອພໍ່, ແມ່ທັງສອງຝ່າຍ ຮູ້ວ່າລູກຫຼານມີ ຄວາມຮັກມັກກັນແລ້ວ ເຂົາກໍ່ຈະ ປ່ອຍໃຫ້ຄູ່ບ່າວສາວໄປນຳກັນ ແລະຢູ່ຮ່ວມກັນ ໃນໄລຍະໃດໜຶ່ງແລ້ວ ພໍ່, ແມ່ ຂອງຝ່າຍຊາຍກໍ່ ຈະ ເອົາສິ້ນ 1 ຜືນ, ເສື້ອ1ໂຕ ຫຼືແພກໍ່ໄດ້, ແຕ່ງ ລ່ວມ 1 ຄົນຮ່ວມກັບຍາດຕິພີ່ນ້ອງຜູ້ໃກ້ຊິດຂອງ ຕົນໄປນຳເອີ້ນວ່າ:ໄປຈຸດ ໝາຍເຖິງໄປຫາບ ຫາມນຳພໍ່, ແມ່ຂອງຝ່າຍຍິງ ເພື່ອຢາກຮູ້ວ່າຝ່າຍ ຍິງພ້ອມແລ້ວ ຫຼືຍັງ, ບາງຄັ້ງຈະໄດ້ຮັບຄຳຕອບ ໃນມື້ນັ້ນ, ແຕ່ບາງຄັ້ງຈະແກ່ຍາວອອກໄປ 2-3 ວັນ ຈຶ່ງໃຫ້ຄຳຕອບ.ຖ້າຝ່າຍຍິງບໍ່ຕົກລົງເຄື່ອງຂອງທີ່ ເອົາໄປຈຸດນັ້ນກໍ່ຈະຖືກສົ່ງຄືນໝົດ ພາຍໃນກຳ ນົດ 3 ວັນ. ການແຕ່ງດອງຂອງຕູມ ກໍ່ຈະດຳເນີນ ເປັນສີ່ຂັ້ນຕອນ, ບາງຄັ້ງ, ບາງຄົນດຳເນີນສາມ ຂັ້ນຕອນໃນປະຈຸບັນນີ້ ບາງຄົນກໍ່ໄດ້ດຳເນີນເປັນ ສອງຂັ້ນຕອນ ເຊິ່ງແຕ່ລະຂັ້ນຕອນກໍ່ມີຄວາມ ໝາຍ ແລະວິທີຕ່າງກັນເຊັ່ນ:

1.ດອງນ້ຳໝັ້ງ:

ໝາຍເຖິງສອງກຳ້ສອງຝ່າຍເອົາ 3 ເຖົ້າ 4 ແກ່ ມາຕົກລົງກັນແບບງ່າຍ ຫຼືເອີ້ນວ່າພິທີສູ່ຂໍກໍ່

ໄດ້. ຝ່າຍ ຊາຍຈະເອົາໂສ້ງ, ເສື້ອ ຫຼືວັດຖຸມີຄ່າໃດ ໜຶ່ງມອບໃຫ້ ຝ່າຍຍິງ ເພື່ອເປັນຫຼັກຖານພ້ອມ ທັງຫາບຫາມຄ່າດອງ ແລະອື່ນໆ ໃນພິທີນີ້ພຽງ ແຕ່ຕົ້ມນ້ຳໝັ້ງສູ່ກັນກິນ (ໃບຊາດິບ) ຈາກນັ້ນ ກໍເລີກລາກັນ.

2.ດອງຝາກຊູ:

ດອງນີ້ຈະດຳເນີນນຳຄອບຄົວຂອງເຈົ້າ ບ່າວ ທີ່ຍັງບໍ່ທັນພຽບພ້ອມ ໝາຍເຖິງດ້ານການ ເງິນ ແລະວັດຖຸມີຄ່າຍັງບໍ່ທັນພ້ອມ, ຝ່າຍລູກເຂີຍ ຈະຕ້ອງໄດ້ໄປຢູ່ນຳພໍ່ເຖົ້າ, ແມ່ເຖົ້າເປັນເວລານານ ນັບແຕ່ 4 ປີ ຂຶ້ນໄປເຂີຍຈຶ່ງມີສິດອອກເຮືອນ ຫຼື ເອົາເມຍເມືອຢູ່ເຮືອນນຳພໍ່, ແມ່ຂອງຕົນ, ດອງນີ້ ສະໄໝກ່ອນໄດ້ໃຊ້ປາເປັນອາຫານຫຼັກຈາກນັ້ນ ກໍ່ໄດ້ໃຊ້ໝູ ຫຼືໄກ່ປ່ຽນແທນຈົນເຖິງປະຈຸບັນນີ້.

3.ດອງຕ້ານເມືອ:

ດອງນີ້ໝາຍຄວາມວ່າ: ຈະເອົາເມຍ ເມືອຢູ່ເຮືອນນຳພໍ່, ແມ່ຂອງຝົວ, ດອງນີ້ຫຼາຍປີ ຫຼືໄດ້ລູກເຕົ້າ 2 - 3 ຄົນຈຶ່ງເຮັດກໍ່ໄດ້, ແຕ່ປະຈຸບັນ ນີ້ເຮັດດອງເລີຍກໍ່ໄດ້. ສຸດແລ້ວແຕ່ເງື່ອນໄຂ ຄວາມສະດວກຂອງສອງຝ່າຍຈະຕົກລົງກັນ. ພາຍ ຫຼັງດອງນີ້ຊົ້ນສຸດລົງປະມານ 4 ໂມງ ແລງກໍ່ຈະ ເອົາລູກໄພ້ເມືອເຮືອນປູ່, ຍ່າ, ເວລານີ້ຝ່າຍຊາຍ ຈະເສຍໝູ 2 ໂຕ, ນ້ຳໜັກຕ່ຳສຸດບໍ່ໃຫ້ ໜຸດໂຕລະ 50 ກິໂລກຼາມ. ໂຕໜຶ່ງຂ້າຢູ່ເຮືອນຝ່າຍຍິງ ແລະ ອີກໂຕໜຶ່ງຂ້າຢູ ເຮືອນຝ່າຍຊາຍ. ກ່ອນເຂີຍ ຈະລົງເຮືອນໄດ້ຕ້ອງຊອກຫາເງິນຄ່າດອງຕ່ຳສຸດ 2 ຂັນເງິນເກົ່າໃຫ້ພໍ່, ແມ່ເມຍ, ບາງຄົນ 2 ຂັນ <u>ເຂີຍຈະບ່ຽງແຕ່ເວລາທຳອິດກໍ່ໄດ້, ບາງຄົນຖ້າເຂີຍ</u> ມີຄຸນງາມຄວາມດີ, ພໍ່ເຖົ້າ, ແມ່ເຖົ້າອາດຈະ ສົ່ງ ຄືນ 1 ຂັນ, ບາງຄົນເຂີຍເມືອຢູ່ນຳພໍ່, ແມ່ຂອງຕົນ 2-3 ປີ ເວລາກັບຄືນມາຢາມພໍ່, ແມ່ເມຍເພິ່ນ ອາດຈະສົ່ງຄືນດ້ວຍວິທີຜູກແຂນໃຫ້ຫຼານຄົນໃດໜຶ່ງ.

ສຳລັບແຊງລີ່ຮ່າດອງນີ້ຝ່າຍຊາຍຈະ ຕ້ອງຊອກຫາປາໃຫ້ໄດ້ຈຳນວນ 350 ໂຕ, 300 ໂຕ ແມ່ນປາຫຼາຍຊະນິດ, ສ່ວນ 50 ໂຕ ນັ້ນແມ່ນ ປາຊະນິດດຽວກັນຄື: ປາມ່ອນ..

4.ດອງໂຈມໄຟ.

ແມ່ນດອງສຸດທ້າຍພາຍຫຼັງດອງຕ້ານ ເມືອສິ້ນສຸດລົງແລ້ວ 4 ໂມງແລງກໍ່ມີການແຫ່ ລູກໄພ້ເມືອເຮືອນປູ່, ຍ່າ, ລູກໄພ້ຈະຂຶ້ນເຮືອນ ທາງປ່ອງພິເສດ, ເຂົ້າໃນເຮືອນແລ້ວລູກໄພ້ຈະ ເຕະປະຕູຫ້ອງ 3 ບາດ ເພື່ອປາບຜີເຮືອນ, ຈາກ ນັ້ນລູກໄພ້ຈະລົງໄປລຸ່ມເພື່ອໄປຂ້າໝູຕີດ້ວຍ ຄ້ອນ 3 ບາດ, ໝູກໍ່ຈະຮ້ອງ ເວລານັ້ນຄົນທີ່ມາ ຮ່ວມພິທີກໍ່ຈະພາກັນທ້ອງຂຶ້ນດ້ວຍສຽງດັ່ງວ່າ: ລູກໄພ້ຂ້າໝູລ້ຽງຜີເຮືອນ ໝູນັ້ຈະຕາຍ ຫຼືບໍ່ຕາຍ ກໍ່ໄດ້, ຜູ້ອື່ນຈະສັ່ງຫາມຕໍ່ໂດຍບໍ່ໃຫ້ເອົາມີດແທງ ຄໍ, ໝູດັ່ງກ່າວແມ່ນຜູກໄວ້ຕະລາງຊື່ຫົວບ່ອນ ນອນບ່ອນຜີເຮືອນຢູ່ມີນ້ຳໜັກ 50 ກິໂລກຼາມຂຶ້ນໄປ.

ດອງໂຈມໄພ້ມີຄວາມໝາຍຄື: ເອົາລູກ ໄພ້ ເມືອເຂົ້າຜີເຮືອນ ແລະມອບວຽກ ເຮືອນການ ຊານທັງ ໝົດໃຫ້ລູກໄພ້ເປັນຜູ້ຄຸ້ມຄອງ, ດອງນີ້ໃຊ້ ໝູຢ່າງດຽວໃນພິທີຈະແຕ່ງພາເຂົ້າ 9 ພາໆ ລະ 9 ຕອນຊົ້ນ, ຈະແຕ່ງອາຫານຫຼາຍເຍື່ອງກໍ່ໄດ້, ພາ ເຂົ້າເອົາຂຶ້ນເທິງຂວັ່ນ 2 ພາຕັ້ງຊ້ອນກັນ, ບູຊາຜີ <u>ໃນເຮືອນຕັ້ງພາຍໃນເຮືອນ 7 ພາ, ນອກນັ້ນ ລ້ຽງ</u>

ແຂກຄົນເປັນທຳມະດາ.

ການເກີດລູກຂອງຊົນເຜົ່າຕູມ ໃນເມື່ອກ່ອນຈະເກີດຢູ່ຕີນບ່ອນນອນຂອງຕົນ, ມີການຊ່ວຍເຫຼືອຈາກເຖົ້າແກ່ຜູ້ຊຳນານ (ໝໍຕຳແຍ), ພ້ອມດ້ວຍຜົວຂອງຕົນ, ເດັກທີ່ເກີດໃໝ່ໄດ້ຮັບການດູແລເປັນຢ່າງດີເຊັ່ນ: ການຕັດສາຍແຫ່ ພວກເຂົາຈະໃຊ້ຕີວໄມ້ໄຜ່ ເພື່ອປ້ອງກັນເຕຕານິດ, ປະຈຸບັນແມ່ນໄດ້ນຳໃຊ້ໂຮງໝໍຊ່ວຍໃນການເກີດລູກເປັນສ່ວນຫຼາຍ.

ເຮືອນຂອງຊົນເຜົ່າຕູມ ແລະບັນດາແຊງແມ່ນຄ້າຍຄືກັນທີ່ສຸດ,ເປັນເຮືອນຫຼັງດຽວ,ຍົກພື້ນ 2-2,5 ແມັດມີຂັ້ນໄດກ່າຍທາງໜ້າ, ມີຊານຍື່ນອອກ ໄປປະມານ1-2 ແມັດ, ມີຄົກຕຳເຂົ້າຢູ່ຊານ, ມີປະຕູ 2 ປ່ອງ, ປ່ອງໜຶ່ງໄວ້ທຽວເຂົ້າອອກ ແລະປ່ອງ ທີ 2 ຈະບໍ່ໄຂຈັກເທື່ອ, ຍົກເວັ້ນສຸກເສີນ, ຕິດກັບປະຕູປ່ອງເຂົ້າອອກຈະມີຄີໄຟຂ້າງໜຶ່ງ ແລະອີກຂ້າງໜຶ່ງຈະມີອຸນຳ ແລະເຄື່ອງໃຊ້ບາງຢ່າງ, ບໍ່ມີປ່ອງຢ້ຽມ, ທາງໃນຈະເປັນໂອ້ໂຖງກວ້າງຍາວ, ຫ້ອງນອນຈະຈັດໄວ້ຂ້າງໜຶ່ງ ແລະເປັນລັອກບ່ອນນອນຂອງໃຜລາວ ,ລັອກທຳອິດຕິດກັບປະຕູປ່ອງພິເສດຈະມີຫ້ອງຜີ, ຖັດນັ້ນແມ່ນຫ້ອງພໍ່, ແມ່ຫ້ອງນອນບັນດາລູກໆ ແລະຫ້ອງນອນລູກໄພ້ຢູ່ຕີນບ່ອນນອນແຕ່ລະຫ້ອງຈະມີ ຄີໄຟນ້ອຍ ເພື່ອໄວ້ດັ່ງໄຟຝ້ຳໃນຍາມລະດູໜາວ.

ສ່ວນແຊງລີ່ຮ່ຳ ການຈັດວາງຕ່າງກັນເລັກນ້ອຍ ເຊັ່ນ: ຄີໄຟຈະຢູ່ເຄິ່ງກາງເຮືອນຫ່າງຈາກ ຝາເຮືອນເບື້ອງຕີນບ່ອນນອນປະມານ 1 ແມັດ ໄລຍະກ່ອນປິດປ່ອຍຊາດບາງແຊງຂອງຕູມ ຖືຮີດຄອງເຄ່ັງຄັດ, ກ່ອນການປຸກເຮືອນຕ້ອງໃຫ້ຫ້ຳໆ ຫາເຄື່ອງເຮືອນຄົບຖ້ວນແລ້ວຈຶ່ງຊອກຫາມື້ສັນວັນດີຄັກແນ່ ໝາຍຄວາມວ່າປຸກເຮືອນໃນມື້ນັ້ນກໍ່ຂຶ້ນເຮືອນໃໝ່ໃນມື້ນັ້ນໂລດຈະກາຍໄປຫາມື້ໃໝ່ບໍ່ໄດ້ເດັດຂາດ, ບາງຄອບຄົວຫາເຄື່ອງເຮືອນບໍ່ພໍກໍ່ແມ່ນໄດ້ຢູ່ເຮືອນຮ້ຳໆ, ໝາຍຄວາມວ່າ: ຢູ່ໄປນຳ, ຫາໄປນຳ, ປຸກໄປນຳ, ບາງຄົນ ເສຍຊີວິດຄາແຕ່ ເຮືອນບໍ່ແລ້ວ.

ຊົນເຜົ່າຕູມເມື່ອ 40 ປີ ຄືນຫຼັງຜູ້ຊາຍນຸ່ງໂສ້ງຫົວວັນທີ່ຫຍິບດ້ວຍມື ຫຼືຜູ້ທີ່ມີບິດບາດຈະນຸ່ງຜ້າສະໂລ່ງ, ຫົ່ມເສື້ອແຂນຍາວແບບແຂນປ່ອຍ ຫຼືເສື້ອຂາວແຂນຍາວທີ່ມີຖົງໄວ້ ໃສ່ຢາສູບ, ບາງຄົນຄ້ຽວໝາກ, ຍ້ອມແຂ້ວດ້ວຍຢາງໄມ້ ເພື່ອເຮັດ ໃຫ້ແຂ້ວໝັ້ນທົນທານ ທັງເງົາງາມອີກດ້ວຍ. ແມ່ຍິງຈະນຸ່ງສິ້ນໝີ ຫຼືສິ້ນທຳມະດາທີ່ມເສື້ອແຂ່ວດ້ວຍເງິນບີ້ ມີຈຳນວນ 10 ບີ້ຢູ່ທາງໜ້າ, ແຂນຍາວ ມີກະດຸມປອກແຂນ, ປອກຄໍໃສ່ໝາກປັດ, ເກົ້າຜົມງ່ຽງໄປທາງຂ້າງ, ບາງຄັ້ງງ່ຽງໄປທາງຊ້າຍ ແລະຂວາ, ຜູ້ຍັງເປັນສາວຈະມີຜົມ ປອມມາເສີມເກົ້າຜົມໃຫ້ ໃຫຍ່ຜິດປົກກະຕິ.

ອາຫານຂອງຊົນເຜົ່າຕູມ ມີລິດເຄັມ , ອາຫານທີ່ເປັນເອກະລັກແມ່ນແກງ, ປີ້ງ, ຈີ້, ຫຼາມ, ຕົ້ມແມ່ນໃຊ້ປາເປັນຕົ້ນຕໍ, ປະເພດເຄື່ອງດື່ມມີເຫຼົ້າເດັດ ແລະເຫຼົ້າໄຫ.

ຊົນເຜົ່າຕູມມີສິລະປະວັນນະຄະດີແຕ່ກ່ອນເຂົາເຈົ້າມີຄຳພະຫຍາ, ຄຳສຸພາສິດ, ນິທານພື້ນເມືອງ, ທີ່ສ່ອງແສງເຖິງຊີວິດຂອງເຂົາເຈົ້າໃນເວລານັ້ນອອກ ແຮງງານ ແລະເຄື່ອນໄຫວຕ່າງໆ. ນອກຈາກນີ້ແລ້ວຊົນເຜົ່າຕູມ ຍັງມີກອນຂັບ, ກອນລຳ, ທຳນອງທີ່ມີສຽງສຳນຽງອ່ອນຊອນ, ມີເນື້ອໃນ

ກ້ຽວພາລາສັຍອກໃຍກັນແຕ່ກ່ອນສາມາດລຳເປັນພາສາຕູມໄດ້, ມາປະຈຸບັນນີ້ ໄດ້ນຳໃຊ້ພາສາລາວແທນ. ຊົນເຜົ່າຕູມມີສິລະປະວັນນະຄະດີພື້ນເມືອງອຸດົມສົມບູນພໍສົມຄວນ. ແຕ່ປະຈຸບັນນີ້ ສິລະປະດັ່ງກ່າວເກືອບຈະເຊື່ອມເສຍໄປແລ້ວ ຍ້ອນຄົນລຸ້ນໃໝ່ບໍ່ອະນຸລັກຮັກສາໄວ້.

ການປ່ຽນສິ່ງສະກາມຕໍ່ຜູ້ທີ່ມໍລະນະພາບ, ເຮືອນໃດມີພິທີນີ້ ພວກເຂົາກໍ່ໄຂປະຕູປ່ອງພິເສດອອກ ເຮັດຂັ້ນໄດກ່າຍຂຶ້ນ, ດັ່ງໄຟຢູ່ຕີນ ຂັ້ນໄດບໍ່ໃຫ້ມອດຈົນກວ່າພິທີງານປ່ຽນສິ່ງສະກາມ ສຳເລັດຈຶ່ງມອດໄຟໄດ້. ສຳລັບຜູ້ເສຍຊີວິດຈະວາງຂວາງເຮືອນ, ປົກດ້ວຍຜ້າຂາວຫຼືຜ້າທີ່ມ, ຖ້າມີ ລູກຫຼາຍຄົນຈະມີຜ້າຂາວປົກຫຼາຍຊັ້ນຊ້ອນກັນ ແລ້ວເຮັດກົ່ງກວມຂອນ, ເອົາຜ້າຂາວປົກຕື່ມ, ບາງບ້ານຈະປົກດ້ວຍຜ້າທີ່ມ ຫຼືຜ້າຂາວຍາວ 1-2 ຊັ້ນ ກໍ່ໄດ້ອີງຕາມຄວາມສາມາດຕົວຈິງຂອງຄອບຄົວ, ສົບຜູ້ຕາຍຈະຫຸ້ມຫໍ່ດ້ວຍ ຝ້າຍແລ້ວເອົາສາດຫໍ່ຕື່ມທາງນອກກໍ່ໄດ້, ສົບເອົາລົງ ທາງປະຕູປ່ອງພິເສດ, ຖ້າມີ 2 ເຂີຍຫາມທ້າຍຫາມຫົວ, ຖ້າຜູ້ຕາຍບໍ່ມີລູກຊາຍ, ລູກເຂີຍ ກໍ່ໄດ້ຈ້າງຊາວບ້ານມາຫາມດ້ວຍເງິນຜູ້ລະ1 ກີບຫົວໝາມ.

ຜູ້ຫາມຖ້າຢ້ານກົວ ກໍ່ໃຫ້ເອົາລູກແຫແຂວນແອວໄວ້, ຢູ່ເຄິ່ງທາງບ່ອນໄປສົ່ງສະກາມ ຈະມີຄົນຈຳນວນໜຶ່ງໄປຂ້າໄກ່ປີ້ງຢູ່ນັ້ນ ເພື່ອລໍຖ້າພວກທີ່ຫາມຂອນ, ຂາກັບມາແລ້ວພວກນັ້ນກໍ່ຈະໄດ້ກິນເຂົ້າກັບປີ້ງໄກ່ຢູ່ບ່ອນນັ້ນ, ຕູມໃຊ້ວິທີຝັ່ງ, ກ່ອນຈະເອົາສົບລົງຂຸມ, ໄດ້ສານໂລງດ້ວຍໄມ້ໄຜ່ລົງຂຸມແລ້ວເອົາສົບລົງເຄິ່ງກາງ, ເວລາໄປສົ່ງສະກາມເຈົ້າຂອງເຮືອນຈະຕ້ອງໄດ້ມ້າງເອົາຫຍ້າມຸງເຮືອນທາງຫົວບ່ອນນອນ ເຊິ່ງກັນກັບຫ້ອງຜີໄປນຳ3ໄພ. ຝັ່ງແລ້ວຢູ່ບໍລິເວນຂຸມເຮັດຮົ້ວອ້ອມດ້ວຍຝາກະແຕະລາຍຂັດ, ປຸກຕູບນ້ອຍກວມ, ມຸງດ້ວຍຫຍ້າຄາ 3 ໄພທີ່ເອົາໄປແຕ່ເຮືອນ, ຕູບນີ້ເຮັດໃຫ້ກຸ້ມ 3 ວັນເພ, ພັນທະຂອງຄອບຄົວຕ້ອງໄດ້ໄປສົ່ງເຂົ້າປາອາຫານຜູ້ຕາຍຢູ່ປ່າຊ້າ 3 ວັນ. ມື້ທີ່ 1 ຕ້ອງໄປສົ່ງເຂົ້າຢູ່ປ່າຊ້າ, ມື້ທີ່ສອງຈະບໍ່ໄປເຖິງປ່າຊ້າປະໄວ້ເຄິ່ງທາງ, ມື້ທີ່ສາມປະໄວ້ເຄິ່ງທາງແລ້ວກັບເຮືອນ.ສຳລັບຄົນໃນເຮືອນທີ່ເສຍຊີວິດພ້ອມດ້ວຍຍາດຕິພີ່ນ້ອງ ທີ່ຢູ່ໃກ້ຊິດກໍ່ຈະໄດ້ຄະລຳ 3-4 ວັນ, ເວລາຄະລຳທຸກຄົນຈະບໍ່ໄດ້ຂຶ້ນເຮືອນສູງລົງເຮືອນຕ່ຳ, ບໍ່ໃຫ້ ອາບນ້ຳແຕ່ງໜ້າທາຕາ ຫຼືປະດັບເອ້ຢ້ອງຕ່າງໆ, ວັດຖຸເຄື່ອງຂອງທີ່ເຄີຍປະດັບ ໃນເມື່ອກ່ອນກໍ່ໃຫ້ປົດອອກໝົດ, ບໍ່ມີການແຕ່ງຢູ່ຄົວກິນ ຫຼືຕ້ອນຮັບແຂກຕ່າງໆນາໆ, ຕ້ອງນັ່ງໂສກເສົ້າຕະຫຼອດ 3-4 ວັນ. ຍາດພີ່ນ້ອງທ່າງໆບ້ານດຽວກັນມີຄວາມອີດູຕົນສົ່ງສານພວກເຂົາກໍ່ຈະມາບໍລິການໃຫ້. ແມ່ຍິງເສຍຊີວິດຄະລຳ 3 ວັນ, ຜູ້ຊາຍ 4 ວັນ, ເມື່ອໝົດເຂດຄະລຳແລ້ວເຈົ້າຂອງເຮືອນຈະຂ້າໄກ່ 2 ໂຕ, 1 ໂຕ ມັດແຂນເຈົ້າຂອງເຮືອນ ແລະຍາດພີ່ນ້ອງທີ່ຄະລຳນຳກັນ ແລະອີກໂຕ 1 ຈະມັດແຂນໃຫ້ໄຫບ້ານຜູ້ທີ່ມາບໍລິການ ໃນນັ້ນມີເຫຼົ້າເດັດ 1 ແກ້ວ ແລະອື່ນໆແລ້ວກໍ່ເປັນອັນຈົບພິທີ

ການດຳລົງຊີວິດທາງ ດ້ານເສດຖະກິດ:

ອາຊີບຂອງຊົນເຜົ່າ ໃນເມື່ອກ່ອນແມ່ນຍຶດຖືການເຮັດໄຮ່ເປັນຕົ້ນຕໍ ແຕ່ບໍ່ຄົງທີ່ມີລັກສະນະເລື່ອນລອຍ ແລະຍ້າຍບ້ານເຮືອນ ໄປຕາມເນື້ອທີ່ການຜະລິດ. ເຂົາເຈົ້າມັກປູກເຂົ້າຈ້າວ, ເຜືອກ, ມັນ, ສາລີ ແລະອື່ນໆ ປະເພດສັດລ້ຽງ ມີໝູ,ງົວ,ແບ້ ແລະສັດປີກ, ເກັບເດັດຜັກປ່າມາປຸງແຕ່ງເປັນອາຫານ. ນອກຈາກນີ້ເຂົາເຈົ້າຍັງມີ ອາຊີບລ່າເນື້ອ ແລະຫາປາທີ່ເປັນວິຊາຫາລ້ຽງຊີບ ທີ່ຈຳເປັນ. ປະຈຸບັນເຂົາເຈົ້າ ຍັງຍຶດຖືອາຊີບກະສິກຳເປັນ ຫຼັກ, ການເຮັດນາ, ເຮັດໄຮ່ໝູນວຽນໄຮ່ຄົງທີ່ ແລະສວນ ເພື່ອປູກເຂົ້າຈ້າວ, ເຂົ້າໜຽວ, ພືດທີ່ມີທາດແປ້ງ, ຕົ້ນໄມ້ກິນໜາກຍາວນານ ແລະພືດຊະນິດອື່ນໆ, ການລ້ຽງ ສັດ ກໍ່ມີທ່າຂະຫຍາຍຕົວແຮງສົມຄວນຄື: ຄວາຍ, ງົວ, ແບ້, ມ້າ ແລະສັດປີກທີ່ປັນເສດຖະກິດຂາອອກຂອງຄອບຄົວ. ນອກນີ້ຜູ້ຊາຍຊົນເຜົ່າຕູມ ຍັງມີຄວາມສາມາດຕີເຫຼັກ, ປັ້ນໝໍ້, ຫຼໍ່ໄຫ ແລະວິຊາຈັກສານອື່ນໆ.

Toum

Historical background:

The Toum people live in Nyordnum sub-district of Khamkeut, Pakkading, Borikhan and Viengthong districts of Bolikhamsay province. The Toum migrated from China, moving down the Mekong River and moving into Lao in the 1300s.

By 1891, during the French reign over Indochina, more Toum people migrated from Neh An province of Vietnam. They settled in the Chamsom region joining others who already settled in that area. The Toum still live in Vietnam today.

Name and language:

The Toum have many different names such as Toum, Phong, Tai Chumleuha and others. The official name and the name they prefer is "Toum". In Vietnam these ethnic people are called "Thoh". There language is a Mon-Khmer language is on the Vietic language branch. Their spoken language differs greatly from region to region. Some Toum near the Vietnam-Laos border still speak their original language, while those who migrated westward speak Lao or a mixture of regional language combined with their own.

Society, beliefs, ceremonies and myths:

Most Toum people practice animism, while some also practice Buddhism. They will offer sacrifices to various spirits of village and nature, especially before the growing season or before the harvest. The highest and most worshipped spirit is the spirit of the village that is called phu toh. Every village will have a spirit house outside the village for offerings to this spirit.

The Toum also celebrate the Vietnamese New Year " Tet " during the same time as the Vietnamese do.

Young people are free to choose their own mates. When they are ready to marry, a negotiator will act as an intermediary between the two sets of parents. He will offer gifts from the boy to the girl's parents. If both sides finally come to an agreement, then a wedding date will be set. Wedding ceremonies vary depending on financial circumstances. There are four steps to a

marriage, but most couples don't practice all four steps. The husband will pay a dowry of silver and buffaloes. If the husband cannot pay the dowry, then he will stay with the bride's family first.

Toum women give birth in the bedroom with the assistance of a midwife. However, today they will often give birth in a government clinic or hospital.

The deceased are placed in the house and covered with white blankets. Later the body will be carried out of the house through a special door for this purpose. If there are two son - in - laws in the household, they will carry the body.

The Toum bury the dead. They place the body in a bamboo coffin. After burying, they make a fence around the tomb, and the family will bring food to the cemetery the next day an offering to the deceased's spirits. During the week, the family of the dead is not allowed to cook, bathe, or leave their house. After a week, some chickens are sacrificed and the funeral is over.

The Toum have folk tales and proverbs that reflect their culture. Additionally, they have rhymes and chants that are humorous and teasing. However, the younger Toum generations seem to be losing their traditional culture and are not preserving it.

Village and house:

The houses of the Toum sit on stilts about two meters above the ground. There is a staircase that leads to an extended balcony. There are two doors to the house, but one is only used in emergencies. A fireplace for cooking is inside. The house has no windows. There is a large family room, and small living rooms are walled off.

Costume:

Today the Toum do not wear any traditional clothing, instead wearing traditional Lao clothing. The women used to wear a long-sleeved blouse with ten old silver coins sewn on the front. They also used to dye their teeth with dark natural dies, but this is no longer common.

Agriculture and livelihood:

The Toum grow glutinous rice in both wet-fields and slash-and-burn fields. They also grow maize, taro, cassava, and vegetables. They will have cattle, goats, horses and poultry for consumption and sale, and they also hunt and fish. The men have simple blacksmithing skills and also make products from bamboo.

ຊົນເຜົ່າແທ່ນ

ປະຫວັດຄວາມເປັນມາ:

ສຳລັບປະຫວັດຄວາມເປັນມາ ແລະກິດເຄົ້າເຫງົ້າກ່ຳຂອງຊົນເຜົ່າແທ່ນໃນສະໄໝກ່ອນໆ ທີ່ຈະມີການເຄື່ອນຍ້າຍເຂົ້າມາລາວນັ້ນບໍ່ມີເອກະສານ ແລະຂໍ້ມູນກ່າວເຖິງທີ່ຈະແຈ້ງແນ່ນອນ, ແຕ່ຊົນເຜົ່າແທ່ນທີ່ ດຳລົງຊີວິດຢູ່ສປປລາວ. ປະຈຸບັນນີ້ປະຫວັດສາດຄວາມເປັນມາໂດຍໄດ້ມີການເຄື່ອນຍ້າຍຈາກເຂດຊາຍແດນ ຂອງປະເທດ ມຽນມາ ໃນຕົ້ນສະຕະວັດທີ 19. ຜູ້ນຳພາການເຄື່ອນຍ້າຍ ມີຊື່ວ່າ: ນາງອາງລາງ, ສາເຫດຂອງການຍົກຍ້າຍ ແມ່ນຍ້ອນເສິກສົງຄາມ ແລະການຊອກສະຖານທີ່ໃນການດຳລົງຊີວິດ ກໍ່ຄືການທຳມາຫາກິນທີ່ສະດວກສະບາຍ ແລະປອດໄພ.

ປະຈຸບັນຊົນເຜົ່າແທ່ນ ໄດ້ຕັ້ງຖິ່ນຖານ ບ້ານ ຊ່ອງຢູ່ສອງບ້ານ ຄື: ບ້ານສາ ແລະບ້ານ ງົ້ວ, ເຂດພູ ສະໜາມ, ເມືອງ ວຽງຄຳ ແຂວງ ຫຼວງພະບາງ.

ພົນລະເມືອງ ຂອງຊົນເຜົ່າແທ່ນ ຢູ່ລາວ ມີທັງໝົດ 305 ຄົນ, ໃນນັ້ນມີຍິງ 148 ຄົນ (ຕາມ ການໃຫ້ຂໍ້ມູນຂອງນາຍບ້ານ ແລະບັນດາເຖົ້າແກ່ ທີ່ເປັນເຈົ້າກິກ, ເຈົ້າເຫຼົ່າຂອງບ້ານດັ່ງກ່າວ ຄັ້ງວັນ ທີ 06 /11/ 2001).

ຊື່ເອີ້ນ:

ຊົນເຜົ່ານີ້ເຂົາເຈົ້າເອີ້ນຕົນເອງວ່າ:"ແທ່ນ", ຊົນເຜົ່າອື່ນເອີ້ນເຂົາເຈົ້າກໍ່ແມ່ນ "ແທ່ນ"ຊື່ທີ່ເຂົາເຈົ້ານັບຖືແລະຊື່ທີ່ໃຊ້ໃນທາງການກໍ່ແມ່ນຊົນເຜົ່າ"ແທ່ນ"

ພາສາ:

ຊົນເຜົ່າແທ່ນ ມີພາສາປາກເວົ້າທີ່ເປັນເອກະລັກສະເພາະຂອງຕົນເອງ ,ເຂົາເຈົ້າບໍ່ມີຕົວໜັງສືຂຽນ, ພາສາຂອງຊົນເຜົ່າແທ່ນ ຈັດເຂົ້າໃນໝວດພາສາ ມອນ-ຂະແມ. ນອກຈາກພາສາຂອງເຂົາເຈົ້າແລ້ວຊົນເຜົ່າແທ່ນ ຍັງສາມາດເວົ້າພາສາລາວ ແລະພາສາຊົນເຜົ່າ ກຶມມຸໄດ້ດີ.

ຮີດຄອງປະເພນີ, ຄວາມເຊື່ອຖື ແລະວັດທະນະທຳ-ສັງຄົມ:

ຍ້ອນການເຄື່ອນຍ້າຍຂອງເຂົາເຈົ້າໄດ້ຜ່ານຫຼາຍເຂດແຄວ້ນ, ສົມທົບກັບການດຳລົງຊີວິດທີ່ຢູ່ສະຫຼັບສັບຫວ່າງກັນກັບຊົນເຜົ່າຕ່າງໆ ແລະຈາກການຕິດຕໍ່ພົວພັນຊຶ່ງກັນ ແລະກັນ ລະຫວ່າງຊົນເຜົ່າ ທີ່ຢູ່ໃກ້ຄຽງຈຶ່ງໄດ້ເຮັດໃຫ້ຊົນເຜົ່າແທ່ນມີຮີດຄອງປະເພນີ, ຄວາມເຊື່ອຖືແບບປະສົມປະສານຄື: ເຂົາເຈົ້າມີຄວາມເຊື່ອຖືໃນພຸດທະສາສະໜາ, ຄຽງຄູ່ກັນນີ້ຍັງມີຄວາມເຊື່ອໃນເລື່ອງຈິດວິນຍານ ແລະເຊື່ອຖືຜີອີກດ້ວຍ. ໂດຍທົ່ວໄປແລ້ວຜີທີ່ເຂົາເຈົ້າເຊື່ອຖືຈະມີຜີພໍ່, ຜີແມ່, ຜີບັນພະບຸລຸດ, ຜີບ້ານ, ຜີເມືອງເຫຼົ່ານີ້ເປັນຕົ້ນ.

ໂຄງສ້າງທາງດ້ານສັງຄົມ ຂອງຊົນເຜົ່າແທ່ນ ຈະປະກອບດ້ວຍຫຼາຍກົກເຫຼົ່າຕະກຸນ ຫຼື ຫຼາຍສົກຊາວດ້ວຍກັນ, ເຂົາເຈົ້າມັກໃສ່ຊື່ຂອງຕະກຸນ ຫຼືສົກຊາວ ໄປຕາມຊື່ຂອງສັດ ແລະຕົ້ນໄມ້ຕ່າງໆ. ສະນັ້ນແຕ່ລະຕະກຸນ, ສົກຊາວຈະມີຂໍ້ຫ້າມ ແລະການຄະລຳທີ່ແຕກຕ່າງກັນເລັກນ້ອຍ. ໂດຍສະເພາະແມ່ນການຄະລຳ ແລະການຫ້າມ

ຂ້າ, ຫ້າມກິນຊີ້ນສັດທີ່ເປັນຕະກຸນ ຫຼືສິ່ງຊາວຂອງຕົນເອງ. ທັງນີ້ກໍ່ເພື່ອເປັນການສະແດງເຖິງຄວາມເຄົາລົບນັບຖື ແລະບູຊາຕໍ່ສິ່ງດັ່ງກ່າວ. ໃນສັງຄົມຂອງຊົນເຜົ່າແທ່ນ ຈະມີການປົກຄອງແບບທາງການປະສົມປະສານກັບຮີດຄອງປະເພນີຄື: ນອກຈາກຈະມີການຈັດຕັ້ງຕ່າງໆ ທາງລັດຖະການແລ້ວກໍ່ຍັງມີບັນດາເຈົ້າກົມ, ເຈົ້າເຫຼົ່າຫົວໜ້າຕະກຸນທີ່ຊ່ວຍເຫຼືອເບິ່ງແຍງດູແລ ສະມາຊິກຂອງຊົນເຜົ່າຕາມຮີດຄອງປະເພນີ ເຊິ່ງເປັນແບບດັ້ງເດີມຂອງເຂົາເຈົ້າກໍ່ຍັງມີຄວາມສຳຄັນຢູ່ຈົນຮອດປະຈຸບັນນີ້.

ລັກສະນະຄອບຄົວ ຂອງຊົນເຜົ່າແທ່ນ ເປັນລະບົບຄອບຄົວດຽວ, ມີການສືບຕະກຸນທາງພໍ່ເປັນສຳຄັນ. ການແຕ່ງດອງຈະເກີດຂຶ້ນໄດ້ກັບຄົນຕ່າງຕະກຸນເທົ່ານັ້ນ. ໝາຍຄວາມວ່າ: ຄົນທີ່ຢູ່ໃນຕະກຸນດຽວກັນ ບໍ່ສາມາດແຕ່ງດອງກັນໄດ້. ແມ່ຍິງຫຼັງຈາກແຕ່ງດອງແລ້ວຈະຕ້ອງໄດ້ໄປຢູ່ເຮືອນນຳຄອບຄົວພໍ່, ແມ່ຂອງຜົວ, ພ້ອມດຽວກັນນີ້ກໍ່ຕ້ອງໄດ້ປ່ຽນໄປເປັນຕະກຸນຂອງຜົວ ແລະນັບຖືຜີຕາມຕະກຸນທາງຜົວ.

ລັກສະນະເຮືອນ ຂອງຊົນເຜົ່າແທ່ນ, ຕາມຮີດຄອງປະເພນີທີ່ສືບທອດກັນມາ ແຕ່ບູຮານນະການ, ເຂົາເຈົ້າມັກປຸກສ້າງ ແລະຢູ່ເຮືອນຮ້ານ. ພາຍໃນເຮືອນຈະມີການຈັດແບ່ງເປັນສອງສ່ວນຄື: ສ່ວນທີໜຶ່ງແມ່ນໃຊ້ສຳລັບເປັນບ່ອນນອນ ແລະຮັບແຂກ, ອີກສ່ວນໜຶ່ງຈະໃຊ້ສຳລັບການແຕ່ງຢູ່ຄົວກິນ. ສຳລັບການຈັດແບ່ງຫ້ອງນອນ ແລະຂະໜາດຄວາມໃຫຍ່ນ້ອຍຂອງເຮືອນ ແມ່ນອີງຕາມຈຳນວນສະມາຊິກຂອງຄົວເຮືອນ, ຍ້ອນວ່າເຂົາເຈົ້າມີຄວາມເຊື່ອໃນເລື່ອງຜີ, ຢູ່ແຕ່ລະຫຼັງຄາເຮືອນຈະມີຮ້ານບູຊາຜີ ເຊິ່ງສ່ວນຫຼາຍແລ້ວຈະຢູ່ໃນຫ້ອງນອນພໍ່, ແມ່ຜູ້ເປັນເຈົ້າຂອງເຮືອນ. ສະນັ້ນຊົນເຜົ່ານີ້ຈຶ່ງມີການຄະລຳ ແລະຂໍ້ ຫ້າມໃນການເຂົ້າຫ້ອງນອນໃນເວລາມີເຄື່ອງໝາຍທີ່ເປັນຟົດໄມ້ດິບຕິດຢູ່ເຮືອນ ແມ່ນຫ້າມຂຶ້ນເດັດຂາດ. ອີກຢ່າງໜຶ່ງ ໃນເວລາທີ່ເຂົາເຈົ້າເຮັດຮີດຄອງລ້ຽງຜີບັນພະບຸລຸດ(ຜີນາງອ້າງລາງ) ແລະຜີບ້ານຈະຫ້າມຄົນໃນບ່ໃຫ້ອອກ ແລະຄົນນອກບ່ໃຫ້ເຂົ້າບ້ານ, ຖ້າບ່ດັ່ງນັ້ນຈະຖືກປັບໄໝຕາມຮີດຄອງປະເພນີ.

ສຳລັບປະເພນີການເກີດລູກ ຂອງຊົນເຜົ່າແທ່ນໃນປະຈຸບັນແມ່ນປະຕິບັດຄ້າຍຄືກັນກັບຊົນເຜົ່າລາວ. ໂດຍສະຖານທີ່ເກີດລູກ ແມ່ນຢູ່ໃນເຮືອນບໍລິເວນແຈເຕົາໄຟເຊິ່ງຈະມີຜົວ ແລະແມ່ຍິງທີ່ມີປະສົບການໃນດ້ານນີ້ໃຫ້ຄວາມເບິ່ງແຍງດູແລ ແລະຊ່ວຍເຫຼືອ. ຫຼັງຈາກເກີດລູກແລ້ວກໍຈະມີການຢູ່ກຳ ແລະມີການຄະລຳ ອາຫານປະເພດທີ່ດິບ, ເໝັນ, ຄາວ ແລະເຜັດເຫຼົ່ານີ້ເປັນຕົ້ນ. ຄຽງຄູ່ກັບປະເພນີການເກີດລູກແລ້ວຊົນເຜົ່າແທ່ນກໍ່ຍັງຕ້ອງປະຕິບັດຮີດຄອງ ຂອງການ.ຕາຍຢ່າງເຄັ່ງຄັດຕາມແຕ່ລະຂັ້ນຕອນແລ້ວ ຈະມີພິທີສົ່ງສະການດ້ວຍ ການຝັງສົບ.

ຍ້ອນຄວາມເຊື່ອຖືຕ່າງໆ ທີ່ໄດ້ກ່າວມາ, ໃນປີໜຶ່ງໆຊົນເຜົ່າແທ່ນ ນອກຈາກຈະປະຕິບັດຕາມຮີດຄອງປະເພນີ ຂອງພຸດທະສາສະໜາ

ແລ້ວ. ເຂົາເຈົ້າຍັງມີບຸນປະເພນີທີ່ສຳຄັນ ກ່ຽວກັບ ການລ້ຽງຜີຄື: ບຸນລ້ຽງຜີນາງອາງລາງ, ເຊິ່ງຈະຈັດ ຂຶ້ນໃນເດືອນ 8, ໂດຍທີ່ເຂົາເຈົ້າຈະຈັດເອົາຜົນ ຜະລິດ, ເຄື່ອງປູກຂອງຝັ່ງຈາກໄຮ່ ເພື່ອໄປລ້ຽງຜີ ນາງກ່ອນ, ຖ້າບໍ່ມີພິທີດັ່ງກ່າວຊາວບ້ານບໍ່ສາມາດ ບໍລິໂພກຜົນຜະລິດໄຮ່, ສວນໄດ້. ນອກຈາກນີ້ຍັງ ມີປະເພນີການລ້ຽງ, ຜີບ້ານ, ຜີເມືອງ ແລະພິທີ ກຳ ຕ່າງໆ ທີ່ກ່ຽວພັນກັບຂະບວນການຜະລິດເຂົ້າໄຮ່ ຕາມແຕ່ລະ ດູການ.

ດ້ານສິລະປະວັນນະຄະດີ ຂອງຊົນເຜົ່າ ແທ່ນ ມີລັກສະນະປະສົມປະສານ ແລະຢືມຈາກ ຊົນເຜົ່າທີ່ຢູ່ໃກ້ຄຽງ, ໝາຍຄວາມວ່າ: ວັດທະນະ ທຳໃນດ້ານນີ້ຂອງເຂົາເຈົ້າ ຕະຫຼອດຮອດວັດທະ ນະທຳການນຸ່ງຫົ່ມເອ້ຢ້ອງ, ການແຕ່ງກາຍມາ ຮອດປະຈຸບັນ ມີລັກສະນະຕາມແບບດັ້ງເດີມ ແລະ ບໍ່ປະກົດເຫັນ ໃນສັງຄົມຂອງເຂົາເຈົ້າ.

ການຂັບລຳຕ່າງໆ ແມ່ນມີລັກສະນະ ແບບເຜົ່າລາວ, ສ່ວນເຄື່ອງນຸ່ງຫົ່ມເຂົາເຈົ້າຈະຫັນ ມາຊື້ ແລະຊົມໃຊ້ຈາກຜະລິດຕະພັນທີ່ສຳເລັດຮູບ ຕາມທ້ອງຕະຫຼາດແທນ ເຄື່ອງນຸ່ງທີ່ຜະລິດກັນ ເອງໃນບ້ານຄືດັ່ງເຊັ່ນ ປູ່ຍ່າຕາຍາຍຂອງເຂົາເຈົ້າ ໃນສະໄໝກ່ອນ.

ການດຳເນີນວິຖີຊີວິດທາງດ້ານ ເສດຖະກິດ:

ຊົນເຜົ່າແທ່ນ ມີອາຊີບຕົ້ນຕໍໃນການເຮັດ ໄຮ່ປູກເຂົ້າ, ເຊິ່ງການຜະລິດຂອງເຂົາເຈົ້າ ແມ່ນ ເພື່ອກຸ້ມກິນຂອງຄົວເຮືອນເປັນຫຼັກ. ສະນັ້ນເວລາ ສ່ວນຫຼາຍຂອງເຂົາເຈົ້າແມ່ນຈະໃຊ້ຢູ່ກັບການ ເຮັດໄຮ່ເຂົ້າ, ແຕ່ຄຽງຄູ່ກັບການປູກເຂົ້າແລ້ວ ຊົນ ເຜົ່າແທ່ນ ຍັງປູກພືດຜັກຕ່າງໆໄວ້ບໍລິໂພກໃນ ຄົວເຮືອນຄື: ໃນໄຮ່ເຂົ້າຜົນດຽວນັ້ນເຂົາເຈົ້າປູກ ທັ້ງພືດຜັກ, ໝາກອຶ, ໝາກຟັກ, ໝາກຖົ່ວ, ໝາກ ເຜັດ, ໝາກເຂືອ, ໝາກໂຕ່ນ, ໝາກແຕງ, ສາລີ, ມັນແລະອື່ນໆ ເພື່ອສຳລັບລ້ຽງສັດ ແລະຮັບປະ ກັນການບໍລິໂພກໃນເວລາຂາດເຂີນເຂົ້າກິນ.

ສຳລັບການລ້ຽງສັດ ຂອງຊົນເຜົ່ານີ້ເທົ່າທີ່ ເຫັນທຸກຄອບຄົວ ຈະມີການລ້ຽງໄກ່ ແລະໝູ ເຊິ່ງ ສັດເຫຼົ່ານີ້ຈະລ້ຽງໄວ້ ເພື່ອປະກອບພິທີກຳຕ່າງໆ ແລະກ່ຳຂ້າກິນໃນບາງໂອກາດເທົ່ານັ້ນ. ຊົນເຜົ່າ ແທ່ນ ເມື່ອມີເວລາຫວ່າງເຂົາເຈົ້າ ກໍ່ຈະເດີນທາງ ມາແລກປ່ຽນຊື້ຂາຍຢູ່ຕາມຕະຫຼາດ ໃນເມືອງ ຫຼື ຕະຫຼາດທີ່ຈັດຂຶ້ນໃນທ້ອງຖິ່ນ, ສ່ວນຫຼາຍຈະເອົາ ຜົນຜະລິດຈາກໄຮ່, ພືດຜັກທີ່ຫາໄດ້ຕາມທຳມະ ຊາດ, ໄກ່, ໝູມາຂາຍ ແລະກ່ຳຈະຊື້ສິ່ງຂອງຕ່າງໆ ທີ່ ຈຳເປັນບໍ່ສາມາດຫາໄດ້ໃນບໍລິເວນບ້ານ ເຊັ່ນ: ເຄື່ອງນຸ່ງຫົ່ມ, ເກືອ, ນ້ຳຕານ, ແປ້ງນົວ,ຖ່ານໄຟ ສາຍ, ນ້ຳມັນໄຕ້ ແລະອື່ນໆ. ຍ້ອນວ່າບ້ານຂອງ ເຂົາເຈົ້າຕັ້ງຢູ່ຫ່າງໄກ, ເສັ້ນທາງລົດກໍ່ຍັງບໍ່ທັນ ໄປເຖິງ. ສະນັ້ນຈຶ່ງສາ ມາດເວົ້າໄດ້ວ່າເສດຖະກິດ ຂອງຊົນເຜົ່ານີ້ ແມ່ນເສດຖະກິດທີ່ເພິ່ງຕົນເອງ.

Thaen

Historical background:

There has been no accurate information or evidence pertaining to the historical background and origin of the Thaen. According to elder Thaen people, they migrated from present day Burma to Laos in the early nineteenth century. The reason for migrating was due to war and a need for somewhere with more comfort and security.

Presently, Thaen people settle in two villages: Ban Sa and Ban Ngiev in the Phoosanyarm region of Viengkham district in Luangprabang province.

The total population of Thaen ethnic group living in Laos amounts to the small number of 305 people, of which 148 are females (according to information provided by the village chiefs on 06/11/2001).

Name and language:

" Thaen " is the only name that these people are referred by. It is also their official name.

The Thaen language is classified as a Mon-Khmer language. Apart from their own dialect, Thaen ethnic people can speak Lao and Keummu languages well.

Society, beliefs, ceremonies and myths:

The Thaen believe in Buddhism and additionally they follow animism, believing in a number of spirits. These spirits can be spirits of house and village, nature, and ancestors.

The Thaen have important ritual ceremonies such as a feast that celebrates the spirit of a Ms. Anglang, who apparently was the woman who lead the original group of Thaen from Burma to Laos. In addition, there is a tradition of feasts and rituals for animist rites.

The social structure of Thaen ethnic group is composed of many clans. They name these clans after trees and animals. It is important not to eat the animal or plant that represents your clan name. This is to show respect and protect the good fortune of the clan.

The family pattern of Thaen people is characterized by the nuclear type family, which follows a patrilineal line of succession. Thaen may only marry those who are of a different clan, never in their own clan. After the wedding, the bride will live with her husband's parents. At this time she will adopt the customs and taboos of her husband's clan.

Women give birth at home. There are certain food taboos she must follow after delivering the baby.

The Thaen generally bury their dead in an area outside the village.

House and village:

The Thaen prefer to build their houses on stilts or posts. The inside of the house has a room for receiving visitors, relaxing, and sleeping. The other room is used for cooking places. The arrangement or division of bedrooms and the size of their house depends on the number of their household members. They also have an altar in the house for offerings to spirits. This is usually in the bedroom, and at times it may be forbidden for outsiders to enter the house. There are also times when an outsider cannot enter the village; this is usually during the time of ritual worship to a major spirit.

Agriculture and livelihood:

Thaen people grow dry-land rice through slash-and-burn cultivation. At the same time they grow vegetables such as: pumpkin, wax gourd, legumes, chili, eggplants, bell gourd, cucumber, maize, root crops and others for their domestic animals and to supplement their diet when there is a rice shortage.

The Thaen raise chickens and pigs, which will be used for sacrifice and consumption. In their free time they will go to local markets to sell their produce, including vegetables, chickens and pigs. As they live far away from the main roads, it can be said their livelihood is one of basic self-subsistence.

ຊົນເຜົ່າບິດ

ປະຫວັດຄວາມເປັນມາ:

ຊົນເຜົ່າບິດແມ່ນຊົນເຜົ່າໜຶ່ງ ໃນວົງຄະນາຍາດແຫ່ງຊາດລາວເອກະພາບ, ເຂົາເຈົ້າໄດ້ມາຕັ້ງຫຼັກປັກຖານບົນດິນແດນແຫ່ງນີ້ ແຕ່ສະຕະວັດທີ 5 ເປັນຕົ້ນມາ, ຊົນເຜົ່າບິດໄດ້ເຄື່ອນຍ້າຍເຂົ້າມາດິນລາວ ຊ່ວງໄລຍະດຽວກັນກັບຊົນເຜົ່າກຶມມຸ ແລະລະເມດ, ແຕ່ກ່ອນມີນິທານກ່າວວ່າ ເຜົ່າກຶມມຸ ແລະເຜົ່າບິດ ແມ່ນອ້າຍນ້ອງຮ່ວມອຸທອນດຽວກັນ, ແຕ່ເນື່ອງມາຈາກຄວາມເຂົ້າໃຈຜິດໃນການແບ່ງຊີ້ນໂຕຊ້າງ ແລະຊີ້ນໂຕເໝັ້ນຈຶ່ງແຕກແຍກກັນ. ຜູ້ເປັນນ້ອງໄດ້ເຂົ້າປ່າແລ້ວຮຽນເອົາສຽງນົກຕົກຕາດ, ສຽງກົກໄມ້ສີກັນ, ສຽງໂຕສັດຮ້ອງເປັນພາສາຂອງຕົນເອງ...ສະນັ້ນຄົນຊົນເຜົ່າບິດຈຶ່ງຮູ້ທັ້ງພາສາກຶມມຸ ແລະມີທັ້ງພາສາຂອງຕົນເອງ, ສ່ວນຄົນກຶມມຸ ບໍ່ສາມາດຮູ້ພາສາຂອງເຜົ່າບິດໄດ້.

ປະຈຸບັນຊົນເຜົ່າບິດ ສ່ວນຫຼາຍຈະດຳລົງຊີວິດຢູ່ແຂວງຜົ້ງສາລີ, ອຸດົມໄຊ ແລະຫຼວງນ້ຳທາ. ຕາມ ຂໍ້ມູນສຳຫຼວດພົນລະເມືອງ ຄັ້ງທີ II ໃນ ປີ 1995,ຊົນເຜົ່າ ບິດ ມີພົນລະເມືອງ 1.509 ຄົນ ໃນນັ້ນ ມີຍິງ 747 ຄົນ.

ຊື່ເອີ້ນ:

ຊົນເຜົ່າອື່ນເອີ້ນໃຫ້ຊົນເຜົ່າບິດວ່າ:"ຂ້າ ບິດ ຫຼື ຂະບິດ" ,ແຕ່ເຂົາເຈົ້າບໍ່ມັກ, ຊື່ທີ່ເຂົາມັກແມ່ນຄຳວ່າ: "ບິດ" ມີຄວາມໝາຍວ່າພິກປັ້ນຈາກເຜົ່າໜຶ່ງ ແລະພາສາໜຶ່ງມາເປັນຊົນເຜົ່າໃໝ່ ແລະພາສາໃໝ່.

ພາສາ:

ຊົນເຜົ່າບິດ ມີພາສາປາກເວົ້າເປັນ ຂອງຕົນເອງສະເພາະ,ເຊິ່ງພາສາດັ່ງກ່າວຈັດເຂົ້າໃນໝວດພາສາມອນ-ຂະແມ. ສະນັ້ນພາສາປາກເວົ້າຂອງເຂົາເຈົ້າຈຶ່ງມີຫຼາຍຄຳຄ້າຍຄືກັບພາສາປາກເວົ້າຂອງຊົນເຜົ່າກຶມມຸ, ລະເມດ ແລະສາມຕ່າວ. ພ້ອມກັນນັ້ນກໍ່ມີບາງຄຳເວົ້າຂອງບັນດາເຜົ່າ ໃນໝວດພາສາມອນ-ຂະແມ ຢູ່ທາງພາກໃຕ້ຂອງລາວເຮົາ. ເຜົ່າບິດບໍ່ມີຕົວໜັງສືຂຽນ, ເຜົ່າບິດຍັງຮູ້ພາສາຂອງຊົນເຜົ່າທີ່ຢູ່ໃກ້ຄຽງເຊັ່ນ: ພາສາຊົນເຜົ່າລໍ້, ຢ້ຳ, ຍວນ, ລະເມດ ແລະເຜົ່າອື່ນໆ

ຮີດຄອງປະເພນີ, ຄວາມເຊື່ອຖື ແລະວັດທະນະທຳ-ສັງຄົມ :

ຊົນເຜົ່າບິດເຊື່ອຖືຜີ ແຫ່ງບັນພະບູລຸດຂອງຕົນເປັນຕົ້ນ ແມ່ນຜີພໍ່, ຜີແມ່ (ຜີເຮືອນ),ຜີບ້ານ, ຜີເມືອງ.ແຕ່ລະເຮືອນລ້ວນແຕ່ມີຮ້ານ ເພື່ອບູຊາຜີບັນພະບູລຸດຂອງຕົນ. ການຈັດພິທີລ້ຽງຜີນັ້ນຈະອີງໃສ່ຄວາມສຳຄັນຫຼືບົດບາດ ຂອງແຕ່ລະຜີເຊິ່ງຈະມີການຕົບແຕ່ງຕ່າງກັນ.

ຊົນເຜົ່າບິດນັບຖືຕະກຸນເຊື້ອສາຍທາງພໍ່ເປັນສຳຄັນ ແລະສືບຕະກຸນທາງພໍ່, ເມື່ອແມ່ຍິງ

ແຕ່ງດອງ ແລ້ວຕ້ອງໄປຢູ່ເຮືອນນຳພໍ່ແມ່ຂອງຜູ້ເປັນຜົວ,ເຂົາເຈົ້າມີປະເພນີຜົວດຽວ, ເມຍດຽວ ແລະເປັນລະບົບຄອບຄົວດຽວ.

ຊົນເຜົ່າບິດ ປະກອບດ້ວຍຫຼາຍຕະກຸນ , ຫຼາຍ ສິ່ງຊາວ, ແຕ່ສິ່ງທີ່ເອກະພາບກັນ ແມ່ນແຕ່ ລະສິ່ງຊາວ ລ້ວນແຕ່ເອົາໂຕສັດເປັນຕະກຸນຂອງ ຕົນເຊັ່ນ: ເສືອ, ສິ່ງລໍ, ສິ່ງລົ່ວ, ງູ, ໄກ່ປ່າ...ເຂົາເຈົ້າ ຈະມີຂໍ້ຫ້າມ ແລະການຄະລຳ ໃນການຈັບບາຍ, ການຂ້າ ແລະການກິນສັດດັ່ງກ່າວ, ທັ້ງນີ້ກໍເພື່ອ ເປັນການເຄົາລົບນັບຖື ແລະບູຊາຕໍ່ຕະກຸນຂອງຕົນ.

ຊົນເຜົ່າບິດນິຍົມສ້າງ ແລະຢູ່ເຮືອນຮ້ານ ໃນເຮືອນຈະມີຮ້ານບູຊາຜີ, ນັ້ນເປັນສອງຫ້ອງຄື: ຫ້ອງຂອງ ພໍ່ແມ່ ແລະຫ້ອງທົ່ວໄປ, ແຂກຄົນທາງ ນອກ ຈະບໍ່ມີສິດລ່ວງເຂົ້າຫ້ອງຂອງພໍ່, ແມ່ ແລະ ລ່ວງລະເມີດຮ້ານຜີ.

ປະເພນີການເກີດລູກ ແມ່ນເກີດຢູ່ໃນ ເຮືອນ , ໃນເວລາຢູ່ກຳເດືອນຈະຄະລຳບໍ່ກິນຊີ້ນ ດິບ, ປະເພດອາຫານເໝັນຄາວ ແລະເຜັດ. ໃນ ໄລຍະຢູ່ກຳພໍ່ແມ່ ແລະຍາດຕິພີ່ນ້ອງຂອງເດັກ ຈະ ເອົາເດັກໃສ່ກະດົ້ງຝັດເຂົ້າ ແລ້ວຈັບຂຶ້ນເທິງເຕົາ ໄຟ, ແກວ່ງໄປແກວ່ງມາ ເພື່ອຖາມວ່າເດັກດັ່ງກ່າວ ຈະຢູ່ເຮືອນຄົນ ຫຼືຈະໄປເມືອງຜີ. ຈາກນັ້ນຈຶ່ງໃສ່ ຊື່, ມັດແຂນ ເພື່ອເອີ້ນຂວັນເດັກໃຫ້ຢູ່ນຳພໍ່ນຳແມ່.

ຮີດຄອງເວລາມີການຕາຍ ຈະມີການ ຄົບງັນບໍ່ດົນ ແລະສິ່ງສະການດ້ວຍການຝັງສົບ.

ຊົນເຜົ່າບິດ ມີປະເພນີເອີ້ນຂວັນເຮືອນ ແລະຂວັນບ້ານໃນທຸກໆປີ ລະຫວ່າງຮອບວຽນ ຂອງການປູກເຂົ້າໄຮ່. ນອກນີ້ເວລາມີການເຈັບ ເປັນ ຫຼືເກີດພະຍາດຕ່າງໆ ເຂົາເຈົ້າກໍ່ຈະເຮັດພິທີ ເພື່ອຂໍຮ້ອງໃຫ້ຈິດວິນຍານ ຫຼືຜີທີ່ດີມາຊ່ວຍໃນປີ ໜຶ່ງໆເຂົາເຈົ້າມີການຈັດພິທີສະເຫຼີມສະຫຼອງ ຫຼື ມ່ວນຊື່ນສອງເທື່ອຄື: ເວລາບຸນດອກຝ້າງແດງ ແລະເວລາຈູດໄຮ່ເຂົ້າ.

ດ້ານສິລະປະວັນນະຄະດີ ຂອງຊົນເຜົ່າ ບິດ ເຂົາເຈົ້າບໍ່ມີການຂັບລຳ ແລະນິທານພື້ນ ເມືອງຕ່າງໆ ທີ່ ເປັນເອກະລັກສະເພາະຂອງຕົນ, ໃນກໍລະນີມ່ວນຊື່ນ ກໍຈະຮ້ອງເພງລາວ, ຂັບລໍ້ ຫຼື ຂັບຊົນເຜົ່າອື່ນໆທີ່ຢູ່ໃກ້ຄຽງ.ຊົນເຜົ່າບິດ ບໍ່ມີ ເຄື່ອງ ນຸ່ງປະຈຳເຜົ່າ, ການນຸ່ງຖືສ່ວນຫຼາຍແມ່ນນຸ່ງເຄື່ອງ ທີ່ຫາໄດ້ຈາກ ຕະຫຼາດ.

ການດຳເນີນຊີວິດທາງດ້ານເສດຖະກິດ ຂອງເຂົາເຈົ້າມີອາຊີບໃນການເຮັດໄຮ່ ປະສົມກັບ ການເຮັດນາ, ລ້ຽງສັດ ແລະປູກພືດຜັກນອກນີ້ ຍັງ ມີການຫາປາຕາມທຳມະຊາດ ແລະມີຄວາມ ຊຳ ນານໃນວຽກງານຫັດຖະກຳຈັກສານ, ແຕ່ສຳລັບ ການຕຳ່ຫູກທ່ໍໄໝນັ້ນແມ່ຍິງຊົນເຜົ່ານີ້ບໍ່ໄດ້ເຮັດ ຈຶ່ງອາໃສການຊື້ ແລະແລກ ປ່ຽນນຳຊົນເຜົ່າອື່ນໆ.

Bid / Bit

Historical background

The Bid people have lived in Laos since the fifth century, migrating about the same time as the Keummu and Lamaed ethnic groups. Originally they came from Vietnam. Presently, the majority of Bid people live in Phongsali, Udomsai and Luangnamtha province. According to the second population census done in 1995, the total population of Bid people amounted to 1,509 people, of which 747 are female.

Name and language:

Neighboring ethnic groups often refer to the Bid as the "Khabid", but they do not like this name, preferring the name " Bid ".

Their language is a Mon-Khmer language. There language is similar to Keummu, Lamaed and the Samtao languages. The Bid people do not have their own written alphabet. They often speak the languages of their neighbors, such as the Leu, Yung, Ngouan, Lamaed and other groups.

Society, beliefs, ceremonies and myths:

The Bid practice animism, believing in spirits of the village, house, nature, and their ancestors. Each house has an altar in it for offerings to the spirits of house and village. The village will have a religious leader or shaman, called a mo mon. The mo mon is always a male. There are several religious feasts and celebrations throughout the year. They will make offering to the spirits after a good harvest, offering a pig and chicken to the spirit. When there is sickness or disease they will organize a ceremony to call the spirits and make offerings, hoping to placate those spirits who are angered and the source of the problem.

Bid families are patriarchal. The men are monogamous and the families are nuclear. There is a tradition of famiiy clans (sing) in which they are named after certain animals, such as the Tiger clan or the Snake clans. There are taboos against killing or eating the animal that represents one's clan.

Weddings are expensive, usually costing the groom a large dowry of silver,

pigs and rice whiskey. After marriage the husband moves into the wife's household.

Mothers give birth inside the house. After she gives birth she is forbidden to eat raw meat or salty food for some time. After the baby is named, a string is tied around the baby's wrist so that its soul will stay with its parents and not leave for the spirit world.

When someone dies in a family, the funeral ceremony is simple, and the deceased will be buried in a burial ground in a nearby forest.

Village and house:

Bid people prefer to build their houses on piles about two meters above the ground. The walls and flooring are built and woven out of split bamboo. There is a small porch that is reached by a bamboo ladder. There will be two bedrooms that are separated from the living quarters that contain a small hearth for cooking. There is also an altar in the house for offerings to spirits.

Agriculture livelihood:

The Bid practice mainly slash-and-burn agriculture and also grow rice using flood-paddies. They grow both glutinous and regular rice, but prefer to eat glutinous rice. They raise animals such as buffalos, cattle, pigs, goats, and poultry, and also grow many kinds of vegetables. The Bid will also hunt small animals and fish in nearby rivers. They will supplement their income by gathering products in the forest. These include herbs, wood, thatch grass and bamboo. The Bid do not weave or make traditional clothing.

ຊົນເຜົ່າເບຣິ ປະຫວັດຄວາມເປັນມາ:

ຊົນເຜົ່າເບຣິ ແມ່ນຊົນເຜົ່າໜຶ່ງທີ່ໄດ້ດຳລົງຊີວິດ ແລະຕັ້ງຖິ່ນຖານບ້ານຊ່ອງ ຢູ່ລາວມາໄດ້ ຫຼາຍຮ້ອຍປີແລ້ວ. ສຳລັບປະຫວັດຄວາມເປັນມາ ກໍ່ຄືກັກເຄົ້າເຫງົ້າກໍ່ຂອງຊົນເຜົ່າເບຣິານີ້ ບໍ່ມີຫຼັກ ຖານທີ່ຊັດເຈນ, ຕາມການໃຫ້ຂໍ້ມູນຂອງເຖົ້າແກ່ ອາວຸໂສ ຊົນເຜົ່າເບຣິ ຢູ່ແຂວງ ອັດຕະປື ໃຫ້ຮູ້ວ່າ: ຊົນເຜົ່າເບຣິ ໄດ້ເຄື່ອນຍ້າຍມາຈາກທາງພາກ ເໜືອໂດຍຜ່ານເຂດທົ່ງໄຫຫີນ ແຂວງ ຊຽງຂວາງ ແລະເຂດອື່ນໆ ແລ້ວມາຕັ້ງຖິ່ນຖານ ລຽບຕາມລຳ ເຊກອງ, ເຊກະໝານ, ເຊສຸ, ເຂດບ້ານ ແກ້ງໄຊ, ເຂດພູຮາລາງ, ຫ້ວຍກາໂດດ, ຫ້ວຍຕາເງົາ, ພູລີງ ແລະທົ່ງຊັກຊຸມ (ເຂດສາມໜຸ່ມລາວ, ຫວຽດນາມ, ກຳປູເຈຍ).

ປະຈຸບັນຊົນເຜົ່າເບຣິ ຕັ້ງພູມລຳເນົາຢູ່ ເມືອງ ໄຊເສດຖາ, ສາມັກຄີໄຊ, ສະໜາມໄຊ, ພູ ວົງ ຂອງແຂວງ ອັດຕະປື ແລະເມືອງ ໂຂງ, ປະທຸມ ພອນ, ປາກຊ່ອງ, ບາຈຽງຈະເລີນສຸກ ແຂວງ ຈຳປາສັກ . ນອກຈາກນີ້ແລ້ວ ຊົນເຜົ່າເບຣິາຍັງມີຢູ່ແຂວງ ກອນຕູມ ປະເທດ ຫວຽດນາມ ແລະແຂວງ ລັດ ຕະນະຄີລີ ປະເທດ ກຳປູເຈຍ.

ຊົນເຜົ່າເບຣິ ຢູ່ໃນລາວມີພົນລະເມືອງ 17.544 ຄົນ, ຍິງ 8.842 ຄົນເທົ່າກັບ 0,4% ຂອງ ພົນລະເມືອງທົ່ວປະເທດ (ຜົນການ ສຳຫຼວດ ພົນ ລະເມືອງ ທົ່ວປະເທດ ຄັ້ງທີ II ປີ 1995).

ຊື່ເອີ້ນ:

ຊື່ທີ່ພວກເຂົາເຈົ້າເຄີຍເອີ້ນຕົນເອງ ແລະ ສະໝັກໃຈນັ້ນແມ່ນເບຣິາເຊິ່ງມີຄວາມໝາຍເຖິງ ສຽງນົກຮ້ອງ.ຊື່ທີ່ຊົນເຜົ່າອື່ນເອີ້ນໃຫ້ເຂົາເຈົ້າ ແມ່ນ "ລະແວ ແລະລຸຍເວ" , ເຊິ່ງມີຄວາມ ໝາຍຄ້າຍ ຄືກັນເຊັ່ນ:ລະແວໝາຍເຖິງຕະແວ (ເຫຼົ້າ), ລະແວ ໝາຍເຖິງແວ່ນັ້ນແວ່ນີ້ ແລະລະແວ ມາຈາກຄຳ ທີ່ ວ່າລຸຍເວ ໝາຍເຖິງຊົ່ນາຍທະຫານຝຣັ່ງ ທີ່ບັນຊາ ທະຫານປະຈຳຢູ່ເຂດຊົນ ເຜົ່າເບຣິາ ອາໃສ່ຢູ່ໃນ ເວລານັ້ນ.

ພາສາ:

ຊົນເຜົ່າເບຣິາ ບໍ່ມີຕົວໜັງສືຂຽນ, ແຕ່ມີ ພາສາປາກເວົ້າເປັນອັນສະເພາະຂອງຊົນເຜົ່າຕົນ ເອງ ເຊິ່ງຈັດເຂົ້າໃນໝວດພາສາມອນ-ຂະແມ, ທັງແມ່ນສາຂາພາສາບັນນາຣິກ.

ແຕ່ລະເຂດຂອງຊົນເຜົ່າເບຣິາ ມີພາສາ ປາກເວົ້າຄ້າຍຄືກັນ ແລະແຕກຕ່າງກັນ, ແຕ່ກໍ່ສາ ມາດເຂົ້າໃຈກັນໄດ້. ນອກຈາກພາສາຂອງຊົນ ເຜົ່າຕົນເອງແລ້ວ ຊົນເຜົ່າເບຣິາ ສາມາດເວົ້າພາ ສາຂອງຊົນເຜົ່າເຈ້ງ, ໂອຍ, ຢຣຸ, ຍະເຫີນ, ສະດາງ ແລະພາສາລາວໄດ້ດີ.

ຮີດຄອງປະເພນີ,ຄວາມເຊື່ອຖື ແລະວັດທະນະທຳ-ສັງຄົມ :

ຊົນເຜົ່າເບຣິາ ແມ່ນເຊື່ອຖືຜີ, ໄດ້ມີ ຄວາມສຳນຶກເຖິງສິ່ງສັກສິດທັງປວງ ແລະຮູ້ສຶກ ດ້ວຍການສຳຜັດ ເຖິງຜີທີ່ສັກສິດ ເຊິ່ງເປັນຜູ້ປະດິດ ສ້າງໂລກຈັກກະວານຄື: ຟ້າ, ດິນ, ຝົນ, ນ້ຳ, ລົມ, ການມີຊີວິດ ແລະການຕາຍ.

ໃນປີໜຶ່ງໆ ພວກເຂົາເຈົ້າເຮັດງານບຸນ ປະເພນີ ເຊັ່ນ: ພິທີງານພະວຽງ, ພະດຽງ, ພະມັນ, ພະໄຟ ເຊິ່ງເຂົາເຈົ້າຈະໄດ້ຈັດຂຶ້ນຕາມແຕ່ໄລຍະ ຂອງການຜະລິດ.

ຊົນເຜົ່າເບຣິ ໄດ້ມີສິລະປະວັນນະຄະດີ ມີບົດຮ້ອງທຳນອງເສບທີ່ໜ້າຈັບໃຈເຊັ່ນ: ລຳ ເຈືອງຕໍ່ສູ້, ລຳເຈືອງນິທານ, ມີບົດຟ້ອນ, ມີເຄື່ອງ ດົນຕີພື້ນເມືອງ ແລະນິທານພື້ນເມືອງຢ່າງຫຼວງ ຫຼາຍເຊັ່ນ: ເລື່ອງຢະກຶນດີຍ, ນິທານຢະກຸງ, ຢະ ເດົ້າມາມ ແລະອື່ນໆ.

ສະໄໝກ່ອນບ້ານ ຂອງຊົນເຜົ່າເບຣິ ເປັນຮູບວົງມົນມີສາລາກວານ ຢູ່ເຄິ່ງກາງ,ເຂົາເຈົ້າ ມີ ຮົ້ວອ້ອມບ້ານ ແລະໄດ້ປູກກ້ວຍ ຢູ່ແຄມ ປາກ ປະຕູໂຂງເຂົ້າບ້ານ ເພື່ອປ້ອງກັນບໍ່ໃຫ້ຟ້າຜ່າ ແລະ ປູກ ຫວ້ານນາໆຊະນິດ ເພື່ອປ້ອງ ກັນຜູ້ຄົນ ບໍ່ດີທີ່ຫວັງທຳລາຍມ້າງເພຄວາມສະຫງົບສຸກ ຂອງຊາວບ້ານ. ເຮືອນຂອງຊົນເຜົ່າເບຣິ ແມ່ນ ເຮັດດ້ວຍໄມ້ຈິງ, ມີ 2 ພັກຄື: ພັກລຸ່ມເປັນສະຖານ ທີ່ກິນເຂົ້າ, ເປັນ ບ່ອນແຕ່ງກິນ, ບ່ອນດື່ມເຫຼົ້າ ແລະ ພັກຜ່ອນຢ່ອນອາລົມ, ພັກເທິງເປັນສະຖານທີ່ ສຳລັບນອນ ແລະເອົາເຄື່ອງຂອງໄວ້, ພິເສດຖ້າ ເຮືອນໃດມີລູກສາວຈະຕ້ອງເກາະອອກອີກຫ້ອງ ໜຶ່ງສູງກວ່າພັກທີ 2 ເປັນພັກທີ 3 ເພື່ອໃຫ້ລູກ ສາວນອນ.

ວັດທະນະທຳການນຸ່ງຖື, ແຕ່ງກາຍ, ແຕ່ ກ່ອນຜູ້ຊາຍຊົນເຜົ່າເບຣິ ແມ່ນນຸ່ງກະຕ່ຽວ, ເກົ້າ ຜົມ, ບ່ອງຫູໃສ່ຕ້າງທີ່ເຮັດດ້ວຍງາຊ້າງ ຫຼືໄມ້, ສັກ ລາຍຕາມຕົນຕົວ, ໜ້າເອິກ, ໜ້າຜາກ, ແກ້ມ ແລະ ບ່ອນອື່ນໆ, ມີປະເພນີການຕັດແຂ້ວ,ໃສ່ປອກ ແຂນປອກຕີນ ແລະໝາກປົດ. ສຳລັບແມ່ຍິງ ແມ່ນ ນຸ່ງສິ້ນກາໂດ, ທີ່ມເສື້ອສີດຳ, ລາຍເຮ້ຍ, ເກົ້າຜົມ ປັກແຊມດ້ວຍຝ້າຍສີແດງ ແລະສີຂາວ,ໃສ່ຫົວໄມ້ ຫຼືຫວີທີ່ເຮັດດ້ວຍເຂົາຄວາຍ, ບ່ອງຫູໃສ່ຕ້າງງາ ຊ້າງ, ສັກລາຍຕາມຕົນຕົວຄືກັນກັບຜູ້ຊາຍ.

ຊາວໜຸ່ມຍິງຊາຍ ຂອງຊົນເຜົ່າເບຣິ ມີ ເສລີພາບໃນການເລືອກຄູ່ຜົວເມຍ ແລະຝ່າຍເຈົ້າ ບ່າວເປັນເຈົ້າພາບໃນການສູ່ຂໍເຈົ້າສາວ ການແຕ່ງ ດອງຈະດຳເນີນຢູ່ເຮືອນເຈົ້າສາວ. ຊີວິດຫຼັງການ ແຕ່ງດອງຜູ້ຊາຍຕ້ອງ ໄປຢູ່ເຮືອນນຳພໍ່, ແມ່ຂອງ ຝ່າຍຍິງເປັນໄລຍະເວລາ 3 ປີ ກ່ອນທີ່ຈະກັບຄືນ ມາຢູ່ເຮືອນນຳພໍ່, ແມ່ຂອງຕົນພ້ອມດ້ວຍເມຍ ແລະລູກໆ .ຖ້າບໍ່ເຈັບເປັນກໍ່ຢູ່ຕະຫຼອດໄປ, ຖ້າມີ ການເຈັບເປັນເນື່ອງຈາກຜີເຮືອນກໍ່ຕ້ອງກັບເມືອ ຢູ່ເຮືອນຂອງພໍ່, ແມ່ຝ່າຍຍິງ. ເຂົາເຈົ້າມີປະເພນີ ໃນການເອົາເມຍຄື: ຖ້າອ້າຍເສຍຊີວິດ, ຜູ້ເປັນ ນ້ອງຊາຍສາມາດສືບຕໍ່ເອົາເມຍຂອງອ້າຍໄດ້, ແຕ່ ກໍລະນີນ້ອງຕາຍອ້າຍບໍ່ມີສິດສືບເມຍນ້ອງ ໂດຍ ທົ່ວໄປໃນສັງຄົມຂອງຊົນເຜົ່າເບຣິ ສ່ວນຫຼາຍແລ້ວ ເຂົາເຈົ້າສືບສາຍຕະກຸນຕາມພໍ່. ເມື່ອມີຄົນເສຍຊີ ວິດແມ່ນໄດ້ເອົາອອກຈາກເຮືອນໃສ່ໂລງ ທີ່ເຮັດ ດ້ວຍໄມ້ເອົາໄວ້ຢູ່ຫ້ອງເຮືອນນ້ອຍ ແລະຈະມີ ການຄົບ ງັນປະມານ 2-3 ຄືນຈຶ່ງຄ່ອຍໄປຝັງ.

ປະເພນີການເກີດລູກ ຂອງຊົນເຜົ່າ ເບຣິ, ເຂົາເຈົ້າເກີດລູກຢູ່ເຮືອນ ແລະກ້ອງຕະ ລ່າງເຮືອນ, ມີການຢູ່ກຳປະມານ 3-5 ວັນ.

ການດຳເນີນຊີວິດທາງດ້ານເສດຖະກິດ, ໃນເມື່ອກ່ອນຊົນເຜົ່າເບຣິ ຖືການຖາງປ່າເຮັດໄຮ່ ປູກເຂົ້າຈ້າວເປັນຕົ້ນຕໍ, ການລ່າເນື້ອເກັບເດັດຜັກ ປ່າ, ຫາປາຕາມທຳມະຊາດ ປູກສາລີ, ເຜືອກມັນ ເປັນອາຊີບຕົ້ນຕໍ. ພ້ອມກັນນີ້ເຂົາເຈົ້າຍັງມີຄວາມ ຊຳນານງານໃນການ ເຈາະໄມ້ເຮັດກະໂຕກ ແລະ ຫັດຖະກຳຈັກສານຕ່າງໆ, ແຕ່ມາຮອດປະຈຸບັນ ຊົນເຜົ່າເບຣິ ຫຼາຍເຂດໄດ້ຫັນອາຊີບຈາກການ ຖາງປ່າເຮັດໄຮ່ມາເຮັດນາປູກເຂົ້າຈ້າວ, ເຮັດສວນ ລ້ຽງສັດປະເ ພດຕ່າງໆ

Brao

Historical background:

The Brao ethnic group has lived in Laos for centuries. There is no clear evidence about their background or origin. According to the elderly Brao people living in Attopeu province, the Brao migrated from the north through the Plain of Jars in Xiengkhoang province and settled along Sekong, Sekamarn, and Sesoo rivers, in the intersection between the border of Laos, Cambodia and Vietnam.

Presently, the Brao live in Xaisettha, Samakkhixai, Sanarmxai and Phoovong districts of Attopeu province, and in Khong, Pathoomphorn, Paksong, and Bachiangchalernsook districts of Champassak province. In addition, Brao live also in Korntoom province of Vietnam and Lattanakhilee of Cambodia.

According to the 1995 census, the total population of the Brao living in Laos was 17,544 persons, of which 8,842 were females. The Brao make up 0.4% of the country's total population.

Name and Language:

The name preferred is "Brao" which means a sound of a bird singing. This is the name they call themselves also. Other ethnic people in Laos call them "Lavae" or "Luivae". Lavae is the name of a French army chief in charge of commanding armed forces in the region where the Brao ethnic people lived.

Classified into the Mon-Khmer language group, Brao is also on the branch of Bahnaric language. Each region where Brao people live has different dialects, but generally, they can understand each other. Apart from their own language, the Brao can speak also the languages of Chieng, Oy, Yru, Nyahern, Sadahng and Lao people. The Brao do not have an alphabet.

Beliefs, ceremonies and myths:

The Brao believe in animism, conscious of things sacred and containing spirits that creates and controls the sky, land, rain, water, wind, life and death. They believe in a Creator, called the paxay.

During the year there are numerous traditional feasts such as the Pahvieng, Pahdieng, Pahmun and Pahphai, which take place during different times of the year. These feasts are held to honor and respect the spirits.

Young Brao couples have freedom in choosing their mate. The groom is responsible for asking the bride to marry. The wedding ceremony is held at the house of the bride, and after the wedding, the husband must live in the wife's house for three years before he can return to live in his parents' house. Then he is free to move back accompanied by his wife and children. If no one falls seriously ill, the family may stay there indefinitely. However, if there is a serious illness in the household, and it is believed the household spirits are not happy, the husband and his family will return to the wife's family.

If the older brother dies, the younger brother can take his sister in law as his own wife. However, if his younger brother dies, the older brother cannot take his sister in law to become his wife. In general, the

Brao follow the practice of a paternal bloodline.

Brao people entertain themselves with interesting songs and rhythmic stories, different types of dances, musical instruments, and folk tales such as the Yakeundeuy, Yakoong, and Yadaomarm stories and others.

The Brao bury their dead in a coffin that is made from a hollow log. A funeral party is held where the relatives and friends show their respect. They dance and sing around the coffin. After a few days the body is buried and a small house is built atop the grave.

Village and House:

Previously, a Brao village was in a round shape with a *Salakwan* (communal house) located in the center of a village. They made a fence surrounding the village and planted banana trees at the village gate to protect against thunderstorms. Different types of gingers were also grown near the gate to protect against people who would cause harm to the village. A village usually consists of 20 to 60 houses, with more than a hundred families.

A Brao house is made of timber with two stories. The first story is used for preparing and cooking meals, drinking alcohol and general relaxation. The second one is used for sleeping, and storing household belongings. If a family has a daughter, the house must be extended with a room, which is higher than the second story. This becomes the third story for the daughter.

Costume:

In regards to their culture of dressing, ornaments and make up, Brao men traditionally wore a katiav, or loincloth. They tied up their hair, pierced a large hole in their ear to wear large earrings of ivory or wood, and tattooed their chest, back and cheeks. They also have a tradition of cutting their teeth. Women wore the Kado Sinh (traditional skirt), with a black shirt. They rolled up and tied their hair with red and white strings, or used a wooden or ivory comb. They also tattooed their bodies like Brao men and wore large earrings.

Agriculture and livelihood:

Previously, Brao people mainly practiced slash and burn cultivation of dry-land rice, combined with hunting, gathering and fishing. They also grew maize, taro, and other root crops. Additionally, they are skillful at wooden carving and other handicraft skills, especially in basketry. Presently, the Brao in many regions have moved from slash and burn cultivation to paddy farming of rice, vegetable gardening and raising various types of domestic animals. However, in some remote Brao villages, the villagers still live on subsistence agriculture and simple barter.

ຊົນເຜົ່າ ປະໂກະ
ປະຫວັດຄວາມເປັນມາ

ສຳລັບຊົນເຜົ່າປະໂກະຢູ່ລາວເຮົາ ໄດ້ອົບພະຍົບ ແລະເຄື່ອນຍ້າຍມາຈາກ ປະເທດ ຫວຽດນາມ ໂດຍສະເພາະແມ່ນເມືອງ ອາເລື້ອຍ ແຂວງ ທຽນ ເທວ ແລະເມືອງ ຮ້ຽຮວາ ແຂວງ ກວາງຕຼີ ຜ່ານ ສາຍພູຫຼວງແລ້ວມາຕັ້ງຖິ່ນຖານພູມລຳເນົາຢູ່ ເຂດ ອາຕຸດ, ອາແດງ ແລະ ກູຕ່າຍ ເມືອງ ສະໝ້ວຍ ແລະ ເຂດຕະຮວກ, ປະຈາມ, ຕະລໍ ເມືອງ ຕະໂອ້ຍ ແຂວງ ສາລະວັນ.

ປະຈຸບັນຊົນເຜົ່າປະໂກະ ກໍ່ຍັງຄົງດຳລົງ ຊີວິດ ແລະຕັ້ງຖິ່ນຖານພູມລຳເນົາ ເປັນສ່ວນຫຼາຍ ຢູ່ເມືອງສະໝ້ວຍ ແລະເມືອງ ຕະໂອ້ຍ ແຂວງ ສາ ລະວັນ ເໝືອນເດີມ. ນອກຈາກນີ້ແລ້ວ ຊົນເຜົ່າປະ ໂກະ ຍັງມີຢູ່ປະເທດຫວຽດນາມອີກດ້ວຍ.

ຊົນເຜົ່າປະໂກະຢູ່ລາວ ມີພົນລະເມືອງ ທັງໝົດ 13.224 ຄົນ, ຍິງ 6.693 ຄົນ. ເທົ່າກັບ 0,3% ຂອງພົນລະເມືອງ ທົ່ວປະເທດ. (ຕາມສະ ຖິຕິການສຳຫຼວດພົນລະເມືອງ ຄັ້ງທີ II ປີ 1995).

ຊື່ເອີ້ນ

ຊົນເຜົ່ານີ້ເອີ້ນຕົນເອງວ່າ "ປະໂກ"ຊົນ ເຜົ່າອື່ນເອີ້ນເຂົາເຈົ້າກໍ່ແມ່ນ "ປະໂກະ" ແລະ ຊື່ ທີ່ເຂົາເຈົ້າມັກກໍ່ແມ່ນຊົນເຜົ່າປະໂກະ.

ສຳລັບຄວາມໝາຍຂອງຄຳທີ່ເອີ້ນວ່າ: "ປະໂກະ" ນີ້ມີຫຼາຍຂໍ້ມູນທີ່ຄ້າຍຄືກັນ ແລະແມ່ນ ການໃຫ້ຄວາມໝາຍຕາມພາສາ ຂອງຊົນເຜົ່ານີ້ ເອງ ເຊິ່ງແມ່ນການນຳເອົາສອງຄຳມາລວມເຂົ້າ ກັນຄື: "ພະ ແປວ່າຟາກເບື້ອງນັ້ນ ແລະ ໂກະ ແປ ວ່າ ພູ " ເມື່ອເອົາສອງຄຳມາລວມເຂົ້າກັນຈຶ່ງມີ ຄວາມໝາຍວ່າ: " ຟາກພູເບື້ອງນັ້ນ ".

ຊົນເຜົ່າປະໂກະ ປະກອບດ້ວຍສອງແຊ ຄື : ກາໂດ ແລະກາໄນ.

ພາສາ

ຊົນເຜົ່າປະໂກະ ມີພາສາປາກເວົ້າທີ່ເປັນ ເອກະລັກຂອງຕົນເອງ ເຊິ່ງພາສາຂອງເຂົາ ເຈົ້າຈັດຢູ່ໃນຫມວດພາສາຢູ ໃນໝວດພາສາ ມອນ-ຂະແມ.ຊົນເຜົ່ານີ້ບໍ່ມີຕົວໜັງສືຂຽນ.

ຮີດຄອງປະເພນີ, ຄວາມເຊື່ອຖື, ວັດທະນະທຳ-ສັງຄົມ

ຊົນເຜົ່າປະໂກະ ມີຮີດຄອງປະເພນີ ແລະ ວັດທະນະທຳທີ່ຫຼາກຫຼາຍເໝືອນກັນກັບບັນດາຊົນ ເຜົ່າຕ່າງໆ ໃນໝວດພາສາມອນ-ຂະແມ, ເຖິງ ແມ່ນວ່າເຂົາເຈົ້າຈະບໍ່ມີຕົວໜັງສືບັນທຶກ ເປັນລາຍ ລັກອັກສອນໄວ້ຢ່າງຄັກແນ່ກໍ່ຕາມ, ແຕ່ກໍ່ເປັນ ເລື່ອງທີ່ເລົ່າກັນດ້ວຍປາກຕໍ່ປາກ ແລະສົ່ງຜ່ານລຸ້ນ ຄົນໜຶ່ງສູ່ອີກລຸ້ນຕໍ່ໆມາ, ເປັນປະສົບການທີ່ສະສົມ ຈາກການດຳລົງຊີວິດປະຈຳວັນ ຈຶ່ງໄດ້ກາຍມາ ເປັນຮີດຄອງປະເພນີ ທີ່ໄດ້ສືບທອດມາແຕ່ເຊັ່ນປູ່ ຍ່າຕາຍາຍ ແລະຖືວ່າເປັນເອກະລັກຂອງຊົນເຜົ່າ ເຂົາເຈົ້າເອງ. ເຂົາເຈົ້າຍັງຍຶດໝັ້ນຢູ່ກັບຄວາມເຊື່ອ ໃນສິ່ງສັກສິດ ແລະສິ່ງທີ່ລັບລີ້ ກໍ່ຄືຢູ່ເໜືອທຳມະ

ຊາດເຊິ່ງຍາກແກ່ການຈະຊອກຫາຄຳຕອບ ດັ່ງຈະເຫັນວ່າເຂົາເຈົ້າມີຄວາມເຄັ່ງຄັດໃນເລື່ອງຮີດ ເຊິ່ງມີແອບແຝງຢູ່ເກືອບທຸກໆເລື່ອງ. ພ້ອມກັນນີ້ກໍ່ຍັງເຊື່ອຖືໃນເລື່ອງຂອງຈິດວິນຍານ ແລະຜີອີກ ເຊັ່ນ: ຜີພໍ່ຜີແມ່, ຜີເຮືອນ, ຜີບ້ານ ແລະຜີພູຜາປ່າດົງເຫຼົ່ານີ້ເປັນຕົ້ນ.

ໂຄງສ້າງທາງສັງຄົມ ຂອງຊົນເຜົ່າປະຈຸບັນສັງຄົມຂອງຊົນເຜົ່າປະໂກະ ຈະມີການປົກຄອງແບບເປັນທາງການປະສົມປະສານກັບການປົກຄອງແບບຮີດຄອງປະເພນີ ເຊິ່ງກໍ່ຍັງມີອິດທິພົນຢູ່. ຄຽງຄູ່ກັນນີ້ໃນສັງຄົມຂອງເຂົາເຈົ້າ ກໍ່ຈະປະກອບດ້ວຍຫຼາຍຕະກຸນ ເຊິ່ງແຕ່ລະຕະກຸນຈະມີຊື່ສະເພາະ ແລະມີຂໍ້ຫ້າມກໍ່ຄືການຄະລຳທີ່ແຕກຕ່າງກັນອອກໄປ. ດ້ານລະບົບຄອບຄົວເລືອດເນື້ອເຊື້ອສາຍ ແລະການສືບຕະກຸນຂອງຊົນເຜົ່າປະໂກະກໍ່ບໍ່ແຕກຕ່າງກັບບັນດາຊົນເຜົ່າ ໃນໝວດພາສາມອນ-ຂະແມ ໂດຍສະເພາະແມ່ນບັນດາຊົນເຜົ່າໃນກຸ່ມຊຸມຊົນບຣູ ທີ່ດຳລົງຊີວິດຢູ່ບັນດາແຂວງພາກໃຕ້ຂອງລາວ. ເຂົາເຈົ້າມີການສືບຕະກຸນທາງພໍ່ ໝາຍຄວາມວ່າ: ເມື່ອແຕ່ງດອງແລ້ວ ແມ່ຍິງຕ້ອງໄປຢູ່ເຮືອນນຳຝ່າຍຊາຍ, ແຕ່ເບິ່ງລວມ ແລ້ວລະບົບຄອບຄົວມີລັກສະນະປະສົມປະສານກັນຄືມີ ທັງລະບົບຄອບຄົວດຽວ ແລະລະບົບຄອບຄົວຂະຫຍາຍ.ໃນຄົວເຮືອນສ່ວນຫຼາຍຜູ້ຊາຍຈະມີສິດອຳນາດ ໂດຍສະເພາະແມ່ນຜູ້ຊາຍທີ່ມີອາຍຸສູງ ແລະອາວຸໂສກວ່າໝູ່ໃນຄົວເຮືອນ.

ຊົນເຜົ່າປະໂກະໃນເມື່ອກ່ອນເຂົາເຈົ້າມີປະເພນີຕັດແຂ້ວ, ບ່ອງຫູ ແລະສັກລາຍຕາມຕົນຕົວທັງນີ້ກໍ່ເພື່ອ ສະແດງເຖິງຄວາມອົດທົນ, ຄວາມ ເກັ່ງກ້າສາມາດ ແລະຄວາມສະເໝີບໍ່ວ່າຍິງ ຫຼື ຊາຍຈະນິຍົມຈົ່ງຜົມຍາວແລ້ວເກົ້າຜົມພັນດ້ວຍຜ້າແພ, ຜ່ານແຕ່ໄລຍະປະຫັວດສາດເຂົາເຈົ້າໄດ້ມີການປ່ຽນແປງ ມາຮອດປະຈຸບັນນີ້ຮີດຄອງປະເພນີບາງສິ່ງຢ່າງຖືກໝົດໄປ.

ລັກສະນະບ້ານເຮືອນຂອງຊົນເຜົ່ານີ້ ໂດຍທົ່ວໄປເຂົາເຈົ້າປຸກສ້າງບ້ານຢູ່ເຂດພູດອຍ ທີ່ຫ່າງໄກສອກຫຼີກ ໃນລະດັບຄວາມສູງປະມານ 900 ແມັດ ຂຶ້ນໄປຈາກລະດັບນ້ຳທະເລ. ເຮືອນຂອງຊົນເຜົ່າປະໂກະ ເປັນເຮືອນຮ້ານ, ແຕ່ລັກສະນະຂອງເຮືອນຈະມີສອງລະບົບທີ່ແຕກຕ່າງກັນຄື ແບບເຮືອນຍາວຢູ່ຮ່ວມກັນຫຼາຍຄອບຄົວ ແລະ ຫຼາຍເຊັ່ນຄົນ. ເຮືອນໃນລັກສະ ນະນີ້ຈະພົບເຫັນໃນສັງຄົມຂອງຊຸມຊົນ ປະໂກະ ແລະກາໂດ. ອີກ ແບບໜຶ່ງແມ່ນເຮືອນຮ້ານ ສີ່ຫຼ່ຽມບໍ່ຍາວ ເໝາະ ສຳລັບສະມາຊິກຂອງຄອບຄົວດຽວ ເຊິ່ງເຮືອນ ໃນລັກສະນະນີ້ຈ ະພົບເຫັນໃນສັງຄົມຂອງ ຊຸມ ຊົນກາໄນ.

ສຳລັບບຸນປະເພນີ ແລະພິທີກຳທາງ

ດ້ານຄວາມເຊື່ອ ຖືນັ້ນເຂົາເຈົ້າຈະມີບຸນ ປີໃໝ່ພາສາຂອງ ຊົນເຜົ່າ ປະໂກະ ເອີ້ນວ່າ: “ ຈາງະ”ເ ຊຶ່ງຈະຈັດຂຶ້ນໃນລະຫວ່າງ ເດືອນ 11-12 ຂອງ ແຕ່ລະປີ, ມີປະເພນີເຮັດບຸນກ່ຽວກັບຄົນຕາຍ , ພາ ສາຂອງເຂົາເຈົ້າເອີ້ນວ່າ: “ ລະປົບ ” ງານ ດັ່ງກ່າວມັກນອກຈາກນີ້ແລ້ວ ໃນສັງຄົມຂອງຊົນ ເຜົ່າປະໂກະ ຍັງມີຮີດຄອງປະເພນີກ່ຽວກັບ


ການຜະລິດ, ການປູກຝັ່ງ ແລະອື່ນໆອີກຢ່າງຫຼວງຫຼາຍ ໃນວົງຈອນຊີວິດຂອງຮອບປີໜຶ່ງໆ. ການທຳພິທີ ຫຼືການປະກອບພິທີຕ່າງໆນັ້ນ ມີຈຸດປະສົງເພື່ອໃຫ້ໄດ້ຜົນຜະລິດມາກມາຍຫຼວງຫຼາຍ, ບໍ່ໃຫ້ມີການເຈັບໄຂ້ໄດ້ປ່ວຍເກີດຂຶ້ນໃນບ້ານ ແລະໃຫ້ທຸກຄົນພົ້ນຈາກໄພອັນຕະລາຍຕ່າງໆ.

ຮີດຄອງປະເພນີການເກີດລູກ ຂອງຊົນເຜົ່າປະໂກະ, ເຂົາເຈົ້າຈະເກີດລູກຢູ່ນອກເຮືອນ ແລະພາຍຫຼັງເກີດລູກໄດ້ສາມວັນແລ້ວ ຈຶ່ງກັບມາເຮືອນ. ການຕັ້ງຊື່ລູກແມ່ນຂຶ້ນກັບພໍ່ແມ່, ແຕ່ສິ່ງທີ່ຄວນລະວັງກໍ່ຄືວ່າ ຜູ້ເປັນລູກບໍ່ມີສິດທີ່ຈະເອີ້ນຊື່ຂອງພໍ່, ແມ່. ສຳລັບຮີດຄອງປະເພນີ ເມື່ອມີການຕາຍນັ້ນເຂົາເຈົ້າກໍ່ຈະມີພິທີຄົບງັນ ໂດຍເອົາໃສ່ໂລງແລ້ວເອົາໄປໄວ້ເດີ່ນບ້ານ ເພື່ອຄົບງັນສອງສາມວັນຈຶ່ງເອົາໄປຝັ່ງ, ຍົກເວັ້ນກໍລະນີການຕາຍຂອງເດັກ ແລະຕາຍຫູງ. ໃນໄລຍະເວລາມີຄົນຕາຍຢູ່ບ້ານເຂົາເຈົ້າ ມີຂໍ້ຫ້າມໃນການທຳການຜະລິດ ເພາະມີຄວາມເຊື່ອວ່າ ຖ້າໄປທຳການຜະລິດຈະເຮັດໃຫ້ເຄື່ອງປູກຂອງຝັ່ງນັ້ນເນົ່າເປື່ອຍບໍ່ເກີດດອກອອກຜົນ.

ທາງດ້ານສິລະປະວັນນະຄະດີ, ເຂົາເຈົ້າມີກອນຂັບລຳ, ຄຳສຸພາສິດ, ຄຳພະຫຍາ ແລະອື່ນໆ ເຊິ່ງຖືໄດ້ວ່າເປັນເອກະລັກຂອງຕົນເອງ. ແຕ່ເອກະລັກທາງດ້ານການນຸ່ງຖື, ເອ້ຢ້ອງ ຫຼື ເຄື່ອງນຸ່ງປະຈຳເຜົ່າຂອງເຂົາເຈົ້າທຸກວັນນີ້ບໍ່ຄ່ອຍຈະເຫັນແລ້ວ. ການນຸ່ງຖືມີລັກສະນະປ່ຽນແປງ ຕາມແຕ່ລະຍຸກສະໄໝ ໂດຍສະເພາະແມ່ນເຄື່ອງນຸ່ງຈະນິຍົມເຄື່ອງທີ່ຊື້ຈາກຕະຫຼາດເປັນສ່ວນຫຼາຍ, ແຕ່ກໍ່ບໍ່ປັດສະຈາກໄດ້ ກ່ຽວກັບການຮັກສາເອກະລັກ ດ້ານການນຸ່ງຫົ່ມ ແລະການເອ້ຢ້ອງຂອງແມ່ຍິງ ບາງກຸ່ມຂອງຊົນເຜົ່ານີ້.

ການດຳເນີນວິຖີຊີວິດທາງດ້ານເສດຖະກິດ

ພື້ນຖານເສດຖະກິດ ຂອງຊົນເຜົ່າປະໂກະ ເປັນເສດຖະກິດແບບລ້ຽງຊີບຄື: ເຮັດເພື່ອຄວາມຢູ່ລອດເຊັ່ນ: ເຂົາເຈົ້າມີອາຊີບເຮັດໄຮ່ປູກເຂົ້າ, ແຕ່ມີຈຳນວນໜຶ່ງທີ່ເຮັດນາເປັນຕົ້ນແມ່ນພວກກາໄນ ການຜະລິດສ່ວນຫຼາຍ ກໍ່ເພື່ອໄວ້ບໍລິໂພກໃນຄົວເຮືອນ. ລັກສະນະຂອງການເຮັດໄຮ່ຂອງເຂົາເຈົ້າແມ່ນເຮັດໄຮ່ແບບໝູນວຽນຄື ເຮັດໄປແລ້ວປະປ່ອຍໃຫ້ເປັນປ່າເຫຼົ່າ 4-5 ປີ ກໍ່ຈະກັບຄືນມາເຮັດບ່ອນເກົ່າ. ນອກຈາກນີ້ແລ້ວເຂົາເຈົ້າຍັງປູກພືດສຳຮອງ ແລະລ້ຽງສັດ ເພື່ອເປັນອາຫານໃນຄອບຄົວ ຫຼືຮັບໃຊ້ການເຮັດພິທີກຳຕ່າງໆ. ຄຽງຄູ່ກັບອາຊີບທີ່ໄດ້ກ່າວມາ ວິຊາຫັດຖະກຳຈັກສານກໍ່ຖືວ່າເປັນມູນເຊື້ອທີ່ດີງາມຂອງຊົນເຜົ່າປະໂກະນຳອີກດ້ວຍ, ແຕ່ເປົ້າໝາຍຂອງການຜະລິດ ກໍ່ຍັງແມ່ນເພື່ອຮັບໃຊ້ໃນຄອບຄົວເທົ່ານັ້ນ, ບໍ່ທັນເປັນການຜະລິດເພື່ອເປັນສິນຄ້າສ້າງລາຍໄດ້ໃຫ້ແກ່ຄອບຄົວເທື່ອ.



PaKoh / Pacoh

Historical background:

This group migrated from Vietnam to the Aleuay district of Theuathianhue province and Heunghua district of Quang Tri province. They have also settled in Atook, Adeng and Kootai regions of Samuay district, and in Tahuak, Pangarn, and Talor region of Ta Oy district of Salavan province. Presently, the majority of the PaKoh live in Samuay and Ta Oy districts of Salavan. They also still live in Vietnam as well.

The PaKoh in Laos have a total population of 13,224, of which 6,693 were females, making up 0.3% of the country's total population according to the population census done in 1995.

Name and Language:

Calling themselves the "PaKoh," they are also referred by other ethnic groups by this name, which they prefer. It is believed that "Pah" means the "other side" and "Koh" means a "mountain". Thus, the word PaKoh means "The other side of a mountain". It is also agreed that the PaKoh people consist of two groups: the Kado and the Kanai groups.

Pah Koh is placed on the Katuic branch of the Mon-Khmer language. This ethnic group does not have a written language.

Beliefs, society, ceremonies and myths:

The PaKoh has a diverse culture that is similar to other members of the Mon-Khmer language group. Even without a written language, generations have passed on a collection of daily life experience that embodies all matters of daily life. Like all ethnic groups in Laos, they believe in spirits of their dead parents, the spirits of the household, and the spirits of the village and the forest.

The PaKoh community is lead by a group of elderly people that make up the tribal and clan heads. Presently, the PaKoh are ruled by a combination of official administration and traditional leaders of whom remain quite influential. At the same time, their society is made up of many different clans, each one with their own specific name plus different restrictions and taboos.

Relations are paternal, which means after a wedding the wife must stay at her husband's house. In general, the family is a combination of the nuclear family and extended family. In the household, men have most of the power and rights. This is particularly true among the eldest men who are generally the most prominent people in the family.

Previously, the PaKoh traditionally sharpened their teeth, pierced their ears and tattooed their body. This was to show the ability to tolerate pain, display courage and add charms that protect the body from harm. Men and women preferred to have long hair, which was rolled up with a ribbon or rope. However, some of these traditions have changed, or are no longer practiced.

The PaKoh celebrate the New Year in a festival that is called "Chah Nga". This occurs in November or December.

A feast that worships and celebrates the spirits of the dead is held annually in February or March. This is called "Lapeup". This feast is usually organized in February-March of each year. In addition, there are customs and traditions related to agricultural production, cultivation and others activities during the year. The purpose of the festivals and feasts is to ensure an abundant harvest, avoid illness, and overcome various misfortunes.

In regards to art and dress, the Pa Koh have their own unique chants, proverbs, stories and other forms of entertainment. However, they do not often dress in traditional clothing anymore, preferring to buy regular clothing in the city market. One can see some women in remote areas still dressing traditionally.

Mothers give birth outside the house and three days later she and the baby can return to the house. Naming the child is dependent on the parents, however it very important the children do not have a same name as a parent. Funeral customs includes a feast for a few days after placing the body in a coffin unless the dead is a child or death occurred in by an accident. When there is corpse in the village, villagers do not work in the fields during this time, as it is believed that crops will rot and the harvest will be bad.


Village and house

Generally, the PaKoh build their villages and houses in remote mountainous areas over 900 meters high. The houses are built on stilts, and there are two different styles. The first is a long house in which many families and generations live together. This style is found in the Kado branch of the PaKoh. The other style of housing is a square house on stilts, in which one nuclear family lives. This is seen in the Kanai branch of the PaKoh.

Economics and agriculture:

The economic base of PahKoh ethnic group is a self-subsistence type. They practice slash-and burn-cultivation of dry rice. Some also practice flood paddy rice farming. They also grow corn, sweet potatoes, vegetables and spices. They also grow some fruit.

They usually do not have buffalo, but will breed some pigs and chickens. Most of the meat that they eat is hunted in the forest. The PaKoh also forage in the forests for wild vegetables and herbs. They will occasionally work as laborers on construction sites to earn extra cash.



ຊົນເຜົ່າໄປຣ

ປະຫວັດຄວາມເປັນມາ:

ຕາມການບອກເລົ່າ ຂອງທ່ານ ເນືອງ ຮອງນາຍບ້ານໆຄອນປຸງ, ລຸງນາປະທານແນວ ໂຮມບ້ານ, ລຸງຢອດ ອາດີດຄະນະແນວໂຮມ ເມືອງໆ ໄຊຍະບູລີ ໃຫ້ ຮູ້ວ່າຊົນເຜົ່າໄປຣ ແຕ່ກ່ອນ ຢູ່ແຂວງ ຊຽງໃໝ່ລຳປາງ ຂອງປະເທດໄທ, ແຕ່ ຍ້ອນມີເສິກເສືອເໜືອໃຕ້, ການທຳມາຫາກິນມີ ຄວາມຫຍຸ້ງຍາກ, ເຂົາເຈົ້າຈຶ່ງໄດ້ຍ້າຍມາຢູ່ເຂດ ສະແມດ ແລະເຂດສັນແຕເຊິ່ງຫ່າງຈາກນີ້ 100 ກວ່າປີ. ຈາກນັ້ນກໍ່ມີການແຕກຜ່າຍຂະຫຍາຍຕົວ ເຊິ່ງປະຈຸບັນນີ້ຢູ່ເຂດຕາເວັນຕົກຂອງເມືອງ ໄຊ ຍະບູລີ ມີ ບ້ານຂອງຊົນເຜົ່າໄປຣທັງໝົດ 19 ບ້ານ, ມີພົນລະເມືອງ 23.193 ຄົນ (ຕາມການສຳຫຼວດ ພົນລະເມືອງ ທົ່ວປະເທດຄັ້ງທີ II ປີ 1995).

ຊົນເຜົ່າໄປຣ ຍັງມີຢູ່ບັນດາແຂວງພາກ ຕາເວັນອອກສ່ຽງເໜືອ ຂອງພຣະລາຊະອານາ ຈັກໄທ.

ຊື່ເອີ້ນ:

ຊື່ທີ່ວ່າ:"ໄປຣ"ແມ່ນຊື່ເອີ້ນ ເດີມແຕ່ໃດໆ ມາຂອງຊົນເຜົ່າປະຊາຊົນ ກໍ່ມັກເອີ້ນຊື່ຂອງເຜົ່າ ວ່າ:" ໄປຣ" ແລະຊື່ທາງລັດຖະການກໍ່ ໃຫ້ເອີ້ນວ່າ: "ໄປຣ"ສ່ວນຊື່ທີ່ວ່າ: "ລິວະ" ນັ້ນແມ່ນຊື່ປິດລັບ ຂອງເຜົ່າໄປຣ ເຊິ່ງແມ່ນເຂົາເຈົ້າເອງເປັນຜູ້ ກຳນົດ ແລະໃສ່ຊື່ເອງ ເພື່ອໃຊ້ໃນກໍລະນີ ທີ່ມີແຂກ ບ້ານແຂກເມືອງ ຫຼືມີຄົນເຜົ່າອື່ນມາຢາມບ້ານ ຊ່ອງ, ເຂົາເຈົ້າຈະເອີ້ນກັນວ່າ: " ລິວະ "ແຕ່ກໍ່ ໝາຍເຖິງ ໄປຣນັ້ນເອງ.

ພາສາ:

ຊົນເຜົ່າໄປຣ ມີພາສາປາກເວົ້າສະເພາະ ຂອງຕົນເອງ ແລະຈັດຢູ່ໃນໝວດພາສາມອນ-ຂະແມ, ເຊິ່ງລວມມີ 2 ແຊງ, ການແບ່ງອອກເປັນ ສອງແຊງ ກໍ່ຍ້ອນວ່າພາສາປາກເວົ້າມີຄວາມ ແຕກຕ່າງກັນບາງເລັກນ້ອຍເຊັ່ນ: ຄຳທີ່ວ່າກິນ ເຂົ້າ, ແຊງໜຶ່ງເອີ້ນວ່າ: ປົງຈະ ແລະອີກແຊງໜຶ່ງ ເອີ້ນວ່າ: ປົງຊາ, ເຜົ່າໄປຣບໍ່ມີຕົວໜັງສືຂຽນຂອງ ຕົນເອງ. ການນັບຂອງສອງແຊງ ແມ່ນຄືກັນເຊັ່ນ ວ່າ: ໂມຍ, ເປຍ, ແພະ,ໂປນ, ຊອງ, ໂທລ, ກຸງກູລ, ກຸງກັຕ, ປີ, ຕຸກ.

ຮີດຄອງປະເພນີ,ຄວາມເຊື່ອຖື ແລະວັດທະນະທຳ-ສັງຄົມ :

ຊົນເຜົ່າໄປຣ ມີຄວາມເຊື່ອຖືຜີຕາມຕະ ກຸນຂອງໃຜມັນ ຫຼືວ່າຄວາມຮູ້ບຸນຄຸນ ຕໍ່ບັນພະບຸ ລຸດຂອງຕົນ. ນອກນັ້ນກໍ່ຍັງນັບຖືຜີບ້ານ, ຜີເມືອງ, ຜີບ້ານ ແລະຜີເມືອງແມ່ນອັນດຽວກັນ, ຢູ່ທາງຫົວ ບ້ານຈະມີຕູບນ້ອຍຫຼັງໜຶ່ງ ເຊິ່ງເປັນບ່ອນບູຊາຜີ ບ້ານ, ຜີເມືອງ. ຍາມໃດປະຊາຊົນໃນບ້ານຈະເຮັດ ບຸນສົນກິນທານ ເຊັ່ນວ່າ: ບຸນເດືອນຫ້າ (ຫົດນ້ຳ), ບຸນດອກແດງ (ບຸນເຮືອນ) ປະຊາຊົນຈະຕ້ອງ ເອົາເຫຼົ້າໜຶ່ງກວດ, ກະຊວຍຫ້າອັນ, ທຽນ, ເຂົ້າ ຕົ້ມ, ເຂົ້າໜົມໄປຄອບໄຫ້ວຢູ່ຕູບນ້ອຍດັ່ງກ່າວ ເພື່ອໃຫ້ຜີຄຸ້ມຄອງ.

ຊົນເຜົ່າໄປຣ ຈະມີລະບົບຄອບຄົວ ທີ່ໜ້າ ສົນໃຈ, ສິ່ງທີ່ໜ້າສົນໃຈກວ່າໝູ່ ແມ່ນເວລາບ່າວ

ສາວຮັກມັກກັນ, ຍິງສາວຕ້ອງທຽວໄປເຮັດວຽກ ຢູ່ເຮືອນຜູ້ບ່າວຢ່າງເປັນປະຈຳຈົນຮອດມື້ແຕ່ງດອງ ເອີ້ນວ່າ ໄລຍະທົດສອບ, ຍິງສາວຕ້ອງລຸກແຕ່ເດິກ ເພື່ອຕັກນ້ຳ, ຕຳເຂົ້າ, ຫາຟືນໃຫ້ເຮືອນຂອງຜູ້ຊາຍ. ໄລຍະເວລາທົດສອບ ໃນການເຮັດວຽກດັ່ງກ່າວບ່າວສາວຈະມີຂໍ້ຫ້າມບໍ່ໃຫ້ມີການພົວພັນກັນ, ແມ່ຍິງບໍ່ມີສິດນອນຢູ່ເຮືອນຜູ້ຊາຍ, ຖ້ານອນກໍ່ນອນນຳແມ່ຍິງດ້ວຍກັນ, ຖ້າຝ່າຍຍິງ ຫຼືຝ່າຍຊາຍຫາກລະເມີດຈະຖືກປັບໄໝຕາມຮີດຄອງປະ ເ ພນີ. ຖ້າສະພາບການພົວພັນລະຫວ່າງຍິງຊາຍ ບໍ່ມີຫຍັງຜິດປົກກະຕິ, ຝ່າຍຍິງຈະໄດ້ເປັນເຈົ້າ ການໄປຂໍເອົາຜູ້ຊາຍມາເປັນເຂີຍ. ຖ້າສອງຝ່າຍ ຕົກລົງກັນແລ້ວ ກໍ່ຈະມີ ການນັດມື້ນັດວັນຄັກແນ່. ປະຕິບັດຕາມຮີດແຕ່ງເອົາເຂີຍເຂົ້າເຮືອນ" ການ ແຕ່ງດອງ ແມ່ນພາລະຂອງຝ່າຍ ຍິງທັງໝົດ ສ່ວນ ຝ່າຍຜູ້ຊາຍຈະມີພັນທະຢ່າງດຽວຄື: ການສົ່ມມັດ ສົ່ມມາຕໍ່ຝ່າຍຍິງ ເວລາມາຂໍເອົາເຂີຍເທົ່ານັ້ນ, ຜູ້ເປັນເຂີຍຈະມາຢູ່ນຳເຮືອນພໍ່ເຖົ້າ, ແມ່ເຖົ້າຢ່າງ ໂກ້ງຕະໜອດຊີວິດ ແລະຈະສືບຕະກຸນຂອງຝ່າຍ ຍິງ ໃນໄລຍະບໍ່ທັນມີລູກ ຜູ້ເປັນເມຍຈະບໍ່ກິນສັດ ແປກປະລາດ ເຊັ່ນ: ລີງລົມ, ໂຕລົ່ນ, ງູ. ເພື່ອເວລາ ມີລູກເດັກຈຶ່ງມີສຸຂະພາບສົ່ມບູນ.

ຊົນເຜົ່າໄປຣ ມີຄວາມນິຍົມຢູ່ເຮືອນ ຮ້ານ, ມຸງໃບຄໍ້, ແອ້ມ 2 ຝາໄມ້ເຮ້ຍ, ຖ້າລູກສາວ ແຕ່ງດອງເອົາເຂີຍມາເຮືອນໆ ຈະໄດ້ຖືກຕໍ່ຍາວ ອອກໄປເລີຍໆ. ເຫດຜົນຂອງເຮືອນຍາວ ກໍ່ຍ້ອນ ເຖົ້າແກ່ບໍ່ໃຫ້ແຍກກັນຢູ່ເຮືອນຈະມີຂັ້ນໄດແຕ່ ເບ້ຶອງດຽວ. ສອງຫ້ອງທຳອິດເບ້ຶອງມີຂັ້ນໄດນັ້ນ ຈະເປັນຫ້ອງຮັບແຂກ, ຫ້ອງໜຶ່ງມີເຕົາໄຟ ແລະ ຫ້ອງໜຶ່ງບໍ່ມີເຕົາໄຟໃນເຮືອນມີສອງຟາກ, ກາງ ເຄ່ິງປູໄມ້ແປ້ນໃຫ່ຍ ແຕ່ລະຟາກນັ້ນແອ້ມຂັ້ນເຮັດ ຫ້ອງນອນເປັນລ້ອກໃຜລ້ອກມັນ. ແຕ່ລະຫ້ອງ ນອນລ້ວນແຕ່ມີເຕົາໄຟໝົດ. ຢູ່ເບ້ຶອງບໍ່ມີຂັ້ນໄດ ຈະຖືກແອ້ມປິດ. ຫ້ອງສຸດທ້າຍເບ້ຶອງມີຂັ້ນໄດ, ມີ ເຕົາໄຟລວມ ແລະມີປະຕູ.

ການເກີດລູກເກີດຢູ່ໃນຫ້ອງນອນ ຂອງ ໃຜມັນ, ກຳເດືອນກໍ່ຢູ່ໃນຫ້ອງໃຜຫ້ອງມັນ ເຊ່ິງຈະ ມີແຕ່ພໍ່ແມ່ຂອງເດັກ ແລະ(ຜູ້ຊ່ວຍໃນການເກີດ ລູກ), ການໃສ່ຊ່ືຂອງເດັກຈະບໍ່ໃຫ້ ຊ້ຳກັບຊ່ືທີ່ມີ ໃນ ຄອບຄົວ. ໃນໄລຍະຢູ່ກຳຜູ້ເປັນພໍ່, ແມ່ຈະບໍ່ກິນ ຂອງດິບ ແລະຂອງຄາວ. ເວລາອອກກຳໃໝ່ພໍ່, ແມ່ເດັກຈະເຮັດພິທີມັດແຂນ ແລະສົ່ມມັດສົ່ມມາ ແມ່ຜູ້ຊ່ວຍເອົາລູກອອກເປັນຢ່າງດີ.

ສິ່ງຊາວຂອງຊົນເຜົ່າໄປຣ ຈະນັບຖືຕາມ ສອງຮີດຕ່ືນຕ ເຊ່ັນວ່າ: ຮີດສະແຫວ່ງໜວ່ງ, ຮີດສະ ແຫວ່ງນ້ອຍ. ສະແຫວ່ງມີຄວາມໝາຍເຖ່ິງຫ້ວຍ, ຮ່ອງ, ແມ່ນ້ຳບ່ອນເຜົ່າໄປຣ ຕ້ັງຖ່ິນຖານລຳເນົາຢູ່ ເຊ່ັນວ່າ: ຫ້ວຍລອງ, ຫ້ວຍສະພຸງ, ຫ້ວຍສະ ໂຊດ. ເຜົ່າຈະອີ່ງໃສ່ຊ່ືແມ່ນ້ຳຫຼືສາຍນ້ຳດັ່ງກ່າວ ເພ່ືອເປັນສ່ິງຂອງຕົນ.

ພິທີສ່ິງສະການໝໍດູ ຈະເອົາມ້ືຂອງຄົນ ຕາຍຈຸ່ມໃສ່ຖ້ວຍທ່ີມີນ້ຳ ເພ່ືອເບ່ິງວ່າຕາຍດ້ວຍ

ເທດຜົນໃດ, ໝໍດູຍັງເຮັດນ້ຳສົ້ມປ່ອຍໃສ່ຄຸ ຫຼືຊາມ ໄວ້ຢູ່ຕີນຂັ້ນໄດ, ເວລາຍາດຕິພີ່ນ້ອງມາຄົບງັນ, ກ່ອນຈະກັບບ້ານກໍ່ລ້າງມື ແລະເອົານ້ຳມົນດັ່ງ ກ່າວລູບໆໃສ່ຫົວຂອງຕົນ. ເຜົ່າໄປຣ ງັນເຮືອນດີ ແຕ່ມື້ດຽວ, ສິ່ງສະການດ້ວຍການຝັ່ງສົບ. ກ່ອນຈະ ໄປຝັ່ງຈະມີພິທີຕັດຮັກ, ຕັດຮ້າງ, ຕັດໝ້າຍ... ບອກທາງໃຫ້ຜີໄປຢູ່ບ່ອນຮັ່ງບ່ອນມີ. ຢູ່ຂຸມສົບຈະ ປົກ ດ້ວຍຟົດໄມ້ ແລະເຮັດໄມ້ແຫຼມປັກອ້ອມ. ຫຼັງ ຈາກກັບມາແຕ່ປ່າຊ້າ, ເຈົ້າຂອງເຮືອນດີຈະຂ້າໄກ່ ໂຕໜຶ່ງ, ເອົາເງິນໜຶ່ງໝັ້ນເພື່ອມັດແຂນໃຫ້ຜູ້ທີ່ ໄປ ສິ່ງສະການ.

ຊົນເຜົ່າໄປຣມີຄວາມເຄັ່ງຄັດໃນປະ ເພນີ, ສະນັ້ນໃນປີໜຶ່ງໆເຂົາເຈົ້າຈະມີການເຮັດ ຮີດ ແລະງານບຸນປະເພນີຫຼາຍເທື່ອ. ເນື່ອງຈາກ ວ່າເຂົາເຈົ້າເຊື່ອໃນເລື່ອງຜີຈຶ່ງມີການເຮັດຮີດຄອງ ຕາມແຕ່ລະດູການເຊັ່ນ: ໄລຍະເວລາລະດູການ ຜະລິດ, ຊົນເຜົ່າໄປຣຕ້ອງເຮັດພິທີລ້ຽງຜີໄຮ່ເຖິງ 9 ເທື່ອ. ເຊິ່ງພິທີຕ່າງໆດັ່ງກ່າວໄດ້ກາຍເປັນວັດທະ ນະທຳປະຈຳເຜົ່າຄື: ພິທີກິນດອກແດງ, ສະແດງ ເຖິງຄວາມສິ້ນສຸດລະດູການຜະລິດ ໃນແຕ່ລະປີ ຂອງຊົນເຜົ່າໄປຣເປັນຕົ້ນ.

ຄວາມເຊື່ອຕ່າງໆທີ່ກ່າວມານັ້ນໄດ້ຫຼໍ່ ຫຼອມເປັນວັດທະນະທຳຂອງເຂົາເຈົ້າ, ສ່ວນດ້ານ ສິລະປະວັນນະຄະດີຂອງຊົນເຜົ່າໄປຣ ເຂົາເຈົ້າມີ ການຂັບລຳພື້ນເມືອງຄື: ຂັບສາເລາະ, ມີເຄື່ອງດົນ ຕີພື້ນເມືອງຄື: ວາກ ຫຼືເກີ່ງ(ກະລໍນ້ອຍ)ເຊິ່ງນຳໃຊ້ ໃນງານບຸນປະເພນີຕ່າງໆ. ສຳລັບເຄື່ອງນຸ່ງຫົ່ມ ແລະ ການແຕ່ງກາຍນັ້ນ. ຍ້ອນເຂົາເຈົ້າບໍ່ສາມາດເຮັດ ແຜ່ນແພ, ຕ່ຳຫູກທໍ່ໃໝ່ໃຊ້ເອງໄດ້, ຊຸດດັ້ງເດີມ ຂອງເຂົາເຈົ້າແມ່ນອາໃສ່ການຊື້ຂາຍ ຫຼືແລກປ່ຽນ ນຳຊົນເຜົ່າທີ່ຢູ່ໃກ້ຄຽງໝາຍຄວາມວ່າ: ການແຕ່ງ ກາຍໂດຍທົ່ວໄປຂອງຊົນເຜົ່າໄປຣຈະໄດ້ຮັບຈາກ ຊົນເຜົ່າອື່ນຫຼາຍກວ່າ. ດັ່ງນັ້ນເອກະລັກດ້ານການ ນຸ່ງຫົ່ມກໍ່ຄືແຕ່ງກາຍຈຶ່ງບໍ່ປະກົດຊັດເຈນ.

ລັກສະນະດ້ານເສດຖະກິດ ຂອງຊົນເຜົ່າ ໄປຣ ແມ່ນປະກອບອາຊີບທາງດ້ານການກະເສດ ເປັນຕົ້ນຕໍຄື: ເຮັດໄຮ່ປູກເຂົ້າ. ນອກຈາກນີ້ເຂົາ ເຈົ້າຍັງປູກພືດ ເພື່ອຮັບໃຊ້ຊີວິດປະຈຳວັນໃນ ຄອບຄົວຄື:ຜັກກາດ,ໝາກຖົ່ວ, ມັນດ້ຳ ແລະອື່ນໆ. ການລ້ຽງສັດສ່ວນຫຼາຍຈະລ້ຽງໄວ້ ເພື່ອປະກອບພິ ທີລ້ຽງຜີ ຫຼືເຮັດຂວັນທີ່ເຂົາເຈົ້ານິຍົມລ້ຽງໄດ້ແກ່ໝູ, ໄກ່, ຄຽງຄູ່ກັນນັ້ນຊົນເຜົ່າໄປຣ ຍັງມີຄວາມຊຳ ນານ ໃນວິຊາຫັດຖະກຳຈັກສານ, ການດຳລົງຊີວິດຂອງ ຊົນເຜົ່າໄປຣ ໃນບາງດ້ານຍັງຂຶ້ນກັບທຳມະຊາດ, ຍັງມີຮ່ອງຮອຍເສດຖະກິດບູຮານຄື:ການຫາເຄື່ອງ ປ່າຂອງດົງ, ການລ່າເນື້ອ ແລະເກັບເດັດຜັກຕາມ ປ່າມາປຸງແຕ່ງເປັນອາຫານປະຈຳວັນ.

Pray

Historical background:

According to village elders, the Pray people originally came from the Chiang Mai area of Thailand, and due to difficulties there, they migrated to Laos about one hundred years ago. Today there are scattered settlements, with approximately 20 villages in Saiyabury province. The population is 23.193, based on the second population census of 1995.

The Pray also still live also in the northeastern provinces of Thailand, where there are about forty thousand people.

Name and language:

Their official name is "Pray". They also refer to themselves as the "Lawa", but this is more among themselves. With outsiders and officials, they are generally referred to as the Pray.

The Pray language is on the Khmuic branch of the Mon-Khmer language family. There are two sub-groups: the Phai and the Mal. There are minor linguistic differences between the two groups.

Beliefs, society, ceremonies and myths:

The Pray are animists. They believe in many spirits, and the most respected is the bhuka. Once a year, during New Years, a three-day celebration is held. There are other celebrations and feasts such as the water feast, the Dorkdeng feast (household feast), and others. Sacrifices and worship are done is a separate spirit house that is in the forest some way from the village. Traditionally, the villages are also protected from spirits of the outside world by spirit gates at the entrances of the village. There is a shaman, called a khawcam that is elected by the village men. He is a medium between the spirit and living world.

The Pray are a fairly classless society and traditionally the village is a self-contained political and social unit that is led by a headman and council of elders. The family unit is nuclear, but can be of the extended style also.

Girls marry young, at about age fourteen. First she lives at her future husband's house for sometime, where she helps with daily duties. If the family is satisfied, then a wedding will be held. The wedding is held and there is much drinking and eating. The girl's family pays the wedding expenses.

Women give birth in their own bedroom. An older female will help in the birth. The husband usually cuts the placenta and buries it. Afterwards, the baby and mother remain for some days near the fireplace of the house, and later a small party is held to give thanks.

For the funeral ceremony, the shaman will dip a finger of the dead in a bowl of water. This will tell the shaman what was the cause of death. The Pray have a funeral feast for one day and then they bury the coffin, and the tomb will be covered with tree branches and then fenced off with wooden posts. When returning from the cemetery, a family member will kill a chicken, and present a token amount of money to those who participated in the funeral.

Village and house:

Pray villages are located in remote and steep valleys upland. They may range in size from eight houses to a hundred.

The Pray prefer to live in houses built on stilts. The walls and floor are made of bamboo and the house is thatched with grass or palm fronds. A bamboo ladder leads up to a covered porch. Traditionally every house should face toward the west with the door also on the west side of the house. The inside of the house is divided into three or four smaller rooms. The first two rooms next to the stairs are for receiving visitors. Another room has a fireplace and is for cooking and eating. Most houses have a separate granary, which is built on stilts and located near the house.

Costume:

In regard to clothes, since the Pray cannot weave, their clothes are bought in local markets and are typical Lao style commercial clothing such as sarongs and blouses. The men traditionally wore a loincloth and no shirt. Today they wear shorts or long trousers of dark color.

Agriculture and livelihood:

The Prai are one of the poorer groups in Laos, and cultivate land with slash-and-burn cultivation, in which they grow glutinous rice. They also grow crops for daily consumption such as Chinese lettuce, beans, potatoes and others. Animals are raised mainly for ritual ceremonies. The animals they prefer to raise are pigs, chickens, and some buffalo.

The Pray are also involved in making fermented tealeaves that they chew themselves and also sell in the lowland markets. They also supplement their daily income and diet by hunting and fishing and gathering. Small game such as wild pigs and squirrels are hunted using simple weapons such as crossbows.

In addition, Pray people are skilled in the collection of non-wood forest products, plus weaving baskets and traps using bamboo.

ຊົນເຜົ່າ ຜ້ອງ ປະຫວັດຄວາມເປັນມາ

ບໍ່ມີເອກະສານຫຼັກຖານ ທີ່ຊັດເຈນທີ່ເວົ້າເຖິງປະຫວັດຄວາມເປັນມາ ແລະກິກເຄົ້າເທົ່ງ້ຳກໍ ຂອງຊົນເຜົ່າຜ້ອງ, ແຕ່ມີເລື່ອງເລົ່າສືບກັນມາວ່າ: ຊົນເຜົ່າຜ້ອງນີ້ ໄດ້ອົບພະຍົບ ແລະເຄື່ອນຍ້າຍມາຈາກເຂດຊາຍແດນຂອງປະເທດ ມຽນມາ ແລະ ຈີນ. ບົນເສັ້ນທາງຂອງການຍົກຍ້າຍ ນັ້ນມີການເລົ່າວ່າ: ໃນບໍລິເວນແມ່ນ້ຳຂອງປ່ອງໃສ່ແມ່ນ້ຳອູ (ຄຳເລົ່າລືນີ້ ເວລາມີພິທີຂຶ້ນເຮືອນໃໝ່ຂອງຊົນເຜົ່າ ຜ້ອງໃນປະຈຸບັນເຂົາເຈົ້າຍັງເວົ້າເຖິງຢູ່). ຊົນເຜົ່ານີ້ ເຄີຍໄດ້ຕັ້ງຖິ່ນຖານຢູ່ບໍລິເວນເຂດໜອງຄ້າງ, ເມືອງຊາງ, ແຕ່ຍ້ອນວ່າເຂດດັ່ງກ່າວບໍ່ເໝາະສົມ ສຳລັບການດຳລົງຊີວິດ, ສະນັ້ນເຂົາເຈົ້າຈຶ່ງໄດ້ສືບຕໍ່ຍົກຍ້າຍໄປຢູ່ດິນແດນຂອງແຂວງ ຊຽງຂວາງ ແລະແຂວງ ຫົວພັນ.

ປະຈຸບັນຊົນເຜົ່າຜ້ອງ ຕັ້ງຫຼັກປັກຖານ ເຮືອນຊານບ້ານຊ່ອງຢູ່ເຂດພູສະເຫຼີ່ຍ ເມືອງ ຊຳເໜືອ, ເຂດປ່າຄາ ເມືອງ ຫົວເມືອງ ຂອງແຂວງ ຫົວພັນ ແລະເຂດບໍ່ກ໋ໍ, ບໍ່ເຍຍ ເມືອງ ໜອງແຮດ, ເຂດເຜົ້ງຊາມເມືອງຄຳ ຂອງແຂວງ ຊຽງຂວາງ.

ຈຳນວນພົນລະເມືອງ ຂອງຊົນເຜົ່າຜ້ອງ ໃນ ສ.ປ.ປ.ລາວ ມີ 21.395 ຄົນ, ຍິງ 10.841 ຄົນ, ເທົ່າກັບ 0,5% ຂອງພົນລະເມືອງທົ່ວປະເທດ. (ຕາມສະຖິຕິການສຳຫຼວດພົນລະເມືອງ ທົ່ວປະເທດ ຄັ້ງທີ II ປີ 1995).

ຊື່ເອີ້ນ

ຊື່ທີ່ຊົນເຜົ່ານີ້ເອີ້ນຕົນເອງແມ່ນ "ຜ້ອງ" ຊົນເຜົ່າອື່ນເອີ້ນເຂົາເຈົ້າກໍ່ແມ່ນ " ຜ້ອງ ", ຊື່ທີ່ເຂົາເຈົ້າມັກ ແລະຊື່ທີ່ເອີ້ນທາງການໃນປະຈຸບັນກໍ່ແມ່ນ " ຊົນເຜົ່າຜ້ອງ " ຄຳວ່າ " ຜ້ອງ " ພາສາເຂົາເຈົ້າເອງແປວ່າ "ພະນຸງ" ແລະຄຳວ່າ "ພະນຸງ" ພາສາລາວແປວ່າ " ຜ້ອງ " ນັ້ນເອງ.

ຊົນເຜົ່າຜ້ອງ ປະກອບມີຫຼາຍແຊ່ງດ້ວຍກັນເຊັ່ນ: ຜ້ອງປຸງ, ຜ້ອງລານ, ຜ້ອງຈະປວ໋ ແລະຜ້ອງແຟນ. ແຕ່ລະແຊ່ງຂອງຊົນເຜົ່ານີ້ມີພາສາປາກເວົ້າທີ່ແຕກຕ່າງກັນເລັກນ້ອຍ, ທາງດ້ານຮີດຄອງປະເພນີ, ຄວາມເຊື່ອຖື ກໍ່ມີຄວາມແຕກຕ່າງກັນ ໄປຕາມແຕ່ລະທ້ອງຖິ່ນ, ທັງນີ້ກໍ່ຍ້ອນວ່າ ເຂົາເຈົ້າໄດ້ຮັບອິດທິພົນ ແລະມີການຢືມວັດທະນະທຳ ຂອງຊົນເຜົ່າຕ່າງໆ ທີ່ຢູ່ໃກ້ຄຽງເຂົ້າມາປະສົມປະສານຕື່ມອີກ.

ພາສາ

ຊົນເຜົ່າຜ້ອງ ມີພາສາປາກເວົ້າທີ່ເປັນເອກະລັກຂອງຕົນເອງ, ແຕ່ເຂົາເຈົ້າບໍ່ມີຕົວໜັງສືຂຽນ. ພາສາປາກເວົ້າຂອງຊົນເຜົ່າຜ້ອງ ຈັດຢູ່ໃນໝວດພາສາມອນ-ຂະແມ. ນອກຈາກພາສາຂອງເຂົາເຈົ້າເອງແລ້ວ ຊົນເຜົ່າຍັງສາມາດເວົ້າພາສາລາວໄດ້ເປັນຢ່າງດີ.

ຮີດຄອງປະເພນີ, ຄວາມເຊື່ອຖື, ວັດທະນະທຳ ແລະສັງຄົມ

ສຳລັບຮີດຄອງປະເພນີ, ຄວາມເຊື່ອຖື ແລະວັດທະນະທຳ ຂອງຊົນເຜົ່າຜ້ອງນີ້ໄດ້ຮັບອິດທິພົນ, ມີການຢືມ, ການປະສົມປະສານຂອງຊົນເຜົ່າອື່ນ, ໂດຍສະເພາະແມ່ນຂອງຊົນເຜົ່າລາວ. ດັ່ງນັ້ນການປະຕິບັດກິດຈະກຳໃນດ້ານນີ້ຈຶ່ງມີລັກສະນະຄ້າຍຄືກັນກັບຊົນເຜົ່າລາວ. ເຂົາເຈົ້າມີຄວາມເຊື່ອ ແລະນັບຖືພຸດທະສາສະໜາ ພ້ອມ

ກັນນີ້ ກໍ່ຍັງມີຄວາມເຊື່ອໃນເລື່ອງຜີອີກ ເຊິ່ງໄດ້ແກ່ ຜີພໍ່, ຜີແມ່, ຜີເຮືອນ, ຜີບ້ານ, ຜີພູຜາປ່າດົງ ແລະ ຜີອື່ນໆ.

ໂຄງສ້າງທາງດ້ານສັງຄົມ ໂດຍພື້ນຖານ **ແລ້ວ ຈະມີອຳນາດການປົກຄອງ** ທີ່ທາງການແຕ່ງ **ຕັ້ງຂຶ້ນເປັນຫົວຈັກຫຼັກແຫຼ່ງ** ໃນການນຳພາຊົນເຜົ່າ, **ແຕ່ຄຽງຄູ່ກັນນີ້ກໍ່ຍັງ**ມີການເຄົາລົບນັບຖືບົດບາດ **ຂອງເຈົ້າກິກ**, ເຈົ້າເຫຼົ່າ ແລະເຈົ້າຕະກຸນນຳອີກ **ດ້ວຍ ເຊິ່ງໃນສັງຄົມ**ຂອງເຂົາເຈົ້າຈະປະກອບດ້ວຍ **ຫຼາຍສິງຊາວ** ຫຼືຫຼາຍຕະກຸນ ທີ່ແຕກຕ່າງກັນ ຄື: ສິງ ລໍ, **ສິງ**ວີ, ສິງເລືອງ, ສິງລີ, ສິງຈາວ ແລະອື່ນໆ. ແຕ່ **ລະຕະກຸນ**, ແຕ່ລະສິງຈະມີຂໍ້ຫ້າມ ແລະການຄະ ລຳທີ່ແຕກຕ່າງກັນໄປຕາມແຕ່ລະທ້ອງຖິ່ນ ໂດຍ ສະເພາະ ແມ່ນການຄະລຳ ແລະຫ້າມຂ້າ ຫຼືກິນຊີ້ນ ສັດທີ່ເປັນຊື່ຂອງຕະກຸນຕົນເອງ ທັງນີ້ກໍ່ເພື່ອສະ ແດງເຖິງຄວາມເຄົາລົບ, ບູຊາ ແລະນັບຖືຕະກຸນ ຂອງຕົນນັ້ນເອງ. ສະນັ້ນຈຶ່ງເຮັດໃຫ້ສຳພັນທະພາບ ແລະຄວາມສາມັກຄີລະຫວ່າງສະມາຊິກໃນຕະ ກຸນ ແລະລະຫວ່າງຕະກຸນດ້ວຍກັນນັ້ນມີຄວາມ ແໜ້ນແຟ້ນ, ເຊິ່ງສະແດງອອກໃນເວລາມີກິດຈະ ກຳທາງດ້ານຄວາມເຊື່ອຖືກໍ່ຄືທາງສາສະໜາ ແລະ ທາງດ້ານການຜະລິດຂອງຊົນເຜົ່ານີ້. ລະບົບຄອບ ຄົວເປັນຄອບຄົວດຽວ, ມີການສືບເຊື້ອສາຍຕະກຸນ ທາງພໍ່ເປັນສຳຄັນ. ສະນັ້ນຜູ້ຊາຍເມື່ອແຕ່ງ ດອງແລ້ວຕ້ອງໄດ້ພາເມຍມາຢູ່ເຮືອນນຳພໍ່, ແມ່ ຂອງຕົນເອງ ຈົນກວ່າຈະມີນ້ອງຊາຍ ຜູ້ຕໍ່ໄປແຕ່ງ ດອງເອົາເມຍມາຢູ່ແທນ ຈຶ່ງສາມາດອອກໄປຕັ້ງ ເຮືອນຂອງຕົນເອງໄດ້. ສຳລັບການແບ່ງປັນມູນມໍ ລະດົກນັ້ນ ຜູ້ເປັນລູກທຸກຄົນມີສິດໄດ້ຮັບຈາກການ ແບ່ງປັນ**ຂອງ**ຜູ້ເປັນພໍ່, ແມ່, ພິເສດໃຜຢູ່ເຮືອນລ້ຽງ ພໍ່, ແມ່ ແມ່ນຜູ້ນັ້ນ**ຈະ**ມີສິດໄດ້ຮັບຫຼາຍກວ່າໝູ່.

ລັກສະນະການຕັ້ງບ້ານເຮືອນ, ສ່ວນ ຫຼາຍແລ້ວ ມັກຕັ້ງບ້ານເຮືອນໃສ່ບ່ອນທີ່ໂນນພູຕ່ຳ ແລະເປັນບ່ອນທີ່ຄ້ອຍຊັນແດ່ເລັກນ້ອຍ. **ເຂົາ**ເຈົ້າ ມັກປຸກສ້າງ ແລະຢູ່ເຮືອນຮ້ານຕ່ຳ, **ໂດຍຈະ**ມີການ ເລືອກມື້ເລືອກຍາມຄັກແນ່ ເຊັ່ນ: **ມັກເລືອກເອົາ** ເດືອນຈຽງ, ເດືອນຍີ່ ແລະ**ຫຼີ**ກເວັ້ນ**ມື້ກຳ**ເຮືອນ ຄື: 5, 9 ແລະ 15 ຄ່ຳ. ຂະໜາດ**ຂ**ອງເຮືອນ, **ສະ**ຖານ ທີ່ສຳລັບນອນ, ຮັບແຂກ ແລະແຕ່ງຢູ່ຄົວ**ກິ**ນນັ້ນ ແມ່ນອີງຕາມຈຳນວນສະມາຊິກ**ຂ**ອງ**ຄົ**ວເຮືອນ. ຍ້ອນວ່າຢູ່ແຕ່ລະ**ຫຼັ**ງ**ຄາ**ເຮືອນ**ຈ**ະ**ມີ**ຮ້ານ**ບູ**ຊາ**ຜີ**, ສະນັ້ນ**ໃ**ນເຮືອນ**ຈ**ະ**ມີ**ການ**ຫ້າ**ມ ແລະ**ຄ**ະ**ລ**ຳ**ຄື**: ບໍ່ ໃຫ້ເຂົ້າ**ຫ້ອ**ງ**ນ**ອນ, ບໍ່ໃຫ້ລົບ**ກ**ວນ**ຮ**ານ**ບູ**ຊາ**ຜີ** ເຮືອນ, ບໍ່ໃຫ້ເອົາ**ນ**ໍ້**ລ**ຳ**ໆ**ທາ**ງ**ເຊ**ຍ**, ບໍ່ໃຫ້ເອົາ**ຊີ້**ນ ດິບ**ທ**ີ່ບໍ່ໄດ້ຫຸ້ມ**ຫ**ໍ່ຂຶ້ນ**ທ**າ**ງ**ປະ**ຕ**ູ**ສ**ຳ**ລ**ັບ**ຮ**ັບ**ແ**ຂ**ກ**, ບໍ່ ໃຫ້ກາງ**ມຸ**ງ**ຂ**າ**ວ**ຢູ່ໃນ**ເ**ຮືອນ, ບໍ່ໃຫ້**ນ**ອນ**ຂ**ວາ**ງ** ຕາ**ມ** ລວງ**ຍ**າ**ວ**ຂ**ອ**ງ**ເ**ຮືອນ, **ແ**ມ່ຍິ**ງ** **ແ**ລະ**ແ**ຂ**ກ**ພາ**ຍ**ນ**ອ**ກ ຫ້າມ**ບ**ໍ່ໃຫ້ນັ່ງ**ຕ**ັ່ງ**ຫ**ວາ**ຍ** ແລະ**ສ**ະ**ແ**ນ**ນ**ຢູ່**ໃ**ກ້**ເ**ຕົ**າ**ໄ**ຟ**.

ຮີດ**ຄ**ອ**ງ**ປະ**ເ**ພ**ນ**ີ**ກ**ານ**ເ**ກີ**ດ**ລູ**ກ**ນັ້ນ ແມ່ນ ເກີດຢູ່ໃນເຮືອນ ເຊິ່ງ**ສ**ະ**ຖ**ານ**ທ**ີ່**ໃ**ຊ້**ໃ**ນ**ກ**ານ**ເ**ກີ**ດ**ລູ**ກ** ແມ່ນ**ບ**ໍ**ລ**ິ**ເ**ວ**ນ**ອ້ອ**ມ**ແ**ອ**ມ**ເ**ຕົ**າ**ໄ**ຟ** ຫຼືຢູ່ໃນ**ຫ**້ອ**ງ**ນ**ອ**ນ ຂອງ**ຕ**ົນ ໂ**ດ**ຍ**ມ**ີ**ຜ**ູ້**ເ**ປັ**ນ**ຜົ**ວ**, **ແ**ມ່**ຂ**ອ**ງ**ຜົ**ວ**, **ແ**ມ່**ຂ**ອ**ງ** ຕົນ**ເ**ອ**ງ** ແ**ລ**ະ**ແ**ມ່ຍິ**ງ**ທີ່**ມ**ີ**ປ**ະ**ສ**ົ**ບ**ກ**ານ**ໃ**ນ**ດ**ານ**ນ**ີ້ ໃ**ຫ**້ ຄ**ວ**າ**ມ**ເ**ບ**ິ່**ງ**ແ**ຍ**ງ** ແ**ລ**ະ**ຊ**ວ**ຍ**ເ**ຫ**ຼືອ. ຖ**ຳ**ກ**ໍ**ລ**ະ**ນ**ີ**ເ**ກີ**ດ** ຍ**າ**ກ ກ**ໍ**ຈ**ະ**ຫ**າ**ໝ**ໍ**ມ**ີ**ນ**ມ**າ**ຊ**ວ**ຍ**ຕ**ິ**ມ. ພ**າ**ຍ**ຫ**ຼັ**ງ**ເ**ກີ**ດ**ລູ**ກ** ແ**ລ**ວ ຜ**ູ**້**ເ**ປັ**ນ**ແ**ມ**ຈ**ະ**ຕ**ົ**ອ**ງ**ໄ**ດ**ຢ**ູ**ກ**ຳ** ດ**ວ**ຍ**ກ**ານ**ດ**ື່**ມ**ນ**ໍ**

ຕົ້ມຢາພື້ນເມືອງ ແລະມີການຄະລຳອາຫານປະເພດທີ່ມີລົດເຜັດ ແລະເໝັນ ແລະຄາວ. ສ່ວນປະເພນີການຕາຍນັ້ນ ກໍ່ມີການຄົບງັນ, ປະຕິບັດພິທີກຳໃຫ້ຄົບທຸກຂັ້ນຕອນ ບໍ່ວ່າຈະເປັນທາງໄສຍະສາດ ກໍ່ຄືທາງພຸດທະສາສະໜາ ເພື່ອຫຼີກເວັ້ນການມາລົບກວນຂອງຜູ້ຕາຍ. ການສົ່ງສະການນັ້ນ ແຕ່ກ່ອນແມ່ນຝັງສົບ, ປະຈຸບັນປ່ຽນແປງມາຈູດແລ້ວມີການເກັບຖຸກໄປຝັງດິນ ຫຼືເຮັດທາດປົກ.

ຍ້ອນຊົນເຜົ່າຜ້ອງ ມີຄວາມເຊື່ອຖືໃນພຸດທະສາສະໜາຄຽງຄູ່ກັບການເຊື່ອຖືໃນເລື່ອງຜີ. ສະນັ້ນງານບຸນຮີດຄອງປະເພນີປະຈຳປີ ແລະພິທີກຳທາງສາສະໜາຂອງເຂົາເຈົ້າ ກໍ່ຄືກັນກັບບັນດາຊົນເຜົ່າໃນໝວດພາສາລາວ-ໄຕ. ເຂົາເຈົ້າປະຕິບັດແບບຮີດສິບສອງຄອງສິບສີ່, ມີການເຮັດບຸນສິນກິນທານຕ່າງໆ ຕາມເດືອນຂອງລາວຊາວພຸດ. ນອກຈາກນີ້ໃນແຕ່ລະປີ ກໍ່ມີປະເພນີການລ້ຽງຜີບ້ານ, ຜີເມືອງ ໂດຍມີຈຸດປະສົງໃຫ້ສິ່ງສັກສິດດັ່ງກ່າວຊ່ວຍປົກປ້ອງຄຸ້ມຄອງລູກບ້ານຫຼານເມືອງ, ສັດລ້ຽງ ແລະເຄື່ອງປູກຂອງຝັງໃນໄຮ່ນາ ໃຫ້ມີຄວາມສົມບູນພູນສຸກທຸກປະການ ໃນປີຕໍ່ໄປຂ້າງໜ້າ.

ດ້ານສິລະປະວັນນະຄະດີ ຂອງຊົນເຜົ່າຜ້ອງແມ່ນມີການປະສົມປະສານຂອງຊົນເຜົ່າລາວ ເຂົາເຈົ້າມີທຳນອງໃນການຂັບລຳເຊັ່ນ: ຂັບຢອນ, ຂັບກະເຊີະ, ຂັບມະຫາໄຊ, ແຕ່ເນື້ອໃນ ແລະພາສາໃນການຂັບ ພັດ ແມ່ນພາສາລາວ. ເຄື່ອງດົນຕີທີ່ໃຊ້ໃນເວລາຂັບລຳສ່ວນຫຼາຍແມ່ນແຄນ.

ສຳລັບເຄື່ອນຸ່ງຖືເອ້ຍ້ອງນັ້ນ,ແຕ່ກ່ອນເຂົາເຈົ້າມີເຄື່ອງນຸ່ງທີ່ເຮັດເອງ ດ້ວຍສີໄມ້ລາຍມື ຂອງແມ່ຍິງ ແລະຖືວ່າເປັນເອກະ ລັກສະເພາະຂອງ ຊົນເຜົ່າເຂົາເຈົ້າເອງ ມາຮອດປະຈຸບັນນີ້ເອກະລັກໃນດ້ານນີ້ຄ່ອຍຫາຍໄປ ແລະ ກໍ່ບໍ່ຄ່ອຍຈະປະ ກົດເຫັນໃນວັນທຳມະດາ ນອກ ຈາກ ພິທີກຳທາງດ້ານຄວາມເຊື່ອຖື ແລະງານບຸນ ປະເພນີເທົ່ານັ້ນໝາຍຄວາມວ່າ ໄດ້ມີ ການ ທັນມາໃຊ້ເຄື່ອງນຸ່ງທີ່ສຳເລັດຮູບຈາກການຊື້ ແລະ ແລກປ່ຽນຕາມທ້ອງຕະຫຼາດ ແທນ.

ການດຳເນີນວິຖີທາງດ້ານເສດຖະກິດ:

ຊົນເຜົ່າຜ້ອງກໍ່ຄືກັນກັບຊົນເຜົ່າຕ່າງໆ ໃນ ສ ປ ປ ລາວ ເຂົາເຈົ້າມີອາຊີບ ຄື: ການ ເຮັດໄຮ່,ເຮັດນາປູກເຂົ້າໄວ້ ບໍລິໂພກໃນຄົວເຮືອນ. ຄຽງຄູ່ກັນນີ້ກໍ່ຍັງປູກພືດຜັກຕ່າງໆ ນັບທັງພືດທີ່ເປັນທາດແປ້ງເພື່ອໄວ້ກິນທົດແທນໃນເວລາ ຂາດເຂີນ ເຂົ້າ. ສຳລັບສັດກໍ່ນິຍົມລ້ຽງເປັນຕົ້ນແມ່ນສັດປີກ ແລະໝູຈະ ລ້ຽງ ກັນເກືອບທຸກຄົວເຮືອນທັງນີ້ ກໍ່ຍ້ອນວ່າສັດດັ່ງກ່າວມີ ຄວາມສຳຄັນ ໃນການ ເຮັດພິທີ ກຳ ຕ່າງໆທາງ ຄວາມເຊື່ອຖື ແລະທາງສາສະ ໜາ. ສັດປະເພດງົວ, ຄວາຍ ກໍ່ລ້ຽງ ແຕ່ບໍ່ແມ່ນໝົດທຸກຄົວເຮືອນເພາະວ່າ:ໄດ້ລົງທຶນ ແລະມີແຮງງານໃນການດູແລຢ່າງພຽງພໍ. ນອກຈາກນີ້ ແລ້ວ ຜູ້ຊາຍກໍ່ຍັງໃຊ້ເວລາຫວ່າງເພື່ອຫາເຄື່ອງປ່າຂອງດົງ ສ່ວນແມ່ຍິງແມ່ນທັນມາຕຳຫູກທໍ່ໄໝເຮັດແຜນແພ ແລະລົ້ນເພື່ອເອົາໄປຂາຍ ຫຼືແລກປ່ຽນເຄື່ອງໃຊ້ສອຍຕ່າງໆທີ່ຈຳ ເປັນ.

Phong

Historical background:

There are no accurate historical records documenting the background and origin of the Phong ethnic group. However, the Phong believe they migrated from the border of Myanmar and China. Apparently, they settled first in the Nong khang region of Xang district, but this region was found not suitable and they moved on to Xiengkhuang and Huaphan provinces.

Presently, the Phong live in the Phoosaleuy mountain region of Xamneua district and Huameuang district of Huaphan province. They also live in Borkorbornyia, and Kham district of Xiengkhuang province.

The total population of the Phong people in Laos is 21,396, of which 10,846 are females. This is 0.5 percent of the country's total population, according to the second population census done in 1995.

Name and language:

Their official name is "Phong". There are several sub-groups such as the Phong Piad, Phong Larn, Phong Chapuang and Phong Fan. Each sub-group has slight differences in dialect and customs. They may have borrowed cultural influences from neighboring groups, which they have combined with their own group.

The Phong language is classified as a Mon-Khmer language, and is on the Vietic language branch. Apart from their own language, they can usually speak the Lao language well.

Beliefs, society, ceremonies and myths:

Like all animistic believers in Laos, the Phong follow a group of spirits they believe in such as the spirits of their dead parents, plus spirits of the household, village, mountain and forest. Each village has its own spirit house that is placed near the village. However, many villages now also practice Buddhism, which they combine with their own animistic practices.

Twice a year the entire village will join in a sacrifice to the spirits of one pig, four chickens, some rice whiskey, and some fruit. This is to insure a successful harvest of their crops.

Basically, their social structure is characterized by having a nominated council of authorities. There is also a tribal chief (chao kok) who has power in deciding internal village affairs. There is also a clan chief (chao lao) for each family clan, as Phong society is composed of many different family clans. Each clan has different restrictions and taboos varying from one region to another. In particular, restrictions and taboos forbid the killing or eating of certain animals that represent the names of clans. The family system is nuclear, and inheritance passes down the male side of the family. All children have the right to inheritance, but the ones who stay with the parents and take care of them will generally receive more. After a wedding, the wife will stay at the husband's parents'

house until the husband's brother marries. Then the older brother can move out and the couple can start their own household.

Pregnant women traditionally give birth in the house by the fireplace or in the bedroom. The husband, parents and a mid-wife will help. In case of a difficult birth, a shaman may be called to help.

When someone dies, there will be a feast at the household. Previously, the dead were buried, but if the deceased was a Buddhist, then the body will be cremated and the bones collected to be later buried or covered by a small stupa.

Village and house:


The Phong build their houses on low hills. The houses are on low stilts. It is a taboo to build a house on the fifth, ninth, or fifteenth day of the month. The size of their house, number of bedrooms and living room size depends on the number of household members. Each house has a small spirit house for the spirits, and there are certain household restrictions to follow, such as it is forbidden to do the washing on the balcony.

Costume and dress:

The Phong have lost the tradition of their old costumes, so now they usually wear simple Lao peasant clothes that are commercially made and bought in the markets. Women wear sarongs and blouses. Phong men used to wear loin-clothes, but today wear regular trousers and shirts.

Agriculture and livelihood:

The Phong, like most other ethnic groups in Lao, practice slash-and-burn cultivation of rice. They also grow wet-paddy rice for domestic consumption, and grow other crops and vegetables including root crops for when there is rice shortage. They prefer to raise poultry and pigs that are used for ritual ceremonies and religious feastings. Some families also raise cattle and buffaloes. In addition, men hunt and fish and gather edible food in the forest. Women will weave baskets and sleeping mats from bamboo and other grasses. This ethnic group is also skilled in blacksmithing, producing simple knives and machetes.



ຊົນເຜົ່າມະກອງ

ປະຫວັດຄວາມເປັນມາ:

ຊົນເຜົ່າ ມະກອງ ແມ່ນຊົນເຜົ່າໜຶ່ງ ທີ່ນອນຢູ່ໃນວົງຄະນະຍາດແຫ່ງຊາດລາວ. ຊົນເຜົ່ານີ້ໄດ້ມີປະຫວັດຄວາມເປັນມາຄ້າຍ ຄືກັນກັບບັນດາຊົນເຜົ່າ ໃນຕະກຸນບູຣ ເຂົາເຈົ້າ ໄດ້ຕັ້ງພູມລຳເນົາບົນດິນດອນຕອນນີ້ເປັນເວລາ ເທິງນານແລ້ວເຂົາເຈົ້າເຄື່ອນຍ້າຍເຂົ້າມາປະເທ ດລາວ ໂດຍຜ່ານແຄ້ວທົ່ງສາວະດີປະເທດ ມຽນ ມາ ແລະເຂດລົບບູລີ ປະເທດສະຫຍາມ ມາຕັ້ງ ພູມລຳເນົາຢູ່ເຂດເມືອງນອງ ແຂວງສະຫວັນ ນະເຂດໃນສະໄໝເຈົ້າຈັນອາໜວຍຕົກມາໄລ ຍະ ໜຶ່ງເນື່ອງຈາກມີສະພາບ ທຳມະຊາດ ແລະສັງ ຄົມໜັບຮັດຢ່າງໜັກໜ່ວງຈຶ່ງເຮັດໃຫ້ ຊົນເຜົ່າ ນີ້ມີຈຳນວນໜຶ່ງເຄື່ອນຍ້າຍຈາກເມືອງນອງ ມາ ຕັ້ງພູມລຳເນົາຢູ່ ຫຼາຍເມືອງ ທີ່ຂຶ້ນກັບແຂວງ ສະ ຫວັນນະເຂດ ແລະບາງເມືອງຂອງແຂວງ ຄຳມ່ວນ.

ປະຈຸບັນຊົນເຜົ່າມະກອງ ໄດ້ຕັ້ງພູມລຳ ເນົາຢູ່ແຂວງ ຄຳມ່ວນ, ສະຫວັນນະເຂດ. ນອກ ຈາກນີ້ ຊົນເຜົ່າ ມະກອງ ຍັງມີຢູ່ປະເທດ ຫວຽດ ນາມ ເຊິ່ງເຂົາເຈົ້າເອີ້ນ ບູຣ - ເວີນກຽວ.

ພົນລະເມືອງຂອງຊົນເຜົ່າມະກອງ ມີ 92.321 ຄົນ, ຍິງ 47.219 ຄົນ ເທົ່າກັບ 2,1% ຂອງພົນລະເມືອງທົ່ວປະເທດ (ຜົນການສຳຫຼວດ ພົນລະເມືອງທົ່ວປະເທດ ເທື່ອທີ II ປີ 1995).

ຊື່ເອີ້ນ:

ຊົນເຜົ່ານີ້ເອີ້ນຕົນເອງວ່າ:"ບູຣມະກອງ" ຊົນເຜົ່າອື່ນເຂົາເຈົ້າແມ່ນມະກອງ, ຊື່ທີ່ເຂົາເຈົ້າ ມັກ ແລະຊື່ທີ່ໃຊ້ທາງການໃນປະຈຸບັນ ແມ່ນຊົນ ເຜົ່າມະກອງ ເຊິ່ງໝາຍຄວາມວ່າ: "ມະເອົາກອງ ມາໃຫ້ " ແລະໃນປະຈຸ ບັນຊົນເຜົ່າມະກອງ ປະ ກອບດ້ວຍຫຼາຍແຊງດ້ວຍກັນ ຄື: ມະກອງ, ຕຣູຍ, ພີ້ວ, ມະຮ້ອຍ ແລະຕອງ.

ພາສາ:

ຊົນເຜົ່າມະກອງ ເຖິງວ່າບໍ່ມີຕົວໜັງສື ຂຽນ ແຕ່ເຂົາເຈົ້າມີພາສາປາກເວົ້າ ເປັນອັນສະ ເພາະຂອງຊົນເຜົ່າຕົນເຊິ່ງຈັດເຂົ້າໃນໝວດພາ ສາມອນ-ຂະແມ, ສາຂາພາສາບູຣອິກ ຫຼືມອນບູ ຣານ. ພວກເຂົາເຈົ້າສາມາດ ເວົ້າພາສາຂອງຊົນ ເຜົ່າກະຕາງ, ຕຼີ, ຕະໂອ້ຍ, ຊ່ວຍ, ກາໂດ, ກາໄນ, ປະໂກະ, ພາສາລາວ ແລະພາສາຕ່າງປະເທດ ເຊິ່ງມີຄວາມສະດວກໃນການພົວພັນແລກປ່ຽນ ເສດຖະກິດແລະວັດທະນະທຳພາຍໃນ ແລະຕ່າງ ປະເທດນັບມື້ກວ້າງຂວາງ.

ຮີດຄອງປະເພນີຄວາມເຊື່ອຖື ແລະວັດທະນະທຳ-ສັງຄົມ:

ກ່ອນໜ້ານີ້ 100 ກວ່າປີ ຊົນເຜົ່າມະກອງ ໄດ້ເຊື່ອຜີຮ້ອຍສ່ວນຮ້ອຍ ເຊິ່ງລວມມີຜີຕ່າງໆຄື: ຜີປູ່ຍ່າຕາຍາຍ, ຜີພໍ່, ແມ່, ອ້າຍ, ນ້ອງ. ຖ້າຫາກ ບໍ່ທັນເຮັດພະລະບຶບ ມັນພົວພັນເຖິງຫຼາຍດ້ານ ເປັນຕົ້ນ: ແຕ່ງດອງບໍ່ແລ້ວຂຶ້ນເຮືອນພໍ່ເຖົ້າບໍ່ໄດ້. ນອກຈາກຜີທີ່ກ່າວມານັ້ນແລ້ວ ຍັງມີຜີຟ້າ, ຜີ ແຖນ, ຜີໝໍ, ຜີປ່ອ, ຜີເຂົ້າເປັນຜີທີ່ພາໃຫ້ຊົນເຜົ່າ ມະກອງເກີດລູກຢູ່ເຮືອນບໍ່ໄດ້, ຜີກະຈາດ, ຜີອາ ຢະຢ່ຽງແດ, ຜີປາເຂ, ຜີໝາ ແລະຜີອື່ນໆ. ນອກ ຈາກຜີທີ່ກ່າວມານັ້ນແລ້ວ, ແຕ່ລະຄອບຄົວຍັງມີ ຜີລວມຂອງບ້ານຄື: ຜີບ້ານເອີ້ນວ່າ: "ຜີມະເຫສັກ"

ແຕ່ມາຮອດປະຈຸບັນແມ່ນ ໄດ້ມີການປ່ຽນແປງ ເປັນຕົ້ນແມ່ນມີຫຼາຍບ້ານ ໄດ້ເຄົາລົບນັບຖືພຸດທະ ສາສະໜາ ທັງເຊື່ອຖືຜີອີກດ້ວຍ. ຊົນເຜົ່າມະກອງ ໄດ້ມີຮີດຄອງທີ່ພົວພັນເຖິງການຜະລິດໃນປີໜຶ່ງ ເຊັ່ນ: ເວລາປຸກເຮືອນຕ້ອງໄດ້ຈ້ຳຜີ, ຖ້າຫາກໄດ້ ເຮືອນແປ້ນຕ້ອງໄດ້ຂ້າໝູ, ງົວ, ຄວາຍ ທັງຈ້ຳຜີ ສະຫຼອງ, ກ່ອນຈະຖາງປ່າເຮັດໄຮ່ເສຍຫຍ້າຮູດ ເຂົ້າ, ເກັບຜົນລະປູກ ແລະຊົນເຂົ້າຂຶ້ນເລົ້າ ກໍ່ຕ້ອງ ຂ້າໝູຈ້ຳ ຜີ, ຄວາຍ ,ງົວອອກລູກ,ຈະຂາຍສັດລ້ຽງ ທຸກຊະນິດກໍ່ຕ້ອງຈ້ຳບອກຜີ, ໄດ້ເງິນ, ຄຳ, ໄດ້ລູກ ກໍ່ຕ້ອງຈ້ຳຜີ. ຊົນເຜົ່າມະກອງ ໄດ້ມີເຖົ້າແກ່, ມີ ລ່າມຜູ້ເປັນເຈົ້າຮີດຂອງແຕ່ລະບ້ານ, ເຖົ້າແກ່ອາວຸ ໂສນັ້ນເປັນຜູ້ຄວບຄຸມຕະກຸນຂອງຕົນ ແລະການ ສຳພັນກັບຕະກຸນອື່ນໃນເວລາງານບຸນ ແລະຄົນ ເສຍຊີວິດ, ຊົນເຜົ່າມະກອງໄດ້ມີຊັ້ນຄົນ, ປັນຍາ ຊົນ, ເຈົ້ານິກ, ເຈົ້າເຫຼົ່າ,ຜູ້ຊົງຄຸນວຸດທິ ທີ່ມີອິດທິ ພົນອັນສຳຄັນຕໍ່ຊາວບ້ານ.

ຊົນເຜົ່າມະກອງ ກໍ່ມີສິລະປະວັນນະຄະ ດີພື້ນເມືອງເປັນຕົ້ນ: ຄຳພະທຍາສຸພາສິດ, ກອນ ຂັບລຳ ຫຼືມ່ວນຊື່ນຕາມປະເພນີມີວາດຟ້ອນໄປ ຕາມຈ້ຽງຫວະລ້ຽງຜີ ແລະອື່ນໆ.

ລັກສະນະເຮືອນຂອງຊົນເຜົ່າມະກອງ ເປັນເຮືອນຮ້ານນ້ອຍສອດຄ່ອງ ກັບຂະໜາດ ຄອບຄົວ ເຊິ່ງມີ ການຈັດວາງພາຍໃນເຮືອນເຊັ່ນ: ເຕົາໄຟ, ຫ້ອງນອນພໍ່, ແມ່, ຫ້ອງນອນລູກແຕ່ງ ດອງແລ້ວ, ຫ້ອງນອນລູກຊາຍຍັງໂສດ ແລະຫ້ອງ ນອນຂອງແຂກທີ່ມາແວ່ຢາມ. ສ່ວນລູກສາວໃຫ່ຍ ບໍ່ທັນແຕ່ງດອງ ກໍ່ໄປນອນຢູ່ເຮືອນໝູ່ຄູ່ ຫຼືເຮືອນ ແມ່ຮ້າງນາງໝ້າຍ. ເຮືອນແຕ່ລະຫຼັງໃນບ້ານ ໜຶ່ງໆແມ່ນໄດ້ຈັດວາງເປັນວົງມົນ,ຢູ່ເຄິ່ງກາງບ້ານ ມີສາລາກວາມ. ຊົນເຜົ່າມະກອງ ໄດ້ມີພິທີກຳ ໃນ ການເລືອກສະຖານທີ່ຕັ້ງບ້ານ ແລະການຂຶ້ນ ເຮືອນໃໝ່ລ້ວນແຕ່ມີການຈ້ຳຜີທັງໝົດ.

ກ່ອນໜ້ານີ້100 ກວ່າປີ ຜູ້ຊາຍ: ແມ່ນນຸ່ງ ກະຕ່ຽວ,ຈົ່ງຜົມຍາວ, ເກົ້າຜົມຄືແມ່ຍິງ, ບ່ອງຫູໃສ່ ຕ້າງ ທີ່ເຮັດດ້ວຍເງິນ ແລະກົ່ວ, ຕັດແຂ້ວ, ສັກເອິກ, ຄາງ, ໜ້າລາຍ ທີ່ສະແດງເຖິງຄວາມເກັ່ງກ້າ ແລະ ຮັ່ງມີແມ່ຍິງ :ນຸ່ງສິ້ນ, ຫົ່ມເສື້ອ,ບ່ອງຫູ,ໃສ່ຕ້າງທີ່ ເຮັດດ້ວຍເງິນແລະກົ່ວ,ຖືກະຈອນ, ກ້ອງແຂນ, ປອກຄໍ, ໝາກຕູ້ມ, ໝາກປັດ... ແຕ່ມາຮອດປະຈຸ ບັນການນຸ່ງຫົ່ມເອ້ຢ້ອງ ຂອງຊົນເຜົ່າມະກອງ ໄດ້ ມີການປ່ຽນແປງ. ເຂົາເຈົ້າມີຄວາມນິຍົມນຸ່ງຖືຄື ແບບຊົນເຜົ່າຜູ້ໄທ ແລະຊົນເຜົ່າລາວ.

ຮ່ອງຮອຍການກິນແຕ່ສະໄໝບູຮານ ແມ່ນກິນເຂົ້າໜຽວ, ກິນອາຫານແກງ, ດຮູຍ ທີ່ມີ ລົດຊາດເຜັດ ແລະເຄັ່ມ. ໃນເວລາມີແຂກນອນ ຢາມ ແມ່ນໃຫ້ແຂກ ກິນເຂົ້າກ່ອນເຈົ້າຂອງເຮືອນ ກິນຕາມຫຼັງບໍ່ໃຫ້ວາງພາເຂົ້າຊີ້ຂີ້ເຮືອນ ແລະນັ່ງ ຢ່ອງຢໍ້ເວລາກິນເຂົ້າ. ເຂົາເຈົ້າດື່ມນ້ຳດິບ, ດື່ມເຫຼົ້າ ໄທ ແລະສູບຢາເສັ້ນປຸກທີ່ສຸດ ແຕ່ບໍ່ກິນຝິ່ນ. ປະເພ ນີການແຕ່ງດອງ: ຄູ່ບ່າວສາວມະກອງ ມີອາຍຸ 13 ປີ ເລີ່ມມີການພົວພັນກັນແບບຊູ້ສາວຢ່າງເສລີ ແຕ່ ເມື່ອມີການມັກຮັກກັນແລ້ວຈຶ່ງບອກໝູ່ຄູ່, ບອກພໍ່, ແມ່ແລ້ວກໍ່ແຕ່ງລ່າມ ຫຼືເຂີຍມາປະສານງານເສຍ ກ່ອນ, ຈຶ່ງຊອກຫາມື້ສັນວັນດີແຮ່ເຈົ້າສາວ ໄປ ເຮືອນເຈົ້າບ່າວ ເພື່ອໃຫ້ເຈົ້າຮີດຄອງຢູ່ເຮືອນເຈົ້າ ບ່າວຮັບຮູ້. ຖ້າຖືກຕ້ອງກັນແລ້ວ ກໍ່ມອບເຈົ້າສາວ ໃຫ້ເຈົ້າບ່າວແລ້ວນັດວັນເວລາແຕ່ງດອງ, ໃນຊ່ວງ

ໄລຍະນັ້ນເຈົ້າບ່າວ, ເຈົ້າສາວ ແລະດອງທັງສອງ ຝ່າຍຂຶ້ນເຮືອນກັນບໍ່ໄດ້. ພ້ອມທັງໃຫ້ເຊີຍກະກຽມ ງົວ, ຄວາຍ, ໝູ,ໄກ່ ແລະເຄື່ອງຄ່າດອງງ້າວ, ພະ ເໜາະ, ພ້ຽຣາດ, ຄ້ອງ, ເງິນຄ່າດອງ, ຖ້ວຍ ຝ່າຍລຸງຕາກະກຽມເຂົ້າເຫຼົ້າ, ເຂົ້າຕົ້ມ, ເຂົ້າໜົ່ມ. ຮອດມື້ດອງເຈົ້າບ່າວ ແລະເຈົ້າສາວ, ເຈົ້າໂຄດທັງ ສອງຝ່າຍກໍ່ເອົາກັນເມືອແຕ່ງດອງຢູ່ເຮືອນລຸງຕາ, ເວລານັ້ນລຸງຕາກໍ່ເອົາມີດມາຄຽນ ແລະສັ່ງສອນ ເຈົ້າບ່າວຕ້ອງ ເປັນຄົນດຸໝັ່ນ, ເຄົາລົບ, ສັດຊື່, ບໍ່ຂີ້ ຖີ, ຊ່ວຍເຫຼືອເບິ່ງແຍງ ແລະຮັກແພງລູກເມຍຂອງ ຕົນເອງ, ຖ້າສັ່ງສອນບໍ່ໄດ້ສິ່ງຄືນໃຫ້ລຸງຕາ. ເມື່ອ ແຕ່ງດອງແລ້ວ ກໍ່ຕ້ອງໄປນຳຜົວຂອງຕົນ, ກໍລະນີ ເມືອຢາມເຮືອນພໍ່, ແມ່ກໍເມືອຢາມໃນຖານະເປັນ ແຂກ. ການຢ່າຮ້າງ: ຖ້າຝ່າຍຜົວຢາກປະເມຍ ແມ່ນສິ່ງເມຍໃຫ້ເຈົ້າໂຄດລຸງຕາ, ກໍລະນີເມຍຜິດ ແຕ່ຜົວຢາກປະເມຍ, ເມຍຕ້ອງຈ່າຍຄ່າດອງໃຫ້ ຜົວຈົນໝົດ, ຖ້າຜົວຫຼິ້ນສາວເອົາເມຍຕື່ມ, ເຊີຍ ຕ້ອງເສຍຄ່າດອງໃຫ້ຝ່າຍຍິງດ້ວຍຄວາຍ 1ໂຕ, ເງິນ 1 ຮາງ ເອົາເທົ່າໃດເມຍກໍ່ໄດ້. ມີການສືບ ເມຍ, ຖ້າຫາກຜົວຕາຍເມຍຕ້ອງເອົາອ້າຍ ຫຼື ນ້ອງ ຊາຍຂອງຜົວ,ຖ້າບໍ່ສືບຝ່າຍຍິງ ຕ້ອງຈ່າຍຄ່າດອງ ທີ່ຜົວແຕ່ງໄປແລ້ວນັ້ນຄືນ ໃຫ້ເຈົ້າໂຄດຝ່າຍເຊີຍ

ປະເພນີການປ່ຽສິ່ງສະການ:

ເວລາມີຄົນເຈັບເປັນຢູ່ໃນເຮືອນ ກໍ່ດຳ ເນີນການປິ່ນປົວດ້ວຍການເປົ່າ, ບະຜີ,ໃຊ້ເວດມົນ ກົນກະຖາ ແລະໃຊ້ຢາພື້ນເມືອງ, ການບະຜີ ແມ່ນ ມັນຈະຂຶ້ນກັບກໍລະນີຜີແຕ່ລະປະເພດ. ແຕ່ກໍລະນີ ຄົນຜູ້ນັ້ນຕາຍ, ຜູ້ຍັງມີຊີວິດ ໂດຍສະເພາະແມ່ນພີ່ ນ້ອງຊັ້ນຈຳຕ້ອງມີການຮ້ອງໄຫ້ອາໄລຫາຕໍ່ຜູ້ ຕາຍ ຈາກ ແລະການຮ້ອງໄຫ້ ແຕ່ມື້ເສຍຊີວິດຈົນຮອດ ມື້ສົ່ງສະການ. ແຕ່ກ່ອນແມ່ນຝັງ ມາປະຈຸບັນນີ້ຢູ່ ທົ່ງພຽງຈຳນວນໜຶ່ງໄດ້ຈູດ ແຕ່ສ່ວນໜວງໜາຍ ແມ່ນຝັງ ແລະຖ້າຜູ້ຮັ່ງມີແມ່ນເອົາເຂົ້າໂລງ, ລົງງັ້ນ ຢູ່ກ້ອງກະລ່າງເຮືອນເຮັດບຸນລະປີບແລ້ວ ຈຶ່ງເອົາ ໄປຝັງ, ແຕ່ກໍລະນີຜູ້ທຸກຍາກອາດຈະເຮັດບຸນລະ ປີບຕາມທີ່ຫຼັງ (ໄວຫຼືຊ້ານັ້ນຈະຂຶ້ນກັບການກະ ກຽມສະບຽງອາຫານ).

ການເຮັດບຸນລະປີບຕ້ອງມີ ສະບຽງອາ ຫານຄື: ງົວ, ໝູ,ໄກ່ເປັດ, ໝາ, ແບ້, ຄວາຍ, ເຂົ້າ, ເຫຼົ້າ, ເຂົ້າຕົ້ມ, ເຂົ້າໜົ່ມ, ໝາກ ກ້ວຍ, ອ້ອຍ, ໃນເມື່ອການຂຸດເອົາກະດູກຄົນຕາຍໃສ່ໂລງ ແຕ່ປະຈຸບັນເອົາຂີ້ດິນໃສ່ໂລງແລ້ວເອົາມາງັ້ນ ຢູ່ແຄບບ້ານ1 ຄືນມື້ທີ 2 ເອົາງັ້ນຢູ່ໃນບ້ານ ມີການ ຕີຄ້ອງ, ຕີກອງ, ພະເໜາະພ້ຽຣາດເຖິງ 3 ວັນຄືນ ມີການອາລວຍໃຫ້ບຸນ. ປະຈຸບັນລົດລົງ 2 ຄືນ 3 ມື້, ມີການຂ້າຄວາຍ, ງົວ, ໝູ ແລະຕອນແລງ ຂອງ ມື້ທີ 3 ຈຶ່ງເອົາໂລງຈຳລອງໄປຝັງ.

ປະເພນີການປະເກີດລູກ:

ເມື່ອຕັ້ງທ້ອງແລ້ວຕ້ອງອອກແຮງງານ ເປັນປະຈຳ, ບໍ່ໃຫ້ນອນຫຼາຍໃຫ້ທ້ອງຄອນເພື່ອໃຫ້ ເກີດລູກງ່າຍ ແລະໃນຊ່ວງໄລຍະເວລາເມຍຖືພາ, ຜູ້ເປັນຜົວຈະບໍ່ໄດ້ຂ້າສັດຕັດຊີວິດ, ຂ້າປາຄໍ່, ໄກ່, ໝູ, ງົວ, ຄວາຍຢ້ານລູກຈະເກີດເປັນແສດ ເປັນ ຈອນ. ໄລຍະຖືພາເມຍຕ້ອງ ຄະລຳອາຫານຄື: ປີ ກ້ວຍ, ໝູ, ງົວ, ຄວາຍຕາຍ, ຢ້ານ ເວລາລູກອອກ ມາຈະເປັນລີງ, ທະນີ, ຂາແດງ, ລິ່ນ, ແລນ,ຕຸ່ນ, ອ່ຽນ ແລະໄຂມັນຢ້ານຈະເກີດລູກຍາກ.

ເວລາເກີດລູກແຕ່ກ່ອນ ແມ່ນເກີດຢູ່ຕາມປ່າໃສ່ຂີ້ດິນ,ແຕ່ປະຈຸບັນເມື່ອເມຍຖືພາຜູ້ເປັນຜົວກໍ່ປຸກຕູບຢູ່ນອກບ້ານ ແລະເວລາເກີດລູກກໍ່ໃຫ້ເກີດຢູ່ໃນຕູບນັ້ນຈົນຮອດ 3 ວັນ ຈຶ່ງຂຶ້ນຢູ່ກຳເຫິງເຮືອນແຕ່ປະຈຸບັນ 1-5 ວັນເອົາຂຶ້ນເຫິງເຮືອນ, ແຕ່ກ່ອນຈະເອົາຂຶ້ນເຮືອນກໍ່ຕ້ອງຈ້ຳຜີ.

ໄລຍະເກີດລູກນັ້ນທຳອິດ ໃຫ້ກິນເຂົ້າກັບເກືອປະມານ 3 ວັນຈຶ່ງຄ່ອຍກິນອາຫານຄື: ປາເກັດ, ໄກ່ ແລະ ຄະລຳປະເພດສັດປ່າມີ: ນົກ, ລິ່ນ, ແລນ, ຟານ, ອີ້ນ, ຕຸ່ນ, ປາຝາ, ເຕົ່າ ,ງູ, ປາໜັງ, ປາຫາງແດງ, ເຊິ່ງຕ້ອງຄະລຳອາຫານ 3 ເດືອນຂຶ້ນໄປ.


ການເບິ່ງແຍງເວລາເກີດລູກ ໃນເມື່ອກ່ອນ ແມ່ນແມ່ຍິງເບິ່ງກັນເອງດ້ວຍເຫດນັ້ນຈຶ່ງໄດ້ອະນຸຍາດໃຫ້ຜູ້ຊາຍເອົາໜ້າຍເມຍ ເພື່ອໃຫ້ມີຜູ້ເບິ່ງແຍງ ແລະຄ້ຳກຳໃນຂະນະນັ້ນ, ໃນເວລາເກີດລູກໃໝ່, ແມ່ຂອງເດັກເປັນຜູ້ຕັດສາຍແຮ່ ໂດຍແທກເອົາຫົວເຂົ່າຂອງເດັກເກີດໃໝ່ຜູກໄສ້ແຮ່ແລ້ວຕັດດ້ວຍການໃຊ້ຄົມໄມ້ຟາໆ.

ເມື່ອເກີດລູກແລ້ວ ແມ່ນໃຫ້ເດັກເກີດໃໝ່ອາບນ້ຳອຸ່ນໄດ້ 3 ວັນເລີ່ມປ້ອນເຂົ້າໃຫ້ລູກ ແລະໄດ້ລ້ຽງລູກດ້ວຍນ້ຳນົມ 100%.ຖ້າຫາກຜູ້ໃດລ້ຽງລູກຍາກ ໄດ້ດຳເນີນພິທີທາງຮີດຄອງດ້ວຍການເອົາເດັກເກີດໃໝ່ໃສ່ກະດົ້ງ, ເອົາຂ້ຽງຜັກ, ຂ້ຽງເປົ່າ, ຮ້ອງຜີມາກິນໃນຂະນະນັ້ນ,ຖ້າກາຍນັ້ນແມ່ນບໍ່ໃຫ້ກິນ ແລະບໍ່ໃຫ້ຜີເອົາໄປອີກ ແລ້ວຈຶ່ງຈ້ຳຜີເຂົ້າເຮືອນ.

ການສອນລູກຖ້າລູກເປັນແມ່ຍິງ ແມ່ນແອບໃຫ້ຢູ່ໃນໂອວາດພໍ່, ແມ່, ເຖົ້າແກ່, ສອນໃຫ້ຮູ້ຕຳໜູກ, ຕັກນ້ຳ, ຕຳເຂົ້າ, ເອົາຟືນ ແລະແຕ່ງຢູ່ຄົວກິນ, ແຕ່ຖ້າແມ່ນລູກຜູ້ຊາຍກໍ່ສອນໃຫ້ຮູ້ເຮັດໄຮ່, ໄຖນາ, ຖາກໄມ້ເຮັດເຮືອນ ແລະໄດ້ໃຊ້ແຮງງານລູກເລີ່ມແຕ່ອາຍຸ 8 ປີຂຶ້ນໄປ.

ການດຳເນີນຊີວິດທາງເສດຖະກິດ:

ອາຊີບຕົ້ນຕໍ ຂອງຊົນເຜົ່າມະກອງ ໃນເມື່ອກ່ອນແມ່ນຖາງປ່າເຮັດໄຮ່ປູກເຂົ້າ, ເກັບເດັດ, ລ່າເນື້ອ, ຫາປາຕາມທຳມະຊາດ, ລ້ຽງສັດປະເພດ: ຄວາຍ, ງົວ, ໝູ, ໝາ, ແບ້ ແລະສັດປີກ, ປູກພືດຊະນິດຕ່າງໆ. ແຕ່ມາຮອດປະຈຸບັນຄົນມະກອງຢູ່ຫຼາຍບ່ອນ ໄດ້ຖືການເຮັດນາປູກເຂົ້າ ເປັນຕົ້ນຕໍ, ປູກສາລີ, ມັນກໍ່ເຜືອກ ແລະອື່ນໆ ເປັນສຳຮອງ. ນອກຈາກນັ້ນຍັງບໍ່ໄດ້ລົດລະໃນວິຊາຫັດຖະກ ຳຈັກສານ, ຕຳໜູກທໍ່ໄໝ, ປັ້ນໝໍ້ຫຼໍ່ໄຫ ແລະໄດ້ມີຄວາມຊຳນານງານໃນວິຊາຕີເຫຼັກ ເພື່ອຜະລິດເຄື່ອງມືໃນການຜະລິດ ແລະໃຊ້ສອຍໃນຄອບຄົວ ແລະແລກປ່ຽນສິ່ງຂອງອື່ນໆ.



Makong

Historical background:

Centuries ago, the Makong migrated to Laos through Hongsawadee principality of Myanmar and Lopbury principality of Siam and settled in Nong district of Savannakhet province during the reign of King Chanh Aluay. Later, due to population and social pressures, some Makong moved from Nong district to settle sparsely in various districts of Savannakhet and in some districts of Khammuan province.

Presently, the Makong live in Khammuan and Savannakhet provinces. Additionally, the Makong also live in Vietnam, where they are referred to as the "Bru-Vernvian".

According to the 1995 census, the population of Makong stands at 92,321 of which 47,219 are female. This is 2.1 percent of the country's total population.

Name and language

These people refer to themselves as the "Brumakong", however, their official name is the " Makong ", which means " Bring the drum". The Makong also have several sub-groups such as the Makong, Trui, Phua, Maroy and Trong.

The Makong language is a member of the Mon-Khmer language group, and is placed on the Katuic language branch. The Makong can also commonly speak the languages of the Katang, Tree, Ta Oy, Xuay, Kado, Kanai, Pakoh, and of course the Lao national language.

Beliefs, society, ceremonies and myths:

Many of the Makong are still animists, believing in the spirits of ancestors, dead parents and family members, plus the spirits of nature. There are also spirits for rice planning and harvesting, spirits of birth and nursing, and spirits that control sickness and disease. The common village spirit that everyone in the village must respect and fear is the Mahesuck. However, some villages have now converted to more mainstream Buddhism, but still may incorporate some of their animistic beliefs. Often animals are sacrificed to various spirits when such activities such as house construction or the construction of a new village, birth in the family, or rice harvesting.

The Makong have elderly persons who serve as masters or shaman (larm)

that lead these rites of sacrifice or paying respect to spirits. Makong society contains intellectuals, heads of clans and tribes, plus prominent figures who have important influence in the village.

At around the age of 13, Makong boys and girls start the courting process. When they find a suitable mate, they use a mediator to coordinate agreement between the two families. If all is agreed on, a wedding day will be set. Before the wedding, the future bride and groom cannot enter each other's house. For a dowry, the groom will prepare cattle, buffalo, pigs, chickens, a gong, dishes and money. During the wedding, customary words are said to both bride and groom, reminding them to be respectful, honest and good to each other.

In case the husband would like to divorce his wife, the wife must pay back the cost of the wedding, including the dowry. If the husband wants to take a second wife, the husband shall pay for the future wedding. The husband can have several wives as long as he can pay the costs. If the husband dies, the wife shall become the wife of the husband's older or younger brother.

When a woman becomes pregnant, she is made to work often and is not allowed to sleep much. This is because the Makong believe if the mother is active it will make for an easy delivery during labor. During pregnancy, the husband is forbidden to kill animals, including catfish, chicken, pigs, cattle or buffaloes, in the fear that the newborn will be deformed or abnormal. During pregnancy, the mother is also cautious about her diet. She cannot eat bananas, pork, cattle or other meat in fear that the newborn will resemble one of these animals or plants.

Previously, women gave birth in the forest. Today, it is more common for the husband to build a small "birthing hut" near the main house. She will stay in the house for three days after giving birth. After spiritual worship to certain spirits, the woman and the newborn can enter the house.

After birth, the woman eats only rice and salt for three days, then can return to a more normal diet. Other wives and women family members will assist the mother and the newborn in the beginning.

Children are taught certain rules at a young age. If the child is a girl, she is taught to obey her parents and the elderly. She will also learn on how to weave, fetch water, mill rice, build fires and cook. If the child is a boy he will learn to cultivate slash and burn crops, to plough paddy fields, hunt and fish, plus cut timber for building a house. Starting at about age eight, the children assist in many of these choirs.

When someone falls sick, a shaman tries to cure the sick by using magic spells, charms, as well as herbal medicines. When someone dies, the body is either burned or buried. If the dead person comes from a family of some wealth, he or she will be put in a coffin and then a feast will be held for family and friends. If the person is poor, there may be no feast. This feast and ceremony of worship may go on for three days. Buffalo and pigs will be sacrificed also.

Village and house:

In a village, houses are arranged in a round shape. There is a sacred place (sala kwan) at the centre of the village. The Makong will hold a ritual ceremony when selecting site for village settlement or on the occasion of building a new house.


The houses are small and built on stilts. There is a fireplace, a bedroom for family, and an area for guests. The walls and floor are built with bamboo or wooden planks. The roof is grass thatch.

Costume:

Makong women have no traditional dress; they simply wear the basic Lao peasant dress of a sarong and a blouse. They like to wear bracelets and necklaces of silver and tin. The Makong men used to wear a traditional loincloth. Today they wear typical trousers and shirts. Both sexes used to tattoo themselves, pierce their ears, and sharpen their teeth, but this is less common today.

Agriculture and livelihood:

The Makong grow glutinous rice by both slash and burn and wet-paddy farming. They also grow corn, sweet potatoes, and various common fruits and vegetables. They also raise domestic animals such as buffaloes, cattle, pigs, dogs, goats and poultry. Hunting small game and fishing is also something they do with skill. In addition, they practice handicrafts such as weaving, dying silk, pottery, and blacksmithing to manufacture household consumer goods and for trade. They are also skilled at making many things from woven bamboo such as fish traps, baskets and sleeping mats.



ຊົນເຜົ່າ ມອ້ຍ

ປະຫວັດຄວາມເປັນມາ

ສຳລັບປະຫວັດຄວາມເປັນມາ, ກົກເຄົ້າ ເຫງົ້າກໍ ຂອງຊົນເຜົ່າມອ້ຍນີ້ບໍ່ໄດ້ມີເອກະສານ ແລະຂໍ້ມູນທີ່ເວົ້າແຈ້ງວ່າມາຈາກໃສກັນແທ້, ສຳ ລັບຊົນເຜົ່າມ້ອຍຢູ່ລາວໃນປະຈຸບັນເຂົາເຈົ້າໄດ້ຍົກ ຍ້າຍມາຈາກດິນແດນພາກເໜືອຂອງ ຫວຽດນາມ ໂດຍສະເພາະແມ່ນຂອບເຂດແຂວງ ແຫງຮ໊ວ ແລະໄດ້ເຄື່ອນຍ້າຍເຂົ້າມາລາວ ໃນຕົ້ນສະຕະວັດ ທີ 19. ຜູ້ທີ່ນຳພາມາມີຊື່ວ່າ: ລິເຕົ້ອງ. ເຂົາເຈົ້າມາ ຢູ່ດິນລາວທຳອິດ ຢູ່ບໍລິເວນເຂດເມືອງຮາມໂດຍຢູ່ ຮ່ວມກັບຊົນເຜົ່າໃນໝວດພາສາ ລາວ-ໄຕ. ຈາກ ນັ້ນເຫັນວ່າພົບຄວາມຫຍຸ້ງຍາກ ໃນການທຳມາຫາ ກິນ ຈຶ່ງໄດ້ເຄື່ອນຍ້າຍ ເພື່ອຊອກຫາບ່ອນທຳການ ຜະລິດ, ໃນທ້າຍສຸດກໍ່ມາພົບພື້ນທີ່ເຫັນວ່າເໝາະ ສົມສຳລັບການເຮັດນາແລ້ວ ຈຶ່ງມາຕັ້ງຖິ່ນຖານ ບ້ານຊ່ອງຢູ່ບໍລິເວນເຂດບ້ານດອນ ເຊິ່ງຂຶ້ນກັບ ເມືອງ ຊຳເໜືອ ຂອງແຂວງຫົວພັນ.

ປະຈຸບັນນີ້ຊົນເຜົ່າມ້ອຍ ກໍ່ຍັງຕັ້ງຖິ່ນຖານ ບ້ານຊ່ອງຢູ່ບ້ານດອນ ເມືອງ ຊຳເໜືອ ແຂວງ ຫົວ ພັນ ເໝືອນເດີມ. ນອກນີ້ຊົນເຜົ່າມ້ອຍ ຍັງມີ ຢູ່ບັນດາແຂວງພາກເໜືອຂອງ ຫວຽດນາມ ເຊັ່ນ: ແຂວງ ຮ໊ວບິ່ງ ແລະແຂວງແຫງຮ໊ວ.

ຈຳນວນພົນລະເມືອງ ຂອງຊົນເຜົ່າມ້ອຍ ຢູ່ໃນ ສ.ປ.ປ.ລາວ ມີ 627 ຄົນ, ຍິງ 294 ຄົນ (ຕາມຂໍ້ ມູນຈາກນາຍບ້ານ ແລະຜູ້ເຖົ້າຜູ້ແກ່ໃນບ້ານດອນ, ເມືອງຊຳເໜືອ ແຂວງ ຫົວພັນ ໃນເດືອນ 11 ປີ 2001).

ຊື່ເອີ້ນ

ຊົນເຜົ່ານີ້ເອີ້ນຕົນເອງວ່າ: " ມ້ອຍ ", ຊົນ ເຜົ່າອື່ນເອີ້ນເຂົາເຈົ້າກໍ່ແມ່ນ " ມ້ອຍ ", ຊື່ທີ່ເຂົາ ເຈົ້າມັກ ແລະຊື່ທີ່ໃຊ້ໃນທາງການ ກໍ່ແມ່ນ "ຊົນເຜົ່າ ມ້ອຍ ". ສຳລັບ ຊົນເຜົ່ານີ້ຢູ່ ຫວຽດນາມ ໃນປະຈຸ ບັນເຂົາເຈົ້າເອີ້ນວ່າຊົນເຜົ່າ " ເມືອງ ".

ພາສາ

ພາສາຂອງຊົນເຜົ່າມ້ອຍ ຈັດເຂົ້າໃນ ໝວດພາສາມອນ-ຂະແມ, ສາຂາຫວຽດເມືອງ. ບໍ່ ມີຕົວໜັງສືຂຽນ. ນອກຈາກພາສາຂອງເຂົາເຈົ້າ ເອງແລ້ວ ຊົນເຜົ່ານີ້ ຍັງສາມາດເວົ້າພາສາຂອງຊົນ ເຜົ່າໄຕ (ໄຕແດງ, ໄຕຂາວ) ແລະພາສາລາວໄດ້ດີ.

ຮີດຄອງປະເພນີ, ຄວາມເຊື່ອຖື, ວັດທະນະທຳ ແລະສັງຄົມ

ຍ້ອນການດຳລົງຊີວິດ, ການທຳມາຫາ ກິນ, ການໄປມາຊື້ຂາຍ ແລະແລກປ່ຽນສິນຄ້າກັບ ຊົນເຜົ່າອື່ນໆທີ່ຢູ່ໃກ້ຄຽງ ໂດຍສະເພາະແມ່ນຊົນ ເຜົ່າໄຕ (ໄຕແດງ ແລະໄຕຂາວ) ເຮັດໃຫ້ຊົນເຜົ່າ ມ້ອຍ ໄດ້ຮັບອິດທິພົນດ້ານຮີດຄອງປະເພນີ, ຄວາມເຊື່ອຖື ແລະວັດທະນະທຳ ຈາກຊົນເຜົ່າດັ່ງ ກ່າວ. ໝາຍຄວາມວ່າຊົນເຜົ່າມ້ອຍ ມີຮີດຄອງປະ ເພນີຫຼາຍຢ່າງ ທີ່ຄ້າຍຄືກັນກັບຊົນເຜົ່າໄຕ, ແຕ່ເຖິງ ຢ່າງໃດກໍ່ຕາມ ເຂົາເຈົ້າກໍ່ຍັງຮັກສາຮີດຄອງປະເພ ນີທີ່ເປັນເອກະລັກຂອງຕົນໄວ້ໄດ້ຈຳນວນໜຶ່ງ. ຊົນ ເຜົ່າມ້ອຍມີຄວາມເຊື່ອໃນເລື່ອງຜີເຊັ່ນ: ຜີພໍ່, ຜີ ແມ່, ຜີບັນພະບຸລຸດ, ຜີເຮືອນ, ຜີບ້ານ ແລະຜີອື່ນໆ.

ໂຄງສ້າງທາງສັງຄົມຂອງຊົນເຜົ່າມ້ອຍ ຈະປະກອບມີຫຼາຍຕະກຸນ ຫຼື ສິງຊາວ ຄື: ສິງ ເຫຼືອງ, ສິງລໍ, ສິງວີ, ສິງແລນ ແລະສິງອື່ນໆ. ໃນ ແຕ່ລະຕະກຸນ ຫຼືສິງຊາວຈະມີຮີດຄອງການຄະລຳ ທີ່ແຕກຕ່າງກັນເລັກນ້ອຍ ເປັນຕົ້ນແມ່ນການຫ້າມ ຂ້າ ແລະກິນຊີ້ນສັດທີ່ເປັນຕະກຸນຂອງຕົນເອງ ເພື່ອ ສະແດງເຖິງຄວາມເຄົາລົບນັບຖື ແລະການບູຊາ ຕະກຸນຂອງຕົນເອງ. ດ້ານລະບົບຄອບຄົວເລືອດ ເນື້ອເຊື້ອສາຍຕະກຸນ, ເຂົາເຈົ້າສືບເຊື້ອສາຍຕະ ກຸນທາງພໍ່, ຜູ້ຊາຍ ພາຍຫຼັງທີ່ແຕ່ງດອງແລ້ວ ຈະ ຕ້ອງພາເມຍມາ ຢູ່ເຮືອນນຳພໍ່ແມ່ຂອງຕົນ. ໂດຍ ທົ່ວໄປແລ້ວຄົວເຮືອນໜຶ່ງໆ ຂອງຊົນເຜົ່າມ້ອຍ ປະ ກອບດ້ວຍພໍ່ແມ່, ຄອບຄົວຂອງລູກຊາຍທີ່ແຕ່ງ ດອງແລ້ວ, ລູກຊາຍ ແລະລູກສາວທີ່ຍັງໂສດ. ສ່ວນລູກສາວທີ່ແຕ່ງດອງແລ້ວ ຕ້ອງໄປຢູ່ນຳຄອບ ຄົວຂອງພໍ່ແມ່ຜົວ ແລະຕ້ອງໄດ້ຕັດຈາກຕະກຸນ ຂອງພໍ່ແມ່ຕົນໄປເຊື່ອຖື ແລະເປັນສະມາຊິກ ໃນຕະກຸນຂອງຜົວແທນ ພ້ອມທັງມີຄວາມຮັບຜິດ ຊອບໃນການລ້ຽງດູເບິ່ງແຍງຄອບຄົວພໍ່ແມ່ຂອງ ຜົວຮ່ວມກັນກັບຜູ້ອື່ນທີ່ເປັນສະມາຊິກຂອງຄົວ ເຮືອນ, ແຕ່ກໍ່ບໍ່ໄດ້ໝາຍຄວາມວ່າຈະຕັດຂາດ ຄວາມສຳພັນກັບຄອບຄົວພໍ່ແມ່ຕົນຢ່າງຊິ້ນເຊີງ, ຍັງສາມາດມາຢ້ຽມຢາມຊ່ວຍເຫຼືອ ວຽກງານໃນເວ ລາທີ່ຈຳເປັນໄດ້. ການແຕ່ງດອງນັ້ນຈະຕ້ອງແຕ່ງ ກັບຄົນທີ່ມີຕະກຸນຕ່າງກັນ, ເຊິ່ງຕາມປະເພນີແລ້ວ ການແຕ່ງດອງຈະຕ້ອງໄດ້ເຮັດສາມຄັ້ງດ້ວຍກັນ ຈຶ່ງຖືວ່າເປັນການເສັດຊີ້ນຂອງການແຕ່ງດອງ.

ລັກສະນະເຮືອນ ຂອງຊົນເຜົ່າມ້ອຍ, ມັກ ປຸກສ້າງຢູ່ບໍລິເວນທີ່ຮາບພຽງ ເຊິ່ງເໝາະສົມແກ່ ການຜະລິດ ເປັນຕົ້ນແມ່ນການເຮັດນາ, ໃກ້ກັບ ເສັ້ນທາງ ແລະໃກ້ກັບແຫຼ່ງນ້ຳ ເພື່ອສະດວກໃນ ການດຳລົງຊີວິດປະຈຳວັນ. ເຮືອນຂອງເຂົາເຈົ້າຈະ ເປັນເຮືອນຮ້ານ, ການຈັດແບ່ງຫ້ອງພາຍໃນເຮືອນ ແມ່ນອີງຕາມຈຳນວນຄົນໃນຄົວເຮືອນ. ການຄະ ລຳຢູ່ໃນເຮືອນ ແມ່ນຫ້າມບໍ່ໃຫ້ເຂົ້າຫ້ອງນອນ ໂດຍສະເພາະ ແມ່ນຫ້ອງນອນຂອງພໍ່ແມ່ເຈົ້າຂອງ ເຮືອນ ເຊິ່ງຖືວ່າເປັນສະຖານທີ່ໄວ້ຮ້ານຜີເຮືອນ ແລະອີກຂໍ້ຫ້າມໜຶ່ງ ແມ່ນບໍ່ໃຫ້ນັ່ງຕຽງນ້ອຍທີ່ຢູ່ໃກ້ ເຕົາໄຟ. ສ່ວນຢູ່ບ້ານຂອງຊົນເຜົ່າມ້ອຍ ເຂົາເຈົ້າ ຈະມີຫຼັກບ້ານ ເຊິ່ງພາສາທ້ອງຖິ່ນນີ້ເອີ້ນວ່າ:"ຫຼັກ ໝັ້ນ" ສະນັ້ນຫ້າມບໍ່ໃຫ້ຄົນພາຍນອກຈັບບາຍ ແລະແຕະຕ້ອງເດັດຂາດ.

ຮີດຄອງປະເພນີ ກ່ຽວກັບການເກີດລູກ, ເຂົາເຈົ້າເກີດລູກຢູ່ໃນເຮືອນບໍລິເວນຕົນບ່ອນນອນ ແລະອ້ອມແອ້ມເຕົາໄຟ ໂດຍມີແມ່ຍິງທີ່ມີປະສົບ ປະການຄອຍໃຫ້ການເບິ່ງແຍງຊ່ວຍເຫຼືອ, ກໍລະນີ ເກີດຍາກກໍ່ຈະເຊີນໝໍມົນມາຊ່ວຍ. ມີການຢູ່ກຳ ເດືອນ ໂດຍຫ້າມບໍ່ໃຫ້ກິນອາຫານປະເພດເໝັນ, ຄາວ, ດິບ ແລະມີລົດເຜັດ.

ສຳລັບຮີດຄອງປະເພນີ ກ່ຽວກັບການ ຕາຍນັ້ນເຂົາເຈົ້າຈະມີພິທີກຳໄປຕາມແຕ່ລະຂັ້ນ ຕອນ ແລະຈະສິ້ນສະການດ້ວຍການຝັງສົບ, ແຕ່ ການຝັງສົບນັ້ນ ຈະຕ້ອງໄດ້ເອົາຖ່ານຮອງ ແລະປົກ ຖົມໂດຍມີຄວາມໝາຍວ່າໄດ້ເຜົາແລ້ວ. ສິ່ງສຳຄັນ

ທີ່ສຸດຂອງຮີດຄອງປະເພນີ ກ່ຽວກັບການຕາຍ ແມ່ນໄດ້ຂ້າສັດ ແລະມີໝໍມົນ ເພື່ອທຳພິທີຮັບເອົາ ວິນຍານຂອງຜູ້ທີ່ຕາຍໄປແລ້ວ ມາຢູ່ເຮືອນເພື່ອ ຄອຍດູແລ ແລະປົກປ້ອງຄຸ້ມຄອງຊີວິດຂອງລູກ ຫຼານ, ສັດລ້ຽງ ກໍ່ຄືກິດຈະການຕ່າງໆຂອງຄົວເຮືອນ ສະນັ້ນໃນແຕ່ລະປີ ກໍ່ຈະມີການເຮັດບຸນສົ່ງກິນທານ.

ຈາກຮີດຄອງປະເພນີ ແລະຄວາມເຊື່ອຖື ຕ່າງໆທີ່ໄດ້ກ່າວມາ, ຊົນເຜົ່າມ້ອຍ ຈຶ່ງມີພິທີກຳ ແລະງານບຸນປະເພນີທີ່ສຳຄັນໃນຮອບປີໜຶ່ງໆ ຫຼາຍເທື່ອ ເຊັ່ນ: ບຸນປີໃໝ່ (ບຸນກິນຈຽງ ຫຼືກິນເຕດ). ນອກຈາກນີ້ກໍ່ຍັງມີບຸນປະເພນີ ກ່ຽວກັບການຜະ ລິດ ຕາມແຕ່ລະລະດູການ ເຊິ່ງໄດ້ແກ່ບຸນຂໍນ້ຳຝົນ, ບຸນລ້າງໃບເຂົ້າ ແລະບຸນຂ້ວນເຂົ້າໃໝ່ເພື່ອທານ ຫຼືຖວາຍໃຫ້ຜີບັນພະບຸລຸດ ແລະ ຜີເຮືອນ.

ດ້ານສິລະປະວັນນະຄະດີນັ້ນ ຊົນເຜົ່າ ມ້ອຍ ມີຄວາມຮັ່ງມີ ແລະອຸດົມສົມບູນໄປດ້ວຍບົດ ຮ້ອງ ທຳນອງເສບ, ຄຳກອນ, ຄຳຜະຫຍາ, ຄຳສຸ ພະສິດ ແລະອື່ນໆ. ພ້ອມດຽວກັນນີ້ ເຂົາເຈົ້າກໍ່ມີ ເອກະລັກທາງດ້ານການນຸ່ງຖື ແລະການເອ້ຍ້ອງ, ແຕ່ເອກະລັກໃນດ້ານນີ້ ມາຮອດປະຈຸບັນບໍ່ຄ່ອຍ ຈະປະກົດໃຫ້ເຫັນອີກແລ້ວ, ຈະເຫັນໄດ້ກໍ່ຕໍ່ເມື່ອມີ ງານບຸນປະເພນີ, ພິທີກຳຕ່າງໆ ແລະຈະເຫັນ ໃນບາງກຸ່ມຂອງຜູ້ເຖົ້າຜູ້ແກ່ ແລະແມ່ຍິງເທົ່ານັ້ນ. ສ່ວນໃນກຸ່ມຂອງຄົນລຸ້ນໃໝ່ນັ້ນ ເຂົາເຈົ້າຈະຫັນ ໄປນິຍົມໃຊ້ເຄື່ອງທີ່ໄດ້ຈາກການແລກປ່ຽນ ແລະຊື້ ຈາກຕະຫຼາດເປັນສ່ວນຫຼາຍ.

ການດຳເນີນວິຖີຊີວິດ ທາງດ້ານ ເສດຖະກິດ

ຊົນເຜົ່າມ້ອຍ ປະກອບອາຊີບທາງດ້ານ ການກະສິກຳ ເປັນຕົ້ນແມ່ນການເຮັດໄຮ່, ເຮັດນາ ປູກເຂົ້າ. ນອກນີ້ເຂົາເຈົ້າ ຍັງປູກພືດຕ່າງໆ ເພື່ອຮັບ ໃຊ້ຊີວິດປະຈຳວັນຂອງຄອບຄົວ. ພື້ນຖານທາງ ເສດຖະກິດ ແມ່ນຍັງອີງໃສ່ທຳມະຊາດເປັນຕົ້ນຕໍ. ພືດເສດຖະກິດຊະນິດດຽວທີ່ຊົນເຜົ່າມ້ອຍ ນິຍົມ ກັນປູກໄດ້ແກ່ຊາ ເຊິ່ງເຂົາເຈົ້າຈະປູກໄວ້ໃນບໍລິ ເວນໃກ້ບ້ານ ເພື່ອສະດວກໃນການເກັບກູ້ ກໍ່ຄືການ ບົວລະບັດຮັກສາ ໃນເມື່ອມີເວລາຫວ່າງ. ສັດທີ່ເຂົາ ເຈົ້າມັກລ້ຽງໄດ້ແກ່ ຄວາຍ ສຳລັບໃຊ້ເປັນແຮງງານ ລາກແກ່, ສ່ວນການລ້ຽງສັດປະເພດອື່ນໆເຊັ່ນ: ໝູ, ເປັດໄກ່... ກໍ່ລ້ຽງກັນທຸກຄົວເຮືອນ. ຄຽງຄູ່ກັນ ນີ້ຜູ້ຊາຍຊົນເຜົ່າມ້ອຍ ຍັງມີຄວາມຊຳນານງານ ດ້ານວິຊາຫັດຖະກຳຈັກສານ ແລະແມ່ຍິງ ແມ່ນມີ ຄວາມຄ່ອງແຄ້ວ ໃນດ້ານການຫຍິບປັກຖັກແສ່ວ ແລະຕ່ຳຫູກທໍ່ໄໝຕ່າງໆ, ແຕ່ທັງໝົດການຜະລິດ, ການລ້ຽງສັດ ແລະວຽກຫັດຖະກຳ ທີ່ໄດ້ກ່າວມານັ້ນ ແມ່ນຍັງເຮັດແບບຄອບຄົວໃຜລາວເທົ່ານັ້ນ ຍັງບໍ່ ທັນເຮັດຢ່າງຈິງຈັງ ເພື່ອເປັນສິນຄ້າສ້າງລາຍໄດ້ ແກ່ຄອບຄົວເທື່ອ.

Moy

Historical background:

Moy people living in Laos migrated from the northern area of Vietnam in the early nineteenth century. They settled in Ban Dorn village, of Xamneua district in Huaphan province where they still live today. Moy people also live in the northern provinces of Vietnam such as Hua Binh and Thaen Hua provinces.

The total population of Moy living in Laos is small: 627 people, of which 294 are female. These are numbers that were provided by the village chief of Ban Dorn in November 2001.

Name and language:

They refer tó themselves as "Moy" which is the name other groups and the government refers to them by. In Vietnam the Moy are referred to as the "Meuang".

The language of the Moy is classified as a Mon-Khmer language, and is on the Vietic branch. They do not have a written language. Apart from their own language, the Moy can often speak the languages of the Tai ethnic people (Tai Deng, Tai Khao) and Lao languages as well.

Society, beliefs, ceremonies and myths:

The Moy have similarities to their neighboring Tai ethnic groups' culture, but they still have traditions that are unique. Like their neighbors, the Moy believe in animism, such as the spirit of ancestors, dead parents, the household and village, and the spirit of natural things such as the sky and water.

Moy people have many feasts and celebrations during the year such as the New Year festival, and the festivals related to agriculture such as the Rain Asking Feast (boon khor nam phonh) and the New Rice Calling Feast (boon khuan khao mai). Sacrifices will be made during these feasts to placate spirits of nature and ancestors.

In regards to social structure, Moy society has family lines or clans, and the families are patriarchal. Moy must marry from a different clan, not their own, and the wife will live with her husband's family.

There are three wedding ceremonies, but it may be several years before all three are completed. The wife will have the responsibility of taking care of her husband's parents.

Mothers give birth in the house near their sleeping place or by the fireplace. A midwife will assist in the birth. If there are problems in the birth, a shaman may try to communicate to the spirits to assist the birth.

When someone dies, they body is placed in a coffin. They bury the coffin in ash and charcoal. Some animals such as chickens or pigs are killed as a sacrificial offering to the soul of the deceased in hopes it will return to the house and protect the living members of the family.

Village and house:

Traditional Moy houses are rectangular and sit on stilts. The walls are of woven bamboo and the roof is thatch. The floor may be wood planks or split bamboo. A front porch is used for doing daily work and receiving guests

The inside of the house has several small rooms for sleeping with a larger living room. There is a corner hearth for cooking and heating. The often have a separate out-building as a granary for storing rice.

Costume:

The traditional clothing of the Moy will combine Vietnamese, Chinese and Tai influences. The women like to dress in a dark blue sarong that is secured with a green or red silk scarf below the breasts. With this they wear a short-sleeved vest with a kerchief over the hair.

The men will wear long trousers and a shirt with a jacket.

Agriculture and livelihood

The Moy grow mainly rice using both wet-paddy and slash-and-burn methods. They also grow a large variety of vegetables and also tea as a cash crop. The animals they like to raise are chickens, buffaloes, pigs, and ducks. The men will hunt in the forest for small game, but fishing is a more important activity for extra food.

The women are skilled at weaving and dying silk, which supplements their income a small amount. However, most production both agriculturally and economically is for self-sufficiency and not for commercial sale.

ຊົນເຜົ່າຢຸຣ
ປະຫວັດຄວາມເປັນມາ

ຕາມການສັນນິຖານ ຂອງພວກເຖົ້າແກ່ ອາວຸໂສຢູ່ເມືອງປາກຊ່ອງແຂວງ ຈຳປາສັກ ແລະ ເມືອງ ສະໜາມໄຊ ແຂວງ ອັດຕະປື ໄດ້ຮູ້ວ່າຊົນ ເຜົ່າຢຸຣ ແມ່ນຊົນເຜົ່າດັ້ງເດີມທີ່ໄດ້ຕັ້ງພູມລຳເນົາ ຢູ່ພູພຽງ ທີ່ຂຶ້ນກັບເມືອງ ປາກຊ່ອງ, ແຕ່ວ່າໃນ ເບື້ອງຕົ້ນ ພວກເຂົາເຈົ້າໄດ້ຕັ້ງບ້ານເຮືອນຢູ່ເຂດ ພູຕະນຳເຕີມເບີກ, ພູກະຮວຍ ແລະພູຫວາຍ. ຍ້ອນສະພາບເສີກສົງຄາມ ແລະການປ່ຽນແປງ ຂອງທຳມະຊາດ ແລະສັງຄົມ ທີ່ເກີດຂຶ້ນບົນພູພຽງ ແຫ່ງນີ້. ພວກເຂົາເຈົ້າຈຶ່ງເຄື່ອນຍ້າຍໄປຕັ້ງພູມລຳ ເນົາ ຢູ່ຄົນລະແຫ່ງຫົນຄື: ເມືອງບາຈຽງຈະເລີນ ສຸກ, ເມືອງ ປະທຸມພອນ, ເມືອງ ເລົ່າງາມ, ເມືອງ ທ່າແຕງ ແລະເມືອງ ສະໜາມໄຊ, ຕາມບາງແຫຼ່ງ ຂໍ້ມູນໃຫ້ຮູ້ວ່າ: ໃນເບື້ອງຕົ້ນ ເຂົາເຈົ້າຍັງຕັ້ງພູມລຳ ເນົາຢູ່ເຂດທົ່ງໄຫຫີນແຂວງ ຊຽງຂວາງ ແລ້ວ ເຄື່ອນຍ້າຍມາຢູ່ທົ່ງຫຼົ້ງ, ທົ່ງຫວາຍ (ເມືອງປາກ ຊ່ອງ). ພ້ອມກັນນັ້ນໄດ້ມີປະຊາກອນຈຳນວນບໍ່ ໜ້ອຍພັດເຄື່ອນຍ້າຍໄປຕັ້ງພູມລຳເນົາຢູ່ບໍລິເວນ ບ້ານແກ້ງໝາກເຂືອ-ຫວາຍ (ລຳເຊສຸ ເມືອງ ໄຊ ເສດຖາແຂວງ ອັດຕະປື) ແລະໄດ້ເຄື່ອນຍ້າຍ ຂຶ້ນຕາມລຳເຊຊຸຣອດດິນຫວຽດນາມ. ຈາກນັ້ນ ໄດ້ເຄື່ອນຍ້າຍ ລ່ອງຕາມລຳເຊສຸ, ເຊກະໝາມ, ເຊກອງ ແລ້ວຂຶ້ນຕາມລຳເຊນ້ຳກົງ. ມີຈຳນວນ ໜຶ່ງເຄື່ອນຍ້າຍໄປຢູ່ພູພຽງ ທີ່ຂຶ້ນກັບເມືອງ ປາກ ຊ່ອງ ແລະອີກຈຳນວນໜຶ່ງຕັ້ງຖິ່ນຖານລຽບຕາມ ລຳເຊກອງຍ່ານໃຕ້ ແລະເຊປ່ຽນຈົນຮອດປະຈຸບັນ.

ຊົນເຜົ່າ "ຢຸຣ" ຕັ້ງພູມລຳເນົາຢູ່ເມືອງ ປາກຊ່ອງ, ເມືອງ ບາຈຽງຈະເລີນສຸກ, ເມືອງ ປະ ທຸມພອນ ແຂວງ ຈຳປາສັກ, ເມືອງ ເລົ່າງາມ ແຂວງ ສາລະວັນ, ເມືອງທ່າແຕງ ແຂວງ ເຊກອງ ແລະເມືອງ ສະໜາມໄຊ ແຂວງ ອັດຕະປື.

ຊົນເຜົ່າ"ຢຸຣ"ຢູ່ ໃນ ສ.ປ.ປ.ລາວ ມີພົນລະເມືອງ 40.519 ຄົນ, ຍິງ20.497 ຄົນ ເທົ່າກັບ 0,9% ຂອງພົນລະເມືອງ ທົ່ວປະເທດ (ຕາມການ ສຳຫລວດພົນລະເມືອງຄັ້ງທີ II ປີ 1995).

ຊື່ເອີ້ນ:

ຊື່ທີ່ເຂົາເຈົ້າເອີ້ນຕົນເອງແມ່ນ "ຢຸຣ" ເຊິ່ງມີຄວາມໝາຍ 3 ຢ່າງຄື: ໝາຍເຖິງຄວາມປຶກ ແຜນແໜ້ນໜາ, ໝາຍເຖິງແມ່ນ້ຳ, ເຫວ, ຂຸມ ເລິກ ແລະໝາຍເຖິງປ່າເລິກດົງໜາ.

ຊື່ທີ່ຊົນເຜົ່າອື່ນເອີ້ນໃຫ້ເຂົາເຈົ້າ ກໍ່ມີ ຫຼາຍ ຊື່ດ້ວຍກັນຄື: ລະເວນໝາຍເຖິງເວນກຳ, ຜຽນ ເວນ ແລະບັ້ງເວນ. " ສຸຫຼີຊຸ " ໝາຍເຖິງການຊຸໄຫຼ ຂອງ ກະແສນ້ຳ. ສ່ວນຊື່ທີ່ເຂົາເຈົ້າສະໝັກໃຈ ແລະຊື່ທີ່ ໃຊ້ທາງລັດຖະການ ໃນປະຈຸບັນນີ້ແມ່ນຊົນເຜົ່າ "ຢຸຣ"

ຊົນເຜົ່າ "ຢຸຣ" ປະກອບມີ 2 ແຊງຄື: "ຢຸຣກອງ" ໝາຍເຖິງຊົນເຜົ່າ "ຢຸຣ", ທີ່ຕັ້ງພູມລຳ ເນົາຢູ່ຕາມພູພຽງ ແລະ "ຢຸຣດາກ" ໝາຍເຖິງຊົນ ເຜົ່າຢຸຣທີ່ຕັ້ງພູມຖິ່ນຖານລຽບຕາມລຳນ້ຳເຊກອງ ຍ່ານໃຕ້.

ພາສາ:

ໃນຕົ້ນສະຕະວັດທີ XX ໂດຍສະເພາະ ແມ່ນປີ 1936 ຄົນຫຼັງທ່ານອ້ຽກົມມະດຳ ໄດ້ປະ ດິດໂຕໜັງສືຂຶ້ນ ເພື່ອຮັບໃຊ້ພາລະກິດການຕໍ່ສູ້ ແລະຮອດປີ 1966 ທ່ານ ສີທົນກົມມະດຳ ໄດ້ປະ ດິດໂຕໜັງສື "ຢຸຣ"ເພື່ອເປັນຕົວແທນຊົນຊາດ ລາວເທິງ, ແລະຮັບໃຊ້ໜ້າທີ່ການເມືອງຂອງການ ປະຕິວັດໃນໄລຍະນັ້ນ. ຄຽງຄູ່ກັບຕົວໜັງສືຂຽນ ແລ້ວຊົນເຜົ່າຢຸຣ ຍັງມີພາສາປາກເວົ້າເປັນອັນສະ ເພາະຂອງຊົນເຜົ່າຕົນເອງ ເຊິ່ງຈັດເຂົ້າໃນໝວດ ພາສາມອນ-ຂະແມ, ສາຂາພາສາປົນນາຣກ ຫຼ ຂະເໝນບູຮານ. ແຕ່ລະແຊງຊົນເຜົ່າຢຸຣ ມີພາສາ ປາກເວົ້າແຕກຕ່າງກັນບາງເລັກນ້ອຍ, ແຕ່ກໍ່ສາ ມາດເຂົ້າໃຈກັນໄດ້. ພາສາປາກເວົ້າຂອງຊົນເຜົ່າ ຢຸຣ ຄ້າຍຄືກັນກັບຊົນເຜົ່າຍະເຫີນ, ໂອຍ, ເຈັ໋ງ ແລະຊົນເຜົ່າເບຣິ. ເຂົາເຈົ້າສາມາດເວົ້າໄດ້ຫຼາຍ ພາສາຊົນເຜົ່າ ແລະພາສາຕ່າງປະເທດອີກດ້ວຍ.

ຮີດຄອງປະເພນີຄວາມເຊື່ອຖື ແລະວັດທະນະທຳ-ສັງຄົມ

ໃນເມື່ອກ່ອນທັງສອງແຊງຊົນເຜົ່ານີ້ ລ້ວນແຕ່ມີຄວາມເຊື່ອຖືຜີ ແລະແຕ່ລະຄົວເຮືອນ ໄດ້ຖືຜີພໍ່, ຜີແມ່, ຜີບັນພະບູລຸດ,ຜີຟ້າ,ຜີແຖນ, ຜີບ້ານ, ຜີເຮືອນ, ຜີເມືອງ ເຂົາເຈົ້າຖືວ່າເປັນຜີ ທີ່ມີບົດບາດປົກປັກຮັກສາ ເພື່ອບໍ່ໃຫ້ຄົນເຮົາເກີດມີການເຈັບເປັນ. ນອກຈາກນັ້ນເຂົາເຈົ້າຍັງເຊື່ອຖືຜີກົກໄມ້ໃຫ່ຍ, ຜີພູຜາປ່າດົງ, ຜີຄົນຕາຍທຸງ, ຜີແມ່ນ້ຳລຳເຊ ແລະອື່ນໆ ເຊິ່ງເຂົາເຈົ້າຖືວ່າເປັນຜີທີ່ເຮັດໃຫ້ຄົນເຮົາເກີດມີການເຈັບໄຂ້ໄດ້ພະຍາດ. ໃນປີໜຶ່ງໆເຂົາເຈົ້າໄດ້ເຮັດພະກະຍອງ, ພະເຮືອນ, ພະບ້ານ, ພະກອງແຂນ, ພະຄ້ອງລາ, ພະຢາສູບ, ພະເຂົ້າເມົ້າແຕ່ມາຮອດປະຈຸບັນ ເຂົາເຈົ້າໄດ້ມີການປ່ຽນແປງ ໂດຍມີທັງການເຊື່ອຖືຜີ ແລະພຸດທະສາສະໜາຄຽງຄູ່ກັນໄປ, ມີບາງບ້ານມີວັດຄືກັນກັບຊົນເຜົ່າລາວ. ພ້ອມນັ້ນໃນເມື່ອເຂົາເຈົ້າມີການເຈັບເປັນກໍ່ເຊີນໝໍເຢົ້າມາເຢົ້າ ແລະເຊີນຜີມາຊ່ວຍປົ່ນປົວ.

ດ້ານສິລະປະວັນນະຄະດີ:

ໄດ້ມີບົດຮ້ອງທຳນອງເສບ, ມີກອນຂັບ, ມີນິທານພື້ນເມືອງ, ມີຄຳພັງເພີຍໃນແຕ່ລະເດືອນ (1ເດືອນ) ເຊິ່ງໄດ້ນຳໃຊ້ ຕາມແຕ່ລະດູການ.

ລັກສະນະເຮືອນ ຂອງຊົນເຜົ່າຢຸຣ ຄ້າຍຄືກັນກັບເຮືອນຂອງຊົນເຜົ່າເຈ້ງ ແລະໂອຍຄືນິຍົມປຸກສ້າງ ແລະຢູ່ເຮືອນຮ້ານ, ປູ ແລະແອ້ມດ້ວຍແປ້ນ, ມຸງດ້ວຍ ຫຍ້າຄາ, ເສົາເຮືອນເຮັດດ້ວຍໄມ້ແກ່ນສີ່ຫຼ່ຽມແປ, ສູງແຕ່ໜ້າດິນຫາພື້ນເຮືອນ 2,5 ແມັດຂຶ້ນໄປລວງຍາວ ແລະລວງກວ້າງ ມີຄວາມຫຼຸດລົ່ນກັນຢ່າງຂາດຂັ້ນ, ເຮືອນຂອງເຂົາເຈົ້າຍາວສູງສຸດ 5 ຫ້ອງແລະຕ່ຳສຸດ 2 ຫ້ອງ (ນັບວ່າງເສົາ) ເຊິ່ງມັກຕັ້ງບ້ານເຮືອນຢູ່ແຄມຫ້ວຍ ແລະເຊທີ່ມີນ້ຳໄຫຼຕະຫຼອດປີ.

ຕົກມາຮອດປະຈຸບັນຊົນເຜົ່າຢຸຣ ມີຄວາມນິຍົມປຸກຕາມໂຄງສ້າງເຮືອນຂອງຊົນເຜົ່າລາວສະໄໝບູຮານ. ເຂົາເຈົ້າຢູ່ເຮືອນຮ້ານ, ໃນເຮືອນມີຫ້ອງນອນສຳລັບພໍ່ແມ່, ຫ້ອງນອນຂອງລູກເຕົ້າ ແລະສະຖານທີ່ຮັບແຂກ, ຖ້າເຮືອນໃດມີໄພ້, ມີເຂີຍກໍ່ອອກຕັ້ງເຮືອນຢູ່ຕ່າງ ຫາກ.

ຊົນເຜົ່າ "ຢຸຣ" ບໍລິໂພກເຂົ້າຈ້າວ ແລະເຂົ້າໜຽວເປັນຕົ້ນຕໍ, ສຳລັບອາຫານມີແກງ, ປີ້ງ, ຂ້ວ, ຈີ່, ຫຼາມໃສ່ບັ້ງໄມ້, ແຈ່ວເຂົາເຈົ້ານິຍົມກິນອາຫານທີ່ມີລົດຊາດເຜັດ, ພ້ອມກັນນັ້ນເຂົາເຈົ້ານິຍົມດື່ມນ້ຳດິບ, ດື່ມເຫຼົ້າໄຫ ແລະສູບຢາເລີ່ມແຕ່ເວລາຍັງນ້ອຍ.

ແມ່ຍິງຊົນເຜົ່າ "ຢຸຣ"ນຸ່ງສິ້ນ,ຫົ່ມເສື້ອ, ເກ້າຜົມ, ບ່ອງຫູ,ໃສ່ຕ້າງແຕ່ບໍ່ຕັດແຂ້ວ, ໃສ່ສາຍສ້ອຍ, ປອກແຂນ, ປອກຕີນ, ແຫວນມື, ປອກຄໍ, ໝາກປົດ. ສຳລັບຜູ້ຊາຍນຸ່ງກະຕ່ຽວ, ບໍ່ຫົ່ມເສື້ອ ຈົ່ງຜົມຍາວເກ້າຜົມ, ບ່ອງຫູໃສ່ຕ້າງຄືແມ່ຍິງ... ເຂົາເຈົ້າມີການນຸ່ງຖືເອ້ຢ້ອງໃນເວລາເຮັດບຸນ ແລະເຮັດພະຜີຕ່າງໆ ໝາຍຄວາມວ່າ ການນຸ່ງຖືເອ້ຢ້ອງລະຫວ່າງຍິງ-ຊາຍ ແມ່ນຄືກັນແຕ່ວ່າແມ່ຍິງນຸ່ງສິ້ນຫົ່ມເສື້ອ, ສ່ວນຜູ້ຊາຍນຸ່ງກະຕ່ຽວ ແຕ່ບໍ່ຫົ່ມເສື້ອ. ປະຈຸບັນແມ່ນໄດ້ນຸ່ງຖືເອ້ຢ້ອງເໝືອນກັນກັບຊົນເຜົ່າລາວ.

ໃນສັງຄົມຂອງຊົນເຜົ່າ"ຢຸຣ" ບ່າວສາວມີສິດເສລີພາບ ໃນການຊອກຮູ້ຮັກມັກ ເຊິ່ງກັນ ແລະກັນ. ເມື່ອຊອກໄດ້ຄູ່ຄອງທີ່ເພິ່ງພໍໃຈແລ້ວ ກໍ່ກ່າວບອກພໍ່ແມ່ທັງສອງຝ່າຍຮັບຮູ້ນຳ.ຈາກນັ້ນຝ່າຍຊາຍຕ້ອງຊອກງົວ ຫຼືໝູ, ເປັດ, ໄກ່ມາຂ້າເຮັດດອງ ເພື່ອໃຫ້ທັງສອງຝ່າຍຮັບຮູ້ ແລະຢັ້ງຢືນຄູ່ສ້າງຄອບຄົວໃໝ່.


ການແຕ່ງດອງ ລະຫວ່າງສອງແຊງຊົນເຜົ່າ ຢຸຣ ກໍ່ມີອັນແຕກຕ່າງກັນເປັນຕົ້ນ "ຢຸຣກອງ" ແມ່ນບໍ່ມີຄ່າດອງ, ຄ່າຫົວຫຍັງແຕ່ຄູ່ສ້າງຄອບຄົວໃໝ່ ຈະຕ້ອງມີການປະຕິຍານຕົນ ໂດຍເອົາເຖົ້າ

ແກ່ອາວຸໂສໃນບ້ານເປັນສັກຂີພິຍານ. ເມື່ອເປັນຜົວເມຍກັນແລ້ວ, ຖ້າຜົວຢາກຮ້າງເມຍ, ຜູ້ເປັນຜົວຕ້ອງເສຍໃຫ້ແກ່ເມຍຈຳນວນ25 ໝັ້ນ. ຖ້າຜູ້ເປັນເມຍຢາກຮ້າງຜົວ ຜູ້ເປັນເມຍຕ້ອງເສຍເງິນ 20 ໝັ້ນ ໃຫ້ແກ່ຜົວ.ໃນການແຕ່ງດອງຂອງ " ຢຸຣກອງ" ມີຮີດສູ່ເຂີຍຄືກັນກັບເຜົ່າລາວ, ຜູ້ໄທ. ແຕ່ການກຳນົດເວລາຂອງການສູ່ເຂີຍ ແມ່ນຍາວກວ່າເຜົ່າລາວ (10-15 ປີ) ຈາກນັ້ນຜູ້ເປັນເຂີຍຈຶ່ງມີສິດເອົາເມຍກັບຄືນເມືອເຮືອນຂອງຕົນ ຫຼືອອກເຮືອນຕ່າງຫາກ. ສຳລັບ " ຢຸຣດາກ "ມີຄ່າດອງໂດຍເອົາຄວາຍເປັນຫົວໜ່ວຍ, ຄ່າດອງຕ່ຳສຸດແມ່ນຄວາຍ 1 ໂຕ ແລະສູງສຸດແມ່ນຄວາຍ 5 ໂຕ. "ຢຸຣດາກ" ປະຕິບັດຕາມລະບອບຜົວໜຶ່ງເມຍດຽວ, ແຕ່ໃນກໍລະນີຜົວເອົາເມຍນ້ອຍຈະຢ່າຮ້າງ ຫຼືບໍ່ກໍ່ຕ້ອງເສຍໃຫ້ເມຍຫຼວງດ້ວຍຄວາຍ 1-2 ໂຕ ແລະກໍລະນີໄດ້ລູກກ່ອນແຕ່ງດອງ ກໍ່ຖືກປັບໄໝດ້ວຍຄວາຍ 1 ໂຕ ເພື່ອແປງຜີເຮືອນ. ເມື່ອເອົາກັນເປັນຜົວເມຍແລ້ວ ກໍລະນີຜົວຜິດຈະຮ້າງປະເມຍ, ຜົວຕ້ອງເສຍໃຫ້ ເມຍດ້ວຍຄວາຍ 1ໂຕ, ບວກກັບຄ່າດອງທຳອິດ, ກໍລະນີຜົວຜິດແຕ່ເມຍ ເປັນຜູ້ຮ້າງຜົວ, ເມຍຕ້ອງສົ່ງຄ່າດອງຄືນໃຫ້ຜົວດ້ວຍຄວາຍ1 ໂຕ,ກໍລະນີເມຍຜິດທັງຮ້າງປະຜົວ,ເມຍຕ້ອງສົ່ງຄ່າດອງໃຫ້ຜົວຄືນດ້ວຍຄວາຍ2ໂຕ.

ເມື່ອໃນບ້ານຫາກມີຄົນ ໃນຄອບຄົວໃດໜຶ່ງລົ້ມຫາຍຕາຍຈາກ, ຊາວບ້ານຈະຊ່ວຍເຮັດໂລງສົບ.ໃນສະໄໝກ່ອນຫາກແມ່ນຊົນຊັ້ນຮັ່ງມີຕາຍຈະຄົບວັນ 9 ວັນ 9 ຄືນ, ຖ້າແມ່ນຜູ້ທຸກຈົນແມ່ນ 3 ວັນ 3 ຄືນ. ເຖິງມື້ສົມວັນດີເຂົາເຈົ້າກໍ່ ຫາມໄປຝັງຢູ່ປ່າຊ້າຂອງໝູ່ບ້ານ. ເມື່ອຝັງແລ້ວກໍ່ເຮັດເຮືອນແຮ່ວກວມໃສ່ຂຸມສົບໃນເຮືອນແຮ່ວ ເຂົາຈະວາງເຄື່ອງໃຊ້ສອຍ, ນຸ່ງຫົ່ມ, ພາຫະນະການຜະລິດ...ໃຫ້ແກ່ຜູ້ທີ່ລວງລັບໄປ.

ໃນຄອບຄົວໜຶ່ງໆ ເມື່ອເມຍຖືພາຕ້ອງໄດ້ກະກຽມເຫຼົ້າໄຫ 1-10 ໄຫ, ໝູ 3-4 ໂຕ ໜັກ 3 ກຳຂຶ້ນໄປ, ໄກ່ 10 ໂຕຂຶ້ນໄປ, ສິ້ນແນວລະຜືນ, ເສື້ອ(ຮັບເຢາະບອກ-ຮັບເຢາະຈັກ) 3-4 ຜືນ ຟືນ 34 ໂດ້ນ ໃນນັ້ນໂດ້ນໃຫ່ຍ 30ໂດ້ນ. ສະຖານທີ່ເກີດລູກ ແມ່ນຢູ່ຕີນບ່ອນນອນຫ້ອງສຸດທ້າຍເບື້ອງບໍ່ແມ່ນທາງຂຶ້ນເຮືອນ, ໝາຍຄວາມວ່າຢູ່ລະຫວ່າງເຕົາໄຟ ແລະລົກໄກ່. ການເກີດລູກໄດ້ຢູ່ກຳດ້ວຍໄຟ, ດື່ມ ແລະອາບນ້ຳຮ້ອນ, ມີການຄົບງັນດື່ມເຫຼົ້າຊຸມແຂວ10 -12 ຄົນທັ້ງຄະລຳອາຫານບາງຢ່າງຄື: ໝາກໂຕນ, ສາລີ, ໝາກແຕງ, ປາ ທາງແດງ, ປາຄູນ,ເຕົາ,ຟານ.

ການດຳລົງຊີວິດທາງດ້ານເສດຖະກິດ, ແຕ່ກ່ອນຊົນເຜົ່າຢຸຣ ແມ່ນດຳລົງຊີວິດໂດຍຍຶດຖືການຖາງປ່າເຮັດໄຮ່ປູກເຂົ້າຈ້າວ. ແຕ່ສ່ວນຢຸຣດາກໄດ້ປ່ຽນຈາກ ການຖາງ ປ່າເຮັດໄຮ່ມາເຮັດນາ ແຕ່ປີ 1934, ສ່ວນຢຣຸກອງ ເລີ່ມແຕ່ລັດທິລ່າເມືອງຂຶ້ນແບບເກົ່າເຂົ້າມາຮຸກຮານປະເທດລາວ ໄດ້ປູກກາເຟ, ໝາກແໜ່ງ, ແກງກີນາ ເປັນສິນຄ້າ ສົມທົບກັບການເຮັດໄຮ່ປູກເຂົ້າ ປະຈຸບັນມີຫຼາຍບ້ານຢູ່ເມືອງປາກຊ່ອງ ໄດ້ເຮັດນາປູກເຂົ້າຄຽງຄູ່ກັບການປູກກາເຟເປັນສິນຄ້າ. ນອກນີ້ຍັງເຮັດສວນປູກຜັກນາໆຊະນິດ, ເຂົາເຈົ້າມີມູນເຊື້ອໃນການລ້ຽງສັດປະເພດຕ່າງໆເຊັ່ນ: ງົວ, ຄວາຍ, ໝູ, ສັດປີກ ແລະຊ້າງ. ພ້ອມກັນນັ້ນເຂົາເຈົ້າຍັງມີຄວາມຊຳນານໃນວິຊາຫັດຖະກຳຈັກສານ, ເພື່ອເຮັດເຄື່ອງໃຊ້ໃນຄອບຄົວສະເພາະ ຢຣຸດາກ ແມ່ນຍັງມີມູນເຊື້ອວິຊາຊ່າງຕີເຫຼັກ, ເພື່ອເຮັດເຄື່ອງມືການຜະລິດໃຊ້ໃນຄອບຄົວ ແລະຂາຍເປັນສິນຄ້າ ສຳລັບແມ່ຍິງໄດ້ມີຄວາມຊຳນານໃນວິຊາຕ່ຳທູກທໍ່ໄໝ , ຕ່ຳສິ້ນກະຕຸ່ງວ, ຜ້າຫົ່ມ ເພື່ອເຮັດເຄື່ອງນຸ່ງຫົ່ມເອ້ຢ້ອງໃຫ້ແກ່ຕົນເອງ, ລູກຜົວ ແລະເປັນສິນຄ້າ.



Yrou

Historical background:

The Yrou are the most numerous ethnic group on the Boloven plateau, hence their other name, the "Loven". They have lived there for many centuries, and have had long contact with the Lao people, and also the French, who had established large coffee plantations on the plateau.

Now they live in Paksong, Bachiangchalernsook and Patoomphorn districts of Champassak province; in Laongam district of Salavan province; in Thateng district of Sekong province and in Sanarmxai district of Attopeu province.

The total population of the Yrou ethnic group in the Lao P.D.R is 40,519 persons, of which 20,497 are females, representing 0.9% of the total population of the country.

Name and language:

These people refer to themselves as the "Yrou" which can have three meanings: (a) monolithic unity (b), a river, and (c), a forest. Their official name is "Yrou".

They are two groups to the Yrou. The first is the " Yrou Kong " which means "Yrou" who settle on the plateau, and "Yrou Dark" which means "Yrou who settle in the southern surroundings of the Sekong River".

The Yrou language is in the Mon-Khmer language group, and is on the branch of the Bahnaric languages. There are different dialects, but each group can understand each other. The Yrou language is similar to that of the Nya Hern, Oy, Cheng and Brao ethnic groups.

There is an alphabet that was developed in the mid-twentieth century and which uses the Lao alphabet.

Beliefs, society, ceremonies and myths:

The Yrou believe in many animistic spirits, such as those of the house, village and nature. They believe these spirits play a role in taking care of the people and protecting them from sickness. Also, they believe in the spirits of large trees, forests and mountains, and the dead killed in accidents. Presently there has been a combination of animist beliefs and Buddhism. Some villages now have Buddhist pagodas. However, when someone falls sick, the Yru still call on a spiritual master or shaman to perform customary rites and to invite spirits to assist in curing the illness.

The village unit is very important in Yrou society. Each village has a headman who decides important issues and represents the village when dealing with outside authority. The oldest male leads the family unit.

Young people have freedom in choosing their mate. When someone finds a satisfactory pair, they inform the parents and a wedding date is arranged. Unlike most other ethnic groups, the groom does

not have to pay a dowry. However, they live with the bride's family for sometime before moving out to live in their own house.

Divorce is by mutual agreement of the couple, and the children can live with either parent.

When the wife is pregnant, the family has to prepare rice wine, pigs and chickens, plus firewood for a party that will be held if the birth is a success. The mother gives birth in the house. After giving birth, the mother has to sleep by the fireplace, and drinks and bathes in hot water. Friends and family them come to celebrate and may stay for up to ten days. The mother must follow certain food taboos and not eat wax gourd, maize, cucumber, red tail fish, or tortoise and deer for sometime.

If a family member dies, the villagers will come and help prepare a coffin. Previously, if a rich person died, he or she would lie in state for nine days and nine nights. A poorer person may only lie in state for three days. Then family and friends carry the coffin for burial in the village cemetery. After burying the coffin, they would build a miniature house to cover the tomb. In this house they place household consumer goods, clothes, tools and other things to assist the dead in the afterlife.

Village and house:

The Yrou live in small villages, never more than forty houses. These villages are quite permanent, surrounded by cultivated fields. They live in houses on stilts, either constructed of bamboo or wood, depending on the family's financial income. Inside there is a bedroom for the parents, a bedroom for the children and a spare room for receiving the visiting guests.

Costume:

Because of their early contacts with the Lao people, the Yrou dress like Lao people with traditional skirts and blouses for the women, and the pants, shorts and shirts for the men. The men used to wear the katiav, or traditional loincloth.

It is not clear if Yrou women used to weave. Now all cloth and clothing is bought in the Lao markets and is of commercial make.

Agriculture and livelihood:

The Boloven plateau is known for its excellent growing conditions. Many Yrou are involved in growing Arabica coffee and European potatoes, which is an important cash crop. They also grow many types of vegetables in their gardens and also raise various kinds of animals such as cattle, buffaloes, pigs, and poultry. However, for the Yrou, these animals are not as an important income-generator as the cash crops.

ຊົນເຜົ່າແຢະ

ປະຫວັດຄວາມເປັນມາ:

ແຢະ ແມ່ນຊົນເຜົ່າໜຶ່ງ ທີ່ນອນໃນວົງຄະນາຍາດແຫ່ງຊາດລາວ ເຂົາເຈົ້າໄດ້ຕັ້ງຫຼັກປັກຖານ ແລະທຳມາຫາກິນຢູ່ເຂດເມືອງ ດາກຈຶງ ແຂວງ ເຊກອງ ມາແຕ່ດຶກດຳບັນ ແລະຕົກມາຮອດໄລຍະໜຶ່ງ ຂອງສະໄໝປະຫວັດສາດ ທີ່ຍາວນານ ໄດ້ມີກຸ່ມຄົນຈຳນວນໜຶ່ງ ຂອງຊົນເຜົ່າແຢະ ໄດ້ເຄື່ອນຍ້າຍໄປຕັ້ງພູມລຳເນົາຢູ່ເຂດ ກວາງ ນາມ-ດານັ່ງປະເທດ ຫວຽດນາມ ແລະຈຳນວນໜຶ່ງເຄື່ອນຍ້າຍໄປຕັ້ງຖິ່ນຖານຢູ່ເຂດວັງຕັດ ເມືອງ ຊານໄຊ ແຂວງ ອັດຕະປື.

ຊົນເຜົ່າແຢະ ໄດ້ມີປະຫວັດຄວາມເປັນມາຕິດພັນກັບຄວາມເປັນມາ ຂອງຊົນເຜົ່າຕຽງ ແຕ່ບໍ່ທັນມີຂໍ້ມູນໃດໆ ທີ່ເປັນຫຼັກຖານຊັດເຈນໄດ້ ຕາມແຫຼ່ງຂໍ້ມູນຂອງທ່ານ ຄຳໃບ ຍຸນດາລາດ ນັກຄົ້ນຄວ້າຊົນເຜົ່າວິທະຍາ ຂອງສ.ປ.ປ.ລາວ ໄດ້ຢືນຢັນວ່າ: ຊົນເຜົ່າແຢະ ແມ່ນກຸ່ມຄົນໜຶ່ງທີ່ເຄື່ອນຍ້າຍມາຈາກບ່ອນອື່ນໆເປັນຕົ້ນ ແມ່ນມາຈາກ ຫວຽດນາມ, ມາຕັ້ງພູມລຳເນົາ ຢູ່ເມືອງ ດາກຈຶງ, ຈາກນັ້ນເນື່ອງຈາກທີ່ດິນທຳກຳນຜະລິດຖືກຈຳກັດ ເຂົາເຈົ້າຈຶ່ງໄດ້ເຄື່ອນຍ້າຍໄປຕັ້ງພູມລຳເນົາ ດ້ວຍການຢຶດຖືອາຊີບຖາງປ່າເຮັດໄຮ່ປູກເຂົ້າ ຢູ່ເຂດວັງຕັດ ແລະເຂດອື່ນໆຂອງເມືອງ ຊານໄຊ ແຂວງ ອັດຕະປື ແລະເປັນຈຳນວນບໍ່ໜ້ອຍເຄື່ອນຍ້າຍ ໄປຕັ້ງ ພູມລຳເນົາຢູ່ເຂດ ກວາງນາມ - ດານັ່ງ ປະເທດ ຫວຽດນາມ, ກໍ່ເລີຍຖືຕົນເອງເປັນຊົນເຜົ່າໜຶ່ງຈົນຮອດປະຈຸບັນນີ້.

ປະຈຸບັນຊົນເຜົ່າແຢະ ຕັ້ງພູມລຳເນົາຢູ່ເຂດເມືອງ ດາກຈຶງ ແຂວງ ເຊກອງ ແລະເມືອງ ຊານໄຊ ແຂວງ ອັດຕະປື. ນອກຈາກນີ້ແລ້ວ ຊົນເຜົ່າແຢະ ຍັງຕັ້ງພູມລຳເນົາຢູ່ເຂດແຂວງ ກວາງ ນາມ- ດານັ່ງ ຂອງປະເທດຫວຽດນາມ ທັ້ງມີພົນລະເມືອງຫຼາຍກວ່າຢູ່ລາວ.

ຊື່ເອີ້ນ:

ຊົນເຜົ່ານີ້ເອີ້ນຕົນເອງວ່າ: ແຢະ, ຊົນເຜົ່າອື່ນເອີ້ນໃຫ້ເຂົາເຈົ້າກໍ່ແມ່ນຊົນເຜົ່າແຢະ, ຄວາມໝາຍທີ່ວ່າ ແຢະ ໝາຍເຖິງກຸ່ມຄົນທີ່ຕັ້ງພູມລຳເນົາແຄມຫ້ວຍດາກແຢະ ທີ່ຂຶ້ນກັບເມືອງ ດາກຈຶງ ແຂວງ ເຊກອງ ໃນທີ່ສຸດກໍ່ໄດ້ຂະໜານນາມຕົນເອງວ່າ: ຊົນເຜົ່າແຢະ ຈົນຮອດປະຈຸບັນນີ້ເອີ້ນຕາມພູມລຳເນົາ.

ພາສາປາກເວົ້າ:

ຊົນເຜົ່າແຢະ ບໍ່ມີຕົວໜັງສືຂຽນ, ແຕ່ເຂົາເຈົ້າມີພາສາປາກເວົ້າເປັນອັນສະເພາະຂອງຕົນເອງ ທີ່ຂຶ້ນກັບໝວດພາສາມອນ-ຂະແມ. ນອກຈາກພາສາປາກເວົ້າຂອງເຂົາເຈົ້າເອງ ແລ້ວຊົນເຜົ່າແຢະ ສາມາດເວົ້າ ພາສາຂອງຊົນເຜົ່າຕຽງ, ຣ່າຣັກ, ພາສາກະຕູ, ພາສາລາວ ແລະພາສາ ຫວຽດນາມ ໄດ້ດີ.

ຮີດຄອງປະເພນີ, ຄວາມເຊື່ອຖື ແລະວັດທະນະທຳ-ສັງຄົມ :

ໂດຍທົ່ວໄປແລ້ວຊົນເຜົ່າແຢະ ມີຮີດຄອງປະເພນີ, ຄວາມເຊື່ອຖື ແລະວັດທະນະທຳຄືກັນກັບຊົນເຜົ່າຕຽງ. ຍ້ອນການຕັ້ງຖິ່ນຖານ ແລະ ການດຳລົງຊີວິດ ໂດຍຢຶດຖືຮີດຄອງປະເພນີ ເປັນບັນທັດຖານ ສະນັ້ນຊົນເຜົ່າແຢະ ມີຄວາມເຊື່ອ ໃນເລື່ອງຜີເຊັ່ນ: ຜີເຮືອນ, ຜີພໍ່ແມ່, ຜີບັນພະບຸລຸດ

ຜີປ່າ, ຜີຕົ້ນໄມ້, ຜີນ້ຳ ແລະອື່ນໆ .ເຂົາເຈົ້າເຊື່ອວ່າ ສິ່ງທັງໝົດທີ່ມີຊີວິດ ລ້ວນແຕ່ມີຂວັນ ແລະຈິດວິນ ຍານ. ດັ່ງນັ້ນພິທີກຳ ແລະການເບິ່ງເຫດລາງ ໃນ ດ້ານດີ ແລະດ້ານຮ້າຍຈຶ່ງມີຢູ່ທົ່ວໄປໃນສັງຄົມຊົນ ເຜົ່າແຢະ, ແຕ່ວ່າຜີທີ່ສັກສິດຂອງຊົນເຜົ່າ "ແຢະ" ແມ່ນຜີກິນຄວາຍ.

ໂຄງສ້າງທາງສັງຄົມ ຂອງຊົນເຜົ່າແຢະ ມີລັກສະນະຄອບຄົວທີ່ຂ້ອນຂ້າງຂະຫຍາຍ ແລະ ສືບຕະກຸນຕາມທາງພໍ່. ໂດຍທົ່ວໄປລູກຊາຍຖືຕະ ກຸນທາງພໍ່ ແລະລູກຍິງຖືຕະກຸນທາງແມ່. ສ່ວນລູກ ຫຼ້ານ້ອງທີ່ ແລະຄວາມຮັບຜິດຊອບຕໍ່ພໍ່ແມ່.

ຊົນເຜົ່າແຢະ ມີການແບ່ງເຊື້ອສາຍຕະ ກຸນ ເຊິ່ງແຕ່ລະຕະກຸນກໍ່ຄືຂໍ້ຫ້າມ ແລະການຄະລຳ ຕ່າງໆ. ປະເພນີໃນການແຕ່ງດອງ, ຕາມປະເພ ນີ ເກົ່າຜູ້ຊາຍມີ ອາຍຸ 10 ປີກວ່າ ເລີ່ມໄປນອນຢູ່ສາ ລາກວາມ ໃນຍາມກາງຄືນ ແລະອາຍຸ 13 - 15 ປີ ກໍ່ຈັດພິທີກຳທາງຮີດຄອງຕັດແຂ້ວ ແລະຫຼັງຈາກ ນັ້ນ 3 ປີ ຜູ້ຊາຍມີສິດສ້າງຄອບຄົວ ໂດຍແມ່ນເຈົ້າ ສາວເປັນຕົວຕັ້ງຕົວຕີໃນວຽກງານແຕ່ງດອງຂອງ ຕົນ. ການເລືອກຄູ່ຊີວິດຂອງລູກສາວ ແມ່ນຕ້ອງ ຟັງຄວາມສັ່ງສອນຂອງພໍ່, ແມ່ກ່ອນຈະກາຍເປັນ ຜົວເມຍ, ຜູ້ຊາຍຕ້ອງມີຄວາມຊຳນານ ໃນວິຊາຫັດ ຖະກຳຈັກສານ, ຕ້ອງຮຽນຮູ້ຄຸນປະໂຫຍດທາງຮີດ ຄອງຕ່າງໆ ສຳລັບຜູ້ເປັນເຈົ້າສາວ ຕ້ອງມີຄວາມ ຊຳນານໃນການສານສາດປູນອນ, ຕຳຫູກ, ເຈົ້າ ສາວຕ້ອງກະກຽມ ຟືນໄດ້ນຶ່ງຫາມໆ ເພື່ອຈະມອບ ໃຫ້ເຈົ້າບ່າວໃນມື້ກິນດອງ ຊີວິດຫຼັງຈາກແຕ່ງດອງ ຂອງຄູ່ຜົວເມຍນັ້ນຕ້ອງໄດ້ຜັດປ່ຽນກັນຄືຢູ່ເຮືອນ ນຳພໍ່, ແມ່ຝ່າຍຍິງ 3-4 ປີແລ້ວ ກໍ່ຍ້າຍໄປຢູ່ເຮືອນ ນຳພໍ່, ແມ່ຝ່າຍຊາຍ 3 - 4 ປີ ຈົນກວ່າພໍ່, ແມ່ທັງ ສອງຝ່າຍສາມາດກຸ້ມຕົນເອງໄດ້ຈຶ່ງຄ່ອຍອອກໄປ ຕັ້ງເຮືອນຢູ່ຕ່າງຫາກ.

ລັກສະນະເຮືອນ ຂອງຊົນເຜົ່າແຢະ ຕາມ ປະເພນີແລ້ວ ເຂົາເຈົ້າມັກຈະປຸກສ້າງ ແລະຢູ່ ເຮືອນຮ້ານຍາວ. ຫຼັງຄາມີລັກສະນະກົ່ງໂຄ້ງ ຄື ອອງເຕົ່າ. ພາຍໃນເຮືອນໄດ້ມີການຈັດແບ່ງ ຕາມ ຈຳນວນສະມາຊິກຂອງຄອບຄົວ. ຊົນເຜົ່າແຢະ ມັກຕັ້ງເຮືອນອ້ອມສາລາກວາມ ເຮັດໃຫ້ບ້ານມີ ລັກສະນະເປັນວົງມົນ ໂດຍມີສາລາກວາມຢູ່ໃຈ ກາງ, ຢູ່ຕໍ່ໜ້າສາລາກວາມ ແລະຕໍ່ໜ້າເຮືອນແຕ່ ລະຫຼັງລ້ວນແຕ່ມີຫຼັກເສົາສຳລັບຜູກຄວາຍ ທີ່ຈະ ຂ້າ ໃນເວລາຈັດພິທີກຳທາງຮີດຄອງ.

ດ້ານການນຸ່ງຖືເອ້ຢ້ອງໃນເມື່ອກ່ອນຜູ້ ຊາຍຊົນເຜົ່າແຢະ ນິຍົມນຸ່ງກະຕ່ຽວ, ບ່ອງຫູ, ເກົ້າ ຜົມ, ຕັດແຂ້ວ. ພວກແມ່ຍິງນຸ່ງສິ້ນຫຸ້ມຮັດຄຽນ ຮອດເອິກແທນເສື້ອຄືຊົນເຜົ່າຕຽງ. ຖ້າຫາກ ຍາມອາກາດໜາວພວກເຂົາເຈົ້າທົ່ມຜ້າແພຕື່ມ, ປະຈຸບັນການນຸ່ງຖືຂອງຄົນໜຸ່ມ ມີການປ່ຽນແປງ ໂດຍຫັນມາໃຊ້ເຄື່ອງນຸ່ງທີ່ໄດ້ຈາກການແລກປ່ຽນ ຊື້ຂາຍຕາມທ້ອງຕະຫຼາດ. ສ່ວນເຄື່ອງນຸ່ງປະຈຳ ຂອງຊົນເຜົ່ານັ້ນສາມາດພົບເຫັນໄດ້ຫຼາຍ ໃນເວລາ ງານບຸນປະເພນີ ແລະພິທີກຳຕ່າງໆ.

ຊົນເຜົ່າແຢະ ມີຄວາມນິຍົມກິນເຂົ້າ ໜຽວ, ມັກກິນອາຫານປະເພດປີ້ງ, ຈີ່, ແກ່ງ, ລາບ ດິບ, ຫຼາມໃສ່ບັ້ງໄມ້, ເອາະລິດຊາດບໍ່ເຜັດ, ບໍ່ເຄັ່ມ ມີຄວາມນິຍົມດື່ມເຫຼົ້າໄຫ, ດື່ມນ້ຳດິບທີ່ຕັກຈາກ

ທ້ວຍຮ່ອງໜອງບຶງ. ພ້ອມກັນນັ້ນເຂົາເຈົ້າມີເ ຄື່ອງໃຊ້ໃນຄອບຄົວ, ເຄື່ອງມືການຜະລິດ , ເຄື່ອງປ້ອງກັນຕົວ, ເຄື່ອງມືຫາກິນ ແລະວິທີການຂົນສົ່ງວັດຖຸສິ່ງຂອງຄ້າຍຄືກັນກັບຊົນເຜົ່າຕຽງ, ຮ່າຮັກ, ລະວີ,ເປັນຕົ້ນແມ່ນຫາມ, ແບກພາຍ ແລະເປ້ໃສ່ຫຼັງ

ປະເພນີການເກີດລູກ ຂອງຊົນເຜົ່າແຢະ, ແຕ່ກ່ອນເມື່ອແມ່ຍິງຖືພາຮອດເດືອນຄອງ ແລະໃກ້ຈະເກີດລູກ ຜູ້ເປັນຜົວຕ້ອງໄປປຸກຕູບຢູ່ໃນປ່າ ແຄມທ້ວຍ ເພື່ອໃຫ້ເມຍເກີດລູກຜູ້ດຽວ ແລະຮູ້ວ່າເມຍຈະເກີດລູກໃນມື້ໃດຜົວກໍ່ຕ້ອງສົ່ງເຂົ້າ, ອາຫານການກິນໃຫ້ເມຍຢູ່ຕູບຫຼັງນັ້ນ. ສິ່ງເມຍ ແລະເຄື່ອງຂອງໄປຮອດຕູບຫຼັງນັ້ນ ແລ້ວກໍ່ກັບຄືນເມືອເຮືອນຢ່າງ ໂດຍບໍ່ໜຽວຫຼັງແຕ່ຢ່າງໃດເລີຍ. ເກີດລູກແລ້ວໄດ້ 5-6 ມື້ໃດ ຜູ້ເປັນຜົວຈະເອົາເຂົ້າ ແລະອາຫານໄປສົ່ງເທື່ອໜຶ່ງຮອດ 1-2 ເດືອນ ຫຼືແຂງແຮງແລ້ວຈຶ່ງຍ່າງເມືອເຮືອນເອົາເອງ, ປະເພນີດັ່ງກ່າວ ມາຮອດປະຈຸບັນນີ້ກໍ່ຄ່ອຍໆມີການປ່ຽນແປງໜາຍແລ້ວ.

ປະເພນີການສົ່ງສະການ ຂອງຊົນເຜົ່າແຢະ ຖ້າມີຄົນເສຍຊີວິດໃນບ້ານ, ພວກເຈົ້າກິກ, ເຈົ້າເຫຼົ່າໃນບ້ານໄດ້ບອກນາຍຊ່າງຖາກໄມ້ເຮັດໂລງເປັນຮູບຄືທ້ວຄວາຍ ແລ້ວຈຶ່ງຄ່ອຍໄປຂຸດຂຸມເພື່ອຈະຝັງສົບຄົນຕາຍນັ້ນ. ຫຼັງຈາກນັ້ນກໍ່ຈັດພິທີສົ່ງສະການຢູ່ປ່າຊ້າ ແລະກໍ່ນິບໄຫ້ວອາໄລຫາເພື່ອສະແດງຄວາມຄິດຮອດຄິດເຖິງຕໍ່ຜູ້ທີ່ລ່ວງລັບໄປ ແລະກໍ່ເພື່ອເປັນການແບ່ງເບົາຄວາມທຸກໂສກຕໍ່ຄອບຄົວຜູ້ເສຍຊີວິດ.

ກ່ຽວກັບງານບຸນປະເພນີ ແລະພິທີກຳ ຂອງຊົນເຜົ່າແຢະ ໃນຮອບປີໜຶ່ງໆນັ້ນມີຫຼາຍເທື່ອດ້ວຍກັນເວົ້າລວມແລ້ວ ປະເພນີການສະເຫຼີມສະຫຼອງ ແລະການປະຕິບັດພິທີກຳນັ້ນ ແມ່ນຄ້າຍຄືກັບຊົນເຜົ່າຕຽງ ເປັນຕົ້ນແມ່ນພິທີລະນຶກການເຄົາລົບບູຊາຮອດຈິດວິນຍານຂອງບັນພະບູລຸດ, ພໍ່, ແມ່ທີ່ໄດ້ເສຍຊີວິດໄປ ເຊິ່ງມັກຈະຈັດຂຶ້ນໃນເດືອນ 3 ສາກົນ. ໂດຍຫ້າມເຮັດວຽກໃນໄລຍະປະຕິບັດພິທີ, ເຊິ່ງມີການແທງ, ຂ້າຄວາຍເພື່ອຖວາຍຜີ ແລະພິທີກຳດັ່ງກ່າວແມ່ນຈັດຂຶ້ນທີ່ສາລາກວາມ. ນອກຈາກນີ້ແລ້ວເຂົາເຈົ້າຍັງມີພິທີກຳລ້ຽງຜີ ໃນກໍລະນີເຈັບໄຂ້ໄດ້ປ່ວຍ ແລະເກີດໄພພິບັດຈາກການຜະລິດ ແລະອື່ນໆ.

ພື້ນຖານເສດຖະກິດ ແຕ່ກ່ອນຈົນຮອດປະຈຸບັນຊົນເຜົ່າແຢະ ຢູ່ປະເທດເຮົາ ແມ່ນຍຶດຖືອາຊີບຖາງປ່າເຮັດໄຮ່ປູກເຂົ້າໜຽວເປັນຕົ້ນຕໍ. ນອກນີ້ຍັງປູກພືດທີ່ມີທາດແປ້ງ, ພືດຕະກຸນຖົ່ວ, ຫາປາຕາມທຳມະຊາດ, ເຮັດກະຕິດ, ກະຕ່ຳ, ເກັບເດັດຜັກປ່ານາໆຊະນິດ, ໜາກໄມ້, ໜໍ່ໄມ້, ເຫັດ ແລະອື່ນໆ ເພື່ອປຸງແຕ່ງເຮັດເປັນອາຫານສຳລັບບໍລິໂພກໃນແຕ່ລະວັນ. ຄຽງຄູ່ກັນນີ້ຊົນເຜົ່າແຢະ ຍັງມີມູນເຊື້ອໃນການລ້ຽງສັດປະເພດຕ່າງໆ ຄື: ງົວ, ຄວາຍ, ໝູ, ໝາ ແລະສັດປີກ ເພື່ອໃຊ້ມອບຖວາຍໃນມື້ມີພິທີກຳທາງຮີດຄອງ, ຂ້າກິນເປັນອາຫານປະຈຳວັນ, ແມ່ຍິງຊົນເຜົ່າແຢະ ມີຄວາມຊຳນານໃນວິຊາຕ່ຳທູກ, ທໍ່ ໄໝ, ສານສາດປູນອນ, ສ່ວນຜູ້ຊາຍ ມີຄວາມຊຳນານໃນວິຊາຫັດຖະກຳຈັກສານ, ຕີເຫຼັກ ແລະອື່ນໆ.

Yae / Ye`

Historical background:

The historical background of the Yae is similar to that of the Triang people. They are believed to have come from Vietnam and originally settled in Darkcheung district. Due to the limited availability of land for production, they migrated to settle in the Vangtad region of Sarnxai district in Attopeu province. There they practiced mainly slash-and-burn cultivation. A number of them migrated to settle around Kwangnam and Danang in Vietnam.

Presently, the Yae people live in Darkcheung district of Sekong province and in Sarnxai district of Attopeu province. Their population is 8,013 according to the 1995 census.

Name and language:

They have also been known by the names " Gie " and "Die, but Yae is their official name and the name they prefer.

Their language is classified as a Mon-Khmer language and is on the Bahnaric branch. Apart from their own language, they can speak the languages of Triang, Haruck, Kahtoo, Lao and Vietnamese languages. The Yae do not have a written language.

Beliefs, society, ceremonies and myths:

The Yae people believe in animism. Many taboos, spirits, and omens must be observed and obeyed. There are spirits of forests, trees, river spirits and others. They believe all living things have a soul and a spiritual mind. Many rituals and practices are related to the agricultural cycles. There is a deity, called the Ya Nguh, which is responsible for human conception. The Yae believe she lives on a village on the moon. Illnesses are also caused by evil spirits and a village shaman will sacrifice a pig in hope of placating the evil spirit.

In general, the ritual feastings are similar to those of the Triang ethnic group. In particular, the ceremony of commemorating and respecting the soul and spiritual mind of their ancestors and dead parents is very important. This ceremony is held in March, it is forbidden to work during the festival. A buffalo is stabbed and killed as a sacrifice to the spirit, and then the villagers eat this buffalo in a large feast held in the communal house. Additionally, rituals are held when someone is seriously sick or there is poor agricultural production.

The social structure of Yae ethnic people is characterized by an extended type of family in which lineage is traced through the male line of the family. Yea ethnic people are divided into various family lines, with different taboos and restrictions. Marriage is strictly forbidden between members of the same lineage. The youngest child has the responsibility to look after the parents.

Traditionally, boys of over ten years of age slept at the Salakwan (public house). At the age of thirteen to fifteen, a ceremony was held for teeth cutting and then the boys may marry. However, this custom has disappeared today.

The bride's side is responsible mainly for the wedding ceremony. The girl respects the words of her parents in choosing

her mate before getting married. Grooms must be skillful in handicraft and must have knowledge about customs and traditional values. Brides should be skillful in weaving and other household skills.

Traditionally, when a woman is about to give birth, the husband must build a small hut by a stream in the forest so that the wife can give birth alone. Soon before birth, the husband prepares food in the hut for the wife, escorts her there, and returns to the village. Five to six days after giving birth, the husband will bring her some food, and will continue to do so for about one to two months. Then the mother and child will return to the village. However, this tradition has changed, and Yae women often give birth at home now.

When someone dies, the Yae place some uncooked rice in the mouth of the body, dress the body, and then place it in the main room of the house. Feasting and drinking follow along with music. The next day the body is placed in a coffin carved from a tree trunk and placed in a grave in the cemetery some distance from the village. Some personal belongings of the deceased are left with the coffin. After this, the mourners go to the nearest stream and bathe, to prevent spirits from following them back to the village.

Village and house:

In the past, the Yae lived in long houses on wooden stilts. A single long house may have constituted a village. Yae people built their houses around the communal house that had a roof like the shape of a turtle shell. In front of each house, there is a wooden post to attach buffaloes that are to be killed for their traditional rites.

Now Yae villages in Laos no longer have these long houses. The villages today look typically like Lao villages, with ordinary wood houses and no communal house.

Costume:

Traditionally, Yae men preferred to wear loin clothes and leave their upper body naked. Now they wear short pants. Women now wear a traditional Lao phaa sinh (skirt) and a blouse. When the weather is cool, they will wear additional clothing bought in the Lao markets. If a woman is married, she will plait her hair and wind it in a knot on top of her hair. Young girls let their hair fall free.

Agriculture and livelihood:

Yae people practices mainly slash and burn cultivation of dry-land glutinous rice. Additionally, they also grow root crops and legumes. They also gather vegetables in the wild including fruits, bamboo shoots, mushrooms and others for daily cooking. Yae people have a tradition of raising animals such as buffaloes, pigs, and goats for animist sacrifice, and some daily consumption.

Yae women are skilled in weaving, dying silk, and weaving baskets and mats from bamboo. Yae men are skillful in handicraft such as pottery, and simple blacksmithing, and make simple tools for farming, fishing and hunting.

ຊົນເຜົ່າລະເມດ

ປະຫວັດຄວາມເປັນມາ:

ຊົນເຜົ່າລະເມດ ແມ່ນຊົນເຜົ່າໜຶ່ງ ທີ່ນອນໃນວົງຄະນາຍາດແຫ່ງຊາດລາວ. ພວກເຂົ້າເຈົ້າໄດ້ເຂົ້າມາຕັ້ງຖິ່ນຖານພູມລຳເນົາຢູ່ລາວເຮົາ ພ້ອມດຽວກັນກັບຊົນເຜົ່າກຶມມຸ. ສຳລັບການເຄື່ອນຍ້າຍຂອງຊົນເຜົ່ານີ້ບໍ່ມີຫຼັກຖານທີ່ແນ່ນອນວ່າ ເຂົ້າເຈົ້າເຂົ້າມາຢູ່ລາວເວລາໃດ, ແລະບົນເສັ້ນທາງການຍົກຍ້າຍນັ້ນໄດ້ຜ່ານໃສ່ແດ່. ໂດຍອີງໃສ່ຫຼັກການທາງພາສາສາດ ແລະວັດທະນະທຳແລ້ວ ກໍ່ແມ່ນຊົນເຜົ່າໜຶ່ງທີ່ມາອາໃສ ຢູ່ແຜ່ນດິນຕອນນີ້ໄດ້ເທິງນານແລ້ວ.

ປະຈຸບັນຊົນເຜົ່າລະເມດ ດຳລົງຊີວິດ ແລະຕັ້ງຖິ່ນຖານພູມລຳເນົາຢູ່ແຂວງ ຫຼວງນ້ຳທາ, ອຸດົມໄຊ ແລະບໍ່ແກ້ວ.

ຊົນເຜົ່າລະເມດ ມີພົນລະເມືອງລວມ 16.740 ຄົນ, ຍິງ 8.872 ຄົນ ເທົ່າກັບ 0,4%. (ຕາມສະຖິຕິການສຳຫຼວດພົນລະເມືອງທົ່ວປະເທດ ຄັ້ງທີ II ປີ 1995).

ຊື່ເອີ້ນ:

ຊົນເຜົ່ານີ້ເອີ້ນຕົນເອງວ່າ: " ລະເມດ ", ຊົນເຜົ່າອື່ນເອີ້ນໃຫ້ເຂົາເຈົ້າກໍ່ແມ່ນ " ລະເມດ " ແລະຊື່ທີ່ເຂົາເຈົ້າມັກກໍ່ແມ່ນຊົນເຜົ່າລະເມດ. ສຳລັບຄວາມໝາຍຂອງຄຳວ່າ "ລະເມດ" ນີ້ຍັງບໍ່ທັນຮູ້ຢ່າງຈະແຈ້ງ ແລະຊັດເຈນ.

ພາສາ:

ຊົນເຜົ່າລະເມດ ບໍ່ມີຕົວໜັງສືຂຽນ ,ແຕ່ມີພາສາປາກເວົ້າສະເພາະຂອງເຂົາເຈົ້າເອງ ເຊິ່ງຈັດຢູ່ໃນໝວດພາສາມອນ - ຂະແມ. ຊົນເຜົ່າລະເມດນອກຈາກນຳໃຊ້ພາສາຂອງຕົນເອງແລ້ວ ຍັງຮູ້ພາສາຂອງຊົນເຜົ່າທີ່ຢູ່ໃກ້ຄຽງດີສົມຄວນ, ເຊິ່ງມີຄວາມສະດວກ ໃນການແລກປ່ຽນເສດຖະກິດ ວັດທະນະທຳ ລະຫວ່າງຊົນເຜົ່າເຫຼົ່ານັ້ນ.

ຮີດຄອງປະເພນີ, ຄວາມເຊື່ອຖື ແລະວັດທະນະທຳ-ສັງຄົມ :

ຊົນເຜົ່າລະເມດ ໄດ້ມີຄວາມເຄົາລົບບູຊາ ແລະມີຄວາມເຊື່ອຜີເຊັ່ນ: ຜີປູ່ຍ່າຕາຍາຍ, ຜີພໍ່ແມ່, ຜີເມືອງ, ຜີບ້ານ, ຜີຫ້ວຍຮ່ອງຄອງບຶງ ແລະ ອື່ນໆ. ນອກຈາກນີ້ແລ້ວ ຍັງເຊື່ອໃນເລື່ອງຈິດວິນຍານ ແລະຂວັນເຂົາເຈົ້າເຊື່ອໃນຮ່າງກາຍຂອງຄົນຜູ້ໜຶ່ງມີຢູ່ 2 ຂວັນ.

ຊົນເຜົ່ານີ້ມີປະເພນີ ແບບຜົວດຽວເມຍດຽວ. ເຂົາເຈົ້າສືບສາຍຕະກຸນທາງພໍ່, ສະນັ້ນແມ່ຍິງເມື່ອເອົາຜົວແລ້ວຕ້ອງໄປຢູ່ເຮືອນ ເພື່ອລ້ຽງດູພໍ່, ແມ່ຂອງຜົວ, ແຕ່ກ່ອນຈະໄປຢູ່ເຮືອນນຳຜົວ, ຝ່າຍຍິງຕ້ອງໃຫ້ຜູ້ເປັນຜົວມາຢູ່ເຮືອນນຳພໍ່, ແມ່ຂອງຕົນໃນໄລຍເວລາປະມານ 2-3 ປີ.

ສຳລັບລະບົບຄອບຄົວ ຂອງຊົນເຜົ່ານີ້ ຂ້ອນຂ້າງເປັນລະບົບຄອບຄົວຂະຫຍາຍ ເຊິ່ງໃນເຮືອນຫຼັງໜຶ່ງຈະມີ 2 - 3 ຄອບຄົວດຳລົງຊີວິດຢູ່

ຮ່ວມກັນ. ໃນສັງຄົມຂອງຊົນເຜົ່າລະເມດມີ 2 ສິ່ງ ທີ່ສຳຄັນຄື: ສິ່ງຈິດ ແລະສິ່ງຜັກກູດ.

ຊົນເຜົ່າລະເມດມີພິທີ ແລະຮີດຄອງໃນ ການທີ່ຈະສ້າງບ້ານ ແລະເຮືອນ, ໃນການເຮັດຮີດ ຄອງບ້ານນັ້ນໃຊ້ເວລາ 3 ວັນ, ເຊິ່ງຈະມີການຄະ ລຳຫ້າມບໍ່ໃຫ້ຄົນໃນອອກ ແລະຄົນທາງນອກເຂົ້າ.

ລັກສະນະເຮືອນ ຂອງເຂົາເຈົ້າເປັນເຮືອນ ຮ້ານ ເຊິ່ງຄ້າຍຄືເຮືອນຂອງຊົນເຜົ່າລໍ້ ແລະຊົນ ເຜົ່າຍວນ. ຢູ່ພາຍໃນເຮືອນຈະມີຮ້ານບູຊາຜີຢູ່ແຈ ເສົາຫ້ອງນອນຂອງພໍ່ແມ່. ສະນັ້ນການທີ່ຈະລ່ວງ ເຂົ້າຫ້ອງນອນຂອງພໍ່, ແມ່ ຫຼືຫ້ອງອື່ນໆບໍ່ວ່າຈະ ເປັນສະມາຊິກຂອງຄອບຄົວ ຫຼືແຂກພາຍນອກຖື ວ່າເປັນຂໍ້ຫ້າມອັນໜຶ່ງ ທີ່ໄດ້ປະຕິບັດກັນມາແຕ່ ບູຮານນະການ.

ປະເພນີກ່ຽວກັບການເກີດລູກ ຂອງຊົນ ເຜົ່ານີ້ມີຂໍ້ຫ້າມ ແລະການຄະລຳຫຼາຍຢ່າງ, ເລີ່ມ ແຕ່ຖືພາມານແມ່ນມີການຄະລຳບໍ່ໃຫ້ຈັບຄົນຕາຍ, ບໍ່ໃຫ້ເຮັດວຽກໜັກ ແລະບໍ່ໄດ້ຂ້າສັດຕັດຊີວິດທຸກ ປະເພດ. ສະຖານທີ່ເກີດລູກແມ່ນຢູ່ໃນເຮືອນ, ໃນ ຫ້ອງນອນຂອງຕົນເອງ, ຢູ່ກຳຮ້ອນແຄມເຕົາໄຟ ແລະພັກວຽກ 1ເດືອນ.

ໃນກໍລະນີມີຜູ້ເສຍຊີວິດເຂົາເຈົ້າ ຈະມີພິ ທີ ແລະການສົ່ງສະການດ້ວຍການຝັງສົບ. ງານ ບຸນປະເພນີ ແລະພິທີທີ່ສຳຄັນຂອງຊົນເຜົ່າລະ ເມດ ໃນປີໜຶ່ງໆນັ້ນເຂົາເຈົ້າຈະມີພິທີການຮຽກ ຂວັນ ແລະຈິດວິນຍານຂອງບັນພະບຸລຸດ, ຮຽກ ຂວັນບ້ານ, ພິທີກ່ຽວກັບການປູກຝັ່ງ,ໂດຍສະ ເພາະແມ່ນກ່ອນຈະປູກ ແລະເກັບກ່ຽວເຂົ້າ.

ດ້ານສິລະປະວັນນະຄະດີ, ຊົນເຜົ່າລະ ເມດ ມີບົດຮ້ອງທຳນອງເສບ, ກອນຂັບລຳພື້ນສືບ ບູຮານ, ກອນພະຫຍາ, ຄຳສຸພາສິດ ແລະນິທານພື້ນ ເມືອງ. ສຳລັບເຄື່ອງນຸ່ງຫົ່ມ, ການເອ້ຢ້ອງຂອງເຂົາ ເຈົ້າມີລັກສະນະຄ້າຍຄືຂອງຊົນເຜົ່າລໍ້, ຢ້ຳ ແລະ ຊົນເຜົ່າລາວ.

ດ້ານເສດຖະກິດ, ຊົນເຜົ່າລະເມດ ມີອາ ຊີບ ໃນການຖາງປ່າເຮັດໄຮ່ປູກເຂົ້າ. ນອກຈາກ ນີ້ແລ້ວຍັງປູກພືດທີ່ມີຫາດແປ້ງ ແລະພືດຜັກ ເພື່ອ ກິນປະຈຳວັນ . ເຂົາເຈົ້າມີມູນເຊື້ອໃນການລ້ຽງສັດ ເຊັ່ນ: ງົວ, ຄວາຍ, ໝູ, ໝາ, ໄກ່, ເປັດ ເພື່ອເປັນ ອາຫານ, ເຮັດພິທີກຳຕ່າງໆ ເຊັ່ນ: ເຝົ້າເຮືອນ ແລະ ລ່າເນື້ອ. ຄຽງຄູ່ກັນນັ້ນຊົນເຜົ່າລະເມດ ຍັງມີ ຄວາມຊຳນານງານ ໃນດ້ານຫັດຖະກຳຈັກສານ ແລະຕີເຫຼັກ.

Lamed / Lamet

Historical Background:

The Lamed have lived in Laos for a long time, but how long remains unclear. They are considered one of the earlier groups to have settled in Laos. There is no clear information about their migration to Laos or where they migrated from. Based on linguistic and cultural traits, it is agreed that this group has lived in Laos for a long time.

Presently, the Lamed live in Luangnamtha, Udomsai and Bokeo provinces. According to the second population census done in 1995, the Lamed population totals 16,764 people, of which 8,872 are female, sharing 0.4% of the country's total population.

Name and language:

The Lamed refer to themselves as " Lamed ". Other ethnic groups also call them by this namé, which is preferable. The meaning of the word " Lamaed " remains unclear.

The Lamed language is classified as a Mon-Khmer language group and is a Palaungic language. Apart from their own language, Lamaed people can often speak neighboring languages well which help with economic and cultural exchange. They have no alphabet for writing their language.

Beliefs, society, ceremonies and myths:

Lamed people respect and believe in animistic spirits such as spirits of ancestors, spirits of their dead parents, spirits of the village and districts and others. In addition, they believe in spirits and the soul (kwan), in which each person has two souls within the body. Unlike some other minority groups in Laos, the Lamed only take one wife or husband. The Lamed do not have a true headman, but the village priest, or shaman, has the role as the village leader.

The family unit is organized in the patriarchal sense, and after a woman marries, she lives with her husband's parents to help take care of them. However, before she lives in her in-law's house, the newly married couple must stay at her parents' for two years. This ethnic group has an extended family system with more than one family living in the same household

There are some restrictions and taboos related to pregnancy and birth. For example, it is forbidden for a pregnant woman to touch the body of a dead person. In addition, an expecting mother should not be allowed to work hard physically, and also not to kill any animals. The place for birth is in the bedroom of the house and after birth, the mother sleeps by the fireplace and does not work for one month.

When someone dies, there body

is placed in a coffin. After a funeral ceremony in which family and friends pay respect, the coffin is buried in the ground.

As far as fine art and culture is concerned, Lamed people have songs, rhymes for traditional chanting, music, proverbs, and folk tales. The patterns of their dress and make up are similar to that of Leu, Yung and Lao ethnic groups. Major traditional feasting and ritual worship of the Lamed is related to cultivation, in particular, before planting and harvesting rice.

Village and house:

The village is located in valleys and hilltops. There is no defined plan to the village, and the houses are placed somewhat randomly. Their houses are built on stilts in a style similar to that of Leu and Nyan people.

When building a house, the Lamed hold a ceremony once the house is built. This consists of feasting and ritual worship in the new house for three days. During this time, it is forbidden for the family members to go out of the house and any outsiders to enter the house. There is a sacred altar in the corner of the parent's bedroom. Therefore, visitors and even other family members are not allowed to enter the parents' bedroom. This restriction has been followed for a very long time.

Agriculture and livelihood

Lamed people practice mainly slash and burn cultivation of rice, and grow root crops and vegetables for daily consumption. Traditionally, after harvesting an area, the Lamed would farm new land, allowing the previous farmland to regenerate for around ten years. However, because of land pressures, this is not practiced much anymore.

They have a tradition of raising animals for food such as cattle, buffaloes, pigs, dogs, chickens and ducks for food. Hunting for wild animals such as birds, rats, deer and wild boar is common. Lamed people are also skillful in handicraft and blacksmithing. They produce back-baskets, containers and fish traps.

ຊົນເຜົ່າລະວີ

ປະຫວັດຄວາມເປັນມາ:

ກ່ອນພວກສັກດີນາສະຫຍາມ ເຂົ້າມາຮຸກຮານປະເທດລາວເຮົາ. ຊົນເຜົ່າລະວີ ແມ່ນໄດ້ຕັ້ງຫຼັກປັກຖານຢູ່ເມືອງ ດາກຈຶງ ຮ່ວມກັບຊົນເຜົ່າຕຣຽງ ແລະກໍ່ມີກົກເຄົ້າເຫງົ້າກໍອັນດຽວກັນກັບຊົນເຜົ່າຕຣຽງ, ພາຍຫຼັງກອງທັບທະຫານສັກດີນາສະ ຫຍາມກວາດລ້າງ ພວກເຂົາເຈົ້າໄປຢູ່ເມືອງສະຫຍາມຊົ່ວໄລຍະໜຶ່ງແລ້ວ ກໍ່ຄືນມາຕັ້ງຫຼັກປັກຖານຢູ່ປະເທດລາວແຄມຫ້ວຍລະວີທີ່ຂຶ້ນກັບເມືອງ ລະ ມ່ວນ ແຂວງ ເຊກອງ ເປັນໄລຍະເວລາເຫິງນານ ມາແລ້ວ ເຊິ່ງໃນໄລຍະທີ່ພວກຜູ້ຄົນຢູ່ທ້ອງຖິ່ນ ທ່ຽວໄປມາ ກໍ່ເລີຍເອີ້ນພວກທີ່ຕັ້ງພູມລຳ ເນົາລຽບ ຕາມແຄມຫ້ວຍດັ່ງກ່າວວ່າ: ພວກລະວີ ໃນທີ່ສຸດ ພວກເຂົາເຈົ້າກໍ່ໄດ້ຂະໜານນາມຕົນເອງວ່າ ເປັນ ຊົນເຜົ່າ "ລະວີ" ຈົນເທົ້າທຸກວັນນີ້. ແຕ່ຕາມບາງ ແຫຼ່ງຂໍ້ມູນໃຫ້ຮູ້ວ່າ: ໃນສະໄໝທະຫານສັກດີນາ ສະຫຍາມກວາດລ້າງ ຄົນຕຣຽງ ຢູ່ ເມືອງ ດາກຈຶງ ນັ້ນໄປຢູ່ປະເທດສະຫຍາມແລ້ວ ໄດ້ຖືກການ ມອບໝາຍໃຫ້ເຝົ້າຮັກສາ ແລະຮັບໃຊ້ເຈົ້າຊີ ວິດແຫ່ງເມືອງສະຫຍາມສະໄໝນັ້ນ. ໃນເວລາ ນັ້ນວີຂອງເຈົ້າຊີວິດ ແຫ່ງເມືອງສະຫຍາມເສຍ ຫາຍ, ຊອກຫາແນວໃດກໍ່ບໍ່ພົບເຫັນ, ກໍ່ເລີຍຕູ່ຫາ ວ່າ: ພວກຊາວຕຣຽງລັກວີຂອງຕົນ ແລະສັ່ງໃຫ້ເສ ນາອາມາດທຸບຕີທໍລະມານພວກເຂົາເຈົ້າຢ່າງ ຮ້າຍແຮງທີ່ສຸດ ເຊິ່ງໄດ້ເຮັດໃຫ້ພວກເຂົາເຈົ້າທົນ ບໍ່ໄດ້, ຈຶ່ງໄດ້ພາກັນລັກໂຕນໜີແລ້ວ ກໍ່ມາຕັ້ງພູມ ລຳເນົາລຽບຕາມແຄມນ້ຳຫ້ວຍ ລະວີ ທີ່ຂຶ້ນກັບ ເມືອງ ລະມ່ວນ ແຂວງ ເຊກອງ ຈົນເທົ້າ ທຸກວັນນີ້.

ປະຈຸບັນຊົນເຜົ່າລະວີ ກໍ່ຍັງຕັ້ງພູມລຳ ເນົາ ແລະຖິ່ນຖານບ້ານຊ່ອງຢູ່ແຄມຫ້ວຍລະວີ ທີ່ຂຶ້ກັບເມືອງ ລະມ່ວນ ແຂວງ ເຊກອງ ເໝືອນເດີມ.

ພົນລະເມືອງຂອງຊົນເຜົ່າລະວີ ຢູ່ລາວມີ 538 ຄົນ, ຍິງ 252 ຄົນ, (ຜົນການສຳຫຼວດພົນ ລະເມືອງທົ່ວປະເທດ ຄັ້ງທີ II ປີ 1995).

ຊື່ເອີ້ນ:

ສຳລັບຊື່ເອີ້ນຂອງຊົນເຜົ່ານີ້ ມີສອງຄວາມ ໝາຍຄື: ຄວາມໝາຍທີ່ໜຶ່ງ ແມ່ນມາຈາກ ຊື່ຫ້ວຍ ທີ່ຊົນເຜົ່ານີ້ມາຕັ້ງຖິ່ນຖານບ້ານຊ່ອງຢູ່ ແລະຄວາມ ໝາຍທີສອງແມ່ນມາຈາກຄຳທີ່ວ່າ: " ລັກວີ " ແຕ່ຊື່ ທີ່ເຂົາເຈົ້າມັກ ແລະຊື່ທີ່ໃຊ້ໃນທາງລັດຖະ ການ ແມ່ນຊົນເຜົ່າ " ລະວີ "

ພາສາ:

ພາສາປາກເວົ້າ ຂອງຊົນເຜົ່າລະວີໄດ້ ຈັດເຂົ້າໃນໝວດພາສາ ມອນ-ຂະແມ, ຊົນເຜົ່າ ລະວີ ບໍ່ມີຕົວໜັງສືຂຽນ, ແຕ່ມີພາສາປາກເວົ້າ ເຊິ່ງ ຄ້າຍຄືພາສາຂອງຊົນເຜົ່າຮ່ຳຮັກ ແລະພາສາຂອງ ຊົນເຜົ່າຕຣຽງ.

ຮີດຄອງປະເພນີ,ຄວາມເຊື່ອຖື ລະວັດທະນະທຳ-ສັງຄົມ :

ຜ່ານຂະບວນວິວັດແຫ່ງການຄົ້ງຕົວ ແລະ ຂະຫຍາຍຕົວເປັນໄລຍະເວລາຫຼາຍສະຕະວັດ ມານີ້ ກໍ່ເຫັນວ່າຊົນເຜົ່າລະວີ ບໍ່ໄດ້ມີວັດທະ ນະທຳ ທີ່ເປັນເອກະລັກອັນສະເພາະຂອງຊົນເຜົ່າຕົນ ເອງ. ສ່ວນຫຼວງຫຼາຍອາດຈະແມ່ນເນື່ອງມາຈາກ ໄດ້ຮັບຜົນສະທ້ອນທາງດ້ານວັດທະນະທຳ ຈາກ ຊົນເຜົ່າຮ່ຳຮັກ ແລະຊົນເຜົ່າຕຽງ. ໂດຍສະເພາະ ແມ່ນເຕັກນິກໃນການປຸກສ້າງເຮືອນ, ແຕ່ບໍ່ມີສາ ລາກວານ ຄືບ້ານຊົນເຜົ່າຕຽງ, ແຕ່ພັດມີ ຫຼັກສຳ ລັບຜູກຄວາຍທີ່ຂ້າໃນເວລາເຮັດຮີດຄອງ ຫຼືເວລາ ລູກສາວຈະແຕ່ງດອງຢູ່ຕໍ່ໜ້າເຮືອນຂອງໃຜລາວ. ການພົວພັນບ່າວສາວຂອງຊົນເຜົ່ານີ້, ເວລາພົວ ພັນກັນແມ່ນໄດ້ນອນນຳກັນ, ແຕ່ບໍ່ໄດ້ຮ່ວມປະເວ ນີນຳກັນ ແລະກັນ ເພາະຜີຈະຮູ້ເຫັນ, ຖ້າຫາກວ່າ ໄດ້ລ່ວງລະເມີດ ແລະເຮັດໃຫ້ຊາວບ້ານເກີດມີອາ ການເຈັບເປັນ, ເມື່ອຊາວບ້ານຮູ້ແລ້ວພວກເຂົາ ເຈົ້າກໍ່ຈະຖືກປັບໄໝ.

ເມື່ອຄົນຢູ່ໃນເຮືອນມີການເຈັບເປັນ ກໍ່ດຳ ເນີນການປິ່ນປົວ ຕາມການແນະນຳຂອງໝໍຜີ, ໝໍມໍ ແລະໝໍຜີ ຫຼືປິ່ນປົວດ້ວຍການກິນຢາພື້ນ ເມືອງ, ແຕ່ກໍລະນີຄົນຜູ້ນັ້ນຫາກເສຍຊີວິດ, ສົບຜູ ນັ້ນເຂົາເຈົ້າເອົາຜ້າຫົ່ມ ຫໍ່ແລ້ວໃສ່ໂລງດຳເນີນ ການຄົບງັນ 1-2 ຄືນ ກໍ່ຫາມໄປຝັງຢູ່ປ່າຊ້າລວມ ຂອງບ້ານ, ບັນດາວັດຖຸສິ່ງຂອງທີ່ຈະໃຫ້ຄົນຕາຍ ກໍ່ເອົາໄປຝັງນຳຄົນຕາຍນັ້ນເລີຍ. ຊົນເຜົ່າລະວີ ບໍ່ໄດ້ເຮັດບຸນລະປົບ, ພຽງແຕ່ຮຽກຂວັນຜູ້ທີ່ລ່ວງ ລັບໄປນັ້ນໃຫ້ມາກິນມາດື່ມ ເພື່ອແນໃສ່ເຮັດໃຫ້ຜູ້ ທີ່ຍັງມີຊີວິດຢູ່ດີມີສຸກ.

ໃນເວລາຖືພາກໍ່ໄປທຳມາຫາກິນຕາມ ແບບ ປົກກະຕິ ແຕ່ໃນຂະນະເມຍໃກ້ຈະເກີດລູກ, ຜູ້ເປັນຜົວຕ້ອງໄປເຮັດຕູບໃຫ້ເມຍ ເພື່ອເກີດລູກ ຢູ່ປ່າດົງນອກບ້ານ, ໄລຍະເກີດລູກນັ້ນ ສ່ວນຫຼວງ ຫຼາຍພວກແມ່ຍິງຂອງຝ່າຍຜົວ ແລະເມຍເປັນຜູ້ ເບິ່ງແຍງກັນ. ສ່ວນຜົວຈະບໍ່ໃກ້ເລີຍເນື່ອງຈາກຄະ ລຳຜີ. ໃນປີໜຶ່ງໆພວກເຂົາເຈົ້າເຮັດຮີດ ຈ່ອງກະ ປອ ໂດຍຂ້າຄວາຍໃຫ້ຜີຫ້ວຍຮອງ, ໜອງບຶງມາ ຮັບປະທານອາຫານກ່ອນ ແລະພວກຍາດຕິພີ່ ນ້ອງ, ໝູ່ຄູ່ເພື່ອນຝູງຈຶ່ງມາຮັບປະທານຕາມຫຼັງ.

ການດຳເນີນຊີວິດ ທາງດ້ານເສດຖະກິດ, ອາຊີບຕົ້ນຕໍຂອງຊົນເຜົ່າລະວີ ແມ່ນຖາງປ່າເຮັດ ໄຮ່ປູກເຂົ້າຈ້າວ. ນອກນັ້ນຍັງປູກພືດທີ່ມີທາດ ແປ້ງ, ພືດລົ້ມລຸກ, ພືດຕະກຸນຖົ່ວເປັນສະຮອງ. ຊົນ ເຜົ່າລະວີກໍ່ມີມູນເຊື້ອໃນວິຊາຫັດຖະກຳຈັກສານ, ຕີເຫຼັກ ເພື່ອຜະລິດເຄື່ອງໃຊ້ສອຍໃນຄອບຄົວ, ເຄື່ອງມືການຜະລິດ ແລະມີມູນເຊື້ອໃນການລ່າ ເນື້ອສັດປ່າ, ເກັບເດັດຫາປາຕາມທຳມະຊາດ, ເຮັດກະດິດ, ກະຕ່ຳ ແລະລ້ຽງສັດປະເພດຕ່າງໆຄື: ຄວາຍ, ໝູ, ໄກ່ເພື່ອໄວ້ເຮັດຮີດຄອງ ແລະເປັນ ອາຫານກິນປະຈຳວັນ.

Lavi / Lavy

Historical background:

The Lavi people live in three villages in Lamam district in Sekong province.In the 1980s they migrated from the forests of the Boloven plateau to these three villages.

The background of this small group of people is very unclear, as many anthropologists cannot agree to where these people originated. Their small number may mean that they split from a larger ethnic group, but this is also not clear. Their language is also unique and differs from all of the other neighboring ethnic groups.

The total population of Lavi amounted to 538 people in the 1995 census. 252 were females.

Name and language:

Their name apparently comes from a stream where they originally settled. They call themselves this name and know of no other name for themselves.

The Lavi language is an unknown language that has been placed in the Mon - Khmer group of languages. No other neighboring groups can understand their language, which is unusual. There is no alphabet.

Society, beliefs, ceremonies and myths:

The Lavi are animists who worship the usual spirits as other Mon - Khmer groups do in Laos. The most important spirits, known as plat, are the spirits of the forest, water, and their ancestors.

They have shamans known as djamon who can heal the sick and communicate with spirits. Ceremonies performed for ancestor worship including sacrificing several buffalo at once followed by pigs and chickens. This sacrifice is accompanied by drums and dancing. There are also agricultural rituals.

Today the Lavi live in small nuclear family units and are monogamous in terms of marriage. The wedding dowry consists of one buffalo; unless the girl marries someone from a neighboring group then the dowry may be high as six buffalo. The bride will live with her husband's family after marriage.

Pregnant mothers work as usual, and when it is near time to give birth, her husband will build a small hut in the forest where she will give birth. Women from the village will assist her during labor and birth. When the infant is one year old they will sacrifice a buffalo and have a celebration.

When someone is ill, the shaman will prescribe traditional medicines and communicate with the spirits who may be causing the illness. A sacrifice may be performed in an attempt to please the spirit.

When there is death, the body is covered with cloth and placed in a coffin. There is a period of mourning for two days before burying the body outside the village. They will bury belongings of the deceased along with the body. Later they will offer sacrifices to the spirit of the deceased.

Village and house:

The Lavi's traditional village was located deep inside the forest of the Boloven plateau. The village was circular in layout and there was a large communal house. In front of the communal house was an area for performing sacrifices. This area contained posts carved out of tree trunks in which animals were tied to for stabbing.

Their houses were originally longhouses, some of which were twenty meters long. They were built on many posts and had bamboo walls and thatched roofs. There is a large porch that has a ladder leading from it. There is a hearth in the corner of the house for cooking and eating. There is no partitioning of the house into separate rooms.

Costume:

The Lavi will still wear their traditional clothing. For men this is mainly a simple loincloth and no shirt. The women traditionally wore a single piece of cloth that went from the breasts to the knees. They tie their hair in a knot behind their head.

Agriculture and livelihood:

Formerly the Lavi practiced slash-and-burn agriculture. Where they are located now they have adopted wet rice farming. They also grow corn, vegetables, spices and fruit. They raise some livestock, such as pigs and chickens, but not as much as other groups. The Lavi also fish often.

The Lavi are excellent basket-makers. They make many kinds of baskets for carrying and storing goods. Their woodcarving is also very good, as their traditional longhouses had finely carved symbols on the gables.

ฮามจำเมย

ຊົນເຜົ່າໂອຍ

ປະຫວັດຄວາມເປັນມາ:

ຕາມການສັນນິຖານ ຂອງພວກເຖົ້າແກ່ອາວຸໂສຢູ່ແຂວງອັດຕະປື ໃຫ້ຮູ້ວ່າ: ໃນຈຳນວນ 22 ໝູ່ບ້ານ ຂອງຊົນເຜົ່ໂອຍ ທີ່ຂຶ້ນກັບແຂວງ ອັດຕະປື ໃນທຸກວັນນີ້ລ້ວນແຕ່ໄດ້ມີປະຫວັດຄວາມເປັນມາອັນສະເພາະຕາມແຕ່ລະເຂດບ້ານ ເຊັ່ນ: ແຕ່ກ່ອນອາດຈະຕັ້ງພູມລຳເນົາຢູ່ໜອງແສ ແລ້ວເຄື່ອນຍ້າຍມາຢູ່ຫຼວງພະບາງ, ທົ່ງໄຫຫີນ ,ທົ່ງຫຼົ້ງ, ທົ່ງຫວາຍ, ຮົ່ງເງືອລອກຈອກເຫຼ້ຍ, ຕະມໍກອງໃບ ແຄມເຊປ່ຽນ, ບາງທ່ານກໍ່ວ່າຊົນເຜົ່າໂອຍ ໄປຢູ່ທົ່ງໄຫຫີນ ແມ່ນໃນຖານະເປັນສະເລີຍເສິກ ເຈືອງ, ບາງທ່ານກໍ່ວ່າໄປຢູ່ໃນຖານະເປັນທະຫານເຈືອງ.

ບັນຫາເປັນເອກະພາບນັ້ນ ໃນຈຳນວນຊົນເຜົ່າໂອຍ 22 ໝູ່ບ້ານນັ້ນລ້ວນແຕ່ເຄື່ອນຍ້າຍຈາກທົ່ງໄຫຫີນ, ທົ່ງຫຼົ້ງ, ທົ່ງຫວາຍ, ເປີ້ນພູ ຫຼວງ ແລະສຸດທ້າຍ ແມ່ນໄດ້ຢູ່ຕາມເກາະດອນຢູ່ກາງທົ່ງນາ.

ປະຈຸບັນຊົນເຜົ່າໂອຍ ຕັ້ງພູມລຳເນົາຢູ່ເມືອງ ໄຊເສດຖາ, ສາມັກຄີໄຊ, ສະໜາມໄຊ ແຂວງ ອັດຕະປື ແລະ ຢູ່ເມືອງ ປາກຊ່ອງ ແຂວງ ຈຳປາສັກ. ນອກຈາກຢູ່ ສ. ປ.ປ.ລາວ ແລ້ວຍັງມີຢູ່ແຂວງ ກະແຈະ, ຊຽງແຕງປະເທດ ກຳປູເຈຍ ແລະພາກອີສານຂອງປະເທດ ໄທ.

ພົນລະເມືອງ ຂອງຊົນເຜົ່າໂອຍ ມີ 14.947 ຄົນ, ຍິງ 7.682 ຄົນ, ເທົ່າກັບ 0,3 % ຂອງພົນລະເມືອງທົ່ວປະເທດ (ຜົນການສຳຫຼວດພົນລະເມືອງ ຄັ້ງທີ II ປີ 1995).

ຊື່ເອີ້ນ:

ຊົນເຜົ່ານີ້ເອີ້ນຕົນເອງວ່າ: "ໂອຍ" ຊົນເຜົ່າລາວ ເອີ້ນເຂົາເຈົ້າກໍ່ແມ່ນ "ໂອຍ ", ຊື່ທີ່ ເຂົາເຈົ້າມັກ ແລະຊື່ທີ່ໃຊ້ທາງລັດຖະການ ໃນປະຈຸບັນກໍ່ແມ່ນຊົນເຜົ່າໂອຍ.

ສຳລັບຊື່ຂອງຊົນເຜົ່ານີ້ ແຕ່ລະເຂດບ້ານລ້ວນແຕ່ໄດ້ມີຊື່ສະເພາະໄປຕາມແຕ່ລະເຂດ ຫຼື ອາດຈະແມ່ນຊື່ແຊງຂອງຊົນເຜົ່າເຊັ່ນ: ສະປວນຣ, ສອກ, ກຣ໊ຍ, ດາກກະຍະ, ຣ໊ຍາວ,ກົນລແຫຼະອຶມ ປາວ, ກອງຣາຣວຍ, ຕ່ຳມໍເລີ້ຍ, ອົນຕຼ໊, ຈໍເຈີກ ແລະແມກຼອງ, ທັງໝົດເຫຼົ່ານັ້ນ ກໍ່ລ້ວນແຕ່ໄດ້ຂະໜານນາມຕົນເອງວ່າ "ໂອຍ" ຫຼືຊົນເຜົ່າໂອຍ ແລະຄຳທີ່ວ່າໂອຍ ໄດ້ມີຫຼາຍທັດສະນະຄື: ແມ່ນຄົນ, ແມ່ນສຽງຮ້ອງຄວນຄາງ ຈາກການເຈັບເປັນ ແລະສຽງຮ້ອງຈາກຄວາມຂີ້ຄ້ານແອວຍາວ.

ພາສາ:

ຊົນເຜົ່າໂອຍບໍ່ມີຕົວໜັງສືຂຽນ, ແຕ່ມີພາສາປາກເວົ້າ ເຊິ່ງຈັດເຂົ້າໃນໝວດພາສາມອນ-ຂະແມ, ທັງແມ່ນປັດໄຈພາສາຂະເໝນບູຮານ (ບັນນາຣິກ) ແຕ່ລະເຂດບ້ານຂອງຊົນເຜົ່າໂອຍ ແມ່ນໄດ້ມີພາສາປາກເວົ້າຄືກັນ, ຄ້າຍຄືກັນ ແລະ ແຕກຕ່າງກັນຢ່າງຂາດຂັ້ນ ແຕ່ສາມາດເຂົ້າໃຈກັນໄດ້ດີ. ນອກຈາກພາສາຂອງຕົນເອງ ແລ້ວຊົນເຜົ່າໂອຍ ຍັງສາມາດເວົ້າ ພາສາຊົນເຜົ່າເຈ້ຍ, ເບຣ໊າ, ຢຣຸ, ຢະເຫີນ ແລະພາສາລາວໄດ້ດີ.

ຮີດຄອງປະເພນີ, ຄວາມເຊື່ອຖື ແລະວັດທະນະທຳ-ສັງຄົມ :

ໃນປີ 1975 ຄົນຫຼັງ ຊົນເຜົ່າໂອຍໄດ້ ເຊື່ອຖືຜີຮ້ອຍສ່ວນຮ້ອຍຄື: ຜີທີ່ເຮັດໃຫ້ຄົນມີການ ເຈັບເປັນມີບຣະຢິວ, ບຣະຕຼີຍາບ, ບຣະຣຶມໂມງ ເຮີງ, ບຣະມະນຶມ ແລະຜີທີ່ປົກປັກຮັກສາຄົນມີ ບຣະປະຕູໂຂງ, ບຣະກະຍອງ, ບຣະຄຣີ່ງ, ຜີ ເຮືອນ, ຜີນາ,ບຣະແຄ, ຜີພໍ່, ແມ່ທີ່ລ່ວງລັບໄປ. ແຕ່ມາຮອດປະຈຸບັນຊົນເຜົ່າໂອຍ ເຊື່ອຖືຜີ ແລະ ສາສະໜາພຸດ, ບາງບ້ານຂອງຊົນເຜົ່າໂອຍໄດ້ມີ ວັດຄື: ບ້ານສະປອນ.

ຊົນເຜົ່າໂອຍ ຢູ່ແຕ່ລະເຂດບ້ານເຮັດບຸນ ປະເພນີໃນແຕ່ລະປີບໍ່ຄືກັນ, ຂໍຍົກບາງເຂດບ້ານ ດັ່ງນີ້: ປົກກະຕິແລ້ວ ໃນປີໜຶ່ງໆພວກເຂົາເຈົ້າເຮັດ ບຣະຍໍ້ດຶກ, ພະໂຣງ, ບຣະກຶມມັນຣຈັກ, ມຶງຣາມ ເມືອນ, ຕຼືບັ້ງແກະ, ຕຼືບັ້ງຕິ, ບຣະງົວ-ຄວາຍ, ບຣະ ປຼືເດ້ຍ, ດຶກງູ, ບຣະປຶ້ງໂຮມ, ບຣະເບ້ງ, ບຣະຮຸ້ຍ. ໃນເວລາໄຖນາ ແລະດຳນາ ເພິ່ນເຮັດບຣະຈະ ຕວ້ງ, ບຣະເຈີບໃນເວລາເກັບກ່ຽວ. ຖ້າກ່ຽວເຂົ້ານາ ໄຮ່ໃດ ແມ່ນເຮັດບຣະນາໄຮ່ນັ້ນ (ນາໄຮ່ໜຶ່ງຕ້ອງ ຂ້າໄກ່ຢູ່ໄຮ່ນານັ້ນໜຶ່ງໂຕ,ໄຂເຫຼົ້າໄຫນ້ອຍ, ກາງ ລະ1 ກິກ, ໄຂກິນຢູ່ເຮືອນ 2 ກິກ).

ຊົນເຜົ່າໂອຍ ໄດ້ມີສິລະປະວັນນະຄະດີ ບົດຮ້ອງທຳນອງເສບ ທີ່ໄດ້ຂັບລຳຕາມແຕ່ລະໆ ດູການ ເຊັ່ນ: ຂັບລຳນາງອຶມນາງ, ເຢງງາຍ, ໜຸ່ງວ ງາຍ, ນາງ ເນຼາະ, ຈາເລີແລ, ເອີ້ຍໄນຼນຼາຍ ແລະ ເປຼັດປຸ່. ມີເຄື່ອງດົນຕີພື້ນເມືອງຫຼາຍຊະນິດຄື: ກາ ນີ, ດິວຣ, ບຸກ, ກຶນນິ, ໂຮດເຮດ, ເກົ້າະອົ້ງເກົ້າະ ມີນິທານພື້ນເມືອງຫຼາຍ ເລື່ອງຄື: ຢະຕອງຊາຍ, ຕ່າວແກ, ແກ໋ງເຫັດປອກ, ຕຼືເປ້ຕຼືປ້ອ, ທ້າວແຕ່ະ-ຕໍ້, ທ້າວຣຶມບຸ, ທ້າວໂບ, ຜົວເມຍເສືອ ແລະອື່ນໆ.

ຊົນເຜົ່າໂອຍ ມີຄວາມນິຍົມຢູ່ເຮືອນ ຮ້ານປູ ແລະແອ້ມດ້ວຍແປ້ນ, ມຸ້ງດ້ວຍຫຍ້າຄາ ເປັນເຮືອນລວດດຽວ, ລະຫວ່າງລວງຍາວ ແລະ ລວງກວ້າງຫຼຸດລົ່ນກັນຢ່າງຂາດຕົ້ນ, ລວງຍາວ ອອກຫາທິດຕາເວັນຕົກ, ຫົວນອນປິ່ນມາຫາງທິດ ໃຕ້, ຂະໜາດເຮືອນສູງສຸດ 5 ຫ້ອງ, ຕ່ຳສຸດ 2 ຫ້ອງ, ເອົາຜີເຮືອນ ແລະຜີຄ້ອງລາໄວ້ໃນຫ້ອງ ແຕ່ລະຫຼັງເຮືອນຂອງເຜົ່າໂອຍ ລ້ວນແຕ່ມີຮົ້ວ ອ້ອມ ມີປະຕູເຂົ້າ 2 ບ່ອນ, ກ່ອນຈະເຂົ້າເດີ່ນບ້ານ ເຮົາຕ້ອງເບິ່ງປະຕູໂຂງມີໄມ້ດິບໜີ້ນີ ຖ້າຫາ ບໍ່ມີຟົດໄມ້ດິບເຂົ້າບ້ານໄດ້ ແລະຖ້າຢາກເຂົ້າບ້ານ ຂອງຊົນເຜົ່າໂອຍ ກໍ່ຕ້ອງເບິ່ງປະຕູໂຂງບ້ານ, ຖ້າ ມີຟົດໄມ້ດິບສະແດງວ່າເຂົ້າບ້ານບໍ່ໄດ້.

ປີ 1975 ຄົນຫຼັງ ຜູ້ຊາຍຂອງຊົນເຜົ່າໂອຍ ແມ່ນນຸ່ງກະຕ່ຽວ, ຖືກຸບຈອມແໜມປົກແຄບທີ່ສຸດ, ໃນເວລາເປັນບ່າວ ແລະແຕ່ງດອງແລ້ວຖືກຸບປົກ ກວ້າງ. ເວລາເຮັດພະເບ້ງ, ພະກະຍອງນຸ່ງກະຕ່ຽວ ໜາກປັດ, ແພແດງຄຸ່ມຫົວ, ແພແດງ ແລະແພ ຂາວໄຂ່ວກັນແຕ່ບ່າ ລົ່ງຫາແອວ, ເກົ້າຜົມ, ບ່ອງຫູ ໃສ່ຕ້າງທີ່ເຮັດດ້ວຍກົ່ວ, ແມ່ຍິງແມ່ນນຸ່ງສິ້ນລ່ວມ ຮອດປາຍຂາ (ຍິງສາວເອົາຜົວໃໝ່), ຖ້າຜູ້ເຖົ້າ ລ່ວມຮອດກົກຂາ, ທີ່ມເສື້ອແຂກລາຍເຮ້ຍ, ເກົ້າ ຜົມ, ບ່ອງຫູໃສ່ຕ້າງ, ໃສ່ຄຣິແອຕິ້ມເບຣິດ (ຊາບ

ຕົ້ມເບຣິດ).

ຊົນເຜົ່າໂອຍ ມີການຊົນສົ່ງດ້ວຍຕົນເອງ ຄືຜູ້ຊາຍແມ່ນຫາບ, ແບກ, ພາຍ, ຫາມສ່ວນແມ່ຍິງແມ່ນພາຍ, ຫາບ ແລະຕັ້ງໃສ່ຫົວ.


ການແຕ່ງດອງ ຂອງຊົນເຜົ່າໂອຍ ມີຂຶ້ນ 2 ກໍລະນີຄືພໍ່ແມ່ຊອກຫາໃຫ້ ແລະຄູ່ບ່າວສາວມັກກັນເຊິ່ງຕ້ອງຜ່ານຂັ້ນຕອນຕ່າງໆ ເຊັ່ນ: ດ້ອກອາ ຮວງດ້ອກງາຍ, ເປັນແຟ້ນ, ແຈ້ງໃຫ້ຮູ້, ສູ່ຂໍ, ກິນດອງ ແລະຕຼືນນຸງດ.

ຕາມປົກກະຕິແລ້ວ ຕ້ອງມາຢູ່ເຮືອນຜູ້ເປັນລູກກົກ ແລະຜູ້ເປັນເຈົ້າພາບໃນການສູ່ຂໍນັ້ນ ແມ່ນຂຶ້ນຝ່າຍໃດມັກຮັກຫຼາຍກວ່າ. ການໃສ່ຊື່ລູກ ແມ່ນບໍ່ຈຳກັດ, ບາງເທື່ອສືບທາງແມ່ຫຼືພໍ່ກໍ່ໄດ້. ຊົນເຜົ່າໂອຍ ປະຕິບັດຕາມ ລະບອບຜົວໜຶ່ງເມຍດຽວ, ແຕ່ກໍລະນີເອົາຫຼາຍເມຍ, ຜົວຕ້ອງເສຍໃຫ້ເມຍຫຼວງຄວາຍ 6 ໂຕ, ເມຍນ້ອຍເສຍໃຫ້ເມຍຫຼວງຄວາຍ 3 ໂຕ, ບໍ່ມີຄ່າດອງ, ຖ້າປະຮ້າງກັນຕ້ອງເສຍຄວາຍ 6ໂຕ.

ແຕ່ລະເຂດຂອງຊົນເຜົ່າໂອຍ ສົ່ງສະການບໍ່ຄືກັນ, ຢູ່ບາງເຂດພາຍຫຼັງຝັງແລ້ວເຈັດປີແມ່ນເຮັດພະຈິກກະດູກ, ເຮັດແຈກ, ເຮັດທາມຂ້າ ຄວາຍ ຫຼືງົວຄົບງັນ 7 ວັນ/ຄືນ, ແຕ່ຢູ່ບາງເຂດແມ່ນບໍ່ໄດ້ຝັງພຽງແຕ່ລຸມກ້ອນຫີນພຽງຫົວເຂົ່າ ແລ້ວກໍ່ວາງສົບຄົນຕາຍໃສ່ນັ້ນເອົາຫີນເຕັງ. ຈາກນັ້ນຮອດ 4 ເດືອນ ເພິ່ນເຮັດພະຈິກກະດູກເອົາກະດູກເຂົ້າໄຫແລ້ວໄປຝັງຢູ່ປ່າຊ້າຫຼວງ, ແຕ່ຢູ່ບາງເຂດກໍ່ຝັງ ແລະຮອດເດືອນ 4 ຂອງປີຕໍ່ມາແມ່ນເຮັດພະຈິກກະດູກ.

ຊົນເຜົ່າໂອຍ ເກີດລູກຢູ່ແຈເຮືອນຢູ່ລະຫວ່າງກາງເຕົາໄຟ ແລະລົກໄກ່, ການຢູ່ກຳໃຊ້ເວລາ 3 ເດືອນ, ຢູ່ກຳດ້ວຍໄຟ, ດື່ມ ແລະອາບນ້ຳຮ້ອນ, ກໍລະນີຜູ້ເກີດລູກເສຍຊີວິດໃນຂອບເຂດ 90 ວັນ ຫຼື 3 ເດືອນຕ້ອງຕັດ ຫຼືປ້ຳເຮືອນຖິ້ມ ແລະປຸກຕູບໄປຢູ່ບ່ອນໃໝ່ ທັ້ງບໍ່ເອົາໄມ້ເຮືອນດັ່ງກ່າວອີກ.

ການດຳເນີນຊີວິດທາງດ້ານເສດຖະກິດ, ຊົນເຜົ່າໂອຍເຮັດນາປູກເຂົ້າຈ້າວ, ໃນປີ 1960 ຄົນຫຼັງຊົນເຜົ່າໂອຍ ເຮັດນາຫວ່ານ, ໄຮ່ນາຂອງເຜົ່າໂອຍ ກວ້າງແຕ່ 2ໄລ່ຂຶ້ນໄປ, ຄັນນາສູງພຽງແອວ, ນາແຕ່ລະໄຮ່ລ້ອມແຕ່ມີຫຼຸມຢູ່ກາງນາ ຫຼືແຄມຄັນນາມີບ່ອນລະບາຍນ້ຳອອກ. ນອກນີ້ຍັງຊຳນານເລື່ອງຫັດຖະກຳຈັກສານ, ປັ້ນໝໍ້ຫຸ່ງໄຫ, ລ້ຽງສັດ ປະເພດຕ່າງໆເຊັ່ນ: ງົວ, ຄວາຍ ເພື່ອໃຊ້ເປັນແຮງງານລາກແກ່, ໝູ ແລະໄກ່ໃຊ້ໃນພິທີກຳບະຜີຕ່າງໆ.



Oy

Historical background:

The Oy people have lived in Attapeu province for a long time, but there are no written records to confirm exactly how long. Oy oral history says that the Oy used to live on the right bank of the Sekong River, but population pressures from other groups caused them to move to the slopes of the Boloven plateau, where most people now live. Most Oy now live in Sanamsai district, west of the provincial city of Attapeu. There is also the The people, which are considered a subgroup of the Oy. The 1995 census put their population at 14,947 people.

Name and Language:

The language is of the Bahnaric branch of the Mon-Khmer language group. There are some regional dialects among the Oy. There is no written alphabet for their language.

Beliefs, society, ceremonies and myths:

Like other ethnic groups, the Oy believe in various spirits, such as spirits of the household and spirits of the village, which guard the village. There are also spirits of the forest and of the rivers, which can bring either fortune or disaster. The spirit of rice is very important for a good harvest and this is worshipped and celebrated by honoring the harvest season in December by much eating and drinking.

The Oy will marry usually on two different occasions. The first is when the parents will choose a mate for their child. The second occasion is when a young couple meets freely and decides to get married. The Oy people generally follow the policy of one wife to one husband, unlike some of the other neighboring tribes that practice polygamy. However, if a man does take more than one wife, he must pay the first wife the penalty of six buffaloes. If there is already a second wife, then the husband must pay her three buffalos when taking a third wife. Divorce is allowed. Children can take the name of either the mother or the father's family.

Oy women give birth in a corner near the fireplace of the house. For three months the mother will sleep by the fireplace, drink hot water and bathe in hot water. In case the mother dies within 90 days after giving birth, the house shall be destroyed and a new house built elsewhere. It is important that no wood or other material from the old house is used in the construction of the new house.

Oy funeral ceremonies vary depending on the region. In some regions after a body has been buried for seven years, they dig up the bones in a ceremony called Pah Chokkaduk. A feast and alms giving are held for seven days. In other regions, Oy do not bury the dead, they simply make a small platform of stones, place the body on top of this, and then cover it with more stones. After four months, a ceremony is held and the bones are removed and put in a clay jar and then buried in the village cemetery. In addition, in some regions,

a feast is held after the bones of the dead are dug during the April of each year.

Village and House:

Villages generally consist of 50 to nearly 200 houses, lying in lowland near rivers and streams. Oy villages do not have a communal house so the houses are located randomly in the village.

Oy people prefer houses on stilts, with wooden plank floors and woven bamboo or wooden walls, and a thatched roof. Typically, the length and width are different, with the length of the house facing the west, and bedroom faces toward the south. The maximum size of a house is five rooms, the minimum being 2 rooms. There is also a small spirit room for spirits to live in. Under the house, they will store firewood and agricultural tools.

Each Oy house is surrounded by a fence, which has two gates. Before entering a house, one must observe whether there is a fresh tree branch by the gate. If there is no tree branch, one must then check to see if there is a fresh tree branch by the village gate. If a fresh tree branch is found there, anyone who is not a member of the village is forbidden to enter the village.

Costume:

Oy women do not weave, but they have a very distinct traditional costume. They wear a short-sleeved cotton vest with a V-shaped collar. This vest has a vertical black stripe in the center with red stripes on the side. With this is a cotton sarong, which has horizontal stripes, one stripe black and other thinner stripes of red, yellow, and blue. In addition, there is a very distinctive headdress. This has a flat, wide upper base with a cone below which is placed on the head. Many cotton threads with red, black, and white colors hang down from around the upper base, covering the women's forehead and hair.

Oy men wear a similar costume; however, their hat consists of a high conical hat that has a tuft of red thread on the top, looking much like a party hat.

Today it is difficult to find these costumes, as Oy people now wear typical commercially produced clothing such as sarongs, long pants, and t-shirts.

Agriculture and livelihood

The Oy do not practice slash and burn agriculture, as they have always had an abundance of water for wet-paddy rice farming. They will also raise fish in their rice paddies. Maize, vegetables, and fruits are also cultivated. The Oy will raise ducks, chickens, pigs and buffaloes. They also raise dogs, which they eat. Cattle are not common in their villages.

The Oy are skilled in handicraft, such as making baskets, mats, and simple utensils from wood, bamboo, and rattan. They also have skill in pottery and some villages are known for their skill in forging simple tools from iron.

ຊົນເຜົ່າ ເອີດູ

ປະຫວັດຄວາມເປັນມາ

ສຳລັບປະຫວັດສາດຄວາມເປັນມາ ກໍ່ຄືກິກເຄົ້າເຫງົ້າກໍ ຂອງຊົນເຜົ່າເອີດູ ນີ້ບໍ່ມີເອກະສານຂໍ້ມູນ ແລະຫຼັກຖານທີ່ກ່າວເຖິງຢ່າງຈະແຈ້ງຊັດເຈນ, ແຕ່ຊົນເຜົ່າເອີດູ ທີ່ດຳລົງຊີວິດຢູ່ ສ.ປ.ປ.ລາວ ໃນປະຈຸບັນນີ້ໄດ້ເຄື່ອນຍ້າຍມາຈາກ ເມືອງ ເຕີງ ເຢືອງ ແຂວງ ເຫ້ງອານ ປະເທດ ຫວຽດນາມ. ຜູ້ທີ່ນຳພາເຂົາເຈົ້າໃນການເຄື່ອນຍ້າຍ ແລະອົບພະຍົບ ມີຊື່ວ່າ: ລີມຸກ ແລະອົ້ງຕຸນ. ສ່ວນສາເຫດຂອງການຍົກຍ້າຍນັ້ນກໍ່ຍ້ອນວ່າມີການເກີດພະຍາດລະບາດຢູ່ໃນບໍລິເວນດັ່ງກ່າວ ເຊິ່ງໄດ້ເຮັດໃຫ້ຈຳນວນປະຊາກອນຂອງຊົນເຜົ່ານີ້ເຈັບເປັນ ແລະເສຍຊີວິດຢ່າງຫຼວງຫຼາຍ. ດັ່ງນັ້ນ ລີມຸກ ແລະອົ້ງຕຸນ ຈຶ່ງໄດ້ຕັດສິນໃຈນຳພາຕະກຸນຈຸ້ມເຈື້ອເຊື້ອສາຍ ອົບພະຍົບອອກຈາກເຂດນັ້ນ ມາຕັ້ງບ້ານເຮືອນຢູ່ເຂດ ຈ່າໝື່ນ ທີ່ຂຶ້ນກັບເມືອງໜອງແຮດ ແຂວງ ຊຽງຂວາງ ສ.ປ.ປ.ລາວ ໃນຕົ້ນສະຕະວັດທີ່ XVIIII. ຕໍ່ມາພາຍຫຼັງປະເທດລາວ ໄດ້ຮັບການປົດປ່ອຍໃນປີ 1975, ໂດຍອີງໃສ່ແນວທາງນະໂຍບາຍອັນຖືກຕ້ອງສ່ອງໃສຂອງພັກ - ລັດ ທີ່ມີຕໍ່ປະຊາຊົນລາວບັນດາເຜົ່າ ແລະເພື່ອສະດວກໃນການດຳລົງຊີວິດກໍ່ຄືການທຳມາຫາກິນ, ດັ່ງນັ້ນຊົນເຜົ່າເອີດູ ຈຶ່ງໄດ້ມີການຍົກຍ້າຍມາຕັ້ງຖິ່ນຖານບ້ານຊ່ອງຢູ່ບ້ານຄາບ ແລະບ້ານແທ່ນພູນທີ່ຂຶ້ນກັບເມືອງ ຄູນ ແຂວງ ຊຽງຂວາງ ຈົນຮອດທຸກວັນນີ້.

ປະຈຸບັນເຂົາເຈົ້າກໍ່ຍັງອາໃສ ແລະຕັ້ງຖິ່ນຖານບ້ານຊ່ອງຢູ່ບ້ານຄາບ ແລະບ້ານແທ່ນພູນ ເມືອງ ຄູນ ແຂວງ ຊຽງຂວາງ ເໝືອນເດີມ. ນອກຈາກນີ້ແລ້ວຊົນເຜົ່າເອີດູ ຍັງມີຢູ່ເມືອງ ເຕີງເຢືອງ ແຂວງ ເຫ້ງອານ ປະເທດ ຫວຽດນາມ. ຈຳນວນພົນລະເມືອງ ຂອງຊົນເຜົ່າເອີດູ ໃນ ສ. ປ.ປ.ລາວ ມີ 255 ຄົນ, ຍິງ 107 ຄົນ (ຕົວເລກຈາກນາຍບ້ານ ບ້ານຄາບ ໃນເດືອນ 11 ປີ 2001).

ຊື່ເອີ້ນ

ຊື່ທີ່ຊົນເຜົ່ານີ້ເອີ້ນຕົນເອງແມ່ນ "ເອີດູ" ຊົນເຜົ່າອື່ນເອີ້ນເຂົາເຈົ້າວ່າ " ໄທຣາດ " ແຕ່ຊົນເຜົ່ານີ້ເອງເຂົາເຈົ້າບໍ່ມັກ. ສະນັ້ນຊື່ທີ່ເຂົາເຈົ້າມັກທັງແມ່ນຊື່ທີ່ເຂົາເຈົ້າເອີ້ນຕົນເອງ ແລະກໍ່ຊື່ໃຊ້ໃນທາງການ ແມ່ນ ຊົນເຜົ່າເອີດູ.

ພາສາ

ຊົນເຜົ່າເອີດູ ມີພາສາປາກເວົ້າ ທີ່ເປັນເອກະລັກຂອງຕົນເອງ, ເຂົາເຈົ້າບໍ່ມີຕົວໜັງສືຂຽນ. ພາສາຂອງຊົນເຜົ່ານີ້ຈັດຢູ່ໃນໝວດພາສາມອນ - ຂະແມ. ຍ້ອນການດຳລົງຊີວິດ ແລະການຕິດຕໍ່ພົວພັນໄປມາຫາສູ່ກັນກັບຊົນເຜົ່າຕ່າງໆທີ່ຢູ່ໃກ້ຄຽງ ໂດຍສະເພາະແມ່ນຊົນເຜົ່າລາວ (ພວນ) ແລະຊົນເຜົ່າກຶມມຸ ຈຶ່ງເຮັດໃຫ້ພາສາຂອງຊົນເຜົ່າເອີດູ ບໍ່ຖືກນຳໃຊ້ຫຼາຍໃນຊີວິດປະຈຳວັນຂອງເຂົາເຈົ້າ, ກົງກັນຂ້າມເຂົາເຈົ້າພັດນຳໃຊ້ ແລະເວົ້າພາສາລາວ ກໍ່ຄືພາສາກຶມມຸແທນ. ສະນັ້ນຈຶ່ງເຮັດໃຫ້ຄົນລຸ້ນໜຸ່ມຂອງຊົນເຜົ່ານີ້ໃນປະຈຸບັນ ບໍ່ສາມາດປາກເວົ້າພາສາຂອງຕົນເອງໄດ້ ນອກຈາກຄົນລຸ້ນເຖົ້າແກ່ຈຳນວນໜຶ່ງເທົ່ານັ້ນ ທີ່ຍັງສາມາດປາກເວົ້າພາສາເອີດູໄດ້ຢ່າງຄ່ອງແຄ້ວ.

ຮີດຄອງປະເພນີ, ຄວາມເຊື່ອຖື, ວັດທະນະທຳ ແລະສັງຄົມ

ເຖິງແມ່ນວ່າຊົນເຜົ່າເອີດູ ຈະໄດ້ດຳລົງຊີ
ວິດ, ທຳມາຫາກິນ ແລະຕິດຕໍ່ພົວພັນຮ່ວມກັນກັບ
ບັນດາຊົນເຜົ່າຕ່າງໆ ໃນ ສ.ປ.ປ.ລາວ ເວົ້າລວມ,
ເວົ້າສະເພາະແມ່ນຊົນເຜົ່າລາວ (ພວນ) ແລະຊົນ
ເຜົ່າກືມມຸ ມາເປັນເວລາທີ່ເທິງນານ, ມີການໄດ້ຮັບ
ອິດທິພົນ, ມີການຢືມ ແລະການປະສົມປະສານ
ວັດທະນະທຳຂອງກັນ ແລະກັນແລ້ວກໍ່ຕາມ, ແຕ່
ເຂົາເຈົ້າກໍ່ຍັງສາມາດຮັກສາຮີດຄອງປະເພນີ,
ຄວາມເຊື່ອຖື ແລະວັດທະນະທຳ ທີ່ເປັນເອກະລັກ
ຂອງຕົນເອງໄວ້ໄດ້ຈຳນວນໜຶ່ງ ເພື່ອໃຫ້ລູກຫຼານ
ໄດ້ຮັບຮູ້ ແລະສືບທອດຈາກລຸ້ນນີ້ໄປສູ່ລຸ້ນໃໝ່. ຊົນ
ເຜົ່າເອີດູ ມີຄວາມເຊື່ອ ແລະນັບຖືຜີເຊິ່ງໄດ້ແກ່: ຜີພໍ່
ແມ່, ຜີບັນພະບຸລຸດ, ຜີບ້ານ ແລະຜີອື່ນໆ.

ຊົນເຜົ່ານີ້ ເຂົາເຈົ້າມີການສືບເຊື້ອສາຍ
ຕະກຸນທາງພໍ່ເປັນສຳຄັນຄື ຜູ້ຊາຍຕ້ອງເອົາເມຍ
ພ້ອມດ້ວຍລູກໆມາຢູ່ເຮືອນນຳພໍ່ແມ່ຂອງຕົນ ເພື່ອ
ເຮັດໜ້າທີ່ໃນການຮັບຜິດຊອບເບິ່ງແຍງລ້ຽງດູ
ແລະສືບເຊື້ອສາຍຕະກຸນແທນພໍ່, ແຕ່ກ່ອນຈະພາ
ເມຍ ແລະລູກໆມາຢູ່ນຳພໍ່ແມ່ ແລະເຮັດໜ້າທີ່ດັ່ງ
ທີ່ໄດ້ເວົ້າມານັ້ນ ຜູ້ຊາຍຫຼັງຈາກການແຕ່ງດອງ
ແລ້ວ ຈະຕ້ອງໄດ້ໄປຢູ່ເຮືອນນຳພໍ່ແມ່ຂອງແມ່ຍິງ
ໃນໄລຍະໜຶ່ງກ່ອນຈຶ່ງຈະມີການແຕ່ງດອງເປັນຄັ້ງ
ທີສອງແລ້ວ ຈະອອກຈາກເຮືອນພໍ່ແມ່ຂອງຝ່າຍ
ຍິງໄປໄດ້.

ໂຄງສ້າງດ້ານສັງຄົມ ຂອງຊົນເຜົ່າເອີດູ ມີ
ການແບ່ງສາຍຕະກຸນ ຫຼືສີງຊາວຂອງຕົນເອງເພື່ອ
ສະດວກໃນການເບິ່ງແຍງຊ່ວຍເຫຼືອຊຶ່ງກັນ ແລະ
ກັນໃນກິດຈະກຳຕ່າງໆ ບໍ່ວ່າຈະເປັນກິດຈະກຳ
ທາງການຜະລິດ ກໍ່ຄືກິດຈະກຳທາງຄວາມເຊື່ອຖື
ແລະການເຮັດພິທີຕ່າງໆ, ເຮັດໃຫ້ສັງຄົມຂອງເຂົາ
ເຈົ້າມີຄວາມອົບອຸ່ນ, ຮັກແພງ ແລະສາມັກຄີກັນດີ.
ລັກສະນະຄອບຄົວ ຂອງຊົນເຜົ່ານີ້ ເປັນລະບົບ
ຄອບຄົວດຽວ, ມີການປະຕິບັດຮີດຄອງຜົວໜຶ່ງ
ເມຍດຽວ. ຕາມຮີດຄອງປະເພນີ ຊົນເຜົ່າເອີດູ ຈະ
ບໍ່ມີນາມສະກຸນ, ແຕ່ປະຈຸບັນມີການປະສົມປະ
ສານວັດທະນະທຳຂອງກັນ ແລະກັນ ຈຶ່ງເຮັດໃຫ້
ເຂົາເຈົ້າຫັນມາໃຊ້ນາມສະກຸນ ແບບຊົນເຜົ່າລາວ.

ຊົນເຜົ່າເອີດູ ເຂົາເຈົ້າມັກຕັ້ງບ້ານຢູ່ບໍລິ
ເວນ ທີ່ຮາບພຽງ, ຕາມຮ່ອມຫ້ວຍພູເຂົາ ແລະໃກ້
ກັບແມ່ນ້ຳລຳເຊ ເພື່ອສະດວກໃນການທຳມາຫາ
ກິນ. ລັກສະນະເຮືອນຂອງເຂົາເຈົ້າຈະເປັນແບບ
ເຮືອນຮ້ານ ໂດຍຈະແບ່ງເປັນສອງສ່ວນຄື ສ່ວນ
ໜຶ່ງໃຊ້ສຳລັບຮັບແຂກ ແລະເຮັດເປັນຫ້ອງນອນ
ຕາມຈຳນວນຂອງສະມາຊິກໃນຄົວເຮືອນ ແລະ
ສ່ວນໜຶ່ງແມ່ນໃຊ້ສຳລັບແຕ່ງຢູ່ຄົວກິນ ຫຼືເວົ້າຢ່າງ
ໜຶ່ງກໍ່ຄືເຮືອນຄົວນັ້ນເອງ. ໃນຫ້ອງນອນຂອງພໍ່ແມ່
ຜູ້ເປັນເຈົ້າຂອງເຮືອນ ຈະມີຮ້ານບູຊາຜີບັນພະບຸ
ລຸດທີ່ໄດ້ລ່ວງລັບໄປແລ້ວ, ສະນັ້ນເພື່ອເປັນການ
ສະແດງຄວາມເຄົາລົບນັບຖືສິ່ງດັ່ງກ່າວ ໃນເຮືອນ
ຂອງຊົນເຜົ່າເອີດູ ຈະມີການຂໍ້ຫ້າມ ແລະການຄະ
ລຳຄື ບໍ່ໃຫ້ເຂົ້າລ່ວງຫ້ອງນອນ, ບໍ່ໃຫ້ຖອກນ້ຳໃສ່
ໃຈກາງເຮືອນ ແລະເສົາເຮືອນໃນຫ້ອງນອນຂອງ
ພໍ່ແມ່ ເຊິ່ງມີຮ້ານບູຊາຜີສະຖິດຢູ່.

ຮີດຄອງປະເພນີໃນການເກີດລູກນັ້ນ,
ເຂົາເຈົ້າໃຫ້ແມ່ຍິງເກີດລູກຢູ່ໃນເຮືອນ ບໍລິເວນຕົນ
ຫ້ອງນອນ (ສ້ວມ) ຂອງຄູ່ຜົວເມຍນັ້ນ ຫຼືບໍລິເວນ

ແຈເຕົາໄຟ. ໃນເວລາເກີດລູກຈະມີຜູ້ເປັນຜົວ, ແມ່ຂອງຕົນເອງ, ແມ່ຂອງຜົວ ແລະຜູ້ທີ່ມີປະສົບການໃນດ້ານນີ້ຄອຍໃຫ້ການເບິ່ງແຍງດູແລ ແລະຊ່ວຍເຫຼືອ.

ສຳລັບຮີດຄອງປະເພນີ ກ່ຽວກັບການຕາຍນັ້ນ, ເຂົາເຈົ້າກໍ່ຈະປະຕິບັດໄປຕາມ ແຕ່ລະຂັ້ນຕອນຂອງພິທີກຳ ເຊິ່ງອາດຈະມີຜູ້ໜຶ່ງ ຫຼືສອງຄົນເປັນຜູ້ນຳພາ ເຮັດຕາມສະຖານະພາບ ທາງເສດຖະກິດຂອງຄອບຄົວຜູ້ທີ່ເສຍຊີວິດ ຈາກນັ້ນກໍ່ຈະຈັດພິທີສົ່ງສະການດ້ວຍການຝັງສົບ.

ຍ້ອນຊົນເຜົ່າເອີດູ ມີຄວາມເຊື່ອວ່າຄົນຜູ້ໜຶ່ງໆຈະມີຂວັນ ຫຼືວິນຍານ ເຊິ່ງເມື່ອຕາຍໄປແລ້ວ ຂວັນ ຫຼືວິນຍານດັ່ງກ່າວຈະມາສະຖິດຢູ່ເຮືອນ ແລະຄອຍໃຫ້ຄວາມເບິ່ງແຍງດູແລຊີວິດຂອງຜູ້ຄົນ, ສັດລ້ຽງ, ເຄື່ອງປູກຂອງຝັງ ແລະກິດຈະກຳການເຄື່ອນໄຫວຕ່າງໆ ໃນການດຳເນີນຊີວິດປະຈຳວັນຂອງຄອບຄົວ. ດັ່ງນັ້ນໃນປີໜຶ່ງໆເຂົາເຈົ້າຈະມີພິທີຮຽກຂວັນ ເຊິ່ງຈະຈັດຂຶ້ນໃນເດືອນສາມລາວ, ຄຽງຄູ່ກັນນີ້ ກໍ່ຍັງມີພິທີສະເຫຼີມສະຫຼອງປີໃໝ່ ໃນເດືອນ 11 ຂອງທຸກໆປີ.

ດ້ານສິລະປະວັນນະຄະດີນັ້ນ, ຍ້ອນເຂົາເຈົ້າດຳລົງຊີວິດຢູ່ຮ່ວມກັນກັບຊົນເຜົ່າລາວ ແລະຊົນເຜົ່າກຶມມຸ ຈຶ່ງໄດ້ຮັບອິດທິພົນ ແລະການປະສົມປະສານສິລະປະຂອງຫຼາຍຊົນເຜົ່າເຂົ້າມາໃນຊີວິດປະຈຳວັນ, ເຮັດໃຫ້ເອກະລັກໃນດ້ານນີ້ ຂອງເຂົາເຈົ້າບໍ່ປະກົດໃຫ້ເຫັນຢ່າງຊັດເຈນ. ໝາຍຄວາມວ່າເອກະລັກ ໃນດ້ານສິລະປະວັນນະຄະດີ ເຊັ່ນ: ການຂັບລຳ, ເນື້ອຮ້ອງທຳນອງເສບ, ເຄື່ອງນຸ່ງຫົ່ມ ກໍ່ຄືການປະດັບເອ້ຢ້ອງຕ່າງໆ ບໍ່ໄດ້ຖືກມາປະດິດຄິດໃຊ້ ແລະສິ່ງເສີມໃນຊີວິດປະຈຳວັນຂອງເຂົາເຈົ້າ ຕະຫຼອດຮອດພາສາຂອງເຂົາເຈົ້າເອງ ກໍ່ມີພຽງແຕ່ຄົນເຖົ້າແກ່ຈຳນວນໜຶ່ງເທົ່ານັ້ນ ທີ່ຍັງສາມາດປາກເວົ້າໄດ້ດັ່ງທີ່ໄດ້ກ່າວມາແລ້ວ.

ການດຳເນີນວິຖີຊີວິດ ທາງດ້ານເສດຖະກິດ

ອາຊີບຕົ້ນຕໍ ຂອງຊົນເຜົ່າເອີດູ ທີ່ດຳລົງຊີວິດ ແລະອາໃສຢູ່ໃນ ສ.ປ.ປ.ລາວ ກໍ່ບໍ່ແຕກຕ່າງກັບຊົນເຜົ່າອື່ນໆ ຄືແມ່ນອາຊີບທາງດ້ານກະສິກຳ. ເຂົາເຈົ້າເຮັດນາປູກເຂົ້າ, ນອກຈາກນີ້ກໍ່ຍັງເຮັດໄຮ່, ເຮັດສວນແຄມນ້ຳ ປູກພືດສຳຮອງຕ່າງໆ ເຊັ່ນ: ສາລີ, ມັນຕົ້ນ, ມັນດ້ຳ, ເຜືອກ, ໝາກຖົ່ວ, ໝາກເຜັດ, ຜັກກາດ, ຜັກຫຽມ ແລະອື່ນໆ. ເຖິງຢ່າງໃດກໍ່ຕາມ ຊີວິດຂອງເຂົາເຈົ້າ ຍັງຕິດພັນຢູ່ກັບທຳມະຊາດເປັນສ່ວນຫຼາຍ, ສະນັ້ນຜົນຜະລິດໃນແຕ່ລະປີຈຶ່ງຂຶ້ນໆລົງການຜະລິດສ່ວນຫຼາຍ ກໍ່ເພື່ອໄວ້ບໍລິໂພກໃນຄົວເຮືອນ, ສ່ວນທີ່ເຫຼືອກໍ່ຈະແບ່ງປັນໃຫ້ຍາດຕິພີ່ນ້ອງຜູ້ທີ່ບໍ່ພຽງພໍ ຫຼືກໍ່ຈະໃຫ້ຢືມ ບໍ່ຄິດໄລ່ດອກເບ້ຍ ຫຼືກໍ່ຈະນຳເອົາໄປຂາຍ ແລະແລກປ່ຽນສິ່ງຕ່າງໆ ທີ່ບໍ່ສາມາດຫາໄດ້ໃນບໍລິເວນບ້ານ. ການລ້ຽງສັດສ່ວນຫຼາຍເຂົາເຈົ້າຈະລ້ຽງຄວາຍໄວ້ເພື່ອໃຊ້ເປັນແຮງງານລາກແກ່, ສ່ວນສັດປະເພດອື່ນໆ ເຊັ່ນ: ງົວ, ໝູ, ໝາ, ເປັດ ແລະໄກ່ ເຂົາເຈົ້າຈະລ້ຽງໄວ້ເພື່ອປະກອບພິທີກຳທາງຮີດຄອງປະເພນີ, ຄວາມເຊື່ອຖື ແລະເຮັດຂວັນ ໂດຍສະເພາະແມ່ນໄກ່ມີຄວາມສຳຄັນຫຼາຍ ໃນການປະກອບພິທີກຳຕ່າງໆ.

ຊົນເຜົ່າຮ່າຮັກ

ປະຫວັດຄວາມເປັນມາ:

ຊົນເຜົ່າຮ່າຮັກ ແມ່ນຊົນເຜົ່າໜຶ່ງ ໃນບັນດາຊົນເຜົ່າທີ່ເຄື່ອນຍ້າຍ ແລະຕັ້ງຫຼັກປັກຖານຢູ່ ເຂດເມືອງ ລະມາມ ແຂວງ ເຊກອງ ແລະເມືອງ ຊານໄຊ ແຂວງ ອັດຕະປື ມາໄດ້ຫຼາຍຮ້ອຍປີແລ້ວ.

ພາຍຫຼັງການປະຕິວັດຊາດ-ປະຊາທິ ປະໄຕມີຊົນເຜົ່າຮາຮັກ ຈຳນວນໜຶ່ງເຄື່ອນຍ້າຍ ດ້ວຍການຫັນປ່ຽນອາຊີບເດີມ ຄືຖາງປ່າເຮັດໄຮ່ ປູກເຂົ້າໜຽວມາເຮັດສວນກາເຟ ຢູ່ໃນເມືອງ ເລ່ົາ ງາມ ແຂວງ ສາລະວັນ, ເມືອງບາຈຽງ, ເມືອງ ປາກ ຊ່ອງ ແຂວງ ຈຳປາສັກ.

ຊົນເຜົ່າຮ່າຮັກ ຕັ້ງພູມລຳເນົາຢູ່ແຂວງ ເຊ ກອງ, ອັດຕະປື, ຈຳປາສັກ ແລະແຂວງ ສາລະວັນ ມີ ພົນລະເມືອງ 16.394 ຄົນ, (ຕາມການສຳຫຼວດ ພົນລະເມືອງທົ່ວປະເທດ ຄັ້ງທີ II ປີ 1995).

ຊື່ເອີ້ນ:

ຊື່ເດີມ, ຊື່ທີ່ເຂົາເຈົ້າເອີ້ນຕົນເອງ, ຊື່ທີ່ ພວກເຂົາເຈົ້າມີຄວາມສະໝັກໃຈ ແລະຊື່ທີ່ເຂົາ ເຈົ້າມັກແມ່ນ ຊົນເຜົ່າ "ຮາຮັກ" .ໃນສະໄໝການ ປະຕິວັດຊາດ-ປະຊາທິປະໄຕ ພວກເຂົາເຈົ້າມີ ຊື່ວ່າ ອາລັກທີ່ປ່ຽນມາຈາກຫາລັກ ເຊິ່ງມີຄວາມ ໝາຍພວກຫາລັກ. ນອກນັ້ນຍັງມີຊື່ວ່າ ກະເສງ ໝາຍເຖິງນ້ຳເສບ, ນ້ຳເສງ.

ພາສາ:

ຊົນເຜົ່າຮ່າຮັກ ບໍ່ມີຕົວໜັງສືຂຽນ, ແຕ່ມີ ພາສາປາກເວົ້າເປັນອັນສະເພາະຂອງຊົນເຜົ່າ ຕົນເອງ, ເຊິ່ງພາສາປາກເວົ້າ ຂອງເຂົາເຈົ້າຈັດ ເຂົ້າໃນໝວດພາສາ ມອນ - ຂະແມ.

ຊົນເຜົ່າຮາຮັກ ສາມາດເວົ້າພາສາຕຽງ, ລະວີ, ແຢະ, ກະຕູ, ຕຣີວ, ລາວແລະເຈັ້ງໄດ້ດີ ເຊິ່ງ ມີຄວາມສະດວກໃນການພົວພັນແລກປ່ຽນເສດຖະກິດ ແລະວັດທະນະທຳລະຫວ່າງຊົນເຜົ່າເຫຼົ່ານັ້ນ.

ຮີດຄອງປະເພນີ,ຄວາມເຊື່ອຖື ແລະວັດທະນະທຳ-ສັງຄົມ :

ໃນສະໄໝບູຮານຊົນເຜົ່າຮ່າຮັກ ມີ ຄວາມ ນິຍົມປຸກເຮືອນຮ້ານ ທີ່ເຮັດດ້ວຍໄມ້ມອກຕອກ ຫຼື ບໍ່ປະຖົມປະຖານແທດເໝາະກັບການດຳລົງຊີວິດ ໃນສະໄໝນັ້ນ.

ລັກສະນະເຮືອນ ຂອງເຂົາເຈົ້າເປັນເອກະ ລັກສະເພາະຂອງຊົນເຜົ່າຕົນເອງມີຮູບລັກສະນະຄື ເຮືອສະເພົາ, ຢູ່ໃນຫ້ອງມີການຈັດວາງແທດເໝາະ ກັບຮີດຄອງປະເພນີ ແລະຈຳນວນສະມາຊິກໃນ ຄອບຄົວ. ການຄະລຳຢູ່ພາຍໃນເຮືອນກ່ອນປີ 1975 ຄົນຫຼັງນອນກາງມຸ້ງໃນຫ້ອງບໍ່ໄດ້ເດັດຂາດ.

ສະໄໝປີ 1975 ຄົນຫຼັງຜູ້ຊາຍ ມີຄວາມ ນິຍົມນຸ່ງກະຕ່ຽວ, ບ່ອງຫູໃສ່ຕ້າງ ທີ່ເຮັດດ້ວຍທອງ ແລະກົ່ວ, ຈົ່ງຜົມຍາວເກົ້າຜົມຄືແມ່ຍິງ, ຕັດແຂ້ວ ແຕ່ບໍ່ສັກລາຍ. ສຳລັບແມ່ຍິງແມ່ນນຸ່ງສິ້ນ, ທົ່ມ ເສື້ອລາຍເຮັຍ, ບ່ອງຫູໃສ່ຕ້າງ ທີ່ເຮັດດ້ວຍກົ່ວ ແລະ ທອງ, ເກົ້າຜົມ, ຕັດແຂ້ວ.

ຊົນເຜົ່າຮ່າຮັກ ໄດ້ມີຄວາມເຊື່ອຖືໃນ ເລື່ອງຜີ ເຊັ່ນ: ຜີເຮືອນ, ຜີຮັກສາບ້ານ, ພວກເຂົາ ເຈົ້າໃຫ້ຜີຢູ່ແປະກັບເຕົາໄຟ. ນອກຈາກນັ້ນເຂົາ

ເຈົ້າຍັງເຮັດຮີດຄອງຈ້ອງກະປ່ຽວດ້ວຍການຂ້າ ຄວາຍຢູ່ໃນແຕ່ລະຄອບຄົວ ປີລະໜຶ່ງເທື່ອ ແລະ ເຮັດລວມໝົດບ້ານປີລະເທື່ອ, ປະຈຸບັນໄດ້ມີການ ປ່ຽນແປງ ໂດຍຈະເຮັດ 2-3 ປີເທື່ອໜຶ່ງ.

ດ້ານສິລະປະວັນນະຄະດີນັ້ນ ຊົນເຜົ່າ ຮ່າຮັກ ມີເຄື່ອງດົນຕີພື້ນເມືອງປະເພດຕ່າງໆຄື: ປີ່, ແຄນ, ກອງ, ພະເໜາະ, ມີກອນຂັບລຳ, ມີນິທານ ພື້ນເມືອງ ທີ່ເວົ້າເຖິງຟ້າແຖນ, ດິນ, ປະຫວັດ ຄວາມເປັນມາຂອງຊົນເຜົ່າ,ຫວ້ານຢາ, ເຫວດມົນ ກົນກະຖາ, ເລື່ອງກາດຳ ແລະ ອື່ນໆ ຄູ່ບ່າວສາວ ມີຄວາມເສລີພາບໃນການພົວພັນເຊິ່ງກັນ ແລະ ກັນ, ແຕ່ເມື່ອມີມັກຮັກກັນກ່ອນຈະແຕ່ງດອງ ຝ່າຍ ເຈົ້າບ່າວຈະສະເໜີນຳພໍ່, ແມ່ຂອງຕົນເພື່ອໄປສູ່ຂໍ ເຈົ້າສາວ. ການແຕ່ງດອງ ຂອງຊົນເຜົ່າຮ່າຮັກ ແຕ່ ກ່ອນຮອດປະຈຸບັນຄ່າດອງ ມີຄວາຍ 3 ໂຕ, ເຫຼົ້າ ໄຫ 5 ກົກຂຶ້ນໄປ,ພາຍຫຼັງແຕ່ງດອງແລ້ວເມຍ ເມືອຢູ່ເຮືອນນຳຜົວ.

ຖ້າມີຄົນເຈັບເບື້ອງຕົ້ນ ປິ່ນປົວດ້ວຍການ ກິນຢາພື້ນເມືອງ, ຈາກນັ້ນ ແມ່ນປິ່ນປົວດ້ວຍການ ສ້າງເຫວດມົນກົນກະຖາ, ຫວ້ານຢາຕາມການ ແນະນຳຂອງ ໝໍດູ, ໝໍມໍ, ຖ້າຄົນນັ້ນເສຍຊີວິດເຂົາ ເຈົ້າຈະເອົາຜ້າຫົ່ມຫໍ່ໃສ່ໂລງດອຍໄວ້ຢູ່ເຮືອນຂອງ ຜູ້ກ່ຽວ, ມີການຄົບງັນ 1-2 ຄືນ ແລ້ວຈຶ່ງນຳສົບໄປ ຝັງຢູ່ປ່າຊ້າລວມຂອງບ້ານ.

ຊົນເຜົ່າຮ່າຮັກ ເກີດລູກຢູ່ປ່າຜູ້ດຽວ, ຢູ່ ຕູບໃນດົງທີ່ໃກ້ກັບຫ້ວຍນ້ຳ, 5 ມື້ໃດຜົວເອົາອາ ຫານໄປສົ່ງເທື່ອໜຶ່ງ ແລະຮອດ 1-2 ເດືອນ ເມຍ ຈຶ່ງ ຫອບລູກຍ່າງເມືອບ້ານເອົາເອງ.

ພື້ນຖານເສດຖະກິດ ຊົນເຜົ່າຮ່າຮັກ ມີອາ ຊີບໃນການຖາງປ່າເຮັດໄຮ່ປູກເຂົ້າຈ້າວເປັນຕົ້ນຕໍ, ປູກພືດທີ່ມີທາດແປ້ງ, ພືດລົ້ມລຸກ, ພືດຕະກຸນຖົ່ວ ເປັນສຳຮອງ, ມາຮອດປະຈຸບັນຊົນເຜົ່າຮ່າຮັກສ່ວນ ຫຼາຍໄດ້ມີການຫັນປ່ຽນອາຊີບເຮັດສວນປູກກາເຟ ແລະເຮັດນາປູກເຂົ້າ.

ຜູ້ຊາຍຂອງຊົນເຜົ່າຮ່າຮັກ ມີມູນເຊື້ອໃນການ ລ່າເນື້ອສັດປ່າ, ຫາປາຕາມທຳມະຊາດ, ເຮັດກະ ດິດ, ກະຕ່ຳ, ໂທນ, ມີຄວາມສຳນານໃນວິຊາຫັດ ຖະກຳຈັກສານ, ຕີເຫຼັກ,ຖາກໄມ້ ແລະອື່ນໆ. ສະ ເພາະແມ່ຍິງມີຄວາມຊຳນານງານໃນການຕ່ຳຫູກ ທໍ່ໄໝ, ສານສາດປູນອນໃຊ້, ໃນຄອບຄົວ ແລະ ຂາຍເປັນສິນຄ້າ, ມີມູນເຊື້ອໃນການສ້ອນກຸ້ງ, ສ້ອນປາຕາມຫ້ວຍຮ່ອງຄອງບຶງ ແລະລຽບຕາມ ລຳນ້ຳເຊກອງ ສະແດງໃຫ້ເຫັນໃນບົດຟ້ອນຂອງ ຊົນເຜົ່າຮ່າຮັກ.

ຊົນເຜົ່າຮ່າຮັກມີມູນເຊື້ອ ໃນການລ້ຽງສັດ ປະເພດຕ່າງໆຄື: ງົວ, ຄວາຍ, ໝູ, ສັດປີກເພື່ອຂ້າກິນ ໃນເວລາເຮັດຮີດຈ້ອງກະປ່ຽວ, ຂາຍເປັນສິນຄ້າ, ໃຊ້ເປັນຄ່າດອງສົມສອດໃຫ້ລູກຊາຍ ໃນເວລາ ແຕ່ງດອງແລະອື່ນໆ.

24/7 VIP
ห้องคำชมเชย

Harak

Historical background:

The Harak are an ethnic group who migrated and settled many centuries ago in the Lamarm region of Sekong province and Attopeu province.

After the national democratic revolution, some Harak people gave up slash-and-burn cultivation of dry-land rice and started growing coffee in Laongarm district of Salavan province, and Bachiang and Paksong districts of Champassak province.

Harak people now live in Sekong, Attopeu, Champassak and Salavan provinces. Their population is 16,394, according to the Second Population Census done in 1995.

Name and language:

Their original name is Harak, and this is their preferred name. During the national democratic revolution, it was decided that they would be known as "Harak" which replaced the name "Hah Luck" which means "a look for stealing".

The Harak language falls into the Mon - Khmer language group. Harak people can often speak the languages of Triang, Lawee, Kahtoo, Tru, Lao and Chieng, leading to economic and cultural exchanges. Harak do not have an alphabet for writing.

Beliefs, society, ceremonies and myths:

Harak people believe in spirits such as the spirit of the household, and the village spirit that guards the village against misfortune. A small altar is kept near the fireplace for the household spirit to reside. In addition, the feast Chongkapiav calls for each family to sacrifice a buffalo once a year. Traditionally this feast was a village affair that was held once a year, but lately once every two years is more common because of the cost of the feast.

In the area of art and culture, Harak people have various types of traditional musical instruments such as: bamboo clarinet, flute, and drum. They also have rhymes that are chanted, folk tales that refer to spirits of the heaven and earth, and stories based on animals and the history of their people. Learning herbal medicines and words for magic spells and charms is also part of their culture.

Young people have freedom in choosing their mate for a future relationship. If a couple feels that they are ready to marry, the young man will ask his parents for permission before getting married.

The wedding dowry of the Harak people traditionally has been three buffaloes and five large clay vessels of rice wine. The bride moves to stay in her husband's house after the wedding ceremony.

Harak women gave birth alone in a hut nearby a stream in the forest. The husband brings food once every five days until the baby is one to two months old. At this time, the mother will return home with the child.

If someone becomes ill, traditional medicines made from local plants are taken. If this does not work, then magic spells combined with herbal roots following the advice of a village spiritual shaman are tried. When someone dies, he or she is covered with a blanket, and then placed in a coffin, which is kept open in the house. A feast that lasts two to three days is held. After this, the body is buried in the village cemetery.

Village and house:

A Harak village typically is located on lower slopes or forest clearings near streams. Traditionally the houses were placed in a circular pattern, with a communal house in the center. A village may consist of about ten to sixty houses. In the past, Haruck people preferred to build houses on piles, with the arrangements of the rooms done to suit the likes of the family members. One interesting household taboo was that prior to 1975 it was strictly forbidden to sleep under mosquito nets in fear of offending the spirits.

Costume:

Before 1975, Harak men preferred to wear the traditional katiav or loincloth. Like other ethnic groups, they pierced their ears to wear earrings made of silver or tin. Hair was kept long hair rolled up in a style similar to women. Harak also sharpened their teeth. However, unlike other ethnic groups, they do not tattoo their body. Women wear the traditional Lao phaa sinh (traditional skirt), and also pierced their ears, rolled their hair up and sharpened their teeth.


Agriculture and livelihood:

Harak people practice slash-and-burn cultivation of dry-land rice and grow root crops and annual crops such as corn. They also grow legumes as secondary crops. Presently, many Harak people grow coffee and practice lowland paddy farming of rice. Traditionally, the Harak raise animals such as cattle, buffalo, pigs and poultry for food, but they are not as keen animal breeders as other ethnic groups. They also sell these animals and use them to pay for dowries when their sons marry.


Harak men also are skilled hunters of wild animals and also fish in the rivers and streams. They are also skillful in handicrafts, simple blacksmithing, and working with wood. Women are skillful in stitching, weaving, and making sleeping mats for domestic use and for sale. They also have a tradition of catching freshwater shrimp and fish in streams and along the Sekong River. They celebrate this tradition by performing a dance that mimics the fishing activities.



21. ຊີວິດຂອງຜູ້ຊາຍເຜົ່າຍະເຫີນ (ຈຳປາສັກ)
Life of Man of NhaHeun (Champassak)



22. ແມ່ຍິງ ຊົນເຜົ່າເບຣິ (ອັດຕະປື)
Brau Women (Attapeu)



23. ຄົນເຜົ່າກະຕູ ບ້ານຖ້ຳເດັ່ງ (ເຊກອງ)
People of Katu , Ban thamdeng (Sekong)



24.ເຖົ້າແກ່ອາວຸໂສຂອງເຜົ່າປະໂກະ(ສາລະວັນ)
Elders of Pako (Saravan)



25. ຄົນຊົນເຜົ່າຊິ້ງມູນ(ຫົວພັນ)
People of Singmoun(Houaphanh)



26. ການນຸ່ງຫົ່ມຂອງເຜົ່າຜ້ອງ (ຫົວພັນ)
Wearing of Phong (HouaPhanh)





27.ภาบสะแดวดื่มเหี้ำไท เผ่าภืมมุ(ฆววพะบาว)
Show drinking Jar alcohol of Khmu(Luangphrabang)

28. ວິຖີຊີວິດຂອງເຜົ່າຜ້ອງ (ຊຽງຂວາງ)
Life of Phong (Xieng Khouang)





29. ຊີວິດຂອງແມ່ຍິງ ເຜົ່າຕຽງ (ອັດຕະປື) Life of Trieng women (Attapeu)

30.ภ่าบสะแดวฟ้อบของเผ่าภรววใบปี2000(สาละวับ).
Dancing Show of Kalieng in 2000 (Saravane)





31.เถื่องหัดถะภำ,เถื่องมุ่งหิ่มของเผ่าตรวว(อัดตะปื).
Clothing and Handicraft of Trieng (Attapeu)


32. แคบหมาภบ้ำเต้ำของเผ่าโอย(อัดตะปื)
Khen Mak Nam Tao Panpipe of Oy (Attapeu)




33.ຊຸດອາພອນເພດຂອງເຜົ່າກະຕ່າງ(ສາລະວັນ)
Custom Ornament of Katang(Saravane)




34.ຊຸດອາພອນເພດຂອງເຜົ່າຕູມ
Ornament costum of Toum (Aphonephet Suit)



35. ຊຸດອາພອນເພດ ຂອງເຜົ່າໂອຍ (ອັດຕະປື)
Aphonephet suit of Oy (Attapeu)



36. ຊຸດອາພອນເພດຂອງເຜົ່າມະກອງ
Ornament costum of Makong (Aphonephet Suit)



37. ເຄື່ອງຫັດຖະກຳຂອງເຜົ່າໂອຍ (ອັດຕະປື)
Handicraft of Oy (Attapeu)



38.ເຄື່ອງບູຮານຂອງເຜົ່າເບຣິ(ອັດຕະປື
Olden Instrument of Brau (Attapeu)



39.ຍິງໜຸ່ມຂອງເຜົ່າ ຮ່າຮັກ ໃນປີ 1900(ຈຳປາສັກ)
Young Woman of Harak in 1900 (Champassak)




40.ເຮືອນບູຮານຂອງເຜົ່າຕຣຽງ(ອັດຕະປື)
Ancienthouse of Trieng(Attapeu)




41. ວິຖີຊີວິດຂອງເຜົ່າຮ່າຮັກ ໃນ ປີ 1900
(ຈຳປາສັກ) Life of Harak in 1900 (Champassak)




42.ຊີວິດຂອງເຜົ່າເບຣົາໃນປີ1890
New Life of Braw in 1890 4



43. ຜູ້ຊາຍຊົນເຜົ່າຕຣຽງ (ອັດຕະປື) Trieng Men (Attapeu)



44. ຮ້ານບູຊາຂອງເຜົ່າບິດ
Olden house of Bit



45.ໂລງສົບ ເຜົ່າກຽງ ມ.ທ່າແຕງ(ເຊກອງ)
Coffin of Kalieng Thateng district(Sekong)



46.ການແຕ່ງກາຍຂອງເຜົ່າກຶມມຸ
Wearing of Khmu



47. ການແຕ່ງກາຍຂອງເຜົ່າຕະຽງ
Wearing of Trieng



48.ການຫຼິ້ນບຸນເຕົ້ນ(ຕີເກ໋ຽ)ເຜົ່າກຶມມຸ
Tednoum festival(Tikeung)Khmu




49. ຊົນເຜົ່າຮາຢີ ທີ່ເມືອງບຸນເໜືອ, ແຂວງຜົ້ງສາລີ
Hayi women in Phongsaly, northern



50.ການຕັ້ງບ້ານເຮືອນຂອງເຜົ່າອາຄາ ມ.ສິງ (ຫຼວງນ້ຳທາ)Establishment Village, house build of Akha Sing district(Luangnamtha)




51.ເຮືອນບູຮານຂອງເຜົ່າໂລໂລ ບ.ສະຫວ່າງ ມ.ຍອດອູ (ຜົ້ງສາລີ)Ancient house of lolo ban Savang , Nhod-OU (Phongsali)



52.ເຮືອນບູຮານເຜົ່າກະຕູ ບ.ດອນຊາ (ເຊກອງ) Anciant house of Katu Ban donexa (Sekong)



53. ການຕັ້ງບ້ານເຮືອນຂອງເຜົ່າສີລາ ບ.ລົ້ງທາງ ມ.ຍອດອູ(ຜົ້ງສາລີ) Establishment Village house build of sila , BanLongthang, Nhod-OU (Phongsali)



54.ສາລາກວານ ຢູ່ ເຊກອງ, Sala Kouane in Sekong

ໝວດພາສາ ຈີນ - ຕິເບດ ມີ 7 ຊົນເຜົ່າ.

The Chine - Tibet Language Family

(7 Ethnic Groups)

ຊົນເຜົ່າ ສິງສີລີ
ປະຫວັດຄວາມເປັນມາ

ຊົນເຜົ່າສິງສີລີ ແມ່ນຊົນເຜົ່າໜຶ່ງ ທີ່ໄດ້ຕັ້ງຖິ່ນຖານພູມລຳເນົາ ແລະດຳລົງຊີວິດຢູ່ໃນປະເທດລາວ ມາໄດ້ຫຼາຍຮ້ອຍປີແລ້ວ. ສຳລັບຕົ້ນກຳເນີດ ແລະປະຫວັດຄວາມເປັນມາຂອງຊົນເຜົ່ານີ້ ໂດຍອີງໃສ່ບັນດາເອກະສານ ແລະຕາມການບອກເລົ່າຂອງບັນດາເຈົ້າກົກ, ເຈົ້າເຫຼົ່າໃຫ້ຮູ້ວ່າ: ຊົນເຜົ່າສິງສີລີ ມີປະຫວັດຄວາມເປັນມາຈາກປະເທດ ມຽນ ມາ ແລະໄດ້ເຄື່ອນຍ້າຍເຂົ້າມາລາວຢູ່ເຂດ ວຽງພູຄາໃນຕົ້ນສະຕະວັດທີ 16. ມາຮອດສະຕະວັດທີ XVIII - XVIIII ເປັນໄລຍະສົງຄາມສັກດິນາຈີນ ກັບພະມ້າ ແລະຊົນເຜົ່ານີ້ໄດ້ເຄື່ອນຍ້າຍ ໄປຢູ່ດິນແດນແຂວງ ຜົ້ງສາລີ ໃນປະຈຸບັນດ້ວຍຫຼາຍເສັ້ນທາງ ແລະຫຼາຍໄລຍະທີ່ແຕກຕ່າງກັນ.

ປະຈຸບັນຊົນເຜົ່າສິງສີລີນີ້ ຕັ້ງພູມລຳເນົາສ່ວນຫຼາຍຢູ່ແຂວງ ຜົ້ງສາລີ, ຫຼວງນ້ຳທາ ແລະແຈກຢາຍຢູ່ແຂວງ ອຸດົມໄຊ, ບໍ່ແກ້ວ ແລະຫຼວງພະບາງ.

ພົນລະເມືອງ ຂອງຊົນເຜົ່າສິງສີລີ ຢູ່ໃນລາວມີທັງໝົດ 35.635 ຄົນ, ຍິງ 17,988 ຄົນ. ເທົ່າກັບ 0,8% ຂອງພົນລະເມືອງ ທົ່ວປະເທດ (ຕາມສະຖິຕິການສຳຫຼວດພົນລະເມືອງ ຄັ້ງທີ II ປີ 1995).

ຊື່ເອີ້ນ

ສຳລັບຊື່ຂອງຊົນເຜົ່ານີ້ ມີຫຼາຍຊື່ເອີ້ນດ້ວຍກັນ ເຊັ່ນວ່າ ຜູ້ນ້ອຍ, ປູ່ນ້ອຍ, ພູ່ນ້ອຍ , ໄທ ຜົ້ງສາລີ, ສິງສີລີ, ບີຊູ ແລະອື່ນໆ. ຊື່ເອີ້ນຕ່າງໆ ຂອງຊົນເຜົ່ານີ້ມີຫຼາຍເລື່ອງທີ່ແຕກຕ່າງກັນ ທີ່ຊີ້ແຈງເຖິງຊື່ເອີ້ນໃນປະຈຸບັນ, ແຕ່ຊື່ເອີ້ນທີ່ໄດ້ກ່າວມາ ມີການເລົ່າລືບໍ່ຄືກັນ ແລະກໍ່ບໍ່ແມ່ນຊື່ທີ່ເຂົາເຈົ້າເອີ້ນໃຫ້ເຂົາເຈົ້າເອງ, ແມ່ນຊື່ທີ່ຊົນເຜົ່າອື່ນເອີ້ນໃຫ້ພວກເຂົາ. ສະນັ້ນຖ້າຈະຖາມວ່າ ຊື່ເດີມຂອງຊົນເຜົ່ານີ້ເຂົາເຈົ້າເອີ້ນກັນແນວໃດນັ້ນ ຍັງບໍ່ໄດ້ຄຳຕອບທີ່ແນ່ນອນ ແລະວິຊາການຍັງຈະໄດ້ສືບຕໍ່ຄົ້ນຄວ້າໃຫ້ລະອຽດຈະແຈ້ງຕື່ມອີກໃນອະນາຄົດ. ເຖິງຢ່າງໃດກໍ່ຕາມສຳລັບຊື່ທີ່ໄດ້ຜ່ານການເຫັນດີຈາກກອງປະຊຸມ ໃນຄັ້ງວັນທີ 14 - 15 /8/ 2000 ແມ່ນຊົນເຜົ່າ " ສິງສີລີ ". ຊື່ເອີ້ນ ທີ່ວ່າ " ສິງສີລີ " ນີ້ມີຄວາມໝາຍວ່າ ແມ່ນຊົນຄົນທີ່ເປັນເຈົ້ານາຍ, ເຈົ້າເຫຼົ່າຂອງເຂົາເຈົ້າ.

ຊົນເຜົ່າສິງສີລີນີ້ ປະກອບດ້ວຍຫຼາຍແຊ ເຊັ່ນ: ພູຍອດ, ຕາປາດ, ບ້ານຕັ້ງ, ຈາຫໍ, ລາວແຊ ,ໄຟ, ລາວປານ, ຜົ້ງກູ້ ແລະຜົ້ງເສດ ຊຶ່ງແຕ່ລະແຊນັ້ນ ຈະມີພາສາ ແລະຮີດຄອງປະເພນີທີ່ຄ້າຍຄືກັນ ແລະແຕກຕ່າງກັນບາງເລັກນ້ອຍ ໄປຕາມແຕ່ລະທ້ອງຖິ່ນ.

ພາສາ

ພາສາຂອງຊົນເຜົ່າສິງສີລີ ຈັດຢູ່ໃນໝວດພາສາ ຈີນ- ຕິເບດ , ສາຂາ ຕິເບດ - ມຽນມາ. ເຂົາເຈົ້າບໍ່ມີຕົວໜັງສືຂຽນ.

ຮີດຄອງປະເພນີ, ຄວາມເຊື່ອຖື, ວັດທະນະທຳ ແລະ ສັງຄົມ

ຊົນເຜົ່າສິງສີລີ ມີຮີດຄອງປະເພນີ, ຄວາມເຊື່ອຖື ແລະວັດທະນະທຳທີ່ເປັນເອກະລັກຂອງຕົນເອງ ມາແຕ່ບູຮານນະການ. ເຂົາເຈົ້ານັບຖືສາສະໜາພຸດ , ແຕ່ວັດຂອງຊົນເຜົ່ານີ້ມີລັກສະນະເບົາບາງກວ່າວັດຂອງຊົນເຜົ່າໃນໝວດພາສາລາວ - ໄຕ. ຄຽງຄູ່ກັບການນັບຖືສາສະໜາພຸດເຂົາເຈົ້າຍັງເຊື່ອຖືຜີເຊັ່ນ: ຜີພໍ່, ຜີແມ່, ຜີບັນພະບຸລຸດ, ຜີແມ່ນ້ຳລຳທານ, ຜີກົກໄມ້ໃຫ່ຍ ແລະອື່ນໆ. ໃນແຕ່ລະເຮືອນ ຈະມີຫ້ອງທີ່ງຜີ ເຊິ່ງເປັນບ່ອນສັກກະລະບູຊາຂອງຄອບຄົວ.

ລະບົບຄອບຄົວເລືອດເນື້ອເຊື້ອສາຍ ແລະການສືບຕະກຸນຂອງຊົນເຜົ່າສິງສີລີ, ເຂົາເຈົ້າມີລະບົບຄອບຄົວດຽວ, ຖືປະເພນີແບບຜົວດຽວເມຍດຽວ ແລະສືບຕະກຸນທາງພໍ່. ການແບ່ງປັນມໍລະດົກ ແມ່ນລູກຜູ້ກົກຈະມີສິດຫຼາຍກວ່າໝູ່ ຈາກນັ້ນແມ່ນລູກຊາຍ ແລະລູກສາວຕາມລຳດັບ.

ລັກສະນະບ້ານເຮືອນ, ເຂົາເຈົ້າມັກດຳລົງຊີວິດ ແລະຕັ້ງບ້ານເຮືອນຢູ່ຕາມເປີ້ນພູ ຫຼືຕີນພູ ແລະມີຫ້ວຍນ້ຳລຳທານຢູ່ໃກ້. ຕາມປົກກະຕິແລ້ວ

ຊົນເຜົ່າສິງສິລີ ມັກປຸກເຮືອນຕິດດິນ, ຝັງເສົາເຮືອນດ້ວຍໄມ້ທີ່ແຂງແກ່ນ, ຝາແອ້ມດ້ວຍດິນດາກ ຫຼື ໄມ້ແປ້ນສຳລັບກັນຄວາມໜາວ) ໃນເຮືອນຈະມີການຈັດເປັນຫຼາຍຫ້ອງຄື ຫ້ອງສຳລັບພໍ່ແມ່, ຫ້ອງລູກຊາຍທີ່ສ້າງຄອບຄົວແລ້ວ, ຫ້ອງລູກສາວທີ່ຍັງໂສດ. ໃກ້ຫ້ອງນອນຂອງຜູ້ເປັນພໍ່ແມ່ຈະມີຫ້ອງ (ເພື່ອເປັນບ່ອນຕັ້ງຫີ້ງຜີ ທັງເປັນບ່ອນເຄົາລົບບູຊາ ຂອງສະມາຊິກໃນຄົວເຮືອນ. ເຮືອນມີ 2 ປະຕູຄື ປະຕູດ້ານໜ້າສຳລັບເຂົ້າອອກຕາມປົກກະຕິ ແລະອີກປະຕູໜຶ່ງເປັນປະຕູສຳຮອງຢູ່ດ້ານຫຼັງ ສຳລັບໄວ້ເພື່ອທຳພິທີຮຽກຂວັນ, ທຳການບູຊານົບໄຫ້ວຜີຕ່າງໆ ຫຼືສຳລັບໃຊ້ໃນເວລານຳເອົາສົບຄົນຕາຍອອກໄປຝັງ. ມາຮອດປະຈຸບັນລັກສະນະຂອງເຮືອນມີການປ່ຽນແປງ ເຊິ່ງເຮືອນແບບດັ້ງເດີມ ບໍ່ຄ່ອຍຈະໄດ້ເຫັນອີກແລ້ວ.

=> ສຳລັບປະເພນີ ກ່ຽວກັບການເກີດລູກນັ້ນ, ຊົນເຜົ່າສິງສິລີ ສ່ວນຫຼາຍແມ່ນເກີດລູກຢູ່ໃນເຮືອນ, ເວລາເກີດລູກຜູ້ຊາຍຕ້ອງອອກຈາກໃນເຮືອນ. ພາຍຫຼັງເກີດລູກແລ້ວ ຜູ້ເປັນຜົວຕ້ອງເຮັດຮີດຕາມພິທີກຳ ຫຼືປະເພນີ ຄື ຍ່າງອ້ອມເຮືອນສາມຮອບ ຈຶ່ງສາມາດຂຶ້ນເຮືອນໄດ້. ຕາມຮີດຄອງປະເພນີແລ້ວ ເຂົາເຈົ້າຈະມີຂໍ້ຫ້າມ ແລະການຄະລຳຫຼາຍຢ່າງໃນເວລາຖືພາ ເຊິ່ງມີຈຸດປະສົງເພື່ອໃຫ້ໄດ້ລູກທີ່ສວຍງາມ, ເກີດງ່າຍ ແລະຢ້ານຈະມີລູກແຝດ ເພາະຖືວ່າເປັນໂຊກຮ້າຍ ສຳລັບຊົນເຜົ່ານີ້ໃນສະໄໝກ່ອນ. ຮີດຄອງກ່ຽວກັບການຕາຍນັ້ນ ເຂົາເຈົ້າມີພິທີກຳຕ່າງໆ ຕາມຂັ້ນຕອນໃຫ້ແກ່ຜູ້ທີ່ລ່ວງລັບໄປແລ້ວສົ່ງສະການດ້ວຍການເຜົາ ແລະມີຈຳນວນໜຶ່ງກ່ຳຝັງ.

ບຸນປະເພນີ ແລະພິທີກຳຕ່າງໆໃນຮອບໜຶ່ງປີນັ້ນ ແມ່ນມີການປະສົມປະສານກັນ ລະຫວ່າງບຸນທາງ ພຸດທະສາສະໜາ ແລະພິທີຄວາມເຊື່ອຖືທາງຜີ. ເຂົາເຈົ້າມີການຫຼິ້ນບຸນປີໃໝ່ຄືກັບຊົນເຜົ່າລາວ. ມີການບາສີສູ່ຂວັນ ເມື່ອກໍລະນີມີການເຈັບເປັ ຫຼືຕາຍຈາກການເຈັບໄຂ້ໄດ້ປ່ວຍຕ່າງໆ. ນອກຈາກນີ້ແລ້ວຍັງມີພິທີກຳຕ່າງໆທີ່ກ່ຽວຂ້ອງກັບການປູກຝັງ ຕາມແຕ່ລະດູການ ໂດຍສະເພາະແມ່ນການປູກເຂົ້າ.

ດ້ານສິລະປະວັນນະຄະດີ ຂອງຊົນເຜົ່າສິງສິລີ ກໍ່ຖືວ່າອຸດົມສົມບູນໄປດ້ວຍກອນຂັບລຳ, ເນື້ອຮ້ອງທຳນອງເສບ ແລະມີເຄື່ອງດົນຕີປະເພດກອງ, ຄ້ອງ, ແຄນ ແລະອື່ນໆ ປະກອບນຳອີກດ້ວຍ. ຊົນເຜົ່າສິງສິລີ ມີເຄື່ອງນຸ່ງຖື ແລະການເອ້ຢ້ອງປະຈຳເຜົ່າຂອງຕົນເອງທັງຜູ້ຊາຍ ແລະແມ່ຍິງ, ເຄື່ອງນຸ່ງທີ່ນຳສ່ວນຫຼາຍແລ້ວ ຈະເປັນສີດຳ ເຊິ່ງປະດັບເອ້ດ້ວຍສີສັນລວດລາຍຕ່າງໆ ທີ່ສວຍສົດງົດງາມຈາກສີໄມ້ລາຍມືອັນຄ່ອງແຄ້ວ ແລະປານີດຂອງແມ່ຍິງຊົນເຜົ່ານີ້ເອງ ເຊິ່ງຈະເຫັນໃນມື້ວັນບຸນ ຫຼືພິທີກຳທາງສາສະໜາຕ່າງໆ.

ການດຳເນີນວິຖີຊີວິດ ທາງດ້ານເສດຖະກິດ

ໃນເມື່ອກ່ອນ ສ່ວນຫຼາຍເຂົາເຈົ້າ ມີອາຊີບໃນການກະເສດເປັນຕົ້ນຕໍ (ເຮັດໄຮ່ປູກເຂົ້າ), ນອກຈາກນັ້ນກໍ່ປູກສາລີ ແລະພືດຜັກຕ່າງໆ ທີ່ເປັນອາຫານສຳລັບຊີວິດປະຈຳວັນຂອງຄອບຄົວອີກຫຼາຍຊະນິດ ແຊມໃສ່ໃນໄຮ່ອີກດ້ວຍ. ສັດທີ່ເຂົາເຈົ້າມັກລ້ຽງແມ່ນໄກ່, ໝູ ແລະງົວ, ຄວາຍທັງນີ້ກໍ່ຍ້ອນວ່າສັດດັ່ງກ່າວ ມີຄວາມສຳຄັນເພື່ອໃຊ້ເປັນແຮງງານລາກແກ່ ແລະໃຊ້ເພື່ອປະກອບພິທີກຳທາງດ້ານຄວາມເຊື່ອຖື ແລະຮີດຄອງປະເພນີ. ສຳລັບການປູກຝັງ ແລະລ້ຽງສັດແມ່ນໃຊ້ເຕັກນິກແບບພື້ນບ້ານພື້ນເມືອງ ທີ່ສືບທອດກັນມາແຕ່ເຊັ່ນປູ່ຍ່າຕາທວດ ແລະຕົ້ນຕໍ່ກໍ່ອາໃສ, ຕິດພັນກັບສະພາບທຳມະຊາດ. ເຖິງຢ່າງໃດກໍ່ຕາມ ຄົນຊົນເຜົ່ານີ້ເປັນຄົນທີ່ດຸໝັ່ນຂະຫຍັນພຽນ, ໂດຍສະເພາະແມ່ນແມ່ຍິງ, ເຂົາເຈົ້າມີມູນເຊື້ອໃນການຫຍິບຖັກປັກແສ່ວ, ຕຳ່ແຜ່ນແພເພື່ອເຮັດເຄື່ອງນຸ່ງທີ່ນ ແລະຄ້າຂາຍນຳອີກດ້ວຍ. ປະຈຸບັນຊົນເຜົ່າສິງສິລີ ມີວິຖີການດຳລົງຊີວິດປ່ຽນແປງໄປຈາກເດີມ, ມີການປະກອບອາຊີບທີ່ຫຼາກຫຼາຍ, ມີທັງການເຮັດໄຮ່ ເຮັດນາ ປະສານກັນໄປຕາມສະພາບຕົວຈິງຂອງແຕ່ລະທ້ອງຖິ່ນທີ່ເຂົາເຈົ້າອາໃສຢູ່.

Singsily

Historical Background:

The Singsily are an ethnic group who has lived in Laos for many centuries. Based on documents and the stories of the elder people, the Singsily came from Burma and settled in the Viengphoukha area of Laos during the sixteenth century.

Today, the Singsily live in Phongsali, Luangnamtha, Udomsai, Bokeo and Luangprabang provinces.

Total Singsily population in Laos is about 35,635. Females number 17,988, according to the second population census of 1995.

Name and language:

Common names are Phunoi , Pounoi Punoi Thaiphongsali, Singsily, and Bïsou. There are many stories about why there are so many different names. The agreed name given during the August 2000 meeting is the "Singsili Ethnic Group".

There are many sub-groups of Singsili, namely Pouyoid, Tapaad, Bantung, Chahor, Laosangfai, Laopan, Phongku and Phongseth. Languages and traditions of each sub-group are slightly different.

The Singsily language is classified in the Sino-Tibetan language group on the Tibeto-Burman language branch. The Singsily have no alphabet.

Beliefs, society, ceremonies and myths:

Most Singsily practice a blend of animism and ancestral worship. They believe in spirits of the sky, wind, water, streams, forest and other nature-related places. These spirits are associated with all things good and bad in nature, such a good or bad harvests, floods, rainfall, etc. The most important spirits are the spirit of the land (dat tong) and the spirit of the water (dat ahakhang). These and other spirits must be worshipped and offered sacrifices as to make sure they do not cause harm to the village.

Some villages have converted to Buddhism. However, they have a mix of animism and Buddhism.

Today the Singsily live in nuclear family units. Most men practice monogamy but polygamy is allowed. The family lines are paternal. Usually, the eldest child will have priority over inheritance.

The majority of Singsily give birth at home. Men must leave the house when a woman gives birth. For funerals, the body is washed and placed in a coffin. Coins are placed in the mouth and the coffin is buried in the village graveyard. Buddhist families cremate their dead.

They have their own folk songs, music, and traditional musical. They play instruments such as drums, gongs, the panpipe, and others.

Village and house:

Singsily villages are usually located near streams in mountain forests, between 600 and 1000 meters high. A village will contain about 20 to 100 houses that are randomly placed with no organization.

Usually, the Singsily prefer to build houses on stilts. Clay or wood is used for wall construction to offer protection from the cold weather. There are two rooms, a large room with an earthen fireplace and a bedroom. There is a place of worship next to the bedroom for offerings to the spirits. There are two doors in a house. One, in front, is for daily activities. Another, in the back, is used only occasionally for special religious activities such as calling spirits, or bringing out a body for burying. However, this tradition of two doors is disappearing.

Costume and dress:

The Singsily have a special traditional dress for both females and males. All dresses are usually black decorated by colorful patterns that are skillfully and nicely woven by Singsili women. Those cloths are often worn in New Year religious celebrations.


The women wear a dark blue long-sleeved vest with a V-shaped collar. With this is a dark-blue skirt reaching below the knees. To finish the costume is a turban and white leggings.

The men wear wide Chinese-style trousers, blue vests and turbans. Today they do not wear as much jewelry as earlier times.

Agriculture and livelihood:

Singsilygrow both dry and wet rice. The most common is glutinous rice, which they grow upland by slash-and-burn methods. Other crops include corn, cucumbers, sugar cane, cabbage, lettuce and some tobacco. Animals they like to breed are chickens, pigs and buffalos. These animals are used as food and labor for transportation and for sacrifices in different religious activities.

The Singsily are known as a very diligent people, especially the women who are very skillful in sewing. Aside from making cloths for themselves they also sell their wares. The men can make simple tools such as knives, axes, machetes and crossbows. They also weave many things from bamboo such as baskets, fish traps, and storage baskets.



ຊົນເຜົ່າ ສີລາ

ປະຫວັດຄວາມເປັນມາ :

" ສີລາ " ແມ່ນຊົນເຜົ່າໜຶ່ງ ທີ່ນອນຢູ່ໃນ ວົງຄະນາຍາດແຫ່ງຊາດລາວ. ໃນເມື່ອກ່ອນເຂົາ ເຈົ້າຕັ້ງພູມລຳເນົາ ແລະອາໄສຢູ່ເຂດກຳແພງຍັກ ແຫ່ງປະເທດ ຈີນ. ແຕ່ຍ້ອນສົງຄາມເສິກຫໍ້ ໃນສະ ໄໝປະຫວັດສາດ ທີ່ຍາວນານ. ເຂົາເຈົ້າຈຶ່ງເຄື່ອນ ຍ້າຍ ແລະອົບພະຍົບລົງມາທາງພາກໃຕ້ເລື້ອຍໆ ໂດຍຜ່ານເຂດສາຊະຄຸນມົງ ແລະເຂດຢູນານແລ້ວ ກໍ່ລົງມາຕັ້ງຫຼັກປັກຖານຢູ່ພາກເໜືອຂອງ ລາວ.

ຕາມນິທານເລົ່າສືບຕໍ່ກັນມາ ໄດ້ຢືນຢັນ ວ່າ : ຊົນເຜົ່າສີລາ ເຄື່ອນຍ້າຍຈາກປະເທດ ຈີນ ມາຢູ່ປະເທດລາວໃນປະຈຸບັນນີ້ ໂດຍແມ່ນນາຍ ຈ່າເຖີະ ແລະນາງໂກອໍ (ພີ່ນ້ອງ) ເປັນຜູ້ນຳພາຂະ ບວນການເຄື່ອນຍ້າຍລວມມີ 2 ຈຸມີພວກຮັ່ງມີ ແມ່ນເຄື່ອນຍ້າຍດ້ວຍການຂີ່ມ້າ ແລະພວກທຸກ ຍາກເຄື່ອນຍ້າຍ ໂດຍຍ່າງດ້ວຍຕີນເປົ່າ ຈຶ່ງເປັນ ສາເຫດເຮັດໃຫ້ການເດີນທາງ ບໍ່ທັນກັນເປັນຕົ້ນ ພວກທີ່ຮັ່ງມີ ເດີນທາງຮອດບ່ອນໃດກໍ່ພັກເຊົາເອົາ ໃບຕອງເຮັດຕູບ.ແຕ່ເມື່ອໃບຕອງກ້ວຍເໜືອງ ແລະ ຍອດກ້ວຍບ່ອນຖືກຕັດນັ້ນກໍ່ປ່ຽງອອກເຂົາເຈົ້າ ກໍ່ເດີນທາງຕໍ່ໄປ ແລະໃນທີ່ສຸດກໍ່ມາຕັ້ງຫຼັກປັກຖານ ຢູ່ແຂວງ ຫຼວງນ້ຳທາ ໃນປະຈຸບັນນີ້ສ່ວນພວກທຸກ ຍາກ ເມື່ອເວລາເຂົາເຈົ້າເດີນທາງຮອດເຂດຍອດ ອູ ກໍ່ເຫັນໃບຕອງກ້ວຍທີ່ມຸງຕູບນັ້ນເໜືອງ ແລະໜໍ່ ກ້ວຍກໍ່ປ່ຽງຍາວອອກກໍ່ເລີຍຄິດວ່າຊີໄປນຳພວກຮັ່ງ ມີບໍ່ທັນກໍ່ເລີຍພ້ອມກັນຕັ້ງຫຼັກປັກຖານຢູ່ເຂດຍອດ ອູ ແຂວງ ຜົ້ງສາລີ ຈົນຮອດປະຈຸບັນນີ້.

ຊົນເຜົ່າສີລາໄດ້ດຳລົງຊີວິດ ແລະຕັ້ງຫຼັກ ປັກຖານຢູ່ປະເທດເຮົາໃນປະຈຸບັນໄດ້ຫຼາຍກ່ວາ 200 ປີແລ້ວ. ນອກຈາກມີຢູ່ ສ.ປ.ປ.ລາວ ແລ້ວຍັງ ມີຢູ່ແຂວງ ລາຍເຈົາ ປະເທດຫວຽດນາມ ແລະ ພາກ ໃຕ້ຂອງ ສ.ປ ຈີນ.

ຊົນເຜົ່າສີລາ ຢູ່ໃນ ສ.ປ.ປ.ລາວ ມີພົນລະ ເມືອງ 1772 ຄົນ, ມີ ຍິງ 882 ຄົນ ສະເພາະຢູ່ ຫຼວງ ນ້ຳທາ 436 ຄົນ, ຍິງ 223 ຄົນ, (ຕາມຜົນການ ສຳຫຼວດພົນລະເມືອງ ທົ່ວປະເທດ ຄັ້ງທີ II ປີ 1995).

ຊື່ເອີ້ນ :

ຊົນເຜົ່າສີລາມີຫຼາຍຊື່ເອີ້ນຄື: ຢູ່ເຂດ ຍອດອູ ມີຊື່ວ່າ: ເບິນຊູ, ເວີເຢີ, ເຢີເທີ. ສ່ວນພວກ ຢູ່ແຂວງ ຫຼວງນ້ຳທາ ໃນເບື້ອງຕົ້ນມີຊື່ວ່າເສັ່ງ ແລະ ຕໍ່ມາແມ່ນສີລາ. ແຕ່ຊື່ທີ່ເຂົາເຈົ້າສະໝັກໃຈ ແລະ ຊໍ້ໃຊ້ໃນທາງການແມ່ນຊົນເຜົ່າ " ສີລາ ".

ພາສາ :

ຊົນເຜົ່າສີລາ ບໍ່ມີຕົວໜັງສື ແຕ່ມີພາສາ ປາກເວົ້າສະເພາະຂອງເຂົາເຈົ້າເອງ ເຊິ່ງຈັດເຂົ້າ ໃນໝວດພາສາຈີນ-ຕິເບດ. ພາສາປາກເວົ້າຂອງ ຊົນເຜົ່ານີ້ ຄ້າຍຄືພາສາຂອງຊົນເຜົ່າອາຄາ, ຮ່າຍີ, ໂລໂລ, ຄົນສີລາສາມາດເວົ້າພາສາຈີນ, ຫໍ້, ລື້ ແລະຢັ້ງໄດ້ດີ ເຊິ່ງມີຄວາມສະດວກໃນການແລກ ປ່ຽນເສດຖະກິດ, ວັດທະນະທຳ-ສັງຄົມກັບບັນດາ ຊົນເຜົ່າດັ່ງກ່າວ.

ຮີດຄອງປະເພນີ, ຄວາມເຊື່ອຖື ແລະວັດທະນະທຳ-ສັງຄົມ :

ຊົນເຜົ່າສີລາ ໄດ້ມີຄວາມ ເຊື່ອຖືບັນດາ ສິ່ງສັກສິດ ແລະເຊື່ອຖືຜີສືບທອດມາແຕ່ບູຮານ ນະການ. ເຂົາເຈົ້າມີຄວາມເຄົາລົບນັບຖື ແລະ ເຊື່ອໃນເລື່ອງຜີຄື: ຜີພໍ່ແມ່, ຜີບັນພະບູລຸດ, ຜີຟ້າ, ຜີແຖນ, ຜີເຮືອນ, ຜີເຈົ້າບ້ານ, ຜີນາຍຈ່າເຖີະ ແລະນາງໂກອໍ ເຊິ່ງເຂົາເຈົ້າຖືວ່າເປັນຜູ້ປົກປັກຮັກ ສາມວນມະນຸດ, ບາງເຂດກໍ່ມີຄວາມເຄົາລົບບູຊາ 4 ເທື່ອຕໍ່ປີ.

ຊົນເຜົ່າສີລາ ມີສິລະປະພື້ນເມືອງ, ມີນັກ ປະດິດແຕ່ງກອນຂັບລຳໄອ້ ເຊິ່ງມີເນື້ອໃນຫຼາຍຊະ ນິດ, ມີຄຳສຸພາສິດ, ຄຳຜະຫຍາ, ຄຳພັງເພີຍ 12 ເດືອນ ທີ່ສ່ອງແສງເຖິງທິວທັດທຳມະຊາດ, ການ ພົວພັນລະຫວ່າງຄົນກັບຄົນ, ລະຫວ່າງຄົນກັບທຳ ມະຊາດ ແລະສ່ອງແສງເຖິງຄວາມຮັກລະຫວ່າງ ບ່າວສາວ, ສະເພາະພວກຢູ່ເຂດນ້ຳທາໄດ້ມີກອນ ຂັບກອນລຳ, ມີປົດຟ້ອນທີ່ນຳໃຊ້ເວລາ ເຮັດບຸນກິນ ຈຽງ ແລະມີປົດຟ້ອນຈ້ຽງທວະເຕັ້ນ ທີ່ນຳໃຊ້ໃນເວ ລາຄືບງັນຄົນຕາຍ.

ຊົນເຜົ່າສີລາ ມີປະເພນີແລະພິທີກຳສະ ຫຼອງທາງ ສາສະໜາຢ່າງຫຼວງຫຼາຍ ແຕ່ພິທີທີ່ສຳຄັນ ແມ່ນ ງານບຸນປີໃໝ່ (ບຸນກິນຈຽງ), ມີພິທີການບູຊາຜີບັນ ພະບູລຸດ, ຜີບ້ານ ແລະຜີເຈົ້າບ້ານ.

ຊົນເຜົ່າສີລາ ຢູ່ເຂດຍອດອູ ບໍ່ມີເຄື່ອງດົນ ຕີພື້ນເມືອງ ແຕ່ພັດມີນິທານພື້ນເມືອງ ສ່ວນພວກ ຢູ່ເຂດ ຫຼວງນ້ຳທາ ມີເຄື່ອງດົນຕີຫຼາຍຊະນິດຄື : ປີ່, ແຊ່ງ, ກອງ, ບັ້ງໄມ້ ຣົກຖັງ ຮັບໃຊ້ເວລາຄົບງັນ ຄົນຕາຍ, ຕີດົ້ງ, ຕີແຊ່ງ ຮັບໃຊ້ເວລາບຸນປີໃໝ່.

ປະເພນີ ແລະພິທີກຳ ໃນການຊອກຫາທີ່ ດິນຕັ້ງບ້ານ ແລະເຮືອນ ຂອງຊົນເຜົ່າສີລາ : ຕາມ ປົກກະຕິແລ້ວ ເມື່ອຈະຍົກຍ້າຍເຂົາເຈົ້າ ແຕ່ງກັນ ຊອກສະຖານທີ່ບ່ອນຈະຕັ້ງບ້ານ ເມື່ອເຫັນວ່າຢູ່ ເຂດໃດໜຶ່ງ ມີຄວາມເໝາະສົມໃນການຈັດຕັ້ງ ບ້ານ ກໍ່ນອນຄ້າງຄືນ ເພື່ອຕິດຕາມຄວາມຝັນ. ຖ້າ ຝັນດີກໍ່ເມືອລາຍງານຊາວບ້ານ ແລ້ວ ກໍ່ດຳເນີນ ການຊອກທີ່ດິນບ່ອນຈະປຸກເຮືອນ ດຳເນີນການຖາກ ຖາງບ່ອນຄາດວ່າຈະຕັ້ງເຮືອນ ແລະກໍ່ພາກັນເຄື່ອນ ຍ້າຍໝົດບ້ານເລີຍ.

→ ຮອດສະຖານທີ່ຕັ້ງບ້ານ ແລະເຮືອນແລ້ວ ກໍ່ຈະປຸກຕູບ ຢູ່ຊຳຊາຊົ່ວໄລຍະໜຶ່ງ ກໍ່ໄປຕັດໄມ້ ເພື່ອຈະເຮັດບ່ອນພັກເຊົາ ເມື່ອເຄື່ອນຍ້າຍໝົດ ແລ້ວ ກໍ່ເຮັດພິທີກຳທາງຮີດຄອງ ໂດຍສານຕາ ແຫຼວປັກໃສ່ 4 ແຈບ່ອນຈະປຸກເຮືອນ, ຂຸດຂຸມ ຢູ່ໃຈກາງບ່ອນຄາດວ່າຈະປຸກເຮືອນ, ຂັ້ນດ້ວຍໄມ້ ແປ້ນ ເຂົ້າສານໄວ້ຂ້າງຂວາ 9 ຄູ່ ແລະຂ້າງຊ້າຍ ແມ່ນເຂົ້າເປືອກ 9 ຄູ່, ເອົາດິນ ຫຼືໄມ້ອັດປາກຂຸມ 50 ນາທີ ຫຼືຄົນໜຶ່ງ ກໍ່ໄຂເບິ່ງເຂົ້າສານ ແລະ ເຂົ້າ ເປືອກປົນກັນ ກໍ່ຕັ້ງເຮືອນຢູ່ນັ້ນບໍ່ໄດ້. ສ່ວນຊົນເຜົ່າ ສີລາ ຢູ່ແຂວງ ຫຼວງນ້ຳທາ ໄດ້ຖືເຂົ້າສານ, ເກືອ, ຂີ້ ແລະ ໃບຕອງກ້ວຍ, ເມື່ອເຫັນບ່ອນຄາດວ່າຈະ ຕັ້ງບ້ານ ກໍ່ຂຸດຂຸມສີ່ແຈສາກ, ຝັງເຂົ້າສານໃນຂຸມ ທັງສີ່ແຈບ້ານ, ຝັງກາງບ້ານມີ 5 ຂຸມ ແຕ່ລະຂຸມ ໃສ່ເຂົ້າສານສາມເມັດ ດ້ວຍວິທີຈຸຫົວໃສ່ກັນ, ເອົາ ກ້ອນຫີນປົກໄວ້ 15 ນາທີ ຈຶ່ງຄ່ອຍເປີດເບິ່ງ.

ລັກສະນະເຮືອນ :

ຕາມປົກກະຕິແລ້ວ ເຂົາເຈົ້ານິຍົມປຸກເຮືອນໂດຍ ມີພື້ນຕິດດິນ ເສົາເຮັດດ້ວຍໄມ້ແກ່ນລ້ອນ 4 ລ່ຽມ, ແອ້ມດ້ວຍໄມ້ຫົກ, ມຸງດ້ວຍຫຍ້າຄາ, ລວງຍາວ 6 ວາ ແລະກວ້າງ 3 ວາ ພາຍໃນຫ້ອງເຮືອນ ເປັນ 2 ຫ້ອງໃຫຍ່ ແລະນ້ອຍຂະໜານກັນ. ສຳລັບຫ້ອງ ນ້ອຍຍັງແບ່ງເປັນຫຼາຍຫ້ອງຄື : ຫ້ອງນອນພໍ່ແມ່, ລູກສາວບໍ່ມີຜົວ, ລູກຊາຍກົກ, ລູກຊາຍກາງ (ມີ ເມຍ) ສ່ວນຫ້ອງໃຫຍ່ມີບ່ອນ ນອນຂອງແຂກ, ລູກ ຊາຍໂສດ ແລະເຕົາໄຟ.ແຕ່ວ່າຊົນເຜົ່າສີລາ ຢູ່ ຫຼວງນ້ຳທາ ເຂົາເຈົ້າມີການຄະລຳຊອກໄມ້ ເພື່ອ ເຮັດເສົາເຮືອນ ໃນມື້ພໍ່ແມ່ຕາຍ ແລະມື້ສົ່ງສະການ ເຂົາເຈົ້ານິຍົມປຸກເຮືອນພື້ນຕິດດິນ, ເສົາເຮັດດ້ວຍ ໄມ້ແກ່ນລ້ອນຫຼວງຍາວເຮືອນ 6-8 ວາ ກວ້າງ 4-6 ວາ ແອ້ມດ້ວຍໄມ້ປ່ອງ, ມຸງດ້ວຍຫຍ້າ. ພາຍໃນ ຫ້ອງເຮືອນແບ່ງອອກເປັນ 3 ຫ້ອງ ຂະໜານກັນ ຕາມລວງຍາວ, 12 ຫ້ອງ ຂະໜານກັນຕາມລວງ ກ້ວາງ. ເຂົາເຈົ້າໄດ້ມີຂໍ້ຫ້າມ ແລະ ຄະລຳຄົນພາຍ ໃນເຮືອນດຽວກັນເຂົ້າຫ້ອງກັນ ແລະກັນ ບໍ່ໄດ້ ຍົກ ເວັ້ນເວລາເຈັບເປັນ ແລະບໍ່ໃຫ້ຄົນພາຍນອກເຂົ້າ ຫ້ອງນອນຢ່າງເດັດຂາດ.

– ຊົນເຜົ່າສີລາ ມີເອກະລັກສະເພາະກ່ຽວ ກັບເຄື່ອງນຸ່ງຫົ່ມເອ້ຢ້ອງ ຄື : ຜູ້ຊາຍນຸ່ງໂສ້ງສີດຳ ຫົວກ້ວາງ, ຂາໃຫຍ່, ຫົ່ມເສື້ອແຂນສັ້ນສີດຳ, ມີດຸມ ທາງຂ້າງ, ຕາມເອິກ,ຍາວລົງຮອດແອວ,ຜ້າດຳ ຍາວ1ວາ ກ້ວາງ 20 ຊມ. ຄຸມຫົວ, ມີສາຍມັດ ແອວ, ເວລາເປັນບ່າວບໍ່ເອົາຜ້າດຳຄຸມຫົວ ແຕ່ຈີ່ງ ຜົມຍາວຝັ້ນເປັນ 3 ດົ້ວ, ເກົ້າຜົມຕັ້ງ, ໃສ່ສາຍ ສ້ອຍກ້ຽວແຂນ ແລະປອກແຂນ ສຳລັບແມ່ຍິງນຸ່ງ ສິ້ນແຊງດອກສີດຳ, ນຸ່ງສິ້ນລ່ຳມຮອດປາຍແຂ່ງ, ຫົ່ມເສື້ອຫຼາຍສີສະຫຼັບກັນຄື : ສີດຳ, ຂາວ, ຂຽວ, ລາຍດອກຕັ້ງ, ຢູ່ແອວມີການເອ້ຢ້ອງດ້ວຍເງິນນາໆ ຊະນິດ, ຜ້າຂາວຄຸມຫົວ, ສິ້ນແພປະດັບດ້ວຍໝາກ ປັດຮວຍຈີບ, ມີຜ້າຄຸມຫົວແບບກົ້ນຫອຍກ້ຽວຜົມ ແລະຜ້າຂາວປົກຫົວ. ແຕ່ວ່າຊົນເຜົ່າສີລາ ຢູ່ແຂວງ ຫຼວງນ້ຳທາ ຜູ້ຊາຍນຸ່ງໂສ້ງຂາຍາວສີຂາວ, ຫົ່ມເສື້ອ ສີດຳ, ແມ່ຍິງນຸ່ງສິ້ນສີແດງກ່ານຂາວ, ຫົ່ມເສື້ອ

ແຂນຍາວສີ່ຂ່ຽວ, ສ່ວນຜູ້ເຖົ້າ ແລະເດັກນ້ອຍແມ່ນໜຸ່ງເຄື່ອງທຳມະດາ.

ຊົນເຜົ່າສີລາ ມັກກິນເຂົ້າຈ້າວ ໂດຍເອົານ້ຳຮ້ອນລວກແລ້ວໜຶ້ງໃສ່ໄຫ, ມັກກິນອາຫານຕ່າງໆ ຄື: ແກ່ງ, ຂ້ໍ, ເອາະ, , ປີ້ງ ແລະໝົກ ທີ່ມີລົດຊາດພໍດີ ແຕ່ສ່ວນພວກຢູ່ ນ້ຳທາ ມັກກິນລາບດິບ , ເລືອດດິບ ທີ່ມີລົດຊາດເຜັດ ແລະເຄັມ, ດື່ມນ້ຳດິບເວລາໄປອອກແຮງງານ, ດື່ມນ້ຳຕົ້ມເວລາຢູ່ເຮືອນ, ນິຍົມດື່ມເຫຼົ້າເດັດ, ເຫຼົ້າສັ່ງ, ດື່ມນ້ຳຊາ, ຄ້ຽວໝາກ, ສູບຢາດ້ວຍກອກ ແລະພັນດ້ວຍໃບຕອງກ້ວຍ, ກິນຝີ່ນ. ບໍ່ມີການຄະລຳໃນເວລາດື່ມເຫຼົ້າ ແລະແຂກນອນແວ່ຢາມ ໃຫ້ດື່ມເຫຼົ້າ 5-8 ຈອກລຸ່ນຕິດຈ່ຳຄ່ອຍກິນເຂົ້າ ແລະອັດທ້າຍດ້ວຍເຫຼົ້າ 5 ຈອກ.

ໃນສັງຄົມຂອງຊົນເຜົ່າສີລາ ມີສາຍຕະກຸນລັກສະນະຄອບຄົວທີ່ຫຼາກຫຼາຍ. ສະເພາະພວກຢູ່ເມືອງ ຍອດອູ ປະກອບມີສີ່ງລາວເຈ້ົາ, ລາວລີ, ລາວຊູ... ຍັງມີເຈ້ົາໃຫຍ່ ແລະເຈ້ົານ້ອຍສ່ວນພວກຢູ່ແຂວງ ໜອງນ້ຳທາ ມີສີ່ງເຈ້ົາ, ເຕ້ົາ, ຈ່ຳ ແລະສີ່ງຜຸ. ທັ່ງໝົດເຊ້ືອສາຍຕະກຸນຂອງເຂ້ົາເຈ້ົາ ມີການຄະລຳ ແລະຫ້ຳມກິນຊ້ີນແມວ. ສຳພັນທະພາບ, ຄວາມສາມັກຄີ ແລະການຊ່ວຍເຫຼ້ືອເຊ່ີງກັນ ແລະກັນ ສະມາຊ້ິກຂອງສາຍຕະກຸນເປັນໄປຢ່າງສະໜ້ິດສະໜົມ ແລະແໜ້ນແກ່ນທ້ີສຸດ. ຜູ້ເປັນຫ້ົວໜ້າຂອງສາຍຕະກຸນ ຕ້ອງແມ່ນຜູ້ຊາຍທ້ີມີອາຍຸສູງ ແລະ ມີບົດບາດອ້ິດທ້ີພົນ ໂດຍສະເພາະແມ່ນການໄກ່ເກ່ຍ ຫຼ ພ້ິຈາລະນາບັນຫາການຮ້ອງຟ້ອງຕ່າງໆ ຂອງສະມາຊ້ິກພາຍໃນຕະກຸນ. ບໍ່ສະເພາະແຕ່ເທ້ົານ້ັນ ເຂ້ົາເຈ້ົາຍັງເຄ້ົາລົບນັບຖ້ືຜູ້ທ້ີມີບົດບາດໃນການເຮ້ັດພ້ິທ້ີກຳ ທ້ີກ່ຽວຂ້ອງເລ້ືອງຜ້ີຕ່າງໆ ເປັນຕ້ົນມ້ີໝໍ່ຢາພ້ືນເມ້ືອງ, ໝໍ່ດູ, ໝໍ່ຜ້ີ ແລະອ້ືນໆ .

ຊົນເຜົ່າສີລາ ຢູ່ລະຫວ່າງ 2 ແຂວງ ກ່ໍມ້ີປະເພນ້ີໃນການແຕ່ງດອງແຕກຕ່າງກັນເຊ່ັນ : ພວກຢູ່ ຜ້ີງສາລ ຜູ້ຊາຍເມ້ືອຮອດກະສຽນສ້ຳງຄອບຄົວແລ້ວ ກ່ໍໄປລົມສາວຍາມກາງຄ້ືນ, ໃຊ້ມ້ືເບ້ືອງໜ້ຶ່ງຈ້ກ ແລ້ວຈ້ບແຂນຜູ້ສາວ ທ້ັ່ງລົມດ້ວຍສ່ຽງຄ່ອຍໆ ກ່ຽວກ້ບບ້ນຫາຄວາມມ້ກຮ້ກ ກ່ໍລະນ້ຍ້ິງສາວຫ້ากມ້ກຮ້ກ ກ່ໍອະນຸຍາດໃຫ້ບ່າວຄົນນ້ັນເຂ້ົ້ານອນເທ້ືອທ່ຳອ້ິດຮອດໄກ່ຂ້ັນເທ້ືອທ້ີ 1 ແລະນອນເທ້ືອໃດກ່ໍຮອດໄກ່ຂ້ັນເທ້ົານ້ັນ ຫ້ືຮອດແຈ້ງຊ່ຳໃດໜ້ຶ່ງ. ເມ້ືອຄູ່ບ່າວສາວມ້ກຮ້ກກ້ນ ໃນລະດ້ບສູງແລ້ວ. ບ່າວຄົນນ້ັນກ່ໍບອກກ້ບອ້າຍເຂ້ຍກ່ືກວ່າຕ້ົນເອ ໄດ້ມ້ກຮ້ກກ້ບສາວຄົນໃດໜ້ຶ່ງ, ບ່າວສາວກ່ໍຊອກມ້ືສ້ນວ້ນດ້ີ, ເອ້ົາເຫ້ົ້າ 1 ແກ້ວ ໃຫ້ອ້າຍເຂ້ຍເພ້ືອທາບທາມພ່ໍແມ່ຂອງເຈ້ົາສາວ. ເຈ້ົ້າບ່າວເອ້ົາເຫ້ົ້າໃຫ້ອ້າຍເຂ້ຍ ມອບໃຫ້ພ່ໍແມ່ຂອງເຈ້ົາສາວ, ເທ້ືອລະແກ້ວ, ຮອດເທ້ືອທ້ີສາມພ່ໍແມ່ຕ້ອນຮ້ບດ້ວຍຈອກເຫ້ົ້າ ແລະຂ້ຳໄກ່ສູ່ກ້ນ. ຖ້ດຈາກນ້ັນພ່ໍແມ່ເຈ້ົາສາວກ່ໍຕອບວ່າ ແຕ່ມ້ືນ້ ້ຮອດມ້ືແຕ່ງງານໄວສຸດ 1 ເດ້ືອນ, ຊ້ຳສຸດ 2 ປ ແລະກ່ໍກະກຽມເຄ້ືອງຂອງບາງຢ່າງຄ້ື:ເຂ້ົ້າສານ 100 ກ້ໂລ, ເຫ້ົ້າ 100 ລ້ດ, ໝູ 100 ກ້ໂລ 1 ໂຕ, ຄວາຍ 1 ໂຕ, ໄກ່ຜ້ ແລະໄກ່ແມ່ຢ່າງ ລະ 1 ໂຕ, ຜ້ກນາໆ ຊະນ້ດ, ເກ້ືອ, ຜ້ກຫອມ, ເຂ້ົ້າໜ້ມໝາກໄມ້ ແລະຢາສູບເປັນຈ່ຳນວນບໍ່ນ້ອຍ.

ພາຍຫ້ັງກະກຽມວ້ດຖຸປ້ດໃຈແລ້ວ, ເຈ້ົ້າບ່າວໄປລ້ກເອ້ົາເຈ້ົາສາວເອ້ົາໄວ້ຢູ່ຕູບ ຫ້ືຖ້ຽງໄຮ່ກ່ຳນ້ດ 1 ວ້ນ. ຮອດ 6 ໂມງແລງເຈ້ົ້າບ່າວກ່ໍຊວນເຈ້ົ້າສາວເມ້ືອເຮ້ືອນຂອງຕ້ົນ. ເວລາຮອດເຮ້ືອນກ່ໍຂ້ຳໄກ່ເຊ້ນພ້ີ່ນ້ອງຂ້ັນຈ່ຳມາສູ່ຂວ້ນ. ໝໍພອນເອ້ົາໄຂ່ທ້ີຕ້ົມສຸກ 1 ໜ່ວຍປ້ນກ້ບເຂ້ົ້າໜ້ຽວ, ແບ່ງເຄ້ົ່ງ, ເບ້ືອງຂວາໃຫ້ເຈ້ົ້າບ່າວ, ເບ້ືອງຊ້າຍໃຫ້ເຈ້ົ້າສາວ ໂດຍໄຂ່ວແຂນຂອງເຈ້ົ້າບ່າວ ແລະເຈ້ົ້າສາວ ແລະກ່ໍເຊ້ນແຂກທ້ີ່ມາຮ່ວມຮ້ບປະທານອາຫານ ແລະດ້ືມເຫ້ົ້າຊຸມແຊວ.

ຖ້າມ້ເ້ືອນໄຂກ່ໍແຕ່ງດອງມ້ືທ້ີ 2 ຖ້າບ່ໍມ້ເ້ືອນໄຂໄວສຸດ 1 ປ ແລະຊ້ຳສຸດ 5 ປ ຈ້ຶ່ງຄ່ອຍແຕ່ງດອງ. ກ່ໍລະນ້ມ້ເ້ືອນໄຂ, ຕອນເຊ້ົ້າກ່ໍໃຫ້ຂ້ຳໝູ, ຄວາຍ, ໄກ່ ແຕ່ງກ່ນເຊ້ນພ້ີ່ນ້ອງ ແລະແຂກຄ້ນມາຮ່ວມງານດອງ. ໃນພາເຂ້ົ້າໜ້ຶ່ງຕ້ອງມ້ອາຫານ 30 ເຍ້ືອງ ເພ້ືອໃຫ້ແຂກຄ້ນໄດ້ກ່ນໄດ້ ດ້ືມແລ້ວ ກ່ໍມອບຄ່ຳດອງໃຫ້ພ່ໍແມ່ຂອງເຈ້ົ້າສາວດ້ວຍເງ່ນ 6-12 ໝ້ນ.



ຕາດກວາງຊີ (ຫລວງພະບາງ)

ສ່ວນຊົນເຜົ່າສີລາ ຢູ່ຫຼວງນ້ຳທາ ເມື່ອຜູ້ຊາຍຮອດກະສຽນສ້າງຄອບຄົວແລ້ວ ກໍ່ໄປລົມສາວໂດຍຈົກໃນສ້ວມທັງລົມດ້ວຍສຽງຄ່ອຍໆ ຫຼາຍເທື່ອ. ຖ້າຫາກມັກຮັກກໍ່ສະເໜີພໍ່ແມ່ຂອງຕົນວ່າໄດ້ມັກຮັກກັບສາວໃດໜຶ່ງ, ຖ້າພໍ່ແມ່ເຫັນດີກໍ່ແຕ່ງພີ່ນ້ອງຊັ້ນຈຳ 1 ຄົນໄປຫາບຫາມພໍ່ແມ່ເຈົ້າສາວ. ຖ້າຕົກລົງເຫັນດີທັງສອງຝ່າຍກະກຽມວັດຖຸປັດໄຈ ແລະກໍ່ຊອກມື້ສັນວັນດີແຕ່ງດອງໃຫ້ລູກຂອງຕົນ.

ຊອກມື້ສັນວັນດີແລ້ວ ຝ່າຍເຈົ້າບ່າວແຕ່ງພີ່ນ້ອງຂອງຕົນ 1 ຄົນໄປຂໍເອົາໄພ້ນຳພໍ່ແມ່ ຂອງເຈົ້າສາວ ຈັບລູກສາວຢ່າງອອກປະຕູ ມອບໃຫ້ໝູ່ຄູ່ຍິງສາວຈຳນວນ 10 ຄົນ ເພື່ອພາໄພ້ໃໝ່ໄປລ້ຽ່ປ່າ 1 ວັນ 1 ຄືນ. ຝ່າຍເຈົ້າບ່າວກໍ່ຕົ້ມໄກ່ສຸກໄປສົ່ງໃຫ້ພວກລ້ຽ່ປ່າ.ຮອດ 6ໂມງ ແລງຝ່າຍເຈົ້າບ່າວຂ້າໝູຄົວຮຽບຮ້ອຍແລ້ວ. ພວກແມ່ຍິງທີ່ໄປລ້ຽ່ປ່າກັບມາເຮືອນເຈົ້າບ່າວຢູ່ນອກ ລໍຖ້າຂອງກິນສຸກຈຶ່ງເອົາໄພ້ຂຶ້ນເຮືອນ. ຊ່ວງໄລຍະນັ້ນຝ່າຍເຈົ້າບ່າວໄປຂໍຄວາມເຫັນນຳພໍ່ຕາແມ່ນາຍ ເພື່ອວາງແຜນແຕ່ງດອງໃນມື້ນັ້ນ ເປັນຕົ້ນຝ່າຍເຈົ້າບ່າວ ໄປຂໍຄວາມເຫັນນຳພໍ່ແມ່ເຈົ້າສາວ 3 ເທື່ອ ໃນແຕ່ລະເທື່ອນັ້ນຕ້ອງເອົາເຫຼົ້າ 1 ແກ້ວ.

ເມື່ອຕົກລົງມື້ແຕ່ງດອງແລ້ວ ທັງສອງຝ່າຍເລົ່າໃຫ້ຄົນໝົດບ້ານຮັບຮູ້ວ່າລູກຊາຍ ແລະລູກສາວຂອງຕົນຈະແຕ່ງດອງໃນມື້ໃດໜຶ່ງ. ເວລາ 5 ໂມງເຊົ້າຂອງມື້ແຕ່ງດອງ, ຝ່າຍເຈົ້າສາວ ແລະເຈົ້າບ່າວກໍ່ຂ້າໝູໃຫຍ່ຝ່າຍລະ1ໂຕ ແບ່ງຊີ້ນຝ່າຍລະເທື່ອງແລ້ວກໍ່ດຳເນີນແຕ່ງຢູ່ຄົວກິນ, ເຊີນຊາວບ້ານມາຮັບປະທານອາຫານ . ພາຍຫຼັງຮັບປະທານອາຫານ ແລ້ວ ພໍ່ແມ່ຂອງເຈົ້າສາວໄປນຳເອົາຄ່າຫົວ, ເທື່ອທີ1 ຄ່າຜີເຮືອນ 3 ບີ້, ເທື່ອທີ 2 ຄ່ານ້ຳນົມແມ່ 5 ບີ້, ເທື່ອທີ 3 ເງິນຄ່າຫົວ 5 ໝັ່ນ, ເທື່ອທີ 4 ເງິນຄ່າຫົວອີກ 6 ໝັ່ນ. ການກິນດອງໄດ້ດຳເນີນ 3 ວັນ 4 ຄືນ ແລະພາຍຫຼັງສຳເລັດການແຕ່ງດອງແລ້ວ ກໍ່ເອົາໄພ້ເມືອຢູ່ເຮືອນຂອງຕົນຕະຫຼອດໄປ.

ປະເພນີການເກີດລູກ ຂອງຊົນເຜົ່າສີລາ ຢູ່ສອງແຂວງ ກໍ່ແຕກຕ່າງກັນ ເປັນຕົ້ນຊົນເຜົ່າສີລາຢູ່ເຂດຍອດອູ ຊ່ວງໄລຍະຖືພາແມ່ນບໍ່ໄດ້ພັກວຽກ ທັງບໍ່ໄດ້ຄະລຳອາຫານ ແຕ່ສ່ວນສີລາຢູ່ເຂດ ນ້ຳທາ ບໍ່ໄດ້ພັກວຽກ ແຕ່ບໍ່ໃຫ້ເຮັດວຽກງານໜັກ ແລະບໍ່ເດີນທາງໄກ ໄລຍະຖືພາຜູ້ເປັນຜົວ ກໍ່ຕ້ອງກະກຽມເຄື່ອງນຸ່ງຫົ່ມໃຫ້ແມ່ຍິງ ທີ່ຈະເກີດລູກ ແລະເດັກທີ່ຈະເກີດໃໝ່, ກະກຽມອາຫານຄືປາ ແລະໄກ່, ເມື່ອຮູ້ສຶກຕົນເອງຈະເກີດລູກ ກໍ່ລາຍງານໃຫ້ຜູ້ເປັນແມ່ຂອງຕົນ ຫຼືແມ່ຂອງຜົວ ແລະຜົວຂອງຕົນ ເພື່ອຈະຊ່ວຍໃນເວລາເກີດລູກ ສະຖານທີ່ເກີດລູກຢູ່ຕົນບ່ອນນອນຂອງຄູ່ຜົວເມຍນັ້ນເອງ.

ເກີດລູກແລ້ວຢູ່ກຳດ້ວຍໄຟ, ດື່ມນ້ຳ ແລະອາບນ້ຳຮ້ອນ 30 ວັນ ບໍ່ໃຫ້ກິນຊີ້ນໄກ່ຂາວ, ໝູດ່ອນ, ຄວາຍດ່ອນ ແລະງົວຈົນຮອດມື້ທີ31 ຈຶ່ງກິນອາຫານຄືຜ່ານມາ.

ເມື່ອເດັກເກີດໄດ້ 3 ວັນ ເພິ່ນຈັດພິທີໃສ່ຊື່ລູກດ້ວຍການຂ້າໄກ່ 2 ໂຕ ແລະໝູ 3 ກຳ 1 ໂຕ, ໂດຍເຊີນພວກເຖົ້າແກ່ອາວຸໂສມາສູ່ຂວັນ ເພື່ອເປັນສັກຂີພິຍານ. ການໃສ່ຊື່ລູກບໍ່ໄດ້ໃສ່ຕາມຕະກຸນ ແຕ່ມີລັກສະນະບົ່ງບອກຖ້າແມ່ນຜູ້ຊາຍເອົາ

ຄຳສັບ 1 ຈາ ອອກໜ້າຄື : ຈາຊິ, ຈາຊິ, ຈາຍິ ແລະແມ່ຍິງເອົາຄຳສັບທີ່ວ່າ " ໂກ "ອອກໜ້າຄື : ໂກສິ, ໂກຊິ, ໂກອຽບ ແລະອື່ນໆ. ແຕ່ສ່ວນຊົນເຜົ່າສີລາ ຢູ່ເຂດນ້ຳທາ ສະຖານທີ່ເກີດລູກ ແມ່ນຢູ່ບ່ອນນອນຢູ່ກຳ 13 ວັນ, ຄືນຢູ່ເຕົາໄຟ. ໃນເວລາເກີດລູກໄດ້ມີແມ່ເຖົ້າ 1 ຄົນເປັນຜູ້ຊ່ວຍ ແລະເບິ່ງແຍງໃນຍາມຍິງຄົນນັ້ນເກີດລູກ.

ເກີດລູກແລ້ວຮອດມື້ທີ່ 2 ເພິ່ນຊອກໂຕກະປູ 1 ໂຕ ໃສ່ບັ້ງໄມ້ຫົກໃສ່ສາຍບື, ໃສ່ຂີ້ເຖົ່າ ແລະອັດປາກບັ້ງໄມ້ຮົກໃຫ້ແໜ້ນ ດ້ວຍການເອົາກາບໄມ້ຫົກປົກປາກບັ້ງໄມ້ ໂດຍມັດເປັນຢ່າງດີ ແຕ່ຖ້າລູກຊາຍຕ້ອງເອົາທອກ 9 ເສັ້ນ, ຍອດໄມ້ 9 ຍອດ ແລະສູກຍິງ 7 ເສັ້ນ, ມັດບັ້ງໄມ້ໄຜ່ແລ້ວ ແມ່ອູ້ມລູກນ້ອຍມານັ່ງຢູ່ປະຕູເຮືອນ ແລະໃຫ້ແມ່ເຖົ້າຄົນໜຶ່ງມາຕັ້ງຊື່ລູກ.

ຢູ່ກຳໄດ້ 13 ວັນ, ຄືນແລ້ວ ກໍ່ເຂົ້ານອນຢູ່ບ່ອນນອນເໝືອນເດີມ ໃຫ້ຜູ້ເປັນເດັກນ້ອຍ ເອົາໄຂ່ໄກ່ໜ່ວຍໜຶ່ງຕົ້ມສຸກສູ່ຂວນໃຫ້ເດັກນ້ອຍເກີດໃໝ່. ຮອດມື້ທີ 30 ກໍ່ຂ້າໄກ່ຕົ້ມສຸກ ຫາໝໍກິ່ງສູ່ຂວັນເດັກນ້ອຍຄົນນັ້ນໆ.

ປະເພນີປິ່ງສິບສິ່ງສະການ :

ສຳລັບຊົນເຜົ່າສີລາ ຢູ່ເຂດໜອງນ້ຳທາ ເມື່ອຄົນຢູ່ໃນເຮືອນຫາກມີຄົນເຈັບເປັນ ກໍ່ດຳເນີນການປິ່ນປົວດ້ວຍຢາພື້ນເມືອງ, ປົວແປງຮີດຄອງຕາມການບອກເລົ່າຂອງໝໍດູ ແຕ່ຖ້າຫາກຄົນຜູ້ນັ້ນເສຍຊີວິດ ໃນກໍລະນີຄົນເຖົ້າແກ່ ແມ່ນຜູ້ຊາຍກໍ່ດຳເນີນການຄົບງັນຢູ່ເຮືອນ 9 ວັນຄືນ ແຕ່ກໍລະນີຄົນເຖົ້າແກ່ ແມ່ນແມ່ຍິງກໍ່ຄົບງັນຢູ່ເຮືອນ 7 ວັນຄືນ ແລະໃນແຕ່ລະວັນນັ້ນ ຕ້ອງຂ້າສັດຊະນິດຕ່າງໆ ຕາມລຳດັບຄື : ມື້ທີ 1 ຕ້ອງຂ້າໝາ, ໝູ ແລະໄກ່ ແນວລະ 1 ໂຕ ມື້ທີ 2 ກໍ່ຂ້າໝູ 1 ໂຕ ສ່ວນມື້ທີ 3 ຫາມື້ທີ 7 ຂ້າງ່ວມື້ລະ 1 ໂຕ, ມື້ທີ 8 ຂ້າຄວາຍ 1 ໂຕ ແລະມື້ທີ 9 ບໍ່ໄດ້ຂ້າສັດຫຍັງ ເວລາຄົບງັນນັ້ນ ເພິ່ນຕັດໄມ້ໃຫຍ່ເຮັດໂລງ ແລະກໍ່ເອົາສິບເຂົ້າໂລງ, ເອົາເຊືອກມັດໃຫ້ແໜ້ນເອົາຂີ້ຕົມຫາແຄມໂລງ ເພື່ອຮັກສາບໍ່ໃຫ້ກິ່ນເໝັນສິ່ງອອກນອກ ແລະຮອດມື້ທີ 9 ກໍ່ເອົາສິບໄປຖິ້ມ.

ສ່ວນຊົນເຜົ່າສີລາ ຢູ່ເຂດເມືອງ ຍອດອູ, ໃນເມືອຄົນຢູ່ເຮືອນເກີດມີການເຈັບເປັນກໍ່ດຳເນີນການປິ່ນປົວດ້ວຍຢາພື້ນເມືອງ ຫຼືຢາໜອງ. ຈາກນັ້ນໄດ້ເຊີນໝໍດູ ເພື່ອສູດອາການຂອງຄົນເຈັບ ດ້ວຍວິທີເອົາໄຂ່ໄກ່ດຳປອດໜ່ວຍໜຶ່ງສ່ຽງແລ້ວ ເອົາເຂົ້າສານ ແລະເງິນທໍ່ໄຂ່ໜ່ວຍນັ້ນ. ຖ້າຫາກໝໍດູວ່າ ຕ້ອງປົວແປງຜີໃດ ກໍ່ປົວແປງຜີນັ້ນ ໂດຍການຂ້າໄກ່ຜູ້, ໄກ່ແມ່ແນວລະໂຕ ຕົ້ມສຸກແລ້ວຖວາຍຜີນັ້ນກິນຊົ່ວໄລຍະໜຶ່ງ ຫຼັງຈາກນັ້ນຄົນຈຶ່ງເອົາຊິ້ນໄກ່ດັ່ງກ່າວມາກິນຢູ່ໃນປ່າ ທັ້ງເບິ່ງຂາໄກ່ນັ້ນ ວ່າຄົນເຈັບຊິດີບໍ່ ແລະການປິ່ນປົວດ້ວຍຮີດຄອງສູງສຸດ ແມ່ນຂ້າໝູ.

ເມື່ອຄົນຜູ້ນັ້ນເສຍຊີວິດກໍ່ໄປຕັດໄມ້ຍຸງ ຢູ່ປ່າເຈາະເຮັດໂລງ ແລ້ວເອົາສິບໃສ່ໂລງດອຍໄວ້ຢູ່ກາງເຮືອນ ແລະກໍ່ດຳເນີນການຄົບງັນໄວສຸດ 1 ວັນຄືນ ຊ່ວງໄລຍະນັ້ນພວກຜູ້ຄົນໃນເຮືອນ ກໍ່ເອົາຜ້າຂາວປົກຫົວ ແລ້ວກໍ່ຂ້າໄກ່ ແລະໝູ ເພື່ອບໍລິການໃຫ້ແຂກຄົນທີ່ມາຄົບງັນ.

ຮອດມື້ຈະສົ່ງສະການ, ໄດ້ແຕ່ງຄົນຈຳ
ນວນໜຶ່ງໄປຂອກຫາບ່ອນຈະຝັ່ງສົບ ໂດຍການ
ສ່ຽງເບິ່ງດ້ວຍການແກ່ວງໄຂ່ໄກ່ ຖ້າແຕກບ່ອນ
ໃດກໍ່ຂຸດຂຸມບ່ອນນັ້ນ ຂຸດຂຸມໃຫ້ເລິກ 50 ຊັ່ງຕີ
ແມັດ, ຂຸດຂຸມແລ້ວ ກໍ່ກັບມາເຮືອນເອົາໂລງສົບໃຫ້
4 ຄົນຫາມ ໂດຍເອົາຫົວໄປກ່ອນ ແລະພວກທີ່ໄປ
ສົ່ງສະການຢ່າງຕາມໆກັນ.

ຮອດປ່າຊ້າ, ເຂີຍກິກຕັດເຊືອກທີ່ຫາມ
ໂລງສົບແລ້ວກໍ່ເອົາລົງຂຸມ, ເຂີຍກິກເອົາດິນຖົມ
ປາກຂຸມ ແລ້ວພວກທີ່ໄປສົ່ງສະການຖົມຕາມໆ
ກັນ. ຖ້າບໍ່ມີເຂີຍ ແມ່ນພີ່ນ້ອງຊັ້ນຈຳ ທາງສາຍພໍ່
ເປັນຜູ້ເອົາໂລງສົບລົງຂຸມ ແລະຖົມຂຸມຝັ່ງສົບກ່ອນ
ໝູ່. ຊົນເຜົ່າສີລາ ຖ້າແມ່ນເຮືອນຫຼັງດຽວເສຍຊີວິດ
ບໍ່ໄດ້ຝັ່ງໃນຂຸມດຽວ.

ພາຍຫຼັງຖົມຂຸມຝັ່ງສົບແລ້ວ, ຜູ້ເປັນເຈົ້າ
ພິກໍ່ຮຽກຂວັນຜູ້ໄປສົ່ງສະການ ແລະຂວັນຂອງຕົນ
ເອງ ໃຫ້ເມືອເຮືອນຂອງໃຜລາວ ແລ້ວຈຶ່ງຄ່ອຍຍ່າງ
ເມືອຕາມແຖວຍາວ ແລະຍ່າງເມືອໃກ້ຈະຮອດ
ບ້ານ 150 ແມັດ ກໍ່ທັກຟົດໄມ້ດິບໄວ້ກາງທາງ
ເພື່ອເປັນສັນຍາລັກ ບໍ່ໃຫ້ຜີເມືອບ້ານ.

ເມືອເວລາຍ່າງຮອດເຮືອນ ຂອງຜູ້ເສຍຊີ
ວິດນັ້ນແລ້ວ ກໍ່ເອົານ້ຳຮ້ອນລ້າງມື, ພາກັນກິນເຂົ້າ
ຊໍ່ວໄລຍະໜຶ່ງແລະ ຜູ້ເປັນເຖົ້າແກ່ອາວຸໂສເຍັ້ນ
ເຫຼົ້າ ເພື່ອເສຍເຄາະໃຫ້ຜີ.ນັບແຕ່ຜົວ ຫຼືເມຍເສຍ
ຊີວິດຄົບຮອບ 3 ປີ ຂຶ້ນໄປ ຈຶ່ງມີສິດສ້າງຄອບຄົວ
ແລະເມືອເຮືອນຂອງຕົນເອງ ໄດ້.

ການດຳເນີນຊີວິດທາງເສດຖະກິດ ຂອງ
ຊົນເຜົ່າສີລາ ຢູ່ເມືອງຍອດອູ ແຂວງ ຜົ້ງສາລີ
ແລະເມືອງນ້ຳທາ ແຂວງ ຫຼວງນ້ຳທາ ເຫັນວ່າມີ
ຄວາມຄ້າຍຄືກັນເປັນຕົ້ນເຂົາເຈົ້າໄດ້ເຮັດໄຮ່ຂຸດ,
ໄຮ່ໄຖປູກເຂົ້າຈ້າວຕົ້ນຕໍ ແລະເຂົ້າໜຽວເປັນສຳ
ຮອງ. ພ້ອມກັນນີ້ກໍ່ລ້ຽງສັດປະເພດຕ່າງໆ ຄື : ງົວ,
ຄວາຍ, ໝູ, ໝາ ແລະສັດປີກ ເພື່ອເປັນອາຫານ
ແລະໃຊ້ເປັນແຮງງານລາກແກ່. ຜູ້ຊາຍຊົນເຜົ່າສີ
ລາມີມູນເຊື້ອຊຳນິຊຳນານ ໃນວິຊາຕີເຫຼັກ, ວິຊາ
ຫັດຖະກຳຈັກສານ, ເຮັດໂຕະຕັ່ງ ແລະເຄື່ອງໃຊ້ໃນ
ຄອບຄົວ ສ່ວນແມ່ຍິງມີຄວາມລະອຽດອ່ອນໃນການ
ຫຍິບປັກທັກແສ່ວເຄື່ອງນຸ່ງຫົ່ມທີ່ມີສີສັນລວດລາຍ
ແລະຖືວ່າເອກະລັກຂອງເຂົາເຈົ້າເອງ. ແຕ່ສ່ວນຊົນ
ເຜົ່າສີລາ ຢູ່ແຂວງຫຼວງນ້ຳທາ ເສດຖະກິດຕົ້ນຕໍ
ຂອງເຂົາເຈົ້າ ແມ່ນເຮັດໄຮ່ປູກເຂົ້າຈ້າວ, ປູກຝ້າ,
ສາລີ, ຖົ່ວເຫຼືອງ, ຖົ່ວດິນ ແລະເສດຖະກິດສຳຮອງ
ຂອງເຂົາເຈົ້າ ແມ່ນການລ້ຽງສັດປະເພດຕ່າງໆ ຄື
: ໝູ, ໄກ່, ງົວ, ໝາເພື່ອເປັນອາຫານ ແລະຂາຍ
ເພື່ອຊື້ເຄື່ອງໃຊ້ໃນຄອບຄົວພ້ອມທັງລ້ຽງມ້າໄວ້
ຕ່າງເຄື່ອງຂອງ ແລະຂີ່. ພ້ອມກັນນັ້ນສິນຄ້າຕົ້ນຕໍ
ຂອງເຂົາເຈົ້າແມ່ນເກືອ ແລະຝ້າ.

ບັນດາເອກະລັກ ຂອງຊົນເຜົ່າສີລາ ຢູ່
ເມືອງ ຍອດອູ ແຂວງ ຜົ້ງສາລີ ແລະເມືອງ ນ້ຳທາ
ແຂວງ ຫຼວງນ້ຳທາ ເຫັນວ່າມີຫຼາຍດ້ານໄດ້ມີຄວາມ
ແຕກຕ່າງກັນ ແມ່ນປະຫວັດຄວາມເປັນມາ ແຫ່ງ
ການເຄື່ອນຍ້າຍ ແລະຄວາມຕື່ນຕົວໃນການເປັນ
ຊົນເຜົ່າຂອງຕົນເອງ ແລະໃຜກໍ່ໄດ້ຂະໜານນາມ
ຕົນເອງ ແມ່ນຊົນເຜົ່າສີລາທັ້ງນັ້ນ.

Sila

Historical Background:

The Sila once lived near the Great Wall of China. Due to a long period of warring, the Sila then migrated down through Sana Kungming and Yunnan before finally settling in the northern area of Laos.

According to a Sila legend there were two groups of Sila: one rich and one poor. The rich traveled by horses helping them move much faster and further from the poor ones who traveled by foot. Finally, the group of rich Sila settled in Luangnamtha province of Laos. This left behind the poor group who finally settled in the head of the Ou river area of Phongsali province of Laos

It is believed the Sila have been living in Laos for more than 200 years. Aside from Laos there are some in Nuichao province of Vietnam and the southern part of China.

Sila total population in Laos is about 1,772 people, and 882 are women. There are 436 Sila in Luangnamtha province and 223 are women. This is based on the second population census of 1995.

Name and language:

There are many different names given to this group. For those who are living in the Ou river area, they are called the Beumsu, Veryer, or Yertheua. For those living in Luangnamtha, initially they were called the Seng, which later changed to Sila. Today the preferable and official name is "Sila".

Their language belongs to the Sino-Tibetan language group. Sila language is quite similar to Akha, Hayii, and Lolo languages. The Sila also speak Chinese, Hor, Lui and Nhoung languages. Chinese is often used to speak to other ethnic groups of the region.

Beliefs, society, ceremonies and myths:

The Sila, like other ethnic groups in Laos, practice animism and worship the spirits of their ancestors. They also respect and believe in guardian spirits of parents, the heavens, nature, and spirits of the households. The Sila also have a shaman that is called a mu phe. His role is to administer religious activities such as sacrifices to agricultural spirits and funerals.

The Sila will worship the spirits of their ancestors twice a year; during the Chinese New Year and the rice-planting season. They will offer meat, rice, whiskey, and other offerings.

The head of a village is the eldest man who is thought best able to solve and arbitrate all possible problems occurring in the village community.

In terms of courting, if a young man and a woman are interested in each other, they will begin the courting process. When the couple believes their love is deep, the man will talk to her parents. He and his brother-in-law will then visit the girl's parents. They will visit two to three times, offering rice wine as a gift to the girl's

parents. If all goes well, then a wedding date will be set. This could be anywhere from one month to two years later. After this, the girl's parents would announce that the wedding ceremony would be held in one month at the earliest or two years at the latest. Thing such as rice, rice wine, a pig and buffalo, and other similar things are gathered for the future wedding party

Once all things have been arranged and prepared, a ceremony will be held with family and friends in attendance. Chicken would be offered to guests. For the couple, the shaman will give an egg mixed with sticky rice to the groom and bride, one half given to the groom by his right hand and another half to the bride by his left hand. Then the couple will cross hands, and they are declared married. Then, guests would be invited to enjoy food and drink.

If conditions are favorable then later a larger, more formal wedding will be held later. A large feast will be held, with up to 30 different dishes and drinks offered. The groom will give the parent's of the bride six to twelve old French silver coins.

When a wife is pregnant, her husband will help her prepare for the future birth. He will help prepare clothes for the newborn, and gather food. When the time of birth is near, she will inform her mother or her mother in law for assistance. Birth takes place near the couple's bed. After giving birth the mother and newborn has to stay near the fireplace for thirty days. They will rest and bathe with hot water. Certain prohibitions for the mother are that she cannot eat meat from animals that are the color white, such as a white chicken or a white buffalo. After thirty days have passed, she may resume normal eating habits.

The newborn baby will be given a name after three days of his or her birth. Chickens and one small pig will be prepared for food to offer elderly guests who come to witness the baby's naming. For a boy the word "Cha" will be put in front if his given name, for instance "Chasee" or " Chasi ". For a girl the word "Ko" will be used instead, for example "Kosii", "Kohiev" and so on.

When someone dies, the body of the deceased will be kept a home for a time of worship for a few days. Then the body will be placed in a hardwood coffin and buried in a graveyard. After the funeral, the shaman will call back the spirits of the people who attended the funeral, plus the spirit of the deceased.

Village and house:

The Sila village is generally located in rugged areas at high altitudes, up to 1500 meters. The villages will contain from ten to fifty houses. Their houses are small and rectangular. If the ground is flat, they will build the house directly on the ground. If the terrain is steep, then they will also use stilts to support the forward part of the house. There is a single door in the front or the back of the house.

There is a large room in the interior for eating and entertaining. Small sleeping areas are separated from this area by woven bamboo walls. The family sleep on small platforms made of wood. The house walls are either wood or woven bamboo. A small hearth is in the center of the main room. The floor is made of pounded earth. There is also a small altar in every house for offering worship to the family ancestors.

Costume:

The women's dress consists of a long-sleeved cotton vest that has many small tin-discs hanging diagonally down the front. Five to ten rows of old silver coins that dates back to the colonial days hang around the waste. The vest is also decorated with embroidered bands of green, black, and red on the sleeves and body of the vest. However, this special vest is only worn on special occasions. Daily wear consists of simpler cotton vests and dark sarongs that may have similar embroidery on it. The women will also wear a white cotton turban that with colored embroidery. They will wrap it completely around their head, covering their hair.

Sila men wear dark blue long-sleeved vests with long wide-legged black trousers.

Agriculture and livelihood:

The Sila cultivate ordinary rice as the major crop with sticky rice as a secondary crop. In addition, they raise cows, buffalos, pigs, dogs, and poultry for food and labor. In addition, horses are raised for transportation. The Sila have traditionally raised poppy flower for opium production, but this is being discouraged today. Sila men are known as good ironsmiths, handicraft-makers, carpenters, and kitchen utensil makers. Sila women are known as fine weavers.

ຊົນເຜົ່າ ລາຫູ ປະຫວັດຄວາມເປັນມາ

ຊົນເຜົ່າລາຫູ ມີຖິ່ນຖານພູມລຳເນົາເດີມ ຢູ່ ທາງທິດຕາເວັນຕົກສ່ຽງໃຕ້ ຂອງປະເທດ ຈີນ, ໄດ້ອົບພະຍົບລົງມາທາງໃຕ້ ແລະຕັ້ງພູມລຳເນົາຢູ່ ບໍລິເວນເຂດແດນ ມຽນມາ - ຈີນ ທາງທິດຕາເວັນຕົກ ຂອງເມືອງ ວ້າ ແລະທິດຕາເວັນອອກຂອງຢູນານ. ຕໍ່ ມາຕົ້ນສະຕະວັດທີ 19 ເຂົາເຈົ້າໄດ້ມາຕັ້ງບ້ານ ເຮືອນຢູ່ແຄວ້ນ ກວາງຕຸງ ຂອງມຽນມາ ແລະ ຮອດ ທ້າຍສະຕະວັດທີ 19 ຊົນເຜົ່ານີ້ໄດ້ເຄື່ອນຍ້າຍລົງ ມາທາງຕອນໃຕ້ອີກ.ໃນຂະນະດຽວກັນນີ້ ກໍ່ມີ ການແຍກກັນໄປຕັ້ງຖິ່ນຖານ ຢູ່ປະເທດ ໄທ, ຫວຽດນາມ ແລະຈຳນວນໜຶ່ງ ກໍ່ເຂົ້າມາຢູ່ບັນດາ ແຂວງພາກເໜືອຂອງລາວເຮົາ.

ປະຈຸບັນຊົນເຜົ່າລາຫູ ດຳລົງຊີວິດ ແລະ ຕັ້ງພູມລຳເນົາ ຢູ່ບັນດາແຂວງພາກເໜືອຂອງລາວ ເຮົາ ເຊັ່ນ: ແຂວງ ຫຼວງນ້ຳທາ ແລະບໍ່ແກ້ວ. ນອກ ຈາກນີ້ແລ້ວຊົນເຜົ່າລາຫູ ຍັງມີຢູ່ພາກໃຕ້ຂອງຈີນ, ມຽນມາ, ຫວຽດນາມ ແລະພາກເໜືອຂອງປະ ເທດໄທ.

ພົນລະເມືອງ ຂອງຊົນນີ້ຢູ່ໃນລາວ ມີທັງ ໝົດ 14.970 ຄົນ, ຍິງ 7.556 ຄົນ ເທົ່າກັບ 0,3 % ຂອງພົນລະເມືອງ ທົ່ວປະເທດ (ຕາມສະຖິຕິການ ສຳຫຼວດພົນລະເມືອງຄັ້ງທີ II ປີ 1995).

ຊື່ເອີ້ນ

ຊົນເຜົ່ານີ້ເອີ້ນຕົນເອງວ່າ: "ລາຫູ" ຊື່ທີ່ ເຂົາມັກກໍ່ແມ່ນ " ລາຫູ " ແຕ່ຊົນເຜົ່າອື່ນເອີ້ນໃຫ້ ເຂົາເຈົ້າວ່າ " ມູເຊ " . ຄຳທີ່ເອີ້ນວ່າ " ມູເຊ " ມີ ຄວາມໝາຍແນວໃດ, ເລີ່ມໃຊ້ເວລາໃດ, ເປັນພາ ສາຂອງຊົນເຜົ່າໃດນັ້ນຍັງບໍ່ທັນຮູ້ຊັດເຈນ. ແຕ່ຄຳ ທີ່ເອີ້ນວ່າ: "ລາຫູ" ນັ້ນມາຈາກຄຳວ່າ : " ລ້າຮູ " ໃນຄວາມໝາຍຂອງພາສາຊົນເຜົ່ານີ້ເອງແປວ່າ "ລ້ຽງເສືອ"(ລ້າແປວ່າເສືອ ແລະຮູ ແປວ່າລ້ຽງ). ແຕ່ຖ້າຈະເອົາຄວາມໝາຍ ທີ່ແທ້ຈິງກໍ່ຄືຜູ້ລ້ຽງເສືອ ນັ້ນເອງ.

ຊົນເຜົ່າລາຫູ ປະກອບດ້ວຍຫຼາຍແຊ ເຊັ່ນ:ລາຫູນະ(ມູເຊຂາວ), ລາຫູຊີ(ມູເຊດຳ) ແລະ ລາຫູເຊແລະ(ມູເຊແດງ ຫຼືກຸ່ຍ).

ພາສາ

ພາສາຂອງຊົນເຜົ່າລາຫູ ຈັດຢູ່ໃນໝວດ ພາສາ ຈີນ - ຕິເບດ, ສາຂາ ຕິເບດ - ມຽນມາ . ເຂົາເຈົ້າບໍ່ມີຕົວໜັງສືຂຽນ. ແຕ່ລະແຊ່ງລາຫູ ຈະ ມີສຽງສຳນຽງໃນການປາກເວົ້າແຕກຕ່າງກັນເລັກ ນ້ອຍ, ແຕ່ໂດຍທົ່ວໄປແລ້ວສຽງຂອງລາຫູ ເປັນ ສຽງສຳນຽງມາດຕະຖານ ທັ້ງເປັນພາສາກາງ ຂອງ ຊົນເຜົ່າລາຫູ ບໍ່ວ່າຈະຢູ່ແຄ້ວນຢູນານ, ມຽນມາ, ໄທ, ລາວ ແລະຫວຽດນາມ.

ຮີດຄອງປະເພນີ, ຄວາມເຊື່ອຖື ແລະວັດທະນະທຳ-ສັງຄົມ

ຊົນເຜົ່າລາຫູ ມີພື້ນຖານຢູ່ທີ່ຄວາມເຊື່ອ ໃນເລື່ອງຜີ, ຜີທີ່ມີອຳນາດທີ່ສຸດໄດ້ແກ່ຜີຟ້າ, ນອກ ຈາກຜີຟ້າແລ້ວ ຍັງເຊື່ອຖືຜີເຮືອນ, ຜີບ້ານ. ຢູ່ແຕ່ ລະເຮືອນຈະມີຮ້ານບູຊາຜີ. ຜີທີ່ໄດ້ເວົ້າມານີ້ ແມ່ນ ຜີດີສຳລັບຊົນເຜົ່າລາຫູ. ແຕ່ກົງກັນຂ້າມສຳລັບຜີ ຮ້າຍ ທີ່ຊົນເຜົ່ານີ້ເກັ່ງກ້ວນັ້ນ ກໍ່ມີຢູ່ຫຼາຍຜີເຊັ່ນ: ຜີ ນ້ຳ, ຜີປ່າ, ຜີໄຮ່, ຜີພູເຂົາ ແລະອື່ນໆ.

ລະບົບຄອບຄົວ, ໂດຍທົ່ວໄປແລ້ວຄອບ ຄົວຂອງຊົນເຜົ່າລາຫູ ປະກອບດ້ວຍພໍ່ແມ່ ແລະ ລູກໆ ທີ່ຍັງໂສດ ຫຼືບາງທີກໍ່ມີລູກສາວ ທີ່ແຕ່ງດອງ ແລ້ວກັບຜົວ ແລະລູກໆຂອງລາວ.ເປັນຮີດຄອງ ຂອງຊົນເຜົ່າລາຫູ ທີ່ລູກສາວກົກຈະຕ້ອງພາຜົວ ຂອງຕົນເຂົ້າມາປະຕິບັດໃນການລ້ຽງດູ ແລະເບິ່ງ ແຍງພໍ່ແມ່ໃນເຮືອນຂອງຕົນຈົນກວ່າຈະມີນ້ອງ ສາວແຕ່ງດອງພາຜົວເຂົ້າມາຮັບພາລະໜ້າທີ່ແທນ ຈຶ່ງສາມາດແຍກອອກໄປຕັ້ງເຮືອນຂອງຕົນເອງ ໄດ້. ຜູ້ຊາຍຊົນເຜົ່າລາຫູ ເມື່ອແຕ່ງດອງແລ້ວ ຈະ ໄປຢູ່ເຮືອນນຳຝ່າຍຍິງ. ໝາຍວ່າຊົນເຜົ່າລາຫູ ບໍ່ ມີການສືບຕະກຸນ, ການນັບເຖິງຍາດພີ່ນ້ອງ ກໍ່ບໍ່ສະ ຫຼັບສັບຊ້ອນຄືຊົນເຜົ່າອື່ນໆ. ເຂົາເຈົ້າມັກເອີ້ນຍາດ ພີ່ນ້ອງວ່າລູກອ້າຍລູກນ້ອງເໝືອນກັນໄປໝົດ, ເຂົາເຈົ້າຈະລົງເລິກຊອກຕຳແໜ່ງຍາດພີ່ນ້ອງ ກໍ່ ຕໍ່ເມື່ອມີຄວາມຈຳເປັນເຊັ່ນ: ເມື່ອຄູ່ບ່າວສາວຈະ

ແຕ່ງດອງກໍ່ຕ້ອງກວດຊອກໄປ ໃຫ້ຮູ້ແຈ້ງວ່າຄູ່ແຕ່ງດອງ ບໍ່ໄດ້ສືບເຊື້ອສາຍມາຈາກປູ່ຍ່າຕາທວດດຽວກັນ ຈຶ່ງສາມາດແຕ່ງດອງນຳກັນໄດ້. ເບິ່ງດ້ານຄວາມສຳພັນທະພາບ ລະຫວ່າງ ຜົວ-ເມຍຂອງຊົນເຜົ່າລາຫູ ແລ້ວຈະພິເສດກວ່າ ຊົນເຜົ່າອື່ນໆ ໂດຍສະເພາະແມ່ນການຊ່ວຍເຫຼືອເມຍຂອງຜົວໃນກິດຈະການເຮືອນຊານບ້ານຊ່ອງ ຍ້ອນມີນິທານເລື່ອງເລົ່າເຖິງສາເຫດທີ່ຜູ້ຊາຍຕ້ອງຊ່ວຍເມຍ.

ຊົນເຜົ່າລາຫູ ມັກຕັ້ງບ້ານເຮືອນຢູ່ບ່ອນທີ່ສູງຕາມສັນພູ ຫຼືເຈ້ຍພູຄວາມສູງແຕ່ 1.000 ມ ເໜືອລະດັບນ້ຳທະເລຂຶ້ນໄປ, ປະຈຸບັນຄ່ອຍໆ ຍ້າຍລົງມາຕ່ຳ. ລັກສະນະຂອງເຮືອນຕາມປະເພນີແລ້ວເຂົາເຈົ້າຈະມັກສ້າງແບບເຮືອນຮ້ານແຜນຜັງເຮືອນ ອາດຈະແຕກຕ່າງກັນໄປຕາມຖານະຄວາມເປັນຢູ່ ແລະຈຳນວນສະມາຊິກຂອງຄອບຄົວ.ໂດຍທົ່ວໄປແລ້ວຈະປະກອບດ້ວຍ 2 ຫ້ອງຂຶ້ນໄປຄື ຈະມີຫ້ອງນອນ, ຫ້ອງຮັບແຂກ ຫຼື ຫ້ອງພັກຜ່ອນ ແລະສະຖານທີ່ແຕ່ງກິນ. ການປຸກເຮືອນແມ່ນບໍ່ເລືອກມື້ເລືອກຍາມ, ປຸກເວລາໃດກໍ່ໄດ້ ຕາມແຕ່ສະພາບຕົວຈິງ, ເວລາປຸກເຮືອນຫ້າມ ບໍ່ໃຫ້ຫຼັງຄາເຮືອນຊ້ຳກັນ ທັງນີ້ກໍ່ຍ້ອນເຂົາເຈົ້າເຊື່ອວ່າຖ້າຫຼັງຄາເຮືອນຊ້ຳກັນຈະເຮັດໃຫ້ຢູ່ບໍ່ສະບາຍ ແລະມັກເຈັບເປັນ. ໃນເວລາຂຶ້ນເຮືອນໃໝ່ເຂົາເຈົ້າຈະມີພິທີທີ່ຄຶກຄື້ນທີ່ສຸດ ເພາະຊົນເຜົ່ານີ້ມີຄວາມເຊື່ອວ່າຍິ່ງຄຶກຄື້ນມ່ວນຊື່ນເທົ່າໃດ ກໍ່ຈະເຮັດໃຫ້ຄອບຄົວອຸດົມສົມບູນຂຶ້ນເທົ່ານັ້ນ ຈຶ່ງມີການຂ້າສັດຕ່າງໆເພື່ອໃຫ້ຍາດຕິພີ່ນ້ອງທີ່ມາຊ່ວຍໃນການແປງເຮືອນ ກິນຕາມຖານະທາງເສດຖະກິດຂອງຄອບຄົວ.

ສຳລັບປະເພນີການເກີດລູກ ຂອງຊົນເຜົ່າລາຫູ, ໄລຍະຕັ້ງຄັນແມ່ຍິງຊົນເຜົ່ານີ້ ບໍ່ມີຂໍ້ຫ້າມໃດໆໃນເລື່ອງອາຫານການກິນຈະກິນຫຍັງ ກໍ່ໄດ້ ຄືກັນກັບເວລາປົກກະຕິ. ການເກີດລູກແມ່ນຢູ່ໃນເຮືອນ ໂດຍຈະມີແມ່ຂອງຕົນ ແລະຜູ້ເປັນຜົວໃຫ້ຄວາມດູແລ ແລະຊ່ວຍເຫຼືອ. ຫຼັງຈາກເກີດລູກ, ຜູ້ເປັນແມ່ຈະຕ້ອງໄດ້ຢູ່ກຳ ແລະມີການຄະລຳອາຫານ ເຊັ່ນ: ບໍ່ກິນຊີ້ນງົວ, ຊີ້ນຄວາຍ, ບໍ່ກິນຊີ້ນໄກ່ດ່ອນ, ບໍ່ກິນອາຫານທີ່ມີລົດສົ້ມ, ເຜັດ ແລະມີກິ່ນແຮງເຫຼົ່ານີ້ເປັນຕົ້ນ. ຄຽງຄູ່ກັນນີ້ກໍ່ຈະມີພິທີການຕັ້ງຊື່ໃຫ້ເດັກເກີດໃໝ່ ໂດຍແມ່ນຜູ້ອາວຸໂສ ຫຼືຜູ້ເຖົ້າຜູ້ແກ່ໃນບ້ານເປັນຜູ້ຕັ້ງໃຫ້. ຊົນເຜົ່າລາຫູທີ່ມີລູກແລ້ວ ມັກຈະບໍ່ມີໃຜເອີ້ນຊື່ເດີມຂອງຕົນເອງໃຫ້ອີກ, ເຂົາເຈົ້າມັກເອົາຊື່ຂອງລູກກົ່ວມາເອີ້ນຊື່ຄືມັກເອີ້ນວ່າ: ພໍ່, ແມ່ຂອງນັ້ນຂອງນີ້.

ການຕາຍ ແລະພິທີສົບຂອງຊົນເຜົ່າລາຫູ,ໃນຄວາມນຶກຄິດຂອງເຂົາເຈົ້າແລ້ວ ເປັນເລື່ອງທຳມະດາ ເພາະມີຄວາມເຊື່ອວ່າ ພາຍຫຼັງຕາຍໄປແລ້ວວິນຍານ ກໍ່ຍັງມາເປັນຜີຢູ່ເຮືອນຕາມເດີມ. ຂັ້ນຕອນ ແລະການເຮັດພິທີກຳຕາມປະເພນີນັ້ນ ຈະມີຄວາມແຕກຕ່າງກັນຕາມໄວອາຍຸກະສຽນຂອງຜູ້ຕາຍ. ສ່ວນການສົ່ງສະການນັ້ນສ່ວນຫຼາຍແລ້ວ ຊົນເຜົ່າລາຫູ ມັກນິຍົມກັນຝັງສົບ.

ງານບຸນປະເພນີ ແລະພິທີກຳຕ່າງໆ , ໃນປີໜຶ່ງໆ ຊົນເຜົ່າລາຫູ ຈະມີຫຼາຍພິທີກຳ ແຕ່ພິທີອັນເປັນຊີວິດຈິດໃຈຂອງວັດທະນະທຳ ແລະສະແດງສີສັນທຸກສິ່ງຢ່າງ ແມ່ນເທດສະການປີໃໝ່ ເຊິ່ງຈະຈັດຂຶ້ນໃນເດືອນ ມັງກອນ-ເດືອນກຸມພາ. ຄຽງຄູ່ກັນນີ້ເຂົາເຈົ້າ ກໍ່ຍັງມີບັນດາພິທີກຳທີ່ພົວພັນເຖິງການຜະລິດ ໂດຍສະເພາະແມ່ນທຸກຂະບວນການຂອງການເຮັດໄຮ່ ຈະມີພິທີກຳເປັນຕົວກຳນົດທຸກ

ຂັ້ນຕອນ ຂອງລະດູການຜະລິດຄື: ພິທີກຳໝາຍໄຮ່ເຂົ້າ, ພິທີກຳເພື່ອຂໍຄວາມປອດໄພ ໃນການຕັດຟັນຕົ້ນໄມ້, ພິທີກຳຈູດເຜົ້າໄຮ່, ພິທີກຳລ້ຽງຜີມອມກ່ອນສັກເຂົ້າໄຮ່, ພິທີກຳປ້ອງກັນສັດຕູພືດ ແລະຂໍໃຫ້ເຂົ້າຈະເລີນງອກງາມ, ພິທີກຳລ້ຽງຜີພໍ່ແມ່ ແລະຜີເຮືອນດ້ວຍຜົນຜະລິດຈາກໄຮ່, ພິທີກຳເກັບກ່ຽວເຂົ້າ ແລະພິທີດຳເພື່ອຂໍຂອບຄຸນສິ່ງສັກສິດທັ້ງຫຼາຍ. ໃນການເຮັດພິທີກຳຕ່າງໆນັ້ນ ໂດຍທົ່ວໄປແລ້ວບ້ານຂອງຊົນເຜົ່າລາຫູ ບໍ່ວ່າຈະເປັນບ້ານໃຫຍ່ ຫຼືບ້ານນ້ອຍ ກໍ່ຈະມີຜູ້ໜຶ່ງນຳພາ ແລະກໍ່ຍັງມີຜູ້ຊ່ວຍອີກ.

ດ້ານສິລະປະວັນນະຄະດີ ຂອງຊົນເຜົ່າລາຫູ ແມ່ນມີເອກະລັກສະເພາະຂອງຕົນ ໂດຍສະເພາະແມ່ນມີບົດຂັບຮ້ອງ, ບົດລຳ, ໂດຍມີ 3 ລັກສະນະຄື: ສະເພາະຜູ້ເຖົ້າຂັບອ່ວຍພອນກັນ, ຊາວໜຸ່ມຂັບແບບໄປໄຮ່ໄປສວນ ຫຼືຂັບແບບບ່າວ-ສາວ ແລະແມ່ເຮືອນຂັບໃນເວລາມີງານລ້ຽງ. ສຳລັບເຄື່ອງດົນຕີພື້ນເມືອງມີແຕ່ແຄນ ເຊິ່ງເປົ່າໃນເວລາເທດສະການບຸນປີໃໝ່. ນອກຈາກນີ້ແລ້ວເຂົາເຈົ້າຍັງມີການແຕ່ງກາຍ, ມີເຄື່ອງນຸ່ງຫົ່ມທີ່ຖືວ່າເປັນເອກະລັກຂອງຊົນເຜົ່າລາຫູ ເຊິ່ງປະດັບເອ້,ຖັກແສ່ວດ້ວຍສີສັນລວດລາຍທີ່ງົດງາມ ໂດຍສະເພາະຈະສາມາດພົບເຫັນໄດ້ໃນເທດສະການປີໃໝ່ຂອງເຂົາເຈົ້າ.

ການດຳເນີນວິຖີຊີວິດ ທາງດ້ານເສດຖະກິດ

ໃນເມື່ອກ່ອນ ຊົນເຜົ່າລາຫູ ມີອາຊີບເຮັດໄຮ່ປູກເຂົ້າ ແລະປູກຢາຝິ່ນ. ເຂົາເຈົ້າມີຄວາມຊຳນານໃນການຖາງປ່າຟັນຕົ້ນໄມ້ເພື່ອເປັນບ່ອນທຳການຜະລິດໃນການລ້ຽງຊີວິດປະຈຳວັນ. ຍ້ອນວ່າໃນອາດີດຜ່ານມາເຂົາເຈົ້າຍັງບໍ່ທັນຮູ້ ແລະເຂົ້າໃຈວ່າການຕັດໄມ້ທຳລາຍປ່າ ເປັນການທຳລາຍສະພາບແວດລ້ອມ. ເຂົາເຈົ້າເຂົ້າໃຈວ່າປ່າໄມ້ ເປັນຂອງທຳມະຊາດ ແລະຕ້ອງມີການຈະເລີນເຕີບໂຕຂຶ້ນມາແທນກັບສິ່ງທີ່ຖືກທຳລາຍໄປ, ທັງໆທີ່ວ່າຊີວິດຂອງເຂົາເຈົ້າ ມີການຜູກພັນກັບປ່າໄມ້ ແລະ ປ່າໄມ້ຄືແຫຼ່ງອາຫານ, ເປັນສາງທີ່ສະໜອງສິ່ງຕ່າງໆ ໃຫ້ແກ່ການດຳລົງຊີວິດຂອງເຂົາເຈົ້າ. ເຖິງຢ່າງໃດກໍ່ຕາມເມື່ອການເວລາໄດ້ປ່ຽນແປງໄປ ປະກອບກັບການເພີ່ມຂຶ້ນຂອງຈຳນວນປະຊາກອນ, ຊົນເຜົ່າລາຫູ ກໍ່ໄດ້ພະຍາຍາມປັບຕົນເອງ ແລະວິຖີການດຳລົງຊີວິດໃຫ້ສອດຄ່ອງເໝາະສົມກັບການເວລາ. ປະຈຸບັນມີການເຮັດໄຮ່ແບບໝູນວຽນ ປະສົມປະສານກັບການເຮັດນາ, ນອກຈາກນີ້ກໍ່ຈະປູກພືດສຳຮອງອີກຫຼາຍຊະນິດ, ສັດທີ່ເຂົາເຈົ້າມັກ ແລະນິຍົມກັນລ້ຽງໄດ້ແກ່ໄກ່ ແລະໝູ, ທັງນີ້ກໍ່ຍ້ອນວ່າສັດດັ່ງກ່າວ ມີຄວາມຈຳເປັນ ແລະສຳຄັນໃນການປະກອບພິທີກຳຕ່າງໆ ທີ່ພົວພັນເຖິງຊີວິດປະຈຳວັນຂອງເຂົາເຈົ້າ. ສ່ວນສັດປະເພດງົວ, ຄວາຍນັ້ນເຂົາເຈົ້າບໍ່ນິຍົມລ້ຽງ. ຄຽງຄູ່ກັນນີ້ຊົນເຜົ່າລາຫູ ຍັງມີມູນເຊື້ອໃນການຫຍິບປັກຖັກແສ່ວ,ຈັກສານເຄື່ອງຫັດຖະກຳ ແລະຫາເຄື່ອງປ່າຂອງດົງ ເພື່ອຮັບໃຊ້ການດຳລົງຊີວິດ ແລະແລກປ່ຽນກັບສິ່ງຂອງທີ່ຈຳເປັນຊຶ່ງບໍ່ສາມາດຜະລິດໄດ້ໃນຊຸມຊົນ.

Lahu

Historical Background:

The Lahu originally lived in southwest China. In the early nineteenth century this ethnic group settled in Kuangtung province of Burma, then moved southwards at the end of the century. During this time some of them migrated into Thailand, Vietnam and the northern part of Laos.

Today, the Lahu live in the northern provinces of Luangnamtha and Bokeo. Other Lahu still live in the southern areas of China, Burma, Vietnam and northern Thailand.

Total population of Lahu in Laos is 14,970, whereas 7,566 are women, representing 0.3% of the total national population according to the second population census of 1995.

Name and language:

They refer to themselves as "Lahu", which is the name they prefer. Other ethnic groups often refer to them as "Museur", whose origin and meaning is unclear. The word "Lahu" is from "Lahou" which means "to breed Tigers" in the Lahu language.

There are many sub-group of Lahu, namely Lahuna (White Museur) and Lahusy (Black Museur) and Lahuseley (Red Museur or Kui).

Beliefs, society, ceremonies and myths:

The Lahu in Laos predominantly believe in animism. They have spirits that are associated with natural phenomena such as lightning, rainbows, wind, and others. These spirits are thought of as generally friendly. There are also spirits that are good and bad, and these are the spirits of the house, the village, livestock and the forests. These spirits must be placated by worship and offerings. When people die of an unusual death, such as by murder or a tiger attack, the Lahu believe evil spirits cause this. The Lahu also believe in a supreme creator called the guisha.

There are many celebrations throughout a year; however, the most interesting and colorful one is the New Year celebration that is usually held between the end of January and early February. Additionally, they also have traditional ceremonies related to agricultural production, such as a ceremony of rice planting, cutting down trees, and slash-and-burning. There are also ceremonies protecting rice from insects and asking for a bountiful harvest, plus a ceremony giving thanks to the spirits for the harvest.

There are symbolic folk songs and songs of the Lahu that are of three kinds. This first are "wishing songs" to be sung by only elderly people. The second kind of songs are for young people to sing when working in rice fields or celebrating with each other. Housewives when hosting parties sing the last kind of songs. The panpipe (kan) is the only traditional instrument the Lahu have and is usually played during the New Year's celebration.

In general a Lahu family unit consists of parents, non-married children and sometimes a married daughter with her husband and kids. After marrying, the first daughter will bring her family to live in her parents' house. This is to assist in taking care of her parents. She has to stay until a younger sister gets married and replaces her in this duty. A married man will usually move out to live with his wife.

This means the Lahu do not inherit along paternal lines. The family and relative system is less complicated than other ethnic groups. In general, they just refer to all relatives as brothers or sisters. They will only look at actual relations of family members when one is getting married, to avoid marriage within the same family.

Unlike many other ethnic groups in Laos, there is no particular prohibition in what a pregnant mother may eat. However, after giving birth there are some dietary taboos that she must follow, such as not eating buffalo, white chicken, or strong smelling food. Her mother and husband will help take care of her and the child after she has given birth. The elder villagers in a name-giving ceremony will give a newborn baby's name. Once a couple has a child they will no longer be called by their first names, but by the name of their first child, by the means of "father of or mother of".

The Lahu believe the soul of the deceased will stay in their own house as a spirit of the house. The Lahu wrap the deceased in a white cloth and the ceremony varies on the seniority of the deceased. Bodies are buried in a cemetery outside the village.

Village and house:


The Lahu prefer to build villages in mountainous valleys above 1,000 meters. However, today the Lahu can be found at lower areas. Villages are small, about twenty to thirty houses.

Traditionally, the Lahu house is on stilts. House styles vary, depending on the wealth of each family. Usually a house consists of a bedroom, a living room and a kitchen. There is no restriction of time or season when building a house, one can build when convenient. However it is prohibited to have the rooms situated in a straight line. This is believed to bring unhappiness and illness to the family. Usually the celebration for opening a new house is very festive in the belief that the more festive, the more prosperous the family will become. A large feast will be given to entertain guests and those who helped in building the house. How large the celebration is depends on the family's wealth.

Agriculture and livelihood:

The Lahu have traditionally practiced slash-and-burn agriculture, growing crops such as dry-land rice, maize and opium poppies. They also grow a variety of vegetables and fruits. For religious reasons and for food, chickens, ducks and pigs are raised. Cows and buffalos are not common.

The Lahu men are famous for hunting, and spend much of the time in the forests. Hunting is an important food source and also an income earner. They use crossbows, traps, and now even machine guns. They are skilled at hunting large animals such as tigers and bears. However, many of these animals are nearly extinct in Laos due to hunting pressure.



ຊົນເຜົ່າໂລໂລ

ປະຫວັດຄວາມເປັນມາ:

ໂລໂລແມ່ນຊົນເຜົ່າໜຶ່ງ ທີ່ນອນຢູ່ໃນວົງ ຄະນາຍາດແຫ່ງຊາດລາວ. ເຂົາເຈົ້າມີປະຫວັດ ຄວາມເປັນມາ, ເຄື່ອນຍ້າຍມາຈາກດິນແດນ ຕອນໃຕ້ ຂອງປະເທດ ຈີນ ຍ້ອນເສິກສົງຄາມໂດຍ ແມ່ນທ້າວດີເປີ ດັ່ງເປັນຜູ້ນຳພາຂະບວນ ພວກຜູ້ ຄົນເຄື່ອນຍ້າຍຈາກ ເຂດແຂວງ ຢູນານ ແລະເຂດ ແຂວງ ໄກວເຈົາ ລົງມາຕັ້ງ ຖິ່ນຖານຢູ່ວູເປົາກາງ, ຕາບີຊູ, ແຊວມີຊູ, ສະຫວ່າງ ແລະກາມີຊູ ທີ່ຂຶ້ນ ກັບເມືອງ ຍອດອູ ແຂວງ ຜົ້ງສາລີ ແຫ່ງປະເທດ ລາວ ປະມານໄດ້ 100 ກວ່າປີມາແລ້ວ.

ຊົນເຜົ່າໂລໂລ ໃນປະເທດລາວ ມີພົນລະ ເມືອງທົ່ວປະເທດ 1.407 ຄົນ, ຍິງ 711 ຄົນ, ເທົ່າກັບ 0,1% ຂອງພົນລະເມືອງທົ່ວປະເທດ (ຜົນການ ສຳຫຼວດພົນລະເມືອງ ຄັ້ງທີ II ປີ1995). ນອກ ຈາກ ຢູ່ ສ.ປ.ປ.ລາວແລ້ວ ຊົນເຜົ່າໂລໂລ ຍັງມີຢູ່ ສ.ສ.ຫວຽດນາມ ແລະ ສ.ປ.ຈີນ ອີກດ້ວຍ.

ຊື່ເອີ້ນ:

ຊົນເຜົ່ານີ້ເອີ້ນຕົນເອງວ່າ “ໂລໂລ” ຊົນ ເຜົ່າອື່ນເອີ້ນເຂົາເຈົ້າກໍ່ແມ່ນ “ໂລໂລ”,ຊື່ທີ່ເຂົາເຈົ້າ ມັກ ແລະຊື່ໃຊ້ ໃນທາງລັດຖະການ ກໍ່ແມ່ນຊົນເຜົ່າ “ໂລໂລ”.

ພາສາ:

ຊົນເຜົ່າໂລໂລ ເຖິງວ່າບໍ່ມີຕົວໜັງສືຂຽນ ກໍ່ຕາມແຕ່ກໍ່ມີພາສາປາກເວົ້າເປັນອັນສະເພາະ ຂອງຊົນເຜົ່າຕົນເອງຄ້າຍຄືກັນກັບພາສາປາກເວົ້າ ຂອງຊົນເຜົ່າ ສີລາ ແລະຊົນເຜົ່າຮ່າຍີ.ພາສາປາກ ເວົ້າຂອງເຂົາເຈົ້າຈັດເຂົ້າໃນໝວດພາສາ ຈີນ-ຕິເບດ, ສາຂາພາສາຕິເບດ- ມຽນມາ ນອກ ຈາກ ນີ້ແລ້ວ ເຂົາເຈົ້າຍັງມີຄວາມ ສາມາດເວົ້າ ພາສາຂອງຊົນເຜົ່າລໍ້, ຢ້ຽ ແລະໄທ ເໜືອໄດ້ດີ.

ຮີດຄອງປະເພນີ,ຄວາມເຊື່ອຖື ແລະວັດທະນະທຳ-ສັງຄົມ:

ຊົນເຜົ່າໂລໂລເຖິງແມ່ນວ່າໄດ້ຍົກຍ້າຍ ເຂົ້າມາປະເທດລາວ ດົນນານແລ້ວກໍ່ຕາມ, ແຕ່ ເຂົາເຈົ້າກໍ່ຍັງສາມາດຮັກສາຮີດຄອງປະເພນີຂອງ ຊົນເຜົ່າຕົນເອງໄວ້ໄດ້ຈົນຮອດປະຈຸບັນ.ຮີດຄອງ ປະເພນີ, ຄວາມເຊື່ອຖື ແລະວັດທະນະທຳຄ້າຍ ຄືກັນກັບບັນດາຊົນເຜົ່າ ໃນໝວດພາສາຈີນ- ຕິ ເບດ. ເຂົາເຈົ້າມີຄວາມເຄົາລົບບູຊາຜີພໍ່, ຜີແມ່, ຜີ ບັນພະບູລຸດ, ຜີເຮືອນ, ຜີເມືອງ ເຊິ່ງເຂົາເຈົ້າຖືວ່າ ເປັນຜູ້ປົກປັກຮັກສາມວນມະນຸດ. ນອກຈາກນີ້ເຂົາ ເຈົ້າຍັງຖືວ່າມີຜີກົກໄມ້ໃຫ່ຍ, ຜີຫ້ວຍຮ່ອງ, ໜອງ ບຶງ, ຜີຕາຍທຸງ, ຜີພູຜາປ່າດົງ ແລະອື່ນໆທີ່ເຂົາເຈົ້າ ຖືວ່າເຮັດໃຫ້ຄົນເກີດມີອາການເຈັບເປັນ. ພ້ອມ ກັນນີ້ຍັງຈັດງານບຸນໃນປີໜຶ່ງມີ 2 ເທື່ອ ເປັນຕົ້ນ ບຸນກິນຈຽງໃຫ່ຍຈັດຂຶ້ນໃນເດືອນ 2 ແລະບຸນກິນ ຈຽງນ້ອຍຈັດຂຶ້ນໃນເດືອນ 3 ມື້ 15 ຄ່ຳ. ບໍ່ສະ ເພາະແຕ່ເທົ່ານັ້ນຊົນເຜົ່າໂລໂລ ຍັງມີໝໍຜຶ ແລະ ໝໍຢາພື້ນເມືອງສຳລັບປິ່ນປົວຄົນເຈັບເປັນ ຫຼືເປັນ ທີ່ເພິ່ງທາງໃຈຂອງມວນມະນຸດ.

ດ້ານສິລະປະວັນນະຄະດີ:

ເຂົາເຈົ້າໄດ້ມີນັກປະດິດແຕ່ງ ບົດຮ້ອງທຳ ນອງເສບ, ມີບົດຂັບຮ້ອງໂລໂລ, ມີເຄື່ອງດົນຕີພື້ນ ເມືອງ ຫຼາຍຢ່າງເປັນຕົ້ນມີແຄນ,ໜາມ້ຳເຕົ້ານ້ອຍ (ລູຊິບ), ປີ່ເຟືອງ, ຄ້ອງ, ຄ້ຳພະຫຍາພາສິດ ແລະ ນິທານພື້ນເມືອງທີ່ສ່ອງແສງເຖິງຄວາມຮັກລະຫວ່າງ

ບ່າວສາວ, ທິວທັດທຳມະຊາດ ແລະ ອື່ນໆ.

ຊົນເຜົ່າໂລໂລ ໄດ້ມີຮີດຄອງປະເພນີ ໃນການຊອກຫາສະຖານທີ່ຕັ້ງບ້ານ ແລະເຮືອນດ້ວຍການແຕ່ງກັນໄປຊອກຫາສະຖານທີ່ໃດໜຶ່ງ ແຕ່ໃນເມື່ອເຫັນວ່າສະຖານທີ່ດັ່ງກ່າວ ມີຄວາມເໝາະສົມຈະຕັ້ງບ້ານ, ເຂົາເຈົ້ານອນຄ້າງຄືນ ເພື່ອຕິດຕາມຄວາມຝັນ ແລະສັດຮ້ອງ, ແຕ່ຜ່ານການນອນຄ້າງຄືນ ຫາກຝັນເຫັນປະເພດສັດບິນ, ຝັນໄດ້ເງິນ, ໄດ້ຄຳ, ຟານເກກ, ໄກ່ປ່າຂັນ, ເສືອຮ້ອງ ແມ່ນຕັ້ງບ້ານບໍ່ໄດ້. ເມື່ອຝັນດີແລ້ວກໍ່ຖາງບ່ອນຈະຕັ້ງເຮືອນ, ຖາກໄມ້ເພື່ອຈະເຮັດເຮືອນ ແລະກໍ່ນອນຕິດຕາມຄວາມຝັນ ແລະສັດຮ້ອງອີກວາລະໜຶ່ງແລ້ວ ກໍ່ສ່ຽງບ່ອນຈະປຸກເຮືອນ ໂດຍການຂຸດຂຸມເອົາເຂົ້າສານ 3 ເມັດລົງຂຸມເອົາຫົວຈຸກັນ ອັດແຈບຊົ່ວໄລຍະໜຶ່ງແລ້ວໄຂເບິ່ງ, ຖ້າເມັດເຂົ້າແຍກກັນແມ່ນຕັ້ງບ້ານບໍ່ໄດ້.

ຊົນເຜົ່າໂລໂລ ມີຄວາມນິຍົມປຸກສ້າງເຮືອນແບບຕິດດິນຍາວ 6-15 ແມັດ, ກວ້າງ 6 ແມັດ ແບ່ງອອກ 2 ຫ້ອງໃຫ່ຍຂະໜານກັນ ຕາມລວງຍາວຂອງເຮືອນ, ຫ້ອງໃຫ່ຍທຳອິດເປັນຫ້ອງວາງຕຽງແຂກນອນ ແລະຄົກມອງຕຳເຂົ້າ ແລະຫ້ອງໃຫ່ຍຖັດນັ້ນປະກອບມີຫຼາຍຫ້ອງນ້ອຍຄື: ຫ້ອງນອນປູ່ຍ່າ, ຫ້ອງອ້າຍກົກ, ອ້າຍຖັດນັ້ນຫ້ອງຜີ ທັງເປັນບ່ອນນອນຂອງລູກຊາຍບໍ່ມີເມຍ, ເຮືອນຄົວທັງເປັນບ່ອນນອນ ຂອງລູກສາວບໍ່ມີຜົວ.

ຊົນເຜົ່າໂລໂລມີເຄື່ອງນຸ່ງເອ້ຢ້ອງ ເປັນອັນສະເພາະຂອງຕົນເອງຄື: ຜູ້ຊາຍນຸ່ງໂສ້ງຝ້າຍສີດຳ, ຫົວ, ຂາກ້ວາງ,ຜ້າດຳພັນຕົນຜົມ, ຫົ່ມເສື້ອຝ້າຍສີດຳແຂນຍາວຄໍມົນ, ມີຜ້າສີດຳຄຸ່ງນຫົວຍາວ 3 ແມັດ, ຂີ້ຄັ່ງຍ້ອມແຂ້ວແດງ ຈົ່ງຜົມຍາວສານເປັນສາມດົ້ວຄຸ່ງນຫົວ ແລະຍັງມີຜ້າສີດຳຄຸ່ງນຫົວ. ສະເພາະແມ່ຍິງນຸ່ງໂສ້ງສີດຳຫົວກວ້າງຂາລົບ, ຜ້າຄຸ່ງນແອວຫົ່ມເສື້ອຝ້າຍແຂນຍາວຫຼາຍສີປະດັບເອ້ຢ້ອງດ້ວຍໝາກປັດໃສ່ດຸມເສື້ອ, ໃສ່ ປອກແຂນ, ບ່ອງຫູ, ໃສ່ຕ້າງທີ່ເຮັດດ້ວຍເງິນ.

ຄົນໂລໂລ ນິຍົມກິນເຂົ້າຈ້າວດ້ວຍວິທີເອົານ້ຳ ຮ້ອນລວກແລ້ວໜຶ້ງໃສ່ໄຫ, ກິນອາຫານ: ແກງ, ຂົ້ວ, ເອາະ, ປີ້ງມີລົດຊາດຈາງ, ດື່ມນ້ຳຕົ້ມ ແລະດິບ, ດື່ມເຫຼົ້າສັ່ງວ, ສູບຢາ ແລະຝິ່ນ. ໃນເວລາກິນເຂົ້າຫ້າມຄົນໄປມາ ແລະເຮັດວຽກອື່ນໆ.

ພວກເຂົາເຈົ້າ ກໍ່ມີເຄື່ອງໃຊ້ໃນຄອບຄົວ, ເຄື່ອງມືຫາກິນ ແລະເຄື່ອງມືເຮັດການຜະລິດຄືກັນກັບ ຊົນເຜົ່າສີລາ, ຮ່າຍີ່...ການຂົນສົ່ງມີ 2 ວິທີຄື ດ້ວຍຕົນ ເອງ ແລະຕ່າງດ້ວຍມ້າແລະງົວ.

ໂຄງສ້າງທາງສັງຄົມ ຂອງຊົນເຜົ່າໂລໂລ: ປະກອບດ້ວຍຫຼາຍຊົ່ງຊາວຄື: ຊົ່ງລໍ, ຊົ່ງຖັ່ງ, ຊົ່ງລີ, ຊົ່ງວາງ, ຊົ່ງຈຸ, ຊົ່ງດໍ, ຊົ່ງຈາງ, ຊົ່ງຢາງ, ຊົ່ງຕາວ, ຊົ່ງເຈີ, ຊົ່ງຊີ, ຊົ່ງຝົ່ງ ແລະຊົ່ງຊົ້ງ. ເຂົາເຈົ້າສືບເຊື້ອສາຍຕາມຕະກຸນທາງພໍ່.

ໄດ້ມີປະເພນີການແຕ່ງດອງ ເຊິ່ງໄດ້ປະຕິບັດຕາມຂັ້ນຕອນຄື: ໃນເບື້ອງຕົ້ນບ່າວສາວໄດ້ລົມກັນຢູ່ເດີນບ້ານ,ຈາກນັ້ນຖ້າຜູ້ສາວມັກຮັກ ກໍ່ຊວນຜູ້ບ່າວເຂົ້ານອນນຳຕົນເອງຈົນຮອດໄກ່ຂັນເທື່ອ1ຫຼື 2 ເທື່ອ. ຖ້າບ່າວຄົນນັ້ນມັກຮັກແທ້ ກໍ

ลายງານໃຫ້ພໍ່ແມ່ຂອງຕົນ. ຖ້າພໍ່ແມ່ ເຫັນດີກໍ່ແຕ່ງໃຫ້ຜູ້ຊາຍສອງຄົນໄປຖາມພໍ່ແມ່ ຂອງຜູ້ສາວ. ເມື່ອໄດ້ຮັບຄຳຕອບແລ້ວ ກໍ່ເມື່ອລາຍງານ ໃຫ້ພໍ່ແມ່ຂອງຜູ້ບ່າວ. ເມື່ອໄດ້ຮັບຄຳຕອບແລ້ວ ຄົນໃຊ້ທັງສອງເອົາຢາສູບ 2 ຊອງ, ເຫຼົ້າ 2 ລິດ ໄປຖາມພໍ່ແມ່ຂອງເຈົ້າສາວ ແລະເມື່ອໄດ້ຮັບຄຳຕອບເທື່ອທີສອງ ກຽມເຫຼົ້າ 5 ລິດ, ຢາສູບ 1 ຕຸດ, ຊີ້ນໝູ 5 ກິໂລ.ແຕ່ງຄົນໃຊ້ທັງສອງໄປບອກພໍ່ແມ່ ຂອງຜູ້ສາວ ແລະມອບເຄື່ອງຂອງນັ້ນໃຫ້ຝ່າຍເຈົ້າສາວ. ຫຼັງຈາກກິນເຂົ້າ ແລະດື່ມເຫຼົ້າແລ້ວ, ຕັ້ງບັນຫາໃຫ້ເຈົ້າສາວ ແລະຄົນໃຊ້ທັງສອງວ່າ: ຖ້າໃຜປັ້ນຈະປັບໃໝ 3 ເທົ່າຂອງມູນຄ່າເຄື່ອງທີ່ເສຍໄປແລ້ວ. ກໍລະນີເຈົ້າບ່າວປັ້ນຄວາມສູ່ຂວັນພໍ່, ແມ່ເຈົ້າສາວດ້ວຍໝູ 20 ກິໂລ, ເຫຼົ້າ 20 ລິດ ຂຶ້ນໄປ ແລະເຊີນຄົນໝົດບ້ານມາກິນ. ຈາກນັ້ນກຳນົດຄ່າດອງໃຫ່ຍດ້ວຍຊີ້ນໝູ 60 ກິໂລຕ່ຳສຸດ 30 ກິໂລ, ເຫຼົ້າ 50 ລິດ ຕ່ຳສຸດ 30 ລິດ, ເງິນຄ່າດອງ100 - 500 ຫຼາມ, ແພ 4 - 8 ວາ, ເຄື່ອງນຸ່ງຫົ່ມໃຫ້ເຈົ້າສາວ1 ຊຸດ.

ເມື່ອກຽມແລ້ວໃຫ້ຄົນໃຊ້ ທັງສອງເອົາເຄື່ອງໄປມອບໃຫ້ພໍ່ແມ່ຂອງເຈົ້າສາວ. ສ່ວນຢູ່ເຮືອນຂອງເຈົ້າບ່າວຕ້ອງກິນດື່ມລົ່ນ ຢູ່ເຮືອນເຈົ້າສາວ, ດື່ມເຫຼົ້າ ແລະກິນເຂົ້າມື້ໜຶ່ງ 3 ຄາບ. ຮັບປະທານອາຫານແລ້ວສົ່ງເຂີຍໄປຮັບໄພ້ດ້ວຍ ໃຫ້ຄົນໃຊ້ທັງສອງໄປກ່ອນ ຈາກນັ້ນ ແມ່ນເຂີຍ ແລະຄົນທີ່ຈະໄປຮັບໄພ້ 8 ຄູ່ມີທັງບ່າວສາວ. ຮອດເຮືອນເຈົ້າສາວ, ຮັບປະທານອາຫານຄາບໜຶ່ງ. ຈາກນັ້ນ ຈັດພິທີສົ່ງໄພ້ເມື່ອເຮືອນເຂີຍ ໃຫ້ຄົນໃຊ້ທັງສອງຍ່າງໄປກ່ອນ, ຖັດຈາກນັ້ນແມ່ນຝ່າຍເຂີຍທີ່ໄປຮັບໄພ້, ຜູ້ເປັນອ້າຍຄີງຂອງເຈົ້າສາວຍ່າງເຈ່ຍນ້ອງສາວ ເມື່ອຮອດເຮືອນເຂີຍແລ້ວ ຈຶ່ງແມ່ນຝ່າຍໄພ້ທີ່ຍ່າງສົ່ງໄພ້ໄປເຮືອນເຂີຍເທົ່າກັບຝ່າຍເຈົ້າບ່າວ 6 ຄູ່ ຫຼື 8 ຄູ່.

ໃກ້ຈະຮອດເຮືອນເຂີຍແລ້ວ ຝ່າຍເຈົ້າບ່າວເອົາເງິນໃຫ້ຜູ້ເຈ່ຍເຈົ້າສາວ 2 ບີ້, ແລ້ວເອົາໄພ້ໄປໄວ້ຕູບ ເຊິ່ງໜ້າກັບປາກປະຕູເຂົ້າຫ້ອງເຮືອນ, ຕູບດັ່ງກ່າວມີ 2 ຫ້ອງຄູ່ຜົວເມຍ ຢູ່ຄົນລະຫ້ອງ (ຊົ່ວໄລຍະໜຶ່ງ) ຕັ້ງພາຂວັນໃຫ້ໝໍພອນແກ່ຄູ່ແຕ່ງດອງໃໝ່. ແລ້ວຮັບປະທານອາຫານ, ຈາກນັ້ນເຈ່ຍເຈົ້າສາວຢືນຢູ່ຫ້ອງຜີເຮືອນ ແນະນຳໃຫ້ພີ່ນ້ອງຝ່າຍເຈົ້າບ່າວຮັບຊາບ ແລະຝ່າຍເຈົ້າບ່າວແນະນຳຍາດພີ່ນ້ອງ ໃຫ້ຝ່າຍເຈົ້າສາວຮູ້ ແລະກໍ່ດື່ມເຫຼົ້າ, ກິນເຂົ້າຊົ່ວໄລຍະໜຶ່ງແລ້ວພີ່ນ້ອງເມືອ. ສ່ວນຄູ່ຜົວເມຍຍາດກັນເຂົ້າຫ້ອງນອນ. ໝາຍຄວາມວ່າຊົນເຜົ່າໂລໂລ ແມ່ນໄດ້ປະຕິບັດລະ ບອບຜົວໜຶ່ງເມຍດຽວ ໄດ້ນຳໃຊ້ຮອດ ປະຈຸ ບັນ.

ປະເພນີປິ່ງສົບສົ່ງສະການ ຂອງຊົນເຜົ່າໂລໂລ ກໍ່ໄດ້ປະຕິບັດຕາມຂັ້ນຕອນຕ່າງໆ ຖ້າມີຄົນເຈັບໃນເຮືອນ ທຳອິດປິ່ນປົວດ້ວຍຢາພື້ນເມືອງ, ຖ້າບໍ່ດີເຊີນໝໍດູມາເຮືອນ, ພິສູດອາການຂອງຄົນເຈັບນັ້ນ ຖ້າໝໍດູບອກແນວໃດ ກໍ່ດຳເນີນການປິ່ນປົວແນວນັ້ນ, ຖ້າຄົນເຈັບຫາກເສຍຊີວິດ ເອົາຜ້າຂາວປູໂລງແລ້ວເອົາສົບໃສ່ໂລງນັ້ນດອຍໄວ້ຫ້ອງຜີ, ເອົາຫົວຄົນຕາຍປິ່ນໃສ່ປາກປະຕູທາງ

ອອກ. ການຄົບງັນໄວສຸດເອົາໄປມື້ນັ້ນເລີຍ ແລະ ຊ້າສຸດຄືນໜຶ່ງ ແລະຄົນໃນບ້ານແຕ່ງກັນໄປຄົບງັນ ເຮືອນລະຄົນ.ໄລຍະຄົບງັນຢູ່ນັ້ນ ພວກຜູ້ຄົນຢູ່ເຮືອນ ແລະລູກຂອງຜູ້ຕາຍ ກໍ່ເອົາຜ້າປົກຫົວ ແລະ ກ່ອນຈະຫ້າມສົບໄປປ່າຊ້າກໍ່ໃຫ້ຜູ້ເປັນລູກລອດ ພົ້ນໂລງໄປໆມາໆ 6 ເທື່ອ ຖັດຈາກນັ້ນຈຶ່ງ ຫາມ ສົບໄປປ່າຊ້າ ໂດຍເອົາຕີນໄປກ່ອນ ແລະມີ 4 ຄົນ ຫາມ. ເມື່ອຮອດປ່າຊ້າແລ້ວ ກ່ອນຈະເຜົາບ່ອນໃດ ສ່ຽງດ້ວຍການແກວ່ງໄຂ່ໄກ່ແຕກບ່ອນໃດ ກໍຈູດ ບ່ອນນັ້ນ. ຫຼັງຈາກຈູດແລ້ວ ກໍເຮັດຕູບບ່ອນ ມີກະ ດູກ, ຖ້າຈູດໃນລະດູຝົນຮອດເດືອນ12 ຫຼື ເດືອນ 1,2, 3,4 ຂອງປີໜ້າຈຶ່ງຄ່ອຍເກັບກະດູກ ໄປຝັງ.

ສະຖານທີ່ຝັງກະດູກ ບໍ່ໄດ້ກຳນົດສຸດ ແລ້ວ ແຕ່ຈະຊອກຫາບ່ອນໃດດີ, ເມື່ອຊອກໄດ້ ແລ້ວເກັບກະດູກໃສ່ໂອ ແລ້ວຈຶ່ງຄ່ອຍຂຸດດິນຝັງ ດູກໂດຍຝັງໂອເຄິ່ງໜຶ່ງ ແລ້ວເອົາກ້ອນຫີນກອງ ໄວ້,ເອົາດິນຖົມຫີນກອງນັ້ນ.

ໃນເວລາຝັງດູກນັ້ນ ກໍເອົາໄກ່ດິບບໍ່ນັບ ຈຳນວນສຸດແລ້ວແຕ່ພີ່ນ້ອງຈະຊ່ວຍໃຫ້. ຂ້າໄກ່ ຕົ້ມສຸກຖວາຍໃຫ້ຜີເປັນເທື່ອທີ 2,ຈາກນັ້ນເຈົ້າ ຂອງເຮືອນຂ້າໝູ 5 ກິໂລ, ເຂົ້າສຸກເອົາໄຟຈູດເຈ້ຍ ຖວາຍໃຫ້ຜີ ແລະໄຕ້ທຽນຕະຫຼອດວັນຄືນ, ເມື່ອ ຝັງດູກແລ້ວຮອດເດືອນ 4 ທຸກໆປີໄປຖາງຫຍ້າ ອ້ອມສະຖານທີ່ນັ້ນແລ້ວໄຕ້ທຽນ, ຂ້າໄກ່ຕົ້ມສຸກ ຖວາຍໃຫ້ຜີກິນ 2 ວັນ, 2 ຄືນ.

ປະເພນີການເກີດລູກ ຂອງຊົນເຜົ່າ ໂລ ໂລ ກໍ່ຄ້າຍຄືກັນກັບບັນດາຊົນເຜົ່າ ໃນໝວດພາ ສາ ຈີນ- ຕິເບດ ເຊິ່ງມີລາຍລະອຽດຄື: ເມື່ອເມຍ ຖືພາຜູ້ເປັນຜົວ ກໍ່ກະກຽມອາຫານຈຳນວນໜຶ່ງ ໄກ່, ໄຂ່ໄກ່, ບໍ່ໄດ້ພັກວຽກ, ເກີດລູກຢູ່ຕີນຫ້ອງ ນອນ ໂດຍມີແມ່ຍິງເປັນຜູ້ຊ່ວຍໃຫ້ເກີດລູກ. ຜົວຢູ່ ນອກເປັນຜູ້ຕົ້ມນ້ຳດ້ງໄຟ, ຢູ່ກຳກິນນ້ຳຮ້ອນເດືອນ ໜຶ່ງຊ່ວງໄລຍະເກີດລູກໃຫ້ກິນໄກ່, ໄຂ່ໄກ່, ປາ. ຮອດເວລາອອກກຳຂ້າໄກ່ສູ່ຂວັນເດັກນ້ອຍເກີດ ໃໝ່ ແລະເຊີນຜູ້ຊ່ວຍເກີດລູກພ້ອມທັງໃສ່ຊື່ລູກ ໂດຍແມ່ນປູ່ເປັນຜູ້ໃສ່ໃຫ້.

ການດຳເນີນຊີວິດທາງດ້ານເສດຖະກິດ:

ຊົນເຜົ່າໂລໂລ ໃນເມື່ອກ່ອນແມ່ນຖື ການເຮັດໄຮ່ປູກເຂົ້າຈ້າວເພື່ອກິນ, ປູກຝິ່ນເປັນ ສິນຄ້າ, ແຕ່ມາຮອດປະຈຸບັນຄົນໂລໂລ ໄດ້ເຮັດ ນາປູກເຂົ້າຈ້າວເປັນຕົ້ນຕໍ, ເຮັດສວນປູກພືດທີ່ ມີຫາດແປ້ງ, ພືດຕະກຸນຖົ່ວ, ພືດຜັກນາໆຊະນິດ, ປູກກ້ວຍ, ອ້ອຍ, ໝາກແໜ່ງ ແລະຕົ້ນໄມ້ກິນ ໝາກຍາວນານ. ບໍ່ພຽງແຕ່ເທົ່ານັ້ນ ຊາວໂລໂລ ມີ ມູນເຊື້ອ ໃນການລ້ຽງສັດປະເພດຕ່າງໆຄື: ຄວາຍ, ງົວ, ມ້າໃຊ້ເປັນແຮງງານລາກແກ່, ລ້ຽງໝູ ແລະ ສັດປີກ ເພື່ອກິນ ແລະລ້ຽງຜີ. ເລີ່ມແຕ່ປີ 1970 ຊົນ ເຜົ່າໂລໂລ ມີຄວາມດຸໝັ່ນ ແລະປະດິດສ້າງໃນ ການຂຸດເໝືອງ ປ້ານຝາຍ.

ແມ່ຍິງຊົນເຜົ່າໂລໂລ ໄດ້ມີມູນເຊື້ອໃນ ວິຊາຫຍິບປັກຖັກແສ່ວ, ຕຳ່ຫູກທໍ່ໄໝເພື່ອເຮັດ ເຄື່ອງນຸ່ງຫົ່ມໃຫ້ລູກຜົວ. ສຳລັບຜູ້ຊາຍມີຄວາມ ສຳນານໃນວິຊາຫັດຖະກຳຈັກສານ, ເຮັດເຄື່ອງ ໃຊ້ໃນຄອບຄົວ ແລະຕີເຫຼັກ ເພື່ອເຮັດເຄື່ອງມື ການຜະລິດ, ແຕ່ຍັງມີເສດຖະກິດບູຮານຄື: ການ ລ່າເນື້ອ ແລະເກັບເດັດຜັກປ່າມາເປັນອາ ຫານ.

Lolo

Historical Background:

The Lolo came from China's Yunan province to Laos about two hundred years ago. In China they are a large minority group. Today, the small numbers that live in Laos are settled around Phongsali town in Phongsali province.

The Lolo population in Laos is about 1,407 people, and 711 are women. This is 0.1% of Laos' total population (based on the second census of 1995).

Name and language:

They refer to themselves as "Lolo". Others refer to them by this name also. The official name for them is "Lolo".

They speak a Sino-Tibetan language that is a Tibeto-Burman language. The Lolo in China are reported to have their own script based on Chinese characters, however, the Lolo in Laos are not familiar with this alphabet. Most of them speak Chinese and many use Chinese as their first language.

Beliefs, society, ceremonies and myths:

The Lolo practice animism, and are very concerned about evil spirits. They believe their people originated from gourds, which is a belief that many ethnic groups in Southeast Asia have. They have the ket do spirit which is the creator of the universe and the master of all. They also have the spirits of the sky, the water, and sickness, to name a few. They offer worship to their dead ancestors. Every household will have an altar for offerings to the spirits of the ancestors.

The Lolo have male shamans called pemu. They also have male and female sorcerers. The shamans and the sorcerers are skilled in fortune telling, divination, spell casting, traditional medicine, and performing religious activities.

The Torch festival is the major festival for the Lolo, which is held on the twenty-fourth day of the six lunar month. The festival occurs after the harvest, and the villagers offer sacrifices to the spirits.

With marriage, the Lolo traditionally married at the young age of around 14, but today they tend to get married at an older age. If a young man and a young woman want to marry, he will inform his parents. If the parents are satisfied with their son's choice, then they will meet her parents to finalize the agreements. Offering such as meat, tobacco, and wine are exchanged between the parents. If everything goes well, then a wedding dowry is finally offered. This normally is at least 60 kilograms of pork meat and a minimum of 50 liters of rice wine or whiskey. Money and lengths of textile are also offered.

After marriage the wife will move into the household of her husband. After her first pregnancy, the young couple will move out to start their own household.

A Lolo mother will give birth in the house. An older woman will assist in the birth. After the birth, the mother must drink hot water for one month. A one-month anniversary celebration will be held for the newborn baby. The woman who helped give birth will be also invited. On that day the baby will be given a name by his or her grandfather.

A person who is ill will be treated by traditional medicine. If this fails, then

a sorcerer will be asked to find the reasons of sickness, which is believed to come from supernatural powers. Then more methods of healing will be tried after the sorcerer gives his advice.

When someone dies, dances, songs, and times of mourning are organized by the deceased's family. During the presence of the corpse at home, members of the deceased's family must cover their heads. A son-in-law is required to carry one end of the coffin during the journey to the cemetery, and the coffin is cremated in a funeral pyre. The mourners will leave the area before the pyre has finished burning. The bones are later collected, placed in a bowl, and then buried during a later date. During this time some chickens are sacrificed. Every year in April, family members will come to clean and tidy the burial site, light candles, and present some food the spirits of the deceased.

The Lolo have songs and traditional musical instruments like the panpipe, bottle gourd, and gong. They also have proverbs and folktale stories.

Village and house:

The Lolo have an interesting custom for finding a place to build a new village. They will stay overnight at a prospective area and decide if the place is good or bad by analyzing their dreams the next morning. Seeing flying animals, money, gold, deer, or tigers in their dreams is considered a bad sign so they should continue to look for another place for their village.

If the place is satisfactory, the villagers will dig a small hole and put three rice seeds head to head into the hole and cover with soil. Later, they check to see if the rice has germinated. If they have and the seeds are still located in the same direction, then it is okay to build at that spot.

Lolo like to build clay houses 6-15 meters in length and 6 meters in width. A house consists of two main rooms parallel to each other. One main room is used for guests while the other one is divided into many small rooms for grandparents and unmarried children, as well as a kitchen and a family altar.

Costume:

Lolo women wear a dark blue or light blue vest with long sleeves. The hems of the vest are decorated with black lace and narrow stripes of red embroidery. They complement this with a plain, dark colored sarong. They cover their hair with a carefully folded black turban. Around the waist they wear a blue waistcloth with red and yellow decorations. Today the women in Laos wear very little jewelry, unlike the Lolo in China. The men will wear more typical commercial clothing, or perhaps a pair of long traditional trousers.

Agriculture and livelihood:

The Lolo grow rice, corn, and vegetables. They grow both wet and dry rice. Traditionally, they have raised opium. In addition, the Lolo breed animals like buffalos, cows, and horses for labor. They also raise pigs and poultry for food and offerings to spirits. They are enterprising traders, transporting goods on their small horses. They traditionally trade opium and cotton.

The Lolo men do not hunt like other groups, but will fish when they are located near villages. They also manufacture some products from bamboo, such as baskets and fish traps.

ຊົນເຜົ່າ ຫ້ໍ
ປະຫວັດຄວາມເປັນມາ

ຊົນເຜົ່າຫ້ໍ ແມ່ນຊົນເຜົ່າໜຶ່ງ ທີ່ມີກົກເຄົ້າ ເຫງົ້າກໍ, ກໍ່ຄືຕົ້ນກຳເນີດມາຈາກປະເທດ ຈີນ. ເຂົ້າ ເຈົ້າໄດ້ອົບພະຍົບ ແລະເຄື່ອນຍ້າຍມາຢູ່ພາກເໜືອ ຂອງລາວເຮົາ ໂດຍສະເພາະແມ່ນແຂວງ ຜົ້ງສາລີ ໃນທ້າຍສະຕະວັດທີ19 .

ປະຈຸບັນຊົນເຜົ່າຫ້ໍ ຍັງມາຕັ້ງຖິ່ນຖານ ແລະດຳລົງຊີວິດເປັນສ່ວນໜາຍ ຢູ່ບັນດາແຂວງ ພາກເໜືອຂອງລາວເຮົາໂດຍສະເພາະແມ່ນຢູ່ ແຂວງ ຜົ້ງສາລີ. ນອກຈາກນີ້ຊົນເຜົ່າຫ້ໍຍັງມີຢູ່ພາກ ໃຕ້ຂອງຈີນ.

ຊົນເຜົ່າຫ້ໍ ຢູ່ລາວມີພົນລະເມືອງ ທັງໝົດ 8.900 ຄົນ, ຍິງ 4.475 ຄົນ, ເທົ່າກັບ 0,2 % ຂອງ ພົນລະເມືອງ ທົ່ວປະເທດ (ຕາມສະຖິຕິການສຳ ຫຼວດພົນລະເມືອງ ຄັ້ງທີ II ປີ 1995) .

ຊື່ເອີ້ນ

ຊົນເຜົ່ານີ້ເອີ້ນຕົນເອງວ່າ: "ຫ້ໍ " ຊົນເຜົ່າ ອື່ນເອີ້ນໃຫ້ເຂົາເຈົ້າກໍ່ແມ່ນ "ຫ້ໍ" ແລະຊື່ທີ່ເຂົາເຈົ້າ ມັກ ທີ່ສຸດກໍ່ແມ່ນຊົນເຜົ່າ " ຫ້ໍ " ຄຳທີ່ເອີ້ນກັນວ່າ "ຫ້ໍ" ນີ້ໍ່ຮູ້ຄວາມໝາຍເປັນທີ່ຈະແຈ້ງ ແລະຊັດເຈນ.

ພາສາ

ຊົນເຜົ່າຫ້ໍ ມີພາສາປາກເວົ້າ ທີ່ເປັນເອກະ ລັກຂອງຕົນເອງ ເຊິ່ງພາສາຊົນເຜົ່ານີ້ ຈັດຢູ່ໃນ ໝວດພາສາ ຈີນ - ຕິເບດ, ສາຂາ ທ່ານ - ຫ້ໍ.

ຮີດຄອງປະເພນີ, ຄວາມເຊື່ອຖື, ວັດທະນະທຳ ແລະສັງຄົມ

ຊົນເຜົ່າຫ້ໍ ເຖິງແມ່ນວ່າຈະໄດ້ອົບພະຍົບ ແລະເຄື່ອນຍ້າຍມາຢູ່ລາວເຮົາດົນແລ້ວກໍຕາມ ແຕ່ ເຂົາເຈົ້າຍັງຮັກສາຮີດຄອງປະເພນີ, ຄວາມເຊື່ອຖື ແລະວັດທະນະທຳ ທີ່ເປັນເອກະລັກຂອງຕົນເອງ ໄວ້ໄດ້ເປັນຢ່າງດີ. ຊົນເຜົ່າຫ້ໍເຊື່ອຖືຜີ ໂດຍສະ ເພາະແມ່ນຜີພໍ່ແມ່, ຜີບັນພະບູລຸດທີ່ລ່ວງລັບໄປ ແລ້ວ ກໍ່ຈະມີການເຮັດຮ້ານບູຊາໄວ້ໃນເຮືອນ. ນອກຈາກນີ້ແລ້ວຍັງມີຈຳນວນໜຶ່ງ ໄດ້ຮັບອິດທິ ພົນຂອງສາສະໜາເຕົ່າມຳອີກດ້ວຍ.

ລະບົບຄອບຄົວເລືອດເນື້ອເຊື້ອສາຍ ແລະການສືບຕະກຸນຂອງຊົນເຜົ່າຫ້ໍ, ເຂົາເຈົ້າສືບ ຕະກຸນທາງພໍ່, ໃນຄອບຄົວແມ່ນພໍ່ເປັນຜູ້ມີອຳນາດ ໃນການບໍລິຫານ. ການສືບມູນມໍລະດົກມີພຽງແຕ່ ລູກຊາຍເທົ່ານັ້ນ ທີ່ມີສິດ ແລະລູກຊາຍກົກ ຈະມີ ສິດໄດ້ຮັບຊັບສົມບັດ ຫຼື ມູນມັ່ງມໍລະດົກຫຼາຍກວ່າ ໝູ່. ແຕ່ກ່ອນຄອບຄົວຂອງຊົນເຜົ່າຫ້ໍ ຈະເປັນລະ ບົບຄອບຄົວຂະຫຍາຍ ໂດຍມີຫຼາຍຄອບຄົວ ແລະຫຼາຍເຊັ່ນຄົນດຳລົງຊີວິດຢູ່ເຮືອນຫຼັງດຽວກັນ, ແຕ່ປະຈຸບັນສ່ວນໜາຍ ຈະເປັນລະບົບຄອບຄົວ ດຽວ ໂດຍແຕ່ລະຄອບຄົວ ຈະມີເຮືອນຂອງໃຜ ລາວ. ການແຕ່ງດອງຂອງບັນດາລູກໆ ສ່ວຍຫຼາຍ ແລ້ວແມ່ນຂຶ້ນກັບການຕັດສິນຂອງພໍ່ແມ່, ພ້ອມ ກັນນີ້ເຂົາເຈົ້າ ກໍ່ມັກຈະໃຫ້ລູກໆແຕ່ງດອງຢູ່ໃນໄວ ອາຍຸທີ່ນ້ອຍ ແລະຫຼັງຈາກການແຕ່ງດອງແລ້ວ ແມ່ຍິງຈະໄປຢູ່ເຮືອນຂອງພໍ່ແມ່ຜົວ ພ້ອມທັງປະຕິ

ບັດໜ້າທີ່ໃນການເບິ່ງແຍງລ້ຽງດູສະມາຊິກຂອງ ຄອບຄົວຜົວ ຕາມການຕົກລົງຂອງສອງຝ່າຍກ່ອນ ແຕ່ງດອງ.

ລັກສະນະເຮືອນຂອງເຂົາເຈົ້າ,ໂດຍປົກ ກະຕິແລ້ວຊົນເຜົ່າຫໍ້ ມັກຕັ້ງບ້ານເຮືອນຢູ່ເຂດ ທີ່ມີ ຄວາມສູງແຕ່ 1.000 -1.500ມ ເໜືອລະດັບນ້ຳ ທະເລ. ເຮືອນຂອງຊົນເຜົ່າຫໍ້ ຈະເປັນລັກສະນະ ເຮືອນຕິດດິນ, ອ້ອມຮອບເຮືອນເຂົາເຈົ້າມັກເຮັດ ສວນ ເພື່ອປູກພືດຜັກ ແລະລ້ຽງສັດສຳລັບໃຊ້ເປັນ ອາຫານ ແລະຂາຍ. ການຈັດແບ່ງຫ້ອງພາຍໃນ ເຮືອນ ອີງຕາມຈຳນວນຄົນໃນຄອບຄົວ ແລະເຂົາ ເຈົ້າມັກຈະເອົາງ້າວ, ຫອກ, ດາບ ແລະ ເຄື່ອງມື ໃນການຂ້າສັດປະດັບເອ້ໄວ້ເທິງປະຕູເຮືອນ.

ກ່ຽວກັບງານບຸນປະເພນີ ແລະພິທີກຳ ຕ່າງໆ ໃນປີໜຶ່ງໆ ຊົນເຜົ່າຫໍ້ຈະມີພິທີ ແລະບຸນປະ ເພນີຫຼາຍຄັ້ງ, ແຕ່ບຸນປະເພນີທີ່ສຳຄັນຂອງເຂົາ ເຈົ້າໄດ້ແກ່ບຸນປີໃໝ່(ບຸນກິນຈຽງ) ເຊິ່ງເຂົາເຈົ້າມັກ ຈະເຮັດຮີດຄອງດ້ວຍການຂ້າໝູເພື່ອລ້ຽງຜີ.

ສຳລັບດ້ານສິລະປະວັນນະຄະດີ ຊົນເຜົ່າ ຫໍ້ ມັກຮ້ອງເພັ້ງດ້ວຍຫົວຂໍ້ທີ່ເວົ້າເຖິງຄວາມຮັກ, ວິ ຖີຊີວິດປະຈຳວັນ, ຜືນແຜ່ນດິນແຫ່ງກຳເນີດ ຫຼືບ່ອນຝັ່ງສາຍແຮ່ແຜ່ສາຍປີ ແລະເວົ້າເຖິງຄວາມ ພະຍາຍາມອົດທົນ ຕໍ່ສູ້ກັບໄພທຳມະຊາດຕ່າງໆ. ພ້ອມກັນນັ້ນເຂົາເຈົ້າ ຍັງມີເຄື່ອງດົນຕີຫຼາຍຢ່າງ ເຊັ່ນ: ຂຸ່ຍ, ປີ່, ກະຈັບປີ່, ສີຊໍ ແລະອື່ນໆ. ການນຸ່ງ ຖືຂອງຊົນເຜົ່ານີ້ ຜູ້ຊາຍມັກນຸ່ງໂສ້ງສີດຳມຸ່ຍ ຫຼືສີ ມ່ວ, ແຖຜ້ມຈົ່ງໄວ້ຍາວຄ່ຳສອກແລ້ວເປ້ຍໃສ່ ໜວກ. ສ່ວນແມ່ຍິງມັກນຸ່ງໂສ້ງສີດຳຍາວຮອດຕີນ, ເສື້ອຍາວຕິດກະດຸມທາງຂ້າງ ເອົາຜ້າຄຸມຫົວ.

ການດຳເນີນວິຖີຊີວິດ ທາງດ້ານ ເສດຖະກິດ

ຊົນເຜົ່າຫໍ້ ນີ້ປະກອບອາຊີບຕົ້ນຕໍ ດ້ວຍ ການເຮັດໄຮ່ປູກເຂົ້າຈ້າວ, ນອກຈາກນີ້ແລ້ວ ກໍ່ຍັງ ເຮັດສວນປູກພືດຜັກຕ່າງໆ. ເຂົາເຈົ້າມີປະສົບການ ໃນການເຮັດໄຮ່ແບບປະສົມປະສານ ຕາມແຕ່ລະ ໄລຍະຂອງລະດູການຜະລິດ. ການລ້ຽງສັດກໍ່ ເປັນອາຊີບສຳຮອງ ອີກຢ່າງໜຶ່ງທີ່ຊົນເຜົ່ານີ້ນິຍົມ ກັນ ເຊິ່ງໄດ້ແກ່ການລ້ຽງງົວ, ຄວາຍ ໂດຍມີຈຸດປະ ສົງຕົ້ນຕໍ ເພື່ອໃຊ້ແຮງງານ, ສ່ວນສັດປະເພດໝູ ແລະສັດປີກຕ່າງໆກໍ່ນິຍົມລ້ຽງເຊັ່ນກັນ, ແຕ່ສ່ວນ ຫຼາຍແລ້ວ ແມ່ນລ້ຽງໄວ້ເພື່ອເຮັດພິທີກຳຕ່າງໆ ແລະ ເຂົາເຈົ້າມັກຈະນຳເອົາຜົນຜະລິດກໍ່ຄືສັດລ້ຽງໄປ ຂາຍ ແລະແລກປ່ຽນສິ່ງຂອງອື່ນໆ ທີ່ຈຳເປັນໃນ ການດຳລົງຊີວິດປະຈຳວັນ ເຊັ່ນ: ເກືອ, ແປ້ງນົວ, ນ້ຳຕານ, ນ້ຳມັນເຊື້ອໄຟ... ສຳລັບວຽກງານດ້ານ ຫັດຖະກຳ ເປັນຕົ້ນແມ່ນການຫຍິບຖັກປັກແສ່ວ ແລະການຈັກສານຕ່າງໆຂອງຊົນເຜົ່າຫໍ້ແມ່ນເປັນ ທີ່ຮູ້ຈັກກັນດີມາຕັ້ງແຕ່ບູຮານນະການ.

Hor

Historical Background:

The Hor are an ethnic group that originally migrated from China during the nineteenth century. Today they have settled mostly in Phongsali province. They also live in Southern part of China.

Total population of the Hor is about 8,900 people.

Name and language:

The most common name for this group is "Hor", which they call themselves and other groups refer to them by. However, the true meaning of "Hor" remains unknown.

The Hor language is a Sino-Tibetan language, on the Sinitic branch. There is no alphabet for writing.

Beliefs, society, ceremonies and myths:

The Hor in Lao are followers of Mahayana Buddhism plus some are followers of Islam. The Hor style of Buddhism combines ancestral worship, Taoism, and Confucianism. Taoism to the Hor teaches meditation and the use of magic to gain wealth and health. Confucianism teaches ancestor worship and religious rituals.

For the Hor, there are many events and celebrations during the year. The most important celebration is New Years or "Boon Kin Chiang". This is same as the Chinese New Year and follows the lunar calendar. The Festival of the Hungry Ghosts is a time to pay respects to the spirits of the dead. Muslin Hor also practice Ramadan.

The Hor family unit is patriarchal and is of the nuclear unit. The father is the most powerful person in the family, and will often have more than one wife. Only sons can inherit family wealth and usually the first son will inherit the most wealth. In the past, Hor families were of the extended type, meaning many families and generations lived together in a house. Today it is more common for each family to have their own house.

The Hor often intermarry with other ethnic groups in Laos. Mostly, marriage mates are decided by the parents and usually both boys and girls marry at young ages.

Wives move into the husband's house after marriage. She will help take care of her husband's family.

Both Muslim and Buddhist Hor will bury their dead. However, if the deceased had died from a violent death, then the body will be cremated instead.

The Hor like to sing love songs, as well as the songs about everyday life, which expresses feelings about the motherland, human diligence, and the fights against nature and man. Musical instruments are the flute, guitar, traditional violin, and others.

Village and house.

Hor prefer to build their villages in lowlands and valleys. Villages will vary from 30 to 70 houses. The villages are not usually fenced in, but there may be simple fences around individual houses. Houses are built on the top of the ground, not on stilts like most other ethnic groups. The houses are rectangular in shape. Building materials and the size of the house will depend on the wealth of the family.

The interior of the house has a large living room which takes up about two thirds of the house. This will have a hearth in it. Hunting instruments like curved swords, and lances, are commonly used as house decorators and usually are located above the entrance door.

Costume:

The Hor dress like typical Chinese. Women wear black trousers, vests, jackets, and a cap. Men like to wear black-grey trousers and keep their hair long. Some Hor women have adopted the local dress of neighboring ethnic groups.

Agriculture and livelihood:

The Hor have traditionally been traders, but also practice agriculture. Usually, Hor grow ordinary rice and vegetables. They are skilled in integrating cultivation that suits each growing season. Animal breeding is also practiced. Cows and buffalos are raised for labor, and pigs and poultry are bred for offerings in different celebration and for food. These animals are sold or exchanged for other goods necessary for daily life, such as salt, seasoning, sugar, fuel and cloth. The Hor are also not hunters, preferring to buy their meat from other ethnic groups who are more skilled at hunting.

ຊົນເຜົ່າ ອາຄາ ປະຫວັດຄວາມເປັນມາ

ຊົນເຜົ່າອາຄາ ມີຖິ່ນຖານເດີມຢູ່ມົນທົນ ໄກວເຈົາ ແລະມົນທົນຢູນານ ປະເທດ ຈີນ ໃນປະ ຈຸບັນ. ພາຍ ຫຼັງທີ່ໄດ້ອົບພະຍົບລົງມາທາງຕອນໃຕ້ ຂອງມົນທົນ ຢູນານແລ້ວ ກໍ່ເຄື່ອນຍ້າຍໄປຢູ່ເຂດ ເມືອງວາ ແລະຊຸງຕຸງຂອງມຽນມາ, ບໍລິເວນເມືອງ ໄລເຈົາ ຂອງຫວຽດນາມ ແລ້ວຄ່ອຍໆ ເຄື່ອນຍ້າຍ ມາຢູ່ຕາມພູເຂົາ ໃນພາກເໜືອຂອງລາວເຮົາ ໄດ້ ປະມານ 200 ກວ່າປີມາແລ້ວ.

ສາເຫດທີ່ພາໃຫ້ເຂົາເຈົ້າເຄື່ອນຍ້າຍ ແມ່ນການຫຼົບຫຼີກສົງຄາມ, ການບີບບັງຄັບຕ່າງໆ ແລະການ ຂອກບ່ອນທຳການຜະລິດເຫຼົ່ານີ້ເປັນ ຕົ້ນ. ສະນັ້ນເມື່ອມາພົບບໍລິເວນທີ່ເໝາະສົມ ແກ່ ການຕັ້ງຖິ່ນຖານທີ່ຢູ່ອາໃສ ປະກອບກັບປົດສະ ຈາກຜູ້ລຶບກວນ, ເຂົາເຈົ້າຈຶ່ງໄດ້ທີ່ໝັ້ນຄົງບ່ອນຢູ່ ອາໃສ ຢູ່ບໍລິເວນດິນແດນຂອງ ພະມ້າ, ໄທ, ລາວ ແລະຫວຽດນາມ. ພ້ອມກັນນີ້ເຂດດັ່ງກ່າວຍັງເປັນ ເຂດທີ່ອຸດົມສົມບູນ ແລະມີອາກາດເຢືອກເຢັນສະ ບາຍຕະຫຼອດປີ.

ມາຮອດປະຈຸບັນນີ້ ຊົນເຜົ່າອາຄາ ຕັ້ງຖິ່ນ ຖານພູມລຳເນົາສ່ວນຫຼວງຫຼາຍ ຢູ່ບັນດາແຂວງ ພາກເໜືອຂອງລາວ ເຊັ່ນ ແຂວງ ຜົ້ງສາລີ, ຫຼວງ ນ້ຳທາ, ອຸດົມໄຊ ແລະບໍ່ແກ້ວ. ນອກຈາກນີ້ແລ້ວ ຊົນເຜົ່າອາຄາ ຍັງມີຢູ່ປະເທດ ໄທ, ມຽນມາ, ຈີນ ແລະຫວຽດນາມ ອີກດ້ວຍ.

ພົນລະເມືອງ ຂອງຊົນເຜົ່າອາຄາ ຢູ່ໃນ ລາວມີທັງໝົດ 66.108 ຄົນ, ຍິງ 33.000 ຄົນ. ເທົ່າກັບ1,4% ຂອງພົນລະເມືອງ ທົ່ວປະເທດ (ຕາມສະຖິຕິການສຳຫຼວດພົນລະເມືອງ ຄັ້ງທີ II ປີ1995).

ຊື່ເອີ້ນ

ຊົນເຜົ່ານີ້ມີຊື່ເອີ້ນຫຼາຍຊື່, ເຂົາເຈົ້າເອີ້ນ ຕົນເອງວ່າ "ອາຄາ", ສ່ວນຊົນເຜົ່າອື່ນເອີ້ນເຂົາ ເຈົ້າວ່າ " ອີກໍ " ແຕ່ຊື່ທີ່ເຂົາເຈົ້າມັກ ແລະຊື່ທີ່ໃຊ້ ໃນທາງການແມ່ນ "ຊົນເຜົ່າອາຄາ".

ຊົນເຜົ່າອາຄາ ປະກອບດ້ວຍຫຼາຍແຊ ດ້ວຍກັນຄື: ຈີຈໍ. ປູລີ, ປານາ, ເຟ, ໂອມາ, ມູກຸຍ, ລູມາ, ເອີປາ, ຈີເປຍ, ມູຈີ, ຢາເອີ, ເຄີ, ມູເຕີນ, ມະ ມ່ວງ, ພູຂວາ, ປີລູ, ປີຂໍ, ພູຊາງ ແລະກົງສາດ.

ພາສາ

ພາສາຂອງຊົນເຜົ່າອາຄານີ້ ຈັດຢູ່ໃນ ໝວດພາສາຈີນ-ຕິເບດ, ສາຂາຕິເບດ-ມຽນມາ. ເຂົາເຈົ້າບໍ່ມີຕົວໜັງສືຂຽນ.

ຮີດຄອງປະເພນີ, ຄວາມເຊື່ອຖື ແລະວັດທະນະທຳ-ສັງຄົມ

ເຖິງແມ່ນວ່າ ຈະບໍ່ໄດ້ມີການບັນທຶກເປັນ ລາຍລັກອັກສອນ ຊົນເຜົ່າອາຄາກໍ່ມີຕຳນານ, ຮີດ ຄອງປະເພນີ, ວັດທະນະທຳ ແລະວິຖີການດຳລົງ ຊີວິດ ທີ່ຫຼວງຫຼາຍ ແລະອຸດົມສົມບູນ ເຊິ່ງຖືວ່າເປັນ ເອກະລັກຂອງຕົນເອງ, ເປັນບົດສະຫຼຸບຂອງຄວາມ ຄິດ, ປະສົບການຂອງການດຳລົງຊີວິດ ທີ່ໃຫ້ຄວາມ ສຳຄັນແກ່ການເປັນຄົນ ໂດຍສືບທອດມາແຕ່ເຊັ່ນ ປູ່ຍ່າຕາຍາຍ ຈົນຮອດທຸກວັນນີ້. ຊົນເຜົ່າອາຄາ ມີ ຄວາມເຊື່ອໃນເລື່ອງຜີຢ່າງໜັກແໜ້ນ ແລະຍາກທີ່ ສຸດຈະປ່ຽນໃຈໄປເຊື່ອຖືສາສະໜາອື່ນ. ຜີທີ່ເຂົາເຈົ້ າເຊື່ອຖືມີທັ້ງຜີດີ ແລະຜີຮ້າຍ. ຜີດີ ແລະເປັນສິລິ ມຸງຄຸນໃຫ້ແກ່ເຂົາເຈົ້າ ໄດ້ແກ່ຜີເຮືອນ ແລະຜີບ້ານ ເຊິ່ງຖືວ່າເປັນວິນຍານຂອງບັນພະບູລຸດ, ຄອຍໃຫ້ ຄວາມດູແລຮັກສາ, ປົກປ້ອງຄຸ້ມຄອງສະມາຊິກໃນ ຄົວເຮືອນ. ສະນັ້ນໃນທຸກໆເຮືອນ ຈະມີຮ້ານແທນ ບູຊາຜີ. ສ່ວນຜີຮ້າຍໄດ້ແກ່ຜີຕົ້ນໄມ້, ຜີພູຜາປ່າດົງ ແລະຜີແມ່ນ້ຳລຳເຊເຫຼົ່ານີ້ ເຊິ່ງອາດຈະເຮັດໃຫ້ ເຂົາເຈົ້າເກີດມີຄວາມເຈັບໄຂ້ໄດ້ປ່ວຍຕ່າງໆ.

ຈາກຄວາມເຊື່ອຖືທີ່ໄດ້ກ່າວມາ, ເຂົາເຈົ້າ ກໍ່ຈະມີພິທີກຳຫຼາຍຢ່າງໃນລັກສະນະຂອງການ ວິງວອນ, ຮ້ອງຂໍຈາກສິ່ງສັກສິດທີ່ຢູ່ໃນດ້ານດີ ແລະດ້ານຮ້າຍ ເພື່ອຈະໃຫ້ຄວາມຄຸ້ມຄອງ, ຮັກສາ ຫຼືປົດເປົ່າສິ່ງຊົ່ວຮ້າຍຕ່າງໆໃຫ້ບັນເທົາເບົາບາງລົງ

ໄດ້. ຄຽງຄູ່ກັນນີ້ ຊົນເຜົ່າອາຄາຍັງມີການເອົາໃຈໃສ່ຕໍ່ສິ່ງສັກສິດທັງຫຼາຍ ໂດຍການ"ຢູ່ກຳ ຫຼືຄະລຳ" ເຊິ່ງໄດ້ແກ່ການປະຕິບັດຕົນໃຫ້ຢູ່ໃນຂອບເຂດຂອງຮີດຄອງປະເພນີ, ບໍ່ກະທຳ ຫຼືລ່ວງລະເມີດ ຫຼືລົບລູ່ສິ່ງສັກສິດຕ່າງໆທີ່ມີຢູ່ໃນບ້ານ ແລະເຮືອນ. ພ້ອມນີ້ກໍ່ມີການຢຸດພັກວຽກງານຕ່າງໆໃນມື້ທີ່ຢູ່ກຳ ລວມທັງການເຮັດວຽກງານການຜະລິດໃນໄຮ່ນາ ທີ່ມີຄວາມສຳຄັນຕໍ່ການດຳລົງຊີວິດປະຈຳວັນຂອງເຂົາເຈົ້າ.

ໃນໄລຍະຜ່ານມາ ຊົນເຜົ່າອາຄາ ມີຄວາມເຄັ່ງຄັດໃນເລື່ອງຂອງການປະຕິບັດຮີດຄອງປະເພນີ, ມີຂໍ້ຫ້າມ ແລະການຄະລຳຢ່າງຫຼວງຫຼາຍເຊັ່ນ:

- ຫ້າມຈັບບາຍ, ແຕະຕ້ອງວັດຖຸສິ່ງຂອງທີ່ຢູ່ບໍລິເວນ ປະຕູໂຂງບ້ານ.

- ຫ້າມແກ້ເສື້ອປະຄຶງ, ຫ້າມປົດເກີບ, ຫ້າມເອົາຊິ້ນດິບເຂົ້າ ແລະຜ່ານບ້ານ.

- ຫ້າມຂັບ, ຮ້ອງ, ຟ້ອນ ແລະລົມບ່າວ-ສາວຢູ່ໃນເຮືອນ.

- ແມ່ຍິງມີລູກ (ມານທາງ) ບໍ່ໃຫ້ເກີດລູກຢູ່ບ້ານ.

- ໝູເກີດລູກຢູ່ບ້ານ ແລະໝູເກີດລູກ 1-2 ໂຕບໍ່ໃຫ້ລ້ຽງ (ຕ້ອງຂ້າຖິ້ມ ຫຼືຂ້າໃຫ້ຜູ້ອື່ນກິນ).

- ເກີດລູກຝາແຝດ, ອະໄວຍະວະບໍ່ຄົບຖ້ວນ ຫຼືຜິດປົກກະຕິຕ້ອງຂ້າຖິ້ມ.

- ແມ່ຮ້າງນາງໝ້າຍ ບໍ່ໃຫ້ຕາຍຢູ່ບ້ານ, ຖ້າຕາຍຢູ່ບ້ານ ຕ້ອງໄດ້ຍ້າຍບ້ານໄປຢູ່ບ່ອນໃໝ່.

ນອກຈາກນີ້ກໍຍັງມີຄວາມເຊື່ອ ແລະການຍຶດຖືປະຕິບັດໃນຊີວິດປະຈຳວັນຢ່າງຫຼວງຫຼາຍ, ແຕ່ມາຮອດປະຈຸບັນບາງຮີດຄອງ ແລະບາງຂໍ້ຫ້າມກໍ່ໄດ້ມີການປະຖິ້ມແລ້ວ.

ດ້ານລະບົບຄອບຄົວເລືອດເນື້ອເຊື້ອສາຍ ແລະການສືບຕະກຸນ, ຊົນເຜົ່າອາຄາສືບເຊື້ອສາຍຕະກຸນທາງພໍ່ເປັນສຳຄັນ, ໝາຍຄວາມວ່າ: ຜູ້ຊາຍພາຍຫຼັງທີ່ແຕ່ງດອງແລ້ວ ຕ້ອງພາເມຍມາປຸກເຮືອນນ້ອຍ ສຳລັບນອນເປັນຊົ່ວຄາວ ຢູ່ຕິດເຮືອນໃຫຍ່ຂອງພໍ່ແມ່ຕົນ, ທັງນີ້ກໍ່ຍ້ອນວ່າເຮືອນຫຼັງໜຶ່ງ ສາມາດນອນໄດ້ແຕ່ຄອບຄົວດຽວ, ແຕ່ໃນເມື່ອຜູ້ເປັນພໍ່ເສຍຊີວິດລູກຊາຍຈຶ່ງຈະມີສິດ ແລະອານຸຍາດໃຫ້ມານອນແທນບ່ອນພໍ່ ແລະຖ້າຜູ້ເປັນແມ່ຜົວຕາຍ, ລູກໄພ້ຈຶ່ງສາມາດມານອນແທນບ່ອນໄດ້. ລູກຊາຍ ແລະລູກໄພ້ສາມາດເຮັດກິດຈະກຳທຸກຢ່າງລວມທັງການກິນເຂົ້າຮ່ວມກັບຄອບຄົວຂອງພໍ່ແມ່ຜົວ, ຝ່າຍຍິງກໍ່ຍັງສາມາດໄປຢ້ຽມຢາມຄອບຄົວພໍ່ແມ່ຂອງຕົນໄດ້, ແຕ່ຕ້ອງຄຳນຶງວ່າເປັນຕະກຸນຂອງຜົວ ພ້ອມທັງມີໜ້າທີ່ຄວາມຮັບຜິດຊອບຢ່າງຫຼວງຫຼາຍໃນຄອບຄົວຂອງພໍ່ແມ່ຜົວ.ໃນກໍລະນີລູກຊາຍຢາກຈະປຸກເຮືອນໃໝ່ ກໍ່ຕ້ອງປຸກຢູ່ບໍລິເວນໃກ້ໆເຮືອນພໍ່ແມ່ຂອງຕົນເອງ. ສຳລັບແມ່ຍິງ ທີ່ຢູ່ໃນໄວອາຍຸກະສຽນເປັນສາວສ່ວນຫຼາຍແລ້ວ ຈະບໍ່ໄດ້ນອນຢູ່ເຮືອນນຳພໍ່ແມ່. ລະບົບຄອບຄົວຂ້ອນຂ້າງ ເປັນລະບົບຄອບຄົວຂະຫຍາຍ.ໃນວົງຄະນະຍາດຂອງສັງຄົມ ຊົນເຜົ່າອາຄາຜູ້ຊາຍຈະມີບົດບາດສຳຄັນທີ່ສຸດ ທັງຢູ່ໃນເຮືອນ ແລະໃນບ້ານເຊິ່ງໃນບ້ານໜຶ່ງໆ ນອກຈາກຈະມີນາຍບ້ານ ທີ່ໄດ້ຮັບການເລືອກຕັ້ງຢ່າງເປັນທາງການແລ້ວ, ເຂົາເຈົ້າຍັງມີຜູ້ນຳທາງດ້ານຄວາມເຊື່ອຖື ແລະຮີດຄອງປະເພນີ ເຊິ່ງເອີ້ນວ່າ " ເຈົ້າບ້ານ " ໜ້າທີ່ກໍ່ຄືເບິ່ງແຍງດູແລສະຖານທີ່ສັກສິດທັງຫຼາຍຂອງບ້ານເຊັ່ນ: ປະຕູໂຂງ, ບ່ອນໂອ້ນຊາ, ບໍ່ນ້ຳ, ປ່າຊ້າ ແລະຫໍຜີບ້ານ. ຖ້າຫາກວ່າມີເຫດການຕ່າງໆ ທີ່ເກີດຂຶ້ນໃນບ້ານ, ລູກບ້ານຕ້ອງມາແຈ້ງແກ່ເຈົ້າບ້ານກ່ອນເປັນຄົນທຳອິດ ເພື່ອຈະໄດ້ສົມທົບກັນກັບເຖົ້າແກ່ໃນບ້ານແກ້ໄຂ ຫຼືບຳບັດປັດເປົ່າຢ່າງຮີບດ່ວນ. ພ້ອມກັນນີ້ ກໍ່ຍັງມີຫົວໜ້າຊາວໜຸ່ມທີ່ຕັ້ງຂຶ້ນຕາມຮີດຄອງ ເຊິ່ງມີໜ້າທີ່ຮັບຜິດຊອບ ໃນການໃຫ້ຊາວໜຸ່ມຢູ່ບ້ານເຂົ້າຮ່ວມໃນກິດຈະກຳຕ່າງໆລວມທັງການຮັບແຂກ ທີ່ມາຈາກພາຍນອກ.

ລັກສະນະບ້ານເຮືອນ ຂອງຊົນເຜົ່າອາຄາ ໂດຍທົ່ວໄປແລ້ວ ເຂົາເຈົ້າມັກຕັ້ງບ້ານຢູ່ຕາມສັນພູເຂົາ, ຮັບແສງແດດ, ສາຍລົມຢ່າງເຕັມທີ່, ແຕ່ຕ້ອງມີແຫຼ່ງນ້ຳທີ່ເພິ່ງພາໄດ້ ແລະມີເນື້ອທີ່ການຜະລິດ

ຢູ່ອ້ອມຮອບ. ກ່ອນຈະຕັ້ງບ້ານເຂົາເຈົ້າຈະພິທີກຳ, ມີການສ່ຽງທວາຍ ເພື່ອໃຫ້ແນ່ໃຈວ່າບ່ອນທີ່ເລືອກນັ້ນເຈົ້າຖິ່ນຖານເຕັມໃຈ ແລະອະນຸຍາດໃຫ້ຈະປຸກສ້າງໄດ້. ສຳລັບເຮືອນເຂົາເຈົ້າມັກຢູ່ເຮືອນຮ້ານ, ກ້ອງລ່າງເອົາໄວ້ເພື່ອສັດລ້ຽງ, ເປັນບ່ອນສຳລັບໄວ້ຟືນ ແລະເຄື່ອງມືເຄື່ອງໃຊ້ໃນການຜະລິດ. ເຮືອນຂອງເຂົາເຈົ້າມີບັນຍາກາດທີ່ເຄັ່ງຂຶມຢ່າງປະຫຼາດ, ຍ້ອນວ່າທຸກເຮືອນຈະຕ້ອງມີຮ້ານບູຊາ ທີ່ເປັນບ່ອນສະຖິດຂອງວິນຍານບັນພະບຸລຸດ. ພາຍໃນເຮືອນແບ່ງເປັນສອງເຂດຄື: ເຂດແມ່ຍິງ ແລະເຂດຜູ້ຊາຍ ໂດຍ ມີຝາກັ້ນຈາກຝາດ້ານຫ້ອງນອນ ໄປເຖິງຝາເຄິ່ງກາງເຮືອນ. ການທີ່ຄົນພາຍນອກຈະເດີນຜ່ານເຮືອນ ແຕ່ປະຕູໜຶ່ງອອກອີກປະຕູໜຶ່ງນັ້ນ ຖືວ່າຜິດມາລະຍາດ. ອີກປະການໜຶ່ງ ການທີ່ຄົນພາຍນອກຈະເດີນຜ່ານບ້ານເຜົ່າອາຄາ ໂດຍບໍ່ພັກເຊົາເລັກນ້ອຍນັ້ນ ຈະເຮັດໃຫ້ເຂົາເຈົ້າເກີດຄວາມບໍ່ພໍໃຈ. ສະນັ້ນເພື່ອຮັກສາມາລະຍາດ ແລະສ້າງຄວາມພໍໃຈໃຫ້ແກ່ເຂົາເຈົ້ານັ້ນ ຢ່າງໜ້ອຍຕ້ອງແວ່ເຮືອນ ເພື່ອຖາມຂ່າວຄາວ ຫຼືດື່ມນ້ຳ ແລະອາຫານທີ່ເຂົາເຈົ້າໄດ້ຈັດຫາມາຕ້ອນຮັບ.

ປະເພນີກ່ຽວກັບການເກີດລູກ, ເມື່ອແມ່ຍິງຕັ້ງຄັນຖືວ່າໂຊກດີ ສະນັ້ນໃນລະຫວ່າງການຕັ້ງຄັນ ທັງຜົວ ແລະເມຍຕ້ອງລະວັງບໍ່ເຮັດຜິດຂໍ້ຫ້າມຕ່າງໆ ເພື່ອຄວາມປອດໄພ ແລະຄວາມແຂງແຮງຂອງແມ່ ແລະເດັກ. ຊົນເຜົ່າອາຄາ ສ່ວນຫຼາຍເກີດລູກຢູ່ໃນເຮືອນ ໂດຍມີແມ່ຜົວ ຫຼືຜູ້ໃຫ່ຍທີ່ມີປະສົບການ ຄອຍໃຫ້ຄວາມຊ່ວຍເຫຼືອ. ສຳລັບການຕາຍນັ້ນເຂົາເຈົ້າ ຖືວ່າເປັນການປ່ຽນສິບຈາກໂລກມະນຸດໄປສູ່ໂລກ ອັນເປັນບ່ອນສະຖິດຂອງວິນຍານບັນພະຊົນ. ສະນັ້ນຈຶ່ງຕ້ອງມີພິທີກຳຕ່າງໆຢ່າງຖືກຕ້ອງເພື່ອໃຫ້ວິນຍານຂອງຜູ້ຕາຍບໍ່ເປັນພິດໄພ ແລະຈະຊ່ວຍຄຸ້ມຄອງລູກຫຼານ ໃນອະນາຄົດຕໍ່ໄປກ່ອນຈະຈັດພິທີສົ່ງສະການດ້ວຍການຝັງ.

ສຳລັບພິທີກຳ ແລະເທດສະການບຸນປະເພນີໃຫຍ່ທີ່ສຳຄັນໃນປີໜຶ່ງໆຊົນເຜົ່າອາຄານັ້ນ ຈະມີຢ່າງຫຼວງຫຼາຍເຊັ່ນ: ບຸນໂອ້ນຊາ ຈັດຂຶ້ນໃນເດືອນ 8-9, ບຸນປີໃໝ່ຈັດຂຶ້ນໃນເດືອນ 1-2, ພິທີກຳກ່ຽວກັບການຜະລິດໄດ້ແກ່: ພິທີກຳລ້ຽງຜີບໍ່ນ້ຳ, ພິທີກຳກ່ອນສັກເຂົ້າໄຮ່, ພິທີກຳໄລ່ແມງໄມ້ ແລະຕັກແຕນ, ພິທີກຳລ້ຽງຜີເຮືອນກ່ອນ ແລະຫຼັງເກັບກ່ຽວເຂົ້າ, ພິທີລ້າງບ້ານໄລ່ຜີອອກຈາກບ້ານ, ພິທີສ້ອມແປງປະຕູໂຂງປະຈຳບ້ານ ແລະພິທີອື່ນໆ.

ດ້ານສິລະປະວັນນະຄະດີ ຂອງຊົນເຜົ່າອາຄາ, ເຂົາເຈົ້າມີກອນຂັບຮ້ອງລຳ, ມີຄຳສຸພາສິດ ແລະຕຳນານທີ່ກ່າວເຖິງບັນພະບຸລຸດຂອງເຂົາເຈົ້າ. ຊົນເຜົ່າອາຄາມີເຄື່ອງນຸ່ງຫົ່ມ ແລະການເອ້ຢ້ອງ ທີ່ເປັນເອກະລັກປະຈຳເຜົ່າທັ້ງຂອງຜູ້ຊາຍ ແລະແມ່ຍິງ, ເຊິ່ງການແຕ່ງກາຍນັ້ນຈະແຕກຕ່າງກັນຕາມໄວອາຍຸ ໂດຍສະເພາະຢ່າງຍິ່ງຈະພົບເຫັນໃນແມ່ຍິງຂອງຊົນເຜົ່ານີ້.

ການດຳເນີນຊີວິດທາງດ້ານເສດຖະກິດ

ການດຳເນີນຊີວິດ ທາງດ້ານເສດຖະກິດຂອງຊົນເຜົ່າອາຄາ ໃນໄລຍະຜ່ານມາແມ່ນຕິດພັນກັບທຳມະຊາດ, ອາຊີບສຳຄັນຕົ້ນຕໍ ຂອງຊົນເຜົ່າອາຄາກໍຄືການເຮັດໄຮ່ປູກເຂົ້າ, ປູກຝ້າຍ ນອກຈາກນັ້ນເຂົາເຈົ້າຍັງປູກພືດປະເພດທີ່ມີທາດແປ້ງ ແລະພືດຜັກອື່ນໆ ເພື່ອຕອບສະໜອງຄວາມຕ້ອງການ ກໍຄືການບໍລິໂພກໃນຊີວິດປະຈຳວັນຂອງຄອບຄົວ. ສ່ວນທີ່ເຫຼືອກໍ່ຈະນຳໄປແບ່ງປັນໃຫ້ຍາດຕິພີ່ນ້ອງ ແລະນຳໄປຂາຍ ຫຼືແລກປ່ຽນສິ່ງຂອງທີ່ຈຳເປັນ ເຊິ່ງບໍ່ສາມາດຜະລິດໄດ້ໃນບ້ານເຮືອນ ເຊັ່ນ: ເກືອ, ນ້ຳຕານ, ແປ້ງນົວ ແລະເຄື່ອງໃຊ້ສອຍຕ່າງໆ. ອາຫານໃນຊີວິດປະຈຳວັນ ນອກຈາກເຂົາເຈົ້າຈະຜະລິດເອງແລ້ວ ຍັງໄດ້ຈາກການໄປຊອກຫາຕາມທຳມະຊາດອີກ. ສັດລ້ຽງທີ່ເຂົາເຈົ້ານິຍົມກັນລ້ຽງ ໄດ້ແກ່ ງົວ, ຄວາຍ, ໝູ ແລະໄກ່, ແຕ່ເປົ້າໝາຍຂອງການລ້ຽງກໍ່ເພື່ອໄວ້ໃຊ້ແຮງງານ, ເຂົາເຈົ້າບໍ່ນິຍົມຂ້າສັດເຫຼົ່ານີ້ກິນເປັນອາຫານປະຈຳວັນ, ເຂົາເຈົ້າຈະຂ້າກໍ່ຕໍ່ເມື່ອມີງານບຸນປະເພນີ, ເຮັດຮີດຄອງ ຫຼືແຂກຄົນ ແລະຍາດຕິພີ່ນ້ອງທາງໄກມາຢ້ຽມຢາມເທົ່ານັ້ນ.

Akha

Historical Background:

The Akha originally settled in the Kuaichao and Yunan, which are today provinces of China. After moving down to the Southern part of Yunan, they later moved to Va and Xiengtung districts of Burma, and then to Lai Chao district of Vietnam. Only later did they settle in the mountainous areas in northern Laos during the last 200 years.

Escape from war and the need for land for cultivation were the main reasons of these migrations. The Akha have found Myanmar, Thailand, Laos and Vietnam as the most peaceful and agricultural-suited places to live in. The natural richness and mild weather throughout the year are other factors that attracted them to settle in those areas.

Currently, most of the Akha are living in the Northern part of Laos, mainly in Phongsali, Luangnamtha, Udomsai, and Bokeo provinces. Akha are also living in Thailand, Myanmar, China and Vietnam.

The total population of the Akha in Laos is 66,108 people, where 33,000 are women. This is 1.4 percent of Laos' total population based on the second population census 1995.

Name and language:

The Akha call themselves "Akha" while other ethnic groups call them "Kor or Ikor". However, the preferable name and also the official name is "Akha Ethnic Group"

There are many sub-group of Akha, namely Chichor, Pouly, Pana, Fe, Ooma, Nukui, Luma, Eupa, Chipia, Mochi, Ya eu, Kher, Mutern, Mamouang, Poukuang, Pilou, Pisor, Pousang and Kongsaad.

The Akha language is in the China-Tibetan group of languages and is placed on the branch of the Tibetan-Myanmar languages. Akha has no written alphabet.

Beliefs, society, ceremonies and myths:

Although there is no written history about the Akha, they have a rich oral history of their traditions and culture. It is a summary of thoughts and true life experiences which are inherited from their ancestors. This is called the "Akhazang", or the "Akha way".

The Akha heavily believe in spirits and it is not easy for them to give up this tradition, as their belief in spirits is strongly ingrained in their culture. They believe spirits are both "good" and "bad". House and village spirits are believed to be "good" as they represent spirits of their ancestors who look after their family members. Trees, forests and rivers spirits are considered bad spirits. The bad ghosts may cause them sickness and illness.

Based on these beliefs, the Akha will pray, both to the good and bad spirits to look after them or save them from evil happenings. Also, Akha also express their respects by yukham or kalum". Yukham is when a woman who has just given birth must stay by a lit fire. Kalum is the temporary prohibition from eating or doing some things that are usually considered a routine activity. It is important to not break these traditional rules or insult the house and village spirits. Women must stop working during their Yukam even if the activity is considered very important for their daily living.

In the past, the Akha strictly obeyed their traditional rules and prohibitions. Some of these that were followed at certain times are:

- Do not touch any items or

articles in the village gate area.

- Do not take off shirts and shoes. Do not bring raw meat into the village.
- Do not sing and dance. Conversation between boys and girls was also not allowed
- Pregnant woman that were not married were not allowed to give birth in the village.
- Do not allow pigs to give birth in the village, and if only one or two baby pigs were born, they must not be allowed to breed in the future. They must be killed or offered as food to others.
- Twin or abnormal babies would be killed.
- Widow or divorced women were not allowed to die in the village. If they did die in a village, the deceased's family had to move and resettle in another place.

There are other rules and taboos that had to be obeyed and were enforced daily in the past. However today some of these have fallen out of favor and are no longer practiced.

Akha follow a paternal family line. After marriage a man must bring his wife to live in a small house built next to the main house of his parents. The son or daughter-in-law will be allowed to move in the main house when only the husband's father or mother passes away. However, the new couple can have a normal daily routine, such as eating together with the husband's parents. If the son desires to built a new house the house must be in the area next to his parents' house.

It is considered a great happiness if a wife becomes pregnant, therefore during the pregnancy the husband and wife should not break any rules for the sake of the mother and child's health. When giving birth, only the husband's mother assists in the birth. After the birth, two chickens are sacrificed to the spirits.

Akha believe that death is a transformation from the human world to another spiritual world of their ancestors. Therefore, before burying the body, there are many performances that are carried out so the deceased spirit will not be harmful for them and will also support their children's future. The body is washed and pieces of silver are put in the mouth. Death rites and chants will last for two days. The body is placed in an elaborate coffin and buried. The next day the family visits the gravesite, but will never visit again. The following year a ceremony is held where the family asks the soul of the deceased to return to the household and watch over the family.

The Akha family system is an expanded system. In Akha society, men usually are the most important figure in house and village. In a village there will be a leader versed in belief and tradition, who acts a headman. The main activities of this headman are looking after the important and respected things in the village, such as the village gate, swing, water source, cemetery, and spirit place. This leader will also be the first person to be informed if unpleasant things happen so together with elderly people in the village, he will solve the problem as soon as possible. Also, there is a leader of the youth in the village. His main duty is to recommend activities for young people including the welcoming of outside guests.

For Akha, there are many performances and major celebrations in a year, such as the celebration of the swing in August to September, New Year celebration

in January to February, and celebrations related to agricultural production. The Akha will pray to guardian spirits of the water source before rice plantation, asking them to scare away insects and grasshoppers.

Village and House:

The Akha choose a site for a new village by using an egg as a test. The main shaman drops an egg in a small, freshly dug hole, and if it breaks, this means that the spirits of the land have accepted the villagers to construct a village. The shaman will build his house on the spot where the egg was dropped.

The villages sit in altitudes from 600 to 1000 meters, and are usually on a hillside in some cleared forestland. An average village has between forty and fifty houses.

The Akha have two styles of house. One style is to build on stilts, so the house is about one meter above the ground. The other style is to build the house on the ground. Floors are bamboo mats, wood planks, or hard earth, depending on the style of the house. Walls are made of woven bamboo and the roof is heavy thatch. Akha houses have no windows, but are well protected from wind, rain, and cold weather. Houses always have two doors, one at the front and one in the back. A wall that divides the house into areas for men, and areas for women separates the houses.

Akha villages are recognizable by the large wooden swings that are used during festivals and celebrations. There are also two important gates called the law ka. Spirits that protect the village inhabits these gates.

Costume:

Akha women have perhaps the most colorful and interesting costume of the entire minority group in Laos. There are many different styles of dress, but a common style is as follows. Elaborate headdresses are worn that are made of a series of bamboo rings covered with straw. This is covered with silver balls and silver coins, with colored threads at the sides. Colorful short skirts are worn with tight-fitting jackets. The skirts are often dark blue or black, and the legs are covered with leggings that go from the knee to the ankle. This is a rough description of the dress, as it can vary among the different Akha groups.

The men tend to wear more modern clothing; however some still wear the traditional blue loose-fitting trousers and blue jackets. A white vest is often worn under the jacket. The Akha make all of their traditional clothing. The women spin cotton or hemp to make cloth. Then they embroider the cloth with naturally died threads and yarns.

Agriculture and livelihood:

Akha traditionally practiced a primitive form of slash-and-burn agriculture that would leave the soil exhausted after three or four growing seasons. Their three main crops are dry-land rice, maize, and cotton. They would also grow vegetables, peanuts, spices, and sometimes tea. However, one crop the Akha have grown for a long time is opium poppies, which have led to problems, including addiction to opium.

The Akha are also skilled foragers at finding many wild fruits and vegetables. They are skilled hunters, using traps, crossbows and old muskets to hunt large and small game. They also breed cows, buffalos, pigs, and chickens. However, it is unpopular to eat those animals as daily food, unless there are special traditional celebrations or occasions there are guests.

ຊົນເຜົ່າຮ່າຍີ່ ປະຫວັດຄວາມເປັນມາ:

ຊົນເຜົ່າຮ່າຍີ່ ແມ່ນຊົນເຜົ່າໜຶ່ງ ທີ່ນອນຢູ່ໃນວົງຄະນະຍາດແຫ່ງຊາດລາວ. ເຂົາເຈົ້າໄດ້ມີປະຫວັດຄວາມເປັນມາໆຈາກດິນແດນປະເທດຈີນ ໃນປະຈຸບັນເຂົາເຈົ້າໄດ້ເຄື່ອນຍ້າຍ ແລະອົບພະຍົບມາຕັ້ງພູມລຳເນົາຢູ່ປະເທດ ຫວຽດນາມ ເຂດ ແຂວງ ໄລເຈົາ, ລາວກາຍ, ແຕ່ເນື່ອງຈາກທີ່ດິນທຳກາມຜະລິດຖືກຈຳກັດສົມທົບກັບສະພາບເສີກສົງຄາມໃນສະໄໝປະຫວັດສາດ ທີ່ຍາວນານ ຈຶ່ງເຮັດໃຫ້ເຂົາເຈົ້າເຄື່ອນຍ້າຍມາຕັ້ງຫຼັກປັກຖານຢູ່ເຂດເມືອງ ຍອດອູ ແຂວງ ຜົ້ງສາລີ ໄດ້ປະມານ 200 ປີແລ້ວ.

ນອກຈາກເຂົາເຈົ້າຕັ້ງພູມລຳເນົາ ຢູ່ເຂດເມືອງ ຍອດອູ ແຂວງ ຜົ້ງສາລີ ແຫ່ງ ສ.ປ. ປ. ລາວ ແລ້ວ. ຊົນເຜົ່າຮ່າຍີ່ ຍັງມີຢູ່ແຂວງ ໄລເຈົາ ຂອງ ສ. ສ.ຫວຽດນາມ ແລະດິນແດນຕອນໃຕ້ແຫ່ງ ສ.ປ ຈີນ ອີກດ້ວຍ.(ຕາມສະຖິຕິສຳຫຼວດຜົນລະເມືອງທົ່ວປະເທດ ຄັ້ງທີ II ປີ 1995). ຊົນເຜົ່າ." ຮ່າຍີ່ " ໃນ ສ.ປ.ປ.ລາວ ມີພົນລະເມືອງທັງໝົດ 1.122 ຄົນ, ຍິງ 528 ຄົນ.

ຊື່ເອີ້ນ:

ຊົນເຜົ່າ " ຮ່າຍີ່ " ມີຫຼາຍຊື່ເອີ້ນເປັນຕົ້ນຄື: ອູນີ, ຊາອູນີ ແລະຮ່າຍີ່ແຕ່ສຳລັບຊື່ທີ່ເຂົາເຈົ້າ, ຊື່ທີ່ສະໜັກໃຈ ເອີ້ນຕົນເອງ ແລະຊື່ທີ່ໃຊ້ທາງລັດຖະການໃນປະຈຸບັນ ແມ່ນຊົນເຜົ່າ " ຮ່າຍີ່ " .

ພາສາ:

ຊົນເຜົ່າຮ່າຍີ່ ເຖິງວ່າເຂົາເຈົ້າບໍ່ມີຕົວໜັງສືຂຽນ, ແຕ່ເຂົາເຈົ້າມີພາສາປາກເວົ້າສະເພາະຂອງຊົນເຜົ່າຕົນເອງຄ້າຍຄືກັບພາສາຂອງຊົນເຜົ່າສີລາ, ອາຄາ ແລະໂລໂລ. ພາສາຂອງຊົນເຜົ່າຮ່າຍີ່ ຈັດເຂົ້າໃນໝວດ ພາສາຈີນ-ຕິເບດ, ສາຂາຕິເບດ-ມຽນມາ, ພ້ອມກັນນີ້ເຂົາເຈົ້າຍັງສາມາດເວົ້າໄດ້ຫຼາຍພາສາ ເຊັ່ນ: ພາສາລື້, ໄທ ເໜືອ, ສີລາ ແລະອາຄາ ເຊິ່ງມີຄວາມສະດວກ ໃນການແລກປ່ຽນທາງດ້ານເສດຖະກິດ ແລະວັດທະນະທຳ ລະຫວ່າງເຜົ່າດັ່ງກ່າວ.

ຮີດຄອງປະເພນີ, ຄວາມເຊື່ອຖື ແລະວັດທະນະທຳ-ສັງຄົມ :

ຊົນເຜົ່າຮ່າຍີ່ ຕັ້ງພູມລຳເນົາຢູ່ເຂດຫ່າງໄກສອກຫຼີກ, ການຕິດຕໍ່ກັບສັງຄົມພາຍນອກມີໜ້ອຍດ້ວຍເຫດນັ້ນເຂົາເຈົ້າຈຶ່ງໄດ້ມີຄວາມເຊື່ອຖືຮີດຄອງປະເພນີເປັນຫຼັກ ໂດຍມີຄວາມເຄົາລົບບູຊາ ແລະມີຄວາມເຊື່ອໃນເລື່ອງສິ່ງສັກສິດທັ້ງປວງເຊັ່ນ: ຜີບັນພະບຸລຸດ, ຜີພໍ່ແມ່, ຜີບ້ານ. ເວລາເຮັດບຸນປີໃໝ່ ກໍ່ເອົາອາຫານໄປຖວາຍໃຫ້ຜີດັ່ງກ່າວ.ພ້ອມກັນນັ້ນຍັງເຊື່ອຜີຄົນຕາຍໜຶ, ຜີກິກ ໄມ້ ແລະອື່ນໆທີ່ມັກເຮັດໃຫ້ຄົນເຈັບໄຂ້ໄດ້ພະຍາດ.

ຄຽງຄູ່ນັ້ນແລ້ວເຂົາເຈົ້າຍັງມີພິທີກຳຕ່າງໆ ເປັນຕົ້ນແມ່ນພິທີກຳກ່ອນຈະກ່ຽວເຂົ້າ ເພິ່ນເອົາໄກ່, ເປັດໄປຖວາຍຜີໄຮ່ຫຼືນາ, ພິທີກຳໃນການຂອກທີ່ດິນຕັ້ງບ້ານ, ເຮືອນ, ພິທີກຳຕັ້ງເຮືອນໃໝ່, ພິທີກຳຮຽກຂວັນເຂົ້າ ແລະຄົນດ້ວຍການຂ້າໄກ່ຕົ້ມສຸກແລ້ວເອີ້ນຂວັນຄົນໃນເຮືອນເຊິ່ງເຂົາເຈົ້າຈັດຂຶ້ນຍາມເດືອນ 6 ທຸກໆ ປີ,ພິທີກຳພະຜີບ້ານດ້ວຍການຂ້າໝູ, ເຂົ້າສຸກ ແລະເຫຼົ້າຖວາຍຜີຢູ່ເໜືອບ້ານ ແລະເຂົາເຈົ້າຍັງມີງານບຸນໃຫ່ຍທີ່ສຳຄັນໃນປີໜຶ່ງໆນັ້ນຄືການເຮັດບຸນປີໃໝ່ (ກິນຈຽງ) ເຊິ່ງໄດ້ປະຕິບັດຫຼາຍຂັ້ນຕອນຄື: ມີການຫຼິ້ນບຸນກິນຈຽງ, ກິນຊົ້ນໝູ, ດື່ມເຫຼົ້າ, ຊຸມແຂວຕະຫຼອດ 3 - 5 ວັນ ,ຄືນ.

ຊົນເຜົ່າຮ່າຍີ່ ກໍ່ມີສິລະປະວັນນະຄະດີພື້ນເມືອງເປັນຕົ້ນມີກອນຂັບ, ກອນລຳ, ຂັບລຳໂປມາ, ມີປິດກາວີ, ປິດຟ້ອນ, ປິດເພງທີ່ໃຊ້ຮ້ອງໃນເວລາແຕ່ງດອງ, ເວລາມີການໄຫ້ວບຸນ ແລະເຄື່ອງດົນຕີພື້ນເມືອງ ເປັນຕົ້ນມີຂຸ່ຍ, ປີ່, ມູຕູ, ຕີຮິ, ເຕັ່ນ ແລະນິທານພື້ນເມືອງ ທີ່ໄດ້ສ່ອງແສງການດຳລົງຊີວິດຂອງຕະກຸນ ແລະເຊື້ອສາຍລາຍລ່ອງ

ໃນແຕ່ລະເຊັ່ນຄົນໃນອາດີດຕະການ.

ຊົນເຜົ່າຮ່າຍີ່ ມີປະເພນີ ໃນການປຸກສ້າງເຮືອນຄືກ່ອນຈະປຸກເຮືອນເຂົາເຈົ້າເອົາເຂົ້າສານ 3 ເມັດໃສ່ຂຸມ ເອົາຖ້ວຍອັດປະມານ 20 - 30 ນາທີ ຈຶ່ງເປີດເບິ່ງຖ້າ ເຂົ້າສານຍັງຢູ່ສະພາບເດີມ ແມ່ນຕັ້ງເຮືອນໄດ້. ສ່ວນມື້ ຕັ້ງຕ້ອງແມ່ນມື້ຄູ່ ທີ່ເປັນມື້ສັນວັນດີຂອງຄອບຄົວນັ້ນເອງ. ຄົນຮ່າຍີ່ ມີຄວາມນິຍົມປຸກສ້າງເຮືອນແບບຕິດດິນ ຍາວ 5-6 ແມັດ, ກວ້າງ 4-8 ແມັດ, ຫຼັງຄາບໍ່ຊັນ, ບໍ່ເນີນເກີນໄປ, ມຸງດ້ວຍຫຍ້າຄາ, ແອ້ມດ້ວຍດິນຕຳໃສ່.

ການຈັດແບ່ງຫ້ອງນອນ ແມ່ນອີງຕາມຈຳນວນສະມາຊິກຂອງຄອບຄົວ, ມີຂໍ້ຫ້າມ ແລະຄະລຳຢູ່ພາຍໃນຫ້ອງເຮືອນເປັນຕົ້ນ ແມ່ນລູກໄພ້ຫ້າມເຂົ້າຫ້ອງນອນ ພໍ່ປູ່, ແມ່ຍ່າຍົກເວັ້ນໃນເວລາເຈັບເປັນ. ກໍລະນີຫາກເຂົ້າຫ້ອງນອນປູ່ຍ່າ ຈະຖືກປັບໄໝດ້ວຍໝູ 3 ກຳ 1 ໂຕ, ເຫຼົ້າ 3 ລິດ, ເງິນ 3 ໝັ່ນ. ຄົນນອກເຂົ້າຫ້ອງນອນບໍ່ໄດ້, ກໍລະນີຫາກເຂົ້າ ແມ່ນຖືກປັບໄໝດ້ວຍໝູ 3 ກຳ 1 ໂຕ, ເຫຼົ້າ 3 ລິດ, ເງິນ 6 ໝັ່ນ ເພື່ອແປງຜີເຮືອນ, ກໍລະນີເຄື່ອງເສຍ ຕ້ອງເສຍຄືນເທົ່າກັບລາຄາເຄື່ອງທີ່ເສຍໄປນັ້ນ.

ຊົນເຜົ່າຮ່າຍີ່ ໄດ້ມີເຄື່ອງນຸ່ງຫົ່ມເອ້ຢ້ອງເປັນອັນສະເພາະຂອງເຂົາເຈົ້າ ຄືຜູ້ຊາຍນຸ່ງໂສ້ງຂາກວ້າງ, ຂາທຳມະດາ ສາມາດພັບໄດ້ສີດຳຍ້ອມດ້ວຍດຳນິນ, ຫົ່ມເສື້ອແຂນຍາວສີດຳມີຖົງຢູ່ໜ້າເອິກ, ມີຜ້າສີດຳຄຸມຫົວຍາວ 2 - 3 ວາ ມີສາຍແອວຕ່ຳດ້ວຍຝ້າຍຍາວ 2 - 3 ວາໃສ່ປອກແຂນເຮັດດ້ວຍເງິນ. ແມ່ຍິງນຸ່ງສິ້ນສີດຳແຄບດ້ວຍຫຼາຍສີ, ມີຜ້າພັນແຂ່ງ, ຫົ່ມເສື້ອແຂນສັ້ນ, ແຂນຍາວສີດຳຄໍມົນ, ແຂນເສື້ອກ່ານດ້ວຍຫຼາຍສີ, ມີຜ້າຄຸມຫົວປະດັບດ້ວຍເງິນ, ມີປອກແຂນ , ປອກຄໍ, ບ່ອງຫູ, ໃສ່ຕ້າງ, ຜົມຍາວຝັ້ນຫົວເພື່ອປົກຫົວ, ມີສາຍແອວທີ່ລວດລາຍ.

ຊົນເຜົ່າຮ່າຍີ່ນິຍົມກິນເຂົ້າຈ້າວ ດ້ວຍການເອົານ້ຳຮ້ອນລວກແລ້ວໜຶ້ງໃສ່ໄຫ, ມັກກິນອາຫານປະເພດແກ່ງ, ຂີ້ວ, ຊ່າ, ຊຸບ,ປີ້ງ, ຈືນ ທີ່ມີລົດຊາດທຳມະດາ, ມີຄວາມນິຍົມດື່ມນ້ຳຕົ້ມ, ສູບຢາດ້ວຍກອກບັ້ງ ແລະກິນຝົ່ນ, ດື່ມເຫຼົ້າເດັດ ໃນເວລາມີແຂກມາຢາມເຮືອນເພິ່ນໃຫ້ດື່ມເຫຼົ້າ 4-6 ຈອກຈຶ່ງຄ່ອຍໃຫ້ກິນເຂົ້າ ແລະດື່ມເຫຼົ້າສະຫຼັບກັນໄປ.

ໃນສັງຄົມຂອງຊົນເຜົ່າຮ່າຍີ່ ປະກອບມີຫຼາຍຕະກຸນສະເພາະຢູ່ ສ.ສ.ຫວຽດນາມ ໄດ້ມີພວກເຖົ້າແກ່ອາວຸໂສສາມາດເລົ່າກ່ຽວກັບໂຄດວົງພົວພັນເຖິງຕະກຸນນີ້ໄດ້ 40 ເຊັ່ນຄົນ, ສະເພາະຢູ່ ສ.ປ.ປ.ລາວ ປະກອບ ມີຫຼາຍຊົ່ງຄື: ລາວເຊົ້ງ, ລາວລີ, ລາວຢາ, ລາວດຽວ, ລາວຝາ,ລາວຊີ້ ແລະ ລາວວາ ໃນທຸກໆປີເວລາເຂົາເຈົ້າເຮັດພິທີສະຫຼອງບຸນປີໃໝ່, ສະມາຊິກຂອງຕະກຸນດຽວກັນ ຈະຟັງການເລົ່າ ຈາກຜູ້ອາວຸໂສເວົ້າເຖິງບັນພະບຸລຸດຂອງຕົນ.

ຊົນເຜົ່າຮ່າຍີ່ ມີປະເພນີໃນການແຕ່ງດອງ ເຊິ່ງມີລາຍລະອຽດ ຄື: ຕາມປົກກະຕິແລ້ວ ຄົນຮ່າຍີ່ (ຜູ້ບ່າວ) ມີອາຍຸ 18 ປີຂຶ້ນໄປຄິດຢາກໄດ້ຄູ່ຊີວິດ ກໍ່ໄປລົມສາວ ຍາມກາງຄືນຢູ່ ຕາມເດີ່ນບ້ານ ແລະຜ່ານການທຽວລົມກັນຍາມກາງຄືນ ຖ້າຍິງສາວຫາກມັກຮັກ, ຜູ້ບ່າວກໍ່ເມືອລາຍງານໃຫ້ພໍ່ແມ່ຂອງຕົນ ແລະພໍ່ແມ່ຈຶ່ງແຕ່ງຄົນໃຊ້ໄປຖາມ ພໍ່ແມ່ຂອງຍິງສາວ. ຖ້າພໍ່ແມ່ຂອງຍິງສາວ ເຫັນດີກໍ່ຖາມລູກສາວແລ້ວ ກໍ່ແບ່ງວັນເດືອນປີເກີດຂອງຄູ່ບ່າວສາວແມ່ນຖືກກັນບໍ່ຫຼືບໍ່, ກໍລະນີຖືກກັນແມ່ນເອົາກັນບໍ່ໄດ້, ປີເສືອນຳກັນ ແລະປີເສືອກັບປີລີງ ແມ່ນເອົາກັນບໍ່ໄດ້, ເມື່ອເບິ່ງປຶ້ມຕຳລາຂອງເຜົ່າຫ ້ ເຫັນວ່າຄູ່ບ່າວສາວສາມາດເອົາກັນໄດ້ ແຕ່ຝ່າຍເຈົ້າບ່າວຕ້ອງກຽມ ວັດຖຸປັດໄຈບາງຢ່າງໃຫ້ເຈົ້າສາວດັ່ງນີ້: ໝູ 50-80 ກິໂລ, ເຫຼົ້າ 30-80 ລິດ, ຄ່າດອງ, (ຄ່າຫົວ) (30-50 ເງິນຫຼຽນ) ຄ່ານ້ຳນົມແມ່ແພ 2 ວາ, ເຂົ້າຈີ່ ແລະໄກ່ໃຫ້ພີ່ນ້ອງຊັ້ນຈຳຂອງເຈົ້າສາວ (ຍົກເວັ້ນເອື້ອຍ ແລະນ້ອງ) ເຂົ້າຈີ່ລະ1 ຄູ່, ໄກ່ລະ1ໂຕ.

ກ່ອນແຕ່ງດອງ1ວັນ ຕ້ອງເອົາເຄື່ອງຂອງນັ້ນໄປມອບໃຫ້ພໍ່ແມ່ຂອງເຈົ້າສາວ ແລະຮອດມື້ດອງ ທັງສອງຝ່າຍກໍ່ເຊີນພີ່ນ້ອງມາຮ່ວມງານ

ດອງຂອງຕົນ ຢູ່ເຮືອນຂອງແຕ່ລະຝ່າຍ. ສ່ວນຝ່າຍເຈົ້າບ່າວຖ້າບໍ່ພໍກໍ່ຕ້ອງຂ້າໝູຕື່ມ ເພື່ອໃຫ້ຍາດຕິພີ່ນ້ອງໄດ້ຮັບປະທານອາຫານ, ອັນທີ່ ກ່າວມານີ້ ແມ່ນກໍລະນີເຮົາມີວັດຖຸພ້ຽງພໍ ແລ້ວຕ້ອງເອົາໄພ້ເມືອເຮືອນເຂີຍເລີຍ, ກໍລະນີບໍ່ມີແມ່ນປະຕິບັດຕາມກໍລະນີທີ 2 ເຂົ້າເຂີຍ. ໝາຍຄວາມວ່າພາຍຫຼັງຕົກລົງກັນແລ້ວ ເຂີຍມາຢູ່ເຮືອນໄພ້ແຕ່ 3-5 ປີ, ຈຶ່ງຄ່ອຍເອົາໄພ້ເມືອຢູ່ເຮືອນເຂີຍຕະຫຼອດເລີຍ. ຊົນເຜົ່າຮ່າຍີ່ ມີສິດເອົາເມຍຕື່ມອີກ 3 ເມຍ ໂດຍບໍ່ເສຍໃຫ້ເມຍຫຼວງ ແຕ່ບົນພື້ນຖານເມຍຫຼວງເຫັນດີ (ລະອຽດມີເອກະສານຕ່າງຫາກ) .

ຄຽງຄູ່ກັບປະເພນີການແຕ່ງດອງແລ້ວ ຊົນເຜົ່າຮ່າຍີ່ ຍັງມີປະເພນີໃນການປົງສົບສົ່ງສະການເຊິ່ງມີເນື້ອໃນຄື: ຖ້າມີຄົນເຈັບຢູ່ເຮືອນ, ເບື້ອງຕົ້ນປິ່ນປົວດ້ວຍຢາພື້ນເມືອງ, ຖ້າບໍ່ດີເຊີນໝໍດູມາເບິ່ງເພື່ອພິສູດເບິ່ງອາການຂອງຄົນເຈັບ ແລະກໍຕ້ອງປິ່ນປົວຕາມການແນະນຳຂອງໝໍດູ. ເມື່ອໃຈຂາດແລ້ວກໍ່ດຳເນີນການຄົບຫັ້ນ 3 ວັນ, 3 ຄືນ ໂດຍເອົາສົບໃສ່ໂລງດອຍໄວ້ຢູ່ຫ້ອງຮັບແຂກ, ຫົວປິ້ນໄປທາງເໜືອ ແລະໃນໄລຍະຄົບຫັ້ນນັ້ນກໍ່ຕ້ອງຂ້າສັດ ເພື່ອໃຫ້ຄົນທີ່ມາຊ່ວຍວຽກ ແລະຄົບຫັ້ນນັ້ນກິນ.

ຄົບຮອບ 3 ວັນຈັດພິທີສົ່ງສະການມີ 4-8 ຄົນຫາມເອົາຫົວໄປກ່ອນແຕ່ເຮືອນໄປປ່າຊ້າ, ແຕ່ວ່າໃນເວລາເອົາໂລງອອກຈາກເຮືອນໄປໄວ້ຢູ່ປ່າບາງເທື່ອໄກ ຫຼືໃກ້. ພາຍຫຼັງປະໄວ້ນັ້ນແລ້ວຈຶ່ງຄ່ອຍເບິ່ງປຶ້ມຕຳລາໄດ້ບອກເວລາໃດ ຈຶ່ງຄອຍຝັງເວລານັ້ນໄວສຸດ 1 ປີ ແລະຊ້າສຸດ 5 ປີ.

ເມື່ອຮອດກຳນົດແລ້ວ ສ່ຽງດ້ວຍການແກວ່ງໄຂ່ຖ້າແຕກບ່ອນໃດກໍຂຸດຂຸມ ແລະຝັງຢູ່ບ່ອນນັ້ນ. ກໍລະນີຜົວ ຫຼືເມຍຕາຍຄົບຮອບ 2-3 ປີ ຈຶ່ງຄ່ອຍມີສິດສ້າງຄອບຄົວໃໝ່.

ການເກີດລູກ:

ໄລຍະຖືພາ ແມ່ນບໍ່ໄດ້ພັກວຽກ ແລະຄະລຳອາຫານ, ເກີດລູກຢູ່ຕົນບ່ອນນອນ, ຢູ່ກຳດ້ວຍໄຟ, ກິນ ແລະອາບນ້ຳຮ້ອນ 3 ເດືອນ, ເວລາຢູ່ກຳໃຫ້ກິນໄກ່, ເປັດ, ໝູ, ປາ ແລະຜັກບາງຊະນິດເທົ່ານັ້ນ.

ພາຍຫຼັງການເກີດລູກມື້ທີ 3 ເພິ່ນໃຫ້ຈັດພິທີໃສ່ຊື່ລູກດ້ວຍວິທີຂ້າໄກ່ 1 ໂຕ, ໄຂ່ໄກ່1 ໜ່ວຍ ເຂົ້າໜຽວຫໍ່ໃສ່ໄຂ່ໄກ່ໃຫ້ເດັກນ້ອຍໃສ່ຊື່ແລ້ວປັ້ນເຂົ້າໃຫ້ເດັກນ້ອຍ, ການໃສ່ຊື່ລູກແມ່ນເອົາຊື່ຂອງພໍ່ ຫຼືຊື່ລູກຂອງປ້າສົມທົບກັບຊື່ວັດຖຸທີ່ຈະໃຫ້ລ່ວງໜ້າເປັນຊື່ຂອງເດັກບາງຄັ້ງກໍ່ເອົາຊື່ເຊັ່ງອອກໜ້າ.

ການດຳເນີນຊີວິດທາງເສດຖະກິດ:

ແຕ່ສະໄໝບູຮານຄົນຮ່າຍີ່ ຖືການຖາງປ່າເຮັດໄຮ່ປູກເຂົ້າຈ້າວ ແລະຕໍ່ມາແມ່ນເຮັດໄຮ່ຂຸດ, ໄຮ່ໄຖ, ເຮັດປ່ານຝ່າຍເອົານ້ຳເຂົ້ານາ ແລະເຮັດສວນອ້ອຍຂ້າງເຮືອນ. ພ້ອມກັນນັ້ນຄົນຮ່າຍີ່ຍັງມີມູນເຊື້ອໃນການລ້ຽງສັດປະເພດຕ່າງໆ ຄື: ຄວາຍ, ງົວ, ໄກ່, ໝູ, ໝາ, ມ້າ ແລະສັດປີກ, ເຮັດສວນປູກສາລີ, ຖົ່ວດິນ, ຖົ່ວ ເຫຼືອງ, ຝ້າຍ, ປູກ ຝິ່ນ ແລະອື່ນໆ.

ນອກຈາກນັ້ນຜູ້ຊາຍ ຍັງມີມູນເຊື້ອໃນວິຊາຫັດຖະກຳຈັກສານ ແລະຕີເຫຼັກເພື່ອເຮັດເຄື່ອງໃຊ້ໃນຄອບຄົວ ແລະເຄື່ອງມືການຜະລິດ ສະເພາະແມ່ຍິງພັດຍັງມີຄວາມລະອຽດອ່ອນ ໃນວິຊາຕ່ຳທູກທ່ຳໄໝ ເພື່ອເຮັດເຄື່ອງນຸ່ງຫົ່ມ ເຊິ່ງມີລັກສະນະກຸ້ມຕົນເອງ.

Hanyi

Historical background:

Historically, the Hanyi originated from China, moving down later into Lao Chao Province of Vietnam. Later, a small group of Halyi moved into Phongsali province of Laos. The Hanyi population in Laos numbers 1,122 people, of whom 528 are women.

Name and language:

The Hanyi are referred to by different names such as Ou Ni, Za Ou Ni, but their favorable and official name is Hanyi.

Their language is similar to the Si La, Ahka and Lolo languages. The Hanyi language is a Sino-Tibetan language, on the Tibeto-Burman language branch.

Beliefs, society, ceremonies and myths:

The Hanyi are animists, believing in spirits of nature and of household. These spirits include the spirits of heaven and earth, cats, thunder, and water, to name a few. They also practice ancestral worship. A shaman is the religious leader, his role is to make offerings to the spirits and to organize and lead religious rituals. Ceremonies include agricultural ceremonies, such as making offerings to spirits before rice harvesting. Chickens and ducks are sacrificed as offerings to the spirits of the rice fields. Other ceremonies are performed when new land is chosen for a new village or house, and also to contact the spirits of the deceased. The most important festival is the New Year festival that takes place the same time as the Chinese New Year. This goes one for about five to seven days and includes a lot of drinking, eating, and merriment.

The society has different lineages of families, named after the name of an ancestor. It is considered important for one to be able to recite one's genealogy back to the progenitor of their ethnic group.

In regards to marriage, when a man who is usually eighteen or older is interested in a woman, he will spend time courting her. If the young woman accepts his offerings, then the young man will choose someone in the family to act as an intermediary. Discussions will take place between the parents of the two young people. They will check the birthdates of the young people in a Chinese astrology book to see if they match favorably, and if they match, then a date shall be set for the wedding. The young man pays a dowry that usually consists of pigs, some money, alcohol,

and other goods. A wedding ceremony takes place where there is a large amount of celebrating, feasting, and drinking. The newly married husband will move into the household of his wife. After some time, they will spend time in his household.

When a woman is pregnant she must stop working hard. Three days after birth, a ceremony is held where a village elder will perform a ceremony of sacrificing a chicken and mixing rice and a raw egg to decide the name of the baby.

When someone is ill, then healing is attempted by traditional medicine and spells by the shaman. If there is a death, the body is placed in the house for three days for a mourning period. After the three days, the body is placed in a coffin made from a hollow tree trunk, and the coffin is carried to the forest where an egg is thrown in the air. Where the egg lands and breaks is where the grave will be dug.

Village and house:

Hanyi villages are sited at altitudes between 1000 and 1500 meters high. The villages are small, usually no more than forty houses.

The Hayi generally build their rectangular houses on the ground. They are about five to six meters long and four to six meters wide. The walls are made of woven bamboo and the roof is thatch. The floor is pounded earth.

The interior is divided into several rooms, with a large living room and smaller areas for sleeping. There is a room that contains the ancestral altar where food offerings, joss sticks and small cups of wine are offered to the spirits. A small kitchen is in the back of the house. There is generally only one door.

Costume:

The women wear a long-sleeved cotton dress, a pair of trousers, and a long skirt that goes over the trousers. The vest has red, white and yellow embroidery along the hems. The long sleeves also have colorful bands on them. Rows of freshwater pearls are sewn on the front of the vest. Some women wear silver bracelets and necklaces. Today, the women wear a mixture of commercial and ethnic clothing, such as Lao sarongs and cheap Chinese blouses.

Men's traditional clothing was similar to the Hmong; dark blue trousers with a long sleeved vest. However, most men now wear typical commercial clothing that is bought in the markets.

Agriculture and livelihood:

The Hanyi grow rice with slash-and-burn agriculture. Today, they also practice wet-rice cultivation and grow corn and vegetables. Poppy for opium production and trading is also important. They will also keep animals such as buffalo, pigs, chickens and dogs. Hunting in the forest for all sorts of game is important. The women will gather edible plants and herbs in the village. Men and women also weave baskets and other goods from bamboo and the women are known to be skillful weavers and embroiderers.



55. ວິຖີຊີວິດຂອງຄົນເຜົ່າອາຄາ(ຜົ້ງສາລີ)
Life of Akha people(Phongsali)



56.ການແຕ່ງກາຍຂອງຍິງໜຸ່ມເຜົ່າອາຄາ(ຫຼວງນ້ຳທາ)
Wearing of Akha girl (Luangnamtha)



57.ການແຕ່ງກາຍຂອງຍິງໜຸ່ມເຜົ່າອາຄາ(ຜົ້ງສາລີ)
Wearing of Akha girl (Phongsali)



58.ການເອ້ຍ້ອງຂອງແມ່ຍິງເຜົ່າຫໍ້(ຜົ້ງສາລີ)
Ornamentation of Ho (Phongsali)



59. ຫໍພິພິດທະພັນ ເມືອງສິງ(ຫຼວງນ້ຳທາ)
Muengsing MuseumLuangnamtha Province



60.ນັກດົນຕີພື້ນເມືອງເຜົ່າໂລໂລ ບ.ສະຫວ່າງ ຍອດອູ (ຜົ້ງສາລີ) Musician of LOLO,ban Savang, Nhod-OU(Phongsali)



61.ການແຕ່ງກາຍຂອງຄົນຮ່າຍີ່ ມ.ຍອດອູ(ຜົ້ງສາລີ)
Wearing of Hanhi People,Nhod-OU(Phongsali)

ໝວດພາສາ ມົ້ງ - ອີວມຽນ ມີ 2 ຊົນເຜົ່າ

The Hmong - Iuwmien Language Family

(2 Ethnic Groups)

ຊົນເຜົ່າມົ້ງ
ປະຫວັດຄວາມເປັນມາ:

ຊົນເຜົ່າມົ້ງ ແມ່ນຊົນເຜົ່າໜຶ່ງ ທີ່ດຳລົງຊີວິດຢູ່ດິນແດນປະເທດລາວເຮົາ ນັບແຕ່ກາງສະຕະວັດທີ19 ເປັນຕົ້ນມາ. ຊົນເຜົ່ານີ້ໄດ້ອົບພະຍົບ, ເຄື່ອນຍ້າຍມາຈາກຕິເບດ, ຊີບີລີ, ມົງໂກນເຂົ້າສູ່ປະເທດ ຈີນ ແລະຕັ້ງ ຫຼັກແຫຼ່ງຢູ່ລຸ່ມແມ່ນ້ຳເຫຼືອງ (ຮວງໂຮ). ຍ້ອນສົງຄາມຈຶ່ງໄດ້ອົບພະຍົບ ແລະ ເຄື່ອນຍ້າຍຖອຍລົງມາທາງພາກ ໃຕ້ຂອງປະເທດ ຈີນ ແລ້ວເຂົ້າສູ່ຫວຽດນາມ, ລາວ ແລະໄທ.

ປະຈຸບັນຊົນເຜົ່າມົ້ງ ດຳລົງຊີວິດ ແລະຕັ້ງ ຖິ່ນຖານພູມລຳເນົາຢູ່ຢ່າງກວ້າງຫຼາຍ ໃນບັນດາ ແຂວງພາກເໜືອຂອງລາວເຮົາ ລົງຮອດແຂວງ ບໍລິຄຳໄຊ. ນອກຈາກນີ້ຊົນເຜົ່າມົ້ງຍັງມີຢູ່ປະເທດ ຈີນ, ຫວຽດນາມ ແລະ ປະເທດໄທ. ຊົນເຜົ່າມົ້ງຢູ່ ລາວ ມີພົນລະເມືອງ ທັງໝົດ 315.465 ຄົນ, ຍິງ 157.410 ຄົນເທົ່າກັບ 6,9% ຂອງພົນລະເມືອງ ທົ່ວປະເທດ (ຕາມສະຖິຕິການສຳຫຼວດພົນລະ ເມືອງ ຄັ້ງທີ II ປີ 1995).

ຊື່ເອີ້ນ

ຊົນເຜົ່າມົ້ງ ເອີ້ນຕົນເອງວ່າ:ມົ້ງ, ຊື່ທີ່ເຂົາ ເຈົ້າມັກກໍ່ແມ່ນຊົນເຜົ່າມົ້ງ. ສຳລັບຊື່ເອີ້ນຂອງມົ້ງ ນີ້ ຍັງເປັນຊື່ທີ່ສ້າງຄວາມສົນໃຈແກ່ວິຊາການ, ນັກຂຽນ ແລະສື່ມວນຊົນທົ່ວໄປທັງພາຍໃນ ແລະ ຕ່າງປະເທດ. ຍ້ອນວ່າຢູ່ບັນດາປະເທດທີ່ມີຊົນ ເຜົ່າອາໄສຢູ່ເຂົາເຈົ້າຈະມີຊື່ເອີ້ນ ຫຼືຊົນເຜົ່າອື່ນ ເອີ້ນຊື່ຂອງເຂົາເຈົ້າແຕກຕ່າງກັນ. ສຳລັບຊົນເຜົ່າ ມົ້ງຢູ່ລາວ ການທີ່ເອີ້ນຊື່ມົ້ງແມ່ນວ່າເຂົາເຈົ້າຈະ ພໍໃຈ ແລະກໍ່ແມ່ນຊື່ດັ້ງເດີມຂອງພວກເຂົາເຈົ້າແທ້ ຄຳທີ່ວ່າ: "ມົ້ງ"ຕາມຄວາມໝາຍຂອງພາສາເຂົາ ເຈົ້າເອງແປວ່າ: " ຄົນ" ຊົນເຜົ່າມົ້ງຢູ່ລາວປະກອບ ດ້ວຍຫຼາຍແຊງເຊັ່ນ: ມົ້ງຂາວ(ມົ້ງເດີ້), ມົ້ງລາຍ (ມົ້ງເລງ, ມົ້ງຊິ, ມົ້ງຢົ້ວ) ແລະມົ້ງດຳ(ມົ້ງດູ້).

ພາສາ:

ຊົນເຜົ່າມົ້ງມີພາສາປາກເວົ້າ ສະເພາະ ຂອງຕົນເອງ ພ້ອມກັນນັ້ນເຂົາເຈົ້າຍັງມີຕົວໜັງ ສືຂຽນສອງ ລະບົບດ້ວຍກັນຄື: ລະບົບທີ່ໃຊ້ຕົວອັກ ສອນລາຕິນ ແລະລະບົບຕົວໜັງສືທີ່ປະດິດແຕ່ງ ຂອງທ່ານ ເລົາຝົງ ພາສາຂອງຊົນເຜົ່າມົ້ງຖ້າຈະ ມີການປຽບທຽບລະຫວ່າງແຊງດ້ວຍກັນຈະເຫັນ ໄດ້ວ່າມີຄວາມແຕກຕ່າງກັນເລັກນ້ອຍ ຕາມແຕ່ ລະທ້ອງຖິ່ນ, ແຕ່ໃນຕົວຈິງແລ້ວເຂົາເຈົ້າ ສາມາດ ເຂົ້າໃຈເຊິ່ງກັນ ແລະກັນ.

ຮີດຄອງປະເພນີ, ຄວາມເຊື່ອຖື ແລະວັດທະ ນະທຳ-ສັງຄົມ :

ຊົນເຜົ່າມົ້ງ ເປັນຊົນເຜົ່າມີເອກະລັກທາງ ດ້ານຮີດຄອງປະເພນີ, ຄວາມເຊື່ອຖື ແລະວັດທະ ນະທຳເປັນຂອງຕົນເອງ. ເຖິງແມ່ນວ່າໃນປະຈຸບັນ ຈະມີການແຈກຢາຍຢູ່ໃນປະເທດຕ່າງໆ ແລະຮັບ ເອົາວັດທະນະທຳ ຂອງຊົນເຜົ່າອື່ນເຂົ້າປະສົມ ປະ ສານກໍ່ຕາມ, ແຕ່ໃນຊີວິດຕົວຈິງຂອງສັງຄົມຊົນ ເຜົ່າມົ້ງ ຍັງສາມາດຮັກສາເອກະລັກໃນດ້ານນີ້ ໄວ້ໃຫ້ແກ່ຄົນລຸ້ນລູກ, ຫຼານຈົນເຖິງທຸກວັນນີ້ຊົນ ເຜົ່າມົ້ງນັບຖືຜີເຊັ່ນ: ຜີພໍ່, ຜີແມ່, ຜີເຮືອນ, ຜີເຈົ້າ ຖິ່ນ, ເຈົ້າຖານ, ຜີຟ້າ, ຜີແຖນ ແລະອື່ນໆ. ຜີເຮືອນ ຈະລວມມຫຼາຍສັນຍາລັກ ແລະເປັນສິ່ງຄະລຳ ຂອງແຂກຄົນອື່ນເຊັ່ນ: ຮ້ານນ້ອຍແຂວນຢູ່ຝາ ເຮືອນ ຫຼືແຜ່ນເຈ້ຍນ້ອຍຕິດຝາເບື້ອງເທິງຫ້ອງ ກາງຂອງເຮືອນ, ເສົາກາງເຮືອນ, ບໍ່ໄດ້ລ່ວງຫ້ອງ ນອນທີ່ແອ້ມໄວ້, ບໍ່ນອນຂວາງຢູ່ກາງເຮືອນຕາມ ລວງຍາວຂອງເຮືອນ, ໃນກໍລະນີມີຟົດໄມ້ ຫຼືຕາ ແຫຼວຕິດຢູ່ປາກປະຕູ ແມ່ນບໍ່ໄດ້ລ່ວງເຂົ້າເຮືອນ ແລະຕາມຮີດຄອງຂອງຊົນເຜົ່າມົ້ງແລ້ວຜູ້ໃດເປັນ ແຂກມາແຕ່ໄກນັ້ນກ່ອນຈະຍ່າງເຂົ້າເຮືອນ ແມ່ນ ຕ້ອງຖາມອະນຸຍາດຈາກເຈົ້າເຮືອນເສຍກ່ອນ ແລ້ວຈຶ່ງເຂົ້າໄດ້.

ຊົນເຜົ່າມົ້ງນັບຖື ແລະສືບເຊື້ອສາຍຕະກຸນທາງພໍ່ ຫຼືຝ່າຍຊາຍເປັນຫຼັກ ເມື່ອແຕ່ງດອງແລ້ວຜູ້ຍິງຕ້ອງໄປຢູ່ເຮືອນຝ່າຍຊາຍ ແລະຖືວ່າຕັດຂາດຈາກລະບົບຄວາມເຊື່ອ ແລະການນັບສາຍຕະກຸນຂອງພໍ່ແມ່ຕົນໄປສູ່ຂອງຜົວແທນ, ແຕ່ບໍ່ໝາຍວ່າຕັດຂາດຄວາມເປັນພີ່ນ້ອງກັນຢ່າງຊົ່ນເຊິ່ງ.

ໃນລະບົບສັງຄົມຊົນເຜົ່າມົ້ງ ຈະນັບຖືການແບ່ງຕະກຸນ ຫຼືຊິ່ງຊາວເປັນກົດເກນພື້ນຖານທາງສັງຄົມ. ຕາມທີ່ມີຂໍ້ມູນຈາກການສອບຖາມຕົວຈິງ. ຊົນເຜົ່າມົ້ງຢູ່ໃນລາວມີລະບົບຊິ່ງຊາວ ຫຼືຕະກຸນຕ່າງໆ ຄື: ຊິ່ງລີ, ຊິ່ງລໍ, ຢ່າງ, ທໍ່, ວ່າງ, ຊົ່ງ, ເຮີ ແລະອື່ນໆ. ລະບົບຊິ່ງຊາວນີ້ມີຜົນຕໍ່ການຫ້າມແຕ່ງດອງລະຫວ່າງຄູ່ບ່າວສາວໃນຊິ່ງຊາວດຽວກັນເພາະຖືວ່າເປັນກຸ່ມທີ່ສືບເຊື້ອສາຍຈາກບັນພະບຸລຸດດຽວກັນ. ສະນັ້ນຕ້ອງຊ່ວຍເຫຼືອກັນພ້ອມນັ້ນກໍຖ່າຍທອດຄວາມຮູ້ໃຫ້ກັນ ແລະກັນ.


ລັກສະນະເຮືອນ, ຕາມປະເພນີແລ້ວຊົນເຜົ່າມົ້ງມັກຢູ່ເຮືອນຕິດພື້ນດິນ, ການທີ່ເຂົາເຈົ້າຕ້ອງສັງເກດວ່າມີການຄະລຳອັນໃດບໍ່ໂດຍສະເພາະແມ່ນເຄື່ອງໝາຍຕາແຫຼວ ຫຼືຟົດໄມ້ດິບທີ່ຕິດແປະກັບປະຕູທາງເຂົ້າ. ໃນເຮືອນຂອງເຜົ່າມົ້ງຫ້າມບໍ່ໃຫ້ນັ່ງອີ່ງເສົາກາງເຮືອນ ແລະແຕະຕ້ອງຮ້ານຜີ ພ້ອມກັບການນອນຂວາງເບື້ອງເທິງຫ້ອງໄວ້ຮ້ານຜີ.

ປະເພນີກ່ຽວກັບການຕາຍຈະມີການ ຄົບງັນ ແລະປະກອບພິທີກຳໄປແຕ່ລະຂັ້ນຕອນ ສ່ວນຫຼາຍຈະສົ່ງສະການດ້ວຍການຝັ່ງເອົາໄປຕອນແລງ.

ສຳລັບການເກີດລູກແມ່ນເກີດຢູ່ເບື້ອງລຸ່ມຂອງເຕົາໄຟ ໂດຍແມ່ນຜູ້ທີ່ມີປະສົບການເຂົ້າມາຄ່ອຍໃຫ້ຄວາມດູແລ ແລະຊ່ວຍເຫຼືອ, ລູກສາວເຖິງຈະມີຜົວ ຫຼືບໍ່ມີຜົວແມ່ນບໍ່ໄດ້ເກີດລູກຢູ່ເຮືອນພໍ່ແມ.

ບຸນປະເພນີທີ່ສຳຄັນ ຂອງເຜົ່າມົ້ງ ໄດ້ແກ່ ບຸນກິນຈຽງ ຫຼືໝໍ່ເປເຈົ້າ ເຊິ່ງຈະຈັດຂຶ້ນຫຼັງຈາກການເກັບກ່ຽວຜົນລະປູກສ່ວນຫຼາຍແມ່ນມື້ດັບ 15 ຄ່ຳເດືອນ 12 ຂອງທຸກໆປີ, ໝໍ່ເປເຈົ້າມີຄວາມໝາຍວ່າ: ກິນສາມສິບ, ໝໍ່ແມ່ນກິນ, ເປເຈົ້າແມ່ນສາມສິບ. ຍ້ອນການນັບມື້ຂອງເດືອນແມ່ນນັບແບບສາກົນ 1,2,3...30 ສະນັ້ນມື້ທີສາມສິບ ຫຼື ມື້ແຮມ 15 ຄ່ຳຂອງເດືອນ 12 ລາວແມ່ນຈະຈັດບຸນໝໍ່ເປເຈົ້າຂອງຊົນເຜົ່າມົ້ງ ຫຼືຍັງຈະເອີ້ນວ່າບຸນປີໃໝ່.

ຊົນເຜົ່າມົ້ງ ມີເອກະລັກທາງດ້ານວັນນະຄະດີ ເຊັ່ນ: ມີກອນຂັບລຳ, ຄຳຜະຫຍາ, ບົດເພງ, ຄຳສຸພາສິດ, ມີເຄື່ອງດົນຕີປະດັບແຄນ, ສີຊໍ, ປີ່ ແລະເຕັ່ນ. ພ້ອມກັນນີ້ຊົນເຜົ່າມົ້ງຍັງມີເຄື່ອງນຸ່ງຫົ່ຕິການເອ້ຍ້ອງທີ່ເປັນເອກະລັກປະຈຳ ທັງຍິງແລະຊາຍ.ການດຳລົງຊີວິດທາງດ້ານເສດຖະກິດຂອງຊົນເຜົ່າມົ້ງ ປະກອບອາຊີບສ່ວນຫຼາຍແມ່ນໃນດ້ານການກະເສດເປັນຕົ້ນແມ່ນເຮັດໄຮ່ປູກເຂົ້າ, ສາລີເປັນຕົ້ນຕໍ. ນອກຈາກນີ້ຍັງປູກພືດຜັກ, ມັນຊະນິດຕ່າງໆ ຮັບໃຊ້ຊີວິດປະຈຳວັນຂອງຄອບຄົວ, ນິຍົມການລ້ຽງສັດຫຼາຍປະເພດເຊັ່ນ: ງົວ, ຄວາຍ, ມ້າ, ແບ້, ໝູ, ໝາ, ເປັດ ແລະໄກ່, ຜູ້ຊາຍມົ້ງຊຳນານໃນການຊຸບຕີເຫຼັກ ແລະແມ່ຍິງມັກມີຄວາມຄ່ອງແຄ້ວ ໃນການຫຍິບຖັກປັກແສ່ວແບບລວດລາຍ ສະເພາະທີ່ເຜົ່າມົ້ງນິຍົມກັນ. ເຂົາເຈົ້າເອົາໃຈໃສ່ໃນການເລືອກແນວພັນສັດ, ແນວພັນພືດ ເພື່ອສະໜອງຜົນຜະລິດໃຫ້ສູງແກ່ຄອບຄົວຕົນເອງ. ປະຈຸບັນຊົນເຜົ່າມົ້ງຈຳນວນໜຶ່ງຫັນມາສູ່ອາຊີບເຮັດນາ ແລະຄ້າຂາຍ.



Hmong

Historical background:

The Hmong are an ethnic group that has lived in the territory of Laos since the middle of the nineteenth century. This ethnic group migrated from the Tibetan region, passing through China and settling in the lower part of Maenam Leuang (Huang Ho or Yellow River). Due to war, they migrated and moved further down China, entering Vietnam, Laos and Thailand.

Presently, the Hmong live in numerous areas of the northern provinces of Laos all the way down to Bolikhamsay province. Additionally, the Hmong still live in China, Vietnam and Thailand. The Hmong in Laos have a total population of 315,465 persons, of which 157,410 are females, sharing 6.9% of the country's total population according to the second population census done in 1995.

Name and language:

Hmong refer to themselves "Hmong". For those Hmong living in Laos, referring to them as "Hmong" is satisfactory, as this is their ancient name also. In their language, "Hmong" means "person." The Hmong in Laos are composed of many branches such as the Hmong Khao (White Hmong), Hmong Lai (Striped Hmong) and Hmong Dum (Black Hmong).

The Hmong language is of the Miao-Yao group of the Austro-Thai language family. The language branch is the Miao. They have two alphabets, one using Latin characters. The Hmong language varies slightly from one location to another, but all Hmong can understand one another.

Beliefs, society, ceremonies and myths:

The Hmong practice a mix of animism, naturalism and spirituality. Hmong believe in animistic spirits (phii) such as the spirits of their dead parents, the spirits of the household, spirits of the village and the region. There are also spirits of the sky, the forest, rivers, and many others. The largest group of spirits is called the dab, and this includes the above-mentioned spirits. Occasionally, these spirits will cause problems and have to be exorcised by a village shaman. The spirit of the household is worshipped by placing offerings such as food on a small shelf in the house. If a visitor approaches the house, he or she must always ask permission first before entering. If the visitor enters without permission, then the household spirit may be offended, causing ill will in the household. The Hmong also believe that the ancestral spirits of the male line of the family live inside the pillars of the house. This is also another reason why care must be taken when entering another house. Hmong also believe strongly in witches, and that these witches can cast evil spells, such as turning one into a werewolf. Shamans who deal with these problems are generally male, but there are some female shamans.

Hmong follow the clan (takoon) system of lineage, which is traced and followed through the male line. This system of clan lineage prohibits marriage between members of the same line. They can only marry members of another clan. After marriage, the wife will stay at her husband's house. She must follow her new family's beliefs and lineage, but of course she still has relations with her own family. Hmong girls generally marry at the young age of fourteen to fifteen, and boys at around age eighteen to nineteen.

Major traditional festival of the Hmong people are the Boon Kin Chiang or Nor Peh Chao (New Year Festival) which is celebrated after the crop harvest, mainly on the fifteenth day of the first month of every year. This is a time of great celebration and feasting. This is also an important time for courting between young people.

Pregnant mothers give birth near the fireplace of the house, with the assistance of an experienced woman to help and take care of her. After birth, the placenta of the newborn is buried under the floor of the house. A daughter, whether having a husband or not, is not allowed to give birth in her parents house.

Hmong women will prepare for death by weaving the funeral clothes that they will be buried in. The dead are buried during sunsets in nice locations on mountainsides. The Hmong believe that a person has three souls that separate during death. Once soul goes to heaven, the other remains in the grave and the final soul in reincarnated. The Hmong spend time on farewells to the dead, for they believe that if they don't evil spirits may mislead them on their way to heaven.

Village and house:

Most Hmong villages are between 1000 and 1500 meters high and many villages can only be reached by foot or horseback. Most villages never have more than fifty houses. Some villages are made up of a single clan.

The Hmong house is rectangular and is built on the ground, not on stilts like many other groups. It is made of wood, bamboo, and has a thatched roof. There is a fireplace in the corner for cooking and heating, and one end of the house is partitioned off for sleeping quarters for the entire family.

Costume:

Costumes vary among the different Hmong groups, but they are varied and ornate. Among women, these can be black, loose trousers or pleated skirts with batik patterns and motifs of green, yellow and red embroidery. Long sleeve jackets with narrow collars and curved edges are also worn. Some Hmong also wear a black kerchief that is decorated with silver coins. Both men and women wear a great deal of jewelry of solid silver. These are rings, bracelets, necklaces, and earrings.

Agriculture and economy

The Hmong practice mainly slash-and-burn cultivation of rice and maize. Traditionally, they would use the land for three years, and then abandon it for twelve years to let the land regain fertility, but this is not always possible now due to population pressures. In addition, they grow vegetables and different types of root crops for the household daily consumption. They are very skilled at animal husbandry, raising many types of animals such as cattle, buffaloes, horse, goat, pigs, dogs and chickens. Their favorite animals are the small pot-bellied pigs.

Handicrafts are very important in Hmong society. Hmong men are skillful in carpentry and blacksmithing, making a variety of tools and utensils from both wood and iron. Silversmith skills are also common to produce the myriad of jewelry that the Hmong love to wear. Women are skillful at knitting and embroidery of different styles and patterns. They are well known for the elaborate and ornate embroidery and batik patterns.

ຊົນເຜົ່າອີ ວມຸງ
ປະຫວັດຄວາມເປັນມາ:

ຊົນເຜົ່າອີ ວມຸງ ເປັນຊົນເຜົ່າທີ່ມີປະຫວັດຄວາມເປັນມາດົນນານ,ຕັ້ງແຕ່ສະໄໝສົງຄາມກາງເມືອງໃນປະເທດ ຈີນ ເປັນຊົນເຜົ່າທີ່ມີຖິ່ນຖານເດີມຢູ່ຕອນກາງຂອງປະເທດ ຈີນ,ໄດ້ເລີ່ມອົບພະຍົບມາສູ່ມົນທົນກວ້າງຕ່ຽ, ກຸຍໂຈ, ກວ້າງສີແລະຢູນານເຊິ່ງຢູ່ທິດຕາເວັນຕົກສ່ຽງໃຕ້ ສ .ປ ຈີນ ໃນລາດຊະວົງຂິນຮັ່ນ.ບ່າງ ສ່ວນກໍ່ເຄື່ອນຍ້າຍເຂົ້າສູ່ພາກເໜືອຂອງ ຫວຽດນາມ ໃນສະຕະວັດ ທີ 14-16. ຈາກນັ້ນກໍ່ກະຈາຍເຂົ້າສູ່ປະເທດ ລາວ, ມຽນມາ ແລະປະເທດໄທຕາມລຳດັບ. ສຳລັບການເຄື່ອນຍ້າຍເຂົ້າສູ່ປະເທດ ລາວ ໄດ້ແບ່ງເປັນ ຫຼາຍໄລຍະ ແລະຫຼາຍເສັ້ນທາງທີ່ແຕກຕ່າງກັນຄື: ເຄື່ອນຍ້າຍເຂົ້າລາວ ໂດຍຜ່ານບັນດາແຂວງຕາເວັນຕົກສ່ຽງເໜືອຂອງ ຫວຽດນາມ ເຂົ້າ ຫົວພັນ, ຊຽງຂວາງ ແລະຫຼວງພະບາງ, ມີເສັ້ນທາງໜຶ່ງຜ່ານບັນດາແຂວງທິດໃຕ້ຂອງ ຈີນ ເຂົ້າສູ່ບັນດາແຂວງພາກເໜືອຂອງລາວ ເຊັ່ນ:ຜົ້ງສາລີ, ອຸດົມໄຊ, ຫຼວງນ້ຳທາ ແລະບໍ່ແກ້ວ.

ປະຈຸບັນຊົນເຜົ່າອີ ວມຸງ ດຳລົງຊີວິດຢູ່ບັນດາແຂວງພາກເໜືອຂອງລາວ ລົງຮອດແຂວງ ວຽງຈັນ. ນອກຈາກນີ້ຊົນເຜົ່າອີ ວມຸງ ຍັງມີຢູ່ປະເທດໃກ້ຄຽງເຊັ່ນ: ຫວຽດນາມ,ຈີນ ແລະໄທອີກດ້ວຍ.

ພົນລະເມືອງຂອງຊົນເຜົ່າອີ ວມຸງ ຢູ່ລາວມີທັງໝົດ 22.665 ຄົນ, ຍິງ11.374 ຄົນ.(ຕາມສະຖິຕິການສຳຫຼວດພົນລະເມືອງ ຄັ້ງທີ II ປີ 1995).

ຊື່ເອີ້ນ:

ຊົນເຜົ່ານີ້ມີຊື່ເອີ້ນຕ່າງກັນ ແຕ່ລະສະໄໝ ເຊັ່ນ:ສະໄໝລາດຊະວົງຊິນຮັ່ນຖືກ ເອີ້ນວ່າ: “ມໍ ມານ”,ໃນສະໄໝລາດຊະວົງຖັ່ງຖືກ ເອີ້ນວ່າ: “ມໍ ຢ້າວ”ເຊິ່ງມີຄວາມໝາຍວ່າບໍ່ຢູ່ໃຕ້ອຳນາດຂອງ ໃຜ.ດັ່ງນັ້ນຊື່ທີ່ເອີ້ນວ່າ: “ຢ້າວ” ແມ່ນຊື່ທີ່ຊົນເຜົ່າອື່ນເອີ້ນໃຫ້ເຂົາເຈົ້າ,ແຕ່ຊື່ທີ່ເຂົາເອີ້ນຕົນເອງ, ຊື່ທີ່ເຂົາເຈົ້າມັກທີ່ສຸດແລະຊື່ທີ່ກຳລັງໃຊ້ທາງການ ໃນປະຈຸບັນແມ່ນຊົນເຜົ່າ “ອີ ວມຸງ”,ເຊິ່ງສັນນິຖານວ່າອາດມາຈາກຄຳເຕັມຂອງຊື່ຊົນເຜົ່າ ທີ່ວ່າ: “ອີ-ຢູ ມຸງ”ຊົນເຜົ່າອີ ວມຸງ ປະກອບດ້ວຍແຊງຕ່າງໆ ເຊັ່ນ: ແລນແຕນ, ຢາວຂາວ ແລະຢ້າວພົມໄໝແດງ.ສຳລັບແລນແຕນ ນັ້ນມີສາມຊື່ເອີ້ນ ຄື:ໄລຍະ ທຳອິດເອີ້ນວ່າ: ຢົວ,ຕໍ່ມາຍ້ອນ ວ່າເຜົ່ານີ້ຮູ້ຍ້ອມເຄື່ອງດ້ວຍສີຄາມ, ຈີນຈຶ່ງເອີ້ນວ່າ: ແລນແຕນ, ເວລາຍົກຍ້າຍມາຢູ່ລາວເຜົ່າແລນແຕນ ມັກຈະຢູ່ຕາມຫ້ວຍນ້ຳລຳເຊ. ສະນັ້ນຊົນເຜົ່າລາວຈຶ່ງເອີ້ນເຂົາເຈົ້າວ່າ “ຫ້ວຍ”ແຕ່ຊື່ ທີ່ເຂົາເຈົ້າມັກແທ້ ແມ່ນລາມແຕນ. ເຜົ່າແລນແຕນມັກໃສ່ຊື່ ແລະນາມສະກຸນຕາມສິ່ງທີ່ດີເລີດຂອງຄົນ ຫຼືສິ່ງຂອງ ອ້ອມຕົນເຮົາ. ສຳລັບຍິງສາວມັກຈະປັ້ນດິ່ວນ້ອຍເພື່ອຫຼົກຂົນຄິ້ວໃຫ້ກ້ຽງ ເຊິ່ງມີຈຸດປະສົງ ຢາກງາມ ແລະເກງເໜືອກວ່າຜູ້ຊາຍ.

ພາສາ:

ພາສາປາກເວົ້າຂອງຊົນເຜົ່ານີ້ ແມ່ນຈັດຢູ່ໃນໝວດພາສາມົ້ງ-ອີ ວມຸງ. ຊົນເຜົ່າອີ ວມຸງ ແລະຊົນເຜົ່າແລນແຕນມີຕົວໜັງສືຂຽນ ເຊິ່ງໃນຕົວອັກສອນຈີນ. ຍ້ອນວ່າຊົນເຜົ່າອີ ວມຸງ ໃນສະໄໝກ່ອນແມ່ນຮຽນອ່ານແລະຂຽນ ຈາກຜູ້ເປັນພໍ່ຫຼືຄູຄົນຈີນ ແລະໃຊ້ຕົວອັກສອນຈີນບັນທຶກໃນພິທີກຳທາງສາສະໜາ, ປະຫວັດການສືບສາຍຕະກຸນ ແລະອື່ນໆ.

ຮີດຄອງປະເພນີ,ຄວາມເຊື່ອຖືແລະວັດທະນະທຳ - ສັງຄົມ :

ຍ້ອນຊົນເຜົ່ານີ້ ໄດ້ຮັບຕົວອັກສອນຈີນມາບັນທbກເລື່ອງລາວຕ່າງໆຂອງຕົນໄວ້ ,ຈຶ່ງສາມາດເຮັດໃຫ້ຊົນເຜົ່າອີ ວມຸງ ແລະແລນແຕນຮັກສາຮີດຄອງປະເພນີ, ຄວາມເຊື່ອຖື ແລະວັດທະນະທຳຂອງຕົນໄວ້ໄດ້ເປັນຢ່າງດີ. ສຳລັບຄວາມເຊື່ອຖືຂອງຊົນເຜົ່າອີ ວມຸງ ແລະແລນແຕນ ມີການປະສົມປະສານຄວາມເຊື່ອຖືສອງລັດທິຄື: ລັດທິບູຊາຜີແລະວິສາສະໜາບັນພະບູລຸດ ກັບລັດທິເຕົ່າ

ຫຼືຈາວຕາວ. ເຊິ່ງເຂົາເຈົ້າໄດ້ຮັບໄລຍະຢູ່ຈີນ ພ້ອມ ນີ້ຍັງມີພິທີບວດທາງສາສະໜາ, ຊົນເຜົ່າອີ້ວມຽນເຊື່ອ ຖືວ່າທຸກສິ່ງທຸກຢ່າງຮອບຕົວມີຜີອາໃສຢູ່ທັ້ງຊົ່ນ.


ລະບົບຄອບຄົວ ຂອງຊົນເຜົ່ານີ້ປະກອບດ້ວຍ ພໍ່, ແມ່, ລູກຊາຍ, ລູກສາວທີ່ຍັງໂສດ ແລະຄອບ ຄົວລູກເມຍຂອງລູກຊາຍທີ່ແຕ່ງດອງແລ້ວ.ຈຳ ນວນພົນອາດປະກອບມີແຕ່ 2-10 ຄົນ ຫຼືຫຼາຍ ກວ່ານັ້ນ. ຊົນເຜົ່າອີ້ວມຽນສືບຕະກຸນທາງພໍ່,ລູກ ຕ້ອງສືບຕະກຸນພໍ່ຢູ່ສະເໝີ, ລູກສາວເຖິງຈະແຕ່ງ ດອງແລ້ວ ແລະໄປຢູ່ນຳຜົວກໍ່ຕາມແຕ່ບໍ່ໄດ້ປ່ຽນ ໄປໃຊ້ຕະກຸນຂອງຜົວ.ໝາຍຄວາມ ວ່າເປັນລະ ບົບຄອບຄົວຂະຫຍາຍ ຫຼືຄອບຄົວໃຫຍ່.ໃນ ຄອບຄົວຜູ້ເປັນພໍ່ມີບົດບາດສຳຄັນທີ່ສຸດ ໃນການ ໄກ່ເກ່ຍບັນຫາຕ່າງໆທັງພາຍໃນ ແລະພາຍນອກ. ໃນສັງຄົມຂອງຊົນເຜົ່າອີ້ວມຽນ ຜູ້ຊາຍເປັນບຸກ ຄົນທີ່ມີສິດໃນການຕັດສິນບັນຫາຕ່າງໆ ນັບທັງ ສິດສືບທອດມູນມໍລະດົກອີກດ້ວຍ.

ລັກສະນະເຮືອນ ຂອງຊົນເຜົ່າອີ້ວມຽນ ເປັນເຮືອນຊັ້ນດຽວຕິດດິນ, ສອງຝາເຮືອນຊ້າຍ, ຂວາມີປະຕູເຂົ້າອອກເບື້ອງລະອັນຄືປະຕູຊາຍ ເປີດເຂົ້າບໍລິເວນຮັບແຂກ, ປະຕູຍິງເປີດເຂົ້າສູ່ເຮືອນ ຄົວ, ສ່ວນປະຕູທີສາມຮຽກວ່າ: ປະຕູໃຫຍ່ໃຊ້ສຳ ລັບເຮັດພິທີກຳຕ່າງໆ ຢູ່ກົງກັນຂ້າມກັບຮ້ານບູຊາ ຜີ, ຊົນເຜົ່ານີ້ນັບຖືວ່າເຮືອນເປັນສິ່ງທີ່ກໍ່ສ້າງສິ່ງສັກ ສິດ. ສະນັ້ນການປຸກເຮືອນຕ້ອງຫາມື້ຫາຍາມ ເພື່ອບໍ່ໃຫ້ຜິດຜີ ແລະກໍ່ເພື່ອຄວາມປອດໄພກໍ່ຄື ຄວາມສຸກຂອງຄອບຄົວ.

ປະເພນີໃນການເກີດລູກ ຂອງຊົນເຜົ່າອີ້ວ ມຽນ,ຖ້າບໍ່ມີພໍ່ (ລູກທາງ) ຈະບໍ່ໄດ້ເກີດຢູ່ໃນເຮືອນ , ຕ້ອງໄປເກີດຢູ່ບ່ອນທີ່ກະກຽມໄວ້ເປັນພິເສດ ທີ່ບໍລິ ເວນຂ້າງ ຫຼືອ້ອມແອ້ມເຮືອນ,ແຕ່ລູກຜູ້ທີສອງ, ສາມຕໍ່ໄປ ຖ້າມີແລ້ວສາມາດເກີດຢູ່ໃນເຮືອ ນໄດ້ ໂດຍແມ່ນເກີດຢູ່ໃນຫ້ອງນອນຂອງຕົນເອງ, ເຊິ່ງ ມີແມ່ຂອງຜົວເປັນຜູ້ດູແລ ແລະຊ່ວຍເຫຼືອສຳລັບ ການຕາຍນັ້ນເຂົາເຈົ້າຈັດຕັ້ງການຄົບງັນພ້ອມທັງ ຈັດພິທີກຳຕ່າງໆ ຕາມແຕ່ລະຂັ້ນຕອນແລ້ວສົ່ງ ສະການດ້ວຍການຝັງ ຫຼືບາງເທື່ອກໍ່ຈູດ. ບຸນປະເພ ນີສຳຄັນຂອງຊົນເຜົ່າອີ້ວມຽນ ແມ່ນບຸນປີໃໝ່ (ບຸນ ກິນຈຽງ) ເຈຍຊຽງຮຽງ, ເຊິ່ງຈະຈັດຂຶ້ນໃນເດືອນກຸມພາ. ນອກຈາກນັ້ນໃນແຕ່ລະປີເຂົາເຈົ້າຍັງມີພິທີທີ່ສຳ ຄັນຫຼາຍຢ່າງເຊັ່ນ: ພິທີເຮັດຜີບ້ານ, ຜີບັນພະບຸລຸດ ແລະອື່ນໆ.

ດ້ານສິລະປະວັນນະຄະດີ, ຊົນເຜົ່ານີ້ມີເນື້ອ ຮ້ອງທຳນອງເສບ, ມີເພງຮ້ອງເຢົ້າຢູ, ມີກອນຂັບ ທີ່ເປັນເອກະລັກຂອງຕົນເອງ, ພິເສດເຂົາເຈົ້າຍັງ ມີຕົວໜັງສືຂຽນດ້ວຍອັກສອນຈີນ ທີ່ເວົ້າເຖິງໂລກ ໄພໄຂ້ເຈັບ, ວິທີປິ່ນປົວ, ເວົ້າເຖິງດວງຊາຕາ ແລະ ເວົ້າເຖິງຂວັນ, ນອກຈາກນັ້ນ ເຂົາເຈົ້າຍັງມີເຄື່ອງ ນຸ່ງ ແລະເຄື່ອງແຕ່ງກາຍທີ່ເປັນເອກະລັກປະຈຳ ຊົນເຜົ່າຂອງເພດຊາຍ ແລະເພດຍິງ ເຊິ່ງປະກອບ ດ້ວຍສີສັນລວດລາຍ ຈາກສີໄມ້ລາຍມືອັນຊຳ ນານຂອງແມ່ຍິງຊົນເຜົ່າອີ້ວມຽນນີ້ເອງ.

ການດຳລົງຊີວິດທາງດ້ານເສດຖະກິດ,ເຂົາ ເຈົ້າມີອາຊີບຕົ້ນຕໍ ແມ່ນການເຮັດໄຮ່ປູກເຂົ້າຈ້າວ. ພ້ອມກັນນັ້ນ ກໍ່ຍັງປູກພືດສຳຮອງຫຼາຍຊະນິດ ເພື່ອຮັບໃຊ້ຊີວິດປະຈຳວັນຂອງຄອບຄົວຄື: ສາ ລີ,ມັນຕົ້ນ, ມັນດ້ຳ, ໜາກ ຖົ່ວ ແລະພືດຜັກຕ່າງໆ ສັດທີ່ຊົນເຜົ່ານີ້ນິຍົມກັນລ້ຽງໄດ້ແກ່: ງົວ, ຄວາຍ, ມ້າ,ແບ້,ໝູ,ໝາ,ເປັດ ແລະໄກ່ເປັນຕົ້ນ.ພິເສດ ສ່ວນແມ່ຍິງຊົນເຜົ່າອີ້ວມຽນ ມີມູນເຊື້ອໃນການ ຖັກແສ່ວ ແລະຄ້າຂາຍນ້ອຍເພື່ອເສີມລາຍໄດ້ ແກ່ຄອບຄົວ.



ຢ້າວພົ້ມໃໝແດ໗ ຢ້າວຂາວ

Iumien

Historical background:

The Iumien originally migrated down from China, first migrating to Kwangtoong, Kuichow, Kwangsi and Yunnan in the southwest of China during the Xin Hun feudal reign. Some Iumien also migrated to the northern area of Vietnam between the fourteenth and sixteenth centuries. After this time they slowly spread into Laos, Burma and Thailand. Their migration to Laos occurred during several different periods and different routes such as through the northwestern provinces of Vietnam to Huaphan, Xiengkhoang and Luangprabang provinces. There was also a route passing through the Southern provinces of China to the north of Laos through Phongsali, Udomsai, Luangnamtha and Bokeo provinces.

Presently, Iumien ethnic people live in the northern provinces of Laos down to Vientiane province. Also, they still live in neighboring countries such as Vietnam, China and Thailand.

The total population of the Iumien living in Laos totaled 22,665, of which 11,374 were females according to the second population census done in 1995.

Language and name:

The Iumien are also known as the Yao, which the Iumien are actually a sub-group of. In Laos there are two sub-groups of the Yao: the Iumien and the smaller Lanten. They are very similar in culture and language. The Iumien refer to themselves as the "Iumien."

The language of this ethnic group is classified into the Miao-Yao language group of the Austro-Thai linguistic family. The Iumien and the Lanten both have a written language using Chinese characters. They write down family records and lineage, as well as stories, rituals and medicinal treatments. This has helped them preserve some of their ancient knowledge. They often use handmade paper made from bamboo.

Beliefs, society, ceremonies and myths:

Since the Iumien use the Chinese written language to write, they have been able to preserve their customs and culture very well.

Both Iumien and Lanten people have a complex combination of a sacred spiritual doctrine and a Tao doctrine of their ancestors that comes from Chinese influence. It is a mix of doctrine, magic, Confucianism and history. There is also a belief of the more animistic spirits that are part of daily life. They believe in seven principal spirits that represent humans, animals, fields, forests, the sky, water and the earth and village. In addition, they have a religious ceremony of entering into the Taoist "way" for all young men at around the age of seventeen.

Iumien society is strongly patriarchal. The husband and father have the final say. The families are in a clan system. The household number varies from 2 to 10 persons or more. Iumien people always follow the clan line of their father. A daughter, despite being married, does not become part of her husband's clan line of their husband. This means they live in an extended type of family pattern or large family. Traditionally, Mien men had six on seven wives, but today monogamy is more common.

When Iumien women are pregnant, the woman and her family are very careful to prevent miscarriage or deformity. For example, water must not be poured on the fireplace, or the doors must not have a knife stuck in them. The women give birth at home. For one month after giving birth, the mother cannot enter another house.

Funeral services are complex and expensive for the Iumien. They mourn for three days and place silver coins in the mouth of the deceased. The body is washed and placed in front of an ancestral alter. Relatives and friends hold prayers. The body is buried, unless he or she was killed in an accident, then the body is burned on a funeral pyre.

The Iumien have their own unique ethnic songs, music, and poetry. The body of this is quite large, thanks to their ability to save these songs, stories and poems on paper.

Village and house:

Iumien villages are situated between 500 and 1500 meters. The location of the village is chosen by the fertility of the soil. Villages are small, usually no more than fifty houses. There is no defined arrangement of the houses, nor is there a central community house or public area like other ethnic groups have in their villages.

The Iumien houses are one story and sit on the ground. There are three doors, one on the left and another on the right. One door is used for men and guests, and opens to the living room. The door for women opens to the kitchen, while the third door is called the Patoonyai (the gate) and is used only for ritual ceremonies opposite the sacred family altar. The Iumien consider their houses to be sacred buildings, therefore, before building, they decide on an auspicious day so as to not insult spirits and to insure family happiness.

Costume:

Iumien women wear trousers, a large turban on the head, and a long robe that has a sash. The entire costume is black or dark blue. There is a thick fringe of red yarn on the neck and down the front of their robe. They also wear a lot of silver jewelry, which displays wealth

Iumien wear dark blue trousers and a short loose jacket with a few silver buttons. However, their costume is much less elaborate than the Iumien woman's costume.

Agriculture and economy

Traditionally slash and burn cultivation of dry-land rice, plus the cultivation of wet rice was the mainstay of Iumien agriculture. Today they grow maize, cassava, sweet potato, beans, cotton, tobacco, and spices. They are skilled at breeding animals such as cattle, buffaloes, horse, goat, pigs, dogs, chickens and ducks. They also breed small horses that are used for transport. Even though they raise a large number of animals, they do not eat meat that often.

Iumien women do not weave much anymore, but they are skilled at making garments from cloth they have bought from other groups or in the market. They are very skilled in dying, embroidery, and producing ornate shoulder bags. The men are skilled in blacksmithing and silversmithing, producing jewelry, tools and pipe for their family and for sale.



62 . ภาบสะแดงฟ้อบเป่าแคบ เผ่าม้ง
Showing of blow Thepanpipe of Hmong.




63.ວິຖີຊີວິດຂອງແມ່ຍິງເຜົ່າມົ້ງ (ຫົວພັນ)
Life of Woman Hmong (Houaphanh)



64.ภาบเอ้ย้อๆของแม่ยิงเผ่าม้ง (ไซยะบูลี)
Wearing of Hmong (Xayabouli)




65.ชีวิดของแม่ยิง เผ่า อิวเมี่ยน(หลวงน้ำทา)
Life of woman Iewmien (LuangNamTha)




66.ภาบแต่งภายของเผ่าอิวเมี่ยนในเวลาแต่งดอๆ
ม.ห้วยซาย (บ่อแก้ว) Wearing of Iewmien in the married Houaxay district(Bokeo)




67. ภาบนุ่งห่มของ อิวเมี่ยน(ไซยะบูลี)
Wearing of Iewmien (Xayabouli)




68. ທິວທັດຕົວເມືອງ ຜົ້ງສາລີ
View of Phongsali District - Phongsali Province




69. ເມືອງຄຳເກີດ (ຫຼັກ20 ບໍລິຄຳໄຊ)
Khamkeuth Township(Laksao),Borikhamsay province



70. ຕາດແຊ້ (ຫຼວງພະບາງ)Tad sae
(Luangphrabang)



71. ລາວ - ວັງວຽງ (LAO-VANG VIENG)



72. ໜອງສະທີ່ຜາສາດຫີນ ວັດພູ (ຈຳປາສັກ)
Swamp at stone PalaceWatphou (Champassak)



73. ເສັ້ນທາງເມືອງຄຳ -ນ້ຳເນີນ(ຊຽງຂວາງ)
Meung Kham-NamNeun Road(XiengKhouang)

ເອກະສານອ້າງອີງແລະຜູ້ສະໜອງຂໍ້ມູນ

1. ປຶ້ມເສີມຂະຫຍາຍມູນເຊື້ອສາມັກຄີຂອງເຜົ່າຕ່າງໆ , ຂອງ ທ່ານ ໄກສອນ ພົມວິຫານ ສຳນັກງານນາຍົກແລະການພິມປີ1981.
2. ປຶ້ມ ຄວາມເປັນມາຂອງຊາວລາວ ຂອງ ທ່ານ ອຸ່ນ ພົມວົງສາ (ວຽງຈັນ, ຂຶ້ນ 2 ຄ່ຳ ເດືອນ ປີເມິງເຮົາ ພ ສ 2501.
3. ປຶ້ມ ພິງສາວະດານລາວ ແລະ ປະຫວັດສາດລາວ ຂອງ ທ່ານ ມະຫາສີລາ ວີລະວົງ.
4. ປຶ້ມປະຫວັດສາດ ແຂວງ ຜົ້ງສາລີ ຂອງ ທ່ານ ຄຳໝັ້ນ ພົມ ຄັ້ງວັນທີ 30 ມິຖຸນາ ພ ສ 2513.
5.ເອກະສານຂອງຄະນະກຳມະການບັນດາເຜົ່າສູນກາງ.
6. ປຶ້ມ ທ່ອງທ່ຽວ ຊົນເຜົ່າໃນ ສ ປ ປ ລາວ ຂອງ ຄະນະກຳມະການ ວິທະຍາສາດ ສັງຄົມ ແຫ່ງຊາດ ເລກທີ 471 / ຄວສ ,ລົງວັນທີ 3 / 11 / 1992.
7. ປຶ້ມ ປະເທດລາວ ແລະ ຄົນລາວຂອງ ທ່ານ ພອນຈັນ ແລະ ທ່ານ ສີວິໄລ ສຳນັກ ພິມຈຳໜ່າຍ ສູນກາງແນວລາວຮັກຊາດ ປີ 1971 .
8. ປຶ້ມ ຄູ່ມືປະຕິທິນ 200 ປີ ຂອງ ທ່ານ ດວງໄຊ ຫຼວງພະສີ ພິມຄັ້ງ ທີ 3 ປີ 1995.
9. ປຶ້ມ ບັນດາຊົນຊາດໃນ ສ ຫວຽດນາມ ສຳນັກ ພິມຈຳໜ່າຍ ວັດທະນະທຳຊົນຊາດ ພິມ ປີ 1996.
10. ທ່ານ ຄຳໃບ ຍຸນດາລາດ ນັກຄົ້ນຄວ້າ ຊົນເຜົ່າວິທະຍາ .
11. ທ່ານ ຂຸນໂອ ບຸນລະຜົນ ຮອງປະທານ ແນວລາວສ້າງຊາດ ແຂວງ ສະຫວັນນະເຂດ.
12. ທ່ານ ໂປສາລາວເຊີ້ງ ປະທານ ແນວລາວສ້າງຊາດ ເມືອງ ຍອດອູ ແຂວງ ຜົ້ງສາລີ.
13. ທ່ານ ສົມໃບ ແວນວົງຄຳ ຮອງປະທານ ແນວລາວສ້າງຊາດ ແຂວງ ບໍລິຄຳໄຊ.
14. ທ່ນ ຄຳບວນ ແກ້ວພຸດສີ ຮອງ ປະທານ ແນວລາວສ້າງຊາດ ແຂວງ ຄຳມ່ວນ.
15. ທ່ານ ສີສະຫວັດ ສີທາລາດ ຫົວໜ້າຂະແໜງຊົນເຜົ່າ ແນວລາວສ້າງຊາດ ແຂວງ ຄຳມ່ວນ.
16. ທ່ານ ວັນເຈົາ ອະດີດ ຮອງປະທານ ແນວລາວສ້າງຊາດ ແຂວງ ຄຳມ່ວນ.
17. ຂໍ້ມູນຈາກເຖົ້າແກ່ ອາວຸໂສ ຂອງບັນດາເຜົ່າ, ເຖົ້າແກ່ແນວໂຮມ ແລະ ນາຍບ້ານໃນທ້ອ ປະເທດ ເຊິ່ງນັກວິຊາການຊົນເຜົ່າວິ ທະຍາໄດ້ລົງສຳພາດ.
18. ທ່ານ ຍົດຄຳລືຊ ສົນນາວາ ສີຣິແສງທອງ ກຳມະການສູນກາງແນວລາວສ້າງຊາດ ແຂວງ ຫົວໜ້າ ຂະແໜງຊົນເຜົ່າ ແຂວງຫຼວງນ້ຳທາ.
19. ທ່ານ ດອນສີ ຫົວໜ້າຂະແໜງຊົນເຜົ່າ ແຂວງ ຫົວພັນ.
20. ປຶ້ມ ບັນດາຊົນເຜົ່າຂອງ ທ່ານ ໂຣຣ້ອງ ນັກຄົ້ນຄວ້າຊົນເຜົ່າຂອງຝຣັ່ງ.

Evidence of Ethno logiest

1. President Kaysone Phomvihane to enhance the solidarity of all ethics , state of Prime Minister and printed 1981 book.
2. Biography of Lao people by Mr. Ounh Phimvongsa (Vientiane 2501) book .
3. Lao Historyby Maha Sila Vilavong book.
4. History Phongsaly Province by Mr. Khammanh.Printed in July 30, 2513 , book
5. Documentary of Ethnics groups committee center.
6. Ethnic tour in Lao P. D . R , by National Science and Society Committee N: 471 / Nssc , Nov 3,1992 book
7. Lao P.D.R ,Lao people by Mr. Phonechanh and Mr. Siviley , Publishers ' s office Lao protiotic center 1971 book .
8.Handbook 200 years calendar by Mr. Duangxay Luangphasy ,Third Printed the: 1995.book.
9. The subject in Vietnam , Publisher ' s office Culture Nationality , Printed : 1996.
10. Mr. Khambay Nhoundalad Ethnical Researcher of Lao ,The Former Director of Institute Ethnic and human.
11. Mr. Khoune - Au Bounelaphon , Deputy president of Lao National front for Construction Savannakhet Province .
12. Mr.Pausalaoseung , President of Lao National front for Construction , Nhod - Ou District , Phongsaly Province.
13. Mr. Sombay venevongkham , Deputy president of Lao National front for construction , Bolikhamxay Province.
14. Mr. Khambouan keophoutsy , Deputy president of Lao National front for Construction , Khammouane province.
15. Mr. Sisavath Sihalath , Head of Ethnic section , Lao National front for Construction , Khammouane province .
16. Mr. Vanchao ,the former Deputy President of Lao National Front for Construction , Khammouane province
17. Evidence by elders of Ethnics groups , deans of family and Chief of Village in all country to honour interviews to the Ethnologist.
18. Mr. Nhodkhamluexa sinnavasirisengthong ,Committee of Lao National Front for Construction , Head of Ethics section , Luangnamtha province .
19. Mr. Donesy Head of Ethnic section , Houaphanh Province.
20. The Ethnics groups by : Rorong French Ethnologist Researcher, book.

